ມາກຊີມ ກອກກີ

ມະຫາວິທະຍາໄລຂອງຂ້ອຍ



ມາກຊິມ ກອັກກີ

ມະຫາວິທະຍາໄລ ຂອງຂ້ອຍ

ສຳນັກພິມ "ຣາດູກາ"
ມົດສະກູ

ອຸທິດ ບຸນຍາວົງ

ແປໂດຍ: ນາງ ດາລາ ກົມລະຍາ

М. Горький

МОИ УНИВЕРСИТЕТЫ

Повесть

На лаосском языке

© ແປເປັນພາສາລາວ, ສຳນັກພິມ "ຣາດູກາ", 1985

ພິມໃນ ສະຫະພາບ ໂຊວຽດ

Г $\frac{4702010200-166}{031(05)-85}$ без объявления ISBN 5-05-000542-6

ດັ່ງນັ້ນ ຂ້ອຍຈຶ່ງອອກເດີນທາງໄປທີ່ເມືອງ ຄາຊານ. ເພື່ອຮຽນຕໍ່ໃນ ມະຫາວິທະຍາໄລ ບໍ່ຕ່ຳກວ່ານັ້ນວ່າຊັ້ນເທາະ ຂ້ອຍໄດ້ຄວາມຄິດ ກ່ຽວກັບການຮຽນຕໍ່ມະຫາວິທະຍາໄລ ນີ້ ຈາກ ມ . ເປເຫຼອີນີຟ ນັກຮຽນຊັ້ນກຽມ - ຊາຍໜຸ່ມ ຜູ້ໜ້າຮັກ ຮູບງາມໂກ້ ແລະ ມີດວງຕາອ່ອນໂຍນຄືແມ່ຍິງ . ເຂົາເຊົ່າຢູ່ຫ້ອງຕິດຫລັງຄາ ໃນເຮືອນຫລັງດຽວກັນກັບຂ້ອຍ. ຍ້ອນວ່າ ຍາມໃດ ເຂົາກໍເຫັນຂ້ອຍເອົາປຶ້ມໃສ່ແຂນໜີບ ໄປ ເຂົາກໍເລີຍເລີ່ມສົນໃຈຂ້ອຍ ແລະ ພະຍາຍາມທຳຄວາມຮູ້ຈັກ ແລ້ວບໍ່ດົນ ເຂົາກໍອອກປາກວ່າ ຂ້ອຍເປັນຄົນທີ່ມີ"ຄວາມ ສາມາດພິເສດດ້ານການຮຽນ " .

" ທຳມະຊາດສ້າງໂຕ ໃຫ້ເປັນຜູ້ສົ່ງເສີມວິທະຍາສາດ ແລ້ວລະ." ເຂົາກ່າວ ພ້ອມກັບຊິດຜົມດຳຍາວໄປທາງ ຫລັງ ດ້ວຍທ່າທາງສະຫງ່າງາມ .

ຕອນນັ້ນ ຂ້ອຍຍັງບໍ່ທັນຮູ້ເລີຍວ່າ ຄົນທີ່ຄິດວ່າຕົນເອງ ສາມາດຮັບໃຊ້ວິທະຍາສາດນັ້ນ ອາດຮັບໃຊ້ໃນຖານະເປັນຕົວ ກະຕ່າຍສຳລັບທົດລອງເທົ່ານັ້ນ , ແລ້ວ ເປເຫຼອີນີຟ ກໍອະທິ ບາຍຢ່າງໜ້າຟັງວ່າ ແມ່ນຄົນແບບຂ້ອຍນີ້ລະ ທີ່ມະຫາວິທະ- ຍາໄລພວມຕ້ອງການ . ແນ່ນອນ ລາວຢາກເອົາ ໂລໂມໂນ ຊົຟ ເປັນຕົວຢ່າງສຳລັບຂ້ອຍ . ເປເຫຼອີນີຟ ບອກວ່າ ຢູ່ຄາ ຊານ ເຂົາຈະໃຫ້ຂ້ອຍ ພັກເຊົາຢູ່ນຳເຂົາ ແລະ ຮຽນ ຕະ ຫລອດລະດູໃບໄມ້ຫຼົ່ນ ແລະ ລະດູໜາວ ເພື່ອເສັງຜ່ານຊັ້ນ ກຽມ . ຫລັງຈາກນັ້ນ ຂ້ອຍກໍຈະຕ້ອງເສັງອີກ "ເລັກໆນ້ອຍໆ"

ແລ້ວ ມະຫາວິທະຍາໄລ ກໍຈະໃຫ້ທຶນສຶກສາແກ່ຂ້ອຍ ;ແລ້ວ-ອີກປະມານ ໕ ປີ ຂ້ອຍກໍຈະກາຍເປັນ " ນັກວິທະຍາສາດ". ເບິ່ງຄືວ່າ ເປັນເລື່ອງງ່າຍດາຍແທ້ ; ດ້ວຍວ່າ ເວລານັ້ນ ເປເຟູອີນິຟ ອາຍຸພຽງ ໑໙ ປີ ແລະ ຈິດໃຈຂອງເຂົາກ້ວາງຂວາງທີ່ສຸດ .

ເຂົາຜ່ານການສອບເສັງ ແລ້ວກໍຈາກໄປ . ລອງ ອາທິດລຸນຫລັງ ຂ້ອຍຈຶ່ງຕິດຕາມເຂົາໄປ .

ກ່ອນອອກເດີນທາງ , ແມ່ເຖົ້າເວົ້ານຳຂ້ອຍວ່າ :

" ຢ່າໄປກະດັກກະດໍ້ກັບຄົນເນີ້ ໂຕແຮ່ງຄົນໂມໂຫກໍ້.. ທ່າທາງສະຫາວ ແລະ ເຄ່ງຂຶມ , ນິດໄສແບບນີ້ ໂຕໄດ້ມາຈາກພໍ່ເຖົ້ານັ້ນລະ - ແລ້ວເຫັນບໍ່...ພໍ່ເຖົ້າໂຕເປັນແນວໃດ ໄຊ້ຊີວິດມາຈົນເຖົ້າປານນີ້ແລ້ວ ກໍຍັງບໍ່ຂຶ້ນບໍ່ເກີນ ,ອີ່ຕາເຖົ້າກະດາຍ , ແລ້ວກະຈື່ໄວ້ເນີ້ , ດ່າວ່າຄົນອື່ນນັ້ນ ພະຜູ້ເປັນເຈົ້າ ບໍ່ຍ້ອງວ່າດີດອກ , ມີແຕ່ພະຍາມານພຸ້ມລະ ຍ້ອງຍໍຊົມເຊີຍ , ເອົາລະ ໄປສາຫລາ..."

ແມ່ເຖົ້າເຊັດນ້ຳຕາອອກຈາກແກ້ມຫ່ຽວໆ ແລ້ວເວົ້າອີກວ່າ :

" ພວກເຮົາຄົງບໍ່ພໍ້ກັນອີກແລ້ວ , ໂຕນັບມື້ຊິຈາກ ໄກໄປໜ້າ...ບໍ່ມີທາງຢຸດລະ...ສ່ວນແມ່ເຖົ້າກໍແກ່ແລ້ວ...ມີແຕ່ທາງຊິຕາຍ."

ໄລຍະຫລັງນີ້ ຂ້ອຍບໍ່ໄດ້ຢູ່ນຳແມ່ເຖົ້າແລ້ວ ແລະ ກໍບໍ່ໄດ້ພົບພໍ້ກັນປານໃດ , ແຕ່ມາບັດນີ້ ຂ້ອຍເກີດມີຄວາມ ຄ້ອຍໃຈຂຶ້ນມາວ່າ ຄົງບໍ່ມີໃຜອີກແລ້ວ ທີ່ຈະເປັນເພື່ອນສະໜິດສະ

ຫນົມ ເປັນອັນຫນຶ່ງອັນດຽວກັບຂ້ອຍ ທໍ່ແມ່ເຖົ້າ .

ຈາກທ້າຍເຮືອ ຂ້ອຍຫລຽວຄືນຫລັງໄປເບິ່ງແມ່ເຖົ້າຊຶ່ງຢືນຢູ່ສົ້ນຂົວ , ລາວເອົາມືເບື້ອງຫນຶ່ງເຮັດໄມ້ກາງເຂນແລະອີກເບື້ອງຫນຶ່ງ ເອົາເຊີງຜ້າຄຸມບ່າເກົ່າໆນັ້ນເຊັດຫນ້າ ແລະດວງຕາດຳຊ້ຳ ທີ່ຮົ່ງຮຸ່ງດ້ວຍຄວາມຮັກອັນຖາວອນຕໍ່ມວນ ມະນຸດ .

ແລ້ວຂ້ອຍກໍ່ມາຮອດ ຄາຊານ ເມືອງທີ່ມີຊາວ ຕາຕາ-ປົນຢູ່ຮອດເຄິ່ງ . ຫ້ອງຂອງ ເປເຟຼອິມຟ ນັ້ນນ້ອຍໆຢູ່ ໃນເຮືອນຊຸ້ມດຽວ ຊຶ່ງຕັ້ງຢູ່ໂດດດ່ຽວເທິງເນີນພູ ສຸດທາງ ຖະຫນົນເກົ່າແຄບໆ , ດ້ານຫນຶ່ງຂອງເຮືອນ ຕິດກັບດິນ ຫວ່າງເປົ່າ ຊຶ່ງເປັນບ່ອນເຄີຍຖືກໄຟໄຫມ້ ແລະ ຮົກເຕັມດ້ວຍເຄືອໄມ້ຕ່າງໆຫນາແຫນ້ນ . ໃນທ່າມກາງເຄືອໄມ້ທີ່ເລື້ອຍກ່ຽວກັນສັບສົນຊຸມເຄືອເຫລົ່ານັ້ນ ມີກອງຊາກຕຶກທີ່ເພພັງ ແລະ ພາຍໃຕ້ ຊາກສະຫລັກຫັກພັງເຫລົ່ານີ້ ກໍ່ມີຫ້ອງໃຕ້ດິນຫ້ອງ ໃຫຍ່ຊຶ່ງພວກຫມາບໍ່ມີເຈົ້າຂອງມັກມາອາໄສ ແລະ ຕາຍໃສ່ . ຂ້ອຍຍັງຈື່ຈຳຫ້ອງໃຕ້ດິນນີ້ໄດ້ດີ : ມັນກໍ່ແມ່ນມະຫາວິທະຍາ-ໄລແຫ່ງຫນຶ່ງຂອງຂ້ອຍ .

ຄອບຄົວ ເປເຟຼອິມຟ ຊຶ່ງມີແມ່ ແລະ ລູກຊາຍ ສອງຄົນ ດຳເນີນຊີວິດຢູ່ດ້ວຍເງິນເບ້ຍບຳນານພຽງຫນ້ອຍດຽວ . ນັບແຕ່ວັນທຳອິດ ທີ່ຂ້ອຍເຂົ້າໄປພັກເຊົານຳ ຂ້ອຍກໍໄດ້ ເຫັນໃບຫນ້າອັນເສົ້າສະຫລົດໃຈຂອງນາງຫມ້າຍຮ່າງນ້ອຍໃນ ຊຸດສີຂີ້ເຖົ່າ ທີ່ກັບມາແຕ່ຕະຫລາດ ເອົາເຄື່ອງຂອງອອກມາວາງເທິງໂຕະໃນເຮືອນຄົວ ພະຍາຍາມຈະແກ້ບັນຫາໃຫ້ຕົກວ່າ :

ເຮັດແນວໃດ ຊີ້ນຕ່ອນນ້ອຍຫຍາບໆນັ້ນ ຈະກາຍເປັນອາຫານທີ່ແຊບ ແລະ ພຽງພໍສຳລັບຊາຍໜຸ່ມຮ່າງໃຫຍ່ກົດທັງສາມຄົນ - ໂດຍບໍ່ຫານຮອດຈະນັບເອົາຕົວລາວເອງເຂົ້ານຳຊ້ຳ .

ລາວເປັນຄົນເວົ້ານ້ອຍທີ່ສຸດ , ດວງຕາສີຂີ້ເຖົ່າ ນັ້ນອ່ອນໂຍນ ແລະ ໝົດຫວັງ ຄືຕາຂອງໂຕມ້າທີ່ຖືກໃຊ້ແຮງ - ງານໜັກ ແຕ່ຫາກພະຍາຍາມຈະໃຊ້ກຳລັງສຸດທ້າຍ ຂອງມັ້ນລາກລົດຂຶ້ນພູ ທັງທີ່ມັນຮູ້ດີວ່າ ບໍ່ອາດຈະຂຶ້ນໄປຮອດຈອມພູໄດ້ເລີຍ ; ແຕ່ແນວໃດກໍຕາມ ມັນກໍລາກຕໍ່ໄປ .

ເຊົ້າມື້ໜຶ່ງ ພາຍຫລັງຂ້ອຍມາຢູ່ໄດ້ ໓-໔ ວັນ,ຂະນະທີ່ ຂ້ອຍພວມຊ່ວຍລາວຊອຍຜັກຢູ່ໃນເຮືອນຄົວ ແລະລູກ ຊາຍຂອງລາວຍັງນອນຫລັບຢູ່ນັ້ນ , ລາວຖາມຂ້ອຍສຽງຄ່ອຍໆ - ຢ່າງລະມັດລະວັງວ່າ :

" ລູກມາເມືອງນີ້ເພື່ອຫຍັງນໍ້ ? "

" ລູກຈະມາຮຽນຢູ່ມະຫາວິທະຍາໄລ "

ລາວເລີກຄິ້ວເບິ່ງຂ້ອຍຊ້າໆ ທັງຍົ່ນໜ້າຜາກ ມິດ ພະລາດບາດມີລາວພໍດີ ລາວຈຶ່ງດູດເລືອດທັງໂຍບຕົວລົງນັ່ງຕັ່ງອີ້ແຕ່ແລ້ວ ກໍຄະລາດລູກຂຶ້ນ ພ້ອມກັບຮ້ອງອອກມາວ່າ :

" ອູ້ຍ ຮ່າມັ້ນນໍ ! "

ເມື່ອໄດ້ພັນນິ້ວມື ດ້ວຍຜ້າແພມົນແລ້ວ ລາວເວົ້າຂຶ້ນວ່າ:

" ລູກປອກມັນເກັ່ງນໍ້ " .

ຂ້ອຍກໍຄິດວ່າ ຕົວເອງປອກໄດ້ດີຢູ່ ! ຂ້ອຍເລົ່າໃຫ້ - ລາວຟັງ ເຖິງວຽກງານທີ່ເຮັດຢູ່ເຮືອຈັກ , ລາວຖາມວ່າ :

" ລູກຄິດວ່າ ນັ້ນແມ່ນການກະກຽມພໍແລ້ວຊັ້ນຫວະເພື່ອ

ຈະເຂົ້າຮຽນໃນ ມະຫາວິທະຍາໄລນະ ? "

ປາງນັ້ນ ຂ້ອຍຍັງບໍ່ທັນເຂົ້າໃຈຄວາມປອກສຽດສີເລີຍ - ຂ້ອຍຖືເອົາຄຳຖາມຂອງລາວເປັນເລື່ອງເວົ້າແທ້ ແລະ ອະທິບາຍ ໃຫ້ລາວຟັງເຖິງລຳດັບເຫດການ ອັນເຮັດໃຫ້ປະຕູແຫ່ງວິທານວິຊາໄດ້ໄຂຕ້ອນຮັບຂ້ອຍ .

ລາວຖອນໃຈ .

" ໂອຍ ! ນິໂກໄລເອີຍ-ນິໂກໄລ ! "

ພໍດີ ນິໂກໄລ ເຂົ້າມາໃນຄົວ ເພື່ອລ້າງໜ້າ ,ຕາບໍ່ທັນປາກມິນ , ຜົມຫຍຸ່ງ ແຕ່ກໍ່ອາລົມດີຕາມເຄີຍ .

" ບາ ຄັນມີ ເປນເມນີ* ກິນກໍດີດອກ ນໍ້ແມ່ "ເຂົາວ່າ.

" ກະຊິດີແທ້..." ແມ່ເຂົາຕອບ .

ຂ້ອຍພະຍາຍາມ ສະແດງຄວາມຮູ້ ໃນເລື່ອງອາຫານ - ການກິນ ໂດຍກ່າວວ່າ ຊິ້ນຫົ່ມຢູ່ນັ້ນບໍ່ດີ ພໍຈະເອົາເຮັດ ເປນເມຍີ ໄດ້ ທັງກໍ່ມີຢູ່ໜ້ອຍດຽວເທົ່ານັ້ນເອງ .

ພໍໄດ້ຟັງ ວາວະຣາ ອີວາໂນວະນາ ກໍຄຽດເປັນຟືນເປັນໄຟຂຶ້ນມາທັນທີ , ລາວດ່າຂ້ອຍຫລາຍຄວາມ ຢ່າງຮຸນ ແຮງຈົນຂ້ອຍຮູ້ສຶກວ່າຫູແດງ ແລ້ວກໍໂຍນຫົວກາຣົດ ທີ່ພວມລາງ ຢູ່ນັ້ນ ລົງໂຕະປຸບປັບ ແລະລາວກໍອອກຈາກເຮືອນຄົວໄປ . ນິໂກໄລ ຫລິ່ວຕາໃສ່ຂ້ອຍ ແລະ ຊີ້ແຈງວ່າ :

" ແມ່ ອາລົມບໍ່ດີເດີ້ " .

ເຂົານັ່ງລົງຕັ່ງຕາມສະບາຍ ແລະ ອະທິບາຍວ່າເວົ້າທົ່ວທົ່ວໄປ ທຳມະຊາດຂອງແມ່ຍິງ ມັກຈະຕື່ນເຕັ້ນ ປ່ຽນແປງໄວກວ່າຜູ້ຊາຍ . ຫລັກການດັ່ງກ່າວ ໄດ້ຮັບການພິສູດໂດຍ ນັກ

ວິທະຍາສາດຄົນສຳຄັນ ໃນ ສະວິດ , ຖ້າຂ້ອຍຈື່ບໍ່ຜິດ ,ຫລື ແມ່ນແຕ່ ຈອນ ສະຈວດ ມິລ ຄົນອັງກິດ ກໍເຄີຍກ່າວໄວ້ແບບ ນີ້ຄືກັນ .

ນິໂກໄລ ພໍໃຈ ແລະ ມ່ວນນຳການທີ່ໄດ້ຊ່ວຍສອນຂ້ອຍ, ທະແມນມີໂອກາດຍາມໃດ ແມ່ນເວົ້າຮອດຄວາມຮູ້ອັນໃດອັນ-ໜຶ່ງໃຫ້ຂ້ອຍຟັງ - ຍັດສິ່ງທີ່ເຂົາຄິດວ່າ ດີ ມີປະໂຫຍດ ໃສ່ໃນສະໝອງຂອງຂ້ອຍ ຊຶ່ງແທ້ແລ້ວ ຖ້າແມ່ນຂາດຄວາມ ຮູ້ເຫຼົ່ານັ້ນ ຊີວິດກໍຈະລຳບາກແທ້ , ຂ້ອຍດື່ມກິນທຸກຄຳ ເວົ້າຂອງເຂົາຢ່າງກະຫາຍ ; ບໍ່ພໍດົນ ຂ້ອຍກໍສາມາດຈື່ຈຳ ຟູໂກ ເດີ ລາໂຣເຊີ ຟູໂກ້ ແລະ ເດີ ລາໂຣເຊີ ຊາເກີແລ້ວ ,ຈື່ແບບປົນເປກັນ ຈົນຂ້ອຍບໍ່ອາດໃຈແຍກວ່າ ແມ່ນ ລາວົວຊີເອ ຕັດຫົວ ດູຍມູຣີເຢ ບໍ , ຫລືວ່າ ປົ້ນກັນ . ອ້າຍບ່າວໃຈບຸນຄົນນີ້ ມີຄວາມຕັ້ງໃຈຢ່າງໜັກແໜ້ນ ແລະ ຈິງໃຈແທ້ໆທີ່ຈະເຮັດໃຫ້ຂ້ອຍເປັນ " ຄົນມີຄວາມຮູ້ " ຈົນໄດ້ . ເຂົາ ໃຫ້ສັນຍາກັບຕົວເອງແລ້ວ , ແຕ່ເຂົາບໍ່ໄດ້ມີເວລາຫລາຍ ແລະ ສະພາບເປັນຢູ່ ກໍບໍ່ອຳນວຍໃຫ້ພຽງພໍ ທີ່ຈະຊ່ວຍໃຫ້ເຂົາ ດຳເນີນການສອນຢ່າງເປັນປົກກະຕິຕະຫລອດໄປ . ເຂົາ ເປັນຄົນເຫັນແກ່ຕົວ ແລະ ຂາດຄວາມຄິດຮັບຜິດຊອບແບບ ເດັກນ້ອຍ ຈຶ່ງບໍ່ເຫັນວ່າ ແມ່ເຂົາຕ້ອງເກັບຕ້ອງເລັ້ມສຸດຢຽດ ຈຶ່ງພໍໄດ້ກິນກູ່ມກັນ . ສ່ວນນ້ອງຊາຍຂອງເຂົາ ທີ່ເປັນນັກ ຮຽນແຮ່ງເປັນຄົນເຫງິກຫງາກປົກໜາ ນັ້ນ ກໍບໍ່ເຄີຍຄິດພໍ້ ຄວາມຍາກລຳບາກຂອງແມ່ເລີຍເຊັ່ນກັນ . ແຕ່ຂ້ອຍ , ຂ້ອຍເຄີຍພົບເຫັນແມ່ເຮືອນ ທີ່ເຮັດທຸກວິທີທາງ ເພື່ອໃຫ້ຄອບຄົວດຳລົງ

ຢູ່ໄດ້ໃນສະພາບຂາດແຄນແນວນີ້ມາຫລາຍແລ້ວ . ຂ້ອຍຊາບຊຶ້ງດີກັບສະພາບຂອງແມ່ຍິງຄົນນັ້ນ ທີ່ຕ້ອງຕີນຖີບປາກກັດເພື່ອຫາອາຫານມາລ້ຽງລູກຕົນເອງ ແລະ ຍັງມີບ່າວນ້ອຍ ບ້ານນອກທ່າທາງບໍ່ເປັນຕາເຊື່ອໃຈຄືຂ້ອຍນຳອີກ , ເປັນ ທຳມະດາຢູ່ເອງ ທີ່ຂ້ອຍຈະຮູ້ສຶກວ່າ ເຂົ້າຈ້ຳທຸກຄຳທີ່ຂ້ອຍກິນຂອງຂະເຈົ້າ ແມ່ນເຂົ້າໄປໜັກຕ້ວງຢູ່ໃນຈິດສຳນຶກຂອງຂ້ອຍ . ຂ້ອຍຈຶ່ງເລີ່ມຕົ້ນຫາເຮັດວຽກແລະມັກອອກຈາກເຮືອນໄປແຕ່ ເດິກແລ້ວກໍເລາະຢູ່ ຈົນກະວ່າ ທາງເຮືອນກິນເຂົ້າແລງແລ້ວ ພຸ້ນລະ ຂ້ອຍຈຶ່ງກັບມາ ; ບາງເທື່ອ ທີ່ອາກາດບໍ່ດີ ຂ້ອຍກໍຫລົບຢູ່ໃນຫ້ອງໃຕ້ດິນ ທີ່ເຮືອນຮ້າງຫັ້ນ ນັ່ງຢູ່ທ່າມກາງຊາກ ໝາແມວຕາຍເໜົ່າ ດົມກິ່ນເໜັນຂອງພວກສັດນັ້ນ ທັງຟັງ ສຽງຝົນຕົກທັ່ງເທ ແລະ ລົມພາຍຸຮ້ອງຄວນຄາງ , ໃນບໍ່ດົນຂ້ອຍກໍເລີ່ມເຂົ້າໃຈວ່າ ມະຫາວິທະຍາໄລ ແມ່ນຄວາມຝັນ ດາຍເປົ່າເທົ່ານັ້ນ ; ຄັນຖ້າຂ້ອຍຕັດສິນໃຈເປີດໄປ ເປີເຊຍ ແຕ່ທຳອິດພຸ້ນ ກໍຍັງຈະເປັນທ່າເປັນທາງກວ່ານີ້ຫລາຍເທົ່າ ,ດັ່ງນັ້ນ ຂ້ອຍຈຶ່ງຄິດວາດພາບຕົວເອງ ເປັນພໍ່ມົດໝໍຜີ ທີ່ຈົ່ງໝວດສີຂີ້ເຖົ່າຍາວໆ ສາມາດຄົ້ນພົບວິທີປູກເຂົ້າສາລີ ໃຫ້ເມັດໃຫຍ່ເທົ່າໜ່ວຍໝາກໂປມ ຫລື ປູກມັນຝັ່ງ ໃຫ້ໜັກຫົວລະໝື່ນ-ແລະ ຫຍັງຕໍ່ຫຍັງອີກຫລາຍຢ່າງໃນໂລກນີ້ ເພື່ອແກ້ໄຂ ຊີວິດເປັນຢູ່ທີ່ແສນລຳບາກຍາກແຄ້ນ ບໍ່ສະເພາະແຕ່ຂ້ອຍຄົນດຽວ.

ຂ້ອຍເລີ່ມຮູ້ຈັກ ຄິດຝັນເຖິງການຜະຈົນໄພທີ່ແປກ ປະຫລາດ ແລະ ພິດສະດານ ເຊິ່ງມັນກໍຊ່ວຍຂ້ອຍໄດ້ຫລາຍເມື່ອຍາມຊີວິດຕົກທຸກໄດ້ຍາກ ; ແລ້ວຍາມຕົກທຸກໄດ້ຍາກນີ້ ກໍຊ້ຳ

ພັດມີຫລາຍຂຶ້ນຊຸກໄຊ້ . ຂ້ອຍຄິດຝັນຫລາຍຂຶ້ນ ແລະ ຍິ່ງຝັນ ກໍຍິ່ງເກີດມີຄວາມຈັດເຈນຫລາຍຂຶ້ນ . ຂ້ອຍບໍ່ຄອງຖ້າຄວາມ ຄວາມຊ່ວຍເຫລືອ ຈາກທາງອື່ນອີກ ແລະ ບໍ່ກາງຕໍ່ໂຊກວາດ ສະຫນາອີກຕໍ່ໄປ , ແຕ່ພັດແຮ່ງມີຄວາມຫມາຍຫມັ້ນຢ່າງ ບໍ່ ຍອມທໍ້ຖອຍ ; ແຮ່ງຊີວິດຄວາມເປັນຢູ່ຍາກລຳບາກຫລາຍຂຶ້ນ ເທົ່າໃດ ຂ້ອຍກໍແຮ່ງຮູ້ສຶກວ່າ ຕົວເອງແຂງແກ່ນ ແລະ ຮອດ ສະຫລາດສະຫລຽວຫລາຍຂຶ້ນເທົ່ານັ້ນ . ຂ້ອຍຮຽນຮູ້ຕັ້ງແຕ່-ຍັງນ້ອຍວ່າ ຄວາມເປັນຄົນຂອງເຮົານັ້ນ ຂຶ້ນຢູ່ກັບວ່າເຮົາສາ ມາດຈະຕານທານກັບຄວາມກົດດັນຂອງສະພາບແວດລ້ອມ ໄດ້ ພໍພຽງໃດ .

ເພື່ອປະທັງຊີວິດບໍ່ໃຫ້ອຶດຕາຍ ຂ້ອຍຕ້ອງໄປເຮັດວຽກ ທີ່ ທ່າເຮືອໃຫຍ່ແຄມຝັ່ງແມ່ນ້ຳ ໂວນກາ , ບ່ອນທີ່ຫາເງິນໄດ້ບໍ່ ຍາກມື້ລະ ໑໕-໔໐ ໂກເປັກ . ທີ່ນີ້ເຕັມໄປດ້ວຍພວກກຸລີ , ພວກພະເນຈອນ ແລະຫົວຂະໂມຍ . ຂ້ອຍຮູ້ສຶກວ່າ ຕົວເອງ ຄືດັ່ງເຫລັກທີ່ຖືກເຜົາ ຈົນຮ້ອນຈັດ , ຊີວິດເຕັມໄປດ້ວຍ - ຄວາມຕື່ນເຕັ້ນເຜັດຮ້ອນ . ທີ່ນີ້ຂ້ອຍໄດ້ຊອມເບິ່ງໂລກທີ່ຫຍຸ້ງ ສັບສົນ , ມະນຸດລ້ວນສະແດງອອກເຖິງສັນຊາດຕະຍານ ອັນ ຕ່ຳຊ້າ , ມີແຕ່ຄວາມຫິວກະຫາຍ ເຊິ່ງບໍ່ໄດ້ປິດບັງຊ້ອນ - ເຊື່ອງ , ຂ້ອຍໄດ້ພົບ ແລະ ສົນໃຈຄົນທີ່ມີແຕ່ຄວາມຂົມ ຂື່ນ ຕໍ່ຊາຕາຊີວິດ , ຄົນທີ່ກຽດຊັງເຍາະເຍີ້ຍທຸກສິ່ງທຸກຢ່າງ ໃນ ໂລກ , ຄົນທີ່ບໍ່ເປັນຫ່ວງເປັນໄຍຕໍ່ຊີວິດຕົນເອງ .ປະສົບ - ການທີ່ຂ້ອຍເອງໄດ້ຜ່ານມາແລ້ວທັງມວນ ດຶງດູດໃຫ້ຂ້ອຍເຂົ້າ ໃກ້ຊິດຕິດແທດກັບຄົນເຫລົ່ານັ້ນ ແລະ ເກີດຄວາມປາຖະຫນາ

ທີ່ສຸດ ທີ່ຈະເຂົ້າໄປໃຊ້ຊີວິດໃນໂລກ ອັນສັບສົນຈັງໄຣຮ່ວມ-ກັບພວກເຂົານຳ . ນິຍາຍຂອງ ເບຣດ ຮາດ ແລະ ນະວະນິຍາຍລາຄາຖືກອື່ນໆ ອີກຫລາຍເລື່ອງທີ່ຂ້ອຍໄດ້ອ່ານ ແຮ່ງເຮັດໃຫ້ຂ້ອຍຮູ້ສຶກເຫັນອົກເຫັນໃຈຊີວິດແບບນີ້ຫລາຍຂຶ້ນ .

ຕົວຢ່າງ ບາຊະກິນ - ຫົວຂະໂມຍ ຊະນິດແທ້ ,ອະດີດນັກສຶກສາສ້າງຄູ . ເຂົາເປັນປ້ອດແຫງ ແລະ ຖືກຄົນ ຕົບຕີເລື້ອຍໆ , ເຂົາມັກສັ່ງສອນຂ້ອຍວ່າ : " ປານໃດມຶງ ຊິເຊົາເຮັດທ່າທາງອາຍໆຕໍ່ຜູ້ສາວເວີຍ ! ມຶງຢ້ານເສຍ ກຽດຊັ້ນຫວະ ? ສຳລັບຜູ້ສາວ ມີແຕ່ກຽດຫມັ້ນເປັນສົມບັດອັນດຽວແຕ່ມຶງຕໍ່ເປັນພຽງ ສິ່ງຮົກໂລກ , ງົວຄວາຍນະ ມັນ ສັດຊື່ຂອງວ່າມັນກິນຫຍ້າຊື່ໆກະໄດ້ " .

ບາຊະກິນ ເປັນຄົນຮ່າງນ້ອຍ ຜົມແດງ , ເຂົາມັກ ແຖຫນວດເຄົາຮຽບຮ້ອຍສະເຫມີ ຄືດັ່ງນັກສະແດງ ,ມີອິລຍາບົດຫນື້ມນວນປານແມວນ້ອຍ . ບາຊະກິນ ຕັ້ງໂຕເປັນຜູ້ສັ່ງສອນແລະ ຄອຍປົກປ້ອງຄຸ້ມຄອງຂ້ອຍ . ຂ້ອຍຮູ້ວ່າເຂົາຫວັງ ດີຕໍ່ຂ້ອຍ ດ້ວຍໃຈຈິງ , ຢາກໃຫ້ຂ້ອຍມີໂຊກມີຄວາມສຸກ ,ເຂົາເປັນຄົນສະຫລາດ ແລະ ອ່ານຫນັງສືຫລາຍ , ເຂົາ ມັກເລື່ອງ ກົງເຕິ ເດິ ມົງເຕິ ກິດສະໂຕ ທີ່ສຸດ . ເຂົາ ບອກຂ້ອຍວ່າ :

" ປຶ້ມຫົວນີ້ດີ ທັງເນື້ອໃນ ແລະ ຖືກຕາມອາລົມ "

ບາຊະກິນ ເປັນນັກຫລິ້ນສາວ , ເຂົາມັກເວົ້າເຖິງ ແມ່ຍິງ ດ້ວຍຄວາມຊາບຊຶ້ງໃຈ ເລຍຮີມສົບໄປນຳ ປານວ່າພວມກິນຫຍັງແຊບໆ . ເວລາເວົ້າ ຮ່າງກາຍຂອງເຂົາສັ່ນໄປນຳ

ຊຶ່ງມັນບວ່າເປັນອາການ ທີ່ບໍ່ກົມກຽວກັນປານໃດ ຄ້າຍກັບວ່າມີ ຄວາມຮູ້ສຶກກົງກັນຂ້າມ ສະແດງອອກມາພາຍນອກ ຈົນຂ້ອຍຮູ້ ສຶກອະເຫີຍອງ , ແຕຂ້ອຍມັກຟັງເຂົາເວົ້າ , ຂ້ອຍສົນໃຈ- ແລະ ຈັບໃຈໃນວາຈາເຫລົ່ານີ້ .

" ແມ່ຍິງ...ແມ່ຍິງ " ເຂົາມັກເວົ້າຮ່ຳໄຮ ອອກມາ ແກ້ມຈ່ອຍໆຂອງເຂົາມີສີສົ້ມອ່ອນ ແລະ ດວງຕາດຳກໍເປັນ ປະ ກາຍແວວວາວ ດ້ວຍຄວາມກະຕືລືລົ້ນ . " ເຮົາພ້ອມທີ່ ຈະ ເຮັດທຸກຢ່າງເພື່ອແມ່ຍິງ , ແມ່ຍິງນະ ຄືກັນກັບປີສາດ ບໍ່ຈັກ ບາຍ ຫລືຄວາມຜິດດອກ . ຈິ່ງໄຊ້ຊີວິດຢູ່ນຳຄວາມຮັກ -ບໍ່ມີ ຫຍັງຈະດືລື່ມໄປກວ່ານັ້ນ".

ເຂົາມີພອນສະຫວັນພິເສດ ໃນການເວົ້າພັນລະນາ, ເຂົາ ສາມາດແຕ່ງບົດເພງສັ້ນໆໃຫ້ພວກສາວແມ່ຈ້າງ ໄດ້ຢ່າງງ່າຍ ດາຍ . ໂດຍສະເພາະປະເພດເພງທີ່ກ່ຽວກັບຄວາມ ໂສກ ເສົ້າເສຍໃຈ ໃນຄວາມຮັກທີ່ບໍ່ສົມຫວັງ . ໃຜກໍເອົາບົດເພງ ເຫລົ່ານີ້ ໄປຮ້ອງຢູ່ຕາມເມືອງຕ່າງໆແຖວລອງແມ່ນ້ຳໂວນກາ ສຳລັບ ຄົນອື່ນໆແລວ ເຂົາເປັນເຈົ້າຂອງເພງທີ່ຄົນນິຍົມຫຼາຍ ເພງນີ້ :

" ເມື່ອຍິງສາວໄດ້ຮູບ ແລະ ສົມບັດ
ແລະ ແຕ່ງກາຍຂີ້ຮ້າຍຂີ້ເຮໍ
ໃຜຜູ້ໃດໃນໂລກຈຶ່ງຈະຢາກແຕ່ງດອງນຳ ?
ບໍ່ມີ ແມ່ນແຕ່ຄົນດຽວເລີຍ ! "

ຂ້ອຍມີຜູ້ຫວັງດີອີກຄົນໜຶ່ງຄື ຕຣູຊົບ ,-ເປັນຄົນ ທ່າ ທາງມີພິລຶດ , ແຕ່ຮູບຮ່າງໜ້າຕາຈົບງາມ ແຕ່ງໂຕດີ, ນິ້ວ

ມີຮຽວງາມປານນັກດົນຕີ , ເຂົາເປັນເຈົ້າຂອງຮ້ານນ້ອຍໆ-ຮ້ານໜຶ່ງໃນເຂດທ່າເຮືອ , ຕິດປ້າຍໜ້າຮ້ານວ່າ "ຮັບແປງໂມງ" ແຕ່ທຸລະກິດແທ້ຈິງຂອງເຂົາ ແມ່ນຮັບຊື້ຂອງໂຈນ .

" ຢ່າປ່ອຍໃຫ້ໂຕເອງຫລົງກາຍເປັນຂະໂມຍນຳເຂົາເດີ້ລະເປີສະກົບ " ຕຣູຊົບ ເວົ້ານຳຂ້ອຍ ທັງເອົາມືລູບໜວດສີຂີ້ເຖົ່າຂອງເຂົາໄປມາ ຢ່າງເປັນວາດເປັນຊົງ ແລະ ຮີ່ຕາ-ທ້າທາຍ ດ້ວຍເລຫລ່ຽມຂອງເຂົາແນມເບິ່ງຂ້ອຍ .

" ອັນນັ້ນ ມັນບໍ່ແມ່ນເສັ້ນທາງຂອງໂຕ , ເຮົາຮູ້ດີ,ໂຕມັນຄົນທຳມະທຳໂມ " .

" ແປວ່າຢ່າງໃດ ຄົນທຳມະທຳໂມ ? "

" ອ້າວ ! ກະແມ່ນຄົນທີ່ບໍ່ອິດສາບັງບຽດ - ມີແຕ່ ສົນໃຈຢາກຮູ້ຢາກຮຽນຊັ້ນລະບໍ "

ແທ້ແລ້ວ ຄຳຊີ້ແຈງ ຂອງ ຕຣູຊົບ ກໍບໍ່ຖືກຕ້ອງດອກ , ຂ້ອຍເຄີຍເກີດຄວາມຮູ້ສຶກອິດສາລິດສະຫຍາຫລາຍສິ່ງ ຫລາຍຢ່າງ , ນອກເໜືອສິ່ງອື່ນໃດ ຂ້ອຍອິດສາ ບາຊະກິນທີ່ເຂົາມີຄວາມສາມາດໃນການເວົ້າ - ພາສາຂອງເຂົາແປກ ແລະລ່ຽນໄຫລຄືບົດກະວີ , ເຂົາວາດພາບ ແລະ ໄຊ້ສຳນວນຄຳເວົ້າທີ່ແປກຕ່າງຢ່າງເຮົາຄາດບໍ່ເຖິງ , ຂ້ອຍຍັງຈື່ຕອນ ກົກຂອງນິຍາຍຮັກພະຈົນໄພຂອງເຂົາເລື່ອງໜຶ່ງໄດ້ດີ ,ເຂົາຂຶ້ນຕົ້ນວ່າ :

" ໃນຄ່ຳຄືນເດືອນມືດ ຄືນໜຶ່ງ ທີ່ເມືອງຄົນຂີ້ທູກຊ່ ສະວິຢາຊູ , ຂ້ອຍນອນຂົດຢູ່ໃນເຮືອນປານນົກເຄົ້າແມວຢູ່ ເທິງຕົ້ນໄມ້ . ຕອນນັ້ນ ເປັນລະດູໃບໄມ້ຫລົ່ນ , ເດືອນຕຸລາ ,

ຝົນຕົກພໍໂຮຍໆ ແລະ ລົມກໍ່ສົ່ງສຽງຄວນຄາງຄືສຽງເພງຂອງ
ຊາວ ຕາຕາ ທີ່ຮ່ຳໄຮຫາຊູ ສຽງດັງ ໂອ...ໂອ...ໂອ..
ບໍ່ຢຸດບໍ່ຢ່ອນເປັນ...

...ແລະ ແລ້ວນາງກໍຜາກົດຕົວອອກມາ ງົດງາມ ແລະ
ບາງເບົາຄືປຸຍເມກ ຍາມຕາເວັນຂຶ້ນ , ດວງຕາຂອງ ນາງ
ບົ່ງບອກຄວາມບໍລິສຸດຂອງວິນຍານ . "ທີ່ຮັກຂອງນ້ອງ", ນາງ
ກ່າວ , ນ້ຳສຽງບົ່ງບອກຄວາມຈິງໃຈ , " ນ້ອງບໍ່ໄດ້ທໍລະ
ຍົດຕໍ່ອ້າຍເລີຍ! "ຂ້ອຍຮູ້ວ່ານາງຕົວະ ແຕ່ຂ້ອຍກໍຍັງເຊື່ອ -
ນາງ . ສະໝອງຂ້ອຍຮູ້ແຈ້ງ , ແຕ່ຫົວໃຈພັດບໍ່ຍອມ ເຊື່ອ
ວ່ານາງຈະເປັນຜູ້ກະທຳຜິດ " .

ເວລາເວົ້າ ບາຊະກິນ ມັກຈະຫລິ່ວຕາລົງເຄິ່ງຫລັບ, ຄືງ
ໄກວໄປມາຢ່າງເຂົ້າຈັງຫວະ ແລະ ຍົກມືແຕະໜ້າອົກ ທາບ
ບ່ອນເທິງຫົວໃຈນັ້ນ ດ້ວຍທ່າທີນິ້ມນວນຊວນຝັນ .

ສຽງຂອງເຂົາຈາງໆ ບໍ່ມີຂຶ້ນມີລົງ ຫາກແຕ່ຄຳເວົ້າລຽນ
ໄຫລອອກມາ ມີທ່ວງທຳນອງຂອງມັນເອງໃນຕົວ ປານວ່າ ມີ
ນົກເຂົ້າຕູ ຮ້ອງປະສານສຽງຢູ່ນຳ .

ຂ້ອຍກໍອິດສາເຂົາ . ຊາຍຄົນນີ້ມີເລື່ອງເລົ່າທີ່ໜ້າ ປະ
ທັບໃຈກ່ຽວກັບ ຊີເບຣີ , ຄິວາ ແລະ ບູຄາຣາ . ເຂົາ -
ເລົ່າເລື່ອງເຍາະເຍີ້ຍພວກເຈົ້າອາວາດ ໄດ້ມ່ວນ ແຕ່ມີ ອົມ
ຍົ່ມຍືນນຳ , ມີເທື່ອໜຶ່ງ ເຂົາເວົ້າເຖິງພະເຈົ້າຊາອາເລັກ
ຊັງ ທີ ໝີ ຢ່າງມີປີດສະໜາ .

" ພະເຈົ້າຊາອີວານ...ເປັນເອກໃນການດຳເນີນກິລະນີ
ຍະກິດຂອງເພິ່ນ " .

ຂ້ອຍຄິດວ່າ ຕຣູຊິບ ເປັນຄົນປະເພດທີ່ສະແດງຕົວເປັນ" ຜູ້ຮ້າຍ " ໃນນະວະນິຍາຍ , ແລ້ວບາດສຸດທ້າຍມາກໍປີ້ນປູບ ກາຍເປັນຕົວພະເອກໃຈພະຢ່າງຄາດບໍ່ເຖິງເລີຍ ໃນຕອນສຸດ ເລື່ອງ .

ບາງເທື່ອ ໃນຄືນທີ່ຮ້ອນອົບເອົ້າ ພວກເຂົາກໍຂ້າມແມ່ນ້ຳ ຄາຊານກາ ໄປທາງຝັ່ງທີ່ມີທົ່ງຫຍ້າ , ພາກັນໄປນັ່ງຢູ່ນຳປ່າ ໄມ້ ກິນເຫລົ້າ ກິນເຂົ້າ ແລະ ລົມກັນເຖິງເລື່ອງຕ່າງໆ, ມີ ຫລາຍເທື່ອ ທີ່ພວກເຂົາເວົ້າກັນເຖິງເລື່ອງຄວາມສະຫລັບຊັບ ຊ້ອນຂອງຊີວິດມະນຸດ ແລະ ຄວາມສຳພັນອັນສັບສົນວຸ່ນວາຍ. ກ່ອນອື່ນຫມົດ ພວກເຮົາເວົ້າກັນເລື່ອງແມ່ຍິງ – ມີການສຽດ ສີແດ່ ຫລື ເວົ້າຮອດດ້ວຍຄວາມປະທັບໃຈ – ອາໄລຫາ ກໍມີ ແຕ່ສ່ວນຫລວງຫລາຍແລ້ວ ແມ່ນພວກເຂົາສົນທະນາກັນ ແບບ ງົມໆທາງໆໄປໃນບ່ອນທີ່ມືດມົນ ແລະ ຊິ່ງອາດມີສິ່ງຫນ້າຢ້ານ ເລິກລັບສິງຢູ່ . ຂ້ອຍເຄີຍອອກໄປນຳຂະເຈົ້າ ໔-໕ ເທື່ອ. ພາຍໃຕ້ທ້ອງຟ້າທີ່ມືດສະຫນິດ ມີດວງດາວສ່ອງແສງພໍແຕຣິບຣີ່ ພວກເຮົານອນຫລັບ ຢູ່ກ້ອງພຸ່ມໄມ້ ຊິ່ງມີໃບດົກຫນາໃຫ້ຄວາມ ອົບອຸ່ນ , ຮູ້ສຶກວ່າ ອາກາດທີ່ນີ້ປຽກຊຸ່ມ ເພາະແມ່ນ້ຳໂອມ ກາ ກໍຢູ່ບໍ່ໄກເລີຍ . ແມນເຫັນແສງໂຄມໄຟຂອງເຮືອ ຊິ່ງ ແລ່ນຊ້າໆ ມາຈາກທຸກສາລະທິດ ປານແມງມຸມສີຄຳພວມ ໄຕ່ ຫຍັບຍາຍໄປທຸກທິດທຸກທາງ ແລະ ລຽບຝັ່ງແມ່ນ້ຳສີດຳທຶບ ກໍ ແມນເຫັນແສງຕະກຽງ ແລະ ໄຟໃຕ້ສ່ອງຜ່ານປ່ອງຢ້ຽມ – ເຮືອນ ແລະ ຮ້ານເຫລົ້າຂອງຄຸ້ມບ້ານ ອູສະລອນ ທີ່ອຸດົມສົມ ບູນ . ສຽງໃບພັດເຮືອຈັກອາຍນ້ຳຕີນ້ຳເປັນຈັງຫວະ ,ພວກ

ດຳປານຄົນຍີ່ປຸ່ນ ໃບໜ້າເຕັມແຕ່ຈຸດດ່າງດຳ ປານວ່າໝັ້ນປີນ ໄດ້ເຂົ້າໄປຝັງຢູ່ໃນເນື້ອ . ເຂົາເປັນຄົນທີ່ຫລົມຫຍັງກໍ ເກັ່ງ ຫມົດ ທ່າທາງເບີກບານຢູ່ເລີຍໆ ແລະຍັງເວົ້າຈາມີຄາລົມຄົມ ຄາຍ , ເປັນຄົນມີຄວາມສາມາດຫລາຍດ້ານ , ແຕ່ກໍ່ຄືຄົນ-ລັດເຊຍທີ່ເກັ່ງເກືອບທັງຫມົດນັ້ນລະ ເຊົາໃຊ້ຊີວິດໄປຕາມ ທີ່ທຳມະຊາດກຳນົດໃຫ້ , ບໍ່ໄດ້ພະຍາຍາມທີ່ຈະປັບປຸງເສີມຂະຫຍາຍຄວາມສາມາດນັ້ນແຕ່ຢ່າງໃດ . ເຂົາຍັງເປັນຄົນ ຮັກດົນຕີ ແລະ ມີຫູພິເສດ ສາມາດຈຳແນກສຽງ , ມີຄວາມ - ເຂົ້າໃຈເລິກເຊິ່ງໃນດ້ານນີ້ . ເຂົາຫລິ້ນ ກູຊະລີ,ບາລາໄລກາ ແລະ ຂາກໍ ເດືອງໄດ້ດີ ແຕ່ກໍ່ບໍ່ໄດ້ພະຍາຍາມຝຶກຊ້ອມຫລິ້ນເຄື່ອງດົນຕີທີ່ຍາກກວ່ານັ້ນ . ເຂົາເປັນຄົນທຸກຍາກ , ນຸ່ງເຄື່ອງເກົ່າໆ ; ແຕ່ເສື້ອຂາດໆ ແລະ ສົ້ງມີຮອຍຕາບກັບເກີບສົ້ນຫຽນໆຂອງເຂົານັ້ນ ຄືວ່າເຂົ້າແກັບກັນດີກັບຈິດໃຈ ທີ່ຫ້າວຫັນ , ການເໜັງຕີງທີ່ວ່ອງໄວ ແລະ ຮູບຮ່າງທີ່ ໃຫຍ່ລົ້ມແຂງແຮງຂອງເຂົາ .

ເຂົາຄ້າຍຄືຄົນທີ່ຫາກໍພົ້ນຈາກໄຂ້ ພາຍຫລັງເຈັບຈົນ ລົ້ມຫມອນນອນເສື່ອມາດົນ ຫລື ບໍ່ກໍຄືນັກໂທດທີ່ຫາກໍຖືກປ່ອຍ ຕົວອອກມາມື້ວານນີ້ . ສຳລັບເຂົາແລ້ວ ທຸກສິ່ງໃນຊີວິດຄື ວ່າໃໝ່ ແລະ ໜ້າຕື່ນເຕັ້ນສະເໝີ , ມີແຕ່ສິ່ງລະດົມໃຈ ໃຫ້ມ່ວນ ເຮຮາ , ເຂົາກະໂດດໂລດເຕັ້ນຢູ່ໃນໂລກຢ່າງເຕັມ-ຂີດ .

ເມື່ອຮູ້ວ່າ ຊີວິດຂ້ອຍທຸກຍາກລຳບາກຂະໜາດໃດ ເຂົາກໍອອກປາກຊວນຂ້ອຍໄປຢູ່ນຳ ແລະ ສະເໜີໃຫ້ຮຽນເປັນ ຄູ

ປະຈຳບ້ານ , ຈັ່ງຊັ້ນຂ້ອຍຈິ່ງຍ້າຍມາຢູ່ຕຶກສຳລັບຄົນທຸກຍາກ "ມາຣູສີບວະກາ" ທີ່ແປກຕາ , ມີຊີວິດຊີວາ ຊຶ່ງນັກສຶກສາຢູ່ກາຊານ ຫລາຍຮຸ່ນຮູ້ຈັກດີ , ແມ່ນຕຶກໃຫຍ່ເກົ່າແກ່ໃກ້ຈະພັງ ຕັ້ງຢູ່ຖະໜົນ ອິບບໍ່ຣຽດສະກາຢາ ຊຶ່ງມີຄົນຫລາຍປະເພດອາໄສຢູ່ເຕັມ , ນັບແຕ່ນັກສຶກສາຜູ້ອຶດຫິວ , ແມ່ຍິງຫາກິນແລະຄົນທີ່ຄືຊາກສົບໄປແລ້ວ ເບິ່ງຄືວ່າ ພວກເຫລົ່ານີ້ຍຶດເອົາຕຶກ-ມາຈາກເຈົ້າຂອງເດີມ . ກູຣີ ອາໄສຢູ່ຫ້ອງກ້ອງຂັ້ນໄດຊັ້ນໆ ຫລັງຄາ , ມີພຽງຕຽງໂຕະ ແລະ ຕັ່ງອີແມວລະໜ່ວຍເປັນສົມບັດ , ບໍ່ມີຫຍັງອີກ , ຫ້ອງນີ້ເປັນຫ້ອງໂລງຕໍ່ໃສ່ ຫ້ອງສາມຫ້ອງ ຊຶ່ງພວກແມ່ຍິງຫາກິນຢູ່ແລ້ວສອງຫ້ອງ ,ແລະ ອີກຫ້ອງໜຶ່ງແມ່ນນັກສຶກສາຄະນິດສາດຄົນໜຶ່ງຊຶ່ງເປັນປອດແຫ້ງແລະເຄີຍເປັນຫ້ອງນັກຮຽນທາງສາສະໜາອາໄສຢູ່. ເຂົາຜູ້ນີ້ເປັນຄົນຮ່າງຈ່ອຍສູງຈົນເປັນຕາຢ້ານ , ມີຂົນດົກສີ ແດງເຕັມໄປທົ່ວ , ນຸ່ງເຄື່ອງເປິເປື້ອນ ແລະ ຂາດສ້ອຍ ຈົນເກືອບປົກປິດເນື້ອກາຍຂອງເຂົາບໍ່ໝົດຊ້ຳ . ຖາເບິ່ງ ລອດຮູ້ຜາຂາດເຂົ້າໄປກໍຈະເຫັນຜິວໜັງສີກ່ຳ ແລະ ໂຄງກະ ດູກຂາງທີ່ໜ້າຜາງໝາຍຂອງເຂົາ .

ເບິ່ງຊົງເຂົາຄືບໍ່ໄດ້ກິນຫຍັງຕົກທ້ອງເລີຍ ນອກຈາກ ໄດ້ແຕ່ແຫນເລັບມີຢູ່ພໍ່ສ່ຳນັ້ນ , ເຂົາມັກຈະເຮັດວຽກຄິດໄລ່ ຄຳນວນເລກອັນໃດອັນໜຶ່ງຢູ່ທັງວັນທັງຄືນ , ເຮັດໄປນຳແລະກໍໄອສຽງແຫບແຫ້ງຢູ່ຕະຫລອດເວລາ . ພວກສາວແມ່ຈ້າງ-ພາກັນຢ້ານເຂົາ ດ້ວຍຄິດວ່າເຂົາເປັນບ້າ , ແຕ່ຍອນຄວາມສົງສານ ຂະເຈົ້າກໍຍັງມັກເອົາເຂົ້າຈີ່ , ຊາ ແລະນ້ຳ ຕານ

ໄປວາງໄວ້ໜ້າປະຕູຫ້ອງຂອງເຂົາ . ເຂົາຈະອອກມາຢິບ-ເອົາເຄື່ອງຂອງເຫລົ່ານັ້ນທັງຫົດຫອບ ປານມາທີ່ແລ່ນ ມາເມື່ອຍໆ . ຖ້າມື້ໃດ ພວກແມ່ຍິງລືມເອົາຂອງກິນໃຫ້ ຫລືວ່າຂະເຈົ້າບໍ່ສາມາດເອົາມາໃຫ້ ຫລືແນວໃດນັ້ນ , ເຂົາ ກໍຈະອອກມາຢືນຢູ່ປາກປະຕູຫ້ອງ ຮ້ອງໂຫວກເຫວກຂຶ້ນວ່າ :

" ຂອງກິນເດ້ ! "

ຕາຂອງເຂົາໂກນຢູ່ໃນເບົ້າມືດໆ ແຕ່ສ່ອງປະກາຍ ແບບຈອງຫອງຄືຄົນບ້າ , ທີ່ພາກພູມໃຈໃນຄວາມສຳນຶກວ່າ ຕົນເອງຍິ່ງໃຫຍ່ . ດົນໆເຂົາຈຶ່ງມີຄົນມາຢາມ ເປັນຄົນຮ້າງ - ນ້ອຍພິການ , ຫລັງອອງ ແລະ ຂາກໍເປຂາງໜຶ່ງ -ຜົມສີຂີ້ເຖົ່າ , ແວ່ນຕາແກວໜາໆຍ່ອງຢູ່ດັ້ງໄປໆ . ໜາຕາ ລ່າເຫລືອງຄືຊາຍທີ່ຖືກຕອນ ແຕ່ແຝງຮອຍຍິ້ມທີ່ມີເລ່ຫລ່ຽມ ວາດໜຶ່ງ , ພໍມາຮອດ ຂະເຈົ້າກໍຈະເຂົ້າໄປໃນຫ້ອງນຳກັນແລ້ວກໍອັດປະຕູມິດງຽບ ບໍ່ມີສຽງຜ່ານອອກມາ ນັບເປັນຫລາຍ ຊົ່ວໂມງ , ມີເທື່ອໜຶ່ງເດິກແລ້ວ , ຂ້ອຍຕົກໃຈຕື່ນຂຶ້ນມາຍ້ອນສຽງຮ້ອງແຫບໆຂອງນັກຄະນິສາດຄົນນັ້ນ ທີ່ຮ້າຍຮົ້ນຂຶ້ນວ່າ :

" ເອີ້ - ແມ່ນແລ້ວ , ກະຍັງບອກແລ້ວວ່າ ມັນ ແມ່ນຖູກ ! ເລຂາຄະນິດນະເປັນຖູກ ! ກະຍັງວ່າ ມັນເປັນ ກັບດັກໜູ ! ເປັນຖູກ ! "

ແລ້ວຊາຍຮູບຜີຫລັງອອງ ກໍພູຖອຍຄວາມອັນແນວຂ້ອຍ ບໍ່ເຄີຍໄດ້ຍິນມາກ່ອນ , ເວົ້າຊ້ຳໄປຊ້ຳມາສຽງແຫລມໆບໍ່ເປັນຕາຟັງທັງຫົວຄຶກໆ ໂດຍມີສຽງຂອງຝ່າຍ ນັກຄະນິດສາດສວນຂຶ້ນມາອີກ .

" ໄປ-ໄປ ! ຊິໄປລົງຫມໍ້ນາຣົກທາງໃດກໍໄປ ! "

ຜູ້ມາຢາມເປັນຝ່າຍຍອມຫົນຫລັງອອກມາ ທາງຫ້ອງໂລ່ງກາງ ທັງພຶມພໍາຢ່າງແຄ້ນເຄືອງ . ເຂົາດຶງເສື້ອຊຸມໂຕໃຫຍ່ອອກມາສຸບທັງກະຊຸກກະຊາກ ພໍດີກັບທີ່ນັກຄະນິດສາດພາຣາງຈອຍສູງຜົມຫຍຸງ ໜ້າເຖົາເປັນຕາຢ້ານນັ້ນອອກມາ ເຂົາເອົາມື້ທນຜົມໂຕເອງທັງຮ້ອງວ່າ :

" ເອຶກລິດ ແມ່ນບັກຈ້າ ! ບັກຈ້າ ຮູ້ບໍ່ ?ເຮົາຊິພິສູດໃຫ້ເຫັນນ່າວ່າ ພະເຈົ້າຍັງມີມັນສະຫມອງກວ່າບັກຄົນເງິກໂງ່ໂງ່ນັ້ນຊູ້ ! "

ແລ້ວເຂົາກໍຍ່າງຫລົບເຂົ້າຫ້ອງຄືນ ທັງແດກປະຕູນຳຫລັງຫມົດແຮງ ຈົນເຄື່ອງຂອງໃນຫ້ອງຕົກລົງມາດັງເຄ່ງຄ່າງ .

ບໍ່ດົນຂ້ອຍຈຶ່ງຮູ້ວ່າ ຊາຍຜູ້ນີ້ພະຍາຍາມຈະພິສູດວ່າ ພະເຈົ້າມີແທ້ຈິງ ໂດຍອາໃສທິດສະດີທາງຄະນິດສາດຊັ້ນສູງ ແຕ່ແລ້ວ ເຂົາກໍຕາຍໄປ ກ່ອນທີ່ຈະປະສົບຄວາມສຳເລັດ .

ກູຣີ ເປີດຍົບ ເຮັດວຽກຢູ່ໂຮງພິມແຫ່ງໜຶ່ງ , ເປັນ ຜູ້ກວດຄຳຜິດໜັງສືພິມໃນຕອນກາງຄືນ ໄດ້ຄ່າຈ້າງຄືນລະ ໑໑ ໂກເປັກ . ຖ້າແມ່ນຂ້ອຍບໍ່ສາມາດຫາວຽກໄດ້ເທື່ອພວກເຮົາກໍຈະດຳລົງຊີວິດຢູ່ດ້ວຍເຂົ້າຈີ່ມື້ລະ ໔ ກິໂລ , ຊາລາຄາ ໔ ໂກເປັກ ແລະ ນ້ຳຕານລາຄາ ໓ ໂກເປັກ . ສ່ວນຂ້ອຍບໍ່ມີເວລາອອກໄປເຮັດວຽກດອກ ເພາະຕ້ອງຮຽນດ້ວຍຕົນເອງ. ການຮຽນແບບນີ້ ໜັກສົມຄວນ ໂດຍສະເພາະພາສາລັດເຊຍຊຶ່ງເຕັມໄປດ້ວຍຫລັກໄວຍາກອນທີ່ບໍ່ສົມເຫດສົມຜົນ ຈົນ ວ່າຂ້ອຍຮູ້ສຶກວ່າ ຕົນເອງບໍ່ສາມາດຈະເວົ້າພາສາລັດເຊຍໃຫ້ຖືກ

ຕ້ອງໄດ້ - ເກີນວ່າມັນຍາກ ແລະ ມີຫລາຍພິກຫລາຍແພງ-ເອົາແທ້ . ຢ່າງໃດກໍຕາມ , ບໍ່ດົນ ຂ້ອຍກໍໂລ່ງໃຈຂຶ້ນເມື່ອທັງຄູ ແລະ ຂ້ອຍຕ່າງກໍພົບວ່າ ຂ້ອຍໄດ້ເລີ່ມຕົ້ນຮຽນລ້ຳຫນ້າໄປໂພດແລ້ວ - ຊຶ່ງປະການນີ້ ຖ້າແມ່ນວ່າ ຂ້ອຍຫາກ ສອບເສັງຜ່ານຊັ້ນຄູປະຈຳບ້ານ , ເພິ່ນກໍຈະບໍ່ຮັບເອົາຂ້ອຍ ເຂົ້າເຮັດວຽກຢູ່ນັ້ນເອງ ເພາະຂ້ອຍຍັງອາຍຸບໍ່ເຖິງກະສຽນ .

ເປີດຍົບ ກັບຂ້ອຍນອນຕຽງດຽວກັນ - ເຂົານອນ ຕອນກາງເວັນ , ສ່ວນຂ້ອຍ ນອນຕອນກາງຄືນ , ເຂົາຄືນມາ-ເຮືອນແຕ່ເຊົ້າໆ ພາຍຫລັງກາກກຳເຮັດວຽກມາຕະຫລອດຄືນ, ຫນ້າຕາຂອງເຂົາຫມອງຄ່ຳກວ່າປົກກະຕິ ແລະ ຕາກໍແດງກີ. ຂ້ອຍຈຶ່ງຟ້າວແລ່ນໄປຊື້ນ້ຳຮ້ອນຢູ່ຮ້ານເຄື່ອງດື່ມມາໃຫ້ ເພາະພວກເຮົາບໍ່ມີຫມໍ້ກາ ຊາໂມວາ , ແລ້ວຈາກນັ້ນ ພວກເຮົາກໍຈະນັ່ງກິນເຂົ້າຈີ່ກັບນ້ຳຊາ ເປັນການປັ້ນເຂົ້າພອມໆກັນທີ່ໂຕະແຄມປ່ອງຢ້ຽມ . ກູຣິ ມັກຈະເລົ່າຂ່າວທີ່ລົງໃນຫນ້າຫນັງ ສືພິມເຊົ້ານັ້ນ ໃຫ້ຂ້ອຍຟັງ ຫລື ເລົ່າກອນຕະຫລົກໆ ທີ່ນັກຂຽນບົດຄວາມຂີ້ເຫລົ້າຄົນຫນຶ່ງແຕ່ງຂຶ້ນ ໂດຍໃສ່ນາມປາກກາວ່າ" ໂຄມິໂນແດງ" . ກູຣິ ມັກຈະເຮັດໃຫ້ຂ້ອຍປະຫລາດໃຈ ສະເຫມີ ກ່ຽວກັບການເບິ່ງຊີວິດໃນແງ່ມ່ວນຊື່ນຂອງເຂົາດັ່ງເຊັ່ນທີ່ເຂົາປະພຶດຕໍ່ສາວອ໊ອງປ໊ງ ການກີນາ ຜູ້ເປັນແມ່ສື່ແລະ ຂາຍເຄື່ອງເກົ່າ .

ກູຣິ ເຊົ່າຫ້ອງນ້ອຍກ້ອງຂັ້ນໄດ ຈາກສາວອ໊ອງປ໊ງການກີ-ນາ ນີ້ເອງ , ໂດຍທີ່ບໍ່ມີເງິນຈ່າຍຄ່າ"ຫ້ອງ"ເຂົາກໍຈະເລົ່າເລື່ອງຕະຫລົກ ຫລື ຫລິ້ນອາກາກໍເດີອງ ແລະ ຮ້ອງເພງຮັກໆ

ມັກໆສູ່ລາວຟັງເພື່ອເປັນການທົດແທນ - ເຂົາຮ້ອງເພງດ້ວຍ ສຽງຫອງອອນຊອນຫູ ທັງຕາມີປະກາຍເຍາະເຍີ້ຍ.ສາວການ ກິນາຜູ້ນີ້ ເຄີຍເປັນນັກຮ້ອງຫມູ່ໃນໂຮງລະຄອນ ໂອເປຣາໃນ ສະໄຫມຍັງເປັນສາວ , ລາວກໍເລີຍຮູ້ດີລາຄາໄດ້ວ່າ ສຽງ ມ່ວນຫລືບໍ . ລາງເທື່ອ ລາວກໍຊາບຊຶ້ງນຳສຽງເພງ ຂອງ ເຂົາ ຈົນນ້ຳຕາໄຫລອອກມາ ນຳຮ້ອງແກມຫຽວໆ ແລະ ຊ້ຳ ຍ້ອນລິດເຫລົ້າ ແລະ ຍ້ອນການກິນອາຫານຫລາຍເກີນຄວນ.

ຈາກນັ້ນ ລາວກໍຈະເອົາມືອັນທີ່ອວບອູມເຊັດນ້ຳຕາ ອອກ ຈາກແກ້ມ ແລ້ວກໍຄ່ອຍໆເຊັດມືອັນນັ້ນດ້ວຍຜ້າແພມົນພົນ ເປິ ເປື້ອນ .

"ໂອ ກູຣີ...ກູຣີ...ເຈົ້າເປັນສິລະປິນເຕັມໂຕເລີຍລະ" ລາວເວົ້າພຶມພຳທັງຖອນຫັນໃຈ "ຖ້າເຈົ້າຫນ້າຕາດີກວ່ານີ້ຈັກ ຫນ່ອຍ ລະແມ່ນຂ້ອຍຊິຈັດການທຸກຢ່າງໃຫ້ເຈົ້າເອງ. ຊິຫາແມ່ ຍິງໃຫ້ - ແມ່ຍິງທີ່ຢູ່ໂດດດ່ຽວປ່ຽວພອຍຄືທີ່ຂ້ອຍເຄີຍ ຈັດຫາ ໃຫ້ພວກອ້າຍບ່າວຊຸມນັ້ນມາແລ້ວ ຈັ່ງໃດລະ " .

ມີຄົນປະເພດ "ອ້າຍບ່າວ"ທີ່ວ່ານັ້ນຄົນຫນຶ່ງ ອາໄສ ຢູ່ ຫ້ອງກ້ອງຫລັງຄາ ເທິງຫົວພວກເຮົາຂຶ້ນໄປ . ເຂົາເປັນນັກ ສຶກສາ , ພໍເປັນຄົນນວດຫນັງສັດ . ຊາຍຫນຸ່ມຄົນນີ້ ຮູບ ຮ່າງປານກາງ ບ່າກວ້າງ ແຕ່ກະໂພກລີບ ຜິດປົກກະຕິ ເຮັດ ໃຫ້ຮູບຮ່າງຂອງເຂົາຄືຮູບສາມຫລ່ຽມປີ້ນຫົວລົງ ແລ້ວຕັດປາຍ ປ້ານລົງຫນ່ອຍຫນຶ່ງ , ຕີນເຂົານ້ອຍຄືຕີນແມ່ຍິງ,ຫົວກໍ ນ້ອຍ ຈົນຄືວ່າຈະຈົມລົງໄປລະຫວ່າງບ່າໄຫລ່ທັງຄູ່ . ຜົມຂອງເຂົາ ສັ້ນແຂງເປັນສີແດງ ໃບຫນ້າທີ່ຂາວເມັ້ນ ແລະດວງຕາສີຂຽວ

ສວດອອກມາ ມີແວວເສົ້າຢູ່ເລີຍໆ .

ທັງທ້ອດຢາກຫົວໂຫຍປານຫມາບໍ່ມີເຈົ້າ ແລະພໍກໍບໍ່ເຫັນດີ ນຳເລີຍ ເຂົາກໍຍັງອົດທົນຜ່ານຜ່າດ້ວຍວິທີໃດບໍ່ຮູ້ ຈົນສາມາດ ຮຽນສູດອຸດົມ ແລະ ເສັງຜ່ານປີກຽມເຂົ້າມະຫາວິທະຍາ ໄລໄດ້ສຳເລັດ ແລະ ເມື່ອຮູ້ຕົວວ່າ ຕົນມີສຽງທຸ້ມນວນດີ ເຂົາກໍ ເລີຍຕັ້ງໃຈຈະຮຽນຕໍ່ດ້ານການຮອງເພງ .

ດັ່ງນີ້ແລ້ວ ເຂົາຈຶ່ງຕົກເຂົ້າໄປໃນຫລຸມພາງຂອງສາວ - ການກິນາ ຊຶ່ງຍົກເອົາໃຫ້ແກ່ແມ່ຄ້າຜູ້ຮັ່ງມີຄົນຫນຶ່ງ .ນາງອາ ຍຸ ປະມານ ໔໐ ປີ ມີລູກຊາຍຮຽນຢູ່ປີສາມໃນມະຫາວິທະຍາ ໄລ ແລະ ລູກສາວພວມຈະສູດຊັ້ນອູດົມແລ້ວ . ແມ່ຍິງຄົນ ນີ້ ຈ່ອຍແປ່ຍຽດຊື່ປານທະຫານ ແລະ ຫນ້າຕາເຢັນຊາປານແມ່ຊີ ຜູ້ເຄັ່ງອິ່ມ ບໍ່ສະແດງອາລົມອັນໃດອອກມາເລີຍ , ດວງ ຕາ ໃຫຍ່ ສີຂີ້ເຖົ່າຂອງນາງ ຢູ່ໃນເບົ້າຕາເລິກ . ນາງມັກແຕ່ງ ຕົວດ້ວຍເຄື່ອງສີດຳເປັນປະຈຳ , ເອົາຜ້າໄຫມຕ່ຳແບບຫລາ ສະໄຫມປົກຫົວ ແລະ ໃສ່ຕຸ້ມຫູເຮັດດ້ວຍຫີນສີຂຽວ .

ບາງຄັ້ງບາງຄາວ ນາງມັກຈະມາຫາ " ອາຍບ່າວ " ຜູ້ ນີ້ໃນຕອນເດິກຫລືຂ້ອນແຈ້ງ , ຂອຍມັກຈະເຫັນລາວຊຸກປະຕູ ຮົ້ວຍ່າງຜ່າເດີ່ນບ້ານເຂົ້າມາໄວໆ ດ້ວຍບາດຕີນທີ່ເດັດ ດ່ຽວ ຕັດສິນໃຈ , ມີສິ່ງຫນ້າຢ້ານກົວປະກົດທີ່ໃບຫນ້າຂອງລາວ : ຮີມສົບເມັ້ມເຂົ້າ ຈົນບໍ່ເຫັນເລີຍ , ແລະ ດວງຕາມີແວວສົນ ຫວັງເບີກກວ້າງ ເບິ່ງໄປຫນ້າຢ່າງໄຮ້ຈຸດຫມາຍຄືຕາທີ່ ບອດ ແຈ້ງ . ຄວາມຈິງແລ້ວ ນາງບໍ່ແມ່ນຄົນຜູ້ເຮີເລີຍ ແຕ່ ຄົງ ຍອມຄວາມເຄັ່ງຕຶງນັ້ນເອງ ທີ່ບິດເບືອນຫນ້າຕາໃຫ້ຜິດ ປະ

ຫລາດໄປ .

ເບິ່ງແມ້ " ກູຣີ ບອກຂ້ອຍ , " ເບິ່ງແມ້ - ຄືຄົນ ຜີບ້າບໍ້ ? "

ນັກສຶກສາຄົນນັ້ນຊັງນາງ ແລະ ພະຍາຍາມຫລີກເວັ້ນ - ນາງ ; ແຕ່ຝ່າຍຍິງ ກໍຄອຍຕິດຕາມເຂົາປານສາຍລັບ ຫລືເຈົ້າຫນີ້ຕິດຕາມລູກຫນີ້ .

" ຂ້ອຍບໍ່ມີຄວາມຫມາຍຫຍັງດອກ " ເຂົາມັກຈະຮ່ຳໄຮ ຫລັງຈາກກິນເຫລົ້າເຂົ້າໄປຫລາຍເຕີບແລ້ວ , " ຂ້ອຍ ຊິຮຽນຮ້ອງເພງໄປເຮັດຫຍັງເກາະ ? ເຂົາບໍ່ມີຊິໃຫ້ຂ້ອຍ ຂຶ້ນເທິງເວທີດອກ - ຮູບຮ່າງຫນ້າຕາຄືຂ້ອຍນະ ! ເຂົາບໍ່ມີຊິ- ໃຫ້ເຂົ້າໄປໃກ້ເວທີຂ້າດອກ ! "

" ຊັ້ນກໍເຊົາກ່ຽວຂ້ອງນຳເຂົາຕີ້ ! " ເປີ້ດຍິບແນະນຳ.

" ຂ້ອຍຮູ້ຕົວຢູ່ ແຕ່ຂ້ອຍພັດສົງສານລາວ...ຂ້ອຍຫມາຍ ຂ້ອຍທົນບໍ່ໄດ້ອີກແລ້ວ , ແຕ່ກໍຍັງສົງສານລາວ ! ເຈົ້າ ຮູ້ແລ້ວຕີ້ , ວ່າແລ້ວຕ່ວາ..."

ພວກເຮົາຮູ້ເລື່ອງດີ , ກາງຄືນເດິກໆ ພວກເຮົາໄດ້ຍິນສຽງນາງມາຢືນຢູ່ຂັ້ນໄດຂຶ້ນຊັ້ນຕິດຫລັງຄາ ຮ້ອງອ້ອນ ວອນສຽງສັ່ນໆວ່າ :

" ຄິດວ່າເຮັດເອົາບຸນ ! ທີ່ຮັກ ຄິດວ່າເຮັດເອົາບຸນ!"

ນາງເປັນເຈົ້າຂອງໂຮງງານໃຫຍ່ແຫ່ງຫນຶ່ງ ມີຊັບສິນ ທີ່ດິນ ແລະ ລ້ຽງມ້າໄວ້ຫລວງຫລາຍ , ນາງບໍລິຈາກເງິນນັບເປັນພັນໆຮູບ ເພື່ອຊ່ວຍເຫລືອໂຮງຮຽນພະດຸງຄັນ ແຕ່ ກັບຕ້ອງຮ້ອງຂໍຄວາມຮັກປານຄົນຂໍທານ .

ຫລັງຈາກກິນເຂົ້າເຊົ້າແລ້ວ ກູຣິ ກໍເຂົ້ານອນ , ສ່ວນ-ຂ້ອຍອອກໄປຊອກວຽກເຮັດ , ກວາຈະກັບມາກໍຄ່ຳ ພໍດີເປັນເວລາທີ່ເຂົາຈະອອກໄປໂຮງພິມ . ຖ້າຂ້ອຍຊື້ຂອງກິນມາ - ຈະແມ່ນເຂົ້າຈີ່ , ໄສ້ອົ່ວ , ຫລືເຄື່ອງໃນງົວຕົ້ມເປື່ອຍພວກເຮົາກໍແບ່ງກັນຄົນເຄິ່ງ , ເຂົາຫໍ່ສ່ວນຂອງເຂົາໄປກິນຢູ່ບ່ອນເຮັດວຽກ .

ເມື່ອເຂົາໄປແລ້ວ , ຂ້ອຍກໍຈະຍ່າງເລາະຫລິ້ນນຳຫ້ອງໂລ່ງກາງ ແລະ ລະບຽງເຮືອນ " ມາຣູໂສວະກາ " ຂອງເຮົາ ເພື່ອສັງເກດເບິ່ງຊີວິດຂອງຄົນໃນເຮືອນ ທີ່ຫນ້າສົນໃຈ, ໃຫມ່ ແລະ ແປກປະຫລາດສຳລັບຂ້ອຍ . ເຮືອນຫລັງນີ້ມີຄົນຢູ່ແຫນ້ນແອອັດປານຮັງມົດ . ກິ່ນເຫມັນບູດສົ້ມໆກະຈາຍກົ້ວ-ທົ່ວ ໂດຍບໍ່ຮູ້ວ່າມັນມາຈາກໃສແດ່. ຕາມຈອກແຈຫ້ອງ ຄືວ່າມີເງົາມືດຕຶບເປັນຕາຢ້ານ ຄືຈະຈ້ອງຈັບທຳຮ້າຍແກ່ຄົນຢູ່ ທຸກເວລາ . ຕັ້ງແຕ່ເຊົ້າຈົນຄ່ຳ ເດິກ ສຽງສັບສົນຂອງຊີວິດຈະດຳເນີນໄປບໍ່ຂາດໄລຍະ . ສຽງຫຍິບຈັກດັງຄວນຄາງຢູ່ບໍ່ຢຸດຢ່ອນ , ປະສົມກັບສຽງແຫລມສູງຂອງບັນດາສາວນ້ອຍທີ່ເປັນນັກຮຽນ ຮ້ອງຫມູ່ໃນໂຮງ ໂອເປຣາຕະຫລົກ , ສຽງທຸ້ມຕ່ຳຂອງນັກສຶກສາຢູ່ຫ້ອງກອງຫລັງຄາ , ສຽງເລົ່າບົດພຶມພຳ - ຂອງນັກສະແດງບໍ່ເຕັມບາດ , ສຽງຮ້ອງກົດກາດຂອງ ພວກສາວແມ່ຈ້າງ ທີ່ເມົາເຫລົ້າ , ຈາກສິ່ງເຫລົ່ານີ້ເອງຄຳຖາມຫນຶ່ງພຸດຂຶ້ນມາໃນຫົວໃຈຂອງຂ້ອຍ ແລະ ຂ້ອຍກໍບໍ່ອາດຫາຄຳຕອບໃຫ້ແກ່ຕົວເອງໄດ້ :

" ຊີວິດແນວນີ້ ມີຄວາມຫມາຍຢູ່ບ່ອນໃດ ? "

ມີຜູ້ຊາຍອີກຄົນໜຶ່ງ ທີ່ອາໄສຢູ່ໃນເຮືອນຫລັງນີ້ , ເຂົາມີຊີວິດຢູ່ຢ່າງໄຮ້ຈຸດໝາຍ ຢູ່ນຳພວກໜຸ່ມນ້ອຍທຸກຍາກຈົນຈະຕາຍອຶດ , ເຂົາມີຜົມສີນ້ຳຕານປົນແດງປົ່ງຢູ່ກາງຫົວ ຊຶ່ງ - ໂລ້ນອ້ອນເກືອບໝົດ , ທ້ອງໂຊ້ນອອກ ແຕ່ຂາຈ່ອຍໆ, ກະດູກໂຫນ້ກແກ້ມສູງ ປາກກວ້າງ ແຂ້ວເຫລັ້ມໃຫຍ່ສີເຫລືອງ - ປ່ານແຂ້ວມ້າ ເຂົາຈຶ່ງມີສົມຍານາມວ່າ " ຕາມາແດງ ". ເຂົາພົວພັນຢູ່ກັບຄະດີກ່າວຟ້ອງຍາດພີ່ນ້ອງ ຊຶ່ງເປັນພໍ່ຄ້າ ຢູ່ເມືອງ ຊຸມບຽກ , ເປັນຄະດີທີ່ແກ່ຍາວມາຮອດສາມປີແລ້ວ, ສະນັ້ນ ທະແນມມີຄົນສົນໃຈຟັງແດ່ເຂົາກໍຈະສາທະຍາຍໃຫ້ຟັງໂລດວ່າ :

" ກູຢາກຕາຍເດ້ - ແຕ່ຊູ້ຕ້ອງເອົາເງິນມັນມາໃຫ້ໝົດທຸກກີບທຸກອັດເລີຍລະ ຣິ ! ໃຫ້ມັນໄດ້ສຳນຶກເຖິງຄວາມ ລຳບາກຍາກແຄ້ນແດ້ , ໃຫ້ມັນຕ້ອງຂໍທານເຂົາກິນຈັກສາມ ປີເບິ່ງກ່ອນ ແລ້ວກູຈັ່ງຊິເອົາຄືນໃຫ້ໝົດ ອັນທີ່ກູຊິໄດ້ມາຈາກ-ມັນ ຕອນກູແພ້ຄະດີມັນນະ , ແລ້ວກູຊິຖາມພວກມັນວ່າ - ວ່າຈັ່ງໃດເວີ້ຍ...ມຶງຊິວ່າຈັ່ງໃດ...ແຫ່ໄດ ກູຊິເຮັດມັນຈັ່ງຊັ້ນແຫ່ໄດ - ໃຫ້ຕາຍແມ້ ! "

" ນັ້ນແມ່ນຄວາມຫວັງໃນຊີວິດຂອງເຈົ້າແມ່ນບໍ່ ຕາ ມ້າແດງ ? "

ລາວຄົນກໍຖາມເຂົາແນວນັ້ນ ; ແລ້ວເຂົາກໍຈະຕອບທັນທີວ່າ :

" ເອີ້ ກູຕັ້ງໃຈໄວ້ຈັ່ງຊັ້ນລະ , ໝົດຈິດໝົດໃຈເລີຍ-ລະ ແລະ ກູກໍຈົນບໍ່ມີເວລາຈະຄຶດຫາຫຍັງອີກແລ້ວ " .

ເຂົາໃຊ້ເວລາທັງໝົດຢູ່ນຳສານແຂວງ ແລະ ສານສູງ-
ຫລັບຂຸ່ນກໍໄປຫາທະນາຍຄວາມ . ບາງເທື່ອໃນຕອນ ແລງ
ເຂົາກໍຈ້າງລົດກັບມາ ຫອບເຄື່ອງຂອງອິລຸງຕຸ້ງນັງ ບໍ່ຈັກ ວ່າ
ເປັນແກ້ວ ເປັນຖົງສຳມະປິ ເພື່ອຈັດງານກິນລ້ຽງຂຶ້ນໃນຕອງ
ເປີເປື້ອນ ອື່ງເພດານໃກ້ຈະຫລູ້ລົງແລວ . ເຂົາເຊີນນັກສຶກ
ສາ , ນັກຮຽນ , ຊ່າງຫຍິບຜ້າ ຄື ທຸກຄົນທີ່ຕອງການ ກິນ
ໃຫ້ອິ່ມໆ ແລະ ດື່ມຫນອຍໆ . ຕົວເຂົາເອງ " ຕາມາແດງ"
ເຂົາດື່ມແຕ່ເຫລົ້າໂຣມແນ້ວດຽວ , ທັງກິນທັງເຣັດເຣ່ຍ ຊະ
ຊາຍໃສ່ພື້ນເຮືອນ , ຜ້າປູໂຕະ ແລະ ສົ້ງເສື້ອຈົນເປັນຈຸດ-
ແດງຊ້ຳ ຊັກບໍ່ອອກ . ພໍດື່ມເຂົ້າໄປແລວ ເຂົາກໍຄວນ ຄາງ
ວ່າ :

" ນົກນ້ອຍ , ໂອ້ ນົກນ້ອຍເອີ້ຍ ! ພໍ່ຮັກເຈົ້າ, ເຈົ້າຊື່
ສັດ , ພໍ່ຕິບັກຊາດຊົ່ວ ບັກແຂ້ໂກງ ! ຊິທຳລາຍຮອດ ກະ
ຫັ້ວຍາດພື້ນອງຂອງຕົວເອງ , ແລວກະຊິເຮັດຈົນໄດ້ ,ແທ້,
ເວົ້າແທ້ໄດ້ - ພະຜູ້ເປັນເຈົ້າກະດ້າຍ ຟັງເດີ້ ! ຂອຍ ຊິ
ເຮັດແທ້ໄດ້ ! ໂອຍ ກູຢາກຕາຍເດ້ , ແຕ່ວ່າ..."

ແລວເຂົາກໍພັບຕາຖື່ງ ຢ່າງໝາສົ້ງສານ ນ້ຳຕາໄຫລລົງ
ມາອາບໃບຫນາອັບປະລັກນັ້ນ , ເຂົາເອົາມືປ້າຍນ້ຳຕາແລວ
ເຊັດໃສ່ຕົວເຂົ່າ . ສົ້ງຂາຍາວຂອງເຂົາມີຮອຍເປັນມັນ -
ເປື້ອນເປິເລິເທິຢູ່ເລີຍໆ .

" ແມ່ນພວກສູມີຊີວິດຢູ່ຈັ່ງໃດກັນເກາະ ສູ ? " ເຂົາ -
ຮ້ອງຂຶ້ນ , " ພາກັນອົດຢາກຫອດຫິວ , ໝາວຈົນຊິ ກະ
ດ້າງຕາຍ , ເສື້ອຜ້າຫລືເກືອບຈະບໍ່ມີໃສ່ , ມັນຖືກຕອງ-

ແລ້ວບໍ? ຢູ່ກັນແບບນີ້ ແລ້ວມັນໄດ້ຫຍັງເປັນບົດຮຽນຫື ?ນີ້ຄົນ ແມ່ນພະເຈົ້າຊາ ເພິ່ນຮູ້ວ່າ ພວກສູຢູ່ກັນຈັ່ງໃດລະ... ຖາ-ເບິ່ງ..."

ເຂົາຈົກເງິນອອກມາຈາກຖົງຕັບໜຶ່ງ ທັງຮ້ອງວ່າ :

" ໃຜຢາກໄດ້ເງິນແດ່...ເອົາ...ເອົາໄປບັກນ້ອງ -ຊາຍ ! "

ພວກຜູ້ຍິງທີ່ເປັນນັກຮ້ອງແລະ ຊ່າງຫຍິບຜ້າ ກໍພາ ກັນເຂົ້າມາຍາດເອົາເງິນຈາກມືເຂົາເປັນວຸ່ນໆ , ເຂົາຫົວສຽງດັງໆ ແລະ ວ່າ :

" ບໍ່ແມ່ນໃຫ້ພວກສູ ! ກູຈະໃຫ້ພວກນັກສຶກສາພຸ້ນ ! "

ແຕ່ກໍບໍ່ມີນັກສຶກສາຄົນໃດເອົາເງິນເລີຍ .

" ບໍ່ຫຼູລະກັບເງິນ " ລູກຊາຍຄົນນອດໜັງສັດເວົ້າແດກອອກມາຢ່າງໂກດແຄ້ນ .

ເທື່ອໜຶ່ງ ຂະນະທີ່ເມົາຂະໜາດໜັກ , ນັກສຶກສາຜູ້ນີ້ມາຫາ ກູຣີ ແລະໂຍນເງິນໃບສິບຣູບ ທີ່ເຂົາຍອງຍິ້ມເປັນ-ກ້ອນກົມໆລົງໃສ່ໂຕະ .

" ຢາກໄດ້ເງິນບໍ່ ? ເອົາແມ້...ເອົາ!...ກູບໍ່ຕ້ອງການມັນດອກ " .

ແລ້ວເຂົາກໍລົ້ມນອນລົງເທິງຕຽງຂອງເຮົາສະອື້ນໄຫ້ຄວນຄາງສຽງດັງ ຈົນພວກເຮົາຕ້ອງເອົານ້ຳມາສາດໃສ່ ແລ້ວບັງຄັບໃຫ້ເຂົາກິນນ້ຳເຂົ້າໄປ . ຕອນເຂົາພວມຫລັບ ກູຣີ ພະຍາຍາມຈະພີ່ໃບເງິນອອກ ແຕ່ມັນຖືກຍອງຈົນຕິດກັນເປັນກ້ອນ. ເຂົາຕ້ອງເອົາໄປແຊ່ນ້ຳຮ້ອນຈິ່ງພີ່ອອກໄດ້ .

ຫ້ອງຂອງ " ຕາມາແດງ " ຍາມໃດກໍກຸ້ມດ້ວຍຄວັນ ,
ປ່ອງປ້ຽມນັ້ນພໍໄຂອອກ ກໍຕຳກຳແພງເຮືອນທີ່ຢູ່ຕິດກັນ. ພາຍ-
ໃນຫອງອຶດອັດຈົນທັນໃຈຈະບໍ່ອອກ ແລະ ກໍມີສຽງເອະອະຕະ
ຫລອດເວລາ . "ຕາມາແດງ" ສຽງດັງກວາຫມູຫມຶດ ,ຕັ້ງ
ແມ່ນຫອງທີ່ປານຫມໍ້ມະຣິກແທ້ໆ . ຂອຍຖາມເຂົາວາ :

" ເປັນຫຍັງເຈົ້າຈຶ່ງມາຢູ່ຫນີ້ ? ເປັນຫຍັງບໍ່ໄປເຊົ່າ -
ໂຮງແຮມຢູ່ ? "

" ບັກຫລາເອີຍ... ກໍ້ຍ້ອນວິນຍານກູລະຕີ , ວິນຍານ-
ຂອງກູຮູ້ສຶກອົບອຸ່ນ ຄັນໄດ້ມາຢູ່ນຳພວກສູຢູ່ຫນີ້ນະ " .

ລູກຊາຍຄົນນວດຫນັງສັດເຫັນພ້ອມນຳເຂົາ .

" ແມ່ນແລວ , ຕາມາແດງ - ຂອຍກໍຄືກັນທັ້ນລະ, ໄປ
ຢູ່ບ່ອນອື່ນບໍ່ໄດ້ດອກ ຕາຍຄັກໆ !"

ຕາມາແດງ ອວາຍໄປທາງ ກູຣິ :

" ເສບເທາະ , ຮອງເພງໃຫ້ຟັງແດ່ " .

ກູຣິ ເອົາກູຊະລີ(*) ວາງໃສ່ເຂົ່າທັວເຂົ່າ ແລ້ວເລີ່ມ -
ຮ້ອງເພງ :

- ຕົ້ນຍຸ້ມ , ໂອຕົ້ນເຖິດ , ດວງອາທິດທີ່ສະຫວ່າງສະ
ໄຫວ ! ແລ້ວຈຶ່ງສາຍແສງຂອງເຈົ້າໄປທົ່ວທ້ອງຟ້າ...

ສຽງອ່ອນຫວານຂອງ ກູຣິ ສຽບແທງເຂົ້າໃນຫົວໃຈເຮົາ.

ທົ່ວທັງຫອງມີດວງຽບລົງ , ທຸກຄົນນັ່ງຊຶ່ງລຶ່ງ ດື່ມດ່ຳ ໃນ
ຖ້ອຍຄຳຮ່ຳໄຮຂອງເນື້ອເພງ ຊຶ່ງປະສານກົມກົນກັບສຽງຄ່ອຍ
ຄອຍຂອງສາຍ ຊະລີ .

" ມ່ວນອີຫລີ...ຮາເຈົ້າເອີຍ ! "ບ່າວຂວັນໃຈແມ່ຄ້າ

ຊຸທານອອກມາ .

ໃນບັນດາຄົນທີ່ອາໄສ ຢູ່ໃນເຮືອນຫລັງນີ້ ກູຣິ ເປັນຜູ້ ມີຄວາມສາມາດພິເສດ ທີ່ເຮັດໃຫ້ຄົນມ່ວນຊື່ນເບີກບານໄດ້ . ເຂົາເປັນຄົນພະເອກໃນເທບນິຍາຍ , ວິນຍານຂອງເຂົາ ຜະສົມເຈືອຈານດ້ວຍສີສັນຂອງໄວໜຸ່ມ . ເຂົາເບີກບານ,ຮ້ອງເພງກໍມ່ວນ ທັງສາມາດເກັບກຳເອົາຮີດຄອງທຳນຽມ ແລະນິດໄສມະນຸດ ມາຢອກເຍີ້ຍໃຫ້ຄົນຫົວໄດ້ສະເໝີ . ເຂົາຍັງເປັນຄົນກ້າເວົ້າກ້າວາ ກຽວກັບຄວາມບໍ່ຍຸດຕິທຳຂອງຊີວິດໄດ້ຢ່າງອາດຫານອີກດ້ວຍ . ກູຣິ ອາຍຸຫ້າກໍຊາວປີ ແລະ ເຖິງແມ່ນວ່າໜ້າຕາຍັງເປັນບ່າວນ້ອຍຢູ່ ແຕ່ທຸກຄົນໃນເຮືອນຫລັງນີ້ ຕ່າງກໍຖືເອົາເຂົາເປັນທີ່ເພິ່ງທີ່ປຶກສາ , ໂດຍສະເພາະ-ເວລາໃຜມີຄວາມຫຍຸ້ງຍາກດ້ານຊີວິດເປັນຢູ່ ,ທຸກຄົນເຊື່ອວ່າເຂົາຈະໃຫ້ຄຳແນະນຳດີໆໄດ້ ບໍ່ທາງໃດກໍທາງໜຶ່ງສະເໝີ. ສະຫລຸບແລ້ວ ພວກຄົນຈົນບູ່ຄົນດີແດ່ ກໍລ້ວນຮັກເຂົາທັງນັ້ນລະ, ສ່ວນຄົນບໍ່ດີ ກໍພັດພາກັນຢ້ານ . ເບິ່ງແຕ່ອີຕາເຖົ້າຕຳຫລວດນິກໂຟຣິຊ ກໍຍັງຍິ້ມແບບຖະແຫລງແປງປັ້ນໃສ່ ເມື່ອພົບ ກູຣິ.

ເດີ່ນຂອງເຮືອນ " ມາຣູໂສວະກາ " ນີ້ເປັນໂນນ ສູງຂຶ້ນ ຈຸກັບຖະໜົນສອງສາຍຄື ຖະໜົນ ຣົບໂນຣະຢາດສະກາຢາ ແລະ ເທິງພູຂຶ້ນໄປແມ່ນຖະໜົນ ສະຕາໂຣກໍເຊັກສະນາຢາ . ຢູ່ຖະໜົນນີ້ເອງ ຫ່າງຈາກຮົ້ວເຮືອນເຮົາບໍ່ເທົ່າ ໃດກໍແມ່ນປ້ອມຕຳຫລວດຂອງ ນິກໂຟຣິຊ .

ນິກໂຟຣິຊ ເປັນຫົວໜ້າຕຳຫລວດ ປະຈຳຢູ່ຂຸ້ມບ້ານເຮົາ. ເຂົາເປັນຄົນຈ່ອຍສູງ ຕິດຫລຽນກາຄວາມຊອບ ໃສ່ໜ້າເອິກ

ຫລາຍແຖວ . ໜ້າຕາຂອງເຂົາສະແດງອອກເຖິງຄວາມສະຫລຽວສະຫລາດ , ຍິ້ມຫວານ ແຕ່ດວງຕາແຝງແວວມີ ເລ່ຫລ່ຽມ .

ນິກິໂຟຣິຊ ຄືວ່າສົນໃຈຢ່າງຫລວງຫລາຍນຳຊຸມໝູ່ ເຮົາ ຊຶ່ງມີທັງຄົນແກ່ ແລະ ຄົນໜຸ່ມທີ່ແຊວງຢູ່ໃນເຮືອນຫລັງນີ້. ຕະຫລອດມື້ ເຂົາຈະປ່ອນໜ້າ ເຂົ້າມາກວດກາເບິ່ງຫລາຍໆ - ເທື່ອ . ເຂົາຈະຍ່າງຊາໆເຂົ້າມາໃນເດີ່ນບ້ານ ,ສອດສ່ອງ ສາຍຕາເຂົ້າໃນຊ່ອງຢ່ຽມທຸກປ່ອງ ພ່ານຄົນກວດກາເບິ່ງກົງ ສັດໃນສວນສັດ . ລະດູໜາວແລວນີ້ ຄົນໃນເຮືອນຖືກຈັບໄປ ສອງຄົນຄື ສະມີຣະນົຟ ນາຍທະຫານແຂນກຸດ ແລະ ມູຣາຕົຟ ພົນທະຫານ . ທັງສອງຄົນເຄີຍຮ່ວມໃນກອງທະຫານຂອງສະ ໂກເບເລັຟ ທີ່ ເຊື່ອນກຳລັງເຂົ້າໄປ ອະຄານເຕກິນ ,ແລະ ເຄີຍໄດ້ຮັບຫລຽນກາຫານພະເຈົ້າ ເກອອກກີ . ເຂົາ ທັງ ສອງຖືກຂ້າຫາວ່າ ຮ່ວມມືກັບ ຊຶບບິນ , ອິຟຊຸຽນກິນ ,ມີໂກຣິ ເອັຟ ແລະຄົນອື່ນໆອີກຫລາຍຄົນ ເພື່ອຈັດຕັ້ງໂຮງພິມລັບຂອນ- ໂດຍມີເຫດການຢັ້ງຢືນວ່າ ເພື່ອຈູດປະສົງດັ່ງກ່າວ ມີໜຶ່ງຊຶ່ງ ເປັນວັນທິດກາງເວັນແສກໆ , ມູຣາຕົຟ ແລະ ສະມີຣະນົຟ- ໄດ້ພາກັນໄປລັກເອົາຕົວໜັງສືພິມທີ່ໂຮງພິມ ກລິຊູດຊະນິກົຟຢູ່ ຖະໜົນຍານທຸລະກິດກາງເມືອງ . ພວກເຂົາເລີຍຖືກຈັບຢູ່ທີ່ ນັ້ນ , ແລວໃນຄືນໜຶ່ງ ຕຳຫລວດກໍມາ ທີ່ເຮືອນເຈົ້າພວກ- ເຮົາ ມາຈັບເອົາຊາຍຄົນໜຶ່ງອີກ . ເຂົາຜູ້ນີ້ເປັນຄົນຮາງ- ສູງ ທ່າທາງງຽບຂຶມ . ຂອຍເຄີຍຕັ້ງຊື່ນ້ອຍໃຫ້ເຂົາວ່າ" ທີ່ ຄອຍເຄືອນທີ່ " , ພໍຮູ້ຂ່າວນີ້ໃນຕອນເຊົ້າຂຶ້ນມາ ກູຣິກໍບອກ

ຂ້ອຍທັງຍອງຜົມສິດກຳຂອງເຂົາຢ່າງຕື່ນເຕັ້ນວ່າ :

" ຟັງໜີ້ - ອາເລັກໄຊ - ພີຣາ ພົກ ໂຕ !ຣີບແລ່ນໄວໆ " .

ເຂົາອະທິບາຍໃຫ້ຂ້ອຍຟັງວ່າ ຈະຕ້ອງໄປໃສ ແລະເຮັດຈັ່ງໃດ ແລ້ວເຂົາຍັງແນະນຳອີກວ່າ :

" ລະວັງຕົວໃຫ້ດີແດ່ລະ , ອາດມີສາຍລັບຊຸ້ມຢູ່ໃດ".

ຂ້ອຍຮູ້ສຶກພໍໃຈນຳວຽກພິເສດເລິກລັບອັນນີ້ຫລາຍ, ຟ້າວແລ່ນປານຈິດເຫາະບິນຄືນາງນົກແອ່ນໄປທີ່ເຂດທ່າເຮືອ.ທີ່ຮ້ານນຶ່ງມືດໆມົວຊົວຂອງຊ່າງໂລຫະ ຂ້ອຍໄດ້ພົບຊາຍໜຸ່ມຕາສີຟ້າຜົມຫຍອງ . ເຂົາພວມເຄືອບໝໍ້ດ້ວຍທອງແດງຢູ່ ; ແຕ່ເຂົາບໍ່ຊົງຄຶດຄືນງານທຳມະດາຈັກດີ້ . ຢູ່ອີກແຈໜຶ່ງຂອງຮ້ານມີຊາຍຊະລາຜົມຂາວ , ຄຽນຫົວດ້ວຍເສັ້ນໜັງ ຢືນແປງກ້ອນກ້ຳຢູ່.

ຂ້ອຍຈິ່ງເຂົ້າໄປຖາມວ່າ :

" ມີວຽກຫຍັງບໍ່ຢູ່ໜີ້ ? "

ຊ່າງໂລຫະເຖົ້າ ຕອບຢ່າງບໍ່ພໍໃຈວ່າ :

" ວຽກນະມີ ແຕ່ບໍ່ແມ່ນສຳລັບມຶງດອກ " .

ຊາຍໜຸ່ມຄືນນັ້ນ ຫລຽວເບິ່ງຂ້ອຍມາບໜຶ່ງ ແລ້ວກໍຟ້າວອ່ວາຍໄປເຮັດວຽກຕໍ່ , ຂ້ອຍລັກເອົາຕີນເຕະຂາເຂົາ.ເຂົາອ່ວາຍໜາມາເບິ່ງຂ້ອຍ , ດວງຕາສີຟ້າຂອງເຂົາມີແວວປະຫລາດໃຈແກມປາກຮ້າຍ . ເຂົາຄວ້າຈັບຫູໝໍ້ ຄ້າຍຄືວ່າຈະໂຍນໃສ່ຂ້ອຍ . ແຕ່ເມື່ອເຫັນວ່າ ຂ້ອຍຫລິ່ວຕາໃສ່ ເຂົາ ກໍອອກປາກບອກຄ່ອຍໆວ່າ :

" ໄປໆ , ອອກໜີໄປ " .

ຂ້ອຍຫລີ່ວຕາໃສ່ອີກ ແລ້ວຍ່າງອອກຈາກຮ້ານ . ຂ້ອຍ-ຍືນຖ້າຢູ່ນອກ , ຊ່າງພິມກູດນຳຫລັງອອກມາ, ຢຽດແຂງຢ່ຽດຂາ ແລ້ວກໍຕໍ່ກອກຢາດູດ ແລະ ອວ່າຍມາຖ້າຟັງຂ້ອຍເວົ້າ -ຢ່າງມິດງຽບ .

" ເຈົ້າແມ່ນ ຕິຄອນ ບໍ ? "

" ແມ່ນລະ "

" ປີອດ ຖືກຈັບໄປແລ້ວ "

ເຂົາສົນຄິ້ວເຂົ້າຢ່າງບໍ່ພໍໃຈ ສາຍຕາແນມຕາຂ້ອຍຢ່າງບໍ່ວາງ .

" ມຶງເວົ້າເລື່ອງຫຍັງ ? ແມ່ນໃຜ ປີອດ ? "

" ຄົນຈອຍໆສູ່ງໆທ່າທາງຄືນັກບວດ "

" ແລ້ວແມ່ນຫຍັງອີກ ? "

" ຫໍມັ້ນລະ "

" ອ້າວ - ແລ້ວບັກ ປີອດ ທີ່ວ່າຄືນັກບວດ ຄືຫຍັງ ຕໍ່ຫຍັງ ຫມຶ່ງວ່າມາຫມັ້ນະ ມັນກ່ຽວຫຍັງກັບກູລະ ? " ຊ່າງໂລຫະ ຖາມຂ້ອຍ . ຂ້ອຍແຮງຄັກໃຈຍິ່ງຂຶ້ນວ່າຄົນຜູ້ນີ້ບໍ່ແມ່ນຄົນງານທຳມະດາ . ຂ້ອຍຝ້າວກັບເມືອເຮືອນ ແລະ ຮູ້ສຶກພາກພູມໃຈທີ່ເຮັດວຽກ ຊຶ່ງ ກູຣິ ມອບຫມາຍໃຫ້ເປັນເທື່ອທຳອິດນີ້ ໄດ້ສຳເລັດ . ນັ້ນນັບວ່າເປັນບາດກ້າວທຳອິດ ທີ່ຂ້ອຍໄດ້ເຂົ້າມາກ່ຽວຂ້ອງກັບວຽກງານ " ໃຕ້ດິນ " .

ກູຣິ ເປີດຍົບ ຕິດຕໍ່ເຄື່ອນໄຫວວຽກງານນີ້ ; ແຕ່ ເມື່ອຂ້ອຍຂໍເຂົ້າຮ່ວມ ເຂົາພັດຕອບສັ້ນໆວ່າ :

" ໂຕຍັງນ້ອຍຢູ່ - ນ້ອງຊາຍເອີ້ຍ . ໂຕຄວນຮ່ຳຮຽນ-

ໄປສາກ່ອນ " .

ຕໍ່ມາ ເປເຊຼີນີຟ ໄດ້ສະເໜີຂ້ອຍຕໍ່ບຸກຄົນລຶກລັບ ຄົນໜຶ່ງ ຊຶ່ງການແນະນຳນັ້ນ ກໍເຮັດແບບລະມັດລະວັງຮອບຄອບແທ້ໆ ເຮັດໃຫ້ຂ້ອຍແຮ່ງຄາດຄະເນວ່າ ຊິເປັນເລື່ອງມີຄວາມສຳຄັນພິລຶກ . ເລື່ອງມີຢູ່ວ່າ ມື້ໜຶ່ງ ເປເຊຼີນີຟ ພາຂ້ອຍ-ໄປ ອາກຊະຄອຍ ໂປນເຢ , ທົ່ງຫຍ້າກວ້າງໃຫຍ່ຢູ່ ນອກເຂດຕົວເມືອງ . ຕະຫລອດທາງໄປ ເຂົາເຕືອນແລ້ວເຕືອນອີກວ່າ ການພົບກັບຄົນຜູ້ນັ້ນ ຂ້ອຍຕ້ອງລະວັງຕົວຫລາຍ ແລະຕ້ອງຮັກສາປິດລັບແທ້ໆ . ໃນທີ່ສຸດ ເມື່ອໄປຮອດ ເຂົາກໍ ຊີ້ໃຫ້ຂ້ອຍເບິ່ງຜູ້ຊາຍຄົນໜຶ່ງ ຊຶ່ງພວມຍ່າງຂ້າມທົ່ງຢູ່ໄກໆເຫັນເປັນສີຂີ້ເຖົ່າພໍຄຸມມົວ . ນິໂກໄລ ເບິ່ງຂ້ອຍຂ້າມບ່າຕົນເອງແລະຊິ້ມວ່າ :

" ຜູ້ນັ້ນລະ ນຳລາວໄປແມ້ , ຄົນລາວຢຸດ ລະຟ້າວ - ເຂົ້າໄປຫາ ແລ້ວບອກວ່າ " ຂ້ອຍມາຈາກນອກເມືອງ " ວ່າຊັ້ນເນີ້ .

ແນ່ນອນລະ ຄວາມລຶກລັບນັ້ນແຮ່ງເຮັດໃຫ້ເກີດຄວາມກະຕືລືລົ້ນສະເໝີ ; ແຕ່ໃນກໍລະນີ້ ຂ້ອຍວ່າມັນເປັນຕາຫົວ ; ຄິດເບິ່ງວ່າ ກາງເວັນແສກໆ ຮ້ອນເອົາປານນີ້ ແລ້ວຊາຍຜູ້ນີ້ພັດແຕ່ງຕົວດ້ວຍຊຸດສີຂີ້ເຖົ່າ ເບິ່ງຄືເສັ້ນຫຍ້າແຫ້ງຍ່າງ ນວຍນາຍໄປຄົນດຽວກາງທົ່ງຫຍ້າ . ຂ້ອຍຍ່າງທັນເຂົາຢູ່ປະຕູ - ເຂົ້າປ່າຊ້າ . ເຂົາເປັນຄົນບ່າວຮ່າງນ້ອຍ ຈ່ອຍແຫ້ງ ,ຕາກົມນ້ອຍຄືຕານົກກົມນັ້ນເສີຍເປັນ . ເຂົານຸ່ງຊຸດສີຂີ້ເຖົ່າແບບນັກຮຽນປີກຣຽນ ; ແຕ່ ແທນທີ່ໝາກດຸມເຮັດດ້ວຍໂລຫະເຫລື້ອມ

ນັ້ນ ເຂົາພັດຕິດຄຸມດຳ ເຮັດດ້ວຍກະດູກ . ຫມວກແກັບຍັງມີຮອຍຕິດການັກຮຽນມາກ່ອນ . ເບິ່ງລວມແລ້ວ ຊີວິດຂອງເຂົາຫາບແບກພາລະເກີນກວ່າອາຍຸ ແລະເຂົາຟ້າວຢາກ ມີຄວາມຮູ້ສຶກວ່າ ຕົນເອງເປັນຜູ້ໃຫຍ່ແທ້ໆແລ້ວ .

ເຂົາກັບຂ້ອຍນັ່ງລົງທີ່ຫວ່າງຫລຸມຝັງສົບ ກ້ອງຣິ່ມເວົ້າຂອງພູ່ມໄມ້ໃບຫຍາ . ວາດເວົ້າຂອງເຂົາເຢືອກເຢັນ ເປັນວຽກເປັນການ ຂ້ອຍບໍ່ຄິດມັກອັນໃດ ໃນໂຕເຂົາເລີຍ . ຫລັງຈາກຖາມຂ້ອຍຢ່າງຈິງຈັງ ກ່ຽວກັບວ່າ ຂ້ອຍໄດ້ອ່ານປຶ້ມຫຍັງແດ່ແລ້ວ ເຂົາຊວນຂ້ອຍເຂົ້າຮ່ວມໝູ່ອ່ານປຶ້ມໝູ່ໜຶ່ງ ທີ່ເຂົາຈັດຕັ້ງຂຶ້ນ . ຂ້ອຍຕົກລົງຮັບ ແລ້ວພວກເຮົາກໍຈາກກັນ . ເຂົາຫລຽວໄປທາງທົ່ງຫຍ້າກວ້າງຢ່າງລະມັດລະວັງ ແລ້ວກໍ ອອກຍ່າງໜີໄປກ່ອນ .

ໝູ່ອ່ານຂອງເຮົາມີນຳກັນ ໔ ຫລື ໕ ຄົນເທົ່ານັ້ນ . ຂ້ອຍເປັນຜູ້ອາຍຸໜ້ອຍກ່ວາໝູ່ ແລະຂາດຄວາມຮູ້ພື້ນຖານທີ່ຈະສຶກສາປຶ້ມຂອງ ຈອນ ສະຈວດ ມິລ ຕະຫລອດທັງໝາຍເຫດແຊັກມີເຊັບສະກີ ກ່ຽວກັບປຶ້ມນີ້ . ພວກເຮົານັດພົບກັນທີ່ຫ້ອງຂອງ ມິລົບສະກີ - ນັກສຶກສາຄູ ຊຶ່ງຕໍ່ມາກາຍເປັນນັກຂຽນເລື່ອງສັ້ນ ໃສ່ນາມປາກກາວ່າ ເປເລອອນສະກີ . ເຂົາຂ້າຕົວຕາຍ ຫລັງຈາກຂຽນປຶ້ມໄດ້ປະມານ ໕ ຫົວ . ຂ້ອຍຮູ້ຈັກຄົນຈຳນວນຫລວງຫລາຍ ທີ່ໜີຊີວິດນີ້ໄປດ້ວຍການຂ້າຕົວຕາຍ!

ມິລົບສະກີ ເປັນຄົນງຽບຂຶມ , ບໍ່ກ້າຄຶດບໍ່ກ້າເວົ້າ ເຂົາລະມັດລະວັງຄຳເວົ້າທີ່ສຸດ . ເຂົາອາໄສຢູ່ຫ້ອງໃຕ້ດິນເປື້ອນເປື້ອນ, ທັງເຮັດວຽກຊ່າງໄມ້ເປັນວຽກເພີ່ມເຕີມ " ເພື່ອ

ຄວາມສົມດູນຂອງຮ່າງກາຍ ແລະ ວິນຍານ " . ເຂົາເປັນຄົນບໍ່ຊ່າງສະມາຄົມເລີຍ . ສ່ວນການສຶກສາຄົ້ນຄວ້າ ກ່ຽວ-ກັບ ມິລ ຈາກປຶ້ມຂອງເຂົາ ກໍບໍ່ຊ່ວຍ ໃຫ້ຂ້ອຍຊາບຊຶມເທົ່າ-ໃດ . ໃນບໍ່ດົນ ປະກົດວ່າຂ້ອຍຮູ້ຈັກ ກົດເກນພື້ນຖານ ຂອງເສດຖະກິດ ມາແຕ່ເຫິງນານແລ້ວ , ນັ້ນກໍຄື ຂ້ອຍໄດ້ສຳຜັດກັບມັນໂດຍກົງ ຈາກປະສົບການຊີວິດ ແລະ ໄດ້ປະທັບ ຮອຍໄວ້ຕິດກັບເນື້ອຫນັງ . ຂ້ອຍຈຶ່ງເຫັນວ່າ ບໍ່ຈຳເປັນເລີຍທີ່ຄົນເຮົາຈະຕ້ອງຂຽນປຶ້ມເຫລັ້ມໃຫຍ່ໆໄຊ້ຄຳສັບຍາກໆ ຄື ຂຽນກ່ຽວກັບເລື່ອງທີ່ມັ່ນຈະແຈ້ງແກ່ຜູ້ອອກແຮງງານທຸກຄົນຢູ່ ແລ້ວຊຶ່ງເຮັດວຽກບໍ່ແມ່ນເພື່ອຕົນເອງ ແຕ່ແມ່ນເພື່ອ "ຄົນອື່ນໆ" ພູ້ນທີ່ຈະ ໄດ້ມີຊີວິດສະດວກສະບາຍ . ຂ້ອຍຮູ້ສຶກວ່າ ເປັນການທໍລະມານຫລາຍ ທີ່ຕ້ອງນັ່ງຮຽນ໔-໕ ຊົ່ວໂມງໃນ ຫ້ອງໃຕ້ດິນ ຕ້ອງສືບເອົາກິ່ນກາວຕິດໄມ້ ແລະ ຂາເວລາ ດ້ວຍການແນມເບິ່ງຕົວມອດທີ່ໄຕ່ຕາມຝາເປິເປື້ອນຫນ້າອະເຫຍືອງ.

ມື້ຫນຶ່ງ ຄູພວກເຮົາມາບໍ່ທັນໂມງ , ຄືວ່າຄູຈະບໍ່ ມາແລ້ວ ພວກເຮົາກໍເລີຍຄິດຫາລາຍການພິເສດຈັກຫນ່ອຍ, ພາກັນໄປຊື້ເຫລົ້າ ວົດກາ ເຂົ້າຈີ່ ແລະ ຫມາກແຕງມາ, ແຕ່ແລ້ວທັນໃດນັ້ນ ພັດເຫັນຂາສົ້ງສີເທົ່າຂອງເຂົາກາຍວັບຜ່ານປ່ອງຢ້ຽມມາ , ຈຶ່ງທັນໄດ້ແຕ່ເຊື່ອງແກ້ວເຫລົ້າເຂົ້າກ້ອງ -ໂຕ໊ະ ກ່ອນຄູຈະເຂົ້າມາຮອດໃນຫ້ອງ . ຕອນຄູພວມອະ ທິບາຍກ່ຽວກັບຂໍ້ສະຫລຸບອັນສອງໄສຂອງ ແຊັກມືເຊບສະກີ ຢູ່ນັ້ນ ພວກເຮົານັ່ງໂຕແຂງຄືຜີບ້າ , ບໍ່ກ້າຮອດເຫນັງຕີງ , ຢ້ານແຕ່ວ່າ ຜູ້ໃດຜູ້ຫນຶ່ງຈະຫລົງເຕະແກ້ວເຫລົ້າຂວ້ຳ, ແຕ່

ແລ້ວ ບາດສຸດທ້າຍ ກໍເລີຍແມ່ນເພິ່ນຜູ້ຄູມັ້ນຊ້ຳທີ່ເຕະແກ້ວ - ເຫລົ້າຂວົ້າ . ພໍໄດ້ຍິນສຽງແກ້ວລົ້ມເຂົ້າກໍ່ສ່ອງເຂົ້າໄປ ໃນ ກ້ອງໂຕະ ແລ້ວກໍ່ບໍ່ເວົ້າຈາຫຍັງພໍຄວາມ . ຟ້າເອີຍ ! ຄັນ ແມ່ນເຂົາຮ້າຍອອກມາໂດຍກົງສາ ກໍຍັງຈະດີກ່ວາດອກ ເຮົາ ຈະບໍ່ຕ້ອງຮູ້ສຶກຢູ່ຍາກຄືແນວນີ້ !

ຄວາມມິດງຽບຂອງເຂົາ , ໃບໜ້າທີ່ສະຫງົບ ແຕ່ດວງ ຕາມີແວວເສຍໃຈຢ່າງຫລວງຫລາຍ ເຮັດໃຫ້ຂ້ອຍຢູ່ຍາກເຕັມ ທົນ . ຂ້ອຍລັກເສືອດຕາເບິ່ງພວກໝູ່ ກໍເຫັນວ່າທຸກຄົນ ພາ ກັນເຮັດໜ້າຮາດດ້ວຍຄວາມລະອາຍໃຈ . ເຖິງແມ່ນ ວ່າ ຂ້ອຍ ບໍ່ແມ່ນຜູ້ອອກຫົວຄິດຊວນໝູ່ໄປຊື້ເຫລົ້າມາກິນ ແຕ່ຂ້ອຍ ກໍຮູ້ສຶກວ່າຕົນເອງ ມີໂທດກຳຕໍ່ຄູ ແລະ ຮູ້ສຶກເຫັນໃຈຄູທີ່ສຸດ.

ຂ້ອຍເລີ່ມເບື່ອໜ່າຍ ການຮຽນຄົ້ນຄວາມຳໝູ່ . ຂ້ອຍ ຢາກເປີດໜີໄປ ທ່ຽວໃນເຂດຊຸມຊາວ ຕາຕາ ຊຶ່ງເປັນ ຄົນ ມັກມ່ວນ ແລະ ໃຈດີ ໃຊ້ຊີວິດແບບສະບາຍຜ່ອງໃສເປັນເຈົ້າ ຕົນເອງ . ຊາວບ້ານແຖວນີ້ປາກພາສາລັດເຊຍສຳນຽງ - ໂຫນງເປັນຕາຢາກຫົວ . ຍາມແລງມາ ຈະມີສັນຍານ ເອີ້ນ ຈາກ ພະມຸສະລິມ ເຕືອນໃຫ້ທຸກຄົນໄປສູດມົນໃນໂບດ .ຂ້ອຍ ເຫັນວ່າ ຊີວິດແບບຊາວ ຕາຕາ ກໍແປກໃໝ່ດີ , ບໍ່ຄືໆ ທີ່ ຂ້ອຍເຄີຍເຫັນຜ່ານມາ . ຊີວິດທີ່ຂ້ອຍເຫັນຜ່ານມາບໍ່ເຄີຍ - ເຮັດໃຫ້ ຂ້ອຍເປັນສຸກໄດ້ຢ່າງແທ້ຈິງ .

ຂ້ອຍຖືກດຶງດູດໄປສູ່ແມ່ນ້ຳ ໂວນກາ - ໄປຕາມສຽງ - ເພງຂອງຊາວຜູ້ອອກແຮງງານ . ຈົນເທົ່າທຸກວັນນີ້ ເພງດັ່ງ ກ່າວ ກໍຍັງເຮັດໃຫ້ຫົວໃຈຂ້ອຍເຕັມໄປດ້ວຍຄວາມສົດຊື່ນເບີກ

ບານ ; ແລະຂ້ອຍກໍຍັງຈືດຈຳໄດ້ດີ ເຖິງວັນເວລາ ທີ່ຂ້ອຍ-ໄດ້ເລີ່ມສຳຜັດກັບ ນ້ຳໃຈອັນພິລະອາດຫານແຫ່ງການ ອອກແຮງງານ .

ເທື່ອຫນຶ່ງ ເຮືອໃຫຍ່ບັນທຸກສິນຄ້າຈາກ ເປີເຊຍໄດ້ແລ່ນໄປຕຳໂງ່ນຫີນ ຈົນທ້ອງເຮືອແຕກຢູ່ໃຕ້ເມືອງ ຄາຊານ ໄປຫນ້ອຍຫນຶ່ງ . ພວກກູລີທ່າເຮືອຊວນຂ້ອຍໄປຮັບຈ້າງ ຂົນເຄື່ອງເພື່ອຄຽນໃສ່ເຮືອລຳໃຫມ່ . ຍາມນັ້ນ ຢູ່ໃນເດືອນກັນຍາ ຫົມລົມພາຍຸພັດພາເອົາຝົນຝອຍອັນເຍືອກເຢັນມາສູ່ ເຂດແມ່ນ້ຳ ໂວນກາ . ສາຍແມ່ນ້ຳ ມືດຄື້ມເປັນສີເຖົ່າມົວ ໄປຫມົດ . ລົມພາຍຸຮຸນແຮງ ຈົນຟອງນ້ຳແຕກກະຈາຍເປັນ ປູມປວກ . ກຸ່ມຄົນງານພວກເຮົາ ຊຶ່ງມີນຳກັນປະມານ ໔໐ ຄົນພາກັນນັ່ງບຽດກັນຢູ່ຊານເຮືອລຳເປົ່າໂດຍເອົາຖົງເປົ່າປົກຄຸມຕົວໄວ້ . ເຮືອພວກເຮົາຂີນັ້ນ ຖືກລາກແກ່ໂດຍ ເຮືອຈັກ -ອາຍນ້ຳລຳນ້ອຍ ຊຶ່ງພົ່ນຫມັດໄຟພາສາຍຝົນອອກມາຢູ່ຕະຫຼອດເວລາ .

ທ້ອງຟ້າຄ່ຳມືດລົງຊັກໄວ , ຄວາມດຳມືດປົກຄຸມທົ່ວທ້ອງຟ້າທີ່ຊຸ່ມຝົນ ທີ່ປ່ອນລົງຕ່ຳຈົນເກືອບຈູ່ກັບຫນ້ານ້ຳ . ພວກກູລີພາກັນຈົ່ມປ່ອຍດ່າດິນຟ້າອາກາດ ດ່າຝົນດ່າລົມ ແລະ ຊີວິດ-ຂອງຕົນເອງ . ພວກຂະເຈົ້າຄານອີລາກອີເລືອຢູ່ເທິງ ຊານເຮືອ ຈອບແຕ່ຈະຫາບ່ອນເຂົ້າບັງລົມບັງຝົນ . ຕາມ ຂ້ອຍແລ້ວເຫັນວ່າ ຄົນທີ່ບໍ່ຫາວຫັນເຫລົ່ານີ້ ບໍ່ເຫມາະສົມກັບ ວຽກງານສະເພາະຫນ້ານີ້ເລີຍ . ຂະເຈົ້າບໍ່ອາດກອບກູ້ເອົາ -ເຄື່ອງຂອງທີ່ພວມຈົມນ້ຳໄດ້ດອກ .

ພໍຮອດທ່ຽງຄືນ ພວກເຮົາຈິ່ງໄປເຖິງບ່ອນນັ້ນ ແລະຈອດເຮືອເປົ່າຮຽງກັບເຮືອທີ່ຕຳໂງ່ນຫີນ . ຫົວໜ້າກູລີ ທີ່ ເປັນຄົນອາຍຸແກ່ຫລັກແຫລມໜ້ານອດ ດັງແຫລມງຸ້ມແລະມັກ ຮາຍດ່າ ຈັບຫີ້ນໜອກອອກຈາກຫົວລານ ແລະ ຮອງສຽງແຫລມ-ປານສຽງແມ່ຍິງ :

" ສູດມົນເທາະແມ້ -ສູ ! "

ພວກກູລີຈຸ້ມເຂົ້າຫາກັນ ແລວຕຸເຂົ່າລົງເທິງຊານ ເຮືອເລີ່ມພຶມພຳສູດມົນໄຫວ້ວອນ ໃນຂະນະທີ່ທ້ອງຟ້າ ກໍຄຶ້ມໄປ -ດ້ວຍເມກຝົນ . ພໍຫົວໜ້າສູດແລວກ່ອນ ລາວກໍເບັ້ງຄໍ ຮ້ອງຂຶ້ນອີກ :

" ໄຕ້ຕະກຽງຂຶ້ນແມ່ພວກສູ ເອົາເບິ່ງດູ້ , ສະແດງ -ການອອກແຮງງານ , ບຸກເລີຍ ບຸກເລີຍບັກຫລາ ! ພະເຈົ້າກະຊິຊ່ວຍສູແລ້ວບາດນີ້ , ເອົ້າ ! ລົງມືເລີຍ... "

ແລ່ວບັນດາຄົນທີ່ເຍີບຍາບເຊື່ອຍຊາ ແລະ ຕົນຕົວ ປຽກອອບຍອບ ກໍເລີ່ມສະແດງໃຫ້ເຫັນ " ການອອກແຮງງານ ". ພວກຂະເຈົ້າໂຫ່ຮ້ອງເອີ້ນໃສ່ກັນຢ່າງຄະນອງ ປານແລ່ນ ໄປຕີເສິກ ຂະນະທີ່ໂດດໄປຫາຊານເຮືອ ແລະ ເຂົ້າໄປໃນເຮືອລຳທີ່ຕຳໂງ່ນຫີນ . ໄຖ່ເຂົ້າສານ , ຖົງໝາກອະງຸ່ນ ແຫ້ງແລະກໍ້ໜັງແກະຖືກໂຍນສົ່ງຄ່ຽນຕໍ່ກັນເປັນໄວໆ ຄືວ່າເບົາ -ປານປຸຍງິ້ວເອົາໂລດ . ຮາງກາຍຕ່ຳກິດຂອງນັກແບກ ຫາບແລ່ນໄປແລ່ນມາສວນກັນ , ເອີ້ນເລັ່ງກັນ ທັງຮ້ອງທັງຖິວ -ປາກ ແລະ ດ່າຢອກໄຍກັນກໍມີ . ຂ້ອຍເກືອບບໍ່ເຊື່ອວ່າ ບັນຍາກາດ ຈະປ່ຽນປັ້ນໄດ້ປານນີ້ , ຄົນທີ່ເຊື່ອຍຊາຈົ່ມດ່າຊີວິດ

ແລະ ຟ້າຝົນຢູ່ຫວ່າງປ່ານີ້ພັດກັບກາຍມາເປັນຜູ້ຫາວຫັນ ມ່ອນຊຸ່ມທີ່ເຫັນຢູ່ດຽວນີ້ . ຝົນຕົກຫນັກຂຶ້ນ ຈົນອາກາດຫນາວຈ້ອຍຈ້ອຍ . ລົມພັດຍູ້ແຮງຈົນເສື້ອພວກເຮົາຮື້ອນປົກຫົວ ປະທ້ອງໄປຫມົດ . ທຸກຄົນຂົນເຄື່ອງຕໍ່ໄປ ທ່າມກາງອາກາດທີ່ມືດສະຫນິດແລະປຽກຊຸ່ມ ໂດຍອາໄສແສງຕະກຽງ ຊຶ່ງມີຢູ່ພຽງ ຝີຫນ່ອຍເທົ່ານັ້ນ . ພວກຂະເຈົ້າເຮັດວຽກໄດ້ໄວວາ ພໍ ປານວ່າບໍ່ໄດ້ເຮັດວຽກຫຍັງມາເປັນເວລາດົນນານ ແລະ ພວມ - ປວດຢາກເຮັດວຽກວານຢູ່ຈາວໆ , ພໍປານວ່າຂະເຈົ້າຮູ້ ສຶກມ່ວນສະຫນຸກນຳການແບກໄຖ ແລະ ໂຍນຫີບທີ່ຫນັກໆ ເຫລົ່ານັ້ນ ຄ່ຽນມືກັນປານຢອກຫລິ້ນ , ມີຄວາມກະຕືລືລົ້ນ ປານ - ເດັກນ້ອຍ ມີຄວາມຟົດຟື້ນເບີກບານ ຊຶ່ງມີແຕ່ອອນກອດ ຂອງແມ່ຍິງເທົ່ານັ້ນທີ່ດູດດື່ມກ່ວາ .

ຜູ້ຊາຍຮ່າງໃຫຍ່ ຈົ່ງຫນວດເຄົາ ໃສ່ເສື້ອຢ່າມຢາວປຽກຊຸ່ມ ຊຶ່ງຄືຈະແມ່ນເຈົ້າຂອງສິນຄ້າໃນເຮືອ ຫລືວ່າເປັນຜູ້ ກຳກັບຕາງ ມາຮ້ອງໃສ່ຢ່າງສຸດອົກສຸດໃຈວ່າ :

" ເຮີ້ຍ ! ພວກສູ ! ຖ້າຂົນແລ້ວຫັນ ເຮົາຊິໃຫ້ເຫລົ້າປີບຫນຶ່ງເນີ້...ເອີ...ເອົ້າ ! ສອງປີບ ກໍຍັງໄດ້ ! "

ສຽງຮ້ອງຕອບຄືນດັ່ງຜ່າຄວາມມືດຂຶ້ນຈາກທຸກທິດ :

" ສາມປີບແມ້ ! "

" ຕົກລົງ - ສາມກະສາມ ! ທະແນມວຽກແລ້ວ ! "

ແລ້ວ ກະແສລົມ ໃນການອອກແຮງງານ ກໍພັດນຳ ຂຶ້ນດ້ວຍພະລັງອັນໃຫມ່ .

ຂ້ອຍເອງກໍຫັນມັງງຂຶ້ນນຳຫມູ່ , ຂ້ອຍຈັບໄຖລາກໄປທັງ

ແຮງ ແລ້ວກໍ້ຟ້າວກັບມາເອົາໄຖໜ່ວຍໃໝ່ຕໍ່ໄປ . ຂ້ອຍ ຮູ້ສຶກຄ້າຍຄືວ່າ ຕົວຂ້ອຍ ແລະ ທຸກສິ່ງຮອບກາຍຂ້ອຍ ພ້ອມຕິດ ມົ້ນຟ້ອນກະໂດດແລ່ນຢ່າງຟົດຟົ້ນ ຄືວ່າຄົນເຫລົ່ານີ້ ຈະ ສາມາດເຮັດວຽກໜັກ ແຕ່ຫາກມ່ວນແນວນີ້ ໄປເປັນເດືອນໆ - ເປັນປີໆ ແລະ ກໍເຮັດຢ່າງໝົດຈິດໝົດໃຈ ; ພໍປານ ວ່າ ພວກຂະເຈົ້າ ຈະສາມາດຍົກເອົາຕົວເມືອງໜຶ່ງຍ້າຍໄປວາງ ໄວ້ອີກບ່ອນໜຶ່ງ ຕາມໃຈມັກ ກໍຄົງສຳເລັດເປັນແນ່ແທ້ .

ຂ້ອຍໄດ້ຊີມລົດຊາດຄວາມມ່ວນອອນຊອນແຫ່ງລາຕີນັ້ນ - ຄວາມມ່ວນຊະນິດທີ່ຂ້ອຍບໍ່ທັນເຄີຍປະສົບພົບພໍ້ຈັກເທື່ອໃນຊີວິດ. ຫົວໃຈຂອງຂ້ອຍຮຸ່ມຮ້ອນ ໄປດ້ວຍຄວາມປາຖະໜາຢາກໃຫ້ຊີວິດຫລົງໄຫລ່ມົ້ວເມົານຳການອອກແຮງງານໄປຕະຫລອດຊາດ. ຫລຽວລົງລຸ່ມພຸ່ມຟອງນ້ຳຟາດຟອນເປັນຈັງຫວະ . ຝົນຍັງຄົງຕົກນ້ຳຢູ່ເທິງຊານເຮືອ ແລະ ລົມກໍຈັດສາດໃສ່ໜ້ານ້ຳບໍ່ຢຸດ-ຢ່ອນ . ຈົນເທົ່າຮຸ່ງອະລຸນ ຟ້າສາງພໍເປັນພູມພູ່ ບັນດາ ຄົນງານຜູ້ປຽກຊຸ່ມຄຶງແປນເປົ່າ ກໍຍັງຄົງຊ້ອງເສັງກັນຕໍ່ໄປ ຢ່າງວ່ອງໄວ , ຢ່າງບໍ່ຮູ້ອິດເມື່ອຍ , ທັງຮ້ອງໃສ່ກັນ ທັງຢອກ-ຫົວ ດັ່ງວ່າຈົມຊື່ນໃນຜົນສຳເລັດອັນເຕັມດັງດ້ວຍກຳລັງ ແລະແຮງງານຂອງຕົນ , ແລະ ແລ້ວລົມກໍພັດພາເອົາເມກຝົນ - ຫຍັບຍ້າຍອອກໄປ , ແສງອາທິດເຮືອງຮອງ ສາດສ່ອງຜ່ານທ້ອງຟ້າແຈ່ມໃສ ລົງມາເປັນສີບົວເຮື່ອເຮືອງ . ພວກ ຄົນງານກູລີ ຜູ້ມີອາລົມມ່ວນ ໂຮຮ້ອງຕ້ອນຮັບອະລຸນວັນໃໝ່ດ້ວຍສຽງເນືອງນັ້ນພໍໃຈ ທັງສະບັດໜວດເຄົາດົກໜາອັນປຽກອີ່ມໄປມາ . ຂ້ອຍເຫິນຢາກກອດເອົາຂະເຈົ້າ - ພວກສັດສອງ

ຂາເຫລົ່ານັ້ນ ! ເກີນວ່າຂະເຈົ້າເກັ່ງ ແລະ ຊຳນານໃນວຽກ ງານຂອງຂະເຈົ້າ ! ແລະ ຍັງເປັນຈິດໜຶ່ງໃຈດຽວກັນອີກ!

ເບິ່ງຄືວ່າ ບໍ່ມີສິ່ງໃດ ຈະມາຕານທານພະລັງແຮງອັນມະຫາສານ ແຕ່ເບີກບານຂອງພວກເຮົາໃນຄາວນັ້ນ . ຂອຍຮູ້ສຶກວ່າ ພວກເຮົາຄືຈະສາມາດເນລະມິດທຸກຢ່າງຂຶ້ນໄດ້ ໃນ ຜືນແຜ່ນດິນ ພໍປານຄືນວິເສດໃນນິທານ ສາມາດເສກມົນຄາ ຖາໃຫ້ມີຫໍຜາສາດລາຊະວັງ ແລະ ຕົວເມືອງຂຶ້ນ ພາຍໃນເວລາພຽງບຶດດຽວ ແລວກອນເຝືອກໍລອຍເຂົ້າມາບັງຈົນບົດມິດໄປ-ດວງຕາເວັນ ກໍເລີຍຈຳຕອງຖອນຕົວຫາຍໄປໃນກີບເມກ ຄືເດັກນອຍຈົມລົງໃນທະເລ . ຝົນຝອຍກາຍເປັນຝົນຫ່າໃຫຍ່-ອີກ .

" ເຊົາເທາະເວີຍ ! " ສຽງໃຜຜູ້ໜຶ່ງຮອງຂຶ້ນ ;ແຕ່ແລວກໍມີສຽງຮອງແບບແລນເຄືອງຕອບຄືນວ່າ :

" ໃຜວ່າໃຫເຊົາ-ຫາ ? "

ຂະເຈົ້າເຮັດວຽກສືບຕໍ່ໄປຈົນຮອດບ່າຍສອງໂມງແລ້ວຈຶ່ງຂົນເຄື່ອງແລ້ວບໍລະບອນ . ຂະເຈົ້າເຮັດຢ່າງບໍ່ເຊົາເມື່ອຍ, ແກ້ເສື້ອໃສ່ , ຕາກຝົນ ແລະ ລົມ ຈົນປຽກອອບຍອບ.ພາບທີ່ເຫັນຄືງນັ້ນ ເຮັດໃຫ້ຂອຍເຫັນແຈ້ງພະລັງອັນມະຫາສານຂອງມະນຸດ ຊຶ່ງມີຢູ່ຫລວງຫລາຍພາຍມາກໃນໂລກເຮົາ .

ພໍແລ້ວວຽກ ພວກເຮົາກໍພາກັນໄປລົງເຮືອລາກແກ່ ແລ້ວກໍ້ລົມນອນ ຫລັບປານຕາຍ . ມາຮອດ ຄາຊານ ພວກເຮົາ-ພາກັນຫລັ່ງອອກໄປສູ່ຫາດຊາຍຢ່າງອຶລາກອຶເລືອ ກົງໄປ ທີ່ຮ້ານເຫລົ້າ ເພື່ອດື່ມ ວິດກາ ສາມປີບນັ້ນໃຫ້ໝົດ .

ບາຊະກິນ ຂີ້ລັກນຳຫາຂ້ອຍທີ່ຮ້ານເຫລົ້າ , ເຂົາເບິ່ງ-ຂ້ອຍຢ່າງລະອຽດ ແລ້ວຖາມຂຶ້ນວ່າ :

" ແມ່ນເຂົາໃຊ້ມຶງເຮັດຫຍັງ ? "

ຂ້ອຍເລົ່າເລື່ອງທັງຫມົດສູ່ເຂົາຟັງຢ່າງເບີກບານ . ເຂົາຟັງຈົນສຸດ ແລ້ວຖອນຫັນໃຈ , ເວົ້າຄູຖູກວ່າ :

" ບັກໂງ່ເອີຍ... ໂງ່ທີ່ສຸດ , ຈ່າສຸດຫັ້ນລະມຶງ ! "

ເຂົາຜິວປາກຂຶ້ນເພງຫນຶ່ງ ແລ້ວຍ່າງເລາະນຳໂຕະ ທີ່ພວກກຸລີພວມດື່ມເຫລົ້າຢູ່ຢ່າງເຮຮາ . ສຽງສູງໆດັງມາຈາກແຈຫອງພັນລະນາບົດເພງລາມົກ :

" ເຮີ້ຍ ! ເລື່ອງມັນເກີດຂຶ້ນຕອນກາງເດິກ
ຂອງລາຕີ ທີ່ມືດມິດຄືນຫນຶ່ງ
ຍິງສາວ ຍ່າງຫລິ້ນຢູ່ໃນສວນຂອງນາງ - ເຮີ້ຍ ! "

ມີສຽງຮ້ອງສົມທົບດັງຂຶ້ນຈົນຫນວກຫູ , ພ້ອມກັບສຽງ ມີເຄາະໂຕະໃຫ້ຈັງຫວະ :

" ຄົນຍາມ ສ່ອງແນມຜ່າຄວາມມືດ ,
ເຂົາເຫັນສາວງາມນັ້ນນອນ... "

ມີສຽງຮ້ອງ ແລະ ຖີວປາກ ຝາຮ້ານສະນັ່ນກ້ອງໄປດ້ວຍຄຳເວົ້າລາມົກອັນບໍ່ມີຫຍັງທຽບໄດ້ໃນໂລກນີ້ .

* *

*

ມິດຄົນແນະນຳໃຫ້ຂ້ອຍຮູ້ຈັກກັບ ອັງເດຣິ ເດເຣັນກົຟ , ເຈົ້າຂອງຮ້ານຂາຍເຄື່ອງຍ່ອຍ ຢູ່ສຸດຖະຫນົນຕາຍໆແຄບໆ - ສາຍຫນຶ່ງ ແຄມຮ່ອງທີ່ເຕັມແຕ່ກ່ອງຂີ້ເຫຍື້ອ .

ເດເຣັນກົຟ ເປັນຄົນຮູບຮ່າງນ້ອຍ , ແຂນຂ້າງຫນຶ່ງລີບ; ຫນ້າຕາບົ່ງບອກວ່າ ມີເມດຕາກະລຸນາ . ເຂົາຈົ່ງຫມວດ - ເຄົາພໍດີງາມ , ດວງຕາສະແດງຄວາມສະຫລຽວສະຫລາດ. ຫມົດເມືອງ ຄາຊານ ແມ່ນເຂົານີ້ລະ ທີ່ມີຕູ້ປຶ້ມແນວດີ ແລະ- ເປັນປະເພດທີ່ຖືກເກືອດຫ້າມ ຊຶ່ງພວກນັກສຶກສາຈາກສະ ຖາ ບັນຕ່າງໆໃນເມືອງນີ້ ແລະ ພວກມີຫົວຄິດປະຕິວັດ ພາກັນມາ ຂໍອ່ານນຳເຂົາເປັນປະຈຳ .

ຮ້ານຂາຍເຄື່ອງຍ່ອຍນີ້ ເປັນຫ້ອງຕ່ຳໆ ຢູ່ຕິດກັບຕຶກຂອງ ນາຍທຶນເງິນກູ້ຜູ້ນັບຖືນິກາຍສະໂກເປັດ . ຕໍ່ຈາກຮ້ານ ເຂົ້າ ໄປທາງໃນ ມີປະຕູ່ໃສ່ຫ້ອງໃຫຍ່ຫ້ອງຫນຶ່ງອາໄສແສງ ສະ ຫວ່າງພໍຮິບຮີ່ຈາກປ່ອງຢ້ຽມຊຶ່ງໄຂອອກໄປຫາສວນ . ຕໍ່ຈາກ ຫ້ອງນີ້ໄປ ແມ່ນເຮືອນຄົວແຄບໆ ; ແລ້ວຕໍ່ຈາກເຮືອນຄົວໄປ ອີກ ເປັນຫ້ອງມ້ຽນເຄື່ອງນ້ອຍໆມືດ ໄຊ້ເປັນຫ້ອງມ້ຽນປຶ້ມ ທີ່ ຫ້າມອ່ານເຫລົ່ານັ້ນ . ປຶ້ມລາງຫົວຂຽນດ້ວຍມື ໃສ່ປຶ້ມບັນທຶກ ເຫລັ້ມຫນາ ເຊັ່ນວ່າ " ຈົດຫມາຍປະຫວັດສາດ " ຂອງລາ ວະຣົບ , " ຈະເຮັດອັນໃດ " ຂອງແຊັກນິເຊັຟສະກີ,ແລະ ອີກຫລາຍໆບົດຄວາມໂດຍ ປິຊາເຣັຟ ເຊັ່ນເລື່ອງ " ລາຊາ ຄວາມທີວ " ແລະ " ລະບອບປິດສະຫນາ " . ຕົ້ນສະບັບ ກ່າຍດ້ວຍມືເຫລົ່ານີ້ ເກົ່າຈົນຊິຂາດອອກຈາກກັນຫມົດແລ້ວ .

ຕັ້ງທີ່ຂ້ອຍມາຮ້ານເປັນເທື່ອທຳອິດນັ້ນ , ເດເຣັນກົຟ ,

ພວມວິນຢູ່ນຳຄົນມາຊຸດເຄື່ອງ ເຂົາຈຶ່ງພຽງແຕ່ງກົວໃສ່ ຂ້ອຍໃຫ້ເຂົ້າໄປໃນ . ພໍເຂົ້າໄປຮອດຫ້ອງໃຫຍ່ສົມຄວງ ຂ້ອຍຫຼຽວເຫັນຊາຍຊະລາ ຮ່າງນ້ອຍ ຄູເຂົ່າ ຢູ່ຕໍ່ໜ້າຮູບພະເຍຊູທີ່ແຈຫ້ອງ ແລະ ພວມສູດມົນພາວະນາຢ່າງຈິງຈັງ . ພາບ - ຂອງເຂົາ ຄ້າຍຄືຮູບແຕ້ມ ເຊຮາຟົມ ລີສ໌ຈາກ ຊາຣິຟ.ແລ້ວພໍຂ້ອຍຢຸດຢືນເບິ່ງລາວຢູ່ນັ້ນ ຂ້ອຍກໍຮູ້ສຶກທັນທີວ່າ ມີຫຍັງ ຜິດປົກກະຕິ ແລະ ຂັດແຍ່ງກັນວາດໜຶ່ງຢູ່ໃນເຮືອນນີ້ .

ຂ້ອຍເຄີຍໄດ້ຍິນຄົນເວົ້າຮອດ ດຣເຣັນກົຟ ວ່າ ເຂົາ - ເປັນພວກ " ນາຣັອດນິກ " .ຕາມທີ່ຂ້ອຍເຂົ້າໃຈ ພວກນາຣັອດນິກ ກໍແມ່ນນັກປະຕິວັດນັ້ນເອງ ; ແລ້ວນັກປະຕິວັດ ບໍ່ຫອນຈະນັບຖືເຊື່ອໝັ້ນໃນພະຜູ້ເປັນເຈົ້າ ! ເບິ່ງຄືວ່າພໍ່ເຖົ້າຜູ້ຈົງຮັກພັກດີຕໍ່ພະເຈົ້າ ຊິບໍ່ເໝາະກັບເຮືອນຫລັງນີ້ສາບໍ !

ພໍລາວສູດມົນແລ້ວ ລາວກໍລູບຜົມ ແລະ ລູບໜວດສີຂາວ ໃຫ້ເຂົ້າຊົງຍ່າງລະອຽດລະອໍ , ແນມເບິ່ງຂ້ອຍຢ່າງຄຶກແນ່ - ແລ້ວວ່າ :

" ກູແມ່ນພໍ່ ບັກ ອັງເຄວີ . ມຶງແມ່ນໃຜ ?...ເອີຫລື ວ່າມຶງແມ່ນພວກນັກສຶກສາປອມຕົວມາບໍ ? "

" ເປັນຫຍັງນັກສຶກສາ ຈຶ່ງຕ້ອງປອມຕົວມາລະພໍ່ ? " ຂ້ອຍຖາມລາວ .

" ຮວາຍ ! ຈັກແລ້ວ " ພໍ່ເຖົ້າຕອບຄ່ອຍໆ . " ຊ່າງ ເປີ ! ຊິປອມມາແນວໃດ ພະເຈົ້າກໍຮູ້ຈົນໄດ້ໝົດລະ ! "

ແລ້ວເຖົ້າກໍຫລົບເຂົ້າເຮືອນຄົວໄປ . ຂ້ອຍນັ່ງລົງ ຂ້າງ ປ່ອງຢ້ຽມ ແລະ ໃຊ້ຄວາມຄິດຢ່າງໜັກ . ຄາວໜຶ່ງມີສຽງ

ຄືນ ຊຸທານວ່າ :

" ໂອ ! ເປັນຜູ້ຈັ່ງຊັ້ນ ! "

ຍິງສາວນຸ່ງເຄື່ອງສີຂາວ ພວມຢືນອີງຢູ່ປະຕູເຮືອນຄືວ . ນາງຕັດຜົມສັ້ນ ໃບໜ້າເຕັມຊ່ວງມານໆ , ແຕ່ຮອຍຍິ້ມສາຍ- ແສງໃນດວງຕາສີຟ້າດຳ . ນາງຄືກັນກັບນາງຟ້າ , ຄືນາງ ຟ້າ ໃນຮູບທີ່ພິມຂາຍລາຄາຖືກໆເຕັມເມືອງ .

" ແມ່ນເຈົ້າຢ້ານຫຍັງເກາະ ? ໜ້າຕາຂອຍເປັນ ຕາ ຢ້ານຊັ້ນບໍ່ ? " ນາງຖາມ . ສຽງຂອງນາງແຜ່ວເບົາແລະ ສັ່ນໆ . ນາງຍ່າງກົງມາຫາຂອຍ ທັງເອົາມືຄ້ຳນຳຝາມາຊາ ຊາ ຢ່າງລະມັດລະວັງ ພໍປານວ່າພື້ນເຮືອນທີ່ແໜ້ນໜາຮອງ ຮັບຕີນນາງຢູ່ນັ້ນ ມັນແມ່ນເສັ້ນເຊືອກທີ່ແກວ່ງໄກວຢູ່ໃນ ອາ ກາດ , ແລະ ລັກສະນະອາການຍ່າງຊ້າໆແນວນີ້ ແຮງເຮັດ ໃຫ້ນາງຄືຄົນທີ່ມາຈາກໂລກອື່ນແທ້ໆ . ຕີນຕົວຂອງນາງ ສັ່ນ ທີ່ດໆໜີ້ດເຄີງ ຄາຍຄືມີດວງເຂັມສຽບນຳພື້ນຕີນ ຫູກບາດ - ກາວ ແລະ ຝາເຮືອນກໍເປັນກຳແພງທີ່ຊ້າປານສຽນ ຈະ ປັກ ສຽບມືອັນອ່ອນນຸ່ມປານມີເດັກຂອງນາງ , ທັງໜີ່ວມືນາງ ກໍ ວາງແປະໄວ້ຢ່າງບໍ່ເໜັງບໍ່ຕີງເປັນທີ່ໜ້າປະຫລາດ .

ຂອຍຢືນຕົວແຂງຢູ່ຕໍ່ໜ້ານາງ , ຮູ້ສຶກຂະນະທີ່ສູດທັງຄິດ ດູຕີນນາງກໍປານນັ້ນ , ເກີນວ່າມີແຕ່ສິ່ງທີ່ຜິດປົກກະຕິສາ ໃນ ເຮືອນຫອງມືດໆຫລັງນີ້ !

ຍິງສາວນັ່ງລົງເທິງຕັ່ງອີ້ ມືຍຶດຕັ່ງໄວ້ແໜ້ນ ປານວ່າ - ຢ້ານມັນຈະບິນໜີໄປ , ແລ້ວນາງກໍເລົ່າເລື່ອງຂອງນາງ ສູ່ ຂອຍຟັງ ຢ່າງເປັນກັນເອງ ແບບບໍ່ເຄີຍມີຜູ້ໃດເລົ່າແບບນີ້ຈັກ

ເຫື່ອ , ວ່າ ນາງຫາກໍ່ລຸກຂຶ້ນມາແອບຍ່າງໄດ້ວັນລະເລັກລະ ຫນ້ອຍຫວ່າງ ໔-໕ ມື້ມານີ້ , ພາຍຫລັງທີ່ໄດ້ເປັນເປຍ ລ່ອຍ ແລະ ນອນຕິດເສື່ອຕິດຕຽງຢ່າງບໍ່ເຫນັງບໍ່ຕີງມາດົນ - ຮອດ ມື້ ເດືອນເຕັມແລ້ວ .

" ມັນແມ່ນໂລກທາງເສັ້ນປະສາດຊະນິດໜຶ່ງ " ນາງ ບອກຂ້ອຍຢ່າງຍິ້ມແຍ້ມທຳມະດາທີ່ສຸດ .

ຂ້ອຍຈື່ວ່າ ໃນເວລານັ້ນ ຂ້ອຍຜິດຫວັງ - ຂ້ອຍຫວັງວ່າ ຈະໄດ້ຟັງຄຳອະທິບາຍແບບອື່ນພູ້ນ . ໂລກເສັ້ນປະສາດ- ຄື ເປັນເລື່ອງທຳມະດາໂພດສຳລັບແມຍິງຄືນາງ ແລະ ຫ້ອງນັ້ນກໍ ແປກປະຫລາດໂພດ , ຄືວ່າທຸກສິ່ງທຸກຢ່າງຈະຖືກແຫຍ ບຽດ ເຂົ້າສູງຝາ , ສ່ວນຕະກຽງໄຊບູຊາພະເຈົ້າ ພັດຄືວ່າຮຸ່ງ - ເອົາແທ . ເງົາສາຍໂສ້ທອງແດງຂອງຕະກຽງ ຕົກລົງວາງ ທາບກັບຜ້າຂາວປູໂຕະກິນເຂົ້າໃຫຍ່ , ມັນເໜັງຕີງຢູ່ຍິບຍັບ ພໍມັນ .

" ຂ້ອຍໄດ້ຟັງເລື່ອງຂອງເຈົ້າມາຫລາຍແລ້ວ ກໍເລີຍ - ຢາກເຫັນວ່າ ໜ້າຕາເປັນແນວໃດ " ນາງເວົ້າອອກມາ - ຄ່ອຍໆ . ສຽງນາງຄ້າຍຄືສຽງເດັກນ້ອຍ .

ຂ້ອຍຫມູດຫມິດຈົນຈິດຢູ່ຕໍ່ໄປບໍ່ໄດ້ແລ້ວ ໃນຂະນະທີ່ຕ້ອງ ຢູ່ເຊິ່ງສາຍຕາຂອງຍິງສາວຄົນນີ້ . ມັນມີບາງຢ່າງຢູ່ ເບື້ອງ ຫລັງສາຍຕາສີຟ້າດຳຊູ່ມ ຊຶ່ງສະແດງວ່າ ຮູ້ຈັກຂ້ອຍດີ-ຮູ້ໝົດ ແລ້ວ , ຂ້ອຍບໍ່ຮູ້ຈະເວົ້າລົມນຳແມ່ຍິງຄົນນີ້ແນວໃດດີ ,ບໍ່ ຮູ້ ເວົ້າແທ້ໆ .ຂ້ອຍໄດ້ແຕ່ຢືນຢູ່ທີ່ນັ້ນມິດໆ ,ສາຍຕາຫລຽວເບິ່ງ- ຮູບຫ້ອຍຢູ່ຝາພູ້ນ :ຮູບແຮກເຊັນ ,ດາວິນ ,ກາລິບານດີ .

ພໍດີ ບ່າວນ້ອຍອາຍຸຮຸ່ນຮາວຄາວດຽວກັບຂ້ອຍ ຍ່າງອອກມາຈາກຮ້ານ ແລະ ເຂົ້າໄປໃນເຮືອນຄົວ . ເຂົາມີຜົມ ສີເຫລືອງຄືເຟືອງ , ແສງຕາຂວດດີ , ເດີນຍ່າງກາຍພວກເຮົາໄປ ເຂົາເອີ້ນດ້ວຍສຽງທີ່ພວມແຕກບ່າວວ່າ :

" ມາເຣຍ...ເສືອກມາຫຍັງພີ້ ? "

" ນັ້ນແມ່ນນ້ອງຊາຍຫລາຂ້ອຍ - ອາເລັກໄຊ ," ນາງບອກຂ້ອຍ . " ຂ້ອຍພວມຮຽນວິຊາຜະດຸງຄັນກໍພໍດີມາ ເຈັບສູງ . ບາ - ເຈົ້າຄົບເອົາຫຍັງແດ່ ? ເຈົ້າຂີ້ຫລົ້ມ ຫລາຍແທ້ຫວະ ? "

ອັງເດຣີ ດເຣັມກົຟ ພໍດີຍ່າງເຂົ້າມາ , ເອື່ອງ ແຂນຂ້າງຫລື່ບນັ້ນໄວ້ໃນເອິກເສື້ອ . ເຂົາເອົາມືຈົກເບິ້ອງຫນຶ່ງລູບ ແລະ ຊາວຜົມທີ່ອ່ອນນຸ່ມປານເສັ້ນໄຫມຂອງນ້ອງສາວຫນູ ທາງປາກກໍເລີ່ມຖາມຂ້ອຍວ່າ ຂ້ອຍຢາກເຮັດວຽກງານແນວໃດ ? .

ແລ້ວກໍມີສາວນ້ອຍຮ່າງງົດງາມ ຍ່າງເຂົ້າມາອີກ .ນາງຄົນນີ້ມີຜົມສີແດງ ແລະ ຕາສີຂຽວ . ນາງເບິ່ງຂ້ອຍຢ່າງ - ເຄັ່ງຂຶມ ແລ້ວເຂົ້າມາຈັບແຂນ ມາເຣຍ ພາອອກໄປທັງເວົ້າວ່າ :

" ພໍແລ້ວເອີ້ຍ ມາເຣຍ "

ຟັງເບິ່ງຊື່ ກໍບໍ່ຄືກັບຄົນເລີຍ , ຊື່ນັ້ນຄືວ່າແຂງກະດ້າງເກີນໄປ .

ຂ້ອຍຫນີອອກມາ ດ້ວຍຄວາມຮູ້ສຶກຕື່ນເຕັ້ນຢ່າງປະຫລາດ. ຫລັງຈາກນັ້ນສອງມື້ ຂ້ອຍກໍກັບໄປອີກເທື່ອຫນຶ່ງໃນຕອນແລງ .

ຈິດໃຈຂອງຂ້ອຍຈູ້ບຈ້າວຢາກຮູ້ຢາກເຂົ້າໃຈວ່າ ຄົນຄອບຄົວນີ້ໄຊ້ຊີວິດຢູ່ແນວໃດ , ຂະເຈົ້າຍັງມີຄວາມຫວັງຫຍັງແດ່ໃນຊີວິດ . ແທ້ຈິງ ຊີວິດຂອງເຂົາເຈົ້າແປກປະຫລາດຫລາຍ .

ສະເຕປານ ອີວາໂນວິຊ ຕາເຖົ້າທ່າທາງມິດໆ ລຽມຄົມຄົນນັ້ນ ຜົມລາວຂາວໝົດຫົວ ແລະ ຜິວກໍຂາວເນັ້ນ ຈົນ ຈະເບິ່ງສ່ອງຊອດໄດ້ . ລາວຫົວໃສ່ຂ້ອຍ ແລະ ເໜັງຮີມສົບສີຊ້ຳມູບມິບ ຄືຈະເວົ້າວ່າ :

" ຢ່າສົນໃຈນຳພໍ່ເທາະເດີ ! "

ຂ້ອຍເຫັນໄດ້ຈະແຈ້ງວ່າ ລາວຕົກຢູ່ໃນຄວາມຢ້ານກົວສິ່ງໜຶ່ງ , ຢ້ານຢ່າງຝັງເລິກ ແລະທວາດກົວວ່າຈະເກີດຄວາມວິນາດໃຫຍ່ຫລວງຢູ່ຕະຫລອດເວລາ .

ອັງເດຣ - ຜູ້ແຂນລີບ , ໃສ່ເສື້ອໃຫຍ່ສີເຖົ້າທີ່ຖືກແປງແລະນ້ຳມັນເປິຈົນແຂງປານແຜ່ນກະດານ ຍ່າງໄປຍ່າງມາ - ພາຍໃນຫ້ອງຢ່າງກະວົນກະວາຍໃຈ ຮອຍຍິ້ມຂອງເຂົາຄື ກັນກັບເດັກນ້ອຍສຳນຶກຜິດ ເມື່ອຜູ້ໃຫຍ່ຍົກໂທດໃຫ້ . ສ່ຳລັບ - ວຽກງານໃນຮ້ານ ເຂົາມີນ້ອງຊາຍ ອາເລັກໄຊ ຄົນຂີ້ຄ້ານ- ແລະ ປາກໂພ່ເປັນຜູ້ຊ່ວຍ . ຍັງມີນ້ອງຊາຍຄົນທີສາມອີກ ຊື່ອີວານ ເປັນນັກສຶກສາຊັ້ນສູງມັດທະຍົມ ແລະ ຢູ່ຫໍພັກກິນນອນຢູ່ໂຮງຮຽນພຸ້ນ . ເຂົາມາບ້ານແຕ່ສະເພາະວັນພັກບຸນ . ອີວານເປັນຄົນຮູບຮ່າງນ້ອຍ ມັກແຕ່ງຕົວຈົບງາມ ແລະ ຫວີຜົມຮຽບຮ້ອຍຢູ່ສະເໝີ ປານກັນກັບພະນັກງານລັດອາຍຸແກ່ . ສ່ວນມາເຣຍ ຜູ້ເອື້ອຍ ຊຶ່ງເຈັບປ່ວຍຢູ່ນັ້ນ ຢູ່ຫ້ອງຕິດຫລັງຄາດົນໆ- ຈຶ່ງລົງມາຊັ້ນລຸ່ມ ແລະ ເມື່ອໃດນາງລົງມາ ຂ້ອຍກໍຮູ້ສຶກ ອຶດ

ອົດໃຈ ຢູ່ຍາກ ຄືຖືກລ່າມໄວ້ດ້ວຍສາຍໂສ້ທີ່ຫລຽວບໍ່ເຫັນ .

ວຽກເຮືອນການຊານທັງຫມົດຂອງຄອບຄົວ ແມ່ນແມ່ ຍິງຮ່າງຈ່ອຍສູງຄົນຫນຶ່ງເປັນຜູ້ກຳກັບໃຫ້ . ລາວເປັນຄົນ ຫນ້າຕາເສີຍຄືຕຸກກະຕາໄມ້ ສາຍຕາຂິງຕຶງປານນາງຊີ້ຜູ້ຊົງສິນອາລົມຮ້າຍ , ລາວອາໄສຢູ່ເຮືອນນີ້ກັບເຈົ້າຂອງເຮືອນ ນັກສະໂກເປັດ . ລາວມີລູກສາວຄົນຫນຶ່ງມາຊ່ວຍວຽກ , ເປັນ - ສາວຜົມແດງ ດັງໂມ້ ຊື່ ນາສະຈາ ສາວນີ້ ເວລາຫລຽວ - ເບິ່ງຜູ້ຊາຍຄົນໃດແລ້ວ ດັງຈະສະເຫນັ່ນຂົ້ນທັນທີ .

ແຕ່ເຈົ້າຂອງເຮືອນທີ່ແທ້ຈິງແລ້ວ ແມ່ນພວກນັກສຶກສາພູ້ມຕ່າງຫາກ - ນັກສຶກສາຈາກມະຫາວິທະຍາໄລ , ຈາກສະ-ຖາບັນເທວະວິທະຍາ ຫລື ສັດຕະວະແພດ : ເວົ້າລວມແລ້ວແມ່ນກຸ່ມຄົນຫນຸ່ມທີ່ພວມຝູດຝັ້ນ ມີຄວາມເປັນຫ່ວງເປັນໃຍ ນຳປະຊາຊົນລັດເຊຍ , ຕ້ອງການຢາກເຫັນປະເທດລັດເຊຍ ມີອະນາຄົດອັນສົດໃສກ້າວຫນ້າ . ຂະເຈົ້າຕື່ນເຕັ້ນນຳບົດ - ຄວາມໃນຫນ້າຫນັງສືພິມ ຫລື ຂໍ້ສະຫລຸບຈາກປຶ້ມໃຫມ່ໆ ຫລືເຫດການຕ່າງໆເກີດຂຶ້ນໃນເມືອງ ຫລືໃນມະຫາວິທະຍາໄລ, ຕອນແລງ ພວກຂະເຈົ້າພາກັນມາທີ່ຮ້ານຂອງ ເດເຣັນກົຟ - ມາຈາກທຸກມູມເມືອງ ຄາຊານ ນີ້ແລ້ວຖົກຖຽງກັນໃນ ເລື່ອງຕ່າງໆຢ່າງຮຸນແຮງ ຫລື ວາລົມກັນຄ່ອຍໆຢູ່ແຈຫ້ອງ .ຂະ - ເຈົ້າມັກຫອບປຶ້ມຫົວໃຫຍ່ມານຳ , ແລ້ວກໍມາເປີດປຶ້ມໃສ່ ກັນຫນ້ານັ້ນຫນ້ານີ້ຢ່າງຕື່ນເຕັ້ນ ຖົກຖຽງກັນ ແລ້ວກໍເອີ້ນໃສ່ກັນ-ໂດຍປະກາດສັດຈະທຳທີ່ແຕ່ລະຄົນເຫັນວ່າຖືກຕ້ອງທີ່ສຸດ .

ແມ່ນແທ້ ຂ້ອຍເອງກໍຫາກບໍ່ໄດ້ມີສ່ວນນຳຫມູ່ພໍເທົ່າໃດ -

ດອກ ໃນການຖືກຖຽງປະກອບຄວາມເຫັນນີ້ . ສຳລັບຂ້ອຍ-
ແລ້ວ, ເລື່ອງທີ່ພວກຂະເຈົ້າຖຽງກັນໄປກັນມານັ້ນ ໄຫລ ຫນີ
ໄປນຳຄຳສັບຍາກໆ ທີ່ຂ້ອຍບໍ່ອາດເຂົ້າໃຈໄດ້ນັ້ນ ຫມົດແລ້ວຄື
ກັນກັບຕ່ອນນ້ຳມັນ ສະຫລາຍຕົວໄປໃນນ້ຳແກງຈາງເລວຂອງ
ຄົນທຸກຈົນ . ນັກສຶກສາບາງຄົນມີທ່າທາງຄືພວກຄຳພີນິຍົມອາ
ຍຸ່ແກ ຂອງບາງນິກາຍສາສະຫນາທີ່ຢູ່ແຖວລອງແມ່ນ້ຳໂອນກາ.
ແຕ່ພວກນີ້ເປັນພວກທີ່ຢາກປ່ຽນແປງຊີວິດເຮົາ - ປ່ຽນ ແປງ
ໃຫ້ມັນດີຂຶ້ນ ; ເຖິງແມ່ນວ່າຄວາມຈິງໃຈຂອງຂະເຈົ້າຈະຫລັ່ງ
ໄຫລເປັນຄຳເວົ້າອອກມາປ່ານນ້ຳຕົກຕາດ - ມັນກໍຍັງບໍ່ ລິບ
ເລື່ອນຈົມໄປໃນກະແສນ້ຳນັ້ນ . ສຳລັບຂ້ອຍເປັນທີ່ຈະ ແຈ້ງ
ວ່າ ພວກຂະເຈົ້າຢາກແກ້ໄຂບັນຫາ ຊຶ່ງຂ້ອຍຮູ້ຈັກດີ ແລະ -
ຂ້ອຍເອງກໍສົນໃຈຢູ່ຄືກັນ . ຂ້ອຍຮູ້ສຶກວ່າ ຄຳເວົ້າຂອງພວກ
ນັກສຶກສາ ໄດ້ຊ່ວຍຕິດຕໍ່ຄວາມນຶກຄິດທີ່ຍັງຂາດເປັນຕອນໆ -
ຂອງຂ້ອຍ ໃຫ້ເປັນຮູບຮ່າງຂຶ້ນ ; ຂ້ອຍຈຶ່ງຍົກຍ້ອງນັບຖືພວກ
ຂະເຈົ້າປານນັກໂທດບູຊາບຸກຄົນທີ່ມາສັນຍາວ່າ ຈະມາປົດ -
ປ່ອຍເຂົາໃຫ້ເປັນອິດສະຫລະພາບ .

ສ່ວນຝ່າຍພວກນັກສຶກສາ , ຂະເຈົ້າກໍນັບຖືເອົາຂ້ອຍດັ່ງ
ດຽວກັບຊ່າງໄມ້ຕີລາຄາທ່ອນໄມ້ທ່ອນຫນຶ່ງ , ຊ່າງໄມ້ອາດ-
ຈະເອົາທ່ອນໄມ້ເຮັດສິ່ງໃດສິ່ງຫນຶ່ງທີ່ບໍ່ແມ່ນສິ່ງທຳມະດາ .

" ຫມໍ່ນີ້ມີຄວາມສາມາດໂດຍທຳມະຊາດ " . ນັກ ສຶກ
ສາຄົນຫນຶ່ງ ເຄີຍເວົ້າເວລາເອົາແນະນຳຂ້ອຍໃຫ້ຫມູ່ເຂົາ ,
ທ່າທີເຂົາພາກພູມໃຈ ຄືກັນກັບເດັກນ້ອຍຂາງຖະຫນົນທີ່ ເກັບ
ຫລຽນທອງແດງໄດ້ແລ້ວເອົາອອກອວດຫມູ່ຄູ່ ,ແຕ່ຕົວຂ້ອຍ -

ເອງບໍ່ມັກເລີຍທີ່ຈະຖືກເອີ້ນວ່າເປັນ " ຄົນມີຄວາມສາມາດ-
ໂດຍທຳມະຊາດ " ຫລືວ່າ " ລູກຊາຍຂອງປະຊາຊົນ " ,
ມັນເຮັດໃຫ້ຂ້ອຍຮູ້ສຶກຄືວ່າເປັນພຽງລູກລຽງຂອງໂລກ . ບາງ
ຄັ້ງຂ້ອຍຮູ້ສຶກວ່າ ຕົນເອງຖືກກົດດັນຫລາຍ ຍ້ອນວິທີການສອນ
ແບບໃຫມ່ທີ່ວ່າ ຈະພັດທະນາຈິດໃຈຂ້ອຍ . ຄືວັນຫນຶ່ງ ຂ້ອຍ
ຫລຽວແວບໄປເຫັນປຶ້ມ " ຄຳໂຕ່ງໂຕຍແລະພາສິດ " ຢູ່ໃນ
ຊັ້ນຮ້ານຂາຍປຶ້ມ . ຕອນນັ້ນ ຂ້ອຍຍັງບໍ່ທັນເຂົ້າໃຈ ຄວາມ
ຫມາຍຂອງຄຳສັບເຫລົ່ານັ້ນເທື່ອ , ແຕ່ຂ້ອຍກໍຍັງເກີດຄວາມ-
ກະຫາຍໃຄ່ຢາກອ່ານປຶ້ມນັ້ນ ຈຶ່ງຖາມຂໍຢືມປຶ້ມແນວນັ້ນນຳນັກສຶກ
ສາ ຜູ້ທີ່ມາຈາກວິທະຍາໄລເທວະວິທະຍາ .

" ຊິເອົາໄປເຮັດຫຍັງເດບັກຫລາ ? " ເຂົາຜູ້ຈະເປັນ
ອາຈານສອນສາສະຫນາຕອບແບບເຍາະເຍີ້ຍຂ້ອຍ . ເຂົາ-
ຍັງຫນຸ່ມ , ມີຜົມທີ່ຍົກຫຍອງ , ຮິມສົບຫນາ ແລະ ແຂວ -
ຂາວຄືຄົນແຂກດຳ .

" ປຶ້ມນັ້ນ ມັນບໍ່ມີຫຍັງດີດອກຫລາເອີຍ , ໃຫ້ໂຕອ່ານ-
ປຶ້ມທີ່ເພິ່ນເອົາໃຫ້ອ່ານນັ້ນກໍພໍແລ້ວ , ຢ່າໄປຊອກຮູ້ຊອກຖາມ
ເລື່ອງອື່ນໆອີກເທາະ " .

ສຽງເວົ້າກະດ້າງຂອງຄູ ສຽບແທງໃຈຂ້ອຍປານ ແລ້ວ
ຂ້ອຍກໍຊື້ເອົາປຶ້ມຫົວນັ້ນຈົນໄດ້ ໂດຍເອົາເງິນທີ່ທ້ອນໄວ້ ແຕ່
ຕອນໄປຮັບຈ້າງຢູ່ທ່າເຮືອ ກັບທີ່ຢືມມູ່ນຳ ອັງເດຣີ ເດເຣັນກົຟ
ຕື່ມອີກເຄິ່ງຫນຶ່ງ . ຂ້ອຍຍັງຮັກສາປຶ້ມນີ້ໄວ້ຈົນເທົ່າດຽວນີ້ ,
ມັນເປັນປຶ້ມແນວດີຫົວທຳອິດທີ່ຂ້ອຍມີເປັນສົມບັດ .

ສະຫລຸບແລ້ວ, ການຮຽນແບບທີ່ຂ້ອຍໄດ້ຮັບໃນຄາວ ນັ້ນ

ກໍນັບວ່າເຄັ່ງຄັດສົມຄວນ .ເມື່ອຂ້ອຍໄດ້ອ່ານປຶ້ມ " ສັງຄົມ-ວິທະຍາ " ສຸດແລ້ວ ຂ້ອຍເຫັນວ່າຜູ້ແຕ່ງເວົ້າເກີນເຖິອດ ທີ່ຍົກແຕ່ຄວາມສຳຄັນຂອງເຜົ່າຊົນທີ່ທຳການປູກຝັງ ວ່າເປັນກຸ່ມຄົນທີ່ໄດ້ສ້າງຄວາມຈະເລີນກ້າວໜ້າໃຫ້ແກ່ສັງຄົມ , ແລ້ວກໍຕີລາຄາຕ່ຳ ພວກທີ່ພະເນຈອນເຄື່ອນທີ່ ວ່າພວກນີ້ເປັນພຽງ-ນັກໂທເນື້ອເທົ່ານັ້ນ . ຂ້ອຍໄດ້ເວົ້າຄວາມຮູ້ສຶກໃນເລື່ອງ ນີ້ສູ່ນັກສຶກສາຝ່າຍພາສາສາດຄົນໜຶ່ງຟັງ ແລ້ວກໍເລີຍຕ້ອງນັ່ງ-ຟັງເຂົາເທດສັ່ງສອນຕັ້ງຊົ່ວໂມງໜຶ່ງ ກ່ຽວກັບເລື່ອງ " ສິດໃນການວິຈານ " .

" ກ່ອນຈະມີສິດໃນການວິຈານຫຍັງນັ້ນ ເຮົາຕ້ອງເຊື່ອ-ໃນສິ່ງໜຶ່ງສາກ່ອນ , ໂຕເຊື່ອໃນສິດຈະທຳອັນໃດແລ້ວບໍ່-ມີບໍ ? "

ນັກສຶກສາຄົນນີ້ມັກອ່ານປຶ້ມຢູ່ເລີຍໆ ຮອດຕອນຍ່າງນຳຖະໜົນ ເຂົາກໍອ່ານ . ຂ້ອຍເຄີຍເຫັນເຂົາກົ້ມໜ້າອ່ານຈົນ ຊິຍ່າງໄປຕຳຄົນເລື້ອຍໆ . ຕອນທີ່ເຂົາປ່ວຍເປັນໄຂ້ທ້ອງແລະໄຂ້ຍ້ອນຄວາມຫິວນັ້ນ ເຂົາລະເມີອອກມາວ່າ :

" ຄຸນມະທຳຈະຕ້ອງປະສົມກົມກືນກັບອົງປະກອບຂອງອິດສະຫລະພາບ ແລະ ກົດເກນ ! ໃຫ້ເຂົາກັນສອດຄ່ອງ ! - ເຂົາກັນສອດ...ສອດ..."

ເຂົາເປັນຄົນຈິດໃຈອ່ອນໂຍນ ແລ້ວຮ່າງກາຍພັດອ່ອນແອຍ້ອນຂາດອາຫານ , ທັງກໍອິດອ່ອນໂຮຍແຮງ ຍ້ອນການ ສຶກສາຄົ້ນຄວ້າຫາສິດຈະທຳອັນທ່ຽງແທ້ນັ້ນ . ເຂົາບໍ່ຮູ້ດື່ມເອົາ-ລົດຊາດມ່ວນຊື່ນໃນຊີວິດ - ຮູ້ຈັກແຕ່ປຶ້ມ ; ແລະ ເມື່ອເຂົາ

ຄິດວ່າຕົນເອງສາມາດຈັບເອົາຄວາມຄິດເຫັນທີ່ຂັດແຍ່ງ ກັນສອງຢ່າງ ມາໂຮມແປະກັນເຂົ້າ , ດວງຕາອ່ອນໂຍນສີ ດຳຂອງເຂົາ ກໍຈະສາຍແສງຍິ້ມແຍ້ມຄືເດັກນ້ອຍມີຄວາມສຸກ .

ສິບປີຕໍ່ມາ ພາຍຫລັງເຮົາໄດ້ຮູ້ຈັກຮັກແກ່ວນກັນຢູ່ ຄາຊານ - ແລ້ວ ,ຂ້ອຍພົບເຂົາອີກທີ່ ຄາກົຟ ຕອນທີ່ເຂົາເຂົ້າຮຽນຕໍ່ທີ່-ມະຫາວິທະຍາໄລ ຫລັງຈາກຖືກເນລະເທດໄປຢູ່ເຄັ້ມ ຕັ້ງ ໕ ປີມາແລ້ວ ; ຂ້ອຍງຶດເຂົາຂະໜາດ , ເຂົາເປັນຄົນມີຊີວິດຢູ່ໃນໂລກແຫ່ງຄວາມຂັດແຍ່ງດ້ານແນວຄິດທີ່ສັບສົນປານຮັງມົດ ເຂົາເປັນປອດແຫ້ງຢ່າງແຮງ ຈົນໄອອອກມາເປັນເລືອດ , ແຕ່ຍັງພະຍາຍາມ ທີ່ຈະປະສົມປະສານ ມາກ ກັບ ນິດເຊ - ເຂົ້າກັນ . ເຂົາຈັບມືຂ້ອຍໄວ້ແໜ້ນ ແລະ ຊຸ່ມວ່າ :

" ຊີວິດທີ່ບໍ່ມີຄວາມກົມກຽວ - ເປັນໄປບໍ່ໄດ້ "

ເຂົາຕາຍໃນລົດລາງ ລະຫວ່າງທາງໄປມະຫາວິທະຍາ-ໄລ .

ຂ້ອຍໄດ້ພົບເຫັນຄົນ ທີ່ຍອມທົນທຸກທໍລະມານ ເພື່ອຄວາມຮູ້ປັນຍາ ເປັນຈຳນວນບໍ່ໜ້ອຍເລີຍ . ຂ້ອຍຈົດຈຳຄົນເຫລົ່ານັ້ນດ້ວຍຄວາມນັບຖືຕະຫລອດມາ .

ຄົນຜູ້ມີແນວຄິດດັ່ງກ່າວນີ້ ປະມານຊາວຄົນມັກມາເຕົ້າ - ໂຮມກັນຢູ່ຮ້ານຂອງ ເດເຣັນກົຟ , ໃນນັ້ນຍັງມີຄົນຍີ່ປຸ່ນຜູ້ໜຶ່ງຊື່ ປັນເຕເລມົນ ຊາໂຕ , ເຂົາເປັນນັກສຶກສາເທວະວິທະ-ຍາ . ດົນໆຂ້ອຍຈຶ່ງເຫັນຄົນອີກຜູ້ໜຶ່ງ ຮ່າງໃຫຍ່ ,ໂກນຫົວແບບພວກ ຕາຕາ ແຕ່ຈ້ອງໜວດເຄົາຍາວ . ເຂົານຸ່ງເສື້ອ-ຢາມຕົວຍາວຄັບຕົ້ງ ຕິດດຸມຈົນຊູງຄາງກະໄຕຢູ່ເປັນນິດ.ເຂົາ

ມັກຈະມານັ່ງຢູ່ແຈຫ້ອງຄົນດຽວ ສູບກອກໄປນຳ ເບິ່ງສັງເກດ ຄົນໃນຫອງ ດວຍດວງຕາອັນສະຫງົບງຽບ . ສາຍຕາທີ່ ຈັບຈ້ອງ ມັກແນມມາທີ່ຂ້ອຍເລື້ອຍໆ , ຂ້ອຍຮູ້ສຶກວ່າ ເຂົາພ້ອມເບິ່ງຂ້ອຍຢ່າງກວດກາຊັ່ງຊາ ແລະ ຂ້ອຍກໍຮູ້ສຶກຢ້ານເຂົາ ຢູ່ເປັນໃນໆ . ເຂົາມິດ ຈົ່ມວ່າຂ້ອຍປະຫລາດໃຈ . ຄົນອື່ນໆ ພາກັນເວົ້າສຽງດັງ , ເວົ້າຫລາຍ , ເວົ້າງາມ ;ແລະແນ່ນອນ ແຮ່ງຂະເຈົ້າເວົ້າຄົນຕາຍ ເວົ້າດັງຟັງແຈ້ງທີ່ໃດ ຂ້ອຍກໍ່ແຮງມັກ . ເວລາຜ່ານມາຕັ້ງດົນ ຂ້ອຍຈຶ່ງເດົາອອກວ່າຄຳເວົ້າອັນແຫລມຄົມເຫລົ່ານັ້ນ ປິດບັງເຊື່ອງຊ້ອນຄວາມຄິດ ອັນຫນ້າຜາງຫມ່າຍ ແລະ ຄວາມຫນ້າໄຫວ້ຫລັງຫລອກໄວ້ .ແຕ່ສິ່ງທີ່ຂ້ອຍສົນໃຈຫລາຍທີ່ສຸດແມ່ນວ່າ ເບື້ອງຫລັງຄວາມມິດ - ງຽບນັ້ນ ຜູ້ຊາຍມີຫນວດຄົນນີ້ ຄິດຫຍັງຢູ່ໃນໃຈ ?

ຄົນທັງຫລາຍເອີ້ນເຂົາວ່າ " ຄົນໂຣໂຣມ "(*) ແຕ່ - ຂ້ອຍຄິດວ່າບໍ່ມີໃຜຮູ້ຊື່ຈິງເຂົາ ນອກຈາກ ອັງເດຣີ ຄົນດຽວ. ຕໍ່ມາອີກ ຂ້ອຍຈຶ່ງຮູ້ວ່າ ຊາຍຄົນນີ້ຫາກໍກັບມາຈາກແຄ້ວນ ຢ່າກູດສະກະ ຊຶ່ງເຂົາຖືກເນລະເທດໄປຢູ່ພູມເປັນເວລາຮອດ໑໐ ປີ . ເລື່ອງນີ້ເຮັດໃຫ້ຂ້ອຍສົນໃຈໃນຕົວເຂົາຕື່ມຫລາຍຂຶ້ນ , ແຕ່ຂ້ອຍກໍຍັງບໍ່ກ້າເຂົ້າໄປລ່ງແກວນນຳເຂົາເທື່ອ - ຊຶ່ງກໍບໍ່- ແມ່ນວ່າ ຍ້ອນຂ້ອຍຂີ້ຢ້ານ ຫລືຂີ້ອາຍແຕ່ຢ່າງໃດ . ກົງກັນຂ້າມຂ້ອຍເຕັມໄປດ້ວຍຄວາມກະຕືລືລົ້ນສົນໃຈຢາກຮູ້ຫູກສິ່ງຫູກ ຢ່າງໃຫ້ໄດ້ , ຮູ້ໄວທີ່ສຸດເທົ່າທີ່ຈະໄວໄດ້ ຊຶ່ງລັກສະນະແບບນີ້ ຂອງຂ້ອຍນີ້ລະ ທີ່ກົດຂວາງບໍ່ໃຫ້ຂ້ອຍໄດ້ລົງມືປະຕິບັດວຽກງານໃດຫນຶ່ງຢ່າງເອົາຈິງເອົາຈັງຕະຫລອດຊີວິດຂອງຂ້ອຍ .

ເວລາພວກຂະເຈົ້າເວົ້າຮອດປະຊາຊົນທຳມະດາ, ຂ້ອຍຮູ້ສຶກແປກປະຫລາດ ແລະ ບໍ່ເຊື່ອຕົນເອງເພາະວ່າແທ້ຈິງ – ແລ້ວ ຕົນເອງບໍ່ອາດຄິດເຖິງເລື່ອງນີ້ ຄືພວກຂະເຈົ້າຄິດ.ສຳລັບພວກຂະເຈົ້າ ປະຊາຊົນແມ່ນເປັນຕົວແທນໃຫ້ແກ່ຄວາມ ຮູ້ ຄວາມມີໃຈເມດຕາ ຄວາມມີໃຈງົດງາມ . ປະຊາຊົນ ເປັນສັນຍາລັກຂອງຫມົດທຸກຢ່າງ ເປັນຄືພະຜູ້ເປັນເຈົ້າ , ເປັນບໍ່ເກີດຂອງທຸກຢ່າງທີ່ສູງສົ່ງ , ທ່ຽງແທ້ ແລະ ປະເສີດ .ແຕ່ຂ້ອຍພັດບໍ່ເຄີຍພົບພໍ້ປະຊາຊົນ ໃນລັກສະນະແນວນີ້ເລີຍ.ຮອບຕົວຂ້ອຍ ເຫັນແຕ່ຊາວໄມ້ , ຊາວກໍ່ ,ກຳມະກອນ ; ຂ້ອຍຮູ້ຈັກ ປາກົຟ ໂອຊິບ , ມິກໍຣີ . ແຕ່ພວກຂະເຈົ້າພັດເວົ້າ–ເຖິງປະຊາຊົນໂດຍລວມໆ ແລ້ວກໍລຳດັບຕົນເອງໄວ້ຕ່ຳ ກວ່າປະຊາຊົນທີ່ພວກຂະເຈົ້າເວົ້າຮອດນັ້ນຊ້ຳ ແລະ ຍັງຍອມ ຮັບວ່າ ຕົນເອງຕ້ອງຂົນນຳຈິດໃຈຂອງປະຊາຊົນທີ່ວ່າລວມໆນັ້ນ. ສຳລັບຂ້ອຍ ຊ້ຳພັດເຫັນວ່າ ຄວາມງາມ ແລະ ພະລັງສະ ຕິປັນຍາທັງຫມົດ ມີຢູ່ໃນກະໂຕພວກຂະເຈົ້າທີ່ເວົ້ານີ້ລະ ,ແມ່ນຂະເຈົ້ານີ້ເອງ ທີ່ມີຄວາມຄິດເລິກເຊິ່ງ ມີຈິດໃຈຫມາຍຫມັ້ນທີ່ຈະດຳລົງຊີວິດຢູ່ ແລະສ້າງຊີວິດໃຫມ່ອິດສະຫລະ ດ້ວຍຄວາມເຊື່ອຫມັ້ນໃນຄວາມຮັກມະນຸດຊາດ .

ຄວາມຮັກແນວນີ້ ຂ້ອຍບໍ່ເຄີຍເຫັນມາກ່ອນເລີຍໃນ ຫມູ່–ຄົນ ທີ່ຂ້ອຍເຄີຍພົວພັນຢູ່ນຳ ມາຮອດປະຈຸບັນ . ແຕ່ທີ່ນີ້ຂ້ອຍຮູ້ສຶກມັນໃນທຸກຄຳເວົ້າ ແລະ ມັນກໍສາຍແສງອອກໃນສາຍຕາທຸກຄູ່ .

ຄຳເວົ້າທີ່ກອດກ່ຽວເຖິງປະຊາຊົນຢ່າງເຄົາລົບຮັກເຫລົ່າ

ນີ້ ເໝືອນດັ່ງເມັດຝົນ ທີ່ຕົກລົງມາໃຫ້ຄວາມຊຸ່ມຊື່ນແກ່ຈິດໃຈຂ້ອຍ ; ນອກຈາກນີ້ແລ້ວ ການໄດ້ອ່ານບົດຂຽນວັນນະຄະດີ-ງ່າຍໆ ທີ່ກ່າວເຖິງຊີວິດທຸກຍາກຂັດສົນ ຂອງຊາວບ້ານຊົນນະບົດ , ເຖິງການຖືກກົດຂີ່ຂູດຣີດຂອງຂະເຈົ້າ ກໍຊ່ວຍໃຫ້ຂ້ອຍໄດ້ເຂົ້າໃຈດີຂຶ້ນຢ່າງຫລວງຫລາຍ . ຂ້ອຍເລີ່ມເຂົ້າໃຈ ວ່າຄົນເຮົາ ຕ້ອງມີຄວາມຮັກອັນແຮງກ້າ ເລິກເຊິ່ງເຖິງຖ່ອງແທ້ແທ້ ຈິ່ງຈະສາມາດໂຮມພະລັງກັນ ເພື່ອສະແຫວງຫາແລະ - ເຂົ້າໃຈຄວາມໝາຍອັນແທ້ຈິງຂອງຊີວິດ . ຂ້ອຍເຊົາຄິດນຳຕົວເອງນັບແຕ່ບັດນັ້ນ , ແລ້ວກໍຫັນມາສົນໃຈຄົນອື່ນໆຕື່ມອີກ.

ອັງເດຣີ ດູເຣັນກົຟ ອະທິບາຍໃຫ້ຂ້ອຍຟັງຢ່າງເປີດ - ເຜີຍວ່າ ລາຍໄດ້ເລັກໜ້ອຍຈາກການຄ້າຂາຍຂອງເຂົາແມ່ນເອົາມາຊ່ວຍອຸດໜູນ ໃຫ້ແກ່ກຸ່ມທີ່ເຊື່ອໃນ " ຄວາມສຸກຂອງປວງຊົນ ຕ້ອງຢູ່ເໜືອສິ່ງອື່ນໃດ " ນີ້ . ເຂົາເຮັດປານລູກສິດວັດ ຜູ້ເຫລື້ອມໃສຕໍ່ສາສະໜາປະຕິບັດຕໍ່ເຈົ້າອາວາດນັ້ນ-ລະ . ເຂົາສະແດງອອກວ່າ ປິຕິຍິນດີ ແລະ ຊື່ນຊົມທີ່ເຫັນ-ນັກອ່ານ ນັກຮຽນຮູ້ເຫລົ່ານີ້ ສົນໃຈຢາກຮ່ຳຮຽນ . ເຂົາມັກເອົາແຂນຂ້າງທີ່ລີບຊຸກໄວ້ໃນເອິກເສື້ອໃຫຍ່ ແລະ ຍິ້ມຢ່າງມີສຸກ ທັງລູບໜວດເຄົາໄປມາ ຂະນະທີ່ເວົ້າກັບຂ້ອຍວ່າ :

" ດີແທ້ໆ ບາດນີ້...ດີເນາະ? "

ແລະເມື່ອ ລາວະຣົຟ ໜໍ່ປົວສັດ ຜູ້ມີສຽງປະຫລາດ ຄືສຽງຫ່ານ ເກີດຖືກຖຽງແບບນອກຣີດນອກຮອຍ ກັບພວກປະ-ຊາຊາວນາ ບາດໃດ ດູເຣັນກົຟ ກໍຈະຫລັບຕາຊື່ມໃສ່ຂ້ອຍ-ຢ່າງແຄນເຄືອງວ່າ :

" ເບິ່ງແມ້ - ເບິ່ງບັກນັກກອນແມ້ ! "

ຄວາມນຶກຄິດຂອງ ດເຣນກົຟ ຕໍ່ພວກປະຊາຊາວນານັ້ນ ຄ້າຍຄືກັບຂ້ອຍ . ແຕ່ຂ້ອຍເຫັນວ່າ ພວກນັ້ນ ປະຕິບັດຕໍ່ເຂົາ ແບບບໍ່ສຸພາບ , ແບບບໍ່ເກງໃຈເຂົາເລີຍ , ຢາກຄືພວກ - ເຈົ້ານາຍເຮັດນຳຄົນໃຊ້ ຫລື ຄົນເດີນໂຕະຢູ່ຮ້ານເຫລົ້າ ຈັ່ງຊັ້ນລະ . ດເຣນກົຟ ເອງ ບໍ່ໄດ້ຮູ້ເມື່ອຮູ້ຝັນດອກໃນເລື່ອງນີ້ . ຫລາຍໆເທື່ອ ເມື່ອນັກສຶກສາກັບເມືອຫມົດແລ້ວ ເຂົາ-ມັກເຊື້ອເຊີນໃຫ້ຂ້ອຍຢູ່ຕໍ່ ເພື່ອນອນຄ້າງຄືນນຳ . ພວກເຮົາຊ່ອຍກັນຈັດມ້ຽນຫ້ອງ ແລ້ວປູຜ້າຫນາລົງພື້ນ ນອນລົມກັນ ຈົນເດິກດື່ນຂ້ອນຄືນ ໃນຫ້ອງທີ່ມືດ ເຫລືອແຕ່ໄຟບູຊາພະທີ່ແຈ - ຫ້ອງເທົ່ານັ້ນ . ເຂົາເວົ້ານຳຂ້ອຍດ້ວຍຄວາມຊື່ນຊົມງຽບໆຢູ່ໃນໃຈ .

" ອີກບໍ່ດົນນີ້ ເຮົາຈະມີຄົນຈັ່ງຊັ້ນ ນັບເປັນຮ້ອຍໆພັນໆ-ຄົນ , ພວກຂະເຈົ້າຈະໄດ້ເຂົ້າຮັບຕຳແຫນ່ງນຳຫນ້າຢູ່ທົ່ວປະເທດລັດເຊຍ ແລ້ວກໍຈະທຳການປ່ຽນແປງຫົນທາງຊີວິດເຮົາ-ທັງຫມົດໂດຍໄວ " .

ເຂົາອາຍຸແກ່ກວ່າຂ້ອຍຮອດ ໑໐ ປີ ແຕ່ຂ້ອຍສັງເກດ - ເຫັນວ່າ ເຂົາສົນໃຈໃນຕົວ ນາສະຈາ ຫລາຍ . ເຂົາບໍ່ກ້າເບິ່ງຕາອັນມີແວວເຍາະເຍີ້ຍຂອງນາງ ແລະ ຕໍ່ຫນ້າຄົນອື່ນ-ເຂົາເຮັດຕິເວົ້າສຽງຂຶງຂັງໃສ່ນາງ ຄືນາຍເວົ້ານຳຄົນໃຊ້ , ແຕ່ລັບຕາຄົນອື່ນແລ້ວ ເຂົາແນມນຳຫລັງນາງຢ່າງຫລົງໄຫລ-ແລະ ເມື່ອຢູ່ນຳກັນສອງຕໍ່ສອງ ເຂົາຈະເວົ້ານຳນາງສຽງ - ອ່ອນຫວານທັງຍິ້ມອາຍໆ ແລະ ມີກໍລູບຫນວດເຄົາຢູ່ຢ່າງ ເຂິ

ເຂີນ .

ສ່ວນນ້ອງສາວຂອງເຂົານັ້ນ ກໍມັກນັ່ງຟັງການໂຕ້ຖຽງ ຢູ່ແຈງຫ້ອງ . ຕານາງເບີກກວ້າງ ແລະ ໃບໜ້າກໍຍິ້ມແບບ-ຄົນຢາກຕັ້ງໃຈຟັງ ພະຍາຍາມຢາກເຂົ້າໃຈ ຈົນເບິ່ງເປັນຕາປາກຫົວ . ຖ້າຍາມໃດ ເກີດມີການເວົ້າວ່າ ກັນຮຸນແຮງ - ເກີນໄປ ນາງກໍສະດຸ້ງວັບ ແລະ ຖອນໃຈແຮງ ປານຖືກສາດດ້ວຍນ້ຳເຢັນໆ . ຢູ່ຂ້າງໆນາງ ມັກຈະມີທ້າວນັກສຶກສາແພດ ຜົມສີດຳຊາຍ ມັກລຸກຍ່າງອົນໄປວຽນມາປານໄກ່ພໍ່ລົກ . ເວລາເວົ້ານຳນາງ ເຂົາກໍຫລຸດສຽງລົງຄ່ອຍ ເບົາ ຊຸ່ມເລິກລັບ, ທັງຍິກຄິ້ວສົ້ນເຂົ້າຢ່າງເອົາຈິງເອົາຈັງ , ທຸກສິ່ງທຸກຢ່າງໃນໜີ້ ເປັນເລື່ອງໜ້າສົນໃຈເປັນພິເສດ .

ເມື່ອຍ່າງເຂົ້າລະດູໃບໄມ້ຫລົ່ນ , ຕາມທຳມະດາກໍຕ້ອງມີວຽກງານເປັນຫລັກແຫລ່ງເພື່ອລ້ຽງຊີບ, ແຕ່ຕອນນັ້ນຂ້ອຍພັດພ້ອມສົນໃຈ ນຳເລື່ອງໃຫມ່ດັ່ງກ່າວແລ້ວ ເລີຍຫາເງິນ ໄດ້ໜ້ອຍລົງ ຈົນຕ້ອງເພິ່ງພາໝູ່ກິນເປັນບາງວັນ ; ເລື່ອງກິນນຳຄົນອື່ນນີ້ ເຮັດໃຫ້ຂ້ອຍຍາກໃຈແທ້ໆ , ເຖິງເວລາແລ້ວທີ່ຂ້ອຍຈະຕ້ອງຊອກ " ບ່ອນຢູ່ "ສຳລັບລະດູໜາວ .ຂ້ອຍໄດ້ວຽກຢູ່ໂຮງງານເຮັດເຂົ້າຈີ່ຂອງ ວາຊິລີເຊິມໂອນົຟ .

ຊີວິດໃນໄລຍະນີ້ເອງ ທີ່ຂ້ອຍວາງໂຄງເລື່ອງ "ເຈົ້າ - ນາຍ " , " ໂກໂນວາລົຟ " , ແລະ " ຊາວຫົກກັບ - ໜຶ່ງ " . ຊີວິດຕອນນີ້ແສນລຳເຄັນ ແຕ່ເປັນບົດຮຽນອັນລ້ຳຄ່າສຳລັບຂ້ອຍ .

ແສນລຳບາກຍາກເຂັນທາງກາຍ ແລະ ທາງໃຈກໍແຮ່ງ-

ຊ້ຳຮ້າຍກວ່າອີກ .

ເມື່ອຂ້ອຍລົງໄປເຮັດວຽກຢູ່ຫ້ອງໃຕ້ດິນ ໃນຮ້ານເຮັດ - ເຂົ້າຈີ່ " ກຳແພງແຫ່ງຄວາມລືມເລືອນ " ກໍເກີດຂຶ້ນ ລະຫວ່າງຂ້ອຍກັບພວກໝູ່ ຊຶ່ງເຄີຍຄອຍແນບນຳຊີວິດຂ້ອຍ ຄາວກ່ອນນີ້ຈົນຂ້ອຍຮູ້ສຶກວ່າຈະຂາດຂະເຈົ້າບໍ່ໄດ້ອີກ . ມາຮອດ- ຕອນນີ້ ບໍ່ມີໃຜແວ່ມາຫາຂ້ອຍທີ່ຮ້ານເຂົ້າຈີ່ນີ້ເລີຍ , ແລະ - ຍ້ອນວ່າເຮັດວຽກຮອດວັນລະ ໑໔ ຊົ່ວໂມງ ຂ້ອຍຈຶ່ງບໍ່ ສາມາດໄປຢາມຄອບຄົວ ດເດຣນກິຟ ໄດ້ໃນວັນທຳມະດາ; ແລວພໍຮອດວັນພັກມາ ຂ້ອຍກໍນອນແດ່ , ຫລິ້ນນຳໝູ່ເຮັດເຂົ້າ ຈີ່ນຳກັນນັ້ນແດ່ . ນັບແຕ່ເວລາທຳອິດນັ້ນໂລດ ມີບາງຄົນ ກໍຖືຂ້ອຍຄືຕົວຕະຫລົກ ແຕ່ບາງຄົນກໍພໍໃຈໃນຕົວຂ້ອຍ ຄືພວກເດັກນ້ອຍ ທີ່ຊຸ່ມຊື່ມນັກເລົ່ານິທານ . ບໍ່ຮູ້ວ່າຂ້ອຍໄດ້ເລື່ອງມາແຕ່ໃສ ມາເລົ່າສູ່ຂະເຈົ້າຟັງ , ຂ້ອຍຈື່ແຕ່ວ່າ ຂ້ອຍໃຊ້ ສຸດຄວາມສາມາດຂອງຂ້ອຍ ເພື່ອກະຕຸ້ນໃຫ້ພວກຂະເຈົ້າ ເກີດຄວາມຫວັງໃໝ່ໃນຊີວິດທີ່ດີກວ່າ , ຊີວິດທີ່ບໍ່ຕ້ອງເຮັດ ວຽກໜັກໜາປານນີ້ , ຊີວິດທີ່ມີຄ່າຄວາມໝາຍ ແລະ ມີ ຈຸດໝາຍ . ມີບາງເທື່ອ ຂ້ອຍກໍບັນລຸຜົນສຳເລັດ ໃນການ ປຸກລະດົມດັ່ງກ່າວ ເມື່ອເຫັນຮອຍເສົ້າໂສກ ທີ່ເປັນອາລົມ ຂອງມະນຸດແທ້ໆ ປະກົດຂຶ້ນໃນດວງໜ້າໃສບ່ອນເຫລົ່ານັ້ນ , ເຫັນປະກາຍແຫ່ງຄວາມໂກດແຄ້ນ ແລະ ຂຸ່ນເຄືອງສາຍແສງ ໃນດວງຕາຄົນເຫລົ່ານັ້ນ ຂຶ້ນມາແລ້ວ ຂ້ອຍກໍມີຄວາມພໍໃຈ ແລະຄິດຢ່າງພາກພູມໃຈວ່າ ຕົນເອງກໍໄດ້ " ເຮັດວຽກນຳປະຊາຊົນ " , ໄດ້ຊ່ວຍໃຫ້ຂະເຈົ້າ " ໄດ້ຮູ້ແຈ້ງຂຶ້ນ " ແລ້ວ .

ແຕ່ຢ່າງໃດກໍຕາມ , ເປັນທຳມະດາຢູ່ເອງທີ່ ຂ້ອຍ ຍັງພົບວ່າ ຕົນເອງຍັງຂາດຄວາມສາມາດ ຂາດຄວາມຮູ້ອີກຫຼາຍຈົນວ່າບໍ່ສາມາດຫາຄຳຕອບໃຫ້ແກ່ບັນຫາງ່າຍໆຂອງຊີວິດ ໃນແຕ່ລະວັນ . ເວລານັ້ນລະ ທີ່ຂ້ອຍຮູ້ສຶກຄ້າຍຄືວ່າ ຕົກລົງໄປໃນຫລຸມສ້າງເລິກ ມືດມົນ - ບ່ອນທີ່ມະນຸດຄານລິເລືອຢູ່ ຄືຫມອນ ພຽງເພື່ອປາຖະຫນາໃຫ້ລືມຄວາມເປັນຈິງ , ແລວກໍພາກັນອາໄສເຫລົ້າ ແລະ ອອມກອດອັນເຢັນຊາຂອງແມ່ ຍິງຫາກິນນັ້ນເອງ ເປັນເຄື່ອງພາລືມຊີວິດ .

ປະກົດວ່າ ການໄປທ່ຽວໂຮງແມ່ຈ້າງ ໃນມື້ເບີກເງິນ - ເດືອນ ແຕ່ລະເດືອນນັ້ນ ເປັນປະເພນີທີ່ເຄີຍປະຕິບັດມາ.ຂະເຈົ້າໄຝ່ຝັນ ແລະ ເວົ້າຮອດເລື່ອງນີ້ຕະຫລອດອາທິດ ກ່ອນ-ວັນມີຄວາມສຸກຈະມາເຖິງ ; ເມື່ອຜ່ານພົ້ນໄປ ຂະເຈົ້າກໍ ມີແນວມາເວົ້າອວດອຸຍໃສ່ກັນເຖິງຄວາມເປັນຜູ້ຊາຍຢ່າງລາມົກອະນາຈານ , ແລະເວົ້າເຖິງແມ່ຍິງຢ່າງຕ່ຳຊາຫນາອະ - ເຫີຍອງ .

ແຕ່ ກໍຍັງຫນ້າແປກປະຫລາດຢູ່ບ່ອນວ່າ ຂ້ອຍຄືໄດ້ຍິນໄດ້ຟັງວ່າ ມີຄວາມລະອາຍ ແລະ ຄວາມເສົ້າ ປົນຢູ່ໃນເຫດ - ການດັ່ງກ່າວສະເຫມີ . ໃນ " ສະຖານທີ່ບັນເທີງ "ເຫລົ່ານີ້ ທີ່ເງິນພຽງຮູບດຽວກໍສາມາດຊື້ແມ່ຍິງຄົນຫນຶ່ງໄດ້ຕະຫລອດຄືນ , ຂ້ອຍເຄີຍເຫັນຫມູ່ຂ້ອຍຫລາຍໆຄົນເປັນສີອາຍໆ ,ສຳນຶກຜິດ , ຊຶ່ງຂ້ອຍກໍເຂົ້າໃຈດີວ່າ ນັ້ນແມ່ນເລື່ອງທຳມະ ດາແລ້ວ . ບາງຈຳພວກ ເຖິງແມ່ນວ່າທຳທ່າຈອງຫອງອວດ - ເກັ່ງ ແຕ່ຂ້ອຍຮູ້ສຶກວ່າ ພວກເຂົາຕ່າງຕິເຮັດເທົ່ານັ້ນ. ຂ້ອຍ

ເກີດຄວາມສົນໃຈເລື່ອງ ຄວາມສຳພັນລະຫວ່າງເພດຢ່າງ - ຫລວງຫລາຍ ແລະ ໄດ້ເຝົ້າສັງເກດເບິ່ງເຫດການ ຕ່າງໆ ເຫລົ່ານີ້ ດ້ວຍສາຍຕາທີ່ບໍ່ເຂົ້າຂ້າງໃດໝົດ . ຕອນນັ້ນຂ້ອຍເອງຍັງບໍ່ທັນເຄີຍຜ່ານປະສົບການ ກັບແມ່ຍິງເທື່ອ ; ແລະ ການທີ່ຂ້ອຍບໍ່ກ່ຽວຂ້ອງນຳເຂົາເລີຍແນວນີ້ ເຮັດໃຫ້ຂ້ອຍຕົກຢູ່ໃນສະພາບບໍ່ສະບາຍໃຈ , ດ້ວຍວ່າພວກແມ່ຍິງເຫລົ່ານັ້ນ - ແລະ ຫມູ່ເພື່ອນຂອງຂ້ອຍ ພາກັນເຍາະເຍີ້ຍຖາກຖາງຂ້ອຍ- ຢ່າງໃຫຍ່ . ຢ່າງໃດກໍດີ , ບໍ່ດົນ ພວກຫມູ່ກໍເລີຍເຊົາຊວນຂ້ອຍໄປ " ບ່ອນຈັ່ງວ່າ " ນັ້ນນຳ , ໂດຍບອກຂ້ອຍຊື່ໆ - ເລີຍວ່າ :

" ມຶງບໍ່ຕ້ອງໄປນຳພວກກູດອກ , ບັກຫລ້າ "

" ເປັນຫຍັງ ? "

" ເພາະວ່າມັນບໍ່ສະດວກເວີ້ຍ ຄັນມຶງໄປນຳນະ "

ຂ້ອຍພະຍາຍາມຊອກຮູ້ຄວາມຫມາຍຂອງຄຳສັບນັ້ນ ,ຄິດວ່າ ມັນຕ້ອງມີອັນພົວພັນສຳຄັນກັບຂ້ອຍ , ແຕ່ກໍບໍ່ມີຫຍັງ ກະຈ່າງແຈ້ງອອກຕື່ມ .

" ມຶງນີ້ ຄົນແນວໃດເກາະ ? ກໍຍັງບອກແລ້ວ ແຕ່ເທື່ອກ່ອນວ່າບໍ່ໃຫ້ໄປນຳ ! ຫມົດມ່ວນເອົາໂລດນະ ຄັນມຶງໄປ!"

ມີແຕ່ ອາກເຕັມເທົ່ານັ້ນ ທີ່ອະທິບາຍຫົວຍິ້ມໆວ່າ :

" ມັນຄືເຮົາເອົາຄູບາ ຫລື ພໍ່ເຂົ້າໄປນຳຊັ້ນລະວ່າ !"

ສ່ວນພວກແມ່ຍິງ , ທຳອິດກໍເຍີ້ຍຂ້ອຍມ່ວນໆ,ດົນໄປຊ້ຳຖາມຢ່າງຊູ່ມເຄືອງວ່າ :

" ເຈົ້າຄິດວ່າ ພວກຂ້ອຍບໍ່ສົມກັບເຈົ້າຊັ້ນຫວະ ? "

ເທເຣຊາ ໂບຣູຕາ "ສາວ"ງາມ ຊາວໂປໂລຍ ຮ່າງໃຫຍ່ ອາຍຸປະມານ ໔໐ ຊຶ່ງເປັນ "ແມ່ໂປ່"ສະຖານທີ່ນີ້ ມັກຈະແນມເບິ່ງຂ້ອຍດ້ວຍສາຍຕາສະຫລາດຫລັກແຫລມ, ແລ້ວເວົ້າວ່າ :

" ຢ່າໄປວົນມັນເທາະ ສູ ! ມັນຄົງຈະມີຊູ້ແລ້ວເປັນແມ່ແມ່ນບໍ່ ? ອ້າຍບ່າວຜູ້ງາມ ແລະ ແຂງແຮງຄືແນວນັ້ນມະຕອງແມ່ນມີຂວັນໃຈຈອງໄວ້ແລ້ວ - ບໍ່ແມ່ນຫຍັງດອກ "

ອີ່ນາຍນີ້ຕິດເຫລົ້າຂະໜາດເລີຍ , ລາວເມົາຈົ້ມ ເປັນຕາຜ່າງໝາຍ ແຕ່ເວລາທີ່ລາວບໍ່ເມົາ ລາວກໍເຮັດໃຫ້ ຂ້ອຍປະຫລາດໃຈ ຍ້ອນວ່າລາວມັກອອກຄວາມຄິດຄວາມເຫັນ ທີ່ເລິກເຊິ່ງດີ ກ່ຽວກັບຊີວິດດ້ວຍວິທີການຊອກຫາເຫດຜົນໃຫ້ແກ່ການກະທຳຂອງຄົນ .

" ເວົ້າແທ້ ພວກທີ່ເຂົ້າໃຈຍາກທີ່ສຸດ ລະແມ່ນພວກ ນັກສຶກສາຈາກສະຖາບັນເດີ້ , ຈັກວ່າແນວໃດ ?ແທ້ໃດ ! " ລາວຈົ່ມນຳພວກໝູ່ຂ້ອຍ " ຈັກເຂົາເຮັດຢ່າງໃດກັບພວກຜູ້-ສາວ !ເຂົາເອົາສະບູຖູພື້ນໃຫ້ມື່ນໆ ແລ້ວໃຫ້ຜູ້ສາວເປືອຍຕົວຄານສີ່ຂາ ຕີນມືປອງຈານໄວ້ ແລ້ວພວກເຂົາກໍຊຸກກົ້ນຜູ້ສາວ-ໃຫ້ໄຫລໄປ , ເພື່ອເບິ່ງວ່າຊິໄປໄກສ່ຳໃດ , ຊຸກສາວ ນີ້ແລ້ວ ກໍສາວນັ້ນຕໍ່ໆໄປ . ເບິ່ງແມ - ແລ້ວເຂົາເຮັດ ແນວນັ້ນເພື່ອຫຍັງ ? "

" ເຈົ້າຕົວະດອກ ! " ຂ້ອຍຮ້ອງຂຶ້ນ .

" ບໍ່-ບໍ່ ? ບໍ່ໄດ້ຕົວະ ! "ເທເຣຊາ ຢືນຢັນຢ່າງສະ-ຫງົບ ບໍ່ມີທ່າທີຂຸ່ນເຄືອງເລີຍ , ແລະ ຍັງມີແວວເສົ້າໝອງ

ແຝງໃນຄວາມສະຫງົບຂອງລາວ .

" ເຈົ້າປັ້ນເລື່ອງຂຶ້ນເອງ ! "

" ບາ-ແມ່ຍິງຄືພວກຂ້ອຍນະ ມັນຊິປັ້ນເລື່ອງແບບນີ້ເປັນຊັ້ນບໍ່ ? ເຈົ້າຄິດວ່າ ຂ້ອຍເປັນບ້າແລ້ວຊັ້ນຫວະ ? " ລາວຖາມທັງຈ້ອງແນມຂ້ອຍຈົນຕາໂລ .

ພວກຄົນອື່ນໆຢືນຟັງເຣົາຖຽງກັນຢູ່ຢ່າງສົນໃຈ , ແລ້ວ-ເທເຣຊາ ກໍ່ລົມຕໍ່ໄປ ເຖິງການຫລິ້ນມ່ວນຊື່ນຂອງພວກ ແຂກ ອັນເປັນການດູຖູກແມ່ຍິງ . ລາວເລົ່າດ້ວຍນ້ຳສຽງບໍ່ກະຕືລືລົ້ນ , ແຕ່ວ່າພະຍາຍາມຢາກໄດ້ຄຳຕອບວ່າ ພວກເຂົາເຫຼົ່ານັ້ນ ເຮັດເພື່ອຫຍັງ ?

ຄົນທີ່ຟັງ ຕ່າງກໍ່ພາກັນຖົ່ມນ້ຳລາຍທັງດ່າວ່າ ພວກນັກສຶກສາຫລາຍອັນຫລາຍແນວ , ແຕ່ຂ້ອຍເອງ ຂ້ອຍພັດເຫັນວ່າ-ອື່ນາຍ ເທເຣຊາຍ ນີ້ ເຮັດໃຫ້ຄົນກຽດຊັງບັນດາຜູ້ທີ່ຂ້ອຍໄດ້ຮູ້ໄດ້ຮັກເຫຼົ່ານັ້ນ . ຂ້ອຍພະຍາຍາມອະທິບາຍວ່າ ພວກນັກສຶກສານັ້ນ ຂະເຈົ້າຮັກ ແລະ ຕ້ອງການຢາກຊ່ວຍເຫລືອ - ເພື່ອນມະນຸດ .

" ເອີ ອັນນັ້ນແມ່ນນັກສຶກສາຈາກຖະໜົນ ໂວສະເງ - ເຊັນຊະກາຢາ ພວກຮຽນໃນມະຫາວິທະຍາໄລ, ແຕ່ວ່າພວກທີ່ຂ້ອຍເວົ້າຢູ່ຫນີ້ ມັນແມ່ນພວກນັກສຶກສາເທວະວິທະຍາ ຢູ່ອາກຊະໂກເຢ ໂປເລ . ພວກນີ້ລ້ວນແຕ່ແມ່ນລູກກ່ຳພ້າຫມົດ , ເປັນນັກຮຽນສາສະຫນາ , ແລ້ວຄິດເບິ່ງດູ - ລູກກ່ຳພ້ານະ ມີແຕ່ຊິກາຍເປັນໂຈນຂະໂມຍ ຫລື ເປັນນັກເລງໜົ້ນລະ - ເພາະວ່າ ລູກກ່ຳພ້ານີ້ ບໍ່ມີໃຜຜູກມັດມັນໄວ້ເດ "

ເລື່ອງທີ່ນາຍ " ແມ່ໂປ່ " ເຮືອນແມ້ຈາງເລົ່າມາ ຕະຫລອດເຖິງຄຳຕໍ່ວ່າຕໍ່ຂານ ຂອງພວກແມ່ຍິງເຫລົ່ານັ້ນ ຕໍ່ພວກນັກສຶກສາ , ພວກຂ້າລາຊະການ ແລະ " ຄົນຜູ້ບໍລິສຸດ " ນັ້ນ ໄດ້ປຸກປັ່ນ ໃຫ້ພວກເພື່ອນຮ່ວມງານຂ້ອຍ ເກີດຄວາມ - ຫນ່າຍຊັງ ແລະ ຕໍ່ຕ້ານພວກນັ້ນຂຶ້ນ . ມັນເປັນຄວາມຮູ້ສຶກແບບໃຫມ່ , ຄ້າຍຄືວ່າ ພໍໃຈເມື່ອໄດ້ເວົ້າວ່າ :

" ເຫັນບໍ ຄົນມີການສຶກສານະ ຊົ່ວຊ້າກວ່າພວກເຮົາຊ້ຳ!

ຂ້ອຍຮູ້ສຶກເຈັບປວດ ແລະ ຂົມຂື່ນໃຈຫລາຍແທ້ໆ ເມື່ອ-ໄດ້ຍິນແນວນີ້ , ຂ້ອຍເລີ່ມມອງເຫັນວ່າ ຄວາມຊົ່ວຮ້າຍເປີ-ເປື້ອນທັງຫມົດຂອງບ້ານເມືອງ ພວມໄຫລມາຈາກທຸກທິດ ມາໂຮມຢູ່ຫ້ອງມືດງຽບນ້ອຍໆນີ້ ຄືດັ່ງຫລຸມວິດຖ່າຍນັ້ນລະ , ມັນຈະມາທ່ອນອັ່ງ ແລ້ວຟົດເດືອດຂຶ້ນ ຈົນເກີດມີຄວັນໄຟຮຸມຮ້ອນ - ດ້ວຍຄວາມອາຄາດແຄ້ນ ແລະ ມຸ່ງຮ້າຍ , ຊຶ່ງຈະໄຫລ ກັບຄືນສູ່ຕົວເມືອງອີກ . ໃນຮູທີ່ຄັບແຄບເຫລົ່ານີ້ ມະນຸດຖືກຄອບງຳ ດ້ວຍສັນຊາດຍານຂອງສັດ ແລະ ຄວາມເບື່ອຫນ່າຍຕໍ່ ຊີວິດ . ຂ້ອຍເຫັນວ່າຄຳເວົ້າທີ່ໄຮ້ສາລະຖືກດັດແປງມາ ເປັນບົດເພງ ກ່ຽວກັບຄວາມທໍລະມານຂອງຄວາມຮັກ , ຂ້ອຍ - ເຫັນການປັ້ນແຕ່ງອັນຫນ້າຜາງຫນ່າຍນີ້ ເປັນຊີວິດຂອງ " ນັກສຶກສາຮຽນຮູ້ " , ໄດ້ເຫັນການສັ່ງສອນອົບຮົມໃຫ້ຄົນມີ ແຕ່ຄວາມບາດຫມາງມຸ່ງຮ້າຍ ຕໍ່ສິ່ງທີ່ຕົນເອງຍັງບໍ່ທັນຮູ້ບໍ່ທັນເຂົ້າໃຈ . ບາດນີ້ ຂ້ອຍລະລຶກໄດ້ແລ້ວວ່າ " ສະຖານບັນເທີງ" ທີ່ນີ້ ກໍແມ່ນມະຫາວິທະຍາໄລຊະນິດຫນຶ່ງ , ເປັນສະຖານທີ່ໆພວກຫມູ່ເພື່ອນຂອງຂ້ອຍໄດ້ຮັບຄວາມຮູ້ ທີ່ເປັນຄືຢາເບື່ອ .

ຂ້ອຍແນມເບິ່ງພວກ "ສາວແມ້ຈາງ" ເຫລົ່ານັ້ນຍ່າງ - ລາກສົ້ນຫນ່ອງໄປນຳພື້ນເຮືອນເປິເປື້ອນຢ່າງຂີ້ຄ້ານຍາກ ຊາ ເນື້ອຫນັງແຫລວເລະ ຂອງພວກເຂົາເຫນັງຕຶງ ເຕັ້ນໄປຕາມ ສຽງອາກກໍເດືອງເກົ່າໆ ຫລື ສຽງກອນປະສາດຂອງ ປີອາ- ໂນ ທີ່ເພຈົນຊິພັງຢູ່ແລ້ວ . ຂະນະທີ່ຂ້ອຍຫລຽວເບິ່ງຢູ່ນັ້ນ ຂ້ອຍກໍເກີດຄວາມຄິດໃຫມ່ຂຶ້ນພໍ້ມົວໆ ບໍ່ທັນຈະແຈ້ງ ແຕ່ກໍພໍລົບ ກວນສະມາທິຈົນກົນສະຫມອງທັງຫມົດ . ປະກົດວ່າຮອບຕົວ- ຂ້ອຍ ມີແຕ່ສິ່ງທີ່ຫນ້າເບື່ອຫນ່າຍ ແລະ ເບື່ອເມົາຈິດໃຈດ້ວຍ ຄວາມປາຖະຫນາອັນໄຮປະໂຫຍດທີ່ຈະຫນີໄປໄກໆ .

ທີ່ຮ້ານເຮັດເຂົ້າຈີ່ ພໍແຕ່ຂ້ອຍເລີ່ມເວົ້າຮອດບຸກຄົນ ທີ່ ເອົາໃຈໃສ່ຊອກຫາຊ່ອງທາງ ທີ່ນຳພາປະຊາຊົນ ໄປສູ່ອິດສະ ຫລະພາບ ແລະ ຄວາມສະຫງົບສຸກ ກໍມັກຈະມີຄົນຕອບໂຕ - ອອກມາວ່າ :

" ເຮີ້ຍ , ພວກສາວແມ້ຈາງ ຈູມັ້ນ ພັດເວົ້າຕ່າງ ນີ້ ເວີ້ຍ ! "

ມັນເຮັດໃຫ້ຂ້ອຍ ກາຍເປັນຝ່າຍຖືກເຍາະເຍີ້ຍດູຖູກຢ່າງ ບໍ່ໄວ້ຫນ້າ , ແຕ່ຂ້ອຍກໍມີສັນດານຕໍ່ຕ້ານຮຸນແຮງແບບຄົນຫນຸ່ມ. ຂ້ອຍຮູ້ສຶກວ່າ ຕົນເອງມີສະຕິປັນຍາ ບໍ່ຫນ້ອຍກວ່າພວກເຂົາ- ແຖມຍັງມີຄວາມກ້າຫານຫລາຍກວ່າຊ້ຳ , ແລ້ວຂ້ອຍກໍຮູ້ ສຶກ ຄຽດແຄ້ນຂຶ້ນມາເປັນຄືກັນ . ຂ້ອຍເລີ່ມມອງເຫັນວ່າການຄິດ ນຳຊີວິດ ບໍ່ຫອນຈະງ່າຍດາຍໄປກວ່າການດຳເນີນຊີວິດຕົວຈິງ ຈັ່ງຊັ້ນ ລາງເທື່ອຂ້ອຍກໍເກີດຄວາມຮູ້ສຶກຫນ່າຍຊັງພວກ ເຮັດ ວຽກນຳກັນຂຶ້ນມາ ຢ່າງຮຸນແຮງ , ໂດຍສະເພາະແລ້ວແມ່ນ

ຂ້ອຍໜ່າຍ ທີ່ພວກເຂົາຍອມໃຫ້ນາຍຈ້າງຂີ້ເມົາ ມາຂົ່ມເຫັງ ເອົາຕາມໃຈຊອບ .

ແລ້ວມັນກໍເປັນໄປຈັ່ງຊັ້ນ ! ໃນເວລາທີ່ລຳບາກນັ້ນຂ້ອຍ ກໍຄິດພົ້ນແນວຄິດໃໝ່ໆ : ເຖິງແມ່ນຈະເປັນແນວຄິດທີ່ຫ່າງໄກ ຈາກທາດແທ້ຂອງຂ້ອຍ ແຕ່ນັ້ນກໍໄດ້ເຂົ້າມາກິນ ເນື້ອທີ່ໃນຈິດ ໃຈຂອງຂ້ອຍແລ້ວ ຢ່າງຫລວງຫລາຍ .

ໃນຄືນພາຍຸຮ້າຍແຮງຄືນໜຶ່ງ ລົມໄດ້ພັດນ່ຳມືຣຸນແຮງກົ້ວ ກູບທົ່ວທ້ອງຟ້າສີຂີ້ເຖົ່າ ພໍປານວ່າ ຟ້າຈະແຕກແຍກອອກແລ້ວ ໂຮຍລະອອງນ້ຳກ້ອນລົງທັບຖົມແຜ່ນພະສຸທາ ; ພໍປານວ່າ ຊີ ວິດຂອງໜ່ວຍໂລກ ໄດ້ມາເຖິງຈຸດອະວະສານ ແລະ ດວງ- ຕາເວັນ ຈະບໍ່ມີວັນໄດ້ໂຜ່ພົ້ນຂຶ້ນມາອີກ , ໃນຄ່ຳຄືນແຫ່ງວັນ ບຸນທ້າຍລະດູໜາວນັ້ນ , ຂ້ອຍກັບຈາກເຮືອນ ດູເຮັນກີຟ- ເມືອຮານເຮັດເຂົ້າຈີ່ ລົມພັດໜາຣຸນແຮງຈົນຂ້ອຍຕ້ອງຫລັບຫູ ຫລັບຕາຍ່າງຜ່າໄປ . ທັນໃດນັ້ນ ຂ້ອຍຕຳສະດຸດລົ້ມ ,ຮ່າງ ຂອງຊາຍຄົນໜຶ່ງ ນອນຈົມຫິມະຂວາງທາງຍ່າງຢູ່ . ແມ່ນ- ຕີນຂ້ອຍສະດຸດຄົນຜູ້ນີ້ເອງ ຂ້ອຍຈຶ່ງລົ້ມ . ເຮົາທັງສອງຕ່າງ ກໍດ່າຟາດອອກມາຄຳດຽວກັນ . ຂ້ອຍດ່າເປັນພາສາລັດເຊຍ, ສ່ວນເຂົາຜູ້ນັ້ນດ່າເປັນພາສາຝະລັ່ງວ່າ :

" ບັກເຜີດເອີຍ ! "

ນີ້ເຮັດໃຫ້ຂ້ອຍປະຫລາດໃຈຫລາຍ , ຂ້ອຍດຶງເຂົາອອກ ຈາກກອງຫິມະ ແລະ ຊູເຂົາລຸກຂຶ້ນຢືນ . ເຂົາເປັນຄົນຮ່າງ ເຕ້ຍ ແລະ ຕົວເບົາໆ . ເຂົາຊິດແຂນ ແລະ ຊູຂ້ອຍຢ່າງ- ໂມໂຫແຮງ

" ບັກຫ່ານີ້ ! ຫມວກກູເດ້ ? ເອົາຫມວກກູມາ ! ກູຊິ ແຂງຕາຍແລ້ວ ! "

ຂ້ອຍຊອກຫມວກເຂົາພໍ້ໃນກອງຫິມະ , ສັ່ນຈົນມັນກ້ຽງ- ແລ້ວກໍສຸບຫມວກໃສ່ຫົວເຂົາໄດ້ໂດຍງ່າຍ , ແຕ່ເຂົາພັດ ດຶງມັນອອກ ແລະ ຈັບມັນແກວ່ງໄປມາ ທັງປາກກໍດ່າປີນສອງພາສາ ແລະ ຮ້ອງໃສ່ຂ້ອຍອີກວ່າ :

" ມຶງຫນີແມ້ ! "

ແລ້ວເຂົາກໍປຸບປັບອອກຍ່າງຜ່າພາຍຸຫິມະໄປ ຈົນບໍ່ ເຫັນຮອດເງົາ , ແຕ່ບໍ່ດົນ ຂ້ອຍກໍພົບເຂົາອີກ . ເຂົາຢືນ ກອດເສົາໄຟທີ່ມອດແລ້ວ ແລະ ເວົ້າຢ່າງຫນັກແຫນ້ນວ່າ :

" ເລນາ , ຂ້ອຍຊິຕາຍແລ້ວ , ໂອຍ-ເລນາ... "

ເປັນການຈະແຈ້ງລະວ່າ ເຂົາເມົາເຫລົ້າ , ຖ້າວ່າ - ຂ້ອຍປະເຂົາໄວ້ກາງຖະຫນົນນີ້ ເຂົາກໍຄົງແຂງຕາຍເປັນ ແນ່ ຂ້ອຍຖາມເຂົາວ່າ ເຮືອນຢູ່ໃສ .

" ຖະຫນົນຫຍັ້ງຊຸມນີ້ ? " , ເຂົາຮ້ອງໄຫ້ສະອື້ນ , " ຂ້ອຍບໍ່ຮູ້ດອກວ່າຊິເມືອທາງໃດ "

ຂ້ອຍເອົາແຂນໂອບຫລັງເຂົາ ແລ້ວພາຍ່າງໄປ, ຖາມ ຍ້ຳອີກວ່າ ເຮືອນເຂົາຢູ່ໃສ .

" ຖະຫນົນ ບູລັກ " , ເຂົາເວົ້າພຶມພຳ ທັງຕົວ ສັ່ນ ຫນາວ .

" ຢູ່ຖະຫນົນ ບູລັກ...ມີໂຮງອາບນ້ຳຢູ່ຫັ້ນ...ມີເຮືອນ ... "

ເຂົາຍ່າງຈັດເຊ ເຮັດຂາຂັດກັນ ແລະ ຫົວດອນຊຸລົ້ມ ຢູ່

ເລື້ອຍໆ ເຮັດໃຫ້ຂ້ອຍຊູເຂົາຢ່າງຍາກອັ້ນ . ຂ້ອຍໄດ້ຍິນ - ສຽງແຂ້ວເຂົາກະທົບກັນ .

" ຊີຕູຍຊາແວ..." ເຂົາເວົ້າພຶມພຳເປັນພາສາຝະລັ່ງ ທັງຊຸກຂ້ອຍອອກ .

" ວ່າຈັ່ງໃດເກາະ ? "

ເຂົາຢຸດຈິກກັບທີ່ ຍົກມືຂຶ້ນ ແລະ ເວົ້າຂຶ້ນຢ່າງແຈ່ມແຈ້ງ ຄືວ່າພາກພູມໃຈໃນຕົນເອງ :

" ຊີຕູຍຊາແວ ອູເຊີເຕີແມນ..."(*)

ເຂົາເອົາມືອົມຍັດເຂົ້າປາກ ຍ່າງໂຊເຊຈົນເກືອບລົ້ມ , ຂ້ອຍຈຶ່ງໂຍບຕົວລົງຮັບເອົາໃສ່ຫຼັງແບກໄປ . ທັງທີ່ຄາງກະໄຕ່ກົດຢູ່ກັບຫົວຂອງຂ້ອຍ ຕອນຂ້ອຍແບກເຂົາໄປ ເຂົາຍັງພຶມພຳຢູ່ວ່າ :

" ຊີຕູຍຊາແວ...ໂອ້ຍ ໜາວຊິແຂ້ງຕາຍແລ້ວ. ໂອ້ຍ ພະເຈົ້າເອີຍ ! "

ເມື່ອເຮົາມາຮອດຖະໜົນ ບູລັກ ຂ້ອຍຕ້ອງບອກແລ້ວ - ບອກອີກ ໃຫ້ເຂົາຊີ້ໃສ່ເຮືອນຫຼັງທີ່ເຂົາຢູ່ . ໃນທີ່ສຸດ ພວກເຮົາກໍກະຟູບກະຟາບມາຮອດປະຕູຕຶກນ້ອຍຫຼັງໜຶ່ງ ທີ່ຈົມ ຢູ່ໃນກອງຫິມະ . ເຂົາງົມທາວຫາທາງໄປສູ່ປະຕູຂຶ້ນເຮືອນ - ແລ້ວເຄາະຄ່ອຍໆ ທັງຫັນມາຍິ້ມໃສ່ຂ້ອຍວ່າ :

" ຊິດ ! ມິດໆເດີ້ "

ມີແມ່ຍິງໃສ່ເສື້ອຊຸມສີແດງ ຖືທຽນໄຂມາໄຂປະຕູ ,ນາງຫຼີກທາງໃຫ້ພວກເຮົາເຂົ້າໄປ ທັງຈັບເອົາແວ່ນຕາມີດ້າມມາສ່ອງເບິ່ງໜ້າຂ້ອຍ .

ຂ້ອຍບອກນາງວ່າ ຊາຍຄົນນີ້ ມືເຢັນຈົນກະດ້າງແລ້ວ , ຕ້ອງໃຫ້ເຂົາປ່ຽນເຄື່ອງ ແລ້ວເຂົ້ານອນສາ .

" ຊຸ້ມຫວະ ? " ນາງຖາມ , ສຽງຂອງນາງແຈ່ມໃສ ສົມບູນດີຜູ້ສາວນ້ອຍ .

" ຄວນເອົາມືລາວແຊ່ໃນນ້ຳເຢັນກ່ອນ " .

ນາງເອົາແວ່ນຕາ ຊືໄປທີ່ແຈຫ້ອງໂດຍບໍ່ປາກ , ທີ່ ນັ້ນ ບໍ່ເຫັນມີຫຍັງນອກຈາກຂາຕັ້ງຮູບແຕ້ມພາບທິວທັດແມ່ນ້ຳ ແລະ ຕົ້ນໄມ້ . ຂ້ອຍຫລຽວເບິ່ງ ແມ່ຍິງຄົນນັ້ນຢ່າງປະຫລາດໃຈ. ຫນ້າຕາຂອງນາງເປັນເສີຍໆບໍ່ວິຕົກທຸກຮ້ອນຫຍັງ . ນາງ - ຍ່າງໄປອີກແຈຫນຶ່ງຂອງຫ້ອງ ບ່ອນທີ່ມີໂຕະ ແລະ ຕະກຽງສີ ບົວຮຸ່ງພິຣບຣີ , ນາງນັ່ງລົງ ແລະ ຍິບເອົາ ໂບຍເກົ ອອກ ມາເບິ່ງຢ່າງຕັ້ງໃຈ .

" ເຈົ້າມີເຫລົ້າວົດກາ ແດ່ບໍ່ ? " ຂ້ອຍຖາມແຮງໆແຕ່ ກໍ່ບໍ່ມີຄຳຕອບ , ນາງສົນລະວົນຢູ່ນຳ ການຮຽງໄພ້ໃສ່ເທິງ- ໂຕະ . ສ່ວນຊາຍຄົນນັ້ນ ຍັງນັ່ງຢູ່ຕັ່ງ , ຫົວຕົກພັບລົງ ມາ ຈົນຈຸ້ຫນ້າອົກ , ມີສີແດງຊ້ຳຂອງເຂົາຫ້ອຍຕົກແຕະແຊະ ຢູ່ ຂ້າງໂຕ . ຂ້ອຍພາເຂົາໄປນອນຢູ່ຕັ່ງຍາວ ແລະ ພະຍາ - ຍາມແກ້ສົ້ງເສື້ອໃຫ້ເຂົາ . ຂ້ອຍບໍ່ເຂົ້າໃຈເລີຍວ່າເກີດຫຍັງ ຂຶ້ນ . ຂ້ອຍຮູ້ສຶກຄືວ່າຕົນເອງຝັນໄປ , ຕາມຝາເທິງຕັ່ງ - ຍາວນັ້ນ ມີຮູບຖ່າຍຕິດໄວ້ເຕັມ ແລະ ລະຫວ່າງຮູບເຫລົ່ານັ້ນ ມີພວງມາລາສີຄຳຕິດຢູ່ນຳ ພວງຫນຶ່ງ ຜູກໂບສີຂາວອ້ອມຮອບ ຢູ່ເຊິ່ງໂບ ມີຕົວອັກສອນຄຳ ຂຽນວ່າ :

" ສຳລັບ ຈິນດາ ຜູ້ເລີດລ້ຳ "

" ລະວັງແດ່ ບັກຫ່ານິ້ງ ! " ຊາຍຄົນເນົາພຶມພຳເນື່ອ ຂ້ອຍເລີ່ມຖູມືໃຫ້ .

ຍິງຄົນນັ້ນວາງໄພ້ປາຍລົງຢ່າງມິດໆ ແລະ ບໍ່ສົນໃຈ ນຳ ຫຍັງອື່ນ , ດັງນາງໂມແຫລມຈົນເບິ່ງຄືໜ້ານົກ ແລະ ດວງ ຕາ ກໍໃຫຍ່ນັ້ງກັ້ງ . ນາງຍົກມືອັ້ນ ເປັນມືຂອງສາວນ້ອຍຄະ ຣູນີ - ນາງລູບຈັດຜົມສີ່ຂີ້ເຖົ່າ ທີ່ຫວີໄວ້ຈົບງາມ ຈົນຄືວ່າ - ແມ່ນຜົມປອມ , ແລ້ວນາງກໍຖາມສຽງຄ່ອຍໆ ແຕ່ຈະແຈ້ງວ່າ:

" ເຈົ້າພໍ່ ມີຊາ ບໍ່ລະ ຊອກເຊີ ? "

ຊອກເຊີ ລູກອື້ນປູບປັບ ຊຸກຂ້ອຍຫລີກທາງ ແລະ ຕອບ- ຢ່າງຟ້າວຟັ່ງວ່າ :

" ອາວ ເຈົ້າກໍຮູ້ຕ່ວາ ເຂົາໄປ ກິເຢັບ ແລ້ວ " .

" ເອີ...ແມ່ນລະນໍ້ ໄປກິເຢັບແລ້ວ " ນາງເວົ້າຊ້ຳ- ຄືນ ດວງຕາຈັບຈ້ອງຢູ່ໃບໄພ້ . ຂ້ອຍສັງເກດວ່າ ສຽງຂອງ ນາງ ບໍ່ມີຄວາມຮູ້ສຶກ ຫລືອາລົມອັນໃດເລີຍ .

" ເຂົາຄົງຈະກັບມາໄວໆນີ້ລະ... "

" ແທ້ຫວາ ? "

" ແທ້...ໄວໆນີ້ແລ້ວ " .

" ແທ້ຫວະ ? " ນາງຍັງເວົ້າຊ້ຳຄວາມເກົ່າອີກ .

ຊອກເຊີ ໂດດລູກຈາກຕັ່ງຍາວ ຫັ້ງທີ່ພ້ອມແກ້ເສືອ ບໍ່ທັນ ແລ້ວ , ເຂົາເຂົ້າໄປຂ້າງໆ ແລະ ຊູເຂົ່າລົງແທດຕີນນາງ, ເວົ້າເລື່ອງໃດເລື່ອງໜຶ່ງເປັນພາສາຝະລັ່ງອອກມາ .

" ຂ້ອຍປົກກະຕິຢູ່ດອກ " ນາງຕອບເປັນພາສາລັດເຊຍ.

" ເຈົ້າຮູ້ບໍ່ ຂ້ອຍຫລົງທາງ . ພາຍຸຫິມະແຮງກະດົດກະ

ດັ່ງ , ລົມກໍພັດແຮງແທ້ງ . ຂອຍຄິດວ່າຊິກະດາງຕາຍ .

ຊອກເຊີ ຟາວບອກນາງ ທັງລູບມືຂາງທີ່ວາງຊອຍມອຍຢູ່ເທິງຫົວເຂົາກ່ຳໜຶ່ງ . ເຂົາເປັນຄົນອາຍຸປະມານ ໔໐ , ຮອຍວິຕົກກັງວົນແກມຢານກົວສະແດງອອກໃນໃບໜາ ແລະຮິມສົບໜາໃຕໜວດສີດຳ , ເຂົາເຝົ້າແຕລູບຜົມສີຂີ້ເຖົ່າ - ແຂງເທິງຫົວແຮງໆ ແລະ ອາການເມົາຂອງເຂົາ ກໍຄາຍກັບວ່າ ມະທັບມະທາຍໄປຢ່າງໄວວາ .

" ມ້ອມ ພວກເຮົາຈະອອກເດີນທາງໄປ ກໍເຢັບ " ຍິງຄຸມນັ້ນເວົ້າຂຶ້ນ , ຈັກວ່າແມ່ນຄຳຖາມ ຫລືຄຳບອກກາວ ແກ່ເຂົາກໍບໍ່ແຈງ .

ແມ່ນລະ , ມ້ອມ ! ດ່ຽວນີ້ ເຈົ້າຕອງພັກຜ່ອນສາ . ເປັນຫຍັງຈິ່ງບໍ່ໄປນອນ ? ເດິກຫລາຍແລວ .

" ແລວ ມີຊາ ຊິບໍ່ມາໜີ້ຫວະ ມື້ນີ້ ? "

" ບໍ່...ບໍ່ດອກ , ລົມແຮງປານນີ້...ໄປ , ໄປນອນສາ ເດິກແລວໄດ "

ເຂົາຈັບເອົາຕະກຽງຢູ່ເທິງໂຕະ ແລວພານາງຍ່າງຜ່ານປະຕູນອຍໆແອມດວຍຕູ້ປົມ . ຂອຍນັ່ງຢູ່ຄົນດຽວຕັ້ງດົນນານ , ບໍ່ຄິດຫາຫຍັງໝົດ , ຟັງສຽງເຂົາເວົ້າອູມໆອົມໆຢູ່ຫອງ ຖັດກັນ , ລົມພາຍຸພັດກະທົບປອງຢຽມ , ເທິງພົມເຮືອນ ທີ່ມະຫົດກເຣຍຢູ່ ລະລາຍຕົວເປັນນ້ຳ ສົ່ງແສງສະທ້ອນຍອມໄຟ - ທຽນໄຂພີ່ຣີບຣີ່ . ພາຍໃນຫອງ ເຕັມໄປດວຍເຄື່ອງ ເຮືອນ ແລະ ມີກິ່ນແປກປະຫລາດຢ່າງໜຶ່ງຮວາຍມາໃສ່ດັງ ເຮັດໃຫຈິດໃຈຂອຍຊອຍມອຍລົງ .

ໃນທີ່ສຸດ ຊອກເຊີ ກໍອອກມາ , ເຂົາຍ່າງເຊຫນ້ອຍ - ຫນຶ່ງ ມືຖືຕະກຽງ ຊຶ່ງແກ້ວງຄອນໄປມາ .

" ລາວນອນຫລັບແລ້ວ " .

ເຂົາປົງຕະກຽງລົງເທິງໂຕະ ແລະມີອາການຄິດ ຫງໍາ ຈົນເປັນຊິງລິງ . ເຂົາຢຸດຢືນຢູ່ກາງຫ້ອງ ແລ້ວເລີ່ມເວົ້າ - ອອກມາ ໂດຍບໍ່ແນມຫນ້າຂ້ອຍເລີຍ .

" ອືມ...ຂ້ອຍກະບໍ່ຮູ້ວ່າຊິເວົ້າວ່າຈັ່ງໃດນໍ້ ? ຄົນເຈົ້າ ບໍ່ຊ່ອຍຂ້ອຍໄວ້ ກະແມ່ນເສັດແລ້ວປານນີ້ , ແມ່ນບໍ່ ?... ຂອບໃຈ , ຂອບໃຈ ! ແຕ່ ເອ...ເຈົ້າແມ່ນໃຜລະຫາວ?"

ເຂົາຈິດຫົວບາດຫນຶ່ງ ແລະ ຄອຍຟັງ . ພໍໄດ້ຍິນສຽງ- ຊູກຂິກຈາກຫ້ອງນັ້ນ ເຂົາກໍເລີ່ມກະວົນກະວາຍອີກ .

" ລາວແມ່ນເມຍເຈົ້າຫວະ ? " ຂ້ອຍຖາມຄ່ອຍໆ .

" ແມ່ນລະ...ເປັນເມຍ...ເປັນທຸກສິ່ງທຸກຢ່າງໃນ ຊີ ວິດຂອງຂ້ອຍ ! "

ເຂົາເວົ້າຄ່ອຍໆແຕ່ແຈ່ມແຈ້ງ , ຕາຈ້ອງແນມພື້ນເຮືອນ, ແລ້ວເຂົາກໍເອົາມືລູບຜົມອີກແຮງໆ .

" ກິນນ້ຳຊາກັນຈັກຫນ່ອຍກໍດີໄດນໍ້ ? "

ເຂົາຍ່າງໄປທີ່ປະຕູ ແລ້ວພັດຢຸດສະງັກ , ຍ້ອນຄິດພໍ້ວ່າ ນາງຮັບໃຊ້ໄດ້ກິນປາຫລາຍໂພດເລີຍຖືກສົ່ງໄປໂຮງຫມໍແລ້ວ.

ຂ້ອຍຍັ້ນອາສາດັງໄຟໃສ່ຫມໍ້ ຊາໂມວາ ໃຫ້ . ເຂົາງຶກ ຫົວຮັບ ແລ້ວພາຂ້ອຍໄປໃນຫ້ອງຄົວ . ເຂົາອາດຈະລືມໄປ- ວ່າຕົນເອງ ນຸ່ງເຄື່ອງບໍ່ທັນຮຽບຮ້ອຍ ເລີຍຍ່າງຕີນເປົ່າ ຍ່ຳ ໄປເທິງພື້ນເຮືອນທີ່ປຽກອຶນ ຮອດຫ້ອງຄົວ ເຂົາຢືນອີງ ເຕົາ

ໄຟ ແລະ ເວົ້າຂຶ້ນອີກ :

" ໂຫ້ ! ຄັ້ນແມ່ນເຈົ້າບໍ່ຊ່ອຍຂ້ອຍໄວ້ ຂ້ອຍຄົງແຂງ - ຕາຍພໍແຮງແລ້ວນໍ້ ຂອບໃຈຫລ່າຍ ! "

ແລ້ວໃນທັນໃດ ເຂົາກໍເບິ່ງຂ້ອຍດ້ວຍສາຍຕາເບີກກ້ວາງ ຢ່າງຕົກອົກຕົກໃຈ .

" ຄັ້ນຂ້ອຍຕາຍ...ລາວຊິເປັນແນວໃດຊັ້ນ ? ໂອ ພະ ເຈົ້າ ! "

ເຂົາຊື່ມຢ່າງຟ້າວຟັ່ງ , ສາຍຕາເສືອດໄປທາງປະ ຕູ ນ້ອຍທື່ມດໆ :

" ລາວບໍ່ຄ່ອຍສຳບາຍ ເຈົ້າເຫັນບໍ່ , ລາວມີລູກຊາຍ- ຄົນຫນຶ່ງ ເປັນນັກດົນຕີ ຢູ່ ມົດສະກູ - ແລ້ວເຂົາພົດຂາ ຕົວ ຕາຍ , ແຕ່ລາວຍັງຄິດວ່າ ເຂົາພວມຈະກັບມາເຮືອນຢູ່ ພໍ ຮາວນັ້ນ , ຈົນວ່າໄດ້ສອງປີແລ້ວ " .

ຫລັງຈາກນັ້ນ ເຮົາກໍດື່ມນ້ຳຊານຳກັນ , ເຂົາເວົ້າ ກະ ຕູກກະຕັກເຖິງເລື່ອງຕົນເອງ ໂດຍໄຊ້ຄຳສັບແປກປະຫລາດ- ວ່າ ນາງເປັນເຈົ້າທີ່ດິນຢູ່ ຊົນນະບົດ , ສ່ວນເຂົາເປັນ ຄູ ສອນປະຫວັດສາດ . ນາງຈ້າງເຂົາມາເປັນຄູສອນລູກຊາຍ- ແລ້ວເຂົາກໍມາຫລົງມັກນາງ , ນາງຍອມປະຜົວເກົ່າ ເຊິ່ງ ເປັນເຊື້ອເຈົ້າ ເຢຍລະມັນ , ແລ້ວນາງເອງເລີຍມາ ເປັນ ນັກຮ້ອງໃນລະຄອນ ໂອເປຣາ . ເຂົາຢູ່ນຳນາງຢ່າງ ເປັນ ສຸກ ໃນຂະນະທີ່ເຊື້ອເຈົ້າຄົນນັ້ນ ພະຍາຍາມທຸກວິທີທາງທີ່ຈະ ກູກວນ .

ຂະນະທີ່ເລົ່າ ເຂົາກໍແນມໄປທາງເງົາມືດຂ້າງເຕົາ ໄຟ

ຊຶ່ງພື້ນເຮືອນບໍລິເວນນັ້ນ ຜຸໂຊມຫລາຍແລ້ວ . ເຂົາດື່ມນ້ຳ-
ຊາ ທັງທີ່ມັນຍັງຮ້ອນໆຈົນລວກປາກ ແລະ ຫນ້າຂອງເຂົາ ກໍ
ບິດບ້ຽວດ້ວຍຄວາມເຈັບປວດ , ເຂົາເຮັດຕາພັບຢ່າງສົງໄສ
ເມື່ອອອກປາກຖາມຂ້ອຍວ່າ :

" ເຈົ້າແມ່ນໃຜລະທ້າວ ? ເອີ...ແມ່ນລະ ເຈົ້າວ່າ-
ເຈົ້າເປັນຄົນງານໃນຮ້ານເຮັດເຂົ້າຈີ່ . ແປກປະຫລາດນໍ້າທ່າ
ທາງເຈົ້າ ຄືບໍ່ເຫມາະສົມກັບວຽກງານແນວນັ້ນເລີຍ...ເປັນ
ຫຍັງເປັນແນວນັ້ນ ? "

ນ້ຳສຽງ ແລະ ໃບຫນ້າ ຂອງເຂົາສະແດງວ່າມີຄວາມ-
ລະແວງສົງໄສ ແລະ ຢ້ານກົວບໍ່ໄວ້ໃຈຂ້ອຍ ; ເປັນສາຍຕາ
ຂອງຄົນທີ່ຖືກດັກ , ຈັບຜິດໄດ້ . ຂ້ອຍຈຶ່ງເລົ່າເລື່ອງຂອງ-
ຕົນເອງໃຫ້ເຂົາຟັງໂດຍຫຍໍ້ .

" ໂອ້ ! ເລື່ອງມັນເປັນແນວນີ້ " ເຂົາອຸທານຄ່ອຍໆ
" ອືມ....ເປັນແນວນີ້ບໍ່-ຂຸ້ນ ! "

ແຕ່ໃນທັນໃດ ດ້ວຍອາການຄຶກຄັກ ເຂົາຖາມວ່າ :

" ເຈົ້າຮູ້ຈັກນິທານເລື່ອງ...ລູກເປັດຂີ້ເຮີ້ນບໍ່ ?...
ເຈົ້າຄົງໄດ້ອ່ານຕ່ວາ ? "

ຫນ້າຕາເຂົາບິດບ້ຽວຢ່າງແປກປະຫລາດ , ຫາງ ສຽງ
ເວົ້າຂຸ້ນຂ້ຽວຂຶ້ນ , ສຽງດັງແຮງຂຶ້ນ ແລະ ແທບຟັງເປັນ ສີ
ປະຫລາດໆ...

" ນິທານແບບນີ້ ມັກຫລອກລວງເຮົາ , ຂ້ອຍກໍ່ຮູ້ສຶກ -
ແບບນີ້ ເມື່ອອາຍຸສ່ຳເຈົ້າ , ຂ້ອຍຄິດວ່າ ວັນໃດວັນຫນຶ່ງ -
ເຮົາຈະກາຍເປັນຫົງ...ແຕ່ແລ້ວ...ພໍ່...ພໍ່ຢາກໃຫ້ ຂ້ອຍ

ເຂົ້າຮຽນໃນສະຖາບັນສາສະໜາ ແຕ່ຂ້ອຍພັດໄປເຂົ້າມະຫາວິທະຍາໄລທາງໂລກ . ພໍ່ຂ້ອຍເປັນນັກບວດ ເພິ່ນເລີຍ ຕັດຂ້ອຍຈາກຄອບຄົວ . ຂ້ອຍຈຶ່ງໄປຮຽນທີ່ ປາຣີ , ຮຽນ ປະຫວັດສາດ , ປະຫວັດສາດຂອງຄວາມໂຊກຮ້າຍຂອງມະ ນຸດ ປະຫວັດສາດແຫ່ງຄວາມຈະເລີນກ້າວໜ້າ . ຂ້ອຍເອງກໍໄດ້ຂຽນແຕ່ເຈັ້ມກັ້ນ...ມັນເປັນຈັ່ງຊັ້ນແຫຼະ ຊີວິດນີ້..."

ເຂົາສະດຸ້ງ ແລະ ວຽງຫູຟັງຄາວໜຶ່ງ , ແລ້ວເວົ້າວ່າ:

" ຄວາມຈະເລີນ – ຣີ ! ຄົນເຮົາສ້າງມັນຂຶ້ນ ເພື່ອຕົວະຕົວເອງນັ້ນລະ ! ມັນຊິມີຄວາມໝາຍຫຍັງ ຊິມີເຫດຜົນຫຍັງ ຊີວິດນະ ! ເຈົ້າຊິສ້າງຄວາມຈະເລີນກະບໍ່ໄດ້ ຄົນບໍ່ມີການກົດຂີ່ . ເມື່ອໃດຄົນສ່ວນໜ້ອຍຫາກເສຍອຳນາດໃນ ມືໃຫ້ແກ່ຄົນສ່ວນໃຫຍ່ແລ້ວ ໂລກມະນຸດກໍຈະເຊົາເໜັງຕີງ... ຄຶດເບິ່ງວ່າ ຄົນເຮົາພະຍາຍາມເຮັດທຸກຢ່າງ ເພື່ອໃຫ້ຊີວິດສະດວກສະບາຍຂຶ້ນ , ໃຫ້ໄດ້ເຮັດວຽກເບົາບາງລົງ , ແຕ່ແລ້ວກໍພັດແຮງເຮັດໃຫ້ ມັນສັບສົນ ຕື່ມວຽກຕື່ມງານໃຫ້ ເຮົາອີກຊ້ຳ...ມີແຕ່ໂຮງຈັກ ໂຮງງານເພື່ອຜະລິດເຄື່ອງຈັກ – ເຄື່ອງລານ ຈັ່ງແມ່ນຈາ ! ເບິ່ງດູ ຢູ່ປະເທດໃດ ກໍມີແຕ່ກຳມະກອນໂຮງງານຫຼາຍຂຶ້ນນຳທຸກມື້ , ມັນຊິຈຳເປັນຫຍັງ , ຕ້ອງເພິ່ນຊາວນາພູມລະບໍ່ , ພວກຊິປູກຟັງ , ເຮັດຂອງ ຊິກິນໃສ່ທອງ ນັ້ນຈັ່ງແມ່ນສິ່ງທີ່ມະນຸດຕ້ອງການ ສ້າງຂຶ້ນຈາກ–ທຳມະຊາດສົດໆດ້ວຍເຫື່ອແຮງຂອງຕົນເອງ . ຄົນເຮົາຄວນຫຼຸດຜ່ອນຄວາມຢາກລົງແດ່ , ຖ້າຢາກໜ້ອຍໄດ້ລະ ແຮງຊິມີຄວາມສຸກ , ຖ້າຢາກຫຼາຍຂຶ້ນທໍໃດ ກໍຈະເສຍອິດສະຫຼະ

ພາບ ຫລາຍຫໍນັ້ນລະ " .

ຄຳເວົ້າຂອງເຂົາແທ້ໆ ຄົງບໍ່ແມ່ນແນວນີ້ ຫມົດທຸກຄຳ - ດອກ ; ແຕ່ແມ່ນເນື້ອໃນອັນປະຫລາດທີ່ເຂົາຊີ້ແຈງອອກມາ ເປັນຄັ້ງທຳອິດ ທີ່ຂ້ອຍໄດ້ຮູ້ຈັກແນວຄິດແບບນີ້ ຊຶ່ງສະແດງ - ອອກມາຢ່າງຈະແຈ້ງ , ຢ່າງບໍ່ເຄືອບແຝງ . ເຂົາ ເຊົາ ເວົ້າດ້ວຍອາການຕື່ນເຕັ້ນນັ້ນ , ແລ້ວຫລຽວແນມໄປທີ່ປະຕູ- ຢ່າງຕັ້ງໃຈ ແລະ ດັກຟັງສຽງຈາກຫ້ອງຖັດໄປຢູ່ຄາວຫນຶ່ງ , ເຫັນມີແຕ່ຄວາມມິດ ເຂົາກໍ່ຊຸ່ມຊັບເວົ້າຕໍ່ໄປດ້ວຍຄວາມ ເຄັ່ງ ຂຶມ :

" ເຈົ້າຈື່ໄວ້ກໍ່ແລ້ວກັນທ້າວ , ຄົນເຮົາບໍ່ຕ້ອງການຫຍັງ ຫລາຍດອກ ເຂົ້າຈີ່ກ້ອນຫນຶ່ງ ແລ້ວກະຜູ້ຍິງຈັກຄົນຫນຶ່ງຫໍນັ້ນ- ລະ " .

ຕອນເວົ້າຮອດແມ່ຍິງ ເຂົາອອກສຽງເບົາເລິກລັບ ເປັນ ຖ້ອຍຄຳທີ່ຂ້ອຍບໍ່ເຄີຍໄດ້ຍິນ , ເປັນບົດກອນທີ່ຂ້ອຍບໍ່ເຄີຍໄດ້ ອ່ານ . ຕອນນີ້ຂ້ອຍຄິດພໍ້ວ່າ ເຂົາຄືກັນກັບ ທົວຂະໂມຍ ບາ ຊິະກິນນັ້ນເອງ .

" ເບອາຕີຊ , ຟິອາແມັດຕາ , ໂລຣາ , ນິນົນ " ເຂົາຊື່ມບອກຊື່ຕ່າງໆທີ່ຂ້ອຍບໍ່ຮູ້ຈັກ . ເຂົາເວົ້າເຖິງບັນ ດາ ກະສັດແລະນັກກະວີ ທີ່ຫລົງໄຫລໃນຄວາມຮັກ , ເຂົາເວົ້າ- ຄຳກອນຝະລັ່ງ ທັງຍົກແຂນຈ່ອຍໆຂຶ້ນໂບກເປັນຈັງຫວະໄປນຳ.

" ຄວາມຮັກ ແລະ ຄວາມຫິວເທົ່ານັ້ນທີ່ຄອງໂລກ " , ເຂົາລະເມີ . ປະໂຫຍກນີ້ຂ້ອຍເຄີຍໄດ້ຍິນມາແລ້ວ , ມັນ- ຖືກພິມລົງໄວ້ໃຕ້ຊື່ຫົວເລື່ອງຂອງປຶ້ມ " ພະເຈົ້າຄວາມອຶດຫິວ"

ຂອງພວກປະຕິວັດ , ເປັນຄວາມຈິງທີ່ຂ້ອຍເອງກໍພວມຄຶດຄຳນຶງເຖິງຄວາມໝາຍອັນສຳຄັນຂອງມັນຢູ່ຄືກັນ .

" ມະນຸດເຮົາຕ້ອງການຢາກລືມ , ຕ້ອງການສິ່ງອິ່ມ - ອອຍໃຈ ບໍ່ແມ່ນຕ້ອງການຄວາມຮູ້ ! "

ແນວຄິດຂໍ້ສຸດທ້າຍຂອງເຂົາ ກະທົບຈິດໃຈຂ້ອຍຈົນມຶນງົງ.

ກ່ວາຂ້ອຍຈະອອກຈາກຫ້ອງຄົວເຮືອນນັ້ນໄປ ກໍແມ່ນເຊົ້າມື້ໃໝ່ແລ້ວ , ຫົກໂມງປາຍ , ຕາມເບິ່ງໂມງຫ້ອຍຢູ່ຝາ . ຂ້ອຍລຸຍຫິມະເປັນກ້ອງໆ ຜ່າຫົວລົມທີ່ຍັງຄົງພັດຮຸນແຮງອ້ອມ-ໂຕຂ້ອຍ ທັງສຽງເວົ້າແບບຕື່ນເຕັ້ນ ຂອງຊາຍເສຍທາດຂາດຊຸມຄົນນັ້ນ ກໍຍັງດັງກ້ອງໃນຫູຂ້ອຍຕະຫລອດທາງ . ຂ້ອຍ ຮູ້ວ່າສິ່ງທີ່ເຂົາກ່າວມານັ້ນ ເປັນເລື່ອງທີ່ເກີນກຳລັງຂ້ອຍຈະກືນລົງໄດ້ . ມັນຕິດຄາຢູ່ຄໍຫັ້ນ ຈົນຂ້ອຍຊິຫັນໃຈບໍ່ໄດ້ແລ້ວ. ຂ້ອຍບໍ່ຫັນຢາກເມືອເຮືອນ ທີ່ໂຮງເຮັດເຂົ້າຈີ່ , ບໍ່ຢາກໄປເຫັນ-ໜ້າໃຜໝົດ . ຂ້ອຍລາກຂາ ເອົາບ່າຕົ່ງລະອອງຫິມະ ໄປຕາມຖະໜົນຕ່າງໆໃນຊຸມຊາວ ຕາຕາຈົນວ່າຮຸ່ງອະລຸນ ແລະເລີ່ມມີຄົນທ່ຽວທາງບຸກຜ່າຫ່າຫິມະທີ່ພວມຕົກຢູ່ .

ຂ້ອຍບໍ່ໄດ້ພໍ້ຄູສອນປະຫວັດສາດຄົນນັ້ນອີກເລີຍ ແລະ ກໍບໍ່ປາຖະໜາຢາກພໍ້ເຂົາ . ແຕ່ໃນເວລາຕໍ່ມາ ຂ້ອຍມັກໄດ້ຍິນໄດ້ຟັງເລື້ອຍໆ ກ່ຽວກັບເລື່ອງຊີວິດທີ່ບໍ່ມີຄວາມໝາຍ, ເລື່ອງຄວາມສູນເປົ່າຂອງແຮງງານ , ໄດ້ຟັງຈາກປາກຂອງຄົນພະເນຈອນ ບໍ່ຮູ້ໜັງສື , ຈາກຂໍທານ ທີ່ບໍ່ມີຮອດເຮືອນຈະຊຸ້ມ ຈາກ " ຜູ້ນິຍົມນັກຂຽນໂຕນສະໂຕຍ " , ຫລືຈາກຄົນທີ່ໄດ້ຮັບການສຶກສາ . ຂ້ອຍເຄີຍໄດ້ຟັງ ຄຳເລົ່າແບບດຽວກັນ ນີ້

ຈາກປາກຂອງນັກບວດ ຜູ້ຊຶ່ງຮຽນຈົບຂັ້ນປະລິນຍາໂທທາງສາ
ສະໜາ , ຈາກນັກເຄມີສາດ ທີ່ເຣັດວຽກກ່ຽວກັບວັດຖຸລະ-
ເບີດ , ຈາກນັກຊີວະສາດ ແລະຄົນອື່ນໆອີກຕັ້ງຫລວງຫລາຍ
ແຕ່ທຸກເທື່ອທີ່ໄດ້ຍິນ ຄວາມຄິດດັ່ງກ່າວນັ້ນ ກໍບໍ່ເຣັດໃຫ້ຂອຍ-
ວຸ້ນວາຍໃຈ ທໍ່ຄັ້ງທຳອິດທີ່ໄດ້ຍິນຈາກປາກຄູສອນປະຫວັດສາດ
ຄົນນັ້ນເລີຍ .

ແລ້ວຫວ່າງຈັກປີສອງປີມານີ້ເອງດີ ປະມານ ໑໐ ກວ່າປີ
ຫລັງຈາກທີ່ຂ້ອຍໄດ້ລືມນຳຄູສອນປະຫວັດສາດຄົນນັ້ນແລ້ວຂ້ອຍ
ກໍມາໄດ້ຍິນຄຳເວົ້າທີ່ເກືອບຄືກັນໝົດກ່ຽວ ຈາກຄົນລຸງເຄີຍ-
ຄົນໜຶ່ງ ທີ່ເປັນຄົນງານທຳມະດາ .

ຄັ້ງໜຶ່ງ ພວກເຮົາລົມກັນ ຢ່າງເປີດເຜີຍຈິງໃຈ ,ແລ້ວ
ຊາຍ " ຜູ້ຫລົງໄຫລການເມືອງ " ຜູ້ນີ້ ເຂົາຕັ້ງຊື່ຕົວເອງ -
ແນວນັ້ນ , ເຂົາຍິ້ມຢ່າງບໍ່ເບີກບານ ແລ້ວກໍບອກຂ້ອຍ ດ້ວຍ
ຄວາມຈິງໃຈ ຢ່າງບໍ່ຢານອັນຕະລາຍ ຂ້ອຍຄິດວ່າ ມີແຕ່ ຄົນ
ລັດເຊຍເທົ່ານັ້ນລະ ທີ່ລົມກັນແບບນີ້ .

" ອາເລັກໄຊ ເພື່ອນຮັກ ! ແມ່ນຂ້ອຍຊິຕ້ອງການຫຍັງ
ເກາະຈາກວິທະຍາສາດ , ການສຶກສາຊັ້ນສູງ ຫລືວ່າ ຍົນ
ເຫາະນະ ?ລວມແລ້ວແຕ່ ບໍ່ມີປະໂຫຍດ ! ມັນບໍ່ຈຳເປັນ -
ເລີຍສຳລັບຂ້ອຍ, ສິ່ງທີ່ຂ້ອຍຕ້ອງການມີທໍ່ວ່າ ເຮືອນຢູ່ສະ -
ຫງົບໆ ແລະ ແມ່ຍິງມາໄວ້ກອດຈັກຄົນ ບາດຄິດຢາກກອດຂຶ້ນ
ມາ , ແລ້ວກໍໃຫ້ແມ່ຍິງນັ້ນ ມັນຮູ້ຮັກເຮົາຄົນຢ່າງຊື່ສັດທັງ -
ກາຍ-ໃຈ ທໍ່ນັ້ນລະ ! ແຕ່ໂຕ...ໂຕລະຍົກເຫດຍົກຜົນດີ ດີ
ພວກປັນຍາຊົນ , ໂຕລະບໍ່ແມ່ນຄົນໄທເຮົາຈັກດີ້ ແລ້ວດຽວນີ້

ໂຕຖືກເບື່ອເມົາແລ້ວ - ແມ່ນບໍ່ ? ໂຕລະຄິດເຫັນແຕ່ ວ່າ ຄວາມຄິດຕ່າງໆນັ້ນ ມັນສຳຄັນກວ່າຄົນຊຸມຫວະ ?ຈັ່ງແມ່ນ - ຊາດໂຕຄິດແບບດຽວກັບພວກຍິວ ! ຄົນຄິດແບບນີ້ຄວນ ໄປ ບວດຊີດີກວ່າແມ່ນບໍ່ ? "

" ແຕ່ພວກຍິວ ບໍ່ໄດ້ຄິດແນວນັ້ນເລີຍໄດ໋ລະ " .

" ໃຜຊິຮູ້ໄດ້ວ່າ ພວກມັນຄິດຫຍັງ , ພວກນັ້ນກໍເຂົ້າ ໃຈ ຍາກ " , ເຂົາຖຽງ , ເຂົາດີດກົ້ນກອກຢາຖິ້ມລົງແມ່ ນ້ຳ ແລະ ເບິ່ງມັນລອຍໆຈົມລົງໄປ .

ຄືນນັ້ນເປັນຄືນເດືອນຫງາຍຂອງລະດູໃບໄມ້ຫລົ່ນ,ພວກ- ເຮົານັ່ງຢູ່ຕັ່ງຫີນແຄມແມ່ນ້ຳ ເນວາ , ພວກເຮົາຕ່າງກໍ ອີດ ອອມໂຮຍແຮງຍອມວ່າມີຄວາມປາຖະໜາຢູ່ຕະຫລອດເວລາທີ່ ຈະສ້າງຊຸມງາມຄວາມດີ ແຕ່ແລວກັບພົບແຕ່ຄວາມໄຮປະ - ໂຫຍດ .

" ໂຕນະ ຢູ່ນຳພວກເຮົາ , ແຕ່ໂຕບໍ່ແມ່ນພວກດຽວກັບ ຊຸມເຮົາແທ້ໆ - ເຮົາຂໍເວົ້າຈັ່ງຊີ້ລະ " ,ເຂົາເວົ້າຕໍ່ໄປ - ຄ່ອຍໆ ແຕ່ຊ້ຳໄຊ້ຄວາມຄິດ .

" ພວກປັນຍາຊົນ...ເຂົາມັກຄິດຫລາຍ , ແຕ່ໃດໆມາ ຫລາຍສະຕະວັດແລວ ພວກເຂົາປະພຶດຕົວເປັນກະບົດ ,ຄືພະ ເຍຊູຈັ່ງຊັ້ນ , ເພິ່ນກໍເປັນຄົນມີອຸດົມຄະຕິ ແລວກໍກະບົດເພື່ອ ຊອກຫາຫົນທາງໄປສູ່ໂລກໃຫມ່ . ດຽວນີ້ກໍຄືກັນ , ພວກປັນ ຍາຊົນທັງຫມົດພະຍາຍາມທຳການກະບົດ ເພື່ອວິມານລອຍ - ເມກ . ນັກອຸດົມການເຮັດການປະຕິວັດ , ແຕ່ພວກທີ່ບໍ່ເຮັດ ຫຍັງເລີຍ , ພວກເສດເຫລືອຂອງສັງຄົມ ຂໍໂທດສາມານທັງ

ຫລາຍກໍເລີຍລອຍໄປນຳເຂົາ ລອຍໄປນຳ ຍ້ອນວ່າຄົນພວກນີ້
ບໍ່ມີບ່ອນຊິຢູ່ ແລ້ວໃນໂລກນີ້ , ແຕ່ພວກກຳມະກອນນັ້ນ ເຂົາ
ລຸກຂຶ້ນ ເພື່ອການປະຕິວັດ , ສິ່ງທີ່ພວກເຂົາຕ້ອງການ ແມ່ນ
ສ່ວນແບ່ງທີ່ຍຸຕິທຳຈາກພາຫະນະການຜະລິດ ແລະ ຜົນຜະລິດ
ຈາກແຮງງານ , ບາດນີ້ ຄັນຖ້າກຳມະກອນ ໄດ້ອຳນາດມາ
ມີຢ່າງແນ່ນອນແລ້ວ ໂຕຄຶດຫວະວ່າ ເຂົາຈະຍິນຍອມໃຫ້ ຈັດ
ຕັ້ງເປັນລັດໜຶ່ງຂຶ້ນ ? ບໍ່ມີທາງ ! ພວກເຂົາມີແຕ່ຊິແຍກ -
ຍ້າຍກັນໄປຫັ້ນລະ , ແລ້ວແຕ່ລະຄົນ ກໍຕ້ອງຊອກຫາຫມອງ-
ສະຫງົບບ່ອນໃດບ່ອນໜຶ່ງ , ຊ່ອຍຕົນເອງຫັ້ນແລ້ວ..."

" ເຄື່ອງຈັກຫັ້ນຫວະ - ວິທະຍາການຫັ້ນຫວະ ? ມັນຊິ
ຊ່ອຍຫຍັງໄດ້ນະ ? ອັນນັ້ນລະມັນຊິດຶງບ່ວງຄໍພວກເຮົາໃຫ້ຍັກ
ແທນເຂົາໄປຊ້ຳຫັ້ນແລ້ວ , ແຮງຢູ່ຄືງນີ້ງບາດນີ້ , ບໍ່-ບໍ່
ພວກເຮົາຕ້ອງປົດປ່ອຍຕົນເອງອອກຈາກວຽກງານທີ່ໄຮປະ -
ໂຫຍດຫັ້ນ . ມະນຸດເຮົາຕ້ອງການແຕ່ຄວາມງຽບສະຫງົບ ,
ແຕ່ໂຮງຈັກ ໂຮງງານ ແລະ ວິທະຍາສາດ ບໍ່ມີທາງຊິປ່ອຍ-
ໃຫ້ເຮົາຢູ່ສະຫງົບໄດ້ດອກ . ຄົນເຮົາຊິຕ້ອງການຫຍັງເດສຳ
ລັບຕົວຄົນດຽວ , ເລື່ອງຫຍັງ ເຮົາຊິຕ້ອງສ້າງບ້ານເມືອງ-
ໃຫ້ໃຫຍ່ໂຕ ໃນເມື່ອເຮົາເອງກໍ ຕ້ອງການເຮືອນນ້ອຍໆພຽງ
ຫລັງດຽວ , ຄົນເຮົາຄັນໄປຢູ່ຮວມກັນຫລາຍໆແລ້ວ ມັນ ກໍ
ເກີດຄວາມຈຳເປັນຕ້ອງມີຫລາຍອັນຫລາຍແນວຕື່ມເຊັ່ນວ່ານ້ຳ
ປະປາບໍ , ທໍ່ນ້ຳ . ໄຟຟ້າ...ແຕ່ວ່າ ຄັນແມ່ນເຮົາພະຍາ
ຍາມຫລີກລ້ຽງ ໂດຍບໍ່ຕ້ອງມີຂອງຫມູ່ນີ້ ,ຊີວິດມັນກໍຈະ ງ່າຍ
ດາຍດີຕ່ວາ ! ຊິເວົ້າແນວໃດກໍເວົ້າເທາະ , ທູກມື້ນີ້ ພວກ

ເຮົາມີຫລາຍແນວໂພດແລ້ວ ອັນທີ່ບໍ່ຈຳເປັນນັ້ນນະ, ແລ້ວສິ່ງເຫລົ່ານີ້ ກໍ່ລ້ວນແຕ່ເກີດຂຶ້ນຍ້ອນຫົວຄິດຂອງພວກປັນຍາຊົນ ນີ້ນີ້ລະ. ແນວນີ້ລະ ເຮົາຈິ່ງວ່າພວກປັນຍາຊົນນີ້ ແມ່ນຄົນຊະນິດເສື່ອມຊາມ".

ຂ້ອຍວ່າຄົງບໍ່ມີຄົນຊາດໃດໃນໂລກນີ້ ທີ່ສາມາດປິດຄວາມຫມາຍຂອງຊີວິດອອກໄດ້ຢ່າງເດັດຂາດ ຄືຄົນລັດເຊຍ ພວກເຮົາ.

" ເພາະວ່າ ປະຊາຊົນເຮົາມີຈິດອາລົມທີ່ເປັນອິດສະຫຼະທີ່ສຸດ " ເພື່ອນຂອງຂ້ອຍເວົ້າຕໍ່ໄປ ທັງຍິ້ມນ້ອຍໆ "ພຽງແຕ່ວ່າ ຢ່າຄຽດໄດ໋, ອັນນີ້ເຮົາເວົ້າຄວາມຈິງກໍ້. ພວກເຮົາຕັ້ງເປັນລ້ານໆຄົນກໍຄິດແນວນີ້ທັງນັ້ນລະ, ພຽງແຕ່ວ່າ ຂະເຈົ້າບໍ່ຮູ້ຈັກຊິເວົ້າອອກມາວ່າຈັ່ງໃດ...ຊີວິດຄົນເຮົາຕ້ອງໃຫ້ມັນງ່າຍດ່າຍກວ່ານີ້, ແລ້ວຊີວິດກໍຈະມີຄວາມອື່ດູກູມາມະນູດຫລາຍຂຶ້ນ ".

ຊາຍຜູ້ນີ້ບໍ່ເຄີຍເປັນພວກນິຍົມ ໂຕນສະໂຕຍ ແລະ ກໍ ບໍ່ເຄີຍຖືກຊັກຈູງໂດຍພວກອະນາທິປະໄຕມາກ່ອນ, ຂ້ອຍຮູ້ ດີກ່ຽວກັບດ້ານແນວຄິດຈິດໃຈຂອງລາວວ່າ ມັນຂະຫຍາຍຕົວມາຢ່າງໃດ ?.

ຫລັງຈາກທີ່ໄດ້ລົມກັບເຂົາແລ້ວ, ຂ້ອຍອົດຄິດບໍ່ໄດ້ວ່າ: ຖ້າສົມມຸດວ່າແມ່ນຄວາມຈິງແທ້ເດ ທີ່ວ່າຄົນລັດເຊຍເປັນລ້ານລ້ານທັງຊາຍທັງຍິງ ພວມແບກເອົາຄວາມທຸກທໍລະມານ ຈາກການປະຕິວັດ ຍ້ອນເຫດຜົນແຕ່ພຽງວ່າ ເລິກໃນຫົວໃຈ ຂອງເຂົາເຈົ້າ ແທ້ຈິງແລ້ວ ເຂົາເຈົ້າພຽງແຕ່ຫວັງຢາກຫລີກ ໜີ

ຈາກວຽກງານ ? ປາກໃຫ້ມີວຽກໜ້ອຍທີ່ສຸດ ແຕ່ມີຄວາມສະໜຸກສະໜານຫລາຍທີ່ສຸດ . ນີ້ແມ່ນທັດສະນະທີ່ໜ້າເຫລື້ອມໃສ ດັ່ງດຽວກັບທຸກສິ່ງທຸກຢ່າງທີ່ເປັນໄປບໍ່ໄດ້ ຄື ວິມານລອຍເມກ .

ເຮັດໃຫ້ຂ້ອຍຫວນຄິດພໍ້ຄຳກອນຂອງ ເຮນຣິກ ອິບເຊັນທີ່ວ່າ :

ເຈົ້າເວົ້າວ່າ ຂ້ອຍກາຍເປັນ " ນັກອະນຸລັກນິຍົມ "
ຂ້ອຍກໍເປັນ ຢ່າງທີ່ເຄີຍເປັນມາຕະຫລອດຊີວິດ .
ຂ້ອຍບໍ່ມັກເຄື່ອນຍ້າຍໝາກເສິກເລີຍ .
ແຕ່ຂ້ອຍຢາກເລີກການຫລິ້ນອັນນີ້ທັງໝົດ .
ການປະຕິວັດຄັ້ງດຽວ ທີ່ຂ້ອຍຍັງຈື່ຈຳ
ຕ້ອງບໍ່ແມ່ນການສໍ້ໂກງ ຫລື ປອມແປງຢ່າງໃດທັງນັ້ນ ,
ຕ້ອງແມ່ນການປະຕິວັດ ທີ່ເຮືອງຮອງກວ່າຄັ້ງໃດໆທັງໝົດທີ່ຜ່ານມາ .
ແຕ່ວ່າ ລູຊິແຟ ຍັງຖືກຫລອກຕົ້ມ-ຕອນນ້ຳຖ້ວມໂລກ .
ຍ້ອນວ່າ ໂນອາ ຂຶ້ນລຳເຮືອ ອາກ ແລ້ວກໍກາຍເປັນຜະເດັດການ .
ດັ່ງນັ້ນ - ມາລອງພະຍາຍາມອີກກ່ອນເຖີດ ເພື່ອນ ນັກປະຕິວັດ , ແລະ ເພື່ອກະທຳການອັນນີ້ ພວກເຮົາຕ້ອງມີທັງນັກຕໍ່ສູ້ ແລະ ນັກ ໂຄສະນາ .
ແມ່ນແລ້ວ ມາເຮັດໃຫ້ນ້ຳຖ້ວມໂລກນີ້ອີກເບິ່ງເທາະ ,
ແລ້ວຂ້ອຍນີ້ລະ...ຂ້ອຍຈະຍິນດີ ຍິງເຮືອ ອາກ ເອງ.

ລາຍໄດ້ຂອງຮ້ານຄ້ານ້ອຍຂອງຄອບຄົວ ເດເຣັນກົຟ ນັ້ນ ນັບວ່າໜ້ອຍເຕັມທີ ; ແຕ່ຈຳນວນຜູ້ຄົນ ທີ່ຕ້ອງຊ່ວຍຊູ້ນັ້ນ - ເພີ່ມຂຶ້ນ ແລະ ການໃຊ້ຈ່າຍກໍ່ຍ່ອມເພີ່ມທະວີຂຶ້ນຊັກໃຊ .

" ເຮົາຕ້ອງຄິດຫາວິທີທາງອອກລະ " , ອັງເດຼອີ ຄົງຈະຈົ່ມ , ແລະ ກໍຄົງຈະເອົາມືລູບເຄົາຍາວ , ຍິ້ມ ແບບຍອມຜິດ ຫລືບໍ່ກໍຖອນຫັນໃຈແຮງ .

ຜູ້ຊາຍຄົນນີ້ ຄືຈິ່ງວ່າຕັ້ງຊີສະຫລະຕົນເອງເຮັດວຽກໜັກເພື່ອຊ່ວຍເພື່ອນມະນຸດໄປຕະຫລອດຊາດ ; ເຖິງແມ່ນວ່າ - ເຂົາຈະປະຕິຍານຕົນໄວ້ແນວນັ້ນກໍຕາມ ບາງຄັ້ງມັນກໍ່ ໜັກໜ່ວງເກີນກຳລັງເຂົາແທ້ໆ .

ຂ້ອຍເຄີຍອອກປາກຖາມເຂົາຫລາຍເທື່ອຫລາຍທີ່ດ້ວຍຄຳເວົ້າທີ່ບໍ່ຊ້ຳກັນວ່າ :

ເປັນຫຍັງ ເຈົ້າຈິ່ງຕ້ອງເຮັດແນວນີ້ ? "

ແຕ່ເຂົາບໍ່ຄ່ອຍເຂົ້າໃຈຄຳຖາມຂ້ອຍດອກ , ເພາະຍາມໃດ ເຂົາກໍຕອບແຕ່ໃນທຳນອງວ່າ : " ເຮັດເພື່ອຫຍັງ ?" ພູ້ມ - ຕອບແບບຕາມຫລັກເກນຕາມຕຳລາ , ບໍ່ຕິດບໍ່ຕໍ່ກັນ- ເລີຍ ແລະ ມັກເວົ້າໄປຮອດຊີວິດ ທີ່ທຸກຍາກລຳບາກຂອງຄົນທັງຫລາຍ , ເວົ້າຮອດຄວາມຮຽກຮ້ອງຕ້ອງການຢາກໃຫ້ຄົນໄດ້ຮ່ຳຮຽນ ແລະ ຮູ້ແຈ້ງເຫັນຈິງຂຶ້ນ .

" ແຕ່ວ່າ ຄົນເຮົານີ້ ຕ້ອງກິນຢາກຮຽນຮູ້ບໍ່ ? "

ແນວຄິດທີ່ແຫລມຄົມແນວນີ້ ເປັນອັນຕະລາຍທີ່ສຸດສຳ ລັບຄົນໜຸ່ມອາຍຸ ໑໗ ສ່ຳຂ້ອຍ . ເມື່ອກະທົບກັບຊາວໜຸ່ມແນວຄິດນີ້ ກໍແຕກບານແລະບໍ່ໃຫ້ປະໂຫຍດຫຍັງເລີຍ .

ຂ້ອຍເລີ່ມຄິດວ່າ ຕົນໄດ້ສັງເກດມາແຕ່ໃດຜູ້ລອຢູ່ໃສໆກໍຄື
ກັນໝົດ . ນິທານເປັນຕາອ່ານ ໜ້າສົນໃຈ ຍອມວ່າ ມັນ
ຊ່ວຍໃຫ້ຜູ້ອ່ານເພີດເພີນ ລືມຊີວິດທີ່ທຸກຍາກກາກກຳອັນຈຳເຈ
ຂອງຕົນ ; ຖ້າແມ່ນນິທານເລື່ອງໃດປະກອບດ້ວຍສິ່ງທີ່ "ປະ
ດິດແຕ່ງ "ອັນຫລາຍທໍ່ໃດ ຄົນອ່ານກໍ່ແຮງຕິດຫລາຍຂຶ້ນທໍ່ນັ້ນ;
ປຶ້ມທີ່ຄົນນິຍົມຫລາຍໆນັ້ນ ລ້ວນແຕ່ແມ່ນເລື່ອງທີ່ " ປັ້ນແຕ່ງ-
ຂຶ້ນຢ່າງວິດຖານ " . ສະຫລຸບແລ້ວ ອັນນີ້ລະ ທີ່ວ່າຂ້ອຍ -
ພວມຫລົງຢູ່ໃນເມກໝອກທີ່ເປັນພິດ .

ໃນທີ່ສຸດ ເດເຣັນກົຟ ກໍຕົກລົງໃຈຕັ້ງໂຮງເຮັດເຂົ້າຈີ່ .
ຂ້ອຍຈື່ວ່າເຂົາດຳເນີນວຽກງານແບບມີການຄຳນວນລາຍ ໄດ້
ຢ່າງລະອຽດໄວ້ລ່ວງໜ້າ ຄືຈະຕ້ອງໃຫ້ມີກຳໄລບໍ່ຕ່ຳກວ່າ -
ສິ໕% ໃນທຸກໆງວດເກັບເງິນ . ຂ້ອຍໄດ້ໄປເປັນຜູ້ຊ່ວຍນາຍ
ຊ່າງ ແລະ ຍັງເປັນ " ຄົນໃນ "ນຳອີກ , ເພື່ອຄອຍ ສົ່ງ
ຊອມເບິ່ງບໍ່ໃຫ້ອີ່ຕາຊ່າງນັ້ນລັກເອົາແປ້ງ , ໄຂ່ , ນ້ຳມັນເບີ
ຫລືເຂົ້າຈີ່ໄປ .

ຈັ່ງຊັ້ນ ຂ້ອຍຈຶ່ງຍ້າຍຈາກຫ້ອງໃຕ້ດິນຫ້ອງໃຫຍ່ ແຕ່ ເປິ
ເປື້ອນມາຢູ່ຫ້ອງໃຕ້ດິນໜຶ່ງອີກ , ນ້ອຍກວ່າເກົ່າແຕ່ສະອາດ
ດີ , ແລະ ກໍເປັນໜ້າທີ່ຂອງຂ້ອຍ , ໜ້າທີ່ໃໝ່ອີກ ອັນ
ໜຶ່ງ ທີ່ຈະປົວລະບັດໃຫ້ມັນສະອາດຢູ່ເລີຍໆ . ຕອນນີ້ ປ່ຽນ
ຈາກເຮັດວຽກຮ່ວມກັບຄົນເປັນສີ່ສິບປາຍ , ຂ້ອຍໄດ້ເຮັດແຕ່
ກັບຄົນພຽງຄົນດຽວ . ຊາຍຜູ້ນີ້ຜົມຫງອກແຊມຢູ່ກົກຫູແລ້ວ ,
ຈົງເຄົາສັ້ນ ແຕ່ຕັດປາຍແຫລມ , ໜ້າກະດູກ ແລະ ຕາ ສີ
ດຳ ຊົງຄົນໄຂ້ຄວາມຄິດ , ປາກເຂົາມີຮູບແປກປະຫລາດ ຄື

ປາຍສິບຫມາແຕ່ວ່ອນ , ໃນຕາຂອງເຂົາ ເລີກລົງໄປມີແວວເຍີຍຫຍັ່ນຢູ່ສະເຫມີ . ແລວເຂົາກໍລັກເອົາເຄື່ອງແຫງຫັ້ນລະກະໂຕຄືນທຳອິດທີ່ມາເຣັດວຽກ ເຂົາລັກເຊື່ອງໄຂໄວ ໑໐ - ຫນ່ວຍ , ແປ້ງກິໂລປາຍ ແລະ ແຫງນ້ຳມັນເບີຫນຶ່ງແທ່ງ - ໃຫຍ່ .

" ອັນນີ້ຈະເອົາໄປເຣັດຫຍັງ ? "

" ໂອະ - ຈະເອົາໄປໃຫ້ອີ່ນາງນ້ອຍຜູ້ຫນຶ່ງ " , ເຂົາຕອບແບບກັ້ນເອງ , " ມັນຄືນຄຳຮູ້ ອີ່ນາງນ້ອຍຜູ້ນັ້ນ " , ເຂົາແຖມທາຍ ດວຍເຣັດຄ້ວຫຍຸ້ງ .

ຂອຍພະຍາຍາມອະທິບາຍໃຫ້ເຂົາຮັບຮູ້ວ່າ ການລັກນີ້ - ເປັນອາຊະຍາກຳຢ່າງຫນຶ່ງ , ແຕ່ອິດທິພົນທາງດ້ານໂຄສະນາອົບຣົມຂອງຂອຍນີ້ ຄົງບໍ່ສັກສິດພໍ ຫລື ບໍ່ຈຸນກໍອາດເປັນນຳຂອຍເອງຍັງບໍ່ທັນແນ່ໃຈໃນຄວາມຈິງທີ່ຂອຍຢາກອະທິບາຍນັ້ນກໍເປັນໄດ , ແນວໃດກໍຕາມ ຄວາມເວົ້າຂອງຂອຍແມນໄຮປະໂຫຍດ .

ຊາງເຣັດຂະຫນົມນອນຢຽດຢູ່ເທິງລົ້ມແປ້ງ ສາຍຕາ ສັກເບິ່ງດວງດາວນອກປ່ອງຢ້ຽມທີ່ງຈົ່ມພູມພຳຢ່າງບໍ່ຈິງຈຽມຂອຍວ່າ :

" ນ້ຳຫນ້າສຳມັນນັ້ນຫວະ ຈຶ່ມາສົ່ງສອນກູ ! ຣິ ! ຫາຈິເຫັນຫນ້າໃນມື້ນັ້ນ ! ຈຶ່ມາສົ່ງສອນກູຣິ ! ປາກຫົວຕວ່າ, ດຽວວ່າອາຍຸກູລື້ນມັນຕັ້ງສາມທົບພູມລະວ່າ ! "

ແລວພໍເຂົາກວດກາເບິ່ງດາວໃນຟ້າຫມົດແລວ ເຂົາກໍ - ຖາມຂອຍວ່າ :

" ມຶງເຄີຍເຮັດວຽກຢູ່ໃສມາກ່ອນຫາ ? ກູເຄີຍເຫັນ -
ຫນ້າມຶງຢູ່ໃສນີ້ລະ ? ບໍ່ແມນມຶງເຄີຍຢູ່ຮ້ານ ເຊີມໂອມົຟ ບໍ?
ບ່ອນເຂົາຜິດກັນເທື່ອນັ້ນຫັ້ນຕື໋ ? ຖ້າບໍ່ດັ່ງນັ້ນ , ກໍຫມາຍ -
ຄວາມວ່າ ກູເຄີຍເຫັນມຶງໃນຄວາມຝັນ " .

ພາຍໃນບໍ່ຈັກມື້ ຂອຍກໍໄດ້ຮູ້ຕື່ມອີກວ່າ ຊາຍຜູ້ນີ້ມີພອນສະ
ຫວັນອັນສູງສົ່ງໃນດ້ານການນອນ . ເຂົາອາດຈະນອນຫລັບ-
ຍາມໃດກໍໄດ້ , ໃນທ່າໃດກໍໄດ້ທັງນັ້ນ ຂະຫນາດວ່າຢືນຢູ່ ກໍ
ສາມາດຫລັບໄດ້ ຄືເຂົາຈະຢືນຄ້ຳຊວນ ທີ່ໃຊ້ສຳລັບປ່ອນເຂົ້າ
ຈີ່ໃສ່ເຕົາໄຟ . ເວລາເຂົາຫລັບ ຂົນຕາເຂົາຈະເລີກ ຂຶ້ນ
ແລະ ໃບຫນ້າກໍຄືວ່າປ່ຽນລັກສະນະໄປ ຄ້າຍກັບວ່າ ເຂົາ -
ພອນປະຫລາດໃຈ . ເຂົາມັກລົມເລື່ອງ ຊຸມເງິນ ຊຸມຄຳ ທີ່
ຖືກຝັງ ແລະ ມັກເລົ່າເຖິງຄວາມຝັນ , ເຂົາມັກຈະເວົ້າ -
ຢ່າງຈິງຈັງວ່າ :

" ກູໄດ້ເຫັນທະລຸພົ້ນໂລກມາຫມົດແລ້ວ ມັນຕັ້ງມີຊຸມເງິນ
ຊຸມຄຳຍັດຢູ່ໃນແຜ່ນດິນແຫ່ງໃດ ,ເປັນຫມໍ້ເປັນໄຫ ຫລື ຖອຍ
ງາມ ເຕັມແຕ່ເງິນ , ຝັງຢູ່ທົ່ວທີບເອົາໂລກ . ກູເຄີຍ ຝັນ
ເຫັນບ່ອນໃດບ່ອນຫນຶ່ງ ທີ່ກູເຄີຍຮູ້ນັ້ນ ຫລາຍຕໍ່ຫລາຍເທື່ອແທ້
ມີເທື່ອຫນຶ່ງກູຝັນເຫັນໂຮງອາບນ້ຳ , ກູຝັນວ່າມີຫີບບັນຈຸຈານ
ເງິນຝັງຢູ່ແຈເຮືອນນັ້ນ . ຮວາຍ ! ພໍກູຕື່ນຂຶ້ນມາ , ກູ ກໍ
ກົງໄປບ່ອນຫັ້ນໂລດແລ້ວ , ໄປຂຸດໃນກາງຄືນນັ້ນເລີຍ ,ຂຸດ
ລົງໄປໄດ້ເກືອບວ່າຫນຶ່ງ ແລ້ວພໍ້ຫຍັງ ຮູ້ບໍ່ ? ຖານໄມ້ກັບກະ
ໂຫລກຫົວຫມາ ຂຸດຖືກບ່ອນຄັກ ! ແລ້ວທັນໃດນັ້ນກໍມີສຽງ -
ປ້ງ ! ແກ້ວປ່ອງຢ້ຽມແຕກຊະ ແລ້ວແມ່ຍິງບາງບໍງຄົນຫນຶ່ງກໍ

ຮ້ອງສຽງເຫລີສຽງໄຫລວ່າ : " ຂະໂມຍ ! ຊ່ວຍແດ່ !-
ຮ້ວາຍ ! ກູກະເປີດໂລດແລ້ວ , ຄັນບໍ່ຊັ້ນກະຊິຖືກຄ້ອນເຂົ້າ
ຢູ່ , ເປັນຕາຫົວຂະໜາດ ! "

ເຂົາເວົ້າປະໂຫຍກນີ້ເລື້ອຍໆ : " ເປັນຕາຫົວຂະ - ໜາດ ! " ແຕ່ ອີວານ ລູໂຕນິນ ບໍ່ຫົວເລີຍ , ເຂົາພຽງແຕ່ເຮັດຄິ້ວຫຍຸ້ງ , ປິ່ງດັງ ແລະ ເບິກຕາ ອົມຍິ້ມໜ້ອຍ - ໜຶ່ງ .

ຄວາມຈິງແລ້ວ ບໍ່ມີຫຍັງເປັນຕາງຶດງໍ້ເລີຍ ອັນຄວາມຝັນຂອງເຂົານັ້ນ ມັນກໍຫາກແມ່ນເລື່ອງເກົ່າຊໍ້າຊາກ ແລະ ເກາຍ ຕາຍຄືທຸກສິ່ງທຸກຢ່າງທີ່ອ້ອມຕົວລາວນັ້ນລະ . ຂອຍບໍ່ເຂົ້າໃຈວ່າ ດ້ວຍເຫດໃດເຂົາຈຶ່ງມ່ວນແລະມົວເມົາໃນການເລົ່າເອົາແທ້ເອົາວ່າ , ແຕ່ຊີວິດແທ້ຈິງຢູ່ອ້ອມຕົວເຂົານັ້ນ ເຂົາພັດບໍ່-ມັກເວົ້າຮອດເລີຍ .

ຕອນນັ້ນ ມີລູກສາວຂອງພໍ່ຄ້າຂາຍຊາຣັ່ງມີຄົນໜຶ່ງ ຖືກບັງຄັບໃຫ້ແຕ່ງດອງ , ນາງຈຶ່ງຍິງຕົວຕາຍ ເມື່ອແລ້ວພິທີ - ແຕ່ງດອງ . ຄົນໝົດເມືອງພວມຕື່ນເຕັ້ນນຳຂ່າວນີ້ , ຄົນໜຸ່ມຄົນສາວກຸ່ມໜຶ່ງນັບເປັນພັນໄດ້ແຫ່ຂະບວນສົບຂອງນາງ-ແລະ ບັນດານັກສຶກສາ ກໍໄປກ່າວຄຳປາໄສໄວ້ອາໄລຢູ່ ຫລຸມຝັງສົບນາງ , ບາດແລ້ວຕຳຫລວດພາກັນມາໄລ່ໃຫ້ເຂົາເຈົ້າແຕກໜີ, ຄົນໃນຮ້ານເຮົາກໍຊຸໂຫຊຸທັງນຳເຫດການສະຫຍອງຂວັນຄັ້ງນີ້ ແລະ ພວກນັກສຶກສາທີ່ແຕກຕື່ນມາກໍຫລັ່ງເຂົ້າມາອ່ອງອໍກັນຢູ່ຫ້ອງຫລັງຮ້ານພວກເຮົານັ້ນເອງ ໂດຍສົ່ງສຽງອຶກ-ກະທຶກດ້ວຍອາຈາແຄ້ນເຄືອງ ແລະ ຮຸນແຮງມາໃສ່ພວກເຮົາ

ເຊິ່ງຢູ່ຫ້ອງໃຕ້ດິນ .

" ເຂົາຄວນຊຸດສ່ວງສອນອີ່ນາງຄົນນັ້ນ ຕັ້ງແຕ່ມັນຍັງນ້ອຍຢູ່ພຸ້ນ ຍັງຊິດີກວ່າ " , ລູໂຕນິນ ວ່າ , ແລວເຂົາກໍ ຟ້າວບອກຂ້ອຍຈົນເກືອບທັນໃຈບໍ່ທັນວ່າ :

" ຄືນແລວນີ້ ກູຝັນວ່າໄປຊິດເບັດ ເອົາປາປາກຢູ່ ນ້ຳສ້າງ ແລວທັນໃດນັ້ນ ກໍມີຕຳຫລວດມາຮອງຂູວ່າ : ຢຸດ ! ມຶງມີສິດຫຍັງ ມາຊິດເບັດຢູ່ຫນີ້ , ກູຊິແລ່ນໄປທາງໃດກໍບໍ່ໄດ້ເລີຍໂດດລົງໄປໃນນ້ຳສ້າງ - ຕົກໃຈຕື່ນ " .

ເຖິງແມ່ນວ່າ ເຂົາບໍ່ເຄີຍສົນໃຈຄວາມເປັນໄປໃນຊີວິດຮອບຕົວ ແຕ່ບໍ່ດົນ ເຂົາກໍສັງເກດເຫັນຄວາມຜິດປົກກະຕິພາຍໃນຮ້ານຂອງເຮົາ . ຄົນທີ່ມາຊູເຂົາຫນີ້ມໃນຮ້ານຈະໄດ້ ຮັບບໍລິການຈາກພວກນາງສາວ ທີ່ບເຫມາະກັບວຽກແນວນີ້ ເລີຍເພາະພວກນາງມີກອາມປົ້ນ . ນາງຄົນຫນຶ່ງເປັນນ້ອງສາວ-ຂອງເຈົ້າຂອງຮ້ານເອງ , ອີກຄົນຫນຶ່ງກໍເປັນເພື່ອນກັນ , ເປັນຄົນສູງ ແກມແດງ , ດວງຕາມີແວວອອນໂຍນ . ພວກນັກສຶກສາກໍພາກັນມາທຸກວັນ ມາແຊຢູ່ຫອງຫລັງຮ້ານນັ້ນ ນັບເປັນຊົ່ວໂມງໆ , ຫົວລົມກັນບິນແຊວ , ບາງເທື່ອກໍລົມຄອຍຄອຍ , ແທແລວ ຜູເຈົ້າຂອງຮ້ານແມນບໍຄອຍໃຫເຫັນຫນ້າ, ມີແຕຂ້ອຍທີ່ເປັນ " ບັກນ້ອຍ " ນີ້ລະ ທີ່ເກືອບວ່າເປັນຜູ້ຈັດການຕາງ .

" ມຶງເປັນພີ່ນ້ອງກັບເຈົ້າຂອງຮ້ານບໍ ? " ລູໂຕນິນ - ຖາມຂ້ອຍ , " ຫລືວ່າເພິ່ນພວມຄິດຢາກໄດ້ມຶງເປັນນ້ອງ - ເຂີຍ , ອາດຈະແມ່ນໄດ໋ ? ບໍ່ຫວະ ? ເປັນຕາຢາກ ຫົວ

ແທ້ , ແລ້ວພວກນັກສຶກສາຫັ້ນເດ້ ເຂົ້າມາແຊ່ຢູ່ຫຍັງຫັ້ນ ? ມາຊອມກ່ຽວຜູ້ສາວໃດຫັ້ນນໍ້ ?...ອຶມ...ແມ່ນແລ້ວລະ,ແຕ່ ...ເອ...ຜູ້ສາວຢູ່ຫັ້ນກໍ່ຄືບໍ່ໄດ້ງາມພິລຶກສັງນາ...ມັນບໍ່ - ແມ່ນມານາຍສາວພິສັງດອກ , ຕາມເບິ່ງ ! ຕັ້ງວ່າພາ ກັນ ແຫ່ມາເປັນກອງເອົາຊື່ງ...ບໍ່ເຫັນໄປຫຍຸ້ງກ່ຽວກັບຈູຜູ້ ສາວ ຊ້ຳ "

ເກືອບທຸກເຊົ້າ ພໍຮອດ ໕ ຫຼື ໖ ໂມງ , ຈະມີຜູ້ສາວ-ນາງໜຶ່ງມາປະກົດກາຍທີ່ປ່ອງຢ້ຽມຂອງຮານ , ສາວ ຮາງເຕ້ຍ-ຂາສັ້ນໆ ເລີຍເປັນອູ້ມລູ້ມຄືຖົງໃສ່ໝາກໂມ້ . ນາງນັ່ງລົງທີ່ຂອບປ່ອງຢ້ຽມ ແກວ່ງຂາທີ່ເປືອຍເປົ່າ ແລ້ວກໍ ເອີ້ນທັງຫາວນອນສັບກັນວ່າ :

" ອີວານ ເຣີຍ ! "

ຜົມເສັ້ນແລບ ປົກຫຍ້ອງ ລອດຜ້າຄູມຜົມອອກມາ ປົວ ຮະໜ້າຜາກ ແລະ ແກ້ມແດງປູງຄືປຸ້ມເປົ້ານ້ອຍ , ລອນຜົມ - ຫ້ອຍລົງມາຮອດຕາທີ່ມົນພໍເທິບໆ ຊົງຂີ້ຄ້ານ ແລ້ວນາງກໍເອົາມືປັດຜົມເສີຍອັ້ນ , ມືກໍປະກົດວ່ານ້ອຍໆ ອູມປຸ້ມຄືມືເດັກນ້ອຍເກີດໃໝ່ , ຂ້ອຍຄຶດບໍ່ອອກເລີຍວ່າ ກັບແມ່ຍິງຜູ້ຈັ່ງຊີ້ ເຮົາຊິຕ້ອງເວົ້າລົມນຳແນວໃດດີ ? ພໍຂ້ອຍໄປປູກ ລູໂຕມິນ ມາເຂົາກໍຖາມນາງວ່າ :

" ເຈົ້າມາແລ້ວຫວະ ? "

" ມາແລ້ວເດ "

" ນອນຫລັບດີບໍ່ ? "

" ເລື່ອງຫຍັງຊິບໍ່ຫລັບລະ ? "

" ເຈົ້າຝັນຫຍັງບໍ່ ? "

" ເອ...ຈື່ບໍ່ໄດ້ນະ "

ຕົວເມືອງຍັງຄົງງຽບສະຫງົບ , ແຕ່ກໍ່ຍົກເວັ້ນບາງຄົນ - ເຊັ່ນຄົນກວາດຖະໜົນ ຊຶ່ງກວາດຖະໜົນດັງຊວາດໆຢູ່ໄກ ໆ ແລະ ນົກຈອກຊຶ່ງຫາກິນ ແລະ ເລີ່ມຮ້ອງສຽງດັງ , ລຳແສງອ່ອນໆ ແລະ ອົບອຸ່ນຂອງຕາເວັນຂຶ້ນ ທອດລຳລົງມາສະທ້ອນໃສ່ບານແກ້ວປ່ອງຢ້ຽມ , ຂ້ອຍມັກບັນຍາກາດມິດໆແຫ່ງຕອນເລີ່ມຕົ້ນຂອງວັນໃໝ່ນີ້ຢ່າງຈັບໃຈ . ເຖົ້າ ລູໂຕມິນເດ່ແອນ ທີ່ຕັ້ນແຕ່ງອອກໄປທາງປ່ອງຢ້ຽມ ຈັບຂາສາວນັ້ນຊຶ່ງກໍປະໃຫ້ເຂົາເຣັດ ໂດຍບໍ່ເອົາຫົວຊາ ນອກຈາກພົບຕາ ເສີຍມັ່ງຢູ່ .

" ເປີສກົບ , ເອົາຂະໜົມອອກຈາກເຕົາສາ ! ໄດ້ - ແລ້ວລະ " .

ພໍຂ້ອຍຍົກຖາດເຫຼັກອອກຈາກເຕົາ ເຖົ້າ ລູໂຕມິນ ກໍຢິບເອົາຂະໜົມຈັກສິບກ້ອນໂຍນໃສ່ພົກກະໂປ່ງຜູ້ສາວ .ນາງຈັບເອົາເຂົ້າໜົມມາໂຍນໄປມາໃຫ້ມັນເຊົາຮ້ອນ ແລ້ວໄຊ ແຂ້ວເຫຼືອງໆຄີແຂ້ວແບ້ກັດກິນເຂົ້າໜົມນັ້ນຈົນເຂົ້າໜົມທີ່ຍັງຮ້ອນຮ້ອນຢູ່ດາດປາກ ແລ້ວນາງກໍຮ້ອງຄາງອື້ນຢ່າງບໍ່ເກງໃຈ .

ເຖົ້າ ລູໂຕມິນ ແນມເບິ່ງນາງນັ້ນຢ່າງພໍອົກພໍໃຈ .

" ເອົາກະໂປງລົງສາຫລາ ! "

ແລະ ເມື່ອນາງນັ້ນເມືອແລ້ວ , ເຂົາຄູ້ຍູ້ໂມ້ໃສ່ຂ້ອຍວ່າ:

" ເຫັນບໍ່ຜົມກູດຄີໂຕແກະນ້ອຍນີ້ ? ບັກນ້ອຍເອີຍ ກູນີ້ ບໍ່ວ່າຈິເກາະແກະກັບແມ່ຍິງໃຫຍ່ໆແລ້ວນັ້ນດອກ , ກູເອົາແຕ່-

ສາວນ້ອຍໆເອີຍ ! ອີມຜູ້ທີ ໑໙ ແລ້ວ , ມັນເປັນລູກຮັກ - ຂອງ ນິກໂຟຣຊ ຫັ້ນນ່າ " .

ຂ້ອຍຟັງເຂົາສາທະຍາຍຄວາມໂອ້ອວດນັ້ນມິດໆ ແລ້ວ ກໍ ຕັ້ງຄຳຖາມໃຫ້ແກ່ຕົວເອງວ່າ :

" ຊຸ້ນເຮົາເອງເດ ? ເຮົາຊິຕ້ອງມີຊີວິດແບບນີ້ ກັນ ຫວະ ? "

ພໍແຕ່ເຂົ້າຈີ່ກ້ອນໃຫຍ່ສຸກ ເປັນຕາຂາຍໄດ້ ຂ້ອຍກໍເອົາ- ໄປລຽນໄວ້ຖາດແປ້ນຍາວໆເປັນງູລະ ໑໐ ຫລື ໑໔ ກ້ອນ ແລ້ວກໍຟ້າວເອົາໄປສົ່ງທີ່ຮ້ານເກົ່າຂອງ ເດເຣັນກົຟ .ສົ່ງ - ເຂົ້າຈີ່ແລ້ວ ຂ້ອຍຕ້ອງກັບມາເອົາເຂົ້າຈີ່ກ້ອນນ້ອຍ ແລະ ຂະໜົມບັນຈຸໃສ່ກະຕ້າ ໓໐ ກິໂລປາຍ ແລ່ນໄປສົ່ງທີ່ສະຖາ ບັນ ເທວະວິທະຍາໃຫ້ທັນເວລາ ນັກສຶກສາປັ້ນເຂົ້າເຊົ້າ . ທຸກ- ເທື່ອທີ່ປັນແຈກເຂົ້າຈີ່ " ເກັບເງິນສົດ " ຫລື " ຈົດ ເງິນ ເຊື່ອ " ໃຫ້ພວກນັກສຶກສາຢູ່ທີ່ຫ້ອງໂລງກາງທີ່ກວ້າງໃຫຍ່ນັ້ນ ຂ້ອຍພະຍາຍາມຟັງ ແລະ ເກັບເອົາເລື່ອງທີ່ພວກເຂົາ ຖົກ ຖຽງກັນກ່ຽວກັບນັກຂຽນເລບ ໂຕນສະໂຕຍ . ເທື່ອໜຶ່ງ - ຂ້ອຍໄດ້ເຫັນອາຈານ ກູ້ເຊບ ຜູ້ຕ້ານແນວຄຶດໂຕນສະໂຕຍ - ຢ່າງຮຸນແຮງ . ບາງຄັ້ງຂ້ອຍກໍເອົາປຶ້ມອ່ານຫລາຍຫົວເຊື່ອງ ໄວ້ກອງກ້ອນເຂົ້າຈີ່ ເພື່ອເອົາໄປແຈກໃຫ້ພວກນັກສຶກສາບາງ ຄົນຢ່າງປິດລັບ ແລ້ວບາດອອກມາ ກໍມີຈົດໝາຍຫລືປຶ້ມອື່ນໆທີ່ ນັກສຶກສາມອບໝາຍໃຫ້ເຊື່ອງໄວ້ໃນກະຕ່າ ອອກມານຳ .

ນອກຈາກນີ້ ຂ້ອຍຍັງໄປສົ່ງເຂົ້າຈີ່ອີກບ່ອນໜຶ່ງ ອາທິດ- ລະເທື່ອ ຄືສົ່ງທີ່ " ສະຖານຮັກສາຄົນບ້າ" . ທີ່ເຮືອນນັ້ນມີກ

ຈິດຕະສາດ ເບັກເຕເຣັຟ ມາບັນຍາຍ ແລະ ສະແດງວິ ທີ
ການປິ່ນປົວຄົນເຈັບ ໃຫ້ນັກສຶກສາເບິ່ງ . ມື້ຫນຶ່ງ ເພິ່ນ -
ເອົາຄົນເຈັບເປັນໂລກ " ບ້າຍົດ " ຄົນຫນຶ່ງໃຫ້ເບິ່ງ ເປັນ
ຕົວຢ່າງ . ພໍຊາຍຜູ້ນັ້ນ ປະກົດຕົວເຂົ້າມາໃນຫ້ອງປາກປະຕູ
ຂ້ອຍເກືອບອົດຫົວບໍ່ໄດ້ ດ້ວຍວ່າ ເຂົາມີຮູບຮ່າງໂຄ່ງເຄ່ງໃສ່
ເສື້ອຍ່າມສີຂາວຂອງໂຮງຫມໍ ແລະ ໃສ່ຫມວກນອນນຳອີກ .
ແຕ່ວ່າ ຕອນທີ່ເຂົາຍ່າງກາຍຂ້ອຍໄປ , ເຂົາຢຸດບຶດຫນຶ່ງ -
ແລະແນມເບິ່ງຫນ້າຂ້ອຍກົງໆ , ຂ້ອຍຈົມວ່າເງີກຖ່ອຍ ຫລັງ
ດ້ວຍຄວາມຮູ້ສຶກສະທ້ານ , ແກນຕາດຳປິກປານຖ່ານດຳແຕ່ມີ
ແວວຄົມກ້າຂອງເຂົາ ໄດ້ສ່ຽບແທງເຂົ້າຮອດຂັ້ວຫົວໃຈຂ້ອຍ
ຕະຫລອດເວລາທີ່ ອາຈານ ເບັກເຕເຣັຟ ເວົ້ານຳຄົນ ເຈັບ
ຢ່າງມີສຳມາຄາລະວະ ທັງມືເພິ່ນກໍລູບເຄົາຕົນເອງຕາມ ນິດ
ໄສ , ຂ້ອຍຫລົງເອົາມືລູບຫນ້າຕົນເອງຫລາຍຄັ້ງ ຮູ້ສຶກຄ້າຍ
ຄືວ່າ ມີລົມພັດເອົາຝຸ່ນລະອອງຮ້ອນໆມາປະທະໃບຫນ້າ .

ຊາຍຄົນເຈັບເວົ້າສຽງຕ່ຳບໍ່ມີອາລົມເລີຍ . ເຂົາຫວງ-
ເອົາອັນໃດອັນຫນຶ່ງຈາກອາຈານ ທັງຍົກແຂນຂຶ້ນປະກອບ ຄຳ
ເວົ້າ , ແຂນເສື້ອຮົ້ນຈົນເຫັນມືຈ່ອຍຍາວມີແຕ່ກະດູກຫມົດ-
ທົ່ວຮູບຮ່າງຂອງເຂົາ ຄືວ່າຜິດແປກ ຍືດຍາວອອກເກີນ ສ່ວນ
ແຂນຂາຄືຈະຍາວອອກມາ , ຍາວອອກມາ ຈົນຂ້ອຍຮູ້ສຶກ -
ຄ້າຍຄືວ່າມືແຫລມໆຂອງເຂົາເດີນມາບີບຄໍຂ້ອຍ . ແສງຕາຂອງ
ເຂົາສ່າຍແວວຂົ່ມຂູ່ ແລະ ບົ່ງການມາຈາກເບົ້າຕາທີ່ເລິກ -
ເທິງໃບຫນ້າກະດູກນັ້ນ . ນັກສຶກສາປະມານຊາວຄົນພ້ອມນັ່ງ
ເບິ່ງຊາຍໃສ່ຫມວກແປກປະຫລາດຄົນນີ້ . ບາງຄົນກໍຍິ້ມ, ແຕ່

ສ່ວນຫລວງຫລາຍແລ້ວ ແມ່ນນັ່ງສະຫງົບ ແລະ ຄິດຮິ່ນຕອງ-ສາຍຕາຂອງພວກເຂົາເຈົ້າກໍຢາກວ່າທຳມະດາເກີນໄປ ເມື່ອທຽບກັບສາຍຕາທີ່ຄົມກ້າຂອງເຂົາ . ເຂົາເຮັດໃຫ້ຜູ້ ເບິ່ງເກີດຄວາມຢ້ານຈັບຫົວໃຈ , ແຕ່ກໍ່ມີບາງຢ່າງໃນຕົວເຂົາ ທີ່ເປັນຫນ້າຢຳແຢງ...ເປັນຫນ້າຢຳແຢງແທ້ໆ .

ສຽງຂອງອາຈານບັນຍາຍຈັດເຈນດີ ທ່າມກາງຄວາມມິດງຽບອັນຫນັກອຶ້ງຂອງບັນດານັກສຶກສາ . ທຸກຄຳຖາມຂອງ -ເຂົາ ເຮັດໃຫ້ຊາຍຜູ້ນັ່ງຮອງຄາງອອກມາດ້ວຍສຽງແຫບໆດັ່ງ-ວ່າ ສຽງມັ້ນແຊກອອກມາຈາກພົ້ນຫອງ...ຫລື ມາຈາກຝາສີຂາວທີ່ມິດງຽບ . ການເຫນັງຕີງຂອງຊາຍຄົນເຈັບ ຊ້າງແຕ່ມີທ່ວງທ່າປານພະສັງຄະລາຊາ .

ຄົນນັ້ນ ຂ້ອຍໄດ້ແຕ່ງຄຳກອນກ່ຽວກັບເຂົາບົດຫນຶ່ງ . ຂ້ອຍໃຫ້ຊື່ສົມມຸດແກ່ເຂົາວ່າ : " ຜູ້ຍິ່ງໃຫຍ່ເຫນືອຜູ້ຍິ່ງໃຫຍ່ທັງຫລາຍ , ສະຫາຍ ແລະ ທີ່ປຶກສາຂອງພະຜູ້ເປັນເຈົ້າ". ເຂົາປະກົດຢູ່ໃນຄວາມຄິດຂອງຂ້ອຍ ເປັນເວລາດົນນານ , ເຮັດໃຫ້ຊີວິດຂ້ອຍຫຍຸ້ງຍາກສັບສົນ .

ຕາມທຳມະດາແລ້ວ ຂ້ອຍຕ້ອງເຮັດວຽກແຕ່ຫົກໂມງແລງ ໄປຮອດຕອນທ່ຽງມື້ຕໍ່ໄປ ແລະ ນອນເວລາຕອນບ່າຍ ຈຶ່ງ ບໍ່ໃຄ່ມີເວລາອ່ານປຶ້ມຫລາຍປານໃດ , ນອກຈາກເວລາຫວ່າງຄືຕອນທີ່ນວດແປ້ງ ແລະ ຕ້ອງນັ່ງຄອຍຖ້າໃຫ້ຊຸດທີ່ນວດ ກ້ອນໃຄຂຶ້ນ ແລະ ຂະຫນົມທີ່ໃສ່ເຕົາແລ້ວ ກໍບໍ່ທັນສຸກ . ພໍຂ້ອຍຮູ້ລະບົບການເຮັດວຽກແດ່ແລ້ວ ເຖົ້າ ລູໂຕມິ້ນ ກໍເຮັດວຽກ -ຫນ້ອຍລົງຈັກໄຊ ປະວຽກງານທັງຫມົດໃຫ້ຂ້ອຍເຮັດຄົນດຽວ-

ໂດຍອ້າງວ່າ " ກູຊິສອນໃຫ້ມັນເປັນອຽກ " ແລະ ເຂົາຍັງມັກເວົ້າຢອກ ແບບກັນເອງອີກວ່າ :

"ມຶງເຮັດໄດ , ພາຍໃນປີໜຶ່ງຫລືສອງປີນີ້ ມຶງກໍເປັນ-ຊ່າງເຮັດເຂົ້າໜົມໄດ້ຕາມແບບລະ , ແຕ່ວ່າ ເອ-ເດັກ -ນ້ອຍສ່ຳມຶງເປັນຊ່າງ ໃຜຊິເຊື່ອສີມືມຶງລະ ? "

ແລະ ເຂົາກໍບໍ່ເຫັນດີນຳການອ່ານປຶ້ມຂອງຂ້ອຍເລີຍ .

" ເຊົາອ່ານເທາະ ແລ້ວກະນອນຜິດ " ເຂົາບອກຂ້ອຍຊ້ຳດີວ່າຫ່ວງໃຍ ແຕ່ບໍ່ເຄີຍຖາມຂ້ອຍຈັກເທື່ອ ວ່າຂ້ອຍ ອ່ານປຶ້ມຫຍັງ .

ຕົວເຂົາເອງກໍມົວຄິດນຳແຕ່ຄວາມຝັນກ່ຽວກັບຂຸມຊັບແລະຜູ້ສາວຕຸ້ຍຂາສັ້ນຄືນນັ້ນ . ນາງມາຫາເຂົາຍາມກາງຄືນ ສະເໝີ . ຄືນມາເທື່ອໃດ ເຂົາກໍພານາງໄປນອນເຮືອນຖົງແປ້ງ ແຕ່ຖ້າອາກາດໜາວ ເຂົາຈະບອກຂ້ອຍ ທັງເຮັດໜ້າຜາກຍູ່ວ່າ :

" ມຶງໜີໄປຈັກເຄິ່ງຊົ່ວໂມງແດ່ໄປ ! "

ແລ້ວຂ້ອຍກໍອອກໄປ ທັງຄຶດຮ່ຳຮອນເຖິງຄວາມແຕກຕ່າງອັນມະຫາສານ ລະຫວ່າງຄວາມຮັກແບບຂອງຕາເຖົ້ານີ້ ກັບແບບທີ່ບັນຍາຍໄວ້ໃນປຶ້ມ...

ນ້ອງສາວຂອງເຈົ້າຂອງຮ້ານ ນອນຢູ່ຫ້ອງນ້ອຍຫລັງຮ້ານ ຂ້ອຍເປັນຜູ້ກໍ່ໄຟຕົ້ມນ້ຳໃຫ້ນາງເປັນປະຈຳ , ແຕ່ກໍພະຍາ ຍາມຫລີກລ້ຽງການພົບພໍ້ກັບນາງ ເທົ່າທີ່ສາມາດທຳໄດ້.ນາງເຮັດໃຫ້ຂ້ອຍຮູ້ສຶກໝຸດໝິດຢູ່ຍາກ , ສາຍຕາຊື່ແບບເດັກ -ນ້ອຍຂອງນາງ ມັກແນມເບິ່ງຂ້ອຍຈ້ງໆຄືເທື່ອຂ້ອຍພົບກັບນາງ

ຄັ້ງທຳອິດ , ແຕ່ຂ້ອຍຍັງສົງໄສວ່າ ເລິກລົງໄປໃນສາຍ ຕາ ນັ້ນ ຄົງຈະມີແວວເຍາະເຍີ້ຍແອບແຝງຢູ່ .

ຂ້ອຍມີເຫື່ອແຮງແບກຫາມໜັກໆໄດ້ ອາການເໜັງ ຕີງ ເລີຍບໍ່ຄ່ອງແຄ່ວ . ເມື່ອເຫັນຂ້ອຍແບກຖົງແປ້ງໜັກຕັ້ງ ໒໐ ກິໂລ , ຊາວເຣັດຂະໜົມມັກເວົ້າຄືສັງເວດຂ້ອຍວ່າ :

" ມຶງມີແຮງເທົ່າກັບສາມຄົນພຸ້ນ , ເສຍທີແຕ່ເງິ ງະ ໂພດ ! ປານໂຕງົວ , ຜິດກັນແຕ່ວ່າ ມຶງມັນໂຢກເຢກແດ່ຫໍ ນັ້ນລະ "

ມາຮອດໄລຍະນີ້ ຂ້ອຍອູ້ນປົ້ມໄດ້ຫລາຍແລ້ວ . ຂ້ອຍ-ມັກຈຳພວກຄຳກອນ ແລະ ໄດ້ລອງແຕ່ງເບິ່ງບໍ່ເທົ່າໃດ ແຕ່ ໄຊ້ສຳນວນແບບເວົ້າຫລາຍກວ່າພາສາຂຽນ , ຄືວ່າຂ້ອຍຍັງ ມັກໄຊ້ຄຳເວົ້າ " ຂອງຕົວເອງ " , ຂ້ອຍຮູ້ວ່າມັນຍັງແມ່ນ ຄຳເວົ້າທີ່ໜັກ ແລະຫຍາບໂພດ , ແຕ່ສຳລັບຂ້ອຍ , ຂ້ອຍ ພັດເຫັນວ່າ ຄຳເຫລົ່ານີ້ລະ ມັນອະທິບາຍ ກ່ຽວກັບຄວາມນຶກ ຄຶດທີ່ຍັງສັບສົນຂອງຂ້ອຍໄດ້ ແລະ ກໍມີຫລາຍເທື່ອທີ່ຂ້ອຍເວົ້າ ອອກມາແບບສັບປົກເລີຍ ເມື່ອຂ້ອຍຕ້ອງການຄັດຄ້ານເລື່ອງທີ່ ຂ້ອຍບໍ່ເຫັນດີນຳ .

ໜຶ່ງໃນບັນດາຄູຂອງຂ້ອຍ - ນັກສຶກສາຝ່າຍເລກ ເຄີຍ ຕໍ່ວ່າຂ້ອຍວ່າ :

" ພິລຶກໂພດດອກ ຄວາມເວົ້າຂອງໂຕນັ້ນນະ , ມີ ແຕ່ ຜີພູ້ນລະຊິເຂົ້າໃຈໄດ້ ! ມັນບໍ່ແມ່ນຄຳເວົ້ານ່າ - ມັນແມ່ນ-ທ່ອນເຫລັກດອກ ! "

ຄຶດໆແລ້ວ ຂ້ອຍກໍເປັນຄືຄົນອື່ນບ່າວອື່ນສາວທົ່ວໄປ , ຄື

ເກີດຄວາມບໍ່ພໍໃຈໃນຕົວເອງ , ຄິດວ່າຕົນເອງນັ້ນເປັນ ຕາ ຢ້ານກົວ ແລະ ຫຍາບຊ້າເອົາແທ້ໆ , ເບິ່ງໜ້າຕົວເອງ - ແລ້ວ ກໍຜາງໜ່າຍ , ໂໜນກແກມສູງປານພວກການມົກ ; ແລ້ວຕອນເວົ້າກໍຄວບຄຸມສຽງຕົວເອງບໍ່ໄດ້ເລີຍ !

ກົງກັນຂ້າມ , ນ້ອງສາວເຈົ້າຂອງຮ້ານ ພັດເປັນ ຄົນ ວ່ອງໄວ ແລະ ງາມສະຫງ່າປານນາງນົກແອ່ນກາງປີກບິນ . ແຕ່ຄວາມເບົາບາງໃນກິລິຍານັ້ນ ຄືບໍ່ເຂົ້າເນື້ອກັນດີກັບຮູບ - ຮ່າງນ້ອຍກົມຂອງນາງ ຄ້າຍກັບວ່ານາງບໍ່ໄດ້ເປັນແນວ ນັ້ນ ໂດຍທຳມະຊາດ ແຕ່ຫາກເປັນໄປຍ້ອນການເຝິກແອບຈົນເຄີຍ ຊິນຫລາຍກວ່າ . ສຽງຂອງນາງສົດຊື່ນແຈ່ມໃສ ແລະ ນາງ ກໍມັກຫົວ . ແຕ່ເມື່ອໄດ້ຍິນສຽງຫົວອັນເສາະໃສຂອງນາງ - ແລ້ວ ຂ້ອຍພັດຄິດວ່າ ນາງພຽງແຕ່ພະຍາຍາມເຮັດໃຫ້ ຂ້ອຍ ລືມສະພາບການທີ່ຂ້ອຍໄດ້ມາພົບນາງ ຄັ້ງທຳອິດໜັ້ນເອງ,ແຕ່ ຂ້ອຍບໍ່ຢາກລືມເຫດການຄັ້ງນັ້ນ , ຂ້ອຍມັກເກັບຮັກສາ - ຄວາມປະທັບໃຈໃນເຫດການທີ່ແປກ ແລະ ຜິດທຳມະດາ ນັ້ນ ໄວ້ສະເໝີ , ຂ້ອຍຕ້ອງການຢາກຮູ້ວ່າ ສິ່ງທີ່ປະຫລາດພິລຶກ ຍ່ອມເກີດຂຶ້ນໄດ້ ແລະ ມີຄວາມຈິງແທ້ .

ບາງຄັ້ງ ນາງກໍຈະຖາມວ່າ :

" ເຈົ້າອ່ານຫຍັງຫັ້ນນະ ? "

ຂ້ອຍກໍຈະຕອບນາງສັ້ນໆ ທັງຮູ້ສຶກຢາກຖາມຫຍັງນາງ ຄື ກັນວ່າ : "ມັນຊິກ່ຽວຫຍັງກັບເຈົ້າລະ ? "

ຄືນໜຶ່ງ ຂະນະທີ່ພວມຢອກເຢົ້າເຝືອຝັນຢູ່ກັບຊູ້ນັ້ນ ,ຕາ ເຖົ້າຊ່າງເຮັດຂະໜົມ ກໍ່ວ່າຍມາບອກຂ້ອຍຢ່າງເມົາມັນວ່າ:

" ມິງອອກໄປຈາກໜ້ຈັກບຶດໄປ ! ບ່າງ ! ເປັນຫຍັງ ມິງບໍ່ຂຶ້ນໄປຫານ້ອງສາວນາຍທີ ? ຊ່າງວ່າປະໂອກາດງາມໆ ຈັ່ງຊີ້ ! ເບິ່ງແມ່...ພວກນັກສຶກສາເຂົາຍັງ..."

ຂ້ອຍຕອບເຂົາວ່າ ຂ້ອຍຈະເອົາຫອນເຫລັກຟາດຫົວເຂົາແຕກ ລັ້ນຖ້າວ່າເຂົາຫາກເວົ້າແນວນັ້ນອີກ , ແລ້ວຂ້ອຍກໍໜີອອກໄປນັ່ງຢູ່ໄຖ່ແປ່ງບ່ອນປະຕູເຂົ້າ , ຂ້ອຍໄດ້ຍິນສຽງເຂົາດັງແວ່ວຜ່ານປະຕູອອກມາ :

" ຂ້ອຍບໍ່ຄຽດດອກ ເປັນນຳມັນນັ່ງອ່ານແຕ່ປຶ້ມທັງເວັນທັງຄືນນັ້ນລະ ມັນຈັ່ງກາຍເປັນຄົນປ່ວງແນວນີ້ " .

ໂຕໜູແລ່ນຜ່ານໄປມາຢູ່ທາງປະຕູເຂົ້າ . ພາຍໃນໂຮງຂະໜົມ ສຽງສາວນັ້ນຄາງພຶມພຳຢູ່ , ຂ້ອຍຈຶ່ງໜີອອກໄປ-ທາງເດີ່ນບ້ານ , ຝົນຝອຍຕົກລົງມາພໍຄ່ອຍໆ ເບົາຈົນບໍ່ມີ -ສຽງ , ແຕ່ມັນບໍ່ໄດ້ຊ່ອຍໃຫ້ອາກາດທີ່ກົ້ວກິ່ນໄໝ້ນັ້ນສົດ ຊື່ນຂຶ້ນແຕ່ຢ່າງໃດ , ໄຟອາດພວມໄໝ້ປ່າຢູ່ໃສກໍບໍ່ຮູ້ , ເວລານັ້ນເລີຍທ່ຽງຄືນໄປຕັ້ງດົນແລ້ວ , ປ່ອງຢ້ຽມເຮືອນຟາກເຂົ້າໜົ້ມໄຂອອກ ແລ້ວກໍມີສຽງເພງດັງແວ່ວອອກມາຈາກຫ້ອງ ທີ່ໄຕ້ໄຟໄວ້ພໍຮິບຮີ່ :

ນັກບຸນ ວາລະມີ ຜູ້ຊະລາ
ລັດສະໝີສີຄຳທານເຮືອງຮອງ
ຍິ້ມທ່ານ ເຜີຍອອກແກ່ພວກເຂົາ
ດ້ວຍຄວາມປິຕິຊຸ່ມຊົມ .

ຂ້ອຍລອງຄິດວາດພາບວ່າ ມີມາເຣຍ ເດເຣັນໂກວາ -ນອນໜູນຕັກຂ້ອຍ ຄືທີ່ສາວຊູ້ຂອງຕາເຖົ້າ ລູໂຕມິນນອນໜູນ

ຕັກເຂົາ - ແຕ່ແລ້ວກໍຮູ້ສຶກທັນທີວ່າ ເປັນໄປບໍ່ໄດ້ , ພຽງ-
ແຕ່ຄິດໝັ້ນ ກໍຫວາດຫວັ່ນພໍແຮງ .

ຈາກພະອາທິດຕົກ ຈົນເຖິງພະອາທິດຂຶ້ນ
ທັງຮ້ອງເພງ ທັງດື່ມເຫລົ້າ
ແລະທັງ...ຮິມ...ອີກຢ່າງໜຶ່ງ
ເຮັດໃຫ້ທ່ານ ສະໜຸກສະໜານສຳຣານໃຈ .

ໃນບັນດາສຽງປະສານສົມທົບນີ້ ມີສຽງໜຶ່ງເລິກຕ່ຳທີ່ດັ່ງ ຮີມ ! ແບບເກາະກວນ , ຂ້ອຍໂນ້ມຕົວເຂົ້າມືຄ້ຳຫົວເຂົ່າ-ໄວ້ ແລ້ວສ່ອງເຂົ້າໄປໃນປ່ອງຢ້ຽມໜຶ່ງ . ຂ້ອຍຫລຽວຜ່ານຜ້າກັ້ງລູກໄມ້ ເຫັນຫ້ອງສີ່ຫລ່ຽມ ຝາສີຂີ້ເຖົ່າ ມີຕະກຽງນ້ອຍຄອບຝາສີຟ້າຢູ່ດວງດຽວ , ຍິງສາວຄົນໜຶ່ງນັ່ງຢູ່ຕໍ່ໜ້າ ຕະກຽງ ປິ່ນໜ້າມາທາງປ່ອງຢ້ຽມ ພວມຂຽນໜັງສືຢູ່ , ແລ້ວນາງກໍເງີຍຫົວຂຶ້ນ ເອົາປາກກາດ້າມສີແດງເສີຍຜົມປອຍໜຶ່ງໄປທາງຫລັງໃບຫູ , ດວງຕາຫລັບເຄິ່ງໜຶ່ງ ແຕ່ໃບໜ້າຍິ້ມລະໄມ . ນາງພັບຈົດໝາຍ ຢ່າງບໍ່ຟ້າວບໍ່ຟັ່ງ , ເອົາລີ້ນ-ເລຍຂອບຊອງ ແລ້ວກໍຕິດ . ຈາກນັ້ນ ນາງວາງມັນລົງເທິງໂຕ໊ະ ແລ້ວກໍສັ່ນນ້ອຊີໃສ່ . ນ້ອມືນາງປະກົດວ່ານ້ອຍກວ່ານ້ອກ້ອຍຂອງຂ້ອຍ , ແຕ່ບາດແລ້ວ ນາງຊ້ຳພັດຈັບຊອງນັ້ນ ຂຶ້ນມາອີກ , ເຮັດຄິ້ວສົ້ນ , ຈີກຊອງຈົດໝາຍອອກອ່ານຄືນຈົນຕະຫລອດ , ເອົາໃສ່ຊອງໃໝ່ ຕິດອີກ , ແລ້ວກົ້ມລົງຂຽນຈ່າໜ້າຊອງ . ຈາກນັ້ນ ນາງຈັບຊອງແກວ່ງຄືດັ່ງຊູລົມທູງ-ທັງແຍະຢ່ອງຟ້ອນ ທັງຕົບມື ແລ້ວຟ້ອນລັບສາຍຕາຂ້ອຍ ໄປທາງຕຽງນອນ ຊຶ່ງຢູ່ແຈຫ້ອງພູ້ນ . ເມື່ອນາງປະກົດກາຍ -

ອອກມາສູ່ສາຍຕາຂ້ອຍອີກ ກໍແມ່ນນາງໄດ້ຖອດເສື້ອອອກ,ບ່າ
ໄຫລ່ນາງກົມເຕັມຕຶ່ງ . ນາງຈັບເອົາຕະກຽງຢູ່ໂຕະ ແລ້ວກໍ
ຫາຍເຂົ້າໄປທາງແຈຫ້ອງອີກ . ທ່າທາງຂອງຄົນທີ່ຄິດວ່າຕົວ
ເອງຢູ່ຄົນດຽວ ໃນສາຍຕາຂອງຄົນທີ່ບັງເອີນມາເຫັນນັ້ນຢາກ
ຄືບ້າງບໍງແທ້ໄດ . ຂ້ອຍຍ່າງຫລົບໄປຫລົບມາຢູ່ໃນເດີ່ນ,ທັງ
ຄິດເຫັນການກະທຳແປກໆຂອງນາງຄົນນັ້ນ ເວລານາງຢູ່ ໃນ
ຫ້ອງນ້ອຍຄົນດຽວ .

ແຕ່ເມື່ອເວລາທີ່ນັກສຶກສາຫນຸ່ມຜົມແດງມາຢາມນາງເທື່ອ
ໃດ ແລະ ເຂົ້າມັກນັ່ງລົມຫຍັງຄ່ອຍໆປ່ານວ່າຊຸ່ມ - ນາງ ກໍ
ຈະຫົດຕົວໃຫ້ນ້ອຍລົງ . ນາງຈະຫັນມາເບິ່ງເຂົາຢ່າງອຽງ-
ອາຍ , ທັງເຊື່ອງມືໄວ້ທາງຫລັງ ຫລົບກ້ອງໂຕະ . ຂ້ອຍ
ເຫັນວ່າບໍ່ມັກຫມໍນັກສຶກສາຜົມແດງຄົນນີ້ . ຂ້ອຍຊັງມັນ ຫລາຍ
ແທ້ໆ...

ສາວຊູ້ຂອງຊ່າງເຮັດຂະຫນົມຍ່າງດ້ວຍບາດກ້າວບໍ່ ທ່ຽງ
ກາຍມາພໍດີ , ນາງດຶງຜ້າຕຸ້ມບ່າ ແລະ ເອີ້ນໃສ່ຂ້ອຍ ສຽງ
ຊາກໆວ່າ :

" ເຂົ້າເມືອລະແມ້ " .

ເຖົ້າ ລູໂຕນິນ ໂຍນກ້ອນແປ້ງລົງແປ້ນ ທັງເລົ່າ ເລື່ອງ
ສາວຊູ້ຂອງເຂົາໃຫ້ຂ້ອຍຟັງຢ່າງໂອ້ອວດ ວ່ານາງເກັ່ງກາສາ
ມາດຫລາຍໃນດ້ານຊັ້ນເຊີງຮັກ . ຂ້ອຍກໍໄດ້ແຕ່ຖາມຕົນເອງ
ວ່າ :

" ຊັ້ນເຮົາເດ້ ຈະໄປທາງໃດ ? "

ແລ້ວຂ້ອຍກໍຮູ້ສຶກວ່າ ມື້ໃດມື້ຫນຶ່ງໃນໄວໆນີ້ລະ ໂຊກຮ້າຍ

ຄົງພວມລໍຄອຍຂ້ອຍຢູ່ທີ່ໃດທີ່ໜຶ່ງ .

ກິດຈະການຮ້ານຂະໜົມເດີນດີຂຶ້ນ ຈົນ ເດເຣັນກົຟຕ້ອງໄດ້ຊອກຫາບ່ອນໃໝ່ ເພື່ອຂະຫຍາຍຮ້ານອອກ ແລະ ຍັງຕັດສິນໃຈຈ້າງຄົນຊ່ວຍອີກຜູ້ໜຶ່ງ ຊຶ່ງກໍເປັນການດີ ເພາະຜ່ານ-ມາ ຂ້ອຍຕ້ອງຮັບພາລະຄົນດຽວຫລາຍໂພດ ຂ້ອຍອິດເມື່ອຍ-ຈົນທົນຊິບໍ່ໄຫວແລ້ວ .

" ຍ້າຍໄປຮ້ານໃໝ່ແລ້ວ ກູຊິໃຫ້ມຶງເປັນລູກມືເອກ" ລູໂຕນິນ ບອກ . " ກູຊິບອກໃຫ້ເຈົ້າຂຶ້ນເງິນເດືອນໃຫ້ມຶງ - ເປັນສິບຮູບຕໍ່ເດືອນ ດີບໍ່ລະ ? "

ຂ້ອຍຮູ້ວ່າ ເປັນຫຍັງເຈົ້າຈຶ່ງຢາກເອົາຂ້ອຍເປັນລູກມືເອກ . ເຈົ້າເປັນຄົນຂີ້ຄ້ານຊິຕາຍ , ສ່ວນຂ້ອຍພັດເຮັດ - ວຽກຢ່າງຈູບຈາວຫາວຫັນແຫ້ງ . ການເຮັດວຽກໜັກໆນີ້ກໍດີ ແນວໜຶ່ງຄືກັນ ມັນເຮັດໃຫ້ຂ້ອຍຫລຸດຜ່ອນຄວາມຕ້ອງການ - ທາງເພດ , ແຕ່ນັ້ນຊໍ້າພັດຈໍາກັດໂອກາດຊິໄດ້ອ່ານປຶ້ມອີກ .

" ດີແລ້ວທີ່ເຈົ້າອ່ານປຶ້ມຫມູ່ນັ້ນໄດ້ " , ລູໂຕນິນວ່າ , " ປຶ້ມຊຸມນັ້ນນະ ປະໄວ້ເປັນອາຫານໃຫ້ໝູກໍແລ້ວກັນ , ແຕ່ວ່າ ເອ-ມຶງຄືບໍ່ເຄີຍຝັນເລີຍບໍ ? ເຄີຍຢູ່ຕໍ່ ແຕ່ມຶງບໍ່ຢາກແກ້ໃຫ້ກູຟັງຊື່ໆ, ມັນຊິມີເລື່ອງເສຍຫາຍຫຍັງ ອັນນໍາແກ້ ຄວາມຝັນນັ້ນ , ມຶງບໍ່ມີຊິໄດ້ຮັບອັນຕະລາຍຫຍັງຍອມ .

ເຈົ້າເວົ້າມືອຶດມ່ອມກັບຂ້ອຍສະເໝີ , ບາງຄັ້ງ ຢາກວ່າ ຄືຈະມີບຸຖຸຂ້ອຍແຫ້ງຂຶ້ນມາ ຫລືວ່າ ບາງທີ ແມ່ນເຈົ້າ - ຢ້ານຫລາຍກວ່າບໍ , ເພາະວ່າຂ້ອຍເປັນຄົນຂອງເຈົ້າ ຂອງຮ້ານ - ແຕ່ປານນັ້ນ ເຈົ້າກໍຍັງລັກເຊື່ອງເອົາເຄື່ອງເປັນປະ

ຈຳ .

ແມ່ເຖົ້າຂ້ອຍເຖິງແກ່ກຳແລ້ວ , ເຂົາຟັງລາວໄດ້ຕັ້ງ - ເຈັດອາທິດ ແລ້ວ ຂ້ອຍຈຶ່ງໄດ້ຮັບຈົດໝາຍແຈ້ງຂ່າວຈາກ ພີ່ນ້ອງ ລູກພີ່ລູກນ້ອງກັນ . ຈົດໝາຍນັ້ນຂຽນສັ້ນໆ ບໍ່ມີ ຮອດຈຸດຈໍ້າ - ໄດ້ບອກຂ່າວວ່າ ແມ່ເຖົ້າຕົກລົງມາແຕ່ປະຕູໂບດ-ຂາຫັກ , ຕອນອົ້ນໄປອໍທານ , ແປດວັນຕໍ່ມາ ແມ່ເຖົ້າ ກໍເປັນພະຍາດເນື່ອຕາຍ . ຂ້ອຍຮູ້ພາຍຫລັງວ່າ ລູກພີ່ລູກນ້ອງຂອງຂ້ອຍທັງສາມຄົນ ຊຶ່ງລ້ວນແຕ່ຍັງໜຸ່ມແໜ້ນແຂງແຮງ - ພ້ອມດ້ວຍລູກຂອງເຂົາເຈົ້າ ຕ່າງກໍໄດ້ອາໄສກິນນຳເງິນທີ່ແມ່ເຖົ້າໄປອໍທານມາໄດ້ນັ້ນເອງ . ເມື່ອແມ່ເຖົ້າຈົບປານ ນັ້ນພວກເຂົາພັດບໍ່ມີສະໜອງພໍຈະນຳເອົາໝໍມາປິ່ນປົວລາວຊ້ຳ.

ໃນຈົດໝາຍຂຽນວ່າ :

" ພວກເຮົາຝັງແມ່ເຖົ້າໄວ້ໃນດິນວັດ ເປໂຕຣປາວະ-ລົບສະກີ ບ່ອນທີ່ຍາດພີ່ນ້ອງຜູ້ລ່ວງລັບໄປແລ້ວຂອງເຮົາກໍຢູ່ຫັ້ນ ພວກເຮົາໄປສົ່ງສະການ ແລະ ພວກຄົນອໍທານທັງຫລາຍກໍມາງູ ຄືກັນ ພວກເຂົາຮັກແມ່ເຖົ້າ ແລະພາກັນໄຫ້ , ພໍ່ເຖົ້າກໍ ໄຫ້ ລາວໄລ່ພວກເຮົາໜີ ແລ້ວຢືນຢູ່ຫລຸມຝັງແມ່ເຖົ້າຄົນດຽວພວກເຮົາພາກັນລັກບັ່ງພູມໄມ້ສອງເບິ່ງລາວ ລາວໄຫ້ຫລາຍ ລາວຄືຈະຕາຍໄວໆນີ້ແລ້ວ " .

ຂ້ອຍບໍ່ຮ້ອງໄຫ້ຍັງ , ແຕ່ພໍ່ຈື່ໆວ່າ ຮູ້ສຶກຄືມີລົມເຢັນໆ-ພັດລູບມາໃສ່ . ຄືນນັ້ນ ຂ້ອຍນັ່ງຢູ່ກອງໄມ້ກາງເດີ່ນບ້ານ , ມີຄວາມຮູ້ສຶກຢ່າງຮຸນແຮງວ່າ ຢາກລົມນຳໃຜຜູ້ໜຶ່ງກ່ຽວກັບ-ແມ່ເຖົ້າ ,ຂ້ອຍຢາກບອກເຂົາວ່າ ແມ່ເຖົ້າເປັນຄົນໃຈດີແລະ

ສະຫລາດຮູ້ , ເປັນແມ່ສຳລັບທຸກຄົນ , ຂ້ອຍແບກເອົາ - ຄວາມຮູ້ສຶກອັນໜັກໜ່ວງໃນທວງອົກນີ້ໄວ້ດົນແສນດົນ ແຕ່ວ່າ ບໍ່ມີໃຜພໍທີ່ຂ້ອຍຈະລືມເລື່ອງເຫລົ່ານີ້ນຳໄດ້ ; ແລ້ວໃນທີ່ສຸດ ຄວາມຮູ້ສຶກດັ່ງກ່າວ ກໍເຜົາຕົວມັນເອງ ມອດໄໝ້ໄປ ເມື່ອບໍ່ ໄດ້ຮັບການຕອບສະໜອງ .

ຫລາຍປີຕໍ່ມາ ຂ້ອຍຈຶ່ງຄິດພໍ້ເລື່ອງນີ້ອີກ ເມື່ອໄດ້ອ່ານ ເລື່ອງປະເພດສະທ້ອນຊີວິດຈິງ ຂອງ ອ.ພ ເຊົກຟ ກ່ຽວກັບ ຄົນຂັບລົດ ທີ່ຮ້ອງໄຫ້ຮ່ຳໄຮເວົ້າເຖິງລູກລາວທີ່ຕາຍຈາກ , ແລ້ວນຳມາຂອງລາວ ຂ້ອຍຮູ້ສຶກເສຍໃຈຫລາຍທີ່ວ່າ ເວ ລາ ນັ້ນແມ່ນເວລາທີ່ຂ້ອຍພວມ ໂສກາອາດູນ , ຂ້ອຍພັດບໍ່ມີ ມາ ຫລືໝາຈັກໂຕ ພໍຈະລົມນຳມັນໄດ້ , ຂ້ອຍກິນແໜງວ່າ ຕົນ ເອງບໍ່ຄິດອອກ ໄປສາລະພາບຄວາມທຸກໃຈນັ້ນສູ່ພວກໝູຝັງ- ແດ , ເພາະວ່າຢູ່ໂຮງເຮັດຂະໜົມນັ້ນ ດາວ່າມີໝູ ຫລາຍ ເອົາແຫ້ ແລະ ຂ້ອຍກໍເຄີຍຢູ່ຮ່ວມກັບພວກມັນມາຢ່າງສະຫງົບ ສຸກແລ້ວ .

ແລ້ວເຖົ້າຕຳຫລວດ ນິກໂຟຣິຊ ກໍເລີ່ມວົນວຽນສອດສ່ອງ ເບິ່ງຂ້ອຍປານນົກຫິວ . ເຂົາເປັນຄົນຮູບຮ່າງສູງໃຫຍ່ ຜົມສີ ເງິນຕັດສັ້ນ ແລະ ເຄົາກໍຕັດເລັ້ມໄວ້ຈົບງາມ . ເຂົາມັກມາ ຈອບໆຊອບເບິ່ງຂ້ອຍ ປານຄົນທຽວຈອບເບິ່ງທ່ານທີ່ເຂົາ ຂັງ ລ້ຽງໄວ້ກິນບຸນລູ້ດສະມາດ .

" ໂອ...ມິງລະມັກອ່ານປຶ້ມນໍ້ " ,ເຂົາວ່າ,ເຂົາມັກ- ຈະເລີ່ມຄວາມສົນທະນາແນວນີ້ . "ອືມ...ໃສ ?ປຶ້ມ ແນວ ໃດອັນມິງຕິດອ່ານນັ້ນນະ ? ພະຄຳພີບໍ ? ຫລືວ່າປະຫວັດ -

ຂອງມັກບູນ ?"

" ຂ້ອຍອ່ານທັງພະຄຳພີ ແລະ ປະຫວັດມັກບູນ," ນິກ-ໂຟຣິຊ ແປກປະຫລາດໃຈເອົາໂລດ ເມື່ອຮູ້ດັ່ງນີ້ ແລະ ຊຶ່ງ-ວ່າອຶດອັດເຂີນເຂີນນຳອີກ .

" ອຶມ... ອ່ານປຶ້ມແນວນີ້ກໍໃຫ້ປະໂຫຍດຫລາຍຢູ່ດອກນໍ້, ຊັ້ນເລື່ອງຂອງ ທ່ານເຈົ້າ ໂຕນສະໂຕຍ ເດ ເຄີຍອ່ານບໍ່?"

ຂ້ອຍໄດ້ອ່ານປຶ້ມຂອງໂຕນສະໂຕຍແລ້ວຄືກັນ , ແຕ່ປະ-ກົດວ່າ ບໍ່ແມ່ນເລື່ອງທີ່ຕາຕຳຫລວດພວມສົນໃຈ .

" ຫໍ້ນັ້ນຫວະ... ປຶ້ມທຳມະດາດອກນັ້ນ , ມັນກະຄືຂອງນັກຂຽນອື່ນໆນັ້ນລະ... ແຕ່ມີບາງເລື່ອງ ຂອງເພິ່ນນັ້ນລະ ທີ່ຄົນທັງຫລາຍພວມໂສກັນຢູ່ , ເລື່ອງທີ່ເພິ່ນຂຽນດ່າພວກພະ-ນັ້ນມາ . ເລື່ອງນັ້ນນະ ເປັນຕາອ່ານແທ້ໆໄດ !"

ແທ້ຈິງແລ້ວ ຂ້ອຍກໍໄດ້ອ່ານ " ບາງເລື່ອງທີ່ວ່າ " ນັ້ນແລ້ວຄືກັນ , ອ່ານສະບັບລັດກາຍອອກມາ ,ແຕ່ຂ້ອຍເຫັນວ່າບໍ່ລຶກຈັກກົດ ແລະ ຂ້ອຍກໍຮູ້ອີກວ່າ ນັ້ນບໍ່ແມ່ນເລື່ອງທີ່ຂ້ອຍຢາກເອົາມາສົນທະນາ ກັບອີຕາຕຳຫລວດນີ້ .

ພາຍຫລັງໄດ້ເວົ້າລົມກັນ ໒-໓ ເທື່ອຢູ່ຕາມຖະໜົນ ຫົນທາງແລ້ວ ຕາເຖົ້າກໍຊວນຂ້ອຍໄປເຮືອນລາວ .

" ໄປຢາມລຸງຢູ່ປີດແນ່ , ໄປກິນນ້ຳຊານຳກັນຊັ້ນຕ່ວາ".

ຂ້ອຍເຂົ້າໃຈທັນທີ ວ່າລາວຢາກໄດ້ຫຍັງ ? ແຕ່ຂ້ອຍກໍ-ຢາກໄປ , ຂ້ອຍໄດ້ປຶກສາເລື່ອງນີ້ນຳຜູ້ມີບົດຮຽນແລ້ວ ທຸກຄົນລົງຄວາມເຫັນວ່າ ຖ້າຂ້ອຍປະຕິເສດຄຳເຊີນຂອງຕາເຖົ້າຕຳຫລວດ ກໍມີແຕ່ຈະເຮັດໃຫ້ລາວ ຕື່ມຄວາມສົງໄສໃນ ໂຮງ

ເຮັດຂະໜົມພວກເຮົາຫລາຍອັນໜັ້ນ .

ດັ່ງນັ້ນ ຂ້ອຍຈຶ່ງໄປທີ່ປີດຂອງ ນິກີໂຟຣິຊ . ປີດນັ້ນເປັນຫ້ອງນ້ອຍໆ ເນື້ອທີ່ ໑ ສ່ວນ ສີ່ ຂອງຫ້ອງແມ່ນຕັ້ງເຕົາໄຟ້ໃຫຍ່ແບບລັດເຊຍ , ອີກສ່ວນໜຶ່ງວາງຕຽງໃຫຍ່ ຢູ່ຫລັງຜ້າກັ້ງຝ້າຍແມ່ນກອງໝອນປອກສີແດງສົດເປັນຈຳນວນມາກມາຍກ່າຍກອງ . ເນື້ອທີ່ເຫລືອນັ້ນກໍມີຕູ້ຖ້ວຍຊາມໂຕະ ,ຕັ່ງອີ - ສອງໜ່ວຍ ແລະ ຢູ່ໃກ້ປ່ອງຢ້ຽມນ້ອຍມີຕັ່ງແປ້ນມ້າຍາວ. ນິກີໂຟຣິຊ ນັ່ງຢູ່ແປ້ນມ້າຍາວກະດູມເອິກເສື້ອໄຂໂຈ່ງໂປ່ງຫລັງບັງປ່ອງຢ້ຽມຈົນໝົດປ່ອງ , ຂ້ອຍນັ່ງຢູ່ຟາກໂຕະ ປິ່ນໜ້າ-ໃສ່ເຂົາ , ຮຽງຂ້າງເມຍເຂົາ ຊຶ່ງເປັນຍິງສາວໄວຊາວ ປີ ຮ່າງກາຍເຕັມເອີກຕຶ່ງ ແລະ ແກ້ມແດງໂອ່ງໂຕ່ງ ແຕ່ດວງ-ຕາສີເຂົ້າເຖົ່າຈາງໆແບບແປກປະຫລາດ ມີແວວລືລັບໂຫດຮ້າຍ. ນາງນັ່ງເບະສົບແບບຄົນເອົາໃຈຍາກ ເວລາເວົ້າ ກໍເປັນ - ສຽງແຟ່ງເລດໃນອາດໜຶ່ງ .

" ເອີ້ ! ກູຫາຊິຮູ້ເອງວ່າ ອີລູກຮັກກູ ເຊເລັ້ງເຕ ຢ່ານັ້ນນະ ມັນຫຽວໄປວົນວຽນຮ້ານເຂົ້າຈີ່ສູ້ຫັ້ນ ວ່າຊັ້ນບໍ ? " ເຖົ້າຕ່ຳຫລວດວ່າ , " ອີນ້ອຍລ້ວຊ້ວຊາມແທ້ໆ! ແມ່ຍິງນີ້ຊົ່ວຊ້າແນວນີ້ລະ ! "

" ໝົດທຸກຄົນເລີຍຊັ້ນຫວະ ? " ເມຍຂອງເຂົາຖາມ.

" ໝົດທຸກຄົນເລີຍຫັ້ນລະ ! " ນິກີໂຟຣິຊ ຕອບໂຕ - ຢ່າງຂິງຂັງ , ຫລຽນກ່າຍູ່ນຳເອີກເສື້ອຕ່ຳກັ້ນດັງຫຼອງແຫຼງ, ສຽງປານເວລາມາສະບັດບັງຫຽນ . ເຂົາຍໍຈານນ້ອຍ ຮອງຈອກຍົກຂຶ້ນທູບນ້ຳຊາ ແລ້ວກໍເວົ້າຊ້ຳອີກຢ່າງຄັນແຂວ .

" ທັງຊົ່ວ ທັງຄຽວຄືກັນໝົດ ! ນັບແຕ່ອີແມ່ຍັງຫາກິນ ໄປຈົນຮອດພວກເຈົ້າຍິງ ລາຊິນີ ພູ້ນລະ ! ຄິດເບິ່ງວ່າ ລາຊິນີແຫ່ງ ເຊບາ ກໍຍັງເດີນທາງຂ້າມທະເລຊາຍຕັ້ງວ່າ ໔ພັນໄມ ເພື່ອໄປຫາເຈົ້າຊາຍ ໂຊໂລມົນ ຍ້ອນຄວາມຄຽວ ໝັ້ນ ແລະ ລາຊິນີ ເອກາເຕຣີນາ ພວກເຮົາກໍຄືກັນ , ເຖິງ - ແມ່ນຄົນຊີເອັນເພີ່ນວ່າ : " ພະນາງເຈົ້າຜູ້ຍິ່ງໃຫຍ່ ,ແຕ່."

ແລ້ວເຂົາກໍເລົ່າເລື່ອງໂດຍລະອຽດວ່າ , ມີທະຫານ ຢູ່ວັງແຫ່ງໜຶ່ງ ຊຶ່ງພໍໄດ້ນອນນຳພະນາງເຈົ້າພຽງຄືນດຽວກໍໄດ ຂົ້ນຍົດຂ້າມຫູກຸ້ມ ຈາກນາຍຈ່າ ເປັນນາຍພົນບາດດຽວ . ເມຍຂອງເຂົາ ນັ່ງຟັງຢ່າງຕັ້ງອົກຕັ້ງໃຈ ,ດົນໆກໍເລີຍຮີມສົບ ບາດໜຶ່ງ ແລະ ເດຂາມາຊູ້ນຂາຂອຍຢູ່ກ້ອງໂຕະ . ນີກິໂຟຣິຊ ເລົ່າໄປເລີຍ ໆ ບໍ່ມີຂອງຄາ ແລະ ກໍເວົ້າຊົງແຊບ ຊົງນົວເອົາແທໆ . ແລ້ວດວຍວິທີການໃດໜຶ່ງ ລາວກໍປ່ຽນ - ເລື່ອງເວົ້າໂດຍຂ້ອຍບໍ່ຮູ້ສຶກຕົວ .

" ຕົວຢ່າງຄື ນັກສຶກສາມະຫາວິທະຍາໄລປີໜຶ່ງ ຢູ່ ຖະໜົ້ນຄູ້ມເຮົານີ້ ຊື່ ເປົ້ດຍົບ..."

ເມຍເຂົາສອດຂົ້ນວ່າ :

" ຄົນບໍ່ງາມ ແຕ່ຫາກຈົບ ! "

" ໃຜຈົບ ? "

" ທ່ານ ເປົ້ດຍົບ ຫັ້ນລະ "

" ກ່ອນອື່ນໝົດ ລະເອົາຄຳວ່າທ່ານຫັ້ນອອກກ່ອນເທາະ. ບາດມັນເສັງໄດ້ຈົບວິຊາຮຽນ ມັນຈັ່ງຊິເປັນທ່ານໄດ້ ,ເວລານີ້ມັນເປັນພຽງນັກສຶກສາຄົນໜຶ່ງເທົ່ານັ້ນ . ພວກນີ້ ມັນ ມີ

ເປັນພັນໆຄົນພຸ້ນດອກ ! ຂໍ້ສອງລະ ເຈົ້າໝາຍຄວາມວ່າຈັ່ງໃດອັນຈົບນັ້ນ ? "

" ລາວເປັນຄົນມັກມ່ວນ ແລະ ກໍຍັງໜຸ່ມ "

" ໂອຍ ! ພວກຕົວຕະຫລົກ ໃສ່ເກີບໂບກໃຫຍ່ອອກມາສະແດງ ກໍແມ່ນຄົນມັກມ່ວນຄືກັນຕວ່າ "

" ອ້າວ - ຕົວຕະຫລົກ ເຂົາລະຖືກຈ້າງໃຫ້ມາເຮັດໃຫ້ຄົນຫົວນ່າ "

" ອັດສົບນີ້ງແດ່ ! ຂໍ້ສອງ ບາດນີ້ , ແຕ່ຕອນ ມັນເກີດມາຕອນຍັງນ້ອຍ ກໍໜ້າຮັກດີຄືກັນຫັ້ນລະ "

" ພວກຕົວຕະຫລົກ - ມັນລະຄືລິງນີ້ "

" ບອກວ່າ ອັດສົບດຽວນີ້ ! ກູບອກແລ້ວໄດ , ໄດ້ຍິນບໍ່ ? ຫາ ? "

" ເອີ - ໄດ້ຍິນ... "

ເມຍຂອງເຂົານິດຢູ່ , ນິໂກໂຟຣິຊ ຫັນມາທາງຂ້ອຍ .

" ໜໍ່ ເປີ້ດຍິບ ຄົນນີ້ນະ , ຄືກູເວົ້ານັ້ນມາແລ້ວນັ້ນລະເປັນຄົນທີ່ໜ້າສົນໃຈຢູ່ໄດ໋ , ນີ້ງຄວນຊິຮູ້ຈັກລີ້ງແກ່ວນເຂົາ-ໄວ້ແດ່ " .

ເມື່ອຄິດພໍ້ວ່າ ຕາເຖົ້າ ນິໂກໂຟຣິຊ ອາດຈະເຄີຍເຫັນ-ຂ້ອຍກັບ ເປີ້ດຍິບ ໄປນຳກັນເລື້ອຍໆຢູ່ ແລວຂ້ອຍເລີຍ ຕອບວ່າ :

" ພວກເຮົາຮູ້ຈັກກັນແລ້ວ "

" ຊັ້ນບໍ່ ? ອື່ມ... "

ນ້ຳສຽງຂອງເຂົາສະແດງວ່າຜິດຫວັງ , ເຂົາລຸກ ຈາກ

ຕັ່ງຍາວຢ່າງໄວວາ ຈົນຫລຽນກາຂອງເຂົາຕຳກັນກຼ່ອງແກຼ່ງ.
ຂ້ອຍເພີ່ມຄວາມລະມັດລະວັງຕົວຂຶ້ນຕື່ມ , ເມື່ອຄິດພໍ້ວ່າເປັດ
ຍົບ ກຳລັງໃຊ້ຈັກພິມເຈຍເອກກະສານອັນໃດອັນໜຶ່ງຢູ່ .

ເມຍຂອງເຂົາເດຂາມາຊູນຂ້ອຍ ເຮັດໃສ່ຜົວເຖົ້າ.ສ່ວນ
ຝ່າຍຕາເຖົ້າຕຳຫລວດກໍສະແດງທ່າທີຂຶງຂັງມຶງມໍ ແລ້ວກໍ ທັ່ງ
ເທຄວາມເວົ້າອອກມາ ປ່ານຫາງນົກຍູງ ແຜ່ກະຈາຍ ອວດ
ອ້າງຄວາມສວຍງາມຂອງມັນ , ແຕ່ເມຍລາວພັດຫຽວ ຄວັກ
ເຂຍຂ້ອຍທາງກອງໂຕະ ເຮັດໃຫ້ຂ້ອຍເສຍສະມາທິຟັງ ໄປ
ຫລາຍເຕີບ . ຕອນເຂົາປ່ຽນຫົວຂໍ້ເລື່ອງ ຂ້ອຍບໍ່ໄດ້ຟັງຄັກ,
ພໍດີສຽງເຂົາຜ່ອນລົງເປັນເບົາໆ ແຕ່ເນັ້ນໜັກ :

" ສາຍໃຍທີ່ຫລຽວບໍ່ເຫັນ - ມຶງເຂົ້າໃຈບໍ່ ? " ເຂົາ
ວ່າທັງແນມເບິ່ງໜ້າຂ້ອຍຈ້ອງ ດ້ວຍດວງຕາກົມເບີກກວ້າງ -
ຄືຈັ່ງວ່າພວມຕົກອົກຕົກໃຈ .

" ຕົວຢ່າງວ່າ ໃຫ້ພະເຈົ້າຊີວິດເຮົານີ້ ເປັນຄືແມງມູມ."

" ມຶງຫັ້ນຫຸບປາກກ່ອນ ! ອີ່ຜີບ້າ ! ຍົກຕົວຢ່າງ ເພື່ອໃຫ້
ມັນແຈ່ມແຈ້ງຂຶ້ນຊື່ງ ບໍ່ແມ່ນໃສ່ຮ້າຍປ້າຍສີດອກ ອີ່ເວນ ! -
ເອົາໜໍ້ ຊາໂນວ້າໄປມຽນໄປ ! "

ເຂົາຍູ່ຫົວຄິ້ວ ແລະ ຫລິ່ວຕາລົງ ເວົ້າຕໍ່ໄປຢ່າງເອົາຈິງ
ເອົາຈັງ .

" ສາຍໃຍທີ່ຫລຽວບໍ່ເຫັນ - ຄືໃຍແມງມູມ ວ່າຊັ້ນສານໍ້
ມັນເລີ່ມຕົ້ນມາຈາກຫົວໃຈຂອງພະເຈົ້າຊາ ອາເລັກຊັງ ອົງທີ
ສາມ , ຈັກກະພັດແຫ່ງລັດເຊຍທັງໝົດ...ຯລຯ,ແລ້ວຕໍ່ລົງ
ມາຮອດບັນດາລັດຖະມົນຕີຂອງພະອົງ , ຮອດຜູ້ປົກຄອງ -

ແຂວງ , ລົງມາຫາທູກງອັ້ນ , ຈົນຮອດກູ ,ຮອດທະຫານ-ຊັ້ນຕ່ຳສຸດໃນກອງທັບ . ສາຍໃຍນີ້ສົ່ງໄປຮອດທຸກສິ່ງຢ່າງ ; ມັນກຽວມັນພັນເອົາທຸກສິ່ງ ແລະ ກໍຍອນຄວາມເຂັ້ມແຂງອັນ-ແນ່ນບໍ່ເຫັນນີ້ເອງ ອານາຈັກຂອງພະເຈົ້າຊາ ຈິ່ງຈະໝັ້ນຄົງເປັນອະມະຕະ , ມີແຕ່ ອີ່ນາງພະລາຊິນີອົງກິດເທົ່ານັ້ນລະທີ່ຂີ້ຫລັກ ພະຍາຍາມຈາງສິນບົນພວກໂປໂລຍ , ພວກຢິວແລະຄົນລັດເຊຍຈຳນວນໜຶ່ງນຳ ເພື່ອໃຫ້ພວກນີ້ພະຍາຍາມ ທຳລາຍສາຍໃຍນີ້ ໂດຍທຳທ່າວ່າເຮັດໄປເພື່ອປະຊາຊົນ ! "

ເຂົາກົ່ງຕົວໂນ້ມລົງຕໍ່ໜ້າຂອຍ ຖາມສຽງເກືອບຊື່ມວ່າ:

" ເຈົ້າໃຈບໍ່ -ຫາ- ມຶງຮູ້ບໍ່ວ່າເປັນຫຍັງກູຈິ່ງມາມົວ -ເວົ້າສົ່ງສອນມຶງຢູ່ແນວນີ້ ? ກະຍອນວ່າ ຊ່າງເຮັດຂະໜົມ-ນະ ເຂົາມາຍອງມຶງໃຫ້ກູຟັງວ່າ ມຶງເປັນບາວນ້ອຍທີ່ສະຫຼາດແລະ ສັດຊື່ວ່າຊັ້ນ ມຶງຢູ່ພໍ່ມຶງ , ແລ້ວພັດມີນັກສຶກສາພວກນີ້-ປ່ວນປ່ຽນຢູ່ແຖວໂຮງເຮັດເຂົ້າຈີ່ຕົ້ນໄປໝົດ . ຕອນ ກາງຄືນ ພວກມັນເຂົ້າໄປຮອດໃນຫ້ອງນອນຂອງນາງ ເດເຣັນໂກວ່າ ເປັນຫລາຍໆຊົ່ວໂມງ . ເອີ ຄືນວ່າເຂົ້າໄປຄົນດຽວໝັ້ນກະບໍ່ມີບັນຫາດອກ , ແຕ່ອັນນີ້ເຂົ້າໄປບັກຫລາຍໆຄົນ ,ມັນ-ແປວ່າຈັ່ງໃດຫາ ? ກູບໍ່ແມ່ນຊິເວົ້າຫຍັງຕ້ານເຂົາໂລດດອກພວກນັກສຶກສານີ້ . ຂອງວ່ານີ້ເຂົາເປັນນັກສຶກສານໍ້ - ມື້ໜ້າເຂົາກໍອາດເປັນຜູ້ຕັດສິນປະຫານຊີວິດກະໄດ້ !ເປັນ ນັກສຶກສານະ ສ່ວນຫລາຍກໍເປັນຄົນດີຢູ່ , ແຕ່ຜູ້ທີ່ຟ່າວຟັ່ງຢາກ-ສະແດງບົດບາດຊີວິດໄວໂພດໄປນັ້ນນະ ພວກສັດຕູຂອງ ພະເຈົ້າຊາ ກໍເລີຍເຍົາໄຊ້ພວກນີ້ລະ ! ແລ້ວຍັງອີກເລື່ອງໜຶ່ງ

ກູຢາກເຕືອນໆມຶງໄວ້..."

ແຕ່ກ່ອນທີ່ເຂົາຈະໄດ້ເວົ້າຕໍ່ໄປ ປະຕູຫ້ອງກໍໄຂພົວະອອກ ຊາຍເຖົ້າຄົນໜຶ່ງ ຍ່າງເຂົ້າມາ ຮູບຮ່າງນ້ອຍ ດັງແດງເທິ້ງ ຜົມກູດ ມີສາຍເຊືອກໜັງເສັ້ນໜຶ່ງຄຽນຄອບໄວ້ , ມີຖືແກ້ວ ເຫລົ້າ ວົດກາ ແລະ ເບິ່ງຊົງຢູ່ໃນຕົວເຂົາເອງ ກໍບັນຈຸ ວົດກາ ໄວ້ສົມຄວນແລ້ວ .

" ຫລົ້ນຫມາກດາມບໍ່ ? " ເຂົາຖາມຊົງມ່ອນຊື່ນ ແລ້ວ ກໍພົ້ນຄຳເວົ້າຄຶກຄະນອງຫລຽນໄຫລອອກມາເປັນໄຟ .

" ພໍ່ເຖົ້າກູເອງ " , ນິກໂຟຣິຊ ບອກ ,ຫນ້າບູດບຶ້ງ-ຊຶງບໍ່ພໍໃຈ .

ຕໍ່ມາບໍ່ດົນ , ຂ້ອຍຈຶ່ງຂໍລາເມືອ , ເມຍສາວຂີ້ສັບສໍ່ ຕໍ່ແຫລຂອງເຂົາອອກມາສົ່ງ , ນາງຢິກຂ້ອຍບາດໜຶ່ງ ເປັນ-ທຳນອງຢອກຫົວວ່າ :

" ຕາຍ - ເບິ່ງແມ້ ກ້ອນເຟື້ອເປັນສີແດງປານໄຟເອົາ ໂລດ ! "

ແທ້ແລ້ວ ທ້ອງຟ້າແຈ່ມໃສດີ , ມີເມກກ້ອນນ້ອຍໆທີ່ ສະທ້ອນແສງແດດເປັນສີຄຳ , ກ້ອນດຽວເທົ່ານັ້ນ .

ບໍ່ແມ່ນຂ້ອຍຈະຖືກບັນດາຄູຜູ້ເຄີຍສິດສອນຂ້ອຍດອກ , ແຕ່ຂ້ອຍຂໍຮັບວ່າ ຄຳເວົ້າຂອງຕາເຖົ້າຕຳຫລວດ ນັ້ນບ່ວ່າເປີດໂປງໂຄງສ້າງ ແລະ ກົນຈັກຂອງລັດ ໄດ້ຢ່າງແຈ່ມແຈ້ງ ດີກວ່າທີ່ເຄີຍໄດ້ຍິນມາ . ມັນມີໂຕແມງມຸມເຊື່ອງຊ້ອນຢູ່ທີ່ ໃດທີ່ໜຶ່ງ ແລ້ວຈາກແມງມຸມໂຕນັ້ນເອງສາຍໃຍໄດ້ຖືກສາວອອກໆ ສອດແຊກພູກຮັດຊີວິດທຸກຊີວິດເປັນ " ສາຍໃຍທີ່ເບິ່ງບໍ່ເຫັນ"

ຕັ້ງແຕ່ນັ້ນມາ ບໍ່ວ່າຂ້ອຍໄປມາທາງໃດ ຂ້ອຍກໍເລີ່ມຫລຽວ - ເຫັນ ຈຶ່ງຮູ້ສຶກເຖິງ ວົງລ້ອມອັນກ້ຽວກ່ອມພັນທະນັງເຫລົ່ານັ້ນ ໄດ້ .

ໃນຕອນເດິກຂອງຄ່ຳຄືນນັ້ນ ຫລັງຈາກອັດຮ້ານແລ້ວມາ ເຣຍ ເດເຣັນໂກວາ ເອີ້ນຂ້ອຍໄປໃນຫ້ອງນາງ ແລະ ແຈ້ງ ແກ່ຂ້ອຍຢ່າງເປັນການເປັນງານວ່າ ນາງຖືກມອບໝາຍ ໃຫ້ ສອບຖາມຂ້ອຍວ່າ ຕາເຖົ້າຕຳຫລວດໄດ້ລືມຫຍັງນຳແດ່ .

" ຟ້າເອີຍ ! " ນາງອຸທານອົ້ມ ເມື່ອຟັງຂ້ອຍລາຍ - ງານສຸດ , ແລ້ວນາງກໍຍ່າງຫລີບໄປຫລີບມາຄືດັ່ງໝູທີ່ຖືກກັບ ດັກ , ບາງຄັ້ງກໍສັ່ນຫົວ ເປັນຫ່ວງເປັນໃຍນຳ .

" ແຕ່ວ່າ...ລູໂຕນິນ ຄືນນີ້ນະ ເຄີຍຊອກເລື່ອງກັບ - ເຈົ້າບໍ່ຊຸ້ນມາ ຫລື່ວ່າເປັນນຳສາວເມຍລັບລາວນັ້ນບໍ່...ແມ່- ຍິງຄືນນີ້ ເປັນພີ່ນ້ອງເຊື້ອສາຍກັບ ນິກິໂຟຣິຊ ບໍ່ແມ່ນຫວາ ? ເຮົາຕ້ອງຊອກທາງໄລ່ຕາຊ່າງເຂົ້າຈີ່ນອອກສາແລ້ວລະ ! "

ຂ້ອຍຢືນອີງຂອບປະຕູ ເບິ່ງນາງຢູ່ຢ່າງບໍ່ຢາກພໍໃຈ ປານ ໃດ . ນາງໃຊ້ຄຳວ່າ " ເມຍລັບ "ຢ່າງກົງໄປກົງມາໂພດ. ຂ້ອຍບໍ່ມັກການເວົ້າແບບນີ້ ແລະ ຂ້ອຍກໍຍັງບໍ່ມັກຄວາມຄິດ - ຂອງນາງໃນຂໍ້ທີ່ວ່າ ຈະໄລ່ຊ່າງເຣັດເຂົ້າຈີ່ອອກ .

" ເຈົ້າຕ້ອງລະວັງຕົວແດ່ນັ້ນລະ ເນີ້ " ນາງບອກ ; ແລະ ກໍຕາມເຄີຍ ຂ້ອຍຮູ້ສຶກໝຸດໝິດເອີງໂລດ ເມື່ອຢູ່ຕໍ່ - ໜ້າສາຍຕານາງ . ມັນຄືຈັ່ງວ່າສ້ວງຊ້ອມຈ້ອງຈັບເອົາເລື່ອງ ນຳຂ້ອຍແທ້ໆ , ແຕ່ຈະແມ່ນຢາກໄດ້ຫຍັງ ,ຂ້ອຍບໍ່ອາດຮູ້ໄດ້ ຄາວໜຶ່ງ ນາງເຊົາເວົ້າແລ້ວຢຸດຢືນຕໍ່ໜ້າຂ້ອຍ , ເອົາມື-

ອັດຫລັງໄວ້ , ຖາມວ່າ :

" ເປັນຫຍັງເຈົ້າຄືມັກໜ້າເສົ້າຢູ່ເລີຍ? "

" ແມ່ເຖົ້າຂ້ອຍຫາກໍຕາຍຫວ່າງບໍ່ດົນນີ້ເອງ "

ຄ້າຍຄືວ່າຄຳຕອບຂ້ອຍ ເປັນສິ່ງໜ້າຢາກຫົວ , ນາງຍິ້ມ ແລະ ຖາມວ່າ :

" ເຈົ້າຮັກເພິ່ນຫລາຍແທ້ຫວະ ? "

" ຮັກຫລາຍ , ເຈົ້າມີເລື່ອງຈະຖາມອີກບໍ ? "

" ບໍ່ "

ຂ້ອຍຈິ່ງອອກມາ ແລະ ເທົ່າທີ່ຈື່ໄດ້ , ຄືນນັ້ນຂ້ອຍໄດ້ຂຽນຄຳກອນສຳນວນແຂວງກະດາງ :

" ເບິ່ງຮູບນອກ ວາດຄ່ອງງາມສະຫງວນ ແລມໍ
ແຕ່ຈິດໃຈທາງໃນເລິກ ບໍ່ຄ່ອງຄືຄວາມເວົ້າ "

ມີການຕົກລົງກັນວ່າ ພວກນັກສຶກສາຄວນຈະຕີຕົວອອກຫ່າງຈາກຮ້ານເຂົ້າຈີ່ ໃຫ້ຫລາຍທີ່ສຸດ ເທົ່າທີ່ຈະເຮັດໄດ້ . ຍ້ອນວ່າດົນໆ ຈິ່ງພໍ້ກັນ ຂ້ອຍກໍເລີຍຂາດໂອກາດທີ່ຈະໄດ້ ສໍ້ຖາມພວກເຂົາເຈົ້າ ກ່ຽວກັບຫລາຍສິ່ງຫລາຍບັນຫາ ທີ່ຂ້ອຍອ່ານປຶ້ມບໍ່ເຂົ້າໃຈ . ດັ່ງນັ້ນ ຂ້ອຍເລີ່ມຂຽນຄຳຖາມລົງໃນປຶ້ມບັນທຶກ , ແຕ່ແລ້ວກໍມື້ວັນໜຶ່ງ ທີ່ຂ້ອຍເມື່ອຍຈົນເຜີຫລັບໄປ ຄາປຶ້ມບັນທຶກ ແລ້ວຊ່າງເຂົ້າຈີ່ມາພໍ້ ແລະ ອ່ານຈົນໝົດ ເຂົາປຸກຂ້ອຍ ແລະ ສໍ້ຖາມວ່າ :

" ແມ່ນຫຍັງນີ້ນະ ? ມຶງຂຽນຫຍັງ ໃນປຶ້ມນີ້ນະ ? ເປັນຫຍັງ ກາຣິບານດີ ຈິ່ງບໍ່ຂັບໄລ່ພະເຈົ້າຊົວດອອກໄປ ? ແມ່ນໃຜ ກາຣິບານດີ ? ແລ້ວເປັນຫຍັງຈິ່ງຂັບໄລ່ພະເຈົ້າຊົວດ ?

ຄວາມແບບນີ້ ກູຄືບໍ່ເຄີຍໄດ້ຍິນເວີ້ຍ ? "

ເຂົາຊົງຄຽດໂມໂຫຂຶ້ນມາ ຈັບປຶ້ມວີ່ໄປທາງຖາດໃສ່ແປ້ງນວດ ແລ້ວກໍຫັນຫນ້າໄປຫາເຕົາໄຟ ທັງຈົ່ມພຶມພໍາຕໍ່ວ່າ :

" ພະເຈົ້າຊົວດຊຶຖຸກໄລ່ອອກກະໄດ ວ່າຊັ້ນ ! ຕະຫລົກຂະຫນາດ ! ມຶງເຊົາເທາະເວີ້ຍເລື່ອງບ້າງແບບນີ້ . ບັກ-ນັກອ່ານຂີ້ສູດເອີ້ຍ ! ມຶງຮູ້ບໍ່ ຫວ່າງ ໔–໕ ປີກ່ອນນີ້ ຢູ່ຊາຣາເຕີຟ ພວກສາລະວັດທະຫານ ກໍໄດ້ລາກຄໍນັກອ່ານຄືພວກສູນີ້ລະ ກວາດກ້ຽງເລີຍ ມຶງເອີ້ຍ ! ມຶງຮູ້ບໍ່ວ່າ ບັກ ນິກໂຟຣິຊແຮ່ງແມ່ນມຶງຢູ່ກໍ . ຫາລະລົມເລື່ອງເຈົ້າຊົວດມຶງສາ . ເຈົ້າຊົວດບໍ່ແມ່ນຄົນກາງແກ ຊິໃຫ້ມຶງໄລ່ຫລັນໄດ້ເນີ້,ຊິບອກໃຫ້!

ເຂົາເວົ້າດ້ວຍຄວາມຫວັງດີແທ້, ແຕ່ຂ້ອຍບໍ່ອາດຈະຕອບເຂົາໄດ້ດັ່ງທີ່ໃຈຢາກຕອບ . ຂ້ອຍຖືກສັ່ງຫ້າມບໍ່ໃຫ້ລົມນໍາ-ຊ່າງກ່ຽວກັບ " ເລື່ອງອັນຕະລາຍ " ແນວນີ້ .

ເວລານັ້ນ ມີປຶ້ມຫົວຫນຶ່ງ ເປັນປຶ້ມທີ່ຄົນສົນໃຈອ່ານຫລາຍລັກສົ່ງໃຫ້ກັນອ່ານຕິດຕໍ່ກັນຫມົດທັງເມືອງ , ອ່ານແລ້ວກໍ ວິພາກວິຈານກັນຕ່າງໆ.ຂ້ອຍໄດ້ເວົ້ານໍາສັດຕະວະແພດລາວຊີຟ-ໃຫ້ຊອກມາໃຫ້ອ່ານແດ່ ; ແຕ່ລາວກໍຕອບແບບບໍ່ມີຫວັງເອົາ-ສາເລີຍ .

" ໂອ້ຍ ບໍ່ໄດ້ດອກ ເພື່ອນເອີ້ຍ ! ບໍ່ມີ ຍັງເລີຍ,ອ້າ. ..ແຕ່ຂ້ອຍຄິດອອກແລ້ວ ຈະມີການອ່ານສູ່ກັນຟັງຢູ່ບ່ອນຫນຶ່ງ-ໃນໄວໆນີ້ລະ , ບາງທີຂ້ອຍຈະພາເຈົ້າໄປນໍາດອກ " .

ຕອນທ່ຽງຄືນ ຂອງວັນບຸນ ພະມານດານັ້ນເອງ,ຂ້ອຍໄດ້ຍ່າງຜ່າຄວາມມືດຂ້າມທົ່ງ ອາກສະກິເຢ ໂປລເຢ,ນໍາ ຫລັງ

ລາວົຟ ຊຶ່ງຍ່າງດຸ່ມໆອອກໜ້າໄປກ່ອນຕັ້ງເປັນຮ້ອຍຫລາ . ທົ່ງຫຍ້ານັ້ນແປນເປົ່າ ປາສະຈາກຜູ້ຄົນ . ແຕ່ປານນັ້ນ ພວກເຮົາກໍຕ້ອງລະວັງຕົວ , ຕາມທີ່ ລາວົຟ ໄດ້ເຕືອນໄວ້ແລ້ວ: ມີການທຳທ່າຮ້ອງເພງ , ຖີວປາກ ແລະ ຍ່າງເຊ້ຊາຍ ເຊຂວາ ຄືຄົນງານຂີ້ເມົາ . ຫ້ອງຟ້າມືດຄຶ້ມໄປດ້ວຍກ້ອນ ເຝື້ອສີດຳທີ່ລອຍລົງຕ່ຳ ແລະ ດວງເດືອນກໍລອຍໄປ , ລອຍໄປ, ສ່ອງແສງສີທອງເຮືອງເຮື່ອໃສ່ກ້ອນເມກ , ເຮັດໃຫ້ ເກີດ-ເປັນເງົາທາບລົງໃສ່ທ້ອງທົ່ງຫຍ້າ ແລະ ສະທ້ອນປະກາຍ ສີເງິນຂອງນ້ຳ ຕາມບວກນ້ຳນ້ອຍທີ່ກະຢາດກະຢາຍຢູ່ທົ່ວໄປ . ເບື້ອງຫລັງ ຂ້ອຍແມ່ນສຽງຄາງນັນແຊວຂອງຕົວເມືອງ .

ພໍຮອດເຮືອນລ້ອມດ້ວຍຮົ້ວພຸ່ມໄມ້ ເລີຍສະຖາບັນຄົ້ນຊາເຫວະວິທະຍາໄປໜ້ອຍດຽວ , ຜູ້ນຳທາງຂ້ອຍຢຸດ ຖ້າຈົນຂ້ອຍລີວມາທັນ , ແລ້ວພວກເຮົາກໍພາກັນປີນຮົ້ວເຂົ້າໄປຜ່າ ສວນຮ້າງທີ່ເຕັມແຕ່ກົກໄມ້ ພຸ່ມໄມ້ ຊຶ່ງຮົກເຮື້ອ , ງ່າໄມ້ຢ່ອນລົງຕ່ຳ ພົມນ້ຳໝອກເມັດໃຫຍ່ລົງໃສ່ຫົວເຮົາ . ແລ້ວພວກເຮົາກໍໄປຮອດເຮືອນຫລັງໜຶ່ງ , ເຄາະຄ່ອຍໆທີ່ປ່ອງຢ້ຽມ ອັດແຈບນັ້ນ , ຝາປ່ອງຢ້ຽມໄຂພົວະອອກ ຊາຍມີໜວດເຄົາ -ສ່ອງອອກມາ ທ່າມກາງຄວາມມືດ ແລະ ມິດສະຫງັດ .

" ໃຜຫັ້ນ ? "

" ໝູ່ຂອງ ປາກົຟ "

" ປີນເຂົ້າມາ "

ໃນຄວາມມືດອື້ຕື້ມນັ້ນ ຂ້ອຍຮູ້ສຶກທັນທີວ່າ ມີຄົນຢູ່ຫັ້ນຫລາຍຄົນ . ມີສຽງເສື້ອຜ້າສຽດສີ ຊຸມກັນ , ສຽງຄົນໄອຄ່ອຍໆ-

ສຽງຊື່ມຊັບ . ຄາວໜຶ່ງມີຄົນຂີດກັບໄຟຂຶ້ນ ສ່ອງເບິ່ງໜ້າ-ຂ້ອຍ ແລະ ຂ້ອຍກໍຫັນເຫັນເງົາຄົນພໍຊຸມນຸມນັ່ງຢູ່ເລາະຝາ .

" ມາຫມົດທຸກຄົນແລ້ວບໍ ? "

" ມາຫມົດແລ້ວ "

" ເອົາຫຍັງຫ້ອຍຂຶ້ນເທິງປ່ອງຢ້ຽມບັງແສງໄຟ ບໍ່ໃຫ້ມັນລອດອອກຮອດນອກໃຫ້ແດ່ "

ມີສຽງເວົ້າແຮງແບບຮ້າຍໆວ່າ :

" ແມ່ນໃຜອອກຄວາມຄິດໃຫ້ມາເຕົ້າໂຮມກັນຢູ່ເຮືອນ - ຮ້າງແນວນີ້ ? "

" ຊູເວົ້າແຮງຫລາຍ ! "

ມີຄົນໃຕ້ຕະກຽງນ້ອຍໆຂຶ້ນຢູ່ແຈຫ້ອງກ້ຳໜຶ່ງ ພາຍ ໃນຫ້ອງແປນເປົ່າ ບໍ່ມີໂຕະຕັ່ງໃດໆ , ມີແຕ່ໄມ້ກະດານວາງ - ຢອງເທິງກະໂລ່ງໄມ້ສອງໜ່ວຍ ໃຫ້ຄົນນັ່ງລຽນເປັນແຖວ ຄືນົກຈັບຢູ່ເທິງຮາວຮົ້ວ . ກະໂລ່ງອີກໜ່ວຍໜຶ່ງວາງຂວ້າລົງເປັນບ່ອນວາງຕະກຽງ . ອີກສາມຄົນນັ່ງຢູ່ພື້ນ ອິງຝາ, ແລ້ວຢູ່ປ່ອງຢ້ຽມມີຊາຍໜຸ່ມຜົມຍາວຮ່າງຈ່ອຍບາງ . ຂ້ອຍຮູ້ ຈັກຫມົດທຸກຄົນຢູ່ໃນໜີ້ ຍົກເວັ້ນຊາຍໜຸ່ມຄົນນີ້ ແລະຊາຍ ມີໜວດເຄົາຍາວໜັ້ນ . ຊາຍມີເຄົາຍາວປະກາດດ້ວຍສຽງຕ່ຳເລິກວ່າ ເຂົາຈະອ່ານປຶ້ມ ຊື່ " ຄວາມແຕກຕ່າງຂອງເຮົາ" ໂດຍ ເກອອັກກີ ເປຼຄານົຟ , ອະດີດສະມາຊິກ ນາຣົດນາ-ຢາ ໂວລຢາ .

ສຽງໜຶ່ງສອດພຶມພຳຂຶ້ນວ່າ :

" ຮູ້ແລ້ວລະ ເລື່ອງຫມູ່ມັນນະ ! "

ຂ້ອຍຮູ້ສຶກຕື່ນເຕັ້ນມ່ວນໄປນຳບັນຍາກາດອັນລຶກລັບນັ້ນ -
ຫລາຍ , ມັນຈິ່ງແມ່ນຈູບຈາວກວ່າປຶ້ມຄຳກອນໃດໆພູ້ນຊ້ຳ .
ຂ້ອຍຮູ້ສຶກຄືຄົນທີ່ເຊື່ອຖືໃນສາສະໜາ ແລ້ວເຂົ້າມາໃນພິທີ -
ໄຫວ້ໃນໂບດຍາມຕອນເຊົ້າ , ຄິດເຫັນຮູບໂມງໃຕ້ດິນ ແລະ
ພວກສາສະໜາອຶດສະຕຽນສະໄໝຖືກເກືອດຫ້າມ . ສຽງ
ອ່ານຕ່ຳເລິກ ຍັງຄືງດຳເນີນຕໍ່ໄປ , ເຂົາອ່ານຈະແຈ້ງ ທຸກ
ຄຳເວົ້າ ແລະ ດັງໄດ້ຍິນສະເໝີກັນໃນທົ່ວຫ້ອງ .

ແລະ ແລ້ວກໍມີສຽງໜຶ່ງຂັດຂຶ້ນ ຈາກແຈຫ້ອງ :

" ເອີຍ–ເລື່ອງໂລເລທັງນັ້ນລະ ! "

ເໜືອຮ່າງຄົນໜຶ່ງຢູ່ຫ້ອງກ້ຳນັ້ນ ຫ່ອງແດງສອງແສງ ພໍ
ມັບແມບຜ່າຄວາມມືດ , ເຮັດໃຫ້ຂ້ອຍຄິດພໍ້ໝວກຂອງນັກຮົບ
ໂຣແມັງ . ຄາວໜຶ່ງຕໍ່ມາ ຂ້ອຍຈຶ່ງຄິດອອກວ່າ ມັນແມ່ນ -
ບ່ອນຈັບຝາເຕົາໄຟນັ້ນເອງ .

ມີສຽງຖົກຖຽງກັນຄ່ອຍໆພາຍໃນຫ້ອງ ແລ້ວກໍໂຫມ ແຮງ
ຂຶ້ນໆ ຈົນບໍ່ຮູ້ວ່າແມ່ນສຽງໃຜຕໍ່ໃຜ ແລ້ວກໍມີສຽງໃຜຜູ້ໜຶ່ງ -
ເອີ້ນສຽງດູມາໃສ່ , ຈາກຂອບປ່ອງຢ້ຽມກະໂຕເທິງຫົວຂ້ອຍ:

" ອາວ ! ແມ່ນຊິຟັງກັນອ່ານປຶ້ມນັ້ນ ຫລືບໍ່ເກາະ ? "

ນັ້ນແມ່ນຊາຍໜຸ່ມຄົນຈ່ອຍໆຜົມຍາວຄົນນັ້ນລະ . ສຽງ-
ຄົນໂສເຫລົ້ກັນມິດວຽບລົງເປັນລຳດັບ ແລ້ວຈຶ່ງຍິນແຕ່ສຽງທຸ້ມ
ເລິກຂອງຜູ້ອ່ານ . ກອກຢາດູດຮຸ້ງວາບໆຂຶ້ນ ; ດົນໆກໍມີ ຜູ
ຂີດກັບໄຟຮຸ້ງແວັບພໍສ່ອງໃຫ້ເຫັນໃບໜ້າທີ່ໜີ້ກຄິດຮົ່ມຕອງ -
ແລະດວງຕາກໍຫົບຮັ່ງຕັ້ງໃຈຟັງ ຫລື ບາງຕອນກໍເບິກກວ້າງ -
ຈ້ອງຈັບບໍ່ວາງ .

ການອ່ານດຳເນີນໄປດົນ ຈົນຂ້ອຍຮູ້ສຶກເມື່ອຍຟັງຂຶ້ນມາ–ຫົວທີ່ວ່າ ຂ້ອຍກໍຄິດນັກຄຳເວົ້າອັນແຫລມຄົມ ຊົງພະລັງ ທີ່ເກາະກ່າຍກັນແບບງ່າຍດາຍ ແລະປະກອບຕົວເປັນຄວາມຄິດເຊີນຊວນໃຫ້ເຫັນພ້ອມນັ້ນຢູ່ .

ຖັດນັ້ນ , ຢ່າງກະທັນຫັນ , ຢ່າງບໍ່ຄາດຝັນ ຜູ້ອ່ານ ກໍຢຸດປັບ ແລ້ວທົ່ວທັງຫ້ອງກໍຟົດສະໜັ່ນໄປດ້ວຍປະໂຫຍກເວົ້າທີ່ຮຸນແຮງ :

" ບັກທໍລະຍົດ ! "

" ບັກນ້ຳເຕົ້າເປົ່າເອີ້ຍ ! "

" ມັນຖົ່ມນ້ຳລາຍໃສ່ບວກເລືອດວິລະຊົນຂອງພວກເຮົາ!

" ຫລັງການປະຫານ ເກເນຣາລົຟ ແລະ ອູລີຢານົຟ.." "

ແລະ ແລ້ວກໍມີສຽງຈາກຊາຍໜຸ່ມຜູ້ນັ່ງຢູ່ຂອບປ່ອງຢ້ຽມຫັ້ນອີກເຂົາຮ້ອງຂຶ້ນວ່າ :

" ທ່ານສຸພາບບຸລຸດ ! ເຮົາຄວນຢຸດເທາະ ອັນການດ່າວ່ານັ້ນນະ ! ແລ້ວມາພາກັນໂອ້ລົມຢ່າງເປັນການເປັນ ງານຊິບໍ່ດີກວ່າບໍ ? "

ຂ້ອຍເອງບໍ່ມັກການຖົກຖຽງຢູ່ແລ້ວ ຈຶ່ງບໍ່ສາມາດຕິດຕາມເຂົາເຈົ້າໄດ້ໝົດ . ມັນເປັນການຍາກສຳລັບຂ້ອຍ ທີ່ ໂດດເຕັ້ນນຳຄວາມຄິດຫລາຍໆແນວອັນແລ່ນສັບກັນໄປມາ ອີກຢ່າງ–ໜຶ່ງ ຂ້ອຍກໍບໍ່ມັກນິດໄສຖືດີໂອ້ອວດຂອງບັນດານັກໂຕວາທີ –ເຫລົ່ານັ້ນ .

ຊາຍໜຸ່ມຜູ້ນັ່ງຢູ່ຂອບປ່ອງຢ້ຽມໂນ້ມຕົວລົງມາ ເວົ້າ ນຳຂ້ອຍວ່າ :

" ເຈົ້າແມ່ນ ເປັສກົບ ຕວ່າບໍ່ ? ມາຈາກຣ້ານເຣັດ - ເຂົ້າຈີ່ຫມັ້ນມາ ? ຂ້ອຍຊື່ ເຟໂດເຊເຢັຟ . ພວກເຮົາ ຄວນຈະທຳຄວາມລຶ້ງເຄີຍກັນກວ່ານີ້ໄດ້ . ນີ້ນະ ມັນບໍ່ແມ່ນ ແນວເຮົາຊິໄດ້ຫຍັງຍອມ ບ່ອນນີ້ນະ...ພວກນີ້ຊິຖຽງກັນໄປ ແນວນີ້ເປັນຊົ່ວໂມງໆ ໂດຍບໍ່ມີປະໂຫຍດຫຍັງຫມົດ ! ເຮົາ ຫນີເທາະໄປ ? "

ຂ້ອຍເຄີຍໄດ້ຍິນເລື່ອງຂອງ ເຟໂດເຊເຢັຟ ມາແລ້ວ , ເຄີຍໄດ້ຍິນກ່ຽວກັບກຸ່ມຄົນທີ່ເຂົາຈັດຕັ້ງຂຶ້ນ ໄດ້ຍິນວ່າເປັນ ຈຸ ຄົນຫນຸ່ມທີ່ມີແນວຄຶດມີຫລັກຫມັ້ນຈິງຈັງແທ້ ; ແລະ ຂ້ອຍ ຍັງຕິດໃຈນຳສາຍຕາເລິກເຊິ່ງ ແລະ ໃບຫນ້າທີ່ເມີ້ນສີຂອງເຂົາ.

ຕອນທີ່ພວກເຮົາຍ່າງຂ້າມທົ່ງມານຳກັນ , ເຂົາສໍ້ ຖາມກ່ຽວກັບຊີວິດຂ້ອຍ : ວ່າຂ້ອຍລຶ້ງເຄີຍຊາວຜູ້ອອກແຮງງານ- ຫລາຍຄົນແດ່ບໍ ; ຖາມວ່າຂ້ອຍມັກອ່ານປຶ້ມຫຍັງ ? ຂ້ອຍມີເວລາຫວ່າງຫລາຍປານໃດ . ຖາມຫລາຍອັນຫລາຍແນວ, ແລ້ວເຂົາເວົ້າຂຶ້ນວ່າ :

" ຂ້ອຍໄດ້ຍິນເລື່ອງຂອງຮ້ານເຣັດເຂົ້າຈີ່ ເຈົ້ານັ້ນນະ, ມັນກໍແປກປະຫລາດຢູ່ໄດ້ ທີ່ເຈົ້າຍັງໄປງົມເສຍເວລາ ເຮັດແນວຕາຍໆຈັ່ງຊັ້ນ . ເຈົ້າຄຶດວ່າ ຊິໄດ້ຫຍັງ ຫຶ ? "

ຄວາມແມ່ນແທ້ ຂ້ອຍເອງກໍເລີ່ມຮູ້ສຶກມາແຕ່ດົນແລ້ວວ່າບໍ່ໄດ້ປະໂຫຍດຫຍັງຍອມ . ຂ້ອຍຈຶ່ງບອກເຂົາຕາມທີ່ຄຶດ. ຮູ້ສຶກວ່າເຂົາພໍໃຈຫລາຍ . ກ່ອນຈາກ ເຂົາຈັບມືຂ້ອຍສັ່ນ ທັງຫົວຫົວຍິ້ມເບີກບານ . ເຂົາບອກຂ້ອຍວ່າ ຈະອອກເດີນທາງໄປຈາກເມືອງນີ້ ພາຍໃນວັນຫນຶ່ງຫລືສອງວັນ ແລະ ຈັກສາມອາ

ທິດ ຈຶ່ງຈະກັບມາ . ເມື່ອເຂົາກັບມາແລ້ວ ເຂົາຈະສົ່ງຂ່າວ
ໃຫ້ຮູ້ວ່າຈະພົບກັນຢູ່ໃສ , ເຮັດແນວໃດ .

ວຽກງານຢູ່ຮ້ານ ພັດພວມເດີນດີຕາມວາດ ແຕ່ດ້ານຊີວິດ
ສ່ວນຕົວຂ້ອຍແມ່ນຍາກລົງທຸກມື້ . ພວກເຮົາຍ້າຍຮ້ານໃໝ່-
ແລະວຽກຂ້ອຍກໍແຮງໜັກຂຶ້ນຈຸກໄຈ . ນອກຈາກເຮັດ ວຽກ
ໃນໂຮງເຂົ້າຈີ່ແລ້ວ ຂ້ອຍຕ້ອງເອົາເຂົ້າຈີ່ກ້ອນນ້ອຍ ແລະ -
ເຂົ້າໜົມປັງໄປສົ່ງນຳເຮືອນຜູ້ສັ່ງຈອງ ແລະ ເອົາໄປຂາຍທີ່
ສະຖານີ ແລະ ທີ່ໂຮງຮຽນຂອງ " ພວກນາງສາວລູກຜູ້ດີ".
ບາງເທື່ອ ພວກນາງສາວເຫຼົ່ານີ້ ກໍປ່ອນຈົດໝາຍນ້ອຍ ໃສ່
ກະຕ່າເຂົ້າຈີ່ຂ້ອຍ . ຂ້ອຍປະຫລາດໃຈທີ່ເຫັນວ່າຈົດໝາຍ-
ເຫຼົ່ານີ້ຂຽນດ້ວຍຄວາມເວົ້າຂົດຽດ , ລາຍມືກໍແມ່ນລາຍ ມື
ເດັກນ້ອຍ , ແຕ່ຫາກຂຽນໃສ່ເຈ້ຍງາມລາຄາແພງ , ຂ້ອຍ
ຮູ້ສຶກແປກປະຫລາດໃຈ ທີ່ໄດ້ຈັບຕາສັງເກດເບິ່ງພວກນາງ -
ສາວຕາສົດໃສ ພາກັນມາຫຸ້ມອ້ອມກະຕ່າຂ້ອຍ ທັງເວົ້າກັນ ຈໍ
ແຈ ຕໍ່ຄ້ວຫລິ່ວຕາໃສ່ກັນ ທ່າງມີ້ນ້ອຍໆສິງູຫລາຍ ກໍຄວາ -
ເລືອກກ້ອນເຂົ້າຈີ່ . ຂ້ອຍເບິ່ງພວກນາງ ທັງເຝົ້າຖາມ ຕົວ
ເອງວ່າ ແມ່ນສາວໃດນໍ້ທີ່ຂຽນຂໍ້ຄວາມຂົດຽດແນວນັ້ນ , ຈັ່ງ
ແມ່ນຊາດວ່າໄຊຖ້ອຍຄວາມທີ່ໜ້າຜາງໝາຍ , ຄວາມທີ່ ບໍ່
ຄວນເອົາມາເວົ້າເລີຍ ຫລືວ່າພວກນາງຮອດບໍ່ຮູ້ຄວາມໝາຍ
ທີ່ແທ້ຈິງຂອງຄຳສັບເຫຼົ່ານັ້ນກໍເປັນໄດ້ , ເວລາດຽວກັນ -
ຂ້ອຍຄິດເລີຍໄປຫາ " ເຮືອນເລີງລົມ " ພູນ ແລະ ສົງໄສ
ວ່າ :

" ເປັນໄປໄດ້ບໍ່ວ່າ ສາຍໃຍທີ່ຫລຽວບໍ່ເຫັນນັ້ນໄດ້ເຊື່ອມ

ໂຍງສອງສະຖານທີ່ນໃສ່ກັນແລ້ວ ? "

ວັນຫນຶ່ງ ມີນາງສາວນ້ອຍເອິກເຕັມຜົມດຳ ເປຍຍາວລົງຮອດຫລັງ ມາລັດທາງຂ້ອຍຢູ່ຫອງທາງເຂົ້າ ທັງຊຸ່ມຊັບໄວງ-ວ່າ :

" ຂ້ອຍຊິໃຫ້ເຈົ້າ ໑໐ ໂກເປັກ ຖ້າເຈົ້າໄປສົ່ງ ຈົດຫມາຍນີ້ໃຫ້ "

ດວງຕາອ່ອນໂຍນຂອງນາງຫລໍ່ດ້ວຍນ້ຳຕາ , ນາງ ກັດຣີມສົບ , ຫນາ ແລະ ກົກຫູແດງ ດ້ວຍຄວາມອາຍ . ຂ້ອຍສະແດງຕົວເປັນສຸພາບບູລຸດ ປະຕິເສດເງິນ ໑໐ ໂກເປັກນັ້ນ ແຕ່ຮັບເອົາຈົດຫມາຍດັ່ງກ່າວໄປສົ່ງໃຫ້ນັກສຶກສາຄົນຫນຶ່ງ ທ່າທາງຈ່ອຍແຫ້ງ ຄືຄົນເປັນພະຍາດປອດ . ເຂົາເປັນລູກຊາຍຂອງຫົວຫນ້າສານສູງ . ເຂົາຈະໃຫ້ເງິນຂ້ອຍ ໕໐ ໂກເປັກ ໂດຍຈົກຫລຽນເສດນາມັບ ໂດຍທ່າທາງຄຶດຫນັກ ເມື່ອຂ້ອຍບອກວ່າ ຂ້ອຍບໍ່ຢາກໄດ້ເງິນດອກ , ເຂົາກໍຍັດຫລຽນເງິນ-ເຂົ້າຖົງຄືນ ແຕ່ບໍ່ຖືກຖົງ ຫລຽນເງິນນ້ອຍ ເລີຍຕົກຊະຕົກ - ຊາຍລົງພື້ນເຮືອນ .

ເຂົາແນມນຳມັນກົງໄປຢ່າງງົງໆ ເອົາມືຖູກັນຈົນຂໍ້ມືຫລັ່ນ ແລ້ວກໍເວົ້າພຶມໆ ທັງຖອນຫັນໃຈຢ່າງຫນັກຫນ່ວງ .

" ຊິເຮັດຈັ່ງໄດ໋ນໍບາດນີ້ ?...ເອົາລະ ,ລາກ່ອນເດີ. ຂ້ອຍຈະຕ້ອງຄຶດເບິ່ງກ່ອນ..."

ເຂົາຄຶດເຮັດແນວໃດແທ້ນັ້ນ ຂ້ອຍບໍ່ອາດຮູ້ໄດ້,ແຕ່ຂ້ອຍຮູ້ສຶກດູຕົນສາວນາງນ້ອຍ . ນາງຫາຍຫນ້າໄປຈາກໂຮງຮຽນໃນຕອນຕໍ່ມາ . ເມື່ອຂ້ອຍພົບອີກຄັ້ງໃຫມ່ ກໍເປັນເວລາ ສິບ

ຫ້າປີລຸ່ນມານີ້ . ນາງສອນໜັງສືຢູ່ໂຮງຮຽນແຫ່ງໜຶ່ງທີ່ກຣີມ ນາງປ່ວຍເປັນພະຍາດປອດແຫ້ງ ແລະ ເວົ້າເຖິງໂລກມະນຸດ ດ້ວຍຄວາມຄຽດຊັງສຸດທີ່ຍິ່ງ ຄືດັ່ງຄົນທີ່ ຊີວິດຖືກທຳຮ້າຍມາ ແລ້ວຢ່າງສາຫັດ .

ເມື່ອສົ່ງເຂົ້າຈີ່ແລ້ວ ຂ້ອຍໄດ້ນອນພັກບຶດໜຶ່ງ ແລ້ວຍາມແລງມາ ກໍຕ້ອງເຂົ້າເຮັດວຽກໃນໂຮງເຂົ້າຈີ່ອີກ ເພື່ອກຽມ-ເຂົ້າຈີ່ຫວານກ້ອນນ້ອຍໄວ້ໃຫ້ຮ້ານ ໃຫ້ແລ້ວທັນຕອນທ່ຽງຄືນ. ຮ້ານໃໝ່ຂອງເຮົາຕັ້ງຢູ່ໃກ້ໂຮງລະຄອນກາງເມືອງ ແລະ-ຄົນມາແວ່ຊື້ເຂົ້າຈີ່ຮ້ອນໆຕອນລະຄອນເລີກ . ແລ້ວວຽກ ນັ້ນຂ້ອຍຕ້ອງຄົ້ນແປ້ງສຳລັບເຂົ້າຈີ່ ແລະ ຂະໜົມປັງຕອນເຊົ້າ-ແລະມັນກໍບໍ່ຄືເດັກຫລິ້ນເຮືອນນ້ອຍຈັກດີ້ ອັນການຄົ້ນແປ້ງ ຕັ້ງ ໑໕-໔໐ ປູດດ້ວຍມືນະ .

ຈາກນັ້ນຂ້ອຍຈຶ່ງໄດ້ນອນອີກປະມານ ໔ ຫລື ໕ ຊົ່ວໂມງ ແລ້ວກໍລຸກຂຶ້ນມາຕັ້ງຕົ້ນເດີນສົ່ງເຂົ້າຈີ່ຂອງເຈົ້າອື່ນໃໝ່ອີກ.

ຊີວິດກໍດຳເນີນໄປແນວນີ້ລະ , ຈາກມື້ນີ້ຕື່ມໜ້າຕະຫຼອດ ເວລານັ້ນ ຂ້ອຍຮູ້ສຶກຄືຖືກຍູ້ດັນໃຫ້ເປັນຜູ້ປູກຫວ່ານເມັດພືດ - ແຫ່ງສິ່ງທີ່ຂ້ອຍຖືວ່າ " ສະຫລາດ , ຖືກຕ້ອງ ແລະ ອະມະຕະ " . ຂ້ອຍພັດເປັນຄົນເຂົ້າກັບຄົນງ່າຍຢູ່ແລ້ວ ພັດຍັງ ຮູ້ເລົ່າເລື່ອງໃຫ້ໝູ່ຟັງຢ່າງມີຊີວິດຊີວາອີກ ; ຄວາມຄິດຝັນ - ຂອງຂ້ອຍນັ້ນເກີດຈາກປະສົບພະການຕົວຈິງແດ່ ແລະຈາກປຶ້ມທີ່ອ່ານນັ້ນແດ່ . ຈາກເລື່ອງທຳມະດາທີ່ສຸດ , ເລັກນ້ອຍ ທີ່ສຸດ ຂ້ອຍກໍສາມາດຜູກຕິດຜູກຕໍ່ຂຶ້ນເປັນເລື່ອງທີ່ໜ້າຟັງ, ຕົວຢ່າງສ້າງຂຶ້ນ ໂດຍການປ່ຽນຮູບ "ສາຍໃຍທີ່ເບິ່ງບໍ່ເຫັນ "

ເຫລົ່ານັ້ນ , ຂ້ອຍລັ້ງເຄີຍນຳກຳມະກອນຫລາຍຄົນຢູ່ໂຮງ - ງານແກຼດສະຕົບນິກົຟ ແລະ ໂຮງຕ່ຳແຜ່ນ ອາລາຟູສີຟ ແລະ ໂດຍສະເພາະແລ້ວຂ້ອຍຕິດພັນນຳຊ່າງຕ່ຳຜ້າ ອາຍຸແກ່ ຄົນ ໜຶ່ງ - ນິກິຕາ ຣຸບສົຟ , ຄົນສະຫລາດ ແລະ ບໍ່ເຄີຍຍອມ ຢູລາ . ລາວເຄີຍເຮັດວຽກຕ່ຳແຜ່ນຢູ່ໂຮງງານຕ່າງໆເກືອບ ປາກວ່າຢູ່ທົ່ວປະເທດລັດເຊຍມາແລ້ວ .

" ໕໗ ປີແລ້ວ ທີ່ລຸງຍ່າງຢູ່ເທິງພື້ນແຜ່ນດິນນີ້ນະ ອະ - ເລັກໄຊ ລູກຮັກ , ມັກຊິມິດ - ຄຳແພງຂອງລຸງ , ຄວາມຫວັງອັນໃຫມ່ອ້ຽມຂອງລຸງເອີຍ ! ", ລາວມັກເອີ້ຍຊື່ ຂ້ອຍ ດ້ວຍສຽງແຫບຫາວພ້ອມຮອຍຍິ້ມໃນດວງຕາສີຂີ້ເຖົ່າ ຊຶ່ງ ມັກ ເຈັບຢູ່ສະເຫມີ ຈົນລາວຕ້ອງໃສ່ແວ່ນຕາດຳ ມີຂອບເປັນລວດ ທອງແດງ . ບ່ອນແວ່ນຕາຕັ້ງຢູ່ດັງ ເລີຍໄປຮອດກົກຫູມີຮອຍ ຄາບສີຂຽວໆຂອງສະຫນິມທອງແດງ . ພວກຫມູ່ຢູ່ໂຮງງານ- ຕ່ຳແຜ່ນນຳກັນເອີ້ນລາວວ່າ " ເຢຍລະມັນ " ເພາະວ່າລາວ ແຖຫນວດເຄົາຈອນຫູອອກຫມົດ ຈຶ່ງໄວ້ແຕ່ຫນວດເຄົາແຂວງສີຂີ້ ເຖົ່າອ້ອມປາກ . ລາວເປັນຄົນບ່າກວ້າງ ພຶ່ງພາຍ,ຕ່ຳເກິ່ງ ທ່າທີມ່ວນຊື່ນ ແຕ່ຫາກແຝງຄວາມເສົ້າຂືມຢູ່ສະເຫມີ .

" ລຸງມັກໄດ້ ລະຄອນສັດນະ, " ລາວເຄີຍເວົ້າ ທັ້ງ ວ່ຽງຫົວລ້ານເບື້ອງຊ້າຍລົງ, " ຈັ່ງແມ່ນຊ້າດເຂົາເຝິກ ມາ ຫມູ່ນັ້ນໄດ້ແນວໂດ້ນໍ ? ສັດເດຍລະສານແທ້ໆ ເຫັນບໍ່? ເຂົາ ຍັງແອບໄດ້ , ມັນກໍຫນ້າພາກພູມໃຈອີ່ຫລີ . ຄິດແຕ່ວ່າສັດຊື່ ຊື່ ມັນກໍເກັ່ງຈົນເຮົາຕ້ອງນັບຖືມັນ ! ພາໃຫ້ລຸງຄິດໄດ້ວ່າ : ອ້າວ ຊັ້ນຄົນເຮົາເດ້ , ມັນກໍຕ້ອງມີຫົນທາງທັດສອນກັນລະບໍ້,

ສອນໃຫ້ເຂົາຮູ້ຈັກໄຊ້ສະໝອງນັ້ນມາ . ພວກສັດເດຍລະ -
ສານັ້ນ ຊາວລະຄອນສັດເຂົາແອບມັນດ້ວຍນ້ຳຕານ, ແຕ່ ລືມ
ເຮົານີ້ ຊຶ່ງກິນເອງກໍໄດ້ດອກນ້ຳຕານນະ . ສິ່ງທີ່ເຮົາຕ້ອງ -
ການ ມັນແມ່ນນ້ຳຕານແນວຕ່າງ ນ້ຳຕານສຳລັບວິນຍານ ພູ້ມ
ດອກ ຊຶ່ງນ້ຳຕານຊະນິດນີ້ຫວາ–ຄວາມເມດຕາກະລຸນາ ຈັ່ງໄດ
ລະ ! ຈັ່ງຊັ້ນລະ ລູກເອີຍ ລຸງຈັ່ງວ່າ ເຮົາຄວນແກ້ບັນຫາ–
ດ້ວຍຄວາມເມດຕາກະລຸນາຕໍ່ກັນ ບໍ່ແມ່ນຈະແກ້ດ້ວຍໄມ້ຄອນຕີ
ທີ່ເຂົາເຮັດຢູ່ໃນໂລກເຮົາທຸກມື້ນີ້ ແມ່ນບໍ່ ບັກຫລ້າ ? "

ແຕ່ຕົວລາວເອງພັດບໍ່ໄດ້ແກ້ບັນຫາດ້ວຍຄວາມເມດຕາກະລຸນາປານໃດດອກ . ລາວມັກເວົ້ານຳຄົນ ແບບຖືຖືກແກມ - ເຍາະເຍີ້ຍ ; ແລ້ວເວລາຖຽງກັນ ລາວກໍມັກຕອບໂຕ້ ຮຸນແຮງ ຄືຢາກປະຈານໜ້າອີກຝ່າຍໜຶ່ງ . ຕອນທີ່ຂ້ອຍພົບ - ລາວທຳອິດນັ້ນ ແມ່ນຢູ່ຮ້ານຂາຍເບຍ , ລາວຖຽງເຂົາ ຕໍ່ຄວາມເຂົາຮຸນແຮງ ຈົນຫມໍ່ນັ້ນເກືອບຈະຕີລາວຕາຍ . ເຂົາຫັ້ນໄດ້ຟາດລາວບາດໜຶ່ງຫລືສອງບາດນີ້ລະ ແລ້ວຂ້ອຍກໍຟ້າວດຶງລາວອອກໄປຈາກສະຖານທີ່ນັ້ນ .

" ເຂົາຕີທ່ານເຈັບຫລາຍບໍ່ ? " ຂ້ອຍຖາມລາວຂະນະທີ່ພາກັນຍ່າງໄປໃນຄວາມມືດ ຜ່າສາຍຝົນຝອຍຂອງລະດູໃບໄມ້ຫລົ່ນ .

" ເຈັບຫວະ ? ອື ! ພວກມັນຮອດບໍ່ຮູ້ຊິຕີຊ້ຳເດ ! " ລາວຕອບເສີຍໆ , " ແຕ່ວ່າ ຟ້າວກ່ອນ , ເປັນຫຍັງໂຕ–ຈຶ່ງເອີ້ນເຮົາວ່າ "ທ່ານ" ລະ ? "

ນັ້ນແມ່ນການເລີ່ມຕົ້ນຄວາມແກ່ວນເຄີຍກັນ ຂອງພວກ -

ເຮົາ . ທຳອິດລາວມີແຕ່ຢາກຢອກເຍີ້ຍຂ້ອຍຢ່າງໄດ້ປຽບ , ແຕ່ບາດຕອນຂ້ອຍອະທິບາຍໃຫ້ລາວຟັງເຖິງເລື່ອງ " ສາຍ-ໃຍທີ່ຫລຽວບໍ່ເຫັນ " ວ່າມັນມີອິດທິພົນເໜືອຊີວິດເຮົາ ແນວໃດນັ້ນ ລາວກໍຫລົງຮອງອອກມາທັນທີວ່າ :

"ບ້າ - ຫມໍນີ້, ໂຕບໍ່ແມ່ນຄົນຕາຍໆຈັກດີ້ຕ່ວານີ້! ຟັງ-ວາດເວົ້ານີ້ນະ ! "

ຈາກນັ້ນ ຄວາມສຳພັນຂອງເຮົາສອງ ກໍ່ປ່ຽນມາເປັນ - ຄວາມສະໜິດສະໜົມຮັກແພງແບບພໍ່-ລູກກັນຈົນເຖິງຂັ້ນເອີ້ນຂ້ອຍດ້ວຍຊື່ເຕັມ ແລະ ຊື່ກາງ ເພື່ອສະແດງຄວາມນັບຖືຂ້ອຍ.

" ຄວາມຄິດຂອງລູກນະຖືກຕ້ອງແລ້ວ , ອາເລັກໄຊ - ມັກຊີມິດ ລູກຫລາ , ບັກໂຢກກູເອີ້ຍ! ເປັນຄວາມຄິດທີ່ດີ , ແຕ່ວ່າ ຊິບໍ່ມີໃຜເຊື່ອມັງດອກບັກຫລາ , ບໍ່ໄດ້ຜົນດອກ " .

" ແຕ່ລຸງເອງເຊື່ອຫລານຢູ່ຕີ້ ? "

" ລຸງນີ້ຫວະ...ລຸງນະສ່ຳຫມາກາງຖະຫນົນທໍ່ນັ້ນເອງ, ແຕ່ຄົນສ່ວນຫລວງຫລາຍ ເຂົາເປັນຫມາມີເຈົ້າຂອງ . ແລ້ວທາງເຂົາກໍຜູກຕິດກັບແມ່ນຫຍັງຫລາຍຢ່າງ ບໍ່ຈັກວ່າເມຍ ວ່າລູກ ຈັກແມ່ນຫຍັງຕໍ່ແມ່ນຫຍັງ . ແລະ ຫມາທຸກໂຕກໍບູຊາກົງຂັງຂອງມັນ . ພວກເຂົາບໍ່ເຊື່ອໂຕດອກ . ລຸງພໍມາແລ້ວຄົນທີ່ເປັນໂຕຕັ້ງໂຕຕີນະ , ຢູ່ໂຮງງານຕ່ຳແຜ່ນ ໂມໂຮຊິຟ. ຜູ້ເປັນໂຕຕັ້ງໂຕຕີກໍຖືກຟາດຫົວກ່ອນໂລດລະ...ແລ້ວຄົນເຮົາ. ເວລາຖືກຕີຫົວນະ , ມັນບໍ່ຄືກັນກໍ້...ເຈັບແລ້ວບໍ່ແມ່ນຊິລືມໄດ້ງ່າຍໆ " .

ພາຍຫລັງທີ່ລາວໄດ້ຮູ້ຈັກກັບ ຢາກົຟ ຊາປິດຊະນີກົຟຊ່າງ

ແປງໃນໂຮງງານແກ້ດສະຕິບນີກຟ ແລ້ວ ຮູ້ສຶກວ່າ ລາວເວົ້າຈາຕາງເກົ່າຫລາຍ . ຢາກົຟ ຊາຍຜູ້ປ່ວຍເປັນປອດແຫ້ງຄົນນັ້ນ ເປັນທັງນັກດິດກີຕ້າ ແລະ ຊຽວຊານດານຄຳພີສາ ສະຫນາ . ເຂົາເຮັດໃຫ້ລຽວ ຮູບສົຟ ປະຫລາດໃຈ ເປັນອັນ - ມາກ ຕໍ່ການປະຕິເສດພະເຈົ້າແບບເດັດຂາດຈິງຈັງ . ເຂົາທັງເວົ້າທັງໄອອອກມາເປັນເລືອດ , ຖືກຖຽງຢ່າງຮູນແຮງ- ວ່າ :

" ກ່ອນອື່ນຫມົດ ຂອຍບໍ່ໄດ້ຖືກສ້າງຂຶ້ນມາຕາມຮູບ ແບບໃຫ້ຄືກັບພະອົງ , ບໍ່ແມ່ນແນວນັ້ນຈັກດີ .ຊີວິດແມ່ນຄວາມ - ຮອບຮູ້ບໍ ? ຂອຍກໍຄືວ່າບໍ່ຮູ້ຫຍັງຈັກເມັດ ຫລືວ່າແມ່ນອຳນາດ? ຂ້ອຍກໍ່ບໍ່ສາມາດເຮັດຫຍັງໄດ້ . ຄວາມດີບໍ ? ຂອຍບໍ່ໄດ້ - ເປັນຄົນດີຫຍັງເລີຍ. ບໍ່ - ຂ້ອຍບໍ່ໄດ້ເປັນແນວໃດຫມົດ !- ປະກາມທີ່ສອງ : ຊີແມ່ນວ່າພະເຈົ້າເອງກໍ່ ຮອດບໍ່ຮູ້ຊ້ຳວ່າຊີວິດຂອຍຕອງລຳບາກຍາກເຂັນຂະຫນາດໄດ້ - ຊັ້ນບໍ ? ຫລືວ່າພະອົງຮູ້ ແຕ່ກໍ່ຊ່ວຍຫຍັງບໍ່ໄດ້ ; ຫລືວ່າ ເພິ່ນອາດ ຊ່ອຍໄດ້ຢູ່ ແຕ່ວ່າຕັ້ງບໍ່ຢາກຊ່ອຍຂອຍ ? ຫລືວ່າ, ປະການທີ່ສາມລະແມ່ນ ພະເຈົ້າບໍ່ໄດ້ສະຫລາດຮອບຮູ້ຫມົດດອກ , ບໍ່ມີ - ຄວາມສາມາດ ຫລືອຳນາດມາກມາຍແນວໃດດອກ ,ແລະກໍ່ບໍ່ມີຄວາມເມດຕາກະລຸນາລົ້ນເຫລືອແຕ່ຢ່າງໃດເລີຍ . ເປັນ- ແຕ່ວ່າ ພະເຈົ້າບໍ່ມີໃນໂລກ . ພະອົງເປັນພຽງສິ່ງທີ່ເຂົາສົມມຸດຂຶ້ນເທົ່ານັ້ນ . ເປັນເລື່ອງຂີ້ຕົວະກັນທັງຜອງ , ແຕ່ເຂົາຕົວະຂອຍບໍ່ໄດ້ດອກ ! "

ທຳອິດ ລຽວ ຮູບສົຟ ກໍ່ງຶງງວຍຈົນປາກບໍ່ອອກ , ລາວ-

ໂມໂຫຈົນໜ້າຂຽວ ແລ້ວກໍອອກປາກດ່າຢ່າງຮຸນແຮງ , ແຕ່ ປາກົຟ ຍົກເອົາຂໍ້ຄວາມບາງຕອນຈາກຄຳພີໄບເບິນມາປະ - ກອບ . ຄຳເວົ້າທີ່ເຄັ່ງຂຶມຂອງ ປາກົຟ ຊ່ອຍບັນເທົາຄວາມ ໂມໂຫຂອງລຸງ ຣຸບສົຟ ລົງແດ່ , ເຮັດໃຫ້ລາວມິດງຽບ ຈົມ ຢູ່ໃນຄວາມຄິດເຄືອງ .

ໃນເວລາຖົກຖຽງກັນນັ້ນ ປາກົຟ ຊາປົດນິກົຟ ມີທ່າທາງ ເປັນຕາຢ້ານຂະໜາດ , ຜິວໜັງໜ້າກ່ຳແດດ , ຜົມດຳ- ແລະຢິກຫຍອງປານຜົມຊາວຢິບຊີ . ເວລາເວົ້າ , ຮິມ ສົບ ແຫລງກໍເຜີຍໃຫ້ເຫັນແຂ້ວຂາວເປັນປະກາຍປານແຂ້ວໝາໄນ. ດວງຕາດຳຂອງເຂົາຈັບຈ້ອງ ເບິ່ງຝ່າຍກົງກັນຂ້າມຢ່າງໜັກ ໜ່ວງ ປານຈະສາມາດທັບມ້າງສິ່ງໃດໃຫ້ແຕກຫັກໄດ້ -ເປັນ ສາຍຕາທີ່ເຮັດໃຫ້ຂ້ອຍຄິດພໍ້ ສາຍຕາຂອງຄົນບ້າ .

ເມື່ອຈາກ ປາກົຟ ມາແລ້ວ ລຸງ ຣຸບສົຟ ເວົ້ານຳຂ້ອຍ- ເສົ້າໆວ່າ :

" ບໍ່ເຄີຍມີໃຜເວົ້າປະຕິເສດ ແລະ ຕ້ານພະເຈົ້າໃຫ້ລຸງ ໄດ້ຍິນແນວນີ້ມາກ່ອນເລີຍ . ລຸງກໍ່ອາດເຄີຍໄດ້ຍິນໄດ້ຟັງ ມາ ຫລາຍລະ ແຕ່ບໍ່ແມ່ນເລື່ອງແບບນີ້ . ໝັ້ນຄົງຊົ່ວຊີວິດບໍ່ຍິນອກ ທີ່ໃດດອກ . ໜ້າເສຍໃຈຢູ່ ! ໝໍຫາກເຮັດໃສ່ຕົວເອງ.. ຈົນບໍ່ມີທາງອອກ...ແຕ່ກໍເປັນຕາສົນໃຈຢູ່ - ນໍ້ ເປັນຕາສົນ ໃຈອີຫລີ ! "

ແຕ່ນັ້ນມາ ລາວກໍສະໜິດສະໜົມກັບ ປາກົຟ ຢ່າງໄວ- ວາ . ຄວາມເວົ້າຂອງອາຍປອດແຫ້ງ ປາກົຟ ກະຕຸ້ນ ໃຫ້ ລາວຕື່ນເຕັ້ນອີກແບບໃໝ່ , ລາວມັກເອົາມືສີຕາ ທີ່ມີດ ນິ້ວ

ຂອງຕົນຢູ່ເປັນນິດ .

" ໂອ-ລະແມ່ນແມວນີ້-ນໍ້ ! " ລາວວ່າທັງຍິ້ມຫົວແບບຂີ້ຫລັກ , " ເປັນແມວນີ້ ເຮົາກໍໂຍນພະເຈົ້າຖິ້ມໂລດລະບໍ້. ແລະຄັນຊິເອົາເລື່ອງພະເຈົ້າຊາກັນລະ , ອາຍຫລານຊາຍ-ຫົວແຫລມ ! ລຸງກະມີຄວາມຢາກວ່າຢູ່ຄືກັນ ກະບໍ່ແມ່ນໂຕພະເຈົ້າຊາແທ້ດອກ ທີ່ກ່ຽວຂ້ອງນຳລຸງ . ບັນຫາມັນບໍ່ແມ່ນຢູ່ ທີ່ພະເຈົ້າຊາ , ມັນແມ່ນເລື່ອງພວກເຈົ້ານາຍພູມຕ່າງຫາກ . ລຸງມີເຂົ້າກິນກັບເຈົ້າຊີວິດອົງໃດກໍໄດ້ - ຮອດວ່າພະເຈົ້າອິວານ ຜູ້ຮ້າຍຂາດພູມລະໄປ . ຂໍແຕ່ໃຫ້ພະອົງນັ່ງຢູ່ເທິງ ບັນລັງນັ້ນ , ພະເຈົ້າຊາເອີຍ ! ແລ້ວລະປົກຄອງໄປ ຄັນວ່າຊິມີຄວາມສຸກຍອນເປັນເຈົ້າຊີວິດນີ້ໄດ້ ພຽງແຕ່ວ່າໃຫ້ຂ້ອຍໄດ້ຕົກລົງເງື່ອນໄຂກັບນາຍຈ້າງຂອງຂ້ອຍແດ່ທີ່ນັ້ນດອກ ! ຄັນ ພະເຈົ້າຊາເຮັດແນວນີ້ໄດ້ແທ້ງກໍ່ ລຸງຊິເອົາໂສ້ຄຳພູມນະ ລາມ-ພະອົງໃສ່ກັບບັນລັງໄວ້ ແລະ ກໍຈະບູຊາພະອົງແທ້ງທີ່ນັ້ນລະ!"

ແລ້ວຫລັງຈາກ ໄດ້ອ່ານປື້ມເລື່ອງ " ພະເຈົ້າຄວາມຫິວ " ລາວກໍ່ປະກາດວ່າ :

" ແມ່ນແລ້ວລະ , ມັນເປັນແນວນີ້ແທ້ງ "

ຄັ້ງທຳອິດທີ່ລາວໄດ້ເຫັນປື້ມທີ່ລັກລອບພິມສູ່ກັນອ່ານນັ້ນ - ລາວຖາມຂ້ອຍວ່າ : "ໃຜຂຽນເລື່ອງນີ້ໃຫ້ໂຕ-ຫາ ? ເອົາເວົ້າແຈ້ງດີໄດ້ນີ້ . ບອກເຂົາໃຫ້ແດ່ວ່າ ລຸງຂອບໃຈເດີ້ "

ລຸງ ຮຸບສົຟ ນັບວ່າເປັນບຸກຄົນທີ່ຫິວກະຫາຍຄວາມຮູ້ຢ່າງບໍ່ອີ່ມເຕັມເປັນ . ລາວຕິດຕາມຄວາມຄິດທີ່ນອກຮີດນອກຮອຍຂອງ ຢາກົຟ ຊາປິດຊະນິກົຟ ຢ່າງຕັ້ງໜ້າຕັ້ງຕາ , ເອົາ-

ໃຈໃສ່ຈົດຈໍ່ ແລະລາວກໍສາມາດນັ່ງຟັງຂອຍເລົ່າເລື່ອງປັ້ນ - ຕ່າງໆ ໄດ້ເທື່ອລະຫລາຍຊົ່ວໂມງ . ເມື່ອຟັງແລ້ວ ລາວ ກໍ ສະແດງອອກວ່າ ພໍອົກພໍໃຈຫລາຍ ລາວຫົວຂັນເອີກຈົນຄ້ັງກຄໍແວນ ທັງຊູທານວ່າ :

" ສະຫລາດແທ້ງຄົນເຮົານີ້ ! ສະຫລາດອີ່ຫລີໄດ ! "

ການທີ່ຕາລາວມັກເຈັບຢູ່ເລື້ອຍນັ້ນ ເຮັດໃຫ້ອ່ານປັ້ມບໍ່ສະດວກ , ແຕ່ລາວກໍເປັນຄົນຮູ້ຫຍັງຫລາຍຄືກັນ . ຫລາຍໆ - ເທື່ອເລີຍລະ ທີ່ລາວເຮັດໃຫ້ຂອຍປະຫລາດໃຈ ດ້ວຍຂ່າວ - ແປກໆຂອງລາວ .

" ມີຊ່າງເຮັດເຮືອນຊາວ ເຢຍລະມັນຄົນໜຶ່ງ . ເຂົາເປັນຄົນມີສະໝອງຮອບຮູ້ພິເສດຫລາຍ ຈົນເຈົ້າຊີວິດຕ້ອງ - ເອີ້ນເຂົາເຂົ້າໄປປຶກສາ "

ຖາມໄປຖາມມາ ຂອຍຈຶ່ງຮູ້ໄດ້ວ່າ ລາວເວົ້າເຖິງ <u>ເບແບນ</u>(*)

" ເຮັດວ່າໄດ ລຸງຈຶ່ງຮູ້ເລື່ອງເພິ່ນຜູ້ນີ້ ? "

" ກະຮູ້ຊັ້ນລະ " ລາວຕອບຕັດບົດ ທັງເກົາຫົວ .

ຢາກົຟ ຊາປົດຊະນິກົຟ ບໍ່ສົນໃຈນຳຄວາມສັບສົນວຸ່ນວາຍຂອງຊີວິດເລີຍ , ເຂົາມີແຕ່ຈະຕັດພະເຈົ້າອອກໃຫ້ຫວິດເວັ້ນເດັດຂາດ , ຕ້ອງການຈະລົບລ້າງອຳນາດພວກພະ ແລະ - ເໜືອສິ່ງອື່ນໃດແມ່ນເຂົາຊັງພວກນັກບວດ .

ວັນໜຶ່ງ ລຸງ ຣູບສົຟ ອອກປາກຖາມຂ້ອຍດັ່ງວ່າ :

" ເປັນຫຍັງນໍ້ ຢາກົຟ ໂຕຄືວ່ານແຕ່ຊຸທັບນາງພະເຈົ້າຢູ່ - ແນວນີ້ແທ້ ? ຄືບເຮັດແນວອື່ນແດ່ ? "

ຄຳຖາມນີ້ແຮງຮັດໃຫ້ ຢາກົຟ ຮ້ອງຂຶ້ນຢ່າງຂົມຂື່ນ ໃຈກ່ວາເກົ່າອີກ :

" ຮວາຍ ! ແລ້ວມັນມີຫຍັງອີກຊັ້ນນ່າ ທີ່ມາກີດກັ້ນ - ຂວາງຂັ້ນຫົນທາງຂ້ອຍນະ ?ຫາ...ມີຫຍັງອີກ?ເກືອບ ຊາວປີມາແລ້ວ ທີ່ຂ້ອຍມີສັດທາໃນພະເຈົ້າ , ມີຄວາມເກງກົວພະເຈົ້າ ແລະ ກໍອົດທົນຕະຫລອດມາ ເພາະເພິ່ນວ່າ ຫ້າມບໍ່ໃຫ້ຖາມ ທຸກສິ່ງທຸກຢ່າງຖືກບັນຊາມາແຕ່ເທິງພູ້ນ ວ່າຊັ້ນ ! ພໍປານຖືກມັດທັງຕີນທັງມື ແລະ ຂ້ອຍກໍອ່ານຄຳພີໃບເບີນ ຢ່າງຖີ່ຖ້ວນ ກໍໄດ້ພົບວ່າ ມັນລ້ວນແຕ່ແມ່ນຄົນແຕ່ງຂຶ້ນເອົາທັງນັ້ນ! ແຕ່ງຂຶ້ນຊື່ໆ- ອ້າຍ ຣູບສີ້ຟ ເອີຍ ! "

ເອົາແກວ່ງແຂນ ຄາຍກັບວ່າພວມຈະແຫວກຜ່າ " ສາຍໃຍທີ່ຫລໍ່ຮູບເຫັນ " ນັ້ນ,ທັງຮ້ອງທັງຄາງຄືຊິໄຫ້ .

" ແລ້ວ ບາດນີ້ຂ້ອຍພັດຊິຕ້ອງຕາຍກ່ອນເວລາອັນຄວນ, ຍ້ອນຫຍັງ ? ກໍຍ້ອນສາເຫດເຊື່ອວ່າມີພະເຈົ້ານັ້ນຕ່ວາ ! "

ຂ້ອຍເຄີຍໄດ້ຮູ້ຈັກຄົນມາກໍຫລາຍແລ້ວ ລ້ວນແຕ່ເປັນຜູ້ ທີ່ໜ້າສົນໃຈທັງນັ້ນ . ຂ້ອຍມັກແວໄປຢ້ຽມຢາມບັນດາສະຫາຍເພື່ອນເກົ່າຢູ່ໂຮງຮັດຂະໜົມ ເຊັມໂອນົຟ ນັ້ນເລື້ອຍໆ . ຍາມໃດ ພວກເຂົາເຈົ້າກໍດີໃຈທີ່ພົບໜ້າຂ້ອຍ ແລະ ກໍສະແດງອອກວ່າສົນໃຈຢາກຟັງເລື່ອງທີ່ຂ້ອຍເວົ້າ . ແຕ່ລຽວ ຣູບສີຟຢູ່ທາງທາເຮືອ , ສ່ວນ ຢາກົຟ ຊາປົດຊະນີກົຟ ພັດຢູ່ຊຸມຊາວຕາຕາ ເລີຍເຂດກາບານ ອອກໄປອີກ , ຈຶ່ງຊຸມເຮືອນຂອງຄົນທັງສອງຈຶ່ງນັບວ່າຢູ່ໄກກັນຮອດ ໕ ກິໂລແມັດ , ຈົນຂ້ອຍເອງກໍດົນໆຈຶ່ງໄດ້ໄປຢາມເຂົາເຈົ້າ . ສ່ວນວ່າເຂົາເຈົ້າຈະ

ມາຢາມຂ້ອຍນັ້ນ ບໍ່ຖ້າເວົ້າຮອດກໍຢ່າ . ຂອງວ່າຂ້ອຍບໍ່ ມີບ່ອນຈະຕ້ອນຮັບເຂົາເຈົ້າເລີຍ ; ນອກຈາກນີ້ແລ້ວ ຊ່າງ - ເຣັດເຂົ້າຈີ່ຜູ້ໃຫມ່ ຊຶ່ງເປັນທະຫານເກົ່າ ກໍເປັນຜູ້ແກວ່ນເຄີຍກັບພວກຕໍາຫລວດ . ເດີ່ນບ້ານເຮົາ ກໍຕິດກັບເດີ່ນດ້ານຫລັງຂອງກອງບັ້ນຊາການຕໍາຫລວດອີກ . ຍັງບໍ່ແລ້ວຫມໍ່ນັ້ນ ເພີ່ນຜູ້ຕໍາຫລວດຫນຸ່ມໆໃສ່ເຄື່ອງແບບສີຟ້າ ກໍພັດມັກປິ້ນຮ້ອມມາຮັບເອົາເຂົ້າຈີ່ກ່ອນນ້ອຍໄປໃຫ້ນາຍພັນຕໍາຫລວດ ແລະເຂົ້າຈີ່ທໍາ ມະດາສໍາລັບຕົນເອງ . ຍິ່ງກ່ວານີ້ ຂ້ອຍພັດຍັງຖືກກໍາຊັບບໍ່ໃຫ້- " ປະພຶດຕົວເປັນທີ່ສະດຸດຕາ "ອີກ ທັງນີ້ ເພື່ອເຣັດແນ່ວໃດໃຫ້ເບັດຄວາມສົນໃຈຂອງພວກເຂົາໄປຈາກຮ້ານຂອງເຮົາ .

ບັດນີ້ ຂ້ອຍເລີ່ມແນມເຫັນລະ ວ່າວຽກງານຂອງຂ້ອຍນັບມື້ນັບຄາດເຄື່ອນໄປຈາກຈຸດປະສົງເດີມ . ຄືໃນຮ້ານ ເມື່ອຂາດການດູແລເຂັ້ມງວດ ກໍເລີຍຖືວິສາສະຍິບບາຍເອົາເງິນ-ຈາກລິ້ນຊັກຕາມລໍາພັງໃຈຂົ້ນຊັກໄຊ ແລະບໍ່ເອົາຫົວຊາຕໍ່ວຽກອັນຈໍາເປັນຈົນໃນທີ່ສຸດເກືອບ ບໍ່ມີເງິນຈ່າຍຄ່າແປ້ງ ຕັ້ງຫລາຍເທື່ອຫລາຍທີ . ດເຣັນກົຟ ປະກາດຫົວຍົ້ມແຫ້ງໆ - ແລະ ລູບເຄົ່າຢູ່ຄາງວ່າ :

" ເຮົາພວມຊົ້ມລະລາຍແລ້ວ "

ເພີ່ນຜູ້ມີ້ກໍຄືກັນ , ເປັນອີກຄົນຫນຶ່ງທີ່ເຫັນວ່າ ຊີວິດ ນັ້ນຍາກລໍາບາກຍິ່ງຂຶ້ນທຸກມື້ . ນາສະຈາ ສາວຜົມແດງຜູ້ ພວມຖືພາທ້ອງ ກໍມັກຮ້າຍວ່າໃສ່ເຂົາ . ນາງຂູ່ເຂົາຟູ້ງຄືແມວ ທີ່ພ້ອມຮ້າຍ , ດວງຕາສີຂຽວຂອງນາງມັກຈະມອງໂລກ ຢ່າງແຄ້ນເຄືອງໃຈສະເຫມີ .

ເມື່ອຄົນທັງສອງພົບກັນ ນາງຈະຍ່າງກົງໄປໃສ່ ອັງເດຼອິ ພໍ່ປານບໍ່ມີເຂົາຢູ່ຫັ້ນ , ສ່ວນເຂົາພັດຫລີກທາງໃຫ້ ຄືກັນກັບ-ຄົນຮູ້ສຳນຶກຜິດ ແລະ ຫລຽວນຳຫລັງນາງໄປ ທັງຖອນໃຈ .

ມີບາງເທື່ອ ເຂົາກໍມາຈົ່ມໃຫ້ຂ້ອຍຟັງ .

" ແມ່ນຫຍັງໆ ກໍກາຍເປັນເລື່ອງຫລົ້ມເຮື້ອນນ້ອຍ ໄປໝົດ . ທຸກຄົນພະຍາຍາມ ຈະຢິບສວຍ ເອົາສິ່ງທີ່ຢູ່ມໍ່ມື.ຈັກວ່າຈິ່ງໄດ້ຫຍັງຂຶ້ນມາ ? ຂ້ອຍເຄີຍຊື້ຖົງຕີນມາໃສ່ເຈົ້າຂອງ ຝິຣູ່ . ຈັກວ່າມັນເສຍໄປໃສໝົດໃນມື້ນັ້ນເລີຍ " .

ເລື່ອງຖົງຕີນນັ້ນກໍຄືວ່າເປັນເລື່ອງຕະຫລົກຫລົ້ມ , ແຕ່ຂ້ອຍເອງຫົວບໍ່ອອກ . ຂ້ອຍເຫັນມາຕະຫລອດວ່າ ຊາຍທີ່ບໍ່ມີຄວາມເຫັນແກ່ຕົວຄົນນີ້ ໄດ້ພະຍາຍາມຕໍ່ສູ້ຄົ້ນຮົນທຸກທາງເພື່ອເຮັດວຽກທີ່ເປັນປະໂຫຍດ , ແຕ່ຄົນທີ່ຢູ່ອ້ອມຮອບຕົວເຂົາພັດມາມ້າງເພວຽກງານຂອງເຂົາ ແບບໄຮ້ຄວາມຄິດແນວນີ້ . ເດເຣັນກົຟ ບໍ່ເຄີຍຫວັງຈະໃຫ້ໃຜມາຮູ້ບຸນຄູນເຂົາດອກ ແຕ່ວ່າຄົນເຫລົ່ານີ້ ກໍຄວນຈະປະຕິບັດຕໍ່ເຂົາໃຫ້ດີກວ່ານີ້ແດ່ ເຂົາຄວນຈະໄດ້ຮັບຄວາມເຄົາລົບຮັກແພງກວ່ານີ້ . ຄອບຄົວຂອງເຂົາຕ້ອງແຕກແຍກລົ້ມແຫລວຢ່າງໄວວາ : ພໍ່ກາຍເປັນ ຄົນບ້າໆບໍ່ໆ , ມີແຕ່ຄວາມຫວາດກົວຕໍ່ສິ່ງສັກສິດ ; ນ້ອງ ຊາຍກາຍເປັນຄົນຕິດເຫລົ້າຕິດແມ່ຍິງ ; ນ້ອງສາວກໍຄືກັນກັບ ຄົນແປກໜ້າ ເບິ່ງຊິ່ງນາງຄືໄດ້ພົວພັນກັບບ່າວນັກສຶກສາຜົມສີນ້ຳຕານຄົນນັ້ນ ແລ້ວກໍຜິດຫວັງ . ຂ້ອຍເຫັນນາງຕາບວມ ແດງຍ້ອນຮ້ອງໄຫ້ຢູ່ເລື້ອຍ ແລະ ຂ້ອຍກໍເລີ່ມຄິດຊັງທັງໜ້າໜໍ່ນັກສຶກສາຄົນນັ້ນ .

ຂ້ອຍຄິດວ່າ ຕົນເອງຫລົງມັກ ມາຣິອາ ເດເຣັນໂກວາ ແລະ ຂ້ອຍກໍມັກນາງ ນາເດັຊດາ ເຊບາດໂຕວາ ຜູ້ ຊ່ອຍຂາຍຂອງຢູ່ຮ້ານນັ້ນນຳອີກ ; ນາງສາວຄົນນີ້ແກ້ມແດງ ຮ່າງອວບ , ຮີມສົບມີຮອຍຍິ້ມອ່ອນຫວານ ຄືຍິ້ມເດັກນ້ອຍ ຢູ່ສະເຫມີ . ເວົ້າແລ້ວ ຂ້ອຍພ້ອມຢູ່ໃນໄວທີ່ຈະຮັກເພດກົງ ກັນຂ້າມ . ອາຍຸຂອງຂ້ອຍ ແລະ ຊີວິດທີ່ຂາດໆແວ່ງໆ ເຮັດໃຫ້ຂ້ອຍມີຄວາມຕ້ອງການ ທີ່ຈະຜູກພັນກັບຜູ້ຍິງ ອັນເປັນ ຄວາມຕ້ອງການທີ່ອ່າວຢາກຊ້າໄປແລ້ວ ຫລາຍກວ່າຈະແມ່ນໄວກ່ອນອາຍຸ . ຂ້ອຍຕ້ອງການຄວາມອ່ອນໂຍນຂອງແມ່ຍິງຫລື ຢ່າງນ້ອຍທີ່ສຸດ ກໍແມ່ນຕ້ອງການຄວາມສົນໃຈຖາມເພື່ອນຈາກເພດຍິງ . ຕ້ອງການໃຜຜູ້ຫນຶ່ງ ພໍມາເປັນເພື່ອນລົມ ພໍໃຫ້ ຂ້ອຍໄດ້ເລົ່າເລື່ອງຂອງຕົວເອງສູ່ນາງຟັງ ຢ່າງບໍ່ປິດບັງ , ຕ້ອງການໃຜຜູ້ຫນຶ່ງ ເຂົ້າມາຈັດລະບຽບຄວາມນຶກຄຶດທີ່ສັບສົນບໍ່ຕິດຕໍ່ກັນ ຫລືຄວາມວຸ້ນວາຍໃຈຕ່າງໆຂອງຂ້ອຍໃຫ້ເຂົ້າຮູບ ເຂົ້າຮອຍຂຶ້ນ .

ຂ້ອຍບໍ່ມີຫມູ່ສະຫນິດເລີຍຈັກຄົນ ແລະ ກໍບໍ່ມັກພວກທີ່ເຫັນວ່າຂ້ອຍນີ້ເປັນພຽງ " ວັດຖຸດິບທີ່ຍັງຕ້ອງນຳມາພັດທະນາ " ຈຶ່ງບໍ່ຕ້ອງການຈະໄປສາລະພາບຄວາມໃນໃຈນຳພວກເຂົາ - ເຫລົ່ານັ້ນ . ຍາມໃດທີ່ຂ້ອຍລອງເວົ້ານຳພວກເຂົາໃນເລື່ອງທີ່ນອກເຫນືອໄປຈາກສິ່ງທີ່ເຂົາສົນໃຈແລ້ວວ່າຊັ້ນ ແມ່ນ ພວກເຂົາຈະສັ່ງສອນຂ້ອຍໂລດວ່າ :

" ໂຕຢ່າໄປສົນໃຈເລີຍເລື່ອງນັ້ນ ! "

ກູຣິ ເປັດຍົບ ຖືກຈັບ ແລະ ຖືກສົ່ງໄປຢູ່ຄຸກ ເກັດສຕິ ທີ່

ນະຄອນ ແຊັງປີເຕີບວກ . ແມ່ນເຖົ້າຕຳຫລວດ ນິກໂຟຣິຊ
ເປັນຄົນບອກຂ່າວນີ້ແກ່ຂ້ອຍ ຕອນພໍ້ກັນກາງຖະໜົນແຕ່ເຊົ້າໆ.
ເຂົາຍ່າງຊ້າໆມານຳທາງ , ຍ່າງສ່ວນທາງກັບຂ້ອຍ, ເບິ່ງ
ຫລຽນກາຄຳຊອບຫອຍຍ້ຳຍ່າງປານວ່າຫາກໍກັບມາຈາກ ໄປ
ເດີນສວນສະໜາມ , ທ່າທາງຂິງຂັງຄຶພ້ວມໄຊຄວາມຄິດ -
ໜັກ . ຕອນຍ່າງຜ່ານກັນ ເຂົາຍົກມືແຕະໝວກແກັບ,ຜ່ານ
ກາຍໄປໂດຍບໍ່ປາກບໍ່ຈາ ; ແຕ່ບາດແລວພັດຢຸດຊະງັກຢູ່ຫລັງ
ຂ້ອຍ ທັງເວົ້າປົກອອກມາວ່າ :

" ກູຣິ ອາເລັກຊັງໂດວິຊ ຖືກຈັບມື້ຄືນນີ້ "

ເຂົາຫລຽວຊ້າຍ ແລຂວານຳເສັ້ນຖະໜົນແລ້ວບອກ ຕື່ມ
ສ່ຽງຄ່ອຍໆ ທັງໂບກມືຢ່າງສິ້ນຫວັງວ່າ :

" ເທື່ອນີ້ ຄົງຈະແລ້ວເລີຍລະ ໝາດູຕົນມັນ ! "

ທີ່ຫາງຕາເຊື່ອງຊ້ອນເລົ່ກນຂອງມັນ ຄາຍຄືມເມັດນ້ຳຕາ
ຫລໍ່ຢູ່ .

ຂ້ອຍຮູ້ວ່າ ເປົ້ດຍົບ ເອງກໍ້ຮູ້ຕົວວ່າຈະຖືກຈັບ . ເຂົາ-
ບອກຂ້ອຍເອງ ທັງເຕືອນໃຫ້ຂ້ອຍມີຫລີກລ່ຽງຈາກເຂົາ;ແລະ
ເຂົາຍັງໄດ້ຂໍໃຫ້ຂ້ອຍໄປບອກເຕືອນລູງ ຣູບສິຟ ຊິ່ງເຂົາກໍຮັກ
ແພງແລະຜູກພັນຄືກັນກັບຂ້ອຍ .

ນິກໂຟຣິຊ ກົ້ມໜ້າລົງແນມພື້ນຖະໜົນ ແລະ ຖາມຂ້ອຍ
ສຽງເນີບໆວ່າ :

" ຄຶບໍ່ໄປຫລິ້ນນຳກັນແດ່ວ້ຍ ? "

ແລ້ວມື້ນັ້ນ ຂ້ອຍເລີຍໄປຫາເຂົາຢູ່ປ້ອມ . ເຂົານອນຫາ
ກໍ່ຕື່ນ , ນັ່ງກິນນ້ຳກະວາສ ຢູ່ຂອບຕຽງ . ເມຍເຂົາ ພວມ

ຕາບສັ້ງຢູ່ແຄມປ່ອງຢ້ຽມ .

" ເອີ ເລື່ອງມັນກະເປັນແນວນີ້ລະ " ເຂົາວ່າທັງເກົາ ເອິກທີ່ມີຂົນຫນາປົກ ແລະ ຫລຽວຂານຫອງມາເບິ່ງຂອຍຢ່າງ ໄຊຄວາມຄິດ . " ພວກນັ້ນໄປຈັບມັນ ພໍ້ຫມໍ້ໃສ່ນ້ຳເມີກ ພິມ ເພື່ອພິມໃບປີວຕາມພະຈັກກະພັດ " .

ເຂົາຖີ້ມນ້ຳລາຍລົງພື້ນ ແລວອວາຍໄປເວົ້ານຳນາງເມຍ ດວຍສຽງຮາຍໆ :

" ເອົານາໃຫຽ ສົ້ງຫັ້ນ ! "

" ຟ້າວກ່ອນແມ ຊິແລວດຽວນີ້ " ນາງເມຍຕອບ ໂດຍ ບໍ່ເງີຍຫນາ .

" ສາວນີ້ກໍດູຕົນມັນຄືກັນ " ຕຳຫລວດເຖົ້າຍົກຄິ້ວ ບອກ ຫມາຍວ່າເມຍເຂົາ " ໄທຫມືດນີ້ ! ກູກໍເສຍໃຈຄືກັນເວີຍ! ຖາມວ່ານັກສຶກສາຕົວຄົນດຽວ ແມ່ນມັນຊິໄປເຮັດອີ່ຫຍັງ ຕານ ອຳນາດພະເຈົ້າຈັກກະພັດໄດ້ ? "

ເຂົາສູບສັ້ງເສືອແລະ ວາ :

" ບໍດຽວຊິກັບມາດອກ . ມື້ງຊຸ້ມຫມໍ້ຊາໄວ້ເດີ້ ! "

ເມຍເຂົານັ່ງຢູ່ບໍ່ເຫນັງບໍ່ຕີງ ສາຍຕາແນມລອຍໄປ ນອກ ປ່ອງຢ້ຽມ . ພໍແຕປະຕູອັດກັບນຳຫລັງເຂົາ ນາງກໍຫັນວັບໄວ ວາ ເຍີ່ງກຳປັ້ນຂຶ້ນໃສ່ເຂົານຳຫລັງ ກັດແຂວເວົ້າເປັນເດືອດ ເປັນແຄນວາ :

" ບັກເຖົ້າຊາດຊົ່ວ ! ຮ້ຍ ! "

ໃບຫນາຂອງນາງໄຄຍອມຮອງໄຫຫລາຍ . ຕາຂາງ - ຊາຍບວມຊ້ຳ ຈົນຊືມບໍ່ໄດ້ . ນາງລຸກຍ່າງໄປຈັດການ ກັບ

ການກ້ຳຊາ ແລະ ຊື່ມຂ້ອຍຢ່າງໂມໂຫແຮງວ່າ :

" ເບິ່ງດີ ຂ້ອຍຊິພາໂລມັນ ! ຊິແກແຄ້ນມັນຄືກັນ. ຊິເອົາຈົນມັນໄດ້ຫອນຢູ່ຄືຫມາໄນນີ້ ! ເຈົ້າບໍ່ຕ້ອງໄປເຊື່ອ ມັນເນີ້ ຢ່າຟັງມັນແມ່ນແຕ່ຄຳດຽວ ! ມັນຕົວະຫມົດນັ້ນລະ .ມັນຊອກທາງຊິຈັບເຈົ້າຢູ່ . ເຈົ້າຮູ້ບໍ່ ມັນບໍ່ເຄີຍດູຕົນໃຜເປັນ - ດອກ . ມີແຕ່ມັ້ນຊິຫາທາງຫາງແຮ້ວເອົາເຈົ້າ .ມັນຮູ້ເລື່ອງຂອງເຈົ້າຫມົດແລ້ວ . ອາຊີບຂອງມັນລະ-ບັກມັກໂຫມະມູດ-ນັ້ນ !

ນາງຍ່າງມາໃກ້ຂ້ອຍ ແລ້ວເວົ້າສຽງອ່ອນສຽງອອນປານຄົນມາຂໍທານ .

" ເຈົ້າຊິເຮັດດີນຳຂ້ອຍແນ່ບໍ່ໄດ້ຫວະ -ຫາ ? "

ແມ່ຍິງຄົນນີ້ ເປັນທີ່ຫນ້າລັງກຽດສຳລັບຂ້ອຍ ; ແຕ່ສາຍຕາທີ່ນາງສົ່ງມາທາງຂ້ອຍ ສ່ອງແສງຂອງຄວາມທຸກທໍລະມານອັນເລິກແລບ ຈົນຂ້ອຍຕ້ອງເອົາແຂນໂອບກອດເອົານາງເຂົ້າມາແລະເອົາມືລູບຜົມທີ່ຫຍຸ້ງເຫຍີງຂອງນາງ , ຜົມນັ້ນ ທັງຫຍາບກະດ້າງ ແລະ ເປັນມັນຫນຽວຕິ .

" ຫວ່າງນີ້ ລາວພວມຕິດຕາມໃຜຢູ່ ? "

" ພວກຢູ່ເຮືອນຫອງເຊົ່າ ຢູ່ຖະຫນົນ ຣິບນໍຣຽດສະກາ-ຢາ ຫັ້ນເດ "

" ຊົ່ວ່າ ຈັ່ງໃດນໍ້ ? "

ນາງຍິ້ມ ແລະ ຕອບວ່າ :

" ຄັນສິມມູດວ່າຂ້ອຍບອກລາວ ເລື່ອງເຈົ້າຖາມຂ້ອຍນີ້-ເດ ເອົາ ? ເນ ! ລາວມາແລ້ວ-ລາວມີລະທີ່ນຳຈັບກູຣິ "

ແລ້ວນາງກໍເວັ້ນຈາກຂ້ອຍໄປທາງເຕົາໄຟ .

ເຖົ້ານິກິໂຟຣິດ ເອົາເຂົ້າຈີ່ ,ເປຍຫມາກໄມ້ແລະເຫລົ້າວິດກາ ມາ . ພວກເຮົານັ່ງລົງ ກິນນ້ຳຊານຳກັນ .ມາຣິນານັ່ງຂ້າງຂ້ອຍ ແລະ ເອົາໃຈໃສ່ປ້ອນຂອງກິນໃຫ້ຂ້ອຍເພື່ອ ສະແດງຄວາມຮັກແພງ . ຕາຂາງດຽວທີ່ຍັງເບິ່ງໄດ້ຂອງ ນາງແນມເບິ່ງຫນ້າຂ້ອຍແບບອ່ອນຫວານ ໃນຂະນະທີ່ ຜູ້ເປັນສາມີຂອງນາງພວມເທດສັ່ງສອນເລື່ອງສິນທຳໃຫ້ຂ້ອຍຟັງ .

" ມັນຢູ່ໃນຫົວໃຈຄົນ , ຢູ່ໃນກະດູກກະດຽວຂອງເຂົາ-ພູ້ນນະ , ອັນສາຍໃຍທີ່ຫລຽວບໍ່ເຫັນນັ້ນນະ . ລອງ ເບິ່ງ-ດຶງໃຫ້ມັນຂາດອອກມາເບິ່ງ ! ລອງເບິ່ງ - ລອງຫລິກ ດຶງຮາກມັນອອກລອງເບິ່ງ ! ພະເຈົ້າຊາ - ສຳລັບປະຊາ ຊົນແລ້ວ - ບໍ່ຕ່າງຫຍັງກັບພະເຈົ້າດອກ ! "

ແລ້ວໃນທັນໃດ ເຂົາກໍຖາມຂ້ອຍວ່າ :

" ນີ້, ໂຕກໍຮູ້ຫລາຍຢູ່ກ່ຽວກັບປັນນະ .ເຄີຍໄດ້ອ່ານຄຳພີນັ້ນບໍ່ ? ໂຕເຫັນວ່າຈັ່ງໃດລະ , ອັນທີ່ເພິ່ນເວົ້າໄວ້ນັ້ນຖືກຕ້ອງຫມົດບໍ່ ? ເພິ່ນຂຽນວ່າແນວໃດແດ່ ? "

" ຂ້ອຍບໍ່ຮູ້ດອກ "

" ບາ ຕາມທີ່ກູຄິດເດີ ! ອັນທີ່ຂຽນໄວ້ນັ້ນ ກະມີຫລາຍແນວ ທີ່ບໍ່ເປັນປະໂຫຍດຈັກດີ້ . ຕົວຢ່າງເດີ ຄືເພິ່ນເວົ້າ - ກ່ຽວກັບພວກທຸກຈົນນັ້ນ . ເພິ່ນວ່າ : ພວກທຸກຈົນກໍຖືກໂຜດ. ຈັກແມ່ນຊົມຫຍັງໂຜດຢູ່ຫັ້ນ ? ເບິ່ງຄືໄຮເຫດໄຮຜົນຈັກຫນ້ອຍເນາະ , ແລ້ວຖ້າຈະເບິ່ງລຶກໆອີກ - ກ່ຽວກັບພວກທຸກຈົນນີ້ນະ - ຍັງມີອັນບໍ່ຈະບໍ່ແຈ້ງຢູ່ຫລາຍໄດ . ຕ້ອງຈຳແນກໃຫ້-

ໄດ້ ມັນມີພວກທີ່ທຸກຈົນ ແລະພວກທີ່ພວມທຸກຈົນລົງ .ຄົນເຮົາຄັນວ່າທຸກແລ້ວວ່າຊັ້ນ - ມັນຊິມີດີຫຍັງອີກ ? ແຕ່ຄັ້ນຖາ ຄົນນັ້ນພວມຕົກທຸກໄດ້ຍາກລົງ - ເອີ ບາງທີ ແມ່ນຍອມມັນໂຊກຮ້າຍຊື່ໆບໍ່ຈັກ , ມັນຕ້ອງເບິ່ງບັນຫາກັນ ແບບນີ້ຈຶ່ງຊິແມ່ນ".

" ເປັນຫຍັງວ່າຊັ້ນ ? "

ລາວມິດຢູ່ຄາວໜຶ່ງ ແນມໜ້າຂ້ອຍຢ່າງເຈາະຈົ້ມ ແລະກໍເລີ່ມເວົ້າຊ້າໆທັງເນັ້ນສຽງໜັກໆຊົງຄືເຄີຍຄິດເລື່ອງນີ້ ມາຫລາຍແລ້ວ .

" ຢູ່ໃນຄຳພີນັ້ນ ເວົ້າເລື່ອງຄວາມດູຖົມສົງສານຫລາຍ-ໂພດ . ຄວາມສົງສານນີ້ນະ ເປັນອັນຕະລາຍໄດ້ .ຕາມ ກູ້ຄຶດໄດ້ເນີ . ກູວ່າມັນພາໃຫ້ເສຍເງິນຈຳນວນຫລາຍໃຫ້ ແກພວກຄົນທີ່ໄຮ້ປະໂຫຍດ , ຮອດວ່າເປັນຄົນທີ່ອັນຕະລາຍ ຊ້ຳຄົນພວກນີ້ . ເບິ່ງແມ້ , ສະຖານສົງເຄາະຄົນທຸກຍາກບໍ , ຄຸກບໍ , ໂຮງໝໍພີ້ບ້າບໍ , ເຮົາຄວນຊິຊ່ວຍເຫລືອຄົນທີ່ແຂງແຮງມີສຸຂະພາບດີຢູ່ - ພູ້ນນາ - ເພື່ອວ່າເຂົາເຈົ້າຊິບໍ່ໄດ້-ຖິ້ມແຮງລ້າໆຊື່ໆ , ແຕ່ອັ້ນນີ້ຫຍັງ - ພວກເຮົາຜັດພາກັນໄປຊ່ວຍພວກທີ່ອ່ອນແອ ພໍປານວ່າຊິເຮັດໃຫ້ພວກອ່ອນແອນັ້ນແຂງແຮງຂຶ້ນມາໄດ້ ! ແລະຜົນກໍຄື ຄົນທີ່ແຂງແຮງໝົດກຳລັງວັງຊາ ແລ້ວພວກອ່ອນແອກໍໂດດຄຸບເຂົາ . ເຫັນບໍ່ - ນັ້ນລະຄືບັນຫາ ! ຍັງມີຫລາຍສິ່ງຫລາຍແນວ ທີ່ຈະຕ້ອງໄດ້ຄົ້ນຄິດ - ແລະເບິ່ງຄືນໃໝ່ . ພວກເຮົາຕ້ອງໄດ້ຄິດໃສ່ໃຈຄື : ຊີວິດໄດ້ຫ່າງເຫີນອອກຈາກຄຳພີ ແລະ ໄປຕາມເສັ້ນທາງຂອງມັນຕາມລຳພັງ . ຍົກຕົວຢ່າງ ເປັດຍົບຜູ້ນີ້ ເຈົ້າຄິດວ່າ ຍອມ

ຫຍັງມັນຈຶ່ງຖືກຈັບ ? ຍ້ອນວ່າມັນດູຕົນສົງສານຄົນ . ພວກເຮົາໃຫ້ທານແກ່ຄົນທຸກຍາກ ແຕ່ບໍ່ຫົວຊານຳນັກສຶກສາ. ປ່ອຍໃຫ້ເຂົາຈັບຫາຍວາຍວອດ ! ມັນຊິຖືກຕ້ອງບໍ່ຈັ່ງຊັ້ນ ? "

ຂ້ອຍເຄີຍຄິດທຳນອງນີ້ມາກ່ອນແລ້ວ . ພວກເຂົາ ດື້ດ້ານກວ່າ ແລະ ແຜ່ລາມໄປທຸກແຫ່ງຫົນກວ່າທີ່ຄິດກັນຕາມ-ປົກກະຕິ . ແຕ່ຂ້ອຍບໍ່ເຄີຍໄດ້ຍິນການເວົ້າເຖິງພວກ ເຂົາຢ່າງແຫລມຄົມຈັ່ງຊີ້ . ການອ່ານປຶ້ມຂອງ ນິດເຊ ປະມານເຈັດປີຖັດມາ ຂ້ອຍຈຶ່ງຈື່ຈຳປັດຊະຍາຂອງຕຳຫລວດ ເມືອງຄາຊານ ໄດ້ຢ່າງແຈ່ມແຈ້ງ . ແລ້ວຂ້ອຍກໍສັງເກດໄດ້ພໍຜິວເຜີນຄື : ດົນໆຂ້ອຍເຄີຍຊອກເຫັນແນວຄວາມຄິດຢູ່ໃນ ປຶ້ມຊຶ່ງໃນຊີວິດຈິງ ຂ້ອຍບໍ່ເຄີຍພົບເຫັນເລີຍ .

ຊາຍຊະລາ " ນັກລ່າມະນຸດ " ເວົ້າຕິດເວົ້າຕໍ່ ທັງເຄາະຂອບຖາດນ້ຳຊາ ເຂົ້າຈັງຫວະກັບຄຳເວົ້າຂອງລາວ. ໃບໜ້າຈ່ອຍໂອບຢູ່ໃນທ່າທີ່ເຄັ່ງຂຶມ ແຕ່ບໍ່ອ່ວາຍມາຫາຂ້ອຍເລີຍ . ລາວຈ້ອງເບິ່ງໝໍ້ ຊາໂມວາ ຊຶ່ງຜັດຈົບເຫລື້ອມ-ເປັນເງົາປານແວ່ນແຍງໄດ້ .

" ເຈົ້າສົມຄວນໄປແລ້ວ " ເມຍລາວຕັກເຕືອນ ສອງເທື່ອ ; ແຕ່ໂດຍບໍ່ເວົ້າຕອບເມຍຈັກຄວາມ ລາວໄປຕໍ່ ໄປຄວາມຕິດຄວາມຕໍ່ ຕາມຄວາມນຶກຄິດທີ່ເປັນສາຍອັນເຄັ່ງຕຶງຈົນວ່າ ໃນທັນໃດ ຄວາມເວົ້າຄວາມຈາຕົກເຂົ້າສູ່ຮ່ອງຮອຍອັນໃໝ່ທັງໝົດ ໂດຍບໍ່ທັນຮູ້ວ່າຜ່ານໄປແຕ່ຫວ່າງໃດ .

" ໂຕບໍ່ແມ່ນຄົນເຫງີກຫງາກ ,ເປັນຄົນມີຄວາມຮູ້ . ເໝາະສົມບໍກັບວຽກງານຢູ່ໂຮງເຂົ້າຈີ່ ? ໂຕອາດຫາເງິນ

ໄດ້ສ່ຳກັນນີ້ ຫລືຫລາຍກ່ວານີ້ ໂດຍເຮັດວຽກງານຕ່າງໆນາໆ ຮັບໃຊ້ອານາຈັກຂອງເຈົ້າຊາ..."

ຂອຍຟັງລາວເວົ້າ , ແຕ່ສະໝອງຂອງຂ້ອຍວົນວຽນ ຢູ່ ກັບບັນຫາວ່າ ຈະເຮັດວິທີໃດ ເພື່ອເຕືອນຜູ້ຄົນທີ່ອາໄສຢູ່ ຖະໜົນ ຣົບໂນຣຽດສະກາຢາ ທີ່ຍັງບໍ່ທັນຮູ້ເລື່ອງນັ້ນຊາບວ່າ - ເຂົາເຈົ້າພວມຖືກ ນິກໂຟຣິຊ ຕິດຕາມຢູ່ . ມີຊາຍຄົນໜຶ່ງທີ່ ພັກຢູ່ຫ້ອງເຊົ່ານີ້ຊົ່ວ ແຊກໄກ ໂຊມີບ ຊຶ່ງຫາກໍກັບມາ ແຕ່ ບ່ອນເນລະເທດຢູ່ ຢາລີໂຕລົບ . ຂອຍໄດ້ຍິນເລື່ອງຂອງ - ລາວຍຶດຍາວ , ລວມແຕ່ມວນໆທັງນັ້ນ .

" ຄົນທີ່ມີສະໝອງຄວນຈະພ້ອມພຽງຮຽງໜ້າກັນ, ຄືດັ່ງ ແມງເຜິ້ງໃນຮັງເຜິ້ງ ຫລື ແມງຕໍ່ໃນຮັງຂອງມັນ . ອາ ນາ ຈັກຂອງເຈົ້າຊາ..."

" ເບິ່ງໂມງແມ້ ! ເກົ້າໂມງແລ້ວເດີ້ "ເມຍລາວບອກ.

" ຜີເຜດ ! "

ນິກໂຟຣິຊ ຜູກລູກຂັນແລະໃສ່ດຸມເສື້ອຢ່າງຟ້າວຟັ່ງ .

" ເອີ...ຊັນລະ , ຂອຍຊິໄປຂີ່ລົດຈາງກ່ອນ .ລາເດີ້ ທ້າວ , ມາຫລິ້ນນຳແດ່ ຍາມໃດກໍໄດ້ ".

ໃນຂະນະທີ່ອອກຈາກເຮືອນລາວ ຂອຍຕັດສິນໃຈຢ່າງ - ແນ່ວແນ່ວ່າ ຈະບໍ່ໄປຢາມ ນິກໂຟຣິຊ ອີກຈັກເທື່ອ .ຊາຍຊະ ລາຄົນນີ້ເປັນໜ້າສົນໃຈ ແຕ່ລາວກໍໜ້າອະເຫຍືອງໂພດ . ການທີ່ລາວເວົ້າເຖິງຜົນຮ້າຍຂອງຄວາມດູດື່ມສິ່ງສານນັ້ນເຮັດ ໃຫ້ຂ້ອຍບໍ່ທຸ່ນທ່ຽງໃຈເປັນຢ່າງຍິ່ງ . ຄຳເວົ້າຂອງລາວ ສະ ຫລັກຢູ່ໃນຄວາມຊົງຈຳ ແລະ ຈະບໍ່ລົມລືງໄດ້ . ຂອຍຮູ້ ສຶກ

ວ່າມີແກ່ນຂອງຄວາມຈິງ ເຊື່ອງຊ້ອນຢູ່ເບື້ອງຫລັງຄຳ ເວົ້າເຫລົ່ານີ້ , ແຕ່ມັນກໍບາດໃຈຫົວໃຈຂ້ອຍທີ່ຄວາມຈິງອັນ ນີ້ອອກມາຈາກປາກຕຳຫລວດ .

ການສົນທະນາກັນກ່ຽວກັບບັນຫາດັ່ງກ່າວນີ້ບໍ່ຄ່ອຍມື້ນ-ເລື້ອຍໆ . ຫນຶ່ງຄັ້ງທີ່ໄດ້ສົນທະນາທຳນອງນີ້ ເຮັດໃຫ້ຂ້ອຍເກີດສະພາບບໍ່ດຸນດ່ຽງຢູ່ໃນແນວຄິດຈິດໃຈເປັນພິເສດ .

ມີນັກນິຍົມ ໂຕນສະໂຕຍ ຄົນຫນຶ່ງມາຍັງຕົວເມືອງ , ມັນເປັນຜູ້ທຳອິດທີ່ຂ້ອຍໄດ້ພົບພໍ້ . ເຂົາເປັນຄົນສູງ; ຈ່ອຍຫນັງຕິດກະດູກ , ຫນາຕາຫຍຸ້ງເຫຍີງ , ຫນວດດຳຄາຍຄືຫນວດແບ້ ແລະຮີມສົບຫນາຄືຊາວ ອາຟຣິກກາ , ຫລັງ ສີກົ່ງໆ ຄ້າຍຄືວ່າເຂົາຈ້ອງເບິ່ງພື້ນດິນ . ແຕ່ບາງຄັ້ງ ບາງຄາວເຂົາຈະແງ້ນຫົວທີ່ລ້ານເຄິ່ງເດີ່ນໄປທາງຫລັງວັບ ຫນຶ່ງແລະແສງຕາສືຊຸມໆຈາກດວງຕາປ່ຽກຊຸ່ມແລະຫມົ່ນຫມອງ -ຂອງເຂົາຈີ້ເຂົ້າຫົວໃຈຈົນເຢັນຊາ . ຄວາມອາຄາດ ມາດຮ້າຍສຸມຢູ່ໃນແສງຕາທີ່ສອດສ່ອງນັ້ນ . ການສົນທະນາ ດຳເນີນໄປຢູ່ໃນຫ້ອງຂອງອາຈານມະຫາວິທະຍາໄລຄົນຫນຶ່ງ . ມີຊາວຫນຸ່ມມາຟັງຈຳນວນຫລາຍ , ແລະໃນຈຳນວນນີ້ມີພະສອນສາສະຫນາຮ່າງນ້ອຍ ທັນມັງອົງອາດຜູ້ຫນຶ່ງ ຢູ່ໃນຊຸດ-ແພໄຫມສີດຳຍາວ ຍິ້ມເຢັນໆຢູ່ໃນດວງຕາສີເທົາ .

ນັກນິຍົມ ໂຕນສະໂຕຍ ເວົ້າເຖິງສັດຈະທຳອັນມະ ທັດສະຈັນຢູ່ໃນຄຳພີຢ່າງຍືດຍາວພໍສົມຄວນ ຕະຫລອດທັງສິ່ງອະມະຕະຢູ່ໃນສັດຈະທຳດັ່ງກ່າວນີ້ . ສຽງຂອງເຂົາບໍ່ເສາະ-ໃສ , ປະໂຫຍກຄຳເວົ້າສັ້ນໆແລະບໍ່ມີໂຕງໂຕຍ , ແຕ່ຄຳ

ສັບດັ້ງກອງໜັກແໜ້ນ ແລະນຳມາຊຶ່ງກຳລັງແຮງຂອງຄວາມເຊື່ອໝັ້ນອັນແທ້ຈິງ . ມືຊ້າຍທີ່ມີຂົນດົກຂອງເຂົາປົດລູບຕົນ-ຕົວລົງໄປດ້ວຍທ່າທີ່ຫຼຸນຫັນແບບເກົ່າຢູ່ໄປມາເລື້ອຍໆ . ສ່ວນມືຂວາຈົກເຂົ້າໄປໃນຖົງສົ້ງ .

" ນັກສະແດງລະຄອນ " ສຽງໃຜຜູ້ໜຶ່ງດັງຄ່ອຍໆ ມາຈາກແຈຝາ ບໍ່ໄກຂ້ອຍພໍເທົ່າໃດ .

" ແມ່ນລະ ລາວເຮັດດີລະຄອນອີ່ຫຼີ ".

ກ່ອນນີ້ບໍ່ດົນເທົ່າໃດ ຂ້ອຍເຄີຍອ່ານປຶ້ມຂຽນໂດຍ ດຣາ-ເປີ - ຂ້ອຍເຊື່ອວ່າ ແມ່ນກ່ຽວກັບການຕໍ່ສູ້ຂອງພວກກາ ໂຕລິກ ຕາມວິທະຍາສາດ , ແລະຂ້ອຍຮູ້ສຶກວ່າ ນັກນິຍົມໂຕນ-ສະໂຕຍຜູ້ນີ້ ເປັນຄົນໜຶ່ງໃນຈຳພວກ ກາໂຕລິກທີ່ມີຄວາມເຊື່ອຢ່າງຫຼົງໄຫລໃນການກູ້ເອົາໂລກມະນຸດ ດ້ວຍອຳນາດ ຂອງຄວາມຮັກ , ພວກທີ່ ດ້ວຍຄວາມເມດຕາສົງສານອັນບໍລິ ສຸດກຽມລົງມືທີ່ຈະຂ້າຟັນລັນແທງ ແລະ ເຜົາຜານເພື່ອນມະນຸດ-ດ້ວຍກັນ .

ເຂົານຸ່ງເສື້ອຂາວແຂນກວ້າງ ແລະມີຜ້າອ້ຽງເກົ່າໝອງສີໝົ່ນທັບໄວ້ . ເຄື່ອງນຸ່ງນີ້ ເຮັດໃຫ້ເຂົາແປກຕ່າງຈາກຄົນທັງໝົດຢູ່ໃນຫ້ອງ ເຊັ່ນດຽວກັນ . ເພື່ອເປັນການສະຫຼຸບ-ການເທດສະໜານີ້ ເຂົາຮ້ອງຂຶ້ນວ່າ :

" ແລະຂ້າພະເຈົ້າຂໍຖາມວ່າ : ພວກທ່ານໄປນຳ ເຍຊູຫຼື ໄປນຳ ດາວິນ ? "

ຄຳຖາມຖືກແກວ່ງໄປຍັງແຈຝາປານດັ່ງກ້ອນຫີນ , ແຈ-ຝາບ່ອນທີ່ຊາວໜຸ່ມພາກັນນັ່ງບຽດກັນຢູ່ ຊຶ່ງຄວາມຫວາດຫວັ່ນ

ແລະຄວາມປິຕິຍິນດີປະກົດແວວວັບ ຢູ່ໃນດວງຕາທີ່ມີນກວ້າງ-ຂອງພວກບ່າວສາວ . ປະກົດວ່າ ຄຳເວົ້າຂອງນັກນິຍົມໂຕນ ສະໂຕຍປະທັບໃຈຜູ້ຟັງທຸກໆຄົນ , ເຂົາເຈົ້າກົ້ມຫົວດ້ວຍ ອາການຄົ້ນຄິດ ແລະບໍ່ມີໃຜປາກເວົ້າຫຍັງເລີຍ . ເຂົາກວາດ-ສາຍຕາອັນມີປະກາຍຮ້ອນແຮງໄປທົ່ວຫ້ອງ ແລ້ວເວົ້າ ເສີມວ່າ :

" ມີແຕ່ພວກພາຣີຊີເທົ່ານັ້ນ ສາມາດເຮັດໃຫ້ສອງ ຫລັກການທີ່ບໍ່ອາດປອງດອງກັນໄດ້ນັ້ນສອດຄ່ອງກັນໄດ້ . ແລະໂດຍພະຍາຍາມກະທຳດັ່ງກ່າວ ເຂົາເຈົ້າຕົວະຕົນເອງຢ່າງ ເປັນຫນ້າອັບອາຍ ແລະ ເບື່ອເມົາຄົນອື່ນໆດ້ວຍຄວາມຂີ້ຕົວະຫຼອກລວງ .

ພະສອນສາສະຫນາຮ່າງນ້ອຍລູກອົ້ນ ແປງແຂນເສື້ອຍ່າມ ໂດຍຈັບພາດມາທາງຫລັງດ້ວຍທ່າທາງລະມັດລະວັງ, ຍິ້ມຢ່າງຖະຫນ່ອມຖ່ອມຕົວ ແລ້ວກໍເປີດສາກກ່າວຄຳປາໄສຢ່າງຫລຽນໄຫລ ແລະຢ່າງສຸພາບຮຽບຮ້ອຍທີ່ເຕັມໄປດ້ວຍພິດສົງ :

" ເປັນທີ່ແຈ່ມແຈ້ງວ່າ ທ່ານເຫັນດີເຫັນງາມນຳ ຄວາມຄິດຄວາມເຫັນອັນທຳມະດາສາມັນ ກ່ຽວກັບພວກພາຣີຊີ ອັນເປັນຄວາມເຫັນທີ່ບໍ່ພຽງແຕ່ຕ່ຳຊ້າເທົ່ານັ້ນ ຫາກແຕ່ຜິດ ເຂວທັງຫມົດນັ້ນ..."

ແລະໃນຂະນະທີ່ຂ້ອຍງົງງັນຢູ່ບໍ່ເຊົານັ້ນ ເຂົາເວົ້າ ອ້າງເຫດອ້າງຜົນຕໍ່ໄປວ່າ ພວກ ພາຣີຊີຄວນໄດ້ຮັບການນັບຖື ວ່າເປັນຜູ້ພິທັກທີ່ບໍລິສຸດແລະແທ້ຈິງຂອງກົດຫມາຍຂອງປະຊາຊົນຢູ່ດາຍ , ວ່າປະຊາຊົນໄປນຳພວກພາຣີຊີສະເຫມີໃນການ ຕໍ່ສູ້

ຕ້ານກັບສັດຕູ . " ຕົວຢ່າງ ຟລາວິຊູສ ໂຈເຊຟູສ... "

ນັກນິຍົມ ໂຕນສະໂຕຍ ຜູດລູກຂັ້ນ ແລະ ໂດຍຊື່ໃນ້ຊົມ ສະແດງອາການປະຕິເສດຢ່າງຟາວຟັ່ງ ເຂົາຮ້ອງຂັ້ນວ່າ :

" ບັດນີ້ປະຊາຊົນກໍຄືກັນ ພາກັນແລ່ນໄປນໍາສັດຕູ ຂອງຕົນ ແລ້ວມາຕ້ານມິດສະຫາຍ . ປະຊາຊົນບໍ່ໄດ້ປະພຶດ ໄປຕາມຈຸດປະສົງຂອງເຂົາເອງດອກ . ເຂົາເຈົ້າຖືກບັງ ຄັບຖືກຕອນໄປ . ສໍາລັບຂ້າພະເຈົ້າແລ້ວ ທ່ານ ໂຊເຊຟູສ - ຂອງທ່ານ ມີຄວາມຫຍັງ ? "

ພະສອນສາສະໜາ ແລະ ຜູ້ຄັດຄ້ານອື່ນໆພາກັນຍ່ອງຍໍບັນຫາຕົ້ນຕໍໃຫ້ເປັນເສດເລັກເສດນ້ອຍຈົນວ່າມັນສູນຫາຍໄປຈາກການໂຕ້ຖຽງ .

" ສັດຈະທໍາແມ່ນຄວາມຮັກ " ນັກນິຍົມ ໂຕນສະໂຕຍຍິດຖືດັ່ງນີ້ , ດວງຕາຂອງເຂົາເຕັມໄປດ້ວຍອາຄາດ ບາດໝາງ ແລະ ຄວາມຢຽດຫຍາມ .

ຂອຍຮູ້ສຶກມຶນເມົາຍອນຄໍາເວົ້າ ຈົນວ່າຂ້ອຍບໍ່ສາ ມາດເຂົ້າໃຈຄວາມໝາຍຂອງມັນເລີຍ . ແຜ່ນດິນສັ່ນສະເທືອນແລະປິ່ນທ່າມກາງລົມພາຍຸຄໍາເວົ້າ . ຂ້ອຍຄິດແລ້ວຄິດ ອີກດ້ວຍຄວາມອຶດອັດໃຈວ່າ ໃນໂລກນີ້ບໍ່ມີໃຜໂງ່ຈ້າແລະ ປຶກໝາຄືກັນກັບຂ້ອຍ .

ຂະນະທີ່ເຊື່ອດເຫື່ອອອກຈາກແກ້ມ , ນັກນິຍົມໂຕນສະ-ໂຕຍ ຮ້ອງຂັ້ນຢ່າງຮຸນແຮງວ່າ :

" ຟາດຄໍາພື້ດຖົມ ! ລົມຄໍາພີດຽວນີ້ ! ແລ້ວບໍ່ຕ້ອງ - ຕົວະ ! ເອົາພະເຍຊູໄປຂຶ້ງຕິດໄມ້ໄວ້ອີກ ! ຈົ່ງຊື່ຈົ່ງ ຈະ

ເປັນເລື່ອງຍຸຕິທຳກວ່າ ! "

ດັ່ງຄຽວກັບກຳແພງສີຂາວ ບັນຫາຖືກຕັ້ງຂຶ້ນຕໍ່ໜ້າຂ້ອຍຄື ດັ່ງນີ້ : ແມ່ນຫຍັງນີ້ ? ຖ້າວ່າຊີວິດເປັນການຕໍ່ສູ້ອັນບໍ່ມີຍາມ ເຊົາ ເພື່ອຄວາມຜາສຸກໃນໂລກ , ແລ້ວເຮັດແນວໃດຄວາມ ເມດຕາປານີ ແລະ ຄວາມຮັກຈິ່ງຈະເປັນສິ່ງກົດໜ່ວງຢູ່ ໃນ ການຕໍ່ສູ້ດັ່ງກ່າວນີ້ .

ຂ້ອຍມາຮູ້ຈັກຊື່ຂອງນັກນິຍົມໂຕນສະໂຕຍຄົນນີ້ວ່າກົລບສະ ກີ ແລະຮູ້ວ່າເຂົາພັກຢູ່ໃສ ແລະ ແລ້ວຕໍ່ມາຂ້ອຍກໍໄປພົບເຂົາ. ເຂົາພັກຢູ່ເຮືອນ ຊຶ່ງເຈົ້າຂອງແມ່ນຜູ້ສາວສອງເອື້ອຍນ້ອງ ທີ່ ເປັນເຈົ້າທີ່ດິນຢູ່ຊົນນະບົດ , ແລະຂ້ອຍພົບເຂົາພ້ອມຢູ່ກັບ - ເຈົ້າຂອງດັ່ງກ່າວຢູ່ໃນສວນ , ພ້ອມນັ່ງຢູ່ທີ່ໂຕະໃຕ້ຕົ້ນ ໄມ້ ເກົ່າແກ່ຂະໜາດໃຫຍ່ . ເຂົາຜູ້ນີ້ ເປັນຄົນຈ່ອຍໜັງຕິດກະ ດູກ , ນຸ່ງເຄື່ອງສີຂາວ , ເສື້ອແບບທີ່ໜ້າອົກເຜີຍໃຫ້ ເຫັນ ຂົນດຳໆ - ເຂົາເປັນໄປຕາມທີ່ຂ້ອຍຄິດໄວ້ທີ່ສຸດ ຄືດັ່ງສາວົກ ຜູ້ໄຮ້ທີ່ພັກອາໄສ ແລະຜູ້ເຜີຍແຜ່ສັດຈະທຳ .

ເຂົາຕັກກ້ວຍໝາກໄມ້ໃສ່ນ້ຳນົມດ້ວຍບ່ວງເງິນຈາກຖ້ວຍ ທີ່ຕັ້ງຢູ່ຕໍ່ໜ້າ ແລ້ວກິນຢ່າງແຊບຊ້ອຍທັງດູດເລຍຮິມສົບ ຕົນ ເອງ . ທຸກເທື່ອທີ່ຕັກເຂົ້າປາກ ເຂົາກໍຈະເປົ່າຢົດນ້ຳນົມທີ່- ຕິດຢູ່ໜວດຍ່ອມແຍ່ມນັ້ນອອກ . ໜຶ່ງໃນຈຳນວນສອງເອື້ອຍ ນ້ອງນັ່ງຢູ່ຕິດໂຕະ ກຽມພ້ອມເພື່ອຮັບໃຊ້ເຂົາ . ອີກຜູ້ໜຶ່ງ- ນັ່ງອີງຕົ້ນໄມ້ ເອົາມືກອດເອິກໄວ້ , ຕາແນມໄປທີ່ທ້ອງ ຟ້າ ອັນຮ້ອນເອົ້າ ແລະ ມີຝຸ່ນໄງກຸ້ມ ດ້ວຍອາການເຄີ້ມຝັນ. ຍິງ ສາວທັງສອງນີ້ ນຸ່ງຊຸດບາງໆສີດອກລີລາ ,ຄາຍຄືກັນທີ່ສຸດຈົນ

ເກືອບບໍ່ຮູ້ວ່າໃຜເປັນນ້ອງເປັນເອື້ອຍ .

ເຂົາເວົ້າລືມນຳຂອຍດວຍຄວາມເຕັມໃຈແລະຢ່າງສຸພາບຮຽບຮ້ອຍ ກ່ຽວກັບອຳນາດປະດິດສາງຂອງຄວາມຮັກ ,ກ່ຽວກັບວ່າບຸກຄົນຄວນເສີມຂະຫຍາຍອຳນາດດັ່ງກ່າວຢູ່ໃນຈິດ ໃຈແນວໃດ ໃນຖານະເປັນອຳນາດອັນດຽວທີ່ສາມາດ"ຜູກພັນມະນຸດ ກັບໂລກແຫ່ງວິນຍານ " ຫມາຍຄວາມວ່າກັບຄວາມ ຮັກທີ່ແຜ່ກະຈາຍອອກຈາກຊີວິດ .

" ນັ້ນແຫລະຄືສາຍຜູກພັນອັນດຽວທີ່ເຊື່ອມຕໍ່ມະນຸດໄດ້ ! ເມື່ອປາສະຈາກຄວາມຮັກ ຊີວິດກໍບໍ່ມີຄວາມຫມາຍ .ພວກ ທີ່ປະກາດວ່າກົດເກນຂອງຊີວິດແມ່ນການຕໍ່ສູ້ນັ້ນເປັນພວກ ມືດບອດ ທີ່ຖືກສາບແຊ່ງໃຫ້ໄປສູ່ຄວາມພັງພິນາດ . ໄຟບໍ່ ອາດລະງັບດວຍໄຟ , ເວນບໍ່ອາດລະງັບດວຍການຈອງເວນ !"

ແນວໃດກໍຕາມ ພາຍຫລັງທີ່ສອງເອື້ອຍນ້ອງຍ່າງເອົາ ມືກອດແອວຂອງກັນແລະກັນ ຜ່ານສວນມຸ່ງຫນ້າໄປຫາເຮືອນ ,ຊາຍຄົນນີ້ແນມນຳຫລັງທັງສອງ ທັງໄປທັງຫລິ່ວຕາເຂົ້າ ແລ້ວກໍຖາມຂ້ອຍວ່າ :

" ແລ້ວເຈົ້າແມ່ນໃຜລະຫື ? "

ເມື່ອຂອຍບອກເຂົາກ່ຽວກັບຕົນເອງແລ້ວ ເຂົາກໍເລີ່ມຕົ້ນເວົ້າທັງເອົາມືເຄາະໂຕະ , ເຂົາເວົ້າກ່ຽວກັບວ່າບໍ່ວ່າຢູ່ໃສມະນຸດກໍຍັງເປັນມະນຸດ , ແລະ ຄົນເຮົາບໍ່ຄວນສະແຫວງຫາແຕ່ການປ່ຽນແປງຖານະຂອງຊີວິດ ແຕ່ຄວນພະຍາຍາມ ດັດສາງຈິດໃຈໃຫ້ມີຄວາມຮັກເພື່ອນມະນຸດ .

" ຍິ່ງມະນຸດມີຖານະຕ່ຳເທົ່າໃດ ເຂົາກໍຍິ່ງໃກ້ຊິດກັບ -

ຄວາມຈິງຂອງຊີວິດ , ໃກ້ຊິດກັບປັນຍາອັນສັກກາລະບູຊາ - ຂອງຊີວິດເທົ່ານັ້ນ " .

ເຖິງແມ່ນວ່າ ຂ້ອຍຮູ້ສຶກສົງໄສກ່ຽວກັບຄວາມຮູ້ຂອງລາວ ໃນເລື່ອງ " ປັນຍາອັນສັກກາລະບູຊາ " ນີ້ກໍຕາມ ຂ້ອຍກໍບໍ່ ເວົ້າຫຍັງເລີຍ . ຂ້ອຍເຫັນວ່າ ເຂົາເກີດຄວາມລຳຄານ . ເຂົາເສືອດຕາເບິ່ງຂ້ອຍດ້ວຍຄວາມເບື່ອຫນ່າຍ,ຫາວນອນ , ເອົາສອງມືຂັດ່ວງອນ , ຢຽດສອງຂາອອກ ແລະພັບຕາເຍີບ-ຍາບ , ເວົ້າພຶມພຳ ຄືດັ່ງຢູ່ໃນອາການເຄິ່ງຫລັບເຄິ່ງຕື່ນວ່າ:

" ຍອມຈຳນົນຕໍ່ຄວາມຮັກ...ກົດເກນຂອງຊີວິດ..."

ດ້ວຍອາການສະດຸ້ງ ເຂົາຢຽດແຂນອອກ , ຄວ້າຈັບສິ່ງໃດສິ່ງຫນຶ່ງຢູ່ກາງອາກາດ , ຕໍ່ມາເຂົາຈ້ອງເບິ່ງຂ້ອຍ ທ່າທາງຕື່ນຕົກໃຈ .

" ເປັນຫຍັງຈັ່ງຊີ້ ? ຂໍໂທດເດີ້ , ຂ້ອຍເມື່ອຍອີ່ຫລີ".

ແລ້ວເຂົາກໍຫລັບຕາອີກ , ກົດແລະຫຍິ່ງແຂ້ວປານວ່າ - ພວມຢູ່ໃນອາການເຈັບປວດ . ສົບເບື້ອງລຸ່ມເຕື່ອຍລົງ, ສົບເບື້ອງເທິງຫຍໍ້ຂື້ນຈົນວ່າຫນວດສີດຳຍອມແຍມນັ້ນຕັ້ງຊົບລົບ.

ຂ້ອຍປະຖຸມຄວາມຮູ້ສຶກບໍດີຕໍເຂົາ ຄືຄວາມເປັນປະຕິ ປັກແລະຄື້ນແຫ່ງຄວາມສົງໄສໃນຄວາມຈິງໃຈຂອງເຂົາ .

ບໍເທົ່າໃດມື້ຕໍມາ ໃນຕອນເຊົ້າໆວັນຫນຶ່ງ ຂະນະທີ່ ນຳເອົາເຂົ້າຈີ່ໄປໃຫ້ອາຈານສອນມະຫາວິທະຍາໄລ ເຊິ່ງ ເປັນບ່າວໂສດ ແລະຄືນຂໍເຫລົ້າຂ້ອຍກໍໄດ້ພົບກັບ ກລິບສະກີ ອີກເທື່ອຫນຶ່ງ , ປະກົດວ່າເຂົາຄືບໍໄດ້ຫລັບມາຕະຫລອດຄືນ . ໃບຫນ້າຂອງເຂົາຫລ່າເຫລືອງ , ຫນັງຕາແດງແລະໃຄ່ບວມ.

ຂ້ອຍສົງໄສວ່າເຂົາເມົາເຫຼົ້າ . ອາຈານຮ່າງຕ້ຽຍເມົາຈົນອິ
ລາກອິເລືອ ນັ່ງກັບພົນເຮືອນໃນຊຸດນຸ່ງນອນ ມືຈັບກີຕາ, ຢູ່
ທ່າມກາງຄວາມສັບສົນ ຄືໂຕະຕັ່ງຢູ່ບໍ່ເປັນລະບຽບ ເຄື່ອງນຸ່ງ
ແລະແກ້ວເບຍເປົ່າຊະຊາຍຢູ່ທົ່ວທິບ . ຂະນະໂຍກຕົວໄປມາ
ເຂົາຮ້ອງຂຶ້ນວ່າ :

" ເມດ-ຕາ..."

ກົລບສະກີ ຮ້ອງດັງໆແລະຢ່າງຮຸນແຮງຂຶ້ນວ່າ :

" ບໍ່ມີຄວາມເມດຕາໃດໆ .ພວກເຮົາຈະປະລາໄຊ ໃນ
ຄວາມຮັກ , ຫລືມຸ່ນອັບຍັບໃນບັ້ນຮົບເພື່ອຄວາມຮັກ . ທັງ-
ສອງທາງນີ້ ພວກເຮົາຖືກສາບແຊ່ງໃຫ້ປະສົບເຄາະກຳ " .

ເຂົາຄວ້າຈັບບ່າຂ້ອຍແລະຊຸກໄປຫາອາຈານ .

" ເບິ່ງນີ້ ! ຖາມຫມໍນີ້ເບິ່ງ - ຖາມເບິ່ງວ່າຫມໍຢາກ-
ໄດ້ຫຍັງ ! ຖາມເບິ່ງວ່າ ຫມໍຕ້ອງຮັກມວນມະນຸດເພື່ອຫຍັງ?"

ອາຈານແນມເບິ່ງຫນ້າຂ້ອຍ ດ້ວຍນ້ຳຕາເຕັມເບົ້າ ແລະ
ຫົວຂຶ້ນ .

" ຫມໍຢູ່ໂຮງເຂົ້າຈີ່ . ຂ້ອຍຍັງເປັນຫນີ້ຫມໍຢູ່ . "

ທັງທີ່ຢືນບໍ່ທ່ຽງ ເຂົາເອົາມືຈົກເຂົ້າໃນຖົງ ດຶງເອົາຂໍກະ
ແຈຍື່ນໃຫ້ຂ້ອຍ .

" ນັ້ນ ! ມີເທົ່າໃດເອົາຫມົດ ! "

ແຕ່ນັ້ນກິນຍົ້ມ ໂຕນສະໂຕຍຄວ້າຈັບເອົາຂໍກະແຈ ແລະ -
ແກ່ວງມືບອກໃຫ້ຂ້ອຍອອກໄປ .

" ໄປ . ເທື່ອຫນ້າກ່ອນຈິ່ງມາເອົາເງິນ " .

ເຂົາຟາດກ້ອນເຂົ້າຈີ່ທີ່ຂ້ອຍເອົາມາໃຫ້ນັ້ນໄປຕົກໃສ່ ຕັ່ງ

ນວນແຈຝາ .

ເຂົາບໍ່ຈື່ວ່າຂ້ອຍແມ່ນໃຜ ແລະ ຂ້ອຍກໍດີໃຈທີ່ເຂົາບໍ່ຈື່ .
ໃນຄວາມຊົງຈຳ ຂ້ອຍບໍ່ລືມຄວາມເວົ້າຂອງເຂົາກ່ຽວກັບອັນນິ
ນາດອັນເນື່ອງມາຈາກຄວາມຮັກ ແລະ ໃນຫົວໃຈຂ້ອຍ ມີ
ຄວາມຄຽດຊັງເຂົາຢ່າງສູດຂະໜາດ .

ບໍ່ດົນຕໍ່ມາ ຂ້ອຍໄດ້ຍິນວ່າ ເຂົາປະກາດສາລະພາບຮັກຕໍ່
ຍິງສາວຄົນໜຶ່ງໃນຈຳນວນສອງຄົນທີ່ເຂົາພັກຢູ່ເຮືອນນຳນັ້ນ-
ແລະໃນວັນດຽວກັນນັ້ນ ເຂົາກໍປະກາດສາລະພາບຮັກຕໍ່ຍິງສາວ
ຜູ້ທີ່ສອງ . ສອງເອື້ອຍນ້ອງເຜີຍຄວາມນ້ອຍສູ້ກັນແລະກັນຟັງ
ແລ້ວຄວາມເບີກບານຂອງທັງສອງກໍກາຍເປັນຄວາມຄຽດ ຂຶ້ນ
ໃສ່ອ້າຍບ່າວຄົນນັ້ນ . ທັງສອງສັ່ງໃຫ້ຄົນຕັດຫຍ້າບ້ານໄປບອກ
ນັກຈ່າວຄວາມຮັກໃຫ້ໜີຈາກເຮືອນໃນທັນທີທັນໃດ , ແລ້ວ
ເຂົາກໍຫາຍຕົວໄປຈາກເມືອງນັ້ນ .

ບັນຫາຄວາມຮັກແລະຄວາມເມດຕາ,ທີ່ຕັ້ງຂອງສິ່ງດັ່ງ -
ກ່າວໃນຊີວິດມະນຸດ - ອັນເປັນບັນຫາທີ່ສັບສົນແລະໜ້າວິຕົກ
- ຖືກຕັ້ງຂຶ້ນຕໍ່ໜ້າຂ້ອຍແຕ່ຄາວຍັງໄວອ່ອນນ້ອຍ :ທຳອິດໃນ
ຮູບຂອງຄວາມຮູ້ສຶກອັນບໍ່ສອດຄ່ອງພາຍໃນທີ່ເຈັບແສບ ແຕ່ລຸມ
ເຄືອບໍ່ແຈ່ມແຈ້ງ ; ຕໍ່ມາເປັນຮູບຄຳຖາມທີ່ແຈ່ມແຈ້ງບໍ່ ລຸມ
ເຄືອຄື :

" ຄວາມໝາຍຂອງຄວາມຮັກເປັນແນວໃດ ? "

ທັງໝົດທີ່ຂ້ອຍໄດ້ອ່ານມານັ້ນ ເຈືອປົນໄປດ້ວຍຄວາມຄິດ
ຂອງສາສະໜາຄຣິສ , ຂອງລັດທິມະນຸດສະລິຍະທຳ,ເຈືອ-
ປົນໄປດ້ວຍຄວາມຮຽກຮ້ອງທັງນ້ຳຕາ ເພື່ອຄວາມສົງສານແກ່

ມວນມະນຸດ . ຄວາມຄິດທຳນອງດຽວກັນນີ້ຖືກສະແດງ ອອກຢ່າງມີວາທະສິນລ່ຽນໄຫລ ໂດຍບຸກຄົນຜູ້ສຸຂຸມທີ່ສຸດ ຊຶ່ງ ຂ້ອຍເຄີຍພົບມາໃນສະໄຫມນັ້ນ .

ທຸກສິ່ງທຸກຢ່າງທີ່ຂ້ອຍພົບເຫັນຢູ່ອ້ອມຕົວໃນຊີວິດຕົວຈິງ - ແປກຕ່າງທີ່ສຸດກັບຄວາມຄິດເລື່ອງຄວາມສົງສານ ເກືອບ ວ່າໃນແຕ່ລະລາຍລະອຽດເລັກໆນ້ອຍໆ . ສຳລັບຂ້ອຍແລ້ວຊີວິດເປັນຄືສາຍໄຍຕໍ່ເນື່ອງອັນບໍ່ສິ້ນສຸດ ຂອງຄວາມເປັນປະຕິປັກແລະຄວາມປ່າເຖື່ອນ , ເປັນຄືການຕໍ່ສູ້ອັນຕ່ຳຊ້າແລະບໍ່ ລົດລະເພື່ອຄອບຄອງເອົາສິ່ງເລັກໆນ້ອຍໆຕ່າງໆນາໆ. ສຳລັບຕົນເອງນັ້ນ ຂ້ອຍຕ້ອງການແຕ່ປຶ້ມ ສິ່ງອື່ນທັງຫມົດບໍ່ມີຄຸນຄ່າຫຍັງເລີຍສຳລັບຂ້ອຍ .

ຂ້ອຍພຽງແຕ່ຕ້ອງການນັ່ງຢູ່ນອກປະຕູເຮືອນນັບເປັນ ຊົ່ວໂມງ , ຢູ່ຂ້າງປະຕູເຂົ້າບ້ານພວກເຮົາ , ເພື່ອເບິ່ງວ່າ - ພວກຄົນເຫລົ່ານີ້ທັງຫມົດຄືຄົນຂັບລົດມ້າ , ຄົນຕັດຫຍ້າ ບ້ານກຳມະກອນ , ພາລະກອນ , ພໍ່ຄ້າ ພາກັນດຳເນີນຊີວິດ ທີ່ແຕກຕ່າງກັບຂ້ອຍແລະແຕກຕ່າງກັບຜູ້ຄົນທີ່ຂ້ອຍຄິດຫມາຍໄວ້, ເພື່ອເບິ່ງວ່າພວກເຫລົ່ານີ້ຖືກກະຕຸກໃຫ້ໄປຕາມຄວາມມຸ່ງມາດປາຖະຫນາທີ່ແຕກຕ່າງກັນ , ແລະສະແຫວງຫາເປົ້າຫມາຍທີ່ແຕກຕ່າງກັນ . ສ່ວນຜູ້ຄົນທີ່ຂ້ອຍເຄົາລົບນັບຖື , ຜູ້ຄົນ ທີ່ຂ້ອຍມີຄວາມເຊື່ອຫມັ້ນນັ້ນ - ທັງຫມົດເຫລົ່ານີ້ກາຍເປັນ ຄົນແປກຫນ້າ ແລະ ໂດດດ່ຽວລຳພັງຄືຄົນນອກຄອກຈາກປະຊາ-ຊົນທີ່ເປັນສຽງສ່ວນຫລາຍ , ຈາກຫມູ່ປວກທີ່ພະຍາຍາມພາກພຽນດ້ວຍເລຫລ່ຽມອັນເປິ້ອນເປິທີ່ຈະກ່າສາງຈູມປວກຊຶ່ງ ເຂົາ

ເອງເອີ້ນກັນວ່າຊີວິດ . ສຳລັບຂ້ອຍແລ້ວ ຊີວິດທຳນອງນັ້ ຄື
ຈັ່ງວ່າໂງ່ຈ້າເອົາແທ້ເອົາວ່າ . ມັນແຜ່ຜາຍຄວາມເບື່ອ -
ໜ່າຍລຳຄານ ແລະເລື້ອຍໆ ຂ້ອຍພົບວ່າຜູ້ຄົນທີ່ເວົ້າ ເຖິງ
ຄວາມເມດຕາແລະຄວາມຮັກນັ້ນເວົ້າແຕ່ປາກ , ເມື່ອ ເຖິງ
ຄາວການກະທຳຕົວຈິງແລ້ວ ພວກເຂົາຍອມຈຳນົນຕໍ່ທ່າ ອຽງ
ລວມທົ່ວໄປຂອງຊີວິດຢ່າງບໍ່ຮູ້ຕົວ .

ທັງໝົດເປັນເລື່ອງຫຍຸ້ງຍາກອີ່ຫລີ .

ມື້ໜຶ່ງ , ລາວຣົບ ແພດປົວສັດ ຜູ້ຫລ້າເຫລືອງແລະໃຄ່
ເບັ້ງຍອມເປັນພະຍາດບວມເວົ້າກັບຂ້ອຍດ້ວຍອາການທໍດທອບ
ວ່າ :

" ຕ້ອງໃຫ້ມີຄວາມໂຫດຮ້າຍປ່າເຖື່ອນຂົ້ນຫລາຍໆ ຈົນ-
ວ່າປະຊາຊົນໃນທຸກແຫ່ງຫົນເປີດໜ້າຍມັນ - ຈົນວ່າວິນຍານ
ທຸກດວງໃນໂລກນີ້ຄຽດແຄ້ນມັນ,ທຳນອງດຽວກັບທີ່ເຂົາ ເຈົ້າ
ຄຽດແຄ້ນລະດູໃບໄມ້ຫລົ່ນອັບປີນີ້ " .

ລະດູໃບໄມ້ຫລົ່ນປີນັ້ນມາຮອດກ່ອນເວລາ , ທັງຝົນກໍຕົກ
ອາກາດກໍໜາວ ແລະ ເຕັມໄປດ້ວຍໂລກໄພໄຂ້ເຈັບ ແລະ
ການຂ້າຕົວຕາຍ . ໃນທີ່ສຸດ ລາວຣົບ ກໍກິນຢາຕາຍເຊັ່ນກັນ
ດີກວ່າຈະຄອງຖ້າໃຫ້ພະຍາດໃຄ່ເບັ້ງສັງຫານເຂົາ .

" ເປັນຜູ້ປິ່ນປົວສັດ , ວາງຢາໃຫ້ສັດ ແລ້ວຕົວເອງ ກໍ
ຕາຍຢ່າງສັດ " . ເມດນິກົບ ຊ່າງຕັດເຄື່ອງຜູ້ຊິງ ລາວຣົບ
ອາໄສຢູ່ນຳກ່າວ . ເຂົາເປັນຄົນແຫລຮາງນ້ອຍ , ເປັນ ຜູ້
ເຫລື້ອມໃສສັດທາສາສະໜາທີ່ສຸດ ແລະສາມາດທອງບົດເພງ
ທຸກໆບົດ ເພື່ອອຸທິດແດ່ນາງພົມມະຈາລີ . ເມດນິກົບ ຂຽນຕີ

ລູກເລື້ອຍໆ ດ້ວຍແສ້ຫນັງ , ລູກຜູ້ຫນຶ່ງເປັນແມ່ຍິງອາຍຸເຈັດປີ ແລະຜູ້ຫນຶ່ງເປັນຜູ້ຊາຍອາຍຸສິບເອັດປີ , ລາວໃຊ້ກົບໄມ້ໄຜ່ ຕີ ເນຍທີ່ຂະນອງ . ລາວມັກຈົ່ມເລື້ອຍໆວ່າ :

" ຍາພໍ່ຕາແສງຕຳຫນິຕິຕຽນຂອຍ , ເພິ່ນເວົ້າວ່າຂ້ອຍ-ກ່າຍລະບົບແບບແຜນອັນນີ້ມາຈາກຂອງຈີນ . ແຕ່ຂອຍບໍ່ ເຄີຍເຫັນຄົນຈີນຈັກເທື່ອໃນຊີວິດ ເວັ້ນແຕ່ເຫັນໃນປ້າຍໂຄສະນາ - ແລະໃນຮູບ . "

ກຳມະກອນຄົນຫນຶ່ງຢູ່ຮ້ານຂອງ ເມດນີກົບ ຊຶ່ງເປັນ ຄົນວຽບເຫງົາ ,ຂາກົ່ງ, ແລະຮູ້ກັນໃນນາມວ່າ " ພົວຂອງ ດູມກາ " ເວົ້າເຖິງນາຍຈ້າງຄົນນີ້ຂອງເຂົາວ່າ :

" ຄົນປະເພດອອນໂຍນແລະ ເຫລື້ອມໃສໃນສາສະໜາ, ນັ້ນລະຄືປະເພດທີ່ຕ້ອງຢ້ານກົວ . ສ່ວນຄົນຂີ້ໂມໂຫນັ້ນ ທ່ານ-ອາດບອກເຂົາໄດ້ວ່າ ເຂົາເຮັດບໍ່ຖືກຕ້ອງ ແລະທ່ານມີ ເວລາພຽງພໍເພື່ອເອົາຕົວຫລີກລີ້ . ແຕ່ສ່ວນພວກອອນໂຍນນັ້ນ ເຂົາຈະລີເລືອມາໃສ່ທ່ານດ້ວຍອາການມິດມີ່ແລະມີເລຫລ່ຽມຄົດງູລີເລືອມາຕາມປ່າຫຍ້າ , ແລະກ່ອນທີ່ທ່ານຈະຮູ້ເນື່ອ ທ່ານກໍຖືກຕ້ອງຢູ່ຊຸບອນຫົວໃຈນັ້ນລະ . ປະເພດນີ້ລະທີ່ຂ້ອຍຢ້ານຄື ປະເພດອອນໂຍນ ".

" ພົວຂອງ ດູມກາ " ເປັນນັກລາຍງານປະເພດອ່ອນ -ໂຍນແລະມີເລຫລ່ຽມ , ເປັນຜູ້ທີ່ ເມດນີກົບນິຍົມຊົມຊອບທີ່ສຸດ ແຕ່ວ່າ ສິ່ງທີ່ເຂົາເວົ້ານັ້ນມີຄວາມຈິງ .

ບາງເທື່ອ ຂ້ອຍກໍຮູ້ສຶກຄືກັບວ່າພວກອ່ອນຫວານນັ້ນ ປຽບເປັນດັ່ງໄຄຫີນທີ່ເຮັດໃຫ້ກ້ອນຫີນອ່ອນນຸ້ມຂຶ້ນ,ເຊັ່ນດຽວກັບ -

ຄວາມອ່ອນຫວານໃນຊີວິດ ທີ່ເຮັດໃຫ້ຊີວິດອັນແຂງກະດ້າງ -
ຂອງພວກເຮົານຸ່ມນວນຂຶ້ນ ແລະມີດອກດວງງອກງາມ ຫລາຍ
ກວ່າເກົ່າ . ແຕ່ກໍມີຫລາຍໆເທື່ອ ທີ່ຂ້ອຍສັງເກດເຫັນວ່າ ມີ
ຄົນອ່ອນຫວານຢູ່ຫລາຍໂພດ ,ທັງເຫັນພວກເຂົາກັບປ່ຽນເປັນ
ຄົນຕ່ຳຊ້າຢ່າງງ່າຍດາຍ , ເຫັນພວກເຂົາມີຈິດໃຈບໍ່ຫມັກ -
ແຫນ້ນປານນ້ຳກິ້ງເທິງໃບບອນ ແລະ ເຫັນພວກເຂົາຮ້ອງສະ
ອຶກສະອື້ນຢ່າງບໍ່ຢຸດບໍ່ຢັ້ງແລ້ວ ຂ້ອຍກໍຮູ້ສຶກວ່າຕົນເອງຢູ່ ໃນ
ທ່າມກາງພວກເຂົາຄືດັ່ງມ້າຂາໂຊເຊຕຶກຢູ່ໃນທ່າມກາງຝູງຮື້ນ.

ແມ່ນຄວາມຄິດຄະນຶງດັ່ງກ່າວນີ້ ທີ່ອງແຫນ້ນຢູ່ໃນ ສະ
ຫມອງຂ້ອຍໃນຂະນະທີ່ກັບຈາກປ້ອມຕຳຫລວດຄືນເມືອເຮືອນ .

ລົມພັດມາເຮັດໃຫ້ແປວໄຟໃນໂຄມທີ່ຕັ້ງຢູ່ຕາມຖະຫນົນສັ່ນ
ໄຫວ ,ແລະປະກົດຄືວ່າແມ່ນຝ້າສີມົວຫມອງມັ້ນທີ່ພັດວີທັງໂຮຍ
ຝົນລະອຽດອ່ອນຂອງເດືອນຕຸລາພົມລົງສູ່ພື້ນປະຖະພີ .ໂສເພ
ນີນາງຫນຶ່ງປຽກອອບຍ່ອບຍ່າງມາຕາມຖະຫນົນ ລາກ ແຂນ
ຊາຍຂີ້ເມົາຄົນຫນຶ່ງ ທັງດຶງທັງປັດຊຸກມາພ້ອມ . ຊາຍຂີ້ເມົາ
ຈົ່ມພຶມພຳ ທັງຄາງສຽງອໍແອ . ສ່ວນແມ່ຍິງເວົ້າສຽງອິດ -
ອ່ອນວ່າ :

" ຈົ່ງຊື່ແຫລະຊາຕາກຳຂອງເຈົ້າ " .

" ຫັ້ນ ! " ຂ້ອຍຄິດ . " ມັນຄືກັນກັບຂ້ອຍ . ຂ້ອຍ
ພວມຖືກລາກແກ່ໄປເຊັ່ນດຽວກັນ - ຖືກປັດຊຸກໄປຍັງແຈ ທີ່
ເປື້ອນເປິ ,ໄປປະເຊີນກັບຄວາມໂສມົມແລະຄວາມໂສກເສົ້າ,
ຖືກແຍກອອກຈາກຜູ້ຊາຍແລະແມ່ຍິງຢ່າງແປກປະຫລາດ.ຂ້ອຍ
ເບື່ອຫນ່າຍທຸກສິ່ງທັງຫມົດ " .

ສິ່ງທີ່ສະແດງອອກດ້ວຍຄຳສັບເຫລົ່ານີ້ບໍ່ກົງປານໃດ ຫາກແຕ່ຖືກຕາມເນື້ອໃນຂອງມັນກໍຄືຄວາມຄິດຂອງຂ້ອຍທີ່ປະກົດຂຶ້ນໃນຄ່ຳຄືນອັນລະອິດລະອຽວນັ້ນ . ມັນແມ່ນນັບແຕ່ຕອນ ນັ້ນເອງ ທີ່ຂ້ອຍເລີ່ມຮູ້ແຈ້ງເຖິງຄວາມອິດອ່ອນຂອງດວງວິນຍານຂອງຕົນເປັນຄັ້ງທຳອິດ , ຮູ້ສຶກມີສິ່ງເກາະກິນຫົວໃຈເປັນ - ເທື່ອທຳອິດ . ນັບແຕ່ເວລານັ້ນເປັນຕົ້ນມາ ສະພາບຈິດ ໃຈຂອງຂ້ອຍເສື່ອມຊາມລົງຢ່າງບໍ່ລົດລະ . ຂ້ອຍເລີ່ມເບິ່ງຕົວ- ເອງ ດ້ວຍສາຍຕາຂອງຄົນເດີນຖະຫນົນ,ເປັນສາຍຕາທີ່ເຢັນກະດາງ,ແປກປະຫລາດ ແລະ ບໍ່ເປັນມິດ .

ເກືອບວ່າໃນທຸກວິນຍານຂອງມະນຸດ ຂ້ອຍເລີ່ມຮູ້ສຶກວ່າມີການຢູ່ຮ່ວມກັນທີ່ບໍ່ຄ່ອຍກົມກຽວແລະບໍ່ເປັນລະບຽບຮຽບຮ້ອຍ- ລະຫວ່າງສິ່ງທີ່ເປັນປໍລະປັກກັນ - ເປັນປໍລະປັກກັນບໍ່ພຽງແຕ່ຄຳເວົ້າແລະການກະທຳເທົ່ານັ້ນ, ແຕ່ຕະຫລອດທັງອາລົມ - ຄວາມຮູ້ສຶກ ຊຶ່ງເມື່ອສະແດງອອກເປັນຄັ້ງເປັນຄາວນັ້ນ ເຮັດໃຫ້ຂ້ອຍໜັກອົກໜັກໃຈທີ່ສຸດ . ໃນວິນຍານຂອງຂ້ອຍ ເອງເຊັ່ນກັນ ຂ້ອຍສັງເກດເຫັນການສະແດງອອກດັ່ງກ່າວນີ້ ແລະເຫັນເປັນເລື່ອງຮ້າຍແຮງກວ່າສິ່ງໃດໝົດ . ຂ້ອຍຖືກແກ່ດຶງໄປທຸກທິດທຸກທາງເຊັ່ນ : ໄປຫາແມ່ຍິງແລະໄປຫາປຶ້ມ,ໄປ- ຫາຜູ້ຄົນທີ່ອອກແຮງງານ ແລະໄປຫານັກສຶກສາຜູ້ມ່ວນຊື່ນເບີກບານ ; ແຕ່ຂ້ອຍບໍ່ມີເວລາທີ່ຈະເຮັດໃຫ້ສິ່ງດັ່ງກ່າວເປັນທີ່ ພໍອົກພໍໃຈ .ຂ້ອຍເປັນປິ້ນໆນຳສິ່ງນີ້ໃສ່ສິ່ງນັ້ນປານຫມາກຂ້າງ. ແລະມືມືເລິກລັບທີ່ແນມບໍ່ເຫັນ ແຕ່ແຂງແຮງຟາດຕີຂ້ອຍ ດ້ວຍແສ້ທີ່ບໍ່ອາດແນມເຫັນໄດ້ .

ເມື່ອຮູ້ວ່າ ປາກົບ ຊາໂປຊະນິກົບ ຖືກສົ່ງໄປໂຮງພະຍາບານ ຂ້ອຍກໍໄປຢ້ຽມຢາມເຂົາໂລດ . ແຕ່ແມ່ຍິງຕຸ້ຍໆຄົນ - ຫນຶ່ງປ້າກບຽວ ໃສ່ແວ່ນຕາ ທັງມີຜ້າມັດຫູອ່ອນແດງໄວ້ ບອກຂ້ອຍດ້ວຍທ່າທີເສີຍໆວ່າ :

" ລາວຕາຍແລ້ວ ".

ເມື່ອຂ້ອຍບໍ່ອອກໄປໂລດ ຫາກແຕ່ຢືນຢູ່ບ່ອນນັ້ນຢ່າງ ບໍ່ປາກບໍ່ເວົ້າຫຍັງ ນາງກໍເລີຍເກີດໂມໂຫແລະຖາມສຽງ ແດກດັນ :

" ຊັ້ນລະ ! ມີຫຍັງອີກ ? "

ຕໍ່ມາຂ້ອຍເອງກໍເກີດໂມໂຫ ແລະ ເວົ້າຂຶ້ນວ່າ :

" ສາວໂງ່ເອີຍ ".

" ນິໂກລາຍ ! ລາກໍມັນຫນີໄວ້ ! "

ນິໂກລາຍ ພວມເອົາຜ້າຂາຄູເຊັດຄອນທອງແດງຢູ່ ພ້ອມທັງຄ້າງຮົມບາດຫນຶ່ງ ລາວຟາດຄອນທອງແດງໃສ່ກາງ ຫລັງຂ້ອຍ ; ເພື່ອຕອບໂຕ ຂ້ອຍຈຶ່ງກອດຮັດແຂນລາວໄວ້ແລ້ວຊຸນລາວອອກໄປນອກປະຕູ ແລ້ວຊຸກນັ່ງລົງບວກຂຶ້ຕົນ ໃກ້ໆກັບຂັ້ນໄດ ຂຶ້ນໂຮງພະຍາບານ . ລາວຢູ່ໃນອາການສະຫງົບ ງຽບຊົ່ວໄລຍະຫນຶ່ງ ນັ່ງຢູ່ໂດຍບໍ່ປາກບໍ່ຕີງ, ສ່ວນຕາຈ້ອງເບິ່ງຫນ້າຂ້ອຍ . ຕໍ່ມາ ຈຶ່ງລຸກຂຶ້ນ ແລະ ເວົ້າວ່າ :

" ຮີຍ ! ບັກລູກຫມາ ! "

ຂ້ອຍໄປສວມ ເດີຊາວິນ ແລະນັ່ງລົງແປ້ນມ້າໃກ້ໆກັບອະນຸສາວະລີນັກກະວີ . ຂ້ອຍຮູ້ສຶກວ່າຈິດໃຈຫຸ່ມຮ້ອນແລະ ຄິດປາກກໍເລື່ອງບໍ່ຈົບບໍ່ຍານ, ກໍເລື່ອງອັບອາຍຂາຍຫນ້າຂຶ້ນ ເພື່ອ

ໃຫ້ມີຜູ້ຄົນມາຫຸ້ມຕີຂ້ອຍ , ເມື່ອຖືກຕີແລ້ວ ຂ້ອຍກໍມີສິດທີ່ ຈະໂດດເຂົ້າຊົກຕ່ອຍພວກເຂົາເຫລົ່ານັ້ນ . ແຕ່ເຖິງແມ່ນວ່າ ບໍ່ແມ່ນມີເຣື່ອງການກໍຕາມ ສ່ວນແຫ່ງນີ້ກໍຫວ່າງຜູ້ຄົນ ,ແລະຕາມຖະຫນົນອ້ອມແອ້ມກໍບໍ່ມີຄົນຈັກຄົນເລີຍ . ມີແຕ່ລົມພັດຈ້ອນມາ–ຫອບເອົາໃບໄມ້ແຫ້ງໄປຕ່ອງກັບຂອບປ້າຍໂຄສະນາທີ່ຕິດ ໄວ້ຕາມເສົາດອກໄຟທີ່ຕັ້ງຢູ່ໃກ້ໆ .

ເວລາຄ່ຳມືດລົງ ,ອາກາດຫນາວອົ້ນຊຸກໄຊ,ແລະ ທ້ອງຟ້າກາຍເປັນສີຟ້າຊ້ຳຂະມຸກຂະມົວ . ອະນຸສາວະລີຕັ້ງ ສູງຖ້ອມຫົວຂ້ອຍຄືດັ່ງເທວະຮູບທີ່ເຮັດດ້ວຍທອງສຳລິດ .ຂ້ອຍ -ແຫງນເບິ່ງ ແລະຄິດຢູ່ໃນໃຈ : ໃນໂລກນີ້ມີຄົນຜູ້ຫນຶ່ງດຳລົງຊີວິດຢູ່ຄື ຢາກົບ , ເປັນຄົນປ່ຽວພ້ອຍ,ຕໍ່ສູ້ກັບພະເປັນ ເຈົ້າດ້ວຍກຳລັງແຮງທັງຫມົດຂອງສະຕິປັນຍາຂອງລາວ, ແລ້ວ -ເຂົາກໍຕາຍຢ່າງຄົນທຳມະດາສາມັນ ທຳມະດາສາມັນອີ່ຫລີ . ເລື່ອງນີ້ມີການເບິ່ງເບົາກັນຫລາຍ ,ແລະເປັນເລື່ອງຫນັກໃຈທີ່ຈະທົນຢູ່ເບິ່ງຕໍ່ໄປ .

" ແລະຫມໍນິໂກລາຍຄົນນັ້ນ ກໍເປັນຄົນໂງ່ຈ້າ .ຫມໍຄວນຈະຕໍ່ສູ້ຫລືເອີ້ນຕຳຫລວດເພື່ອມາຈັບຂ້ອຍໄປຂັງຄຸກ " .

ຂ້ອຍໄປຫາ ຮູບຊົບ ແລະພົບລາວພວມກົ້ມຫົວໃສ່ໂຕະ ຢູ່ໃນຫ້ອງທີ່ເປັນຄືໂກນໄມ້ , ລາວພວມຫຍິບເສື້ອຂາດໂດຍອາໄສແສງຕະກຽງນ້ອຍໆ .

" ຢາກົບ ຕາຍແລ້ວ " .

ຊາຍຊະລາ ຍິ້ມອົ້ນ ທັງທີ່ຍັງຈັບເຂັມຢູ່ . ເປັນທີ່ເດັ່ນຊັດວ່າ ລາວຈະເອົາມີເຮັດໄມ້ກາງເຂນແຕ່ກໍຢຸດທັນທີທັນໃດ,

ເສັ້ນໄຫມຫຍິບໄປຂ້ອງອັນໃດອັນຫນຶ່ງ ແລະລາວຈົ່ມດ່າພຶມພຳ ດ້ວຍຄຳລາມົກຫຍາບຊ້າ .

ຊົ່ວໄລຍະຫນຶ່ງຕໍ່ມາ ລາວຈົ່ມມຸມໆວ່າ :

" ກ່ຽວກັບເລື່ອງນີ້ - ພວກເຮົາທັງຫມົດກໍຈະຕາຍເມື່ອຮອດເວລາ . ມັນແມ່ນຄວາມໂງຈາໄຮສາລະປະຈຳຕົວຂອງຄົນເຮົາ . ແມ່ນລະ , ມັນເປັນໄປແນວນັ້ນ . ຢາກົບຕາຍແລ້ວ . ແລະມີຊ່າງຈອດທອງຢູ່ໃກ້ໆນີ້ຄົນຫນຶ່ງ ຈາກໄປແລ້ວເຊັ່ນກັນ . ອາທິດແລ້ວ ,ສາລະວັດເອົາມັນໄປ . ຂອຍ ຣູ້ຈັກຊ່າງຈອດທອງໂດຍຜ່ານ ກູຣິ . ມັນເປັນຄົນຫລັກແຫລມ-ໄດ້ ! ແລະເປັນກັນເອງກັບພວກນັກສຶກສາ . ພວກເອົາພາກັນຮອງໂຮໂອທະການ - ພວກນັກສຶກສານະ - ເຈົ້າໄດ້ຍິນບໍ່ ? ນີ້ ຫຍິບເສື້ອຕົວນີ້ໃຫ້ແດ່ . ຂອຍເບິ່ງບໍ່ເຫັນວ່າ ຕົນເອງພວມເຮັດຫຍັງ " .

ລາວຍື່ນເສື້ອຂາດສ້ອຍໃຫ້ຂອຍ ພ້ອມທັງເຂັມທັງຝ້າຍ - ໄຫມຫຍິບ ແລ້ວເລີ່ມຕົ້ນຍ່າງຫລົບໄປຫລົບມາພາຍໃນຫ້ອງທັງເອົາມືອັດຫລັງ ,ທັງຈົ່ມພຶມພຳ ທັງໄອສັບກັນໄປ :

" ມີໄຟລຸກອັ້ນ ບຶດຫນຶ່ງຢູ່ພີ້ ບຶດຫນຶ່ງຢູ່ພຸ້ນ . ແລະແລ້ວພວກຜີເຜດມານອດມັນຈົນດັບ , ແລ້ວຄວາມເບື່ອຫນ່າຍຫນ້າຫົນຫວຍກໍກັບຄືນມາອີກ . ນີ້ແມ່ນເມືອງອັບປະມຸງຄຸມ .ຂອຍຈະຫນີຈາກໄປ ກ່ອນທີ່ແມ່ນ້ຳຈະການແຂງຈົນເຮືອເດີນໄປ ບໍ່ໄດ້ " .

ລາວຢຸດເວົ້າປຸບປັບ ແລະຖາມຂ້ອຍທັງເອົາມືເກົາຫົວລ້ານ:

" ມີແຕ່ - ທາງໃດວະ ? ບໍ່ມີບ່ອນໃດທີ່ຂ້ອຍບໍ່ເຄີຍໄປ.

ບໍ່ມີແມ່ນແຕ່ບ່ອນດຽວ . ແມ່ນລະ ຂ້ອຍເຄີຍເລາະລ່ອງໄປ-
ແລະຕົນເອງກໍຈົນເບື່ອ " .

ລາວຖົ່ມນ້ຳລາຍ ແລະ ກ່າວເສີມຕໍ່ :

" ຊີວິດນີ້ - ຈັ່ງແມ່ນອັບປີ ! ມີຊີວິດຢູ່ມາພໍແຮງແລ້ວ-ເຮັດວຽກ , ອິດອ່ອນມາພໍແຮງແລ້ວ ແຕ່ບໍ່ໄດ້ຫຍັງບໍ່ວ່າທາງຈິດໃຈ , ບໍ່ວ່າທາງຮ່າງກາຍ " .

ລາວມິດໄປຄາວໜຶ່ງ , ຢືນຢູ່ແຈຝາແຄມປະຕູ ແລະປະກົດຄືພວມຟັງສຽງອັນໃດອັນໜຶ່ງ . ຕໍ່ມາລາວຍ່າງໂຢບຜ່ານກາງຫ້ອງມາຢືນຢູ່ຂ້າງຂ້ອຍທີ່ສົ້ນໂຕະ .

" ຂ້ອຍຂໍເວົ້າແນວນີ້ ອາເລັກໄຊ ເອີຍ : ມັນເປັນ -ເລື່ອງອັບອາຍທີ່ ປາກົບ ອຸທິດຫົວໃຈອັນຍິ່ງໃຫຍ່ຂອງ ເຂົາເພື່ອຕໍ່ສູ້ກັບພະເປັນເຈົ້າຢ່າງບໍ່ມີປະໂຫຍດແນວນີ້ . ທັງ ພະເປັນເຈົ້າລວມທັງເຈົ້າຊານັ້ນ ຈະບໍ່ດີວິເສດຫຍັງຂຶ້ນດອກຄັນ-ວ່າຂ້ອຍບໍ່ນັບພວກເພິ່ນກໍດາຍ , ບໍ່ເຮັດໃຫ້ຫຍັງດີຂຶ້ນເລີຍ . ເລື່ອງມັນເປັນຈັ່ງຊີ້ ຈຳເປັນຕ້ອງໃຫ້ຄົນເຮົາໂມໂຫຊິງຊັງຕົນເອງ ແລ້ວດັດແປງຊີວິດອັນຜູໂດກທີ່ພວກເຂົາດຳເນີນຢູ່.ແມ່ນຈັ່ງຊັ້ນ ! ຂ້ອຍນີ້ເຖົ້າແກ່ແລ້ວ . ໝົດເວລາແລ້ວ .ອີກ ບໍ່ດົນຂ້ອຍກໍຈະຕາບອດມືດ ບໍ່ເຫັນຮຸ່ງອີກ . ເປັນໝາເຖົ້າ ອື່ຫລົ້ມ ນ້ອງຊາຍ . ຫຍິບເສື້ອແລ້ວວະ ? ເອີ ຂອບໃຈ...ໄປຫ້ອງຂາຍເຫລົ້າເທາະ ແລ້ວດື່ມຊານຳກັນ " .

ຕາມທາງມຸ່ງສູ່ຮ້ານຂາຍເຫລົ້າ ລາວເຕະສະດຸດທ່າມ -ກາງຄວາມມືດ ແລະ ຄວ້າຈັບບ່າຂ້ອຍໄວ້ ເພື່ອບໍ່ໃຫ້ລົ້ມແລ້ວກໍເວົ້າຕໍ່ໄປວ່າ :

" ຈື່ຈຳຄຳເວົ້າຂອງຂ້ອຍໄວ້ດີ . ວັນໜຶ່ງຄວາມ ອົດທົນຂອງປະຊາຊົນຈະເຖິງຂີດສູງສຸດແລ້ວລະເບີດອອກ .ເຂົາເຈົ້າຈະເກີດອາລົມຮ້ອນວີ່ ແລະຈະທັບມ້າງທຸກສິ່ງທຸກຢ່າງ - ທີ່ຜູ້ໂດກຂັດຂວາງຊີວິດຂອງຕົນທັງໝົດໃຫ້ເປັນຝຸ່ນທູລີ . ປະຊາຊົນຈະໝົດຄວາມອົດທົນຕໍ່ໄປ " .

ພວກເຮົາໄປບໍ່ທັນຮອດຮ້ານຂາຍເຫລົ້າຊ້ຳ ລະຫວ່າງ - ທາງ ພວກເຮົາກໍໄດ້ພົບກັບກຸ່ມພະລາກອນເຣືອທີ່ພາກັນ ຫຸ້ມລ້ອມປະຕູເຂົ້າໂຮງໂສເພນີ ບ່ອນຊຶ່ງຊາວກຳມະກອນຈາກ - ໂຮງສີ ອາລາຟູຊົບ ຍຶດຈອງເປັນເຈົ້າຢູ່ .

" ມີການຊົກຕ່ອຍກັນຢູ່ບ່ອນນີ້ທຸກໆວັນພັກ "ຣູບຊົບ ເວົ້າຢ່າງພໍໃຈທັງຈົກແວ່ນຕາອອກມາ . ແລະ ເມື່ອເຫັນໝູ່ຂອງຕົນຢູ່ທາງຝ່າຍທີ່ທຳການປ້ອງກັນ ,ລາວກໍເຂົ້າຮ່ວມການ ວິວາດພິດຖຽງກັນທັນທີ ທັງຮ້ອງໃຫ້ກຳລັງໃຈແກ່ໝູ່ພວກຂອງ-ຕົນ :

" ຟາດມັນ ! ຢຽບມັນແປປານກົບ ! ທຸບຫົວມັນ ພວກປາຊິວ ! ເຢິກ ! "

ເປັນເລື່ອງແປກປະຫລາດທີ່ເຫັນຄວາມກະຕືລືລົ້ນຂອງ - ລາວ , ເຫັນຄວາມຄ່ອງແຄ້ວຂອງລາວໃນການບຸກໂຈມ ຕີພວກພາລະກອນເຣືອດັ່ງເຊັ່ນ : ຫລົບຫລີກກຳປັ້ນ ,ໄຊ້ ບາໄຫລ່ກະທົບຝ່າຍກົງກັນຂ້າມຈົນລົ້ມລາວ . ພວກເຂົາສູ້ ກັນຢ່າງມ່ວນຊື່ນ ບໍ່ມີອາການຄຽດແຄ້ນຕໍ່ກັນ - ຖືເປັນເລື່ອງຕະຫລົກເຮຮາ , ເປັນທາງອອກຂອງກຳລັງແຮງສ່ວນເກີນ.ຝູງຄົນໃນຊຸດສີດຳມືດຊຸກດັນພວກກຳມະກອນໂຮງສີຈົນຖອຍໄປ -

ຮອດປະຕູຮົ້ວ , ຈົນໄມ້ແປ້ນແຕກຫັກເກີດສຽງດັງ. ສຽງຮ້ອງໂຮມວນວຸ່ນດັ່ງສະນັ່ນຂຶ້ນ :

" ຈັບທ່ານເສນາທິການຫົວລ້ານຫັ້ນ ! "

ມີສອງຄົນປີນຂຶ້ນໄປເທິງຫລັງຄາເຮືອນ ແລ້ວຮ້ອງ ເປັນເພງສຽງດີ່ວາ :

ພວກເຮົາບໍ່ແມ່ນຄົນຂີ້ລັກ , ບໍ່ແມ່ນນັກປຸ້ນ, ບໍ່ແມ່ນຄົນພະເນຈອນ , ພວກເຮົາເປັນບາວຊາວເຮືອ ,ພວກເຮົາ ເປັນຄົນຫາປາ !

ສຽງຫມາກຫວິດຂອງຕຳຫລວດດັງຂຶ້ນ , ກະດຸມທອງ - ແດງເຫລື້ອມມາບແມບໃນຄວາມມືດ . ສຽງເກີບລູຍຕີນ ດັງເປະປະ . ສຽງເພງຢູ່ເທິງຫລັງຄາດັງຕໍ່ໄປ :

ພວກເຮົາກາງອວນຢູ່ເທິງຕາຝັ່ງທາງໄກນ້ຳ
ອ້ອມເຮືອນພໍ່ຄ້າ ,ອ້ອມເລົ້າ,ອ້ອມສາງ ,

" ເອົາເລີຍ ! ຢ່າຕີຄົນລົ້ມລະ ! "

" ພໍ່ເຖົ້າ ! ເບິ່ງແນ່ະ ! "

ໃນທີ່ສຸດ ຮູບຊຸບແລະຂອຍ ກັບອີກຫ້າຫົກຄົນ - ທັງຫມູ່-ຕີນເອງ ແລະ ຄູປໍ່ລະປັກ - ຖືກຈັບໄປທີ່ປ້ອມຕຳຫລວດ . ທ່າມກາງຄືນອັນສະຫງົບງຽບຂອງລະດູໃບໄມ້ຫລົ່ນມີສຽງເພງລອງລອຍມາຈົນເຖິງພວກເຮົາວ່າ :

ປັດໂທ ! ອວນພວກເຮົາຖືກປາວິເສດສີ່ສິບໂຕ,
ຫມາຍເຖິງຊິໄດ້ກິນສັດຫລາຍແນວໃດ !

" ຄົນຢູ່ຕາມແຄມແມ່ນ້ຳໂວນການີ້ - ເຂົາເຈົ້າເປັນຄົນຈັບອີ່ຫລີ່ເດ້ " ຮູບຊຸບອະທິບາຍຢ່າງຊຸ່ມຊື່ນ ທັງຖົ່ມນ້ຳລາຍ-

ປັນເລືອດອອກມາ ,ທັງສົ່ງຂີ້ມູກອອກຈາກດັງເຫລັ້ນ. ລາວຊິ່ມໃສ່ຫູຂ້ອຍວ່າ " ໂຕໜີໄປສາ . ຫາໂອກາດແລ້ວແລ່ນໜີ! ເປັນຫຍັງໂຕຈຶ່ງຢາກໄປເຂົ້າຄຸກ ? "

ຂ້ອຍແລ່ນຫລົບອອກຂ້າງຖະໜົນ . ພາລະກອນເຮືອ - ຮ່າງໂຍກເຢກຄືນໜຶ່ງປະຕິບັດຕາມຂ້ອຍ . ພວກເຮົາ ໂດດຂ້າມຮົ້ວບ່ອນໜຶ່ງ ແລ້ວກໍໂດດຂ້າມອີກບ່ອນໜຶ່ງ ,ແລະ ນັ້ນເປັນເທື່ອສຸດທ້າຍທີ່ຂ້ອຍເຫັນໝູ່ຜູ້ຫລັກແຫລມ ຜູ້ທີ່ຮັກແພງ ຄືນິກິຕາ ຣູບຊົບ .

ຊີວິດຂ້ອຍນັບມື້ເຕັມໄປດ້ວຍຄວາມຫວ່າງເປົ່າ. ນັກສຶກສາເລີ່ມເຕັ້ນກໍ່ຄວາມຫຍຸ້ງເຫຍີງ . ຂ້ອຍບໍ່ສາມາດເຂົ້າໃຈ ພວກເຂົາ , ບໍ່ຮູ້ແຈ້ງຈຸດປະສົງແລະສາຍເຫດຂອງພວກເຂົາ . ຂ້ອຍເຫັນການກະທຳ ອັນມ່ວນຊື່ນຟົດຟື້ນຂອງພວກເຂົາ ແລະບໍ່ແມ່ນເຫັນຄວາມວິຕົກກັງວົນທີ່ຄວນຕໍ່ສູ້ຢູ່ໃນຊີວິດຂອງພວກ - ເຂົາ . ຂ້ອຍຮູ້ສຶກວ່າ ເພື່ອເຫັນແກ່ຄວາມສຸກໃຈໃນການສຶກສາຢູ່ມະຫາວິທະຍາໄລແລ້ວ ຈະຕ້ອງທົນຕໍ່ຄວາມເຈັບປວດ ທໍລະມານ . ຖາມຜູ້ບອກຂ້ອຍວ່າ :

" ໄປເຂົ້າຮ່ຳຮຽນຊາ , ແຕ່ມີເງິນໄຂວ່າ ເຈົ້າຈະ- ຖືກຄ້ອນຕ່ອຍຫູກວັນທິດຢູ່ສະໜາມ ນິໂກລາເຢັບສະກາຢາ," ອາດເປັນໄປໄດ້ທີ່ສຸດວ່າຂ້ອຍຈະຕົກລົງຮັບເງິນໄຂນີ້ .

ກັບຄືນໄປໂຮງເຂົ້າຈີ່ ເຊມິໂຍນົບ ຂ້ອຍຮູ້ວ່າພວກ ກຳ- ມະກອນຢູ່ແຫ່ງນີ້ພ້ອມວາງແຜນຈະພາກັນໄປຍັງມະຫາວິທະຍາ ໄລ ເພື່ອຕົບຕີກັບພວກນັກສຶກສາ .

11–329

" ເຮົາຊິເອົາແຫ່ງຫລັກໜັກໆໄປນຳ " ພວກເຂົາປະກາດດ້ວຍຄວາມຄຶກຄື້ນ .

ຂ້ອຍພະຍາຍາມໂຕ້ຖຽງກັບພວກເຂົາ . ແຕ່ໃນທັນໃດ-ຂ້ອຍກໍຄິດໄດ້ວ່າ ຕົນເອງບໍ່ມີຄວາມປາຖະໜາໃດໆທີ່ ຈະໄປຖົກຖຽງແທນພວກນັກສຶກສາ , ບໍ່ສາມາດຫາຄຳເວົ້າໃດໆ - ເພື່ອປົກປ້ອງພວກເຂົາ .

ຂ້ອຍຈື່ໄດ້ວ່າ ຂ້ອຍອອກຈາກຫ້ອງໃຕ້ດິນດ້ວຍຄວາມຮູ້ສຶກບໍ່ສະບາຍແລະຍາງໂຊເຊ , ຫົວໃຈເຕັ້ນໄປດ້ວຍຄວາມ ຂົມຂື່ນຊອກຊ້ຳສຸດພັ່ນລະນາ .

ຈົນເທົ້າເດິກດື່ນ ຂ້ອຍນັ່ງຢູ່ແຄມຝັ່ງແມ່ນ້ຳ ກາບານໂຍນກ້ອນຫີນລົງນ້ຳສີຊ້ຳໆ ແລະຄິດຫາແຕ່ເລື່ອງໜຶ່ງເລື່ອງດຽວ, ຄຳເວົ້າອັນໜຶ່ງອັນດຽວ ແລະຫລຳໄປຫລຳມາບໍ່ສຽງສຸດເປັນຈັກເທື່ອຄື :

" ກູຊິເຮັດແນວໃດ ? "

ເພື່ອບໍ່ໃຫ້ເວລາເປົ່າຫວ່າງ ຂ້ອຍເລີ່ມຕົ້ນຮຽນຫລິ້ນວິໂອລົງ , ແອບສີຕອນກາງຄືນຢູ່ໃນຮ້ານເຂົ້າຈີ່ ,ໂດຍສ້າງ - ຄວາມລຳຄານແກ່ຄົນເຝົ້າຍາມແລະໝູ່ທັ້ງຫລາຍ . ຂ້ອຍມັກດົນຕີແລະອຸທິດຕົນແກ່ສິ່ງປ່ອນໃຈອັນໃໝ່ນີ້ຢ່າງສຸດຊຶ້ງ . ແຕ່ແລ້ວຄືນໜຶ່ງ ຂະນະທີ່ຮຽນດົນຕີຢູ່ ຂ້ອຍກໍອອກຈາກຮ້ານ ໄປຊົ່ວໄລຍະໜຶ່ງ , ສ່ວນຄູສອນຊຶ່ງເປັນນັກຫລິ້ນ ວິໂອລົງ ປະຈຳຢູ່ວົງດົນຕີຂອງໂຮງລະຄອນ ໄດ້ໄຊ້ລືມຊັກມຽນເງິນຊຶ່ງ - ຂ້ອຍລືມອັດ . ເມື່ອກັບຄືນມາຮ້ານ ຂ້ອຍພົບເຂົາພວມ ເອົາ

ເງິນຍັດໃສ່ຖົງສົ້ວຢູ່ . ເຂົາຍິ້ມຫົວມາຫາ ເມື່ອເຫັນຂ້ອຍ - ຍ່າງມາຮອດທາງເຂົ້າປະຕູ ແລະ ສະເຫນີຫນ້າອັນເປັນ ຕາຫນ່າຍ ແລະແຖກຽງແລ້ວນັ້ນມາຄື່ດງວ່າ ເພື່ອຮັບເອົາກຳປັ້ນ ເຂົາເວົ້າຄ່ອຍໆວ່າ :

" ເອົາ ,ຕີໂລດ " .

ຣິມສົບຂອງເຂົາສັ່ນໆ ,ນ້ຳຕາເມັດໃຫຍ່ໆໄຫລອອກ ມາຈາກຕາທີ່ປາສະຈາກສີສັນທັງສອງເບື້ອງ .

ຂ້ອຍຮູ້ສຶກຄືວ່າໄດ້ຕົບຕີເຂົາ , ເພື່ອປ້ອງກັນບໍ່ໃຫ້ ເກີດເລື່ອງອັນນີ້ ຂ້ອຍນັ່ງລົງພື້ນ ທັບກຳປັ້ນໄວ້ ແລະສັ່ງໃຫ້ເຂົາ-ເອົາເງິນໄວ້ລຸ່ມຊຸກຄືນຄືເກົ່າ . ເຂົາຈົກເງິນອອກຈາກຖົງ-ຫມົດ ແລະ ກ້າວໄປທີ່ປະຕູ - ແຕ່ກໍ່ຢຸດກຶກ ແລະ ເວົ້າສຽງສັ່ນໆ :

" ໃຫ້ຂ້ອຍແດ່ສິບຮູບ ! "

ຂ້ອຍເອົາໃຫ້ເຂົາສິບຮູບ ,ແຕ່ຂ້ອຍກໍຢຸດຮຽນດົນຕີເລີຍ. ໃນເດືອນທັນວາ ຂ້ອຍຕັດສິນໃຈທີ່ຈະຂ້າຕົວເອງຕາຍ . ນັບແຕ່ນັ້ນມາ ຂ້ອຍກໍພະຍາຍາມພັນລະນາເບື້ອງຫລັງການຕັດສິນໃຈດັ່ງກ່າວຢູ່ໃນເລື່ອງທີ່ໃສ່ຊື່ວ່າ " ເຫດການຫນຶ່ງໃນຊີວິດ-ຂອງນາກາ " . ເລື່ອງນັ້ນເປັນແບບມະລຸມມະລວຍ,ບໍ່ເຂົ້າທ່າ ແລະປາສະຈາກຄວາມຈິງ , ເຖິງປານນັ້ນກໍຕາມ-ຂ້ອຍຮູ້ສຶກປະກົດວ່າ-ການທີ່ມັນປາສະຈາກຄວາມຈິງນີ້ປະກອບເປັນຈຸ່ມຄ່າອັນໃຫຍ່ຫລວງຂອງມັນ , ຫລັກຖານຕົວຈິງນີ້ບົ່ງ ໄວ້ຢ່າງຖືກຕ້ອງຕາມຄວາມເປັນຈິງ ,ແຕ່ການຕີຄວາມຫມາຍ -ຂອງເລື່ອງປາກົດວ່າບໍ່ຄືເລື່ອງຂອງຂ້ອຍ,ແລະເລື່ອງທັງຫມົດ

ນັ້ນບໍ່ປະກົດວ່າພົວພັນກັບຂ້ອຍ . ໂດຍຍົກເວັ້ນບັນຫາກ່ຽວກັບຄູນຄ່າທາງວັນນະຄະດີແລ້ວ ເລື່ອງນີ້ມີບາງສິ່ງບາງຢ່າງ ທີ່ຂ້ອຍພໍອົກພໍໃຈ ໃນຖານະເປັນໄຊຊະນະຕໍ່ຕົນເອງ .

ຂ້ອຍຊື້ປືນພົກທີ່ມີລູກພ້ອມສີ່ລູກ ຈາກນັກດົນຕີຢູ່ຕະຫລາດ-ແລະ ຍິງເຂົ້າທີ່ອົກຕົນເອງ . ຂ້ອຍຫວັງວ່າຈະໃຫ້ມັນຖືກ ຫົວໃຈ , ແຕ່ໄປຖືກພວງປອດ ; ແລະເດືອນໜຶ່ງຕໍ່ມາ ,ຂ້ອຍກໍກັບຄືນໄປເຮັດວຽກທີ່ໂຮງເຂົ້າຈີ່ອີກ ທັງຮູ້ສຶກຕົວວ່າຕົນເອງເປັນຄົນໂງ່ຈ້າແບບບໍ່ເຄີຍມີມາກ່ອນ .

ແນວໃດກໍ່ຕາມ ບໍ່ແມ່ນເຮັດຕໍ່ໄປດົນໆດອກ .ແລ້ວ ວັນໜຶ່ງ , ຕອນທ້າຍເດືອນມີນາ ,ຂະນະທີ່ກັບມາແຕ່ໂຮງເຂົ້າຈີ່ ຂ້ອຍພົບ ໂຄໂລນ ນັ່ງຢູ່ແປະປ່ອງຢ້ຽມຂອງຫ້ອງດ້ານຫລັງໂຮງເຂົ້າຈີ່ . ເຂົາພວມສູບຢາ ແລະ ນັ່ງເຮັດຕາລອຍແນມເບິ່ງຄວັນຢາຢູ່ .

" ເຈົ້າມີເວລາແດ່ບໍ່ ? " ເຂົາຖາມຂ້ອຍໂດຍທີ່ບໍ່ຖາມສະບາຍກ່ອນ .

" ຊາວນາທີ " .

" ນັ່ງກ່ອນເນາະ ຂ້ອຍຢາກລົມນຳເຈົ້າ " .

ຄືດັ່ງເລື້ອຍໆມາ ເຂົາໃສ່ຊຸດເສື້ອຊູມຢ່າງຮັດແໜ້ນ , ໝວດເຄົາລ້ານລົງຮອດໜ້າອົກອັນກວ້າງໃຫຍ່ ,ແລະ ຜົມສັ້ນໆແຂງໆຊົ້ວນ , ເປັນຊົບລົບຢູ່ເທິງໜ້າຜາກອັນບົ່ງ ບອກລັກສະນະຊູ້ຊີ້ຂອງເຂົາ . ເຂົາໃສ່ເກີບບົດແບບຊາວນາໜັກ

ໜັກ ແລະມີກິ່ນຫອມຂອງຢາງໄມ້ເຫີຍຣ່ວນອອກມາ . "ຄືຈັ່ງຊີ້ " ເຂົາເລີ່ມຕົ້ນຄ່ອຍໆແບບໜັກແໜ້ນ " ບໍ່ລັງກຽດຕິ ທີ່ຈະໄປບ່ອນຂ້ອຍຢູ່ ? ຂ້ອຍຢູ່ບ້ານ ກຣາສໂນວິໂດໂວ ລ່ອງ-ໄປຕາມນ້ຳໂວນກາອີກປະມານສີ່ສິບຫ້າຫລັກ - ຂ້ອຍມີ ຮ້ານຂາຍເຄື່ອງຢູ່ພຸ້ນ . ເຈົ້າຄືຊິຊ່ອຍຂ້ອຍຈັດການວຽກງານ ຢູ່ຮ້ານໄດ້ ອັນນີ້ບໍ່ກິນເວລາເຈົ້າຫລາຍດອກ . ຂ້ອຍມີປຶ້ມດີໆຢູ່ຫລາຍຫົວ ແລະຂ້ອຍຈະຊ່ອຍເຈົ້າໃນການຮ່ຳຮຽນ.ຕົກລົງນໍ້?"

" ຕົກລົງ "

" ໃຫ້ໄປທີ່ທ່າເຮືອກຸກບາຕົບເວລາຫົກໂມງເຊົ້າວັນສຸກ-ແລ້ວຖາມຫາເຮືອທີ່ມາແຕ່ ກຣາສໂນວິໂດໂວ - ເຈົ້າ ຂອງເຮືອຊື່ວ່າ ວາຊີລີ ປານກົບ . ຫລືເຈົ້າບໍ່ເຫັນຈຳເປັນຕ້ອງ-ຖາມໃຜກໍໄດ້ ເພາະຂ້ອຍຈະໄປຮອດກ່ອນ . ລາກ່ອນເດີ".

ລາວລຸກຂຶ້ນ , ເດີນມາຫາຂ້ອຍ , ຕໍ່ມາກໍຈົກເອົາໂມງເງິນອອກຈາກຖົງສົ້ງແລະເວົ້າວ່າ :

" ພວກເຮົາໄຊເວລາຫົກນາທີ . ເອີ້ນ...ຊື່ຂ້ອຍ ວ່າມິໄຄໂລ ອັນໂຕຈິນວິດ ໂຣມາສ " .

ລາວອອກໄປໂດຍບໍ່ຫລຽວຫລັງ ,ຍ່າງໄປດ້ອຍບາດກ້າວໜັກແໜ້ນ ,ພາຮ່າງກາຍທຶກໜາຂອງຕົນເຄື່ອນຫຍັບໄປ - ຢ່າງງ່າຍດາຍ .

ສອງມື້ຕໍ່ມາ ຂ້ອຍກໍອອກເດີນທາງໄປ ກຣາສໂນວິໂດໂວ.

ແມ່ນ້ຳ ໂວນກາ ຫາກໍເບີກທາງໄຫລໄດ້ ເມື່ອບໍ່ດົນບໍ - ນານມານີ້ . ນ້ຳກ້ອນເປັນແຜ່ນສີຂີ້ເຖົ່າໄຫລໄປຕາມໜ້ານ້ຳ, ປິ່ນໄປປິ່ນມາທ່າມກາງກະແສນ້ຳທີ່ເປື້ອນເປິ .ເຮືອພວກເຮົາ

ບູຜ່າແຜ່ນນ້ຳກ້ອນເຫລົ່ານີ້ ຊຶ່ງຂູດຖູ ແລະ ແຕກກະຈາຍເພື່ອ
ກະທົບກັບຂອບເຮືອ . ບາງກ້ອນເມື່ອຖືກພວກເຮົາຕີກໍ ແຕກ
ສົ່ງສະເກັດແຫລມຄົມຟົ້ງຊະຊາຍ .ລົມພັດມາແຮງໆສົ່ງຄື້ນໄປ
ກະທົບຝັ່ງຢູ່ບໍ່ຂາດໄລຍະ , ແລະແສງຕາເວັນອັນໃສເຫລື້ອມ
ສະທ້ອນໃສ່ນ້ຳກ້ອນເທິງໜ້ານ້ຳຊຶ່ງຂ້າງຂອງມັນເປັນສີຟ້າ -
ເຫລື້ອມປານແວ່ນແກ້ວ . ກຳປັ່ນບັນທຸກທີບທໍ່ ຟຸຍ ແລະ ຖົງ
ຕ່າງໆຢ່າງເຕັມຢຽດ , ມັນແລ່ນໂດຍໃບລົມ . ປານກົບ -
ເປັນຜູ້ຂັບເຮືອ , ເຂົາເປັນຊາຍໜຸ່ມຊົນນະບົດທີ່ນຸ່ງ ເຄື່ອງ
ໂກ້ງາມ . ເສື້ອໜັງແກະສີນ້ຳຕານຂອງເຂົາມີຮອຍແສ່ວ -
ດ້ວຍເສັ້ນດ້າຍຫລາຍສີສັນເຕັມໜ້າອົກ .

ໃບໜ້າຂອງເຂົາງຽບສະຫງົບ , ດວງຕາເຍືອກເຢັນ.
ເຂົາປະກົດວ່າຈົງຈຽມ ແລະ ຄາຍຄືຊາວຊົນນະບົດພຽງ -
ໜ້ອຍດຽວ . ທີ່ຫົວເຮືອ ມີຊາຍຄົນໜຶ່ງຢືນຈ່າງຂາຈັບ ໄມ້
ຂໍ - ນັ້ນແມ່ນຄົນງານຂອງປານກົບ ຊື່ວ່າ ກູກູຊະກິນ .ເຂົາ
ເປັນຄົນບໍ່ຮຽບຮ້ອຍ , ນຸ່ງເສື້ອຂາດ , ຮັດດ້ວຍເຊືອກທ່ອນ
ໜຶ່ງ ແລະ ໃສ່ໝວກຍັບຍູ່ ຊຶ່ງເປັນໝວກເກົ່າຂອງຊຸມພໍມັກ
ສອນສາສະໜາ . ໃບໜ້າຂອງເຂົາມີຮອຍບາດ,ຮອຍເຫຼົ້ນ
ຢ່າງສາຫັດ . ລາວເອົາໄມ້ຂໍຊຸກນ້ຳກ້ອນທີ່ລ່ອງລອຍມາໃກ້ໆ
ເຮືອ ທັງຈົ່ມດ່າຄາງພຶມໆຜູ້ດຽວວ່າ :

" ຫລີກໜີ ! ມຶງຄິດວ່າຊິໄປໃສ ? "

ໂຣມາສ ແລະ ຂອຍນັ່ງຢອງທີບທໍ່ກອງເຕັງກັນຢູ່ກອງໃບ
ເຮືອ . ເຂົາເວົ້າຂັ້ນຄ່ອຍໆວ່າ :

" ພວກຊົນນະບົດບໍ່ມັກຂ້ອຍ - ໂດຍສະເພາະຊາວຊົນ-

ນະບົດທີ່ຮ້າງນີ້ . ແລະແມ່ນອນແຫລະວ່າ ເຂົາຊິບໍ່ມັກເຈົ້ານໍາ."

ກູກູຊະກິນ ວາງໄມ້ຂໍທາບລົງໃສ່ຫົວເຮືອ ແລ້ວປິ່ນຫນ້າທີ່ມີຮອຍບາດເຈັບມາຫາພວກເຮົາ ແລະ ເວົ້າຂຶ້ນດ້ວຍ ຄວາມຊື່ນຊົມວ່າ :

" ຊູນພໍ ອັນໂຕນິຊ ຊັງເຈົ້າສຸດຂີດ ບໍ່ແມ່ນຫວະ ? "

" ຈັ່ງຊັ້ນແທ " . ປານກົບເຫັນພອນ .

" ເຈົ້າຄືກະດູກຂວ່າງຄໍສໍາລັບມັນ - ບັກຫມາຂີ້ເຮື້ອນ-ນັ້ນ ! "

" ແຕ້ຂອຍກໍມີພັກພວກຄືກັນໃດ . ພວກເຂົາຈະ ເປັນຫມູ່ເພື່ອນເຈົ້າເຊັ່ນດຽວກັນ " . ໂຄໂຄນ ເວົ້າຕໍ່ .

ອາກາດເຢັນຈອຍໆ .ດວງຕາເວັນຍາມເດືອນມີນາ ຮຸ່ງໃສ ແຕ່ໃຫ້ຄວາມອົບອຸ່ນພຽງຫນ້ອຍດຽວ .ຕົ້ນໄມ້ສີດໍາປາສະຈາກໃບໂອນເອນໄປມາຢູ່ແຄມຝັ່ງ . ຢູ່ທຸກແຫ່ງຫົນ ເຊັ່ນ - ຕາມຮ່ອງ , ຕາມພຸ່ມໄມ້ ຍັງມີກອງຫິມະກະຈັດກະຈາຍເປັນກອງເລັກກອງນ້ອຍ . ແທ່ງນໍ້າກ້ອນຟູ່ອາມຕາມແມ່ນໍ້າ ເບິ່ງຄືຝູງແກະພວມກິນຫຍ້າຢູ່ຕາມທົ່ງ . ຂອຍຮູ້ສຶກປະກົດວ່າ ຕົນເອງຢູ່ໃນຄວາມຝັນ .

ກູກູຊະກິນ ເອົາຢາຢັດໃສ່ກອກ ແລະນຶກຝັນໄປເຖິງ - ເລື່ອງປັດຊະຍາ :

" ແມ່ນຄວາມຈິງຢູ່ວ່າ ເຈົ້າບໍ່ແມ່ນເມຍຂອງລາວ. ແຕ່ມັນເປັນທູລະຂອງຊູນພໍ່ມັກສອນສາສະຫນາ ທີ່ຈະຮັກແພງ ສັບພະສັດທັງຫມົດ , ແມ່ນຕວ່າ...ຕອນທີ່ຂຽນໄວ້ຢູ່ໃນຄໍາພີ".

" ແມ່ນໃຜຕີເຈົ້າຈົນຊໍ້າດໍາຂຽວປານນີ້ ? "ໂຣມາສ -

ຖາມເຂົາ ທັງຫົວຍິ້ມ .

" ບໍ່ມີໃຜອື່ນໃດດອກ . ມັນແມ່ນຄົນຈະນິດຢູ່ໃນເງົາມືດ ຄືພວກຂີ້ລັກ . ວຽກຂອງພວກມັນກໍແມ່ນ – ເອີຂອຍບໍ່ ຄວນປະຫລາດເລີຍ " . ກູກູຈະກົນ ຕອບຢ່າງດູຫມິ່ນ . ຕໍ່ມາ–ເຂົາເວົ້າເສີມຂຶ້ນ ດວຍຄວາມທະນົງໃຈວາ :

" ທະຫານພວກຫນຶ່ງເຄີຍຕີຂອຍ – ເທື່ອນັ້ນແມ່ນ ທະຫານປືນໃຫຍ່ . ຮວາຍ ບໍ່ທຳມະດາໃດ ! ຂອຍບໍ່ຮູ້ວາ ຄົນເອງລອດຊີວິດມາໄດ້ຈັ່ງໃດ " .

" ເປັນຫຍັງຈິ່ງຕີ ? " ປານກົບສໍ້ .

" ເທື່ອໃດ – ວານນີ້ຫວະ ? ຫລືວ່າເທື່ອທະຫານ ປືນໃຫຍ່ ? "

" ເອີ... ເທື່ອວານນີ້ " .

" ເຮັດຈັ່ງໃດຊິບອກໄດ້ວາ ເຂົາໂດດໃສ່ເຈົ້າເພື່ອຫຍັງ! ຄົນຝ່າຍເຮົາ – ລະຄືແບບພູ້ນ . ຈິກຕ່ອຍກັນຊຸດຕະຫລຸດຍ້ອນເລື່ອງເລັກໆນ້ອຍໆ – ປານວ່າແມ່ນຫນ້າທີ່ຂອງເຂົາ , ໄອຊຸກຳປັ້ນຟາດກັນຕຸບຕັບ " .

" ຕາມຂອຍຄິດ " ໂຣມາສເວົ້າ "ມັນແມ່ນຍ້ອນ ປາກເຈົ້າຫັ້ນ ທີ່ເຂົາຕີເຈົ້າ . ເຈົ້າບໍ່ລະມັດລະວັງປາກເລີຍກ່ອນຊິເວົ້າຫຍັງອອກໄປ " .

" ມັນກໍຄືໆຢູ່ . ຂອຍກໍເປັນຄົນສອດຮູ້ສອດເຫັນເອົາແທ້ແທ້ . ມັນແມ່ນນິດໄສທີ່ມັກສໍ້ຖາມຄົນຢູ່ບໍ່ເຊົາ . ມັນເຮັດໃຫ້ຂອຍມ່ວນໃນໃຈ ເມື່ອໄດ້ຍິນຂ່າວໃຫມ່ອັນໃດອັນຫນຶ່ງ " .

ຫົວເຮືອຕຳແທງນ້ຳກ່ອນຢ່າງແຮງ , ອີກແທງຫນຶ່ງ ຊູດ

ຕາມຂ້າງເຮືອຢ່າງເປັນຕາຢ້ານ . ກູກູຊະກິນ ເຊົາໄປໜ້ອຍໜຶ່ງ ຕໍ່ມາກໍຄວ້າຈັບໄມ້ຂໍ . ປານກົບ ຮ້ອງບອກດ້ວຍສຽງຮ້າຍໆ :

" ເບິ່ງກຳກັບວຽກໂຕເອງໜັ້ນດີໆ ສະເຕປານ ! "

" ຊັ້ນຢ່າຊວນຂ້ອຍເວົ້າ " . ກູກູຊະກິນ ພຶມພຳທັງເດ່ໄມ້ຂໍໄປທັ່ງແທງນ້ຳກ້ອນທີ່ລອຍຕາມໜ້ານ້ຳ . " ຂ້ອຍ ບໍ່ອາດເຮັດວຽກທັງລົມກັບເຈົ້າໄປພ້ອມໃນເວລາດຽວກັນໄດ້ ".

ທັງສອງເລີ່ມໂຕ້ຖຽງກັນດ້ວຍອາລົມດື໊ອນ ,ແລ້ວໂຣມາສກໍ່ອວາຍມາຫາຂ້ອຍ .

" ດິນແຖວນີ້ຮ້າຍກວ່າຢູ່ບ້ານຂ້ອຍທີ່ ອູກຣາອິນ ພຸ້ນ . ແຕ່ຜູ້ຄົນນິດໃສດີກວ່າ - ເຂົາເຈົ້າຊຳນິຊຳນານແລະມີຄວາມສາມາດ ! "

ຂ້ອຍຟັງຢ່າງຕັ້ງໃຈ ດ້ວຍຄວາມດຶງດູດ . ຂ້ອຍມັກ ທ່າທາງສະຫງົບງຽບຂອງເຂົາ , ຄວາມເວົ້າຂອງເຂົາງ່າຍ - ດາຍ ແຕ່ມີພະລັງ . ຂ້ອຍຮູ້ສຶກວ່າ ອັນນີ້ແມ່ນຄົນທີ່ມັກຮຽນຮູ້ຢ່າງຮອບດ້ານ , ຍິ່ງກວ່ານັ້ນອີກ ແມ່ນຄົນທີ່ມີວິທີການເປັນ- ຂອງຕົນເອງ ເພື່ອຕີລາຄາຜູ້ອື່ນ ເຊັ່ນດຽວກັນ ມັນເປັນເລື່ອງສະບາຍອົກສະບາຍໃຈ ທີ່ເຂົາບໍ່ສໍ້ຖາມວ່າເປັນຫຍັງ - ຂ້ອຍຈຶ່ງພະຍາຍາມຂ້າຕົວຕາຍ . ຖ້າເປັນຜູ້ອື່ນແລ້ວແນ່ນອນວ່າ ເຂົາຈະຖາມຂ້ອຍແຕ່ດົນແລ້ວ , ແລະຂ້ອຍເບື່ອໜ່າຍ- ຄຳຖາມດັ່ງກ່າວນີ້ອີຫລີ ! ມັນບໍ່ແມ່ນເລື່ອງງ່າຍທີ່ຈະໃຫ້ ຄຳຕອບ . ມີແຕ່ຜີເຜດເທົ່ານັ້ນຮູ້ວ່າເປັນຫຍັງຂ້ອຍຈຶ່ງຢາກ ຂ້າຕົວຕາຍ . ຖ້າວ່າ ໂຄໂຄນຖາມເລື່ອງນີ້ ຂ້ອຍກໍຈະຕອບ -

ຢ່າງຍືດຍາວອ້ອມໄປອ້ອມມາ ແລະຢ່າງບໍ່ໄດ້ເລື່ອງໄດ້ລາວ. ແລະແນວໃດກໍຕາມ ດຽວນີ້ຂ້ອຍບໍ່ຢາກຄິດຫາເລື່ອງນີ້ເລີຍ . ແມ່ນ້ຳ ໂວນກາ ຈັ່ງແມ່ນງົດງາມ , ແຈ່ມໃສແລະສະຫວາດ ສະເຫວີຍ .

ເຮືອພວກເຮົາເລາະໄປ ເບື້ອງທີ່ແຄມຝັ່ງສູງຊັນ .ຊ້າຍ ມືແມ່ນຝັ່ງເນີນ ຊຶ່ງນ້ຳລວາດໄປຕາມຫາດຊາຍ . ຂ້ອຍ ສາ ມາດເຫັນນ້ຳຍູວກຍູ ແລະຝັ່ງອັ້ນຮອດພູມໄມ້ທີ່ຢູ່ແຄມຫາດຊາຍ ໄຫລສາດໄປຖອນຊຸມເລັກຊຸມນ້ອຍ ຢູ່ຕາມໜ້າດິນ-ມັນ ແມ່ນ ນ້ຳ ທີ່ເສາະໃສເປັນຟອງຟາດຝັ່ງ ຍາມລະດູບານໃໝ່.ດວງ ຕາເວັນເຜີຍຕົວສ່ອງແສງ ແລະທາມກາງແສງແດດນີ້ກ ສີ ເຫລືອງສົ່ງສູງຮອງທົ່ງສົມລະວົນໃນການເຮັດຮົ້ງ ,ຫລັງ - ຂອງມັນເຫລື້ອມມາບແມບປານເຫລັກທີ່ຜົດເຫລື້ອມຢ່າງດີ.ດິນ ບ່ອນໃດທີ່ບໍ່ມີໜະປົກມັ້ນ ຫຍ້າກໍແຕກໜໍ່ສີຂຽວສົດ ແລະ ເດ ປາຍອັ້ນຊອນລອນໄປຍັງຕາເວັນ . ແຄງຂາຂອງຂ້ອຍໜາວ ເຢັນ , ແຕ່ໃນຫົວໃຈຂ້ອຍ ຮູ້ສຶກມ່ວນຊື່ນຢູ່ວຽບໆ , ແລະ ຄວາມຫວັງອັນສົດໃສກໍ່ງອກອັ້ນເປັນໜໍ່ອ່ອນນວນ .ໜ່ວຍ ພິ ພົບ ເປັນທີ່ຈະເລີນຕາທີ່ສຸດໃນລະດູບານໃໝ່ .

ພວກເຮົາມາຮອດ ກຣາສໂນວິໂດໂວ ພໍດີທ່ຽງ.ຢູ່ ເທິງ ໂພນທີ່ຮາບພຽງ ມີໂບດສີຟ້າຕັ້ງເດັ່ນຢູ່ , ຫ່າງຈາກໂບດນີ້, ລຽບໄປຕາມແຄມໂພນມີເຮືອນຊາວບ້ານ ທີ່ປຸກຢ່າງໜັ້ນ ລຶງ ຕັ້ງຢູ່ເປັນແຖວ , ຫລັງຄາທີ່ມຸງດ້ວຍແຜ່ນເຫລັກສີເຫລືອງຫລື ມຸງດ້ວຍຫຍ້າເປັນລວດລາຍສະທ້ອນແສງຕາເວັນ , ເຫັນ - ແລວເປັນໜາອອນຊອນ .

ຂ້ອຍມັກແຍງເບິ່ງໝູ່ບ້ານນີ້ເລື້ອຍໆ ຍາມທີ່ເຮືອ ຜ່ານໄປຕາມແມ່ນ້ຳ ໂອນກາ .

ກຸກຸຊະກິນ ກັບຂ້ອຍ ເລີ່ມຕົ້ນຂົນເຄື່ອງອອກຈາກເຮືອໂຮມາສ ຍິ່ມຖົງມາໃຫ້ຂ້ອຍ ແລະເວົ້າຂຶ້ນວ່າ :

" ເຈົ້າແຮງອີ່ຫລີ ! "

ແລະໂດຍສັກຕາໃສ່ຖົງ ທີ່ເຂົາຍື່ນມາໃຫ້ ເຂົາຖາມວ່າ:

" ບໍ່ຈັບເອີກຫວະ ? "

" ບໍ່ຈັບຈັກດ໋ "

ຂ້ອຍຮູ້ສຶກຝັງໃຈ ໃນວິທີຕັ້ງຄຳຖາມຄ່ຽມຄົມຂອງເຂົາ . ຂ້ອຍອາດຈະບໍ່ພໍໃຈ ທີ່ມີຊາວຊົນນະບົດສອດຮູ້ເລື່ອງທີ່ຂ້ອຍພະຍາຍາມຂ້າຕົວຕາຍ .

" ແທ້ຫັ້ນລະ , ເຈົ້າແຂງແຮງພຽງພໍ . ອາດເວົ້າໄດ້ວ່າ ແຂງແຮງລື່ນຫລືເກີນວຽກງານ " . ກຸກຸຊະກິນ ເວົ້າ-ສຽງໂວງ . " ເຈົ້າມາແຕ່ແຂວງໃດ ທາວ ? ນິຊນີບໂກຣົດ ແມ່ນບໍ່ ? ຈັ່ງຊັ້ນກໍແມ່ນນັກລອຍນ້ຳ - ເຂົາເອີ້ນກັນວ່າແນວນັ້ນໃດ . ຫລືເວົ້າວ່າ : ເຈົ້າບອກໄດ້ບໍ່ວ່າ ມົນ ນົກນາງນວນບິນໄປທາງໃດ ? ອັນນີ້ກໍໝາຍເຖິງ ນິຊນີ ຄືກັນ."

ຊາຍຄົນໜຶ່ງຮ່າງສູງຈ່ອຍ ນຸ່ງສິ້ງເສື້ອແພຝ້າຍ,ມີໜວດເຄົາເປັນລອນໂຄ້ງ , ຜົມດົກສີແດງໆ ຍາງລົງຕະຫລິ່ງ ມາຢ່າງວ່ອງໄວ . ຕີນເປົ່າຂອງເຂົາຢຽບລົງດິນປຽກເຮັດ ໃຫ້ແສງສີເງິນຕາມໜານ້ຳກະເທືອນເປັນຍິບຍັບ .

ເມື່ອມາຮອດແຄມນ້ຳ ເຂົາເວົ້າຢ່າງແຈ່ມແຈ້ງແລະ ນຸ່ມນວນວ່າ :

" ຍິນດີຕ້ອນຮັບ " .

ເມື່ອຫລຽວເບິ່ງພວກເຮົາເຮັດວຽກ ເຂົາກໍ່ກົ້ມລົງ ຈັບເອົາທ່ອນໄມ້ຂະໜາດໃຫຍ່ສອງທ່ອນ ແລ້ວກໍ່ກ່າຍແຕ່ແຄມຝັ່ງໄປຫາຂ້າງເຮືອ . ຕໍ່ມາ ເມື່ອໂດດເຂົ້າມາໃນເຮືອ ຢ່າງງ່າຍດ່າຍແລ້ວ ເຂົາກໍ່ອອກຄຳສັ່ງວ່າ :

" ກຽມຮັບເອົາຝຸ່ຍດີ ! ນີ້ທາວ ມານີ້ ຊ່ອຍແດ່ " .

ເຂົາເປັນຄົນງາມສະຫງ່າ ແລະ ປະກົດເດັ່ນວ່າຊິງແຂງແຮງອີ່ຫລີ . ຕາສີຟ້າອ່ອນ ມີປະກາຍເຄັ່ງຂຶມ , ແກ້ມເປັນສີແດງ ແລະດັງໂດ່ງມີຂະໜາດໃຫຍ່ໂຕ .

" ເຈົ້າຊິເປັນຫວັດໃດ ອີໂຊດ " ໂຣມາສບອກເຂົາ .

" ໃຜ - ຂ້ອຍຫວະ ? ບໍ່ມີປ່ານຈັກເທື່ອ ! "

ພວກເຮົາກົ້ງຝຸ່ຍນຳມັນ ໄປໄວ້ແຄມຝັ່ງ . ອີໂຊດ ແນມເບິ່ງຂ້ອຍຢູ່ໄປມາ ແລະຖາມວ່າ :

" ໄປຊ່ອຍວຽກຢູ່ຮານນີ້ ? "

" ລ້ອງເບິ່ງ ແລະ ປ້ຳກັບມັນ " . ກູກູຊະກີນແນະນຳ.

" ຂ້ອຍເຫັນເຈົ້າ ຖືກຕີຈົນໜ້າແຕກອີກ " .

" ຮວາຍ ! ເຈົ້າຊິເຮັດຫຍັງໄດ້ກັບຄົນຈັ່ງຊັ້ນ ? "

" ກັບຄົນຈັ່ງໃດ ?

" ກັບຄົນທີ່ມັກຕີໜ້າຜູ້ອື່ນນັ້ນແລ້ວ " .

" ບະ ! " ອີໂຊດ ອວາຍໜ້າໜີ ແລະປິ່ນໄປຫາໂຣມາສ ແລ້ວວ່າ : " ກວຽມຈະມານີ້ທັ້ນໃດໂລດ . ຂ້ອຍ - ເຫັນເຈົ້າລ້ອງຂຶ້ນມາຕາມແມ່ນ້ຳ . ມ່ວນບໍ່ເດີນທາງ. ອັນໂຕນີ້ຊ ເຈົ້າເມືອເຮືອນສາ. ຂ້ອຍຊິຈົດການກັບເຄື່ອງເຫລົ້າ ນີ້

ດອກ " .

ທ່າທີຂອງເຂົາຕໍ່ ໂຣມາສ ເຫັນໄດ້ແຈ່ມແຈ້ງວ່າເປັນ ທີ່ສະໜິດສະໜົມ ແລະ ເປັນຫ່ວງເປັນໄຍ - ຈົນຮອດ ວ່າເປັນລັກສະນະປົກປ້ອງຮັກສາ ເຖິງແມ່ນວ່າ ໂຣມາສ ຈະ ມີອາຍຸແກ່ກວ່າຕັ້ງສິບປີກໍຕາມ .

ເຄິ່ງຊົ່ວໂມງຕໍ່ມາ ຂອຍກໍເຂົ້າໄປຍັງເຮືອນຕາມແບບຊົນນະບົດ ທີ່ປຸກຂຶ້ນໃຫມ່ , ຝາເຮືອນຍັງມີກິ່ນຢາງແປກແລະ - ເຊືອກປໍ . ຫ້ອງນັ່ງຫລິ້ນສະອາດ ເປັນຕາຢູ່ , ໃນຫ້ອງ ມີມີແມ່ຍິງຕາຄົມຄົນໜຶ່ງ ພວມສົນລະວົນຢູ່ກັບການຈັດໂຕະຕັ່ງ-ສຳລັບຄາບເຂົ້າແລງ . ໂຄໂຄນ ເອົາປົ້ນອອກມາຈາກ ຫີບແລະຈັດລຽນໄວ້ຖານແຄມເຕົາ .

" ຫ້ອງເຈົ້າຢູ່ ຕິດກັບເພດານ " . ນາງບອກ .

ແນມຈາກປ່ອງຢ້ຽມຫ້ອງຕິດເພດານ ຂອຍເຫັນໝູ່ ບ້ານສ່ວນໜຶ່ງ , ແລະຢູ່ກົງກັນຂ້າມກັບເຮືອນພວກເຮົາມີຮອງນ້ຳທີ່ປົກຄຸມໄປດ້ວຍພຸ່ມໄມ້ , ແລະສັງເກດເຫັນຫລັງຄາຂອງ - ເຮືອນອາບນ້ຳ ພົ້ນພຸ່ມໄມ້ຂຶ້ນຢູ່ຕາມບ່ອນນັ້ນບ່ອນນີ້.ຝາກຮອງນ້ຳພຸ້ນ ມີສວນໝາກໄມ້ ແລະທົ່ງດິນດຳຊຶ່ງແຜ່ລາມໄປ ຮອດປ່າໄມ້ສີຂຽວໆ ບ່ອນສູດຂອບຟ້າ . ທີ່ຫລັງຄາເຮືອນອາບນ້ຳແຫ່ງໜຶ່ງ ມີຊາຍຄົນໜຶ່ງໃນຊຸດສີຟ້າ , ມືຖືຂວານ,ພວມນັ່ງຄາບ ແລະເຮັດວຽກຢູ່ລຳພັງ . ເຂົາເອົາມືກົງໂກບ ແລະ-ເບິ່ງໄປຍັງແມ່ນ້ຳ ໂວນກາ . ກົງກວຽນປົ້ນສົ່ງສຽງດັງ ລັ່ນງົວຮອງຂຶ້ນແຮງໆເປັນບາດ . ນ້ຳເຊາະຫີນດັງຊຸ່ມອົ່ມ.ແມ່ຍູຄົນໜຶ່ງໃນຊຸດສີດຳ ຍ່າງອອກມາຈາກປະຕູ ຫລຽວເບິ່ງ ຄືນ

ຫລັງ ແລ້ວຮ້ອງດ່າດັ່ງໆວ່າ :

" ມັບ່ຮາຫມົດສາສູ ! "

ພໍໄດ້ຍິນສຽງແມ່ຕູ ເດັກນ້ອຍສອງຄົນຊຶ່ງພວມເອົາກ້ອນ-ຫີນ ແລະຕົມຕົນຮ່ອງນ້ຳຢູ່ ກໍພາກັນໂດດແລະແລ່ນຫນີໄປໄວໆເທົ່າທີ່ຈະໄວໄດ້ . ແມ່ຕູຄົນນັ້ນຈັບເອົາທ່ອນໄມ້ ,ຖົ່ມ ນ້ຳລາຍໃສ່ ແລ້ວກໍຟາດລົງໄປຮ່ອງນ້ຳ . ຕໍ່ມາລາວໄຊ້ຕີນທີ່ສູບເກີບບົດຫນັກໆຂອງຜູ້ຊາຍ ຢຽບຄູຕົມນ້ຳ ທີ່ເດັກນ້ອຍປ້ານອົ້ນນັ້ນ ແລ້ວກໍມຸ່ງຫນ້າລົງໄປ ຕາມເນີນຝັ່ງ ສູ່ແມ່ນ້ຳ ໂວນກາ.

ຊີວິດແນວໃດກັນນໍ ທີ່ຂ້ອຍມາພົບພໍ້ຢູ່ແຫ່ງນີ້ ?

ມີຜູ້ເອີ້ນຂ້ອຍໄປກິນເຂົ້າແລງ . ຢູ່ຊັ້ນລຸ່ມ ຂ້ອຍພົບອິ -ໂຊດ ນັ່ງຢູ່ປະຈຳໂຕະ ຢຽດຂາຍາວໆໄປທາງຫນ້າ . ຕີນເປື້ອຍຂອງເຂົາເປັນສີແດງຊ້ຳ . ເຂົາພວມລົມກັບ ໂຮມາສຢູ່ ແຕ່ກໍຢຸດເວົ້າ ເມື່ອເຫັນຂ້ອຍເຂົ້າມາໃນຫ້ອງ .

" ຈັ່ງໃດ , ມີເລື່ອງຫຍັງຫວະ ? " ໂຮມາສ ຖາມ-ຫນ້າຂຶມ . " ເວົ້າຕໍ " .

" ຫມົດຫມື້ນລະ . ເປັນອັນວ່າຕົກລົງ , ບັດນີ້ພວກເຮົາຈະຈັດການເອງ . ເອົາປືນພົກຕິດຕົວໄວ້ , ຫລືຈັບໄມ້ຄ້ອນຫນັກໆເວລາເຈົ້າອອກໄປທາງນອກ . ຢ່າເວົ້າຫລາຍເວລາເຫັນ ບາຣິນົບ ຢູ່ໃກ້ໆ . ມັນກັບ ກຸກຸຊະກິນ ນັ້ນ - ລື້ນບໍ່ຢູ່ບໍ່ເຊົາປານລື້ນແມ່ຍິງ . ທາວ ເຈົ້ານັກຕຶກເບັດບໍ ? "

" ບໍ່ "

ໂຮມາສ ເລີ່ມຕົ້ນເວົ້າເຖິງຄວາມຈຳເປັນຕ້ອງຈັດຕັ້ງກຸ່ມຜູ້ປູກຫມາກໄມ້ ເພື່ອປົດປ່ອຍໃຫ້ເຂົາເຈົ້າຫລຸດພົ້ນອອກຈາກ-

ກໍາມີ ຂອງພວກພໍ່ຄ້າໃຫຍ່ . ອິໂຊດຟັງຢ່າງຕັ້ງໃຈ,ສຸດທ້າຍ
ເຂົາເວົ້າວ່າ :

" ແບບນີ້ ພວກເຖົ້າແກ່ ຈິ່ງປ່ອຍໃຫ້ເຈົ້າໄດ້ຢູ່ສະຫງົບ-ເລີຍ " .

" ພວກເຮົາຊິເຫັນດອກ " .

" ຈື່ຈໍາຄໍາເວົ້າຂ້ອຍໄວ້ເນີ " .

ແມ່ນເບິ່ງ ອິໂຊດ ຂ້ອຍຄິດຢູ່ໃນໃຈວ່າ :

" ມັນຕ້ອງແມ່ນຊາວຊົນນະບົດ ປະເພດນີ້ ທີ່ກາໂຣມິນ-ແລະ ຊະລາຕົບຣາດສະກີ ພົນລະນາເຖິງຜູ້ຄົນຢູ່ໃນ ເລື່ອງຂອງເຂົາເຈົ້າ " .

ອາດເປັນໄດ້ບໍ່ວ່າ ຂ້ອຍໄດ້ມາພົບພົນກັບສິ່ງທີ່ມີຄຸນຄ່າ -ຢ່າງແທ້ຈິງຢູ່ແຫ່ງນີ້ ? ວ່າບັດນີ້ຂອຍຈະເຮັດວຽກກັບຜູ້ຄົນ ທີ່ພວມປະຕິບັດວຽກງານໃດໜຶ່ງ ກໍສໍາເລັດຢູ່ ?

ເມື່ອກິນເຂົ້າແລງແລ້ວ ອິໂຊດ ເວົ້າວ່າ :

" ຢ່າເຮັດວຽກງານຢ່າງຟ້າວຟັ່ງ ມິໄຄໂລ ອັນໂຕໂນ-ວິຊ . ສິ່ງທີ່ດີນັ້ນ ເພິ່ນບໍ່ເຮັດໄວໆດອກ . ເຈົ້າຕ້ອງ ຄ່ອຍເຮັດຄ່ອຍໄປ " .

ເມື່ອລາວອອກໄປ ໂຣມາຊ ເວົ້າຢ່າງໄຕ່ຕອງວ່າ :

" ນັ້ນລະຄົນສະຫລາດ ແລະ ຊື່ສັດ . ເສຍທີ່ແຕ່ບໍ່ຮູ້ -ໜັງສື . ເຂົາພໍອ່ານໄດ້ໜ້ອຍໜຶ່ງ , ແລະຕ້ອງບຸກ ບືນຢ່າງຫລວງຫລາຍ ເພື່ອຮຽນຮູ້ . ເຈົ້າອາດຈະຊ່ວຍລາວໄດ້ໃນເລື່ອງນີ້ " .

ພວກເຮົາຫຍຸ້ງຢູ່ກັບວຽກຈົນເທົ້າຄໍ່າ ກວດເບິ່ງລາຄາສິ່ງ

ຂອງພາຍໃນຮ້ານ . ເຂົາບອກຂ້ອຍວ່າ :

" ຂ້ອຍຊິຂາຍຖືກກວ່າ ສອງຮ້ານອື່ນ , ແລະແມ່ ນອນ ລະວ່າ ເຂົາຊິບໍ່ພໍໃຈ . ເຂົາພະຍາຍາມຫລົບເລ່ຫລ່ຽມ ໃສ່ ຂ້ອຍທຸກຢ່າງ . ດຽວນີ້ ເຂົາວາງແຜນການ ເພື່ອທຸບຕີຂ້ອຍ. ບໍ່ແມ່ນວ່າຮັກວິຊາການຄາໃດດອກ ທີ່ຂ້ອຍຢູ່ແຫ່ງນີ້ ແລະ ບໍ່ ແມ່ນຍ້ອນຜົນກຳໄລອັນໃດ . ມັນແມ່ນເຫດຜົນອື່ນໆ.ຮ້ານ ນີ້ ກໍເປັນຄືກັບ ຮ້ານເຂົ້າຈີ່ຂອງເຈົ້າ " .

ຂ້ອຍເວົ້າວ່າ ຂ້ອຍກໍນຶກເດົາເຊັ່ນນີ້ຄືກັນ .

" ແມ່ນ , ແມ່ນອນທີ່ດຽວ . ຄົນນັ້ນຈະຕ້ອງໄດ້ ຮັບ ການສິກສອນແນວໃດແນວຫນຶ່ງ , ບໍ່ແມ່ນຈັ່ງຊັ້ນຫວະ ? "

ຮ້ານອັດໃສ່ກະແຈໄວ້ . ມືຖືໂຄມໄຟ ພວກເຮົາຍ້າຍ - ຈາກບ່ອນຫນຶ່ງໄປຍັງອີກບ່ອນຫນຶ່ງ . ແລະຢູ່ ຂ້າງນອກມີໃຜ ຜູ້ຫນຶ່ງຍ່າງຂຶ້ນຍ່າງລົງພ້ອມກັບພວກເຮົາ . ພວກເຮົາສາ - ມາດໄດ້ຍິນ ສຽງບາດຕີນຢຽບຂັ້ນຕມຄ່ອຍໆ , ຫລື ບາງຄັ້ງ ບາງຄາວ ສຽງທຶບແຮງໆຂຶ້ນມາຕາມປະຕູເຂົ້າເຮືອນ.

" ນັ້ນລະ - ເຈົ້າໄດ້ຍິນສຽງມັນບໍ ? ມັນແມ່ນ ມີກຸ່ມ - ຄົນປ່ຽວພອຍ , ບໍ່ມີດິນຢູ່ , ບໍ່ມີພີ່ນ້ອງ . ມັນແມ່ນສັດຖ່ອຍ ຮ້າຍ , ມັກເຮັດແນວຈັງໃຮ , ຄືກັບພວກສາວງາມມັກເວົ້າ ກ້ຽວປອກໄຍ . ລະວັງເວລາເວົ້າເລື່ອງໃດເລື່ອງຫນຶ່ງ ກັບ ມັນ - ແລະບໍ່ແມ່ນພຽງແຕ່ເວົ້າກັບມັນເທົ່ານັ້ນ " .

ຫລັງຈາກນັ້ນ , ຕອນຢູ່ໃນຫ້ອງນັ່ງຫລິ້ນ ເຂົານັ່ງຢ່າງ- ສະບາຍ ເຂົາຫລັງກວ້າງໃຫຍ່ອີງເຕົາ , ໄຕກອກດູດຢາພົ່ນ ຄວັນອອກເປັນເລົານ້ອຍໆ ໃຫ້ສອດແຊກເຂົ້າໃນຫນວດເຄົາ,

ເຮັດຕາຣິບຣີ່ລົງຢ່າງໄຂ້ຄວາມຄິດ ແລະເລີ່ມເວົ້າເປັນຖ້ອຍ-ເປັນຄວາມທີ່ແຈ່ມແຈ້ງ ແລະງ່າຍດາຍ . ເຂົາເວົ້າວ່າເຂົາໄດ້ສັງເກດມາແຕ່ດົນແລ້ວ ເຖິງເລື່ອງທີ່ຂ້ອຍເຮັດໃຫ້ ຄວາມເປັນໜຸ່ມສູນສົ້ນໄປຢ່າງໄຮ້ປະໂຫຍດ .

" ເຈົ້າມີຄວາມສາມາດ , ມີຄວາມພາກພຽນ , ແລະເປົ້າໝາຍຊີວິດຂອງເຈົ້າ ມີຄຸນຄ່າທີ່ໜ້າສັນລະເສີນ.ສິ່ງ ທີ່ເຈົ້າຕ້ອງການແມ່ນສຶກສາຮ່ຳຮຽນ – ພຽງແຕ່ບໍ່ແມ່ນການສຶກສາປະເພດທີ່ເຮັດໃຫ້ປົ້ນເປັນຊູບປະສັກລະຫວ່າງເຈົ້າກັບຜູ້ຄົນທີ່ຢູ່ອ້ອມຂ້າງ . ຄັ້ງໜຶ່ງ , ມີຜູ້ອາວຸໂສຄົນໜຶ່ງ ເປັນຄົນນິກາຍຕ່າງຫາກ ເວົ້າຢ່າງຖືກຕ້ອງແທດເໝາະວ່າ : ທຸກສິ່ງທີ່ນຳເອົາມາສອນຫລືຮຽນ ນັ້ນອອກມາຈາກຄົນ " . ສິ່ງທີ່ຄົນສອນເຈົ້ານັ້ນ ເຈັບແສບຍິ່ງກວ່າຮຽນນຳປຶ້ມ . ການສອນ – ຂອງຄົນຂ້ຽວຂາດຮຸນແຮງ , ແຕ່ສິ່ງທີ່ເຈົ້າຮຽນເອົາໃນ ທຳນອງນັ້ນ ມີພື້ນຖານຢັ່ງລົງເລິກ " .

ອັນດັບຕໍ່ມາ ເຂົາສະແດງຄວາມຄິດ ຊຶ່ງຮູ້ຈັກກັນດີ ອັນທຳອິດ ແລະກ່ອນສິ່ງອື່ນໃດໝົດ ສະຕິຂອງຊາວນາຕ້ອງ ໄດ້ຮັບປູກລະດົມໃຫ້ຕື່ນຂຶ້ນ . ແຕ່ດຽວນີ້ ໃນຄຳເວົ້າທີ່ລົງຫູເຫຼົ່ານີ້ ຂ້ອຍຮູ້ສຶກວ່າມີຄວາມໝາຍໃໝ່ ແລະເລິກເຊິ່ງກວ່າເກົ່າ.

" ນັກສຶກສາພວກເຈົ້າຢູ່ໃນເມືອງ ພາກັນເວົ້າເລື່ອງ – ຄວາມຮັກປະຊາຊົນພົນລະເມືອງມາຫລາຍແລ້ວ . ບາ... ຂ້ອຍຂໍບອກວ່າ – ບໍ່ , ມັນບໍ່ອາດເຮັດຈັ່ງຊັ້ນໄດ້ . ເຈົ້າບໍ່ອາດຮັກປະຊາຊົນ , ມັນບໍ່ເກີດອີຫຍັງຂຶ້ນໄດ້ – ມີແຕ່ເວົ້າ-ກັບເວົ້າ " .

ເຂົາຫົວຮີຮີ ທັງເສືອດຕາມາຫາຂ້ອຍ .ບັດນີ້ເຂົາ ເລີ່ມຕົ້ນຍ່າງຫລົບໄປຫລົບມາ ເວົ້າຕໍ່ຢ່າງຕັ້ງອົກຕັ້ງໃຈ ແລະຢ່າງປະທັບໃຈ .

" ຮັກ - ຫມາຍຄວາມວ່າ : ເຫັນພ້ອມ , ຍອມຮັບ, ບໍ່ຫົວຊາ , ອະໄພ . ທັງຫມົດນີ້ເກີດຂຶ້ນເວລາເຈົ້າຮັກ ແມ່ຍິງ.ແຕ່ສຳລັບປະຊາຊົນ - ພວກເຮົາຮັກໄດ້ບໍ່ ຄືບໍ່ເອົາຫົວຊາຄວາມໂງ່ຈ້າຂອງປະຊາຊົນ , ຫລືເຫັນພ້ອມກັບ ຄວາມຫລົງຜິດຂອງເຂົາເຈົ້າ , ຫລືຍອມຮັບຄວາມຕ່ຳຊ້າຂອງເຂົາເຈົ້າທຸກຢ່າງ , ໃຫ້ອະໄພໃນຄວາມປ່າເຖື່ອນຂອງເຂົາເຈົ້າ? ພວກເຮົາຮັກໄດ້ບໍ່ ? "

" ບໍ່ " .

" ນັ້ນ - ເຈົ້າກໍເຫັນແລ້ວຕວ່າ ! ຫມູ່ເຈົ້າຢູ່ໃນ ຕົວເມືອງ ພາກັນອ່ານປື້ມ ເນກຣາຊົບ , ຮ້ອງເພງ ເນກຣາ-ຊົບ . ເອີ...ຂ້ອຍເວົ້າໄດ້ພຽງແຕ່ວ່າ ເຈົ້າໄປບໍ່ລອດດອກທີ່ເອົາຕາມ ເນກຣາຊົບ ຫັ້ນນະ ! ເວົ້າກັບຊາວໄຮ່ຊາວນາກໍຕ້ອງວ່າ , ເຈົ້າບໍ່ແມ່ນຄົນບໍ່ຈົບ , ແຕ່ເຈົ້າໄຊ້ຊີວິດທີ່ຕ່ຳ-ຕ້ອຍ ແລະບໍ່ຮູ້ຈັກເຮັດສິ່ງໃດ ແມ່ນແຕ່ອັນເລັກນ້ອຍທີ່ສຸດເພື່ອເຮັດໃຫ້ຊີວິດເຈົ້າເອງ ສະດວກສະບາຍ ແລະ ດີຂຶ້ນ . ສັດເດຍລະສານລະວັງຮັກສາສິ່ງຈຳເປັນສຳລັບຊີວິດຢ່າງມີສະຕິຮູ້ສຶກດີກວ່າເຈົ້າ ລະວັງຮັກສາຂອງເຈົ້າເອງ , ສັດປ້ອງກັນຕົວເອງ ດີກວ່າເຈົ້າປ້ອງກັນຕົນເອງ . ແລະເຈົ້າຊ້ຳພັດ - ເປັນຊາວນາ - ເຈົ້າເປັນແຫລ່ງກຳເນີດຂອງທຸກສິ່ງທຸກຢ່າງ. ພວກຂຸນນາງ , ພວກຄຸນພໍ່ , ພວກນັກປາດ , ພວກ ເຈົ້າ

ຊາ ລ້ວນແຕ່ເປັນຊາວນາໃນປາງອະດີດ . ເຫັນ ຕູ່ວາ?
ແຈ້ງພຽງພໍບໍ່ ? ດັ່ງນັ້ນ – ຈົ່ງຮຽນຮູ້ໄຊ້ຊີວິດຈັ່ງຊັ້ນແລ້ວ –
ເຈົ້າຈິ່ງ ຊີບຖືກຢຽບມານ " .

ເຂົາອອກໄປເຮືອນຄົວ ແລະບອກໃຫ້ຄົນຄົວກິນໄຕ້ໄຟຊຸ່ມ
ໝັ້ນ ຊາໂມວາ . ເມື່ອກັບຄືນມາ ເຂົາເອົາປຶ້ມໃຫ້ຂ້ອຍເບິ່ງ
ຊຶ່ງສ່ວນຫລາຍ ແມ່ນປຶ້ມກ່ຽວກັບວິທະຍາສາດອັນໃດອັນໜຶ່ງ.
ມີປຶ້ມຂອງ ບັກເກີນ , ລີເຢນ , ເລັກກີ , ລູບບ້ອກ , ເຫຼ
ເລີ , ມິນ , ສະເປັນເຊີ , ດາວິນ , ແລະ ປຶ້ມຂອງ ຜູ້
ແຕ່ງຊາວລັດເຊຍ ເຊັ່ນ : ປີຊາເຣບ , ໂດໂບຣລູບົບ ,
ເຊີກນີເຊບສະກີ , ປູສກິນ , ກົນຊາຣົບ ທີ່ຂຽນເລື່ອງເຣືອ
ຣົບປາລາດາ , ແລະ ເນກຣາຊົບ .

ຝ່າມືໃຫຍ່ຂອງເຂົາ ລູບປົກປຶ້ມຢ່າງຖະໜຸຖະໜອມ– ຄື
ດັ່ງຄົນຜູ້ໜຶ່ງລູບຄຳແມວນ້ອຍຫລາຍໂຕ . ເກືອບ ວ່າ ດ້ວຍ
ຄວາມຕື່ນຕັ້ນໃຈ ເຂົາພຶມພຳອອກມາວ່າ :

" ປຶ້ມດີໆທັງນັ້ນ ! ຫົວນີ້ເວົ້າໄດ້ວ່າ ເປັນສິ່ງທີ່ຫາຍາກ
ສູດແສນ . ເຈົ້າໜ້າທີ່ກວດກາເຄີຍສັ່ງໃຫ້ເຜົາໄຟຖິ້ມ . ຖ້າ
ເຈົ້າຢາກຮູ້ຈັກລັດແທ້ຈິງເປັນແນວໃດ – ຈົ່ງອ່ານຫົວນີ້ " .

ເຂົາຍື່ນປຶ້ມ " ເລວິອາທານ " ຂອງຣົບເບສ ໃຫ້ຂ້ອຍ.

" ຫົວນີ້ກ່ຽວກັບລັດເຊັ່ນດຽວກັນ , ແຕ່ເບົາສະໝອງ–
ກວ່າ , ມ່ວນຊື່ນກວ່າ " .

ປຶ້ມມ່ວນຊື່ນປະກົດວ່າເປັນປຶ້ມຊື່ " ເຈົ້າຊາຍ " ຂອງ–
ມາຊີອາເວລີ .

ຕອນດື່ມນ້ຳຊາ ເຂົາບອກຂ້ອຍກ່ຽວກັບຕົວເຂົາຫຍໍ້ໆ .

ເຂົາເປັນລູກຊາຍຊ່າງຕີເຫລັກ ທີ່ເມືອງ ແຊກນີກັບ. ຂະນະທີ່ທຳງານເປັນພະນັກງານ ນ້ຳມັນລົດໄຟຢູ່ສະຖານີລົດໄຟກີເຢັບ ເຂົາໄດ້ຕິດຕໍ່ພົວພັນກັບພວກນັກປະຕິວັດແລະໄດ້ຈັດຕັ້ງກຸ່ມ ກຳມະກອນ . ຕໍ່ມາເຂົາຖືກຈັບ . ແລະພາຍຫລັງຖືກຄຸກສອງປີປາຍ ເຂົາກໍຖືກເນລະເທດໄປຢູ່ເຂດ ຢາກູດ ເປັນເວລາສິບປີ .

" ທຳອິດ ຂ້ອຍຄິດວ່າ ເປັນວາລະສຸດທ້າຍຂອງຕົນແລ້ວທີ່ໄປດຳເນີນຊີວິດຢູ່ພູ້ນ . ລະດູໜາວຢູ່ແຖວນັ້ນ - ຣາລາກູມັນ ! ປະກົດຄືວ່າສະໝອງຂອງຄົນຊຸກາມຢູ່ໃນກະໂຫລກພູ້ນແຫລະ ! ແລະແນວໃດກໍຕາມ , ຢູ່ພູ້ນປະກົດວ່າສະໝອງ-ກາຍເປັນສິ່ງເຫລືອເຟືອ . ແຕ່ຕໍ່ມາບໍ່ດົນ ຂ້ອຍກໍພົບວ່າ ມີຄົນລັດເຊຍຢູ່ຕາມບ່ອນນັ້ນບ່ອນນີ້ - ມີຈຳນວນໜ້ອຍແລະ ຢູ່ຫ່າງກັນ , ແຕ່ກໍຍັງມີເຂົາເຈົ້າຢູ່ພູ້ນ ແລະ ເພື່ອບໍ່ໃຫ້ພວກ-ເຮົາຮູ້ສຶກປ່ຽວພອຍ , ເພີ່ນກໍອິດສາຈັດສິ່ງຜູ້ໃໝ່ ມາໃຫ້-ພວກເຮົາເລື້ອຍໆ ! ເຂົາເຈົ້າເປັນຄົນຈົບ ຄົນດີຢູ່,ພິເສດມີນັກສຶກສາຄົນໜຶ່ງ ຊື່ ວະລາດີມີ ໂກໂຣເລນໂກ . ກຳນົດ-ຂອງເຂົາ ສົ້ນສຸດລົງລູນຫລັງຂ້ອຍບໍ່ດົນ . ເຂົາກັບຂ້ອຍເຄີຍຮັກແພງກັນ , ແຕ່ຕໍ່ມາຫ່າງເຫີນກັນ . ມີຫລາຍສິ່ງ ຫລາຍຢ່າງທີ່ພວກເຮົາຄ້າຍຄືກັນ , ແລະມິດຕະພາບທີ່ເກີດຂຶ້ນ ບົນພື້ນຖານສິ່ງຄ້າຍຄືກັນ ບໍ່ດຳເນີນໄປຢ່າງຖາວອນໝັ້ນຄົງ.ແຕ່ເຂົາເປັນຄົນມີມານະອົດທົນ , ບໍ່ຍອມທໍ້ຖອຍ , ແລະ ສະຫລຽວສະຫລາດ ໃນການເຮັດວຽກທູກປະເພດ . ເຂົາພະ-ຍາຍາມຮອດແຕ່ມຮູບນັກບຸນ . ຂ້ອຍບໍ່ມັກອັນນີ້ . ຫລາຍຄົນ

ເວົ້າວ່າ ດຽວນີ້ເຂົາຂຽນເລື່ອງລົງໃນວາລະສານວັນນະຄະດີ ແລະວ່າ ເຂົາຂຽນໄດ້ດີເຕີບ " .

ໂຣມາສ ເວົ້າຢູ່ເປັນເວລາດົນນານ ໃນຄືນນັ້ນ-ຈົນຮອດທ່ຽງຄືນ . ເປັນທີ່ປະຈັກວ່າ ລາວຢາກໃຫ້ຂອຍຮູ້ແຈ້ງ ຢ່າງໜັກແໜ້ນແຕ່ຕອນຫົວທີໂລດ ກ່ຽວກັບບົດບາດຂອງຂອຍ ຄືເປັນຜູ້ໃກ້ຊິດຕິດຂ້າງເຂົາ . ບໍ່ເຄີຍມີຈັກເທື່ອມາກ່ອນເລີຍທີ່ຂ້ອຍຈະມີບົດຮຽນ ອັນໜ້າຊຸ່ມຊື່ນຍິນດີໃນເລື່ອງພົວພັນ ເປັນໝູ່ເພື່ອນ . ນັບແຕ່ຕອນຂ້ອຍພະຍາຍາມຂ້າຕົວເອງມາຂ້ອຍຕີລາຄາຕົວເອງ ຕ່ຳຫຼາຍແທ້ໆ . ຂ້ອຍຄິດວ່າຕົນເອງເປັນສິ່ງມີຊີວິດ ທີ່ແຫ້ງແລ້ງບໍ່ມີຄຸນຄ່າ . ຄວາມຮູ້ສຶກສຳນຶກວ່າ ມີຄວາມຜິດ ເຮັດໃຫ້ຂ້ອຍໜັກອົກໜັກໃຈຢ່າງທໍລະມານແລະ-ຂ້ອຍຮູ້ສຶກອັບອາຍ ທີ່ຈະມີຊີວິດຢູ່ຕໍ່ໄປ . ກ່ຽວກັບເລື່ອງນີ້ໂຣມາສ ຄົງຈະເດົາອອກ , ແລະຢ່າງມີໄຫວພິບ ແລະ ຢ່າງງ່າຍດາຍ ເຂົາເປີດເຜີຍຊີວິດຂອງເຂົາໃຫ້ຂ້ອຍຮູ້ຈັກ ,ແລະເຂົາໄດ້ປ່ຽນແປງ ໃຫ້ຊີວິດຂ້ອຍມີຄວາມໝັ້ນທ່ຽງ . ມັນເປັນວັນທີ່ບໍ່ອາດລືມລົງໄດ້ .

ວັນທີດ ພວກເຮົາເປີດຮ້ານຫຼັງຈາກຄົນເລີກຈາກໄປຟັງເທດຢູ່ໂບດ . ພໍເປີດປຸບ ຄົນກໍເຂົ້າມາເຕັມຮ້ານເລີຍ . ຜູ້ທຳອິດທີ່ເຂົ້າມາ ແມ່ນ ມັດເວລີ ບາຣິນຟ : ເປັນຄົນເປື້ອນເປິ . ຊຸ້ຍຸ້ອະຍະ , ແຂນຍາວປານໂຕລິງ ແຕ່ດວງຕາງາມຄືຕາແມ່ຍິງ ແນມໄປມາແບບໄຮ້ຈຸດໝາຍ .

" ມີຫຍັງໃໝ່ແດ່ຢູ່ໃນເມືອງ ? "ເຂົາຖາມພາຍ ຫຼັງໄດ້ຖາມສະບາຍກັບ ໂຣມາສ ,ແລວໂດຍບໍ່ລໍຟັງຄຳຕອບ ,

ເຂົາຜັດເອີ້ຍໃສ່ ກູກູຊະກິນ ຊຶ່ງພວມຍ່າງລິວມາວ່າ :

" ສະເຕປານ ! ແມວມຶງກັດໄກ່ອີກໂຕໜຶ່ງແລ້ວເນີ້!"

ຕໍ່ມາ ເຂົາກໍເລົ່າຂ່າວວ່າ ຂ້າຫລວງໄດ້ອອກຈາກເມືອງ ຄາຊານໄປ ແຊງ ປູ້ເຕີສບວກ ແລ້ວ ເພື່ອເຂົ້າເຝົ້າ ພະເຈົ້າຊູາ ເພື່ອທູນໃຫ້ພະອົງບັນຊາໃຫ້ ຊາວຕາຕາ ທັງໝົດ-ໂຍກຍ້າຍໄປຢູ່ເຂດ ກາວະກາູດ ແລະ ຕຣູເກສຕານ .ເບິ່ງ ເຂົາຊົມເຊີຍຂ້າຫລວງເອົາແທ້ .

" ເປັນຄົນສະຫລາດຄື່ຫລີ... ເພິ່ນຮູ້ວຽກຮູ້ການດີແທ້ໆ."

" ໂຕແຕ່ງເລື່ອງເອງຕີ້ " ໂຣມາສ ເວົ້າໃຫ້ເສີຍໆ .

" ຂອຍຫວາ ? "

" ບໍ່ຈັກລະ "

" ໂອ້ຍ - ເຈົ້ານະບໍ່ມີຊຸເຊື່ອໃຜດອກ ອັນໂຕນີ້ຊເອີຍ." ບາຣິນົຟ ເວົ້າທັງສັ່ນຫົວ ແບບຕໍ່ວ່າຕໍ່ຂານ ."ຂ້ອຍເອງກໍສົງສານພວກຕາຕາຢູ່ . ເພາະວ່າເພື່ອຈະຢູ່ໃນເຂດກາວະກາດນັ້ນ ກໍຕ້ອງຊິນເຄີຍກັບສະພາບໃນເຂດນີ້ກ່ອນ .

ຊາຍຮ່າງນ້ອຍບາງຄົນໜຶ່ງໃສ່ເສື້ອຍາມຂາດສ່ອຍໂຕ - ໃຫ່ຍຫລົ່ມຍ່າງອັ້ນມາລັບລໍ . ເຂົາເປັນຄົນເສັ້ນປະສາດ ກະຕຸກເລີ້ຍເຮັດໃຫ້ຄົນຜິດປົກກະຕິໄປ ,ປາກຍິກຄິດົ່ງຈະຍົ້ມ ຢູ່ຕະຫລອດເວລາ . ຕາຊາຍມັກຈະພັບຍິກໆຢູ່ສະເໝີ ,ແລະຄິ້ວໜາຮອຍແປ້ວກໍຍົກໄປນຳທູກບາດ .

" ຊົມເຊີຍ ມິກູນ* ! " ບາຣິນົຟ ເອີ້ນໃສ່ຊາຍຄົນ ນັ້ນຢ່າງເຍາະເຍີ້ຍ . " ມື້ຄືນນີ້ ໄປລັກຫຍັງແດ່ຫ ? "

" ລັກເງິນເຈົ້າຫັ້ນລະ " ມິກູນ ໂຕຕອບສຽງຊັດເຈນ-

ທັງເອົາມືແຕະໝວກ ຖາມສະບາຍ ໂຣມາສ .

ຈາກນັ້ນ ປັນກົຟ ເຈົ້າຂອງເຮືອນ ທັງເປັນເພື່ອນ ບ້ານໃກ້ຄຽງກໍອອກມາ . ເຂົານຸ່ງເສື້ອໃຫຍ່ ມີແພແດງມັດຄໍ , ເກີບເຫລື້ອມພິງໆ , ໜ້າອົກຕິດສາຍຄໍເງິນ ຍາວປານສາຍບັງຫຽນມ້າ . ເຂົາຫລຽວເບິ່ງ ມິກູນ ຢ່າງເຂັ້ມງວດ ກວດກາ ແຕ່ຫົວຮອດຕີນ , ແລ້ວວ່າ :

" ຈ້າມຶງ ເຂົ້າໄປຢຽບໜານຜັກກູອີກ ລະວັງມຶງ ,ມຶງຊິຖືກຄ້ອນກູ , ບັກເຜດເຖົ້າ ! "

" ມັນກະເລື່ອງທຳມະດາ ຕວ່າ , ມິກູນ ຕອບທ່າເສີຍເສີຍ , ແລ້ວເສີມວ່າ " ຊົວດມື້ ໜ້າເບື່ອໜ່າຍນໍ້ - ຄັນບໍ່ໄດ້ຊອກ ເລື່ອງຝາດຫົວຄົນແດ່ນະ ? "

ປັນກົຟ ເລີ່ມໂມໂຫຮ້າຍດ່າຂຶ້ນ , ແຕ່ ມິກູນ ຍັງ ເວົ້າຕໍ່ໄປ :

" ໃຜເວົ້າວ່າ ຂ້ອຍເຖົ້າແລ້ວ , ຂ້ອຍຫາຊິອາຍຸ ໔໘ທໍ່ນັ້ນ " .

" ເຮີ້ ! ບຸນ ໂນແອນ ປີກາຍ ມຶງຄືວ່າ ໔໕ ແລ້ວ," ບາຣິນົຟ ຍັດຂຶ້ນ . " ມຶງເວົ້າເອງມື້ວ່າ ອາຍຸ ໔໕ ຊິມາຕົວະເຮັດຫຍັງ ? "

ຊູສະລົຟ ເຂົ້າມາ* - ເຂົາເປັນຄົນເຖົ້າ ຈົ່ງໜວດເຄົາທ່າທາງ ສະຫງ່າ ພາກພູມ ; ແລ້ວກໍມີ ອິໂຊດ , ຄົນ ຫາປາ ແລະ ຜູ້ອື່ນໆອີກ ໂຮມແລວ ເປັນສິບຄົນພໍດີ . ໂຄໂຄນນັ່ງຢູ່ຂອບລະບຽງ ຂ້າງປະຕູ ທັງສູບກອກ ທັງສະຫວັດຝັງ - ພວກຊາວບ້ານລົມກັນ . ຄົນທັງຫລາຍ ນັ່ງລົງນຳຂັ້ນໄດ ,

ແປ້ນມ້າສອງຂາງລະບຽງແດ່ .

ມັນເປັນວັນທີ່ ອາກາດໜາວເຢັນ ແລະ ປ່ຽມປຸບປັບ ຢູ່ເລື້ອຍ . ກ້ອນເຝື້ອໄຫລ ເລື່ອນໄປມາ ໃນທ້ອງຟ້າສີຄາມທີ່ຍັງຜາກີດຮ່ອງຮອຍຂອງ ໝອກລະດູໜາວ , ບາງບ່ອນ - ໝອກຖືກແສງແດດລະລາຍ ເປັນບອກນ້ຳນ້ອຍ ໄຫລໄປເປັນທາງ ສະທ້ອນແສງລະຍິບລະຍັບ ນົ້ມນວນຕໍ່ສາຍຕາ . ພວກນາງສາວ ນຸ່ງກະໂປ່ງຊຸດວາມ ສຳລັບວັນບຸນ ພາກັນຍ່າງລົງໄປທາງ ແມ່ນ້ຳ ໂວມກາ . ຕອນຈະໂດດຂາມບອກນ້ຳພວກນາງຮົ້ຕິນກະໂປ່ງຂຶ້ນ ເຜີຍໃຫ້ເຫັນເກີບໜັງໜາໆ . ເດັກນ້ອຍຜູ້ຊາຍ ແລ່ນກ່າຍໄປ ມືຄັນເບັດ ພາດບ່າໄປນຳ .ພວກຊາວບ້ານ ພາກັນຍ່າງ ຊາໆກາຍຮານເຮົາໄປ ທັງຫລຽວ - ເສືອດຕາ ເບິ່ງພວກເຮົາ ທີ່ນັ່ງຈຸ້ມຊຸມກັນຢູ່ໜ້າຮານ .ບາງຄົນກໍເອົາມື ຖົກໜວດໜ້ອຍໜຶ່ງ ເປັນການທັກທາຍ .

ມິກຸນ ແລະ ກູກູຊະກິນ ພວມຖົກຖຽງກັນ ແບບກັນ ເອງກ່ຽວກັບບັນຫາ ທີ່ຍັງຂົບບໍ່ແຕກບັນຫາໜຶ່ງ : ນັ້ນຄືແມ່ນພວກໃດ ຕີເຈັບກວ່າ - ພໍ່ຄ້າ ຫລື ພວກເຈົ້າທີ່ດິນ ? ກູກູຊະກິນຖຽງວ່າ ແມ່ນ ພໍ່ຄ້າ , ແຕ່ ມິກຸນ ຖຽງວ່າ ແມ່ນ ພວກ - ເຈົ້າທີ່ດິນແຂັງ . ສຽງອັນຫຸ້ມນວນຫູຂອງເຂົາ ຮູ້ສຶກວ່າ ຈະກວມສຽງເວົ້າກະຕຸກກະຕັກ ຂອງກູກູຊະກິນ ຈົນໝົດ .

" ພໍ່ຂອງທ່ານ ຟິງເກີຣູຟ ນັ້ນ ເຄີຍຖືກ ນາໂປເລອົງ-ໂບນາປາກ ດຶງໜວດມາແລວ . ແລະ ທານຟິງເກີຣົຟເອງ

ກໍສາມາດກຳຄືນພາບສອງແຍກຈາກກັນ ແລ້ວດຶງຫົວເຂົ້າມາ
ຊຸມກັນຈົນແຕ່ລະຄົນລົ້ມມິດຊ້ອຍນ້ອຍໄປພູ້ນແລ້ວ !

" ເອີ້ ເວົ້າແນວໃດກໍເວົ້າເທາະ , " ກູກູຊະກິນຮັບ, ແຕ່ກໍເສີມວ່າ , " ແຕ່ວ່າພໍ່ຄ້ານີ້ ກິນຫລາຍເດີ້ ,ກິນຫລາຍກ່ວາພວກຜູ້ດືອກໄດ໋" .

ຊູສະລົມ ພໍ່ເຖົ້າທ່າທາງງາມສະຫງ່າ ຄ່າງອອກມາ ແຕ່ຂັ້ນໄດເທິງສູດວ່າ :

" ພວກຊາວນາ ຂາດຄວາມຜູກພັນກັບທີ່ດິນແລ້ວ , ມີໄຄໂລ ອັນໂຕໂນວິຊ ເອີຍ ! ພວກຊຸມນາງເພີ່ມບໍ່ຍອມໃຫ້-ໃຜເອົາຄານໄດ໋ . ທຸກຄົນຕ້ອງມີວຽກງານຫນ້າທີ່ຂັ້ນໄດ໋ . "

" ເປັນຫຍັງເຈົ້າບໍ່ຮຽກຮ້ອງໃຫ້ເຂົາເອົາລະບົບຂາທາດຄືນມາໄຊ້ອີກຂັ້ນນ່າ ? " ວິໂຊດ ຕອກຄືນ . ໂຣມາສ ຖົມແສງຕາເກືອບເຂົ້າແວບຫນຶ່ງ ແລ້ວກໍເລີ່ມເອົາກອກເຄາະໃສ່ຣາວຂັ້ນໄດ .

ຂ້ອຍຄ້ອງຖ້າໃຫ້ລາວເລີ່ມຕົ້ນເວົ້າ . ຕອນພວມດັກຟັງ-ພວກໄທບ້ານໃສ່ກັນ ຟັງໄດ້ເລື່ອງແດ່ບໍ່ໄດ້ແດ່ຢູ່ນັ້ນ ຂ້ອຍລອງພະຍາຍາມຄິດເດົາເອົາໄວ້ວ່າ ຊາຍໂຄໂຄນ ຈະເວົ້າ ຫຍັງແດ່ . ຂ້ອຍຮູ້ສຶກວ່າລາວໄດ້ພາດໂອກາດອັນເຫມາະເຈາະທີ່ຈະສອດແຊກການສົນທະນານັ້ນເສຍແລ້ວ . ແຕ່ລາວກໍນິ່ງມິດຢູ່ຕາມເດີມ . ລາວນັ່ງມິດງຽບປ່າສະຈາກອາການເຫນັງຕີງປານຮູບປັ້ນ ,ນັ່ງແນມສາຍລົມກະທົບຫນ້ານ້ຳຢູ່ນຳບອກ ຫລຸ່ມນັ້ນ , ແນມລົມທີ່ພັດພາເອົາກອນເຜືອໄຫລໂຮມກັນເປັນໂງນສູງເຂົ້າເຖົ່າມີດງ . ໃຕ້ນ້ຳລົງໄປໄກໆພູ້ນ ມີເຮືອຈັກອາຍນ້ຳ -

ເດີນເປົ່າສຽງໂຫວດໆມາ . ສຽງແມ່ຍິງຮ້ອງເພງສຽງ ສູງ
ຄວບູສຽງແຄນລົມ . ຄົນຂຶ້ນເມົາທັງຮ້ອງທັງສະເອີພວນຍາງ-
ລົງຄອຍຖະໜົ້ນມາ ວາແຂນວາຂາລົ້ມລູກຄຸກຄານມານຳບອກ
ນ້ຳ . ສຽງໂອ້ລົມຂອງພວກໄທບ້ານດັງພໍຊຸມໆ ສຽງ ເວົ້າ
ອ່ອນຕ້ອຍລົງແລະຂ້ອຍກໍຮູ້ສຶກມຶນງົງຢູ່ໃນຄວາມເປົ່າປ່ຽວ -
ດຽວດາຍເຊັ່ນດຽວກັນ : ດວຍວາອາກາດໜາວເຢັນມືດຄຶ້ມ
ຄືຝັນຊິຕົກ ແລະ ຈິດໃຈຂ້ອຍກໍເລື່ອນລອຍກັບໄປສູ່ຕົວເມືອງທີ່
ວຸ່ນວາຍ - ສຽງທີ່ສັບສົນອຶນທະການຂອງຄົນກາຍທາງຈຸ້ນຈຸ
ມົ້ ປຸ່ງມໜ້າສິ່ງສຽງເວົ້າຈາກັນແບບເຮັ່ງຮີບຟ້າວຟັ່ງ- ເຕັມ
ໄປດ້ວຍວາຈາທີ່ເຄັ່ງຮ້ອນຖູເດືອດ .

ຮອດຕອນດື່ມນ້ຳຊາ , ຂ້ອຍອອກປາກຖາມຊາຍໂຄໂຄນ
ວ່າປານໃດລາວຈະເວົ້າກັບພວກຊາວນາ .

" ເວົ້າຫວາ ? ເວົ້າເລື່ອງຫຍັງ ? "

" ເອີ , ລາວຊ້ຳຄວາມຊຸທານຂອງຂ້ອຍ ພາຍຫລັງຟັງ
ຂ້ອຍອະທິບາຍຢ່າງຕັ້ງໃຈ . " ນົ້ນນະ , ເຈົ້າຮູ້ບໍ່ ຄົນແມ່ນ
ວ່າກັນຫາກອອກປາກໂອ້ລົມນຳຂະເຈົ້າໃນເລື່ອງແບບນົ້ແລະກໍ
ກາງຖະໜົນແດ່ນແດ້ນແລວ - ເຈົ້າຮູ້ບໍ່ - ກັນກໍຖືກສົ່ງໄປຢູ່
ນຳພວກຢາກູດພູ້ນອີກລະບໍ " .

ລາວຍັດກອກ ແລວຕໍ່ດູດ , ດູດຈົນວ່າຄວັນຢາອອກມາ-
ເປັນປຸ້ມເຕັ້ມໜາລາວ . ແລວລາວຈິ່ງເວົ້າຕໍ່ແບບເຄັ່ງຂຶມ,
ທົບທວນຄວາມຊົງຈຳ .ລາວເລົ່າວ່າ ພວກໄທບ້ານນົ້ມັກເປັນ
ຄົນລະແວງສົງໄສແທ້ໆ . ພວກຂະເຈົ້າບໍ່ເຊື່ອຕົນເອງແລະກໍ
ບໍ່ເຊື່ອເພື່ອນບ້ານ - ແລະເໜືອກວ່າໝູ່ໝົດແມ່ນບໍ່ເຊື່ອຄົນ

ແປກໜ້າ . ຄົນພວກນີ້ຫາກໍໄດ້ອິດສະລະພາບມາບໍ່ທັນຮອດ ໕໐
ປີ . ຊາວນາອາຍຸຮຸ່ນ ໔໐ ກວ່າ ຕອນເກີດແມ່ນຍັງຢູ່ໃນ ຊັ້ນ
ຊັ້ນບ່າວນາຢູ່ . ເຂົາເຈົ້າຍັງຈື່ຈຳສະພາບການເວລານັ້ນໄດ້ດີ.
ຄຳວ່າອິດສະລະພາບ ນັ້ນມີຄວາມໝາຍຢ່າງໃດ – ມັນຍາກທີ່
ຈະເຂົ້າໃຈໄດ້ .ຖ້າວ່າເຮົາເບິ່ງງ່າຍໆແລ້ວອິດສະລະພາບ –
ຄ້າຍຄືຈະມີຄວາມໝາຍວ່າ : ຢູ່ຕາມໃຈມັກ . ແຕ່ແລ້ວ ເວ
ລາເຮັດຫຍັງໄປໃສ ຜັດພໍ້ແຕ່ເຈົ້າໜ້າທີ່ ,ຕຳຫລວດ , ທີ່ –
ລ້ອນແລ້ວແຕ່ມາຂວາງກັ້ນສິ່ງທີ່ເຮົາຢາກເຮັດຢາກທຳ. ພະເຈົ້າ
ຊາ ໄດ້ເອົາພວກຊາວນາອອກຈາກເຈົ້າທີ່ດິນ ; ດັ່ງນັ້ນກໍເລີຍ
ກາຍເປັນວ່າພະເຈົ້າຊາ ແມ່ນເຈົ້າຂອງຊີວິດຂອງຊາວນາ ທຸກ
ຄົນ . ແລ້ວກໍກັບຄືນໄປຫາບັນຫາທີ່ວ່າ ອິດສະລະພາບຢູ່ໃສ ?
ນັ້ນອີກ . ມື້ໜຶ່ງດອກ ພະເຈົ້າຊາຫາກຈະອະທິບາຍເອງ ວ່າ
ອິດສະລະພາບ ນັ້ນແມ່ນຫຍັງແທ້ – ໂດຍທີ່ໃຜບໍ່ຄາດຝັນ ເລີຍ
ລະ . ພວກຊາວນາໄທບ້ານຕ່າງກໍມີຄວາມເຊື່ອໝັ້ນໃນພະ –
ເຈົ້າຊາ – ຜູ້ເປັນເຈົ້າຂອງໝົດແຜ່ນດິນແລະຊັບສິນທັງມວນ.
ພະເຈົ້າຊາໄດ້ຊ່ອຍໃຫ້ຊາວນາຫລຸດພົ້ນຈາກເຈົ້າທີ່ດິນໄດ້,ແລະ
ອາດຈະເອົາເຮືອກຳປັ່ນ ເອົາຮ້ານຄ້າອອກຈາກພວກພໍ່ຄ້າໄດ້–
ອີກ . ດັ່ງນັ້ນ ຊາວນາຈຶ່ງກາຍເປັນນັກລາຊານິຍົມ . ພວກ–
ເຂົາຄິດວ່າມີນາຍຫລາຍຄົນບໍ່ດີ .ມີນາຍຄົນດຽວຍັງດີກວ່າ .
ພວກເຂົາຄອງຖ້າວ່າວັນໃດວັນໜຶ່ງ ພະເຈົ້າຊາຫາກຈະອະ ທິ
ບາຍຄວາມໝາຍອັນແທ້ຈິງຂອງຄຳວ່າ ອິດສະລະພາບ .ແລ້ວ
ບາດນັ້ນລະ – ຜູ້ໃດທັນຈັບໄດ້ອັນໃດກໍຊຸບເອົາໂລດ, ໃຜໆ ກໍລໍ
ຖ້າວັນເວລານັ້ນ ,ຄອງຄອຍໂອກາດນັ້ນດ້ວຍຄວາມວິຕົກກັງວົນ

ທັງຢ້ານພາດໂອກາດອັນເວລາທີ່ມີຄວາມສຳຄັນຂັ້ນຕັດສິນ ໃນການແບ່ງປັນສິ່ງຂອງທຸກຢ່າງ , ແຕ່ໃນເວລາດຽວກັນໝົດ-ທຸກຄົນກໍຊ້ຳຢ້ານ ,ເພາະແຕ່ລະຄົນກໍຢາກໄດ້ຫລາຍທັງ ສິ່ງຂອງເຄື່ອງທີ່ຢາກໄດ້ກໍຊ້ຳມີຢູ່ແລ້ວ . ຈຶ່ງເກີດບັນຫາວ່າ ຈະເອົາຢ່າງໃດກັນແທ້ ? ທຸກຄົນຢາກໄດ້ສິ່ງດຽວກັນແລ້ວບາດ-ເວລາອວາຍໜ້າໄປໃສ່ຜັດພໍ່ແຕ່ເຈົ້າໜ້າທີ່ສະແດງທ່າ ທາງເປັນປະຕິປັກຕໍ່ປະຊາຊົນ ,ແທ້ລະບໍ່ , ແລະຍັງມີທ່າທີ ເປັນປະຕິປັກຕໍ່ພະເຈົ້າຊາອີກຊ້ຳ . ແຕ່ປານນັ້ນ ເຮົາກໍບໍ່ອາດຫຼີກຫລຽງພວກເຈົ້າໜ້າທີ່ໄດ້ .ເພາະຄັນບໍ່ມີເຈົ້າໜ້າທີ່ເລີຍ - ພວກຊາວບ້ານເອງຫັ້ນລະ ກໍຈະຟາດຟັນກັນເອງ .

ສາຍລົມຍັງຄົງພັດເປົ່າເອົາຝົນລະດູບານໃໝ່ຊັດຝັ່ງເຂົ້າໃສ່ປ່ອງຢ້ຽມຢ່າງຮຸນແຮງ . ຄວາມມືດອຶມຄຶມປົກຊຸມທົ່ວພາຍນອກ ແລະແຊກຊຶມເຂົ້າຮອດໃນຈິດໃຈຂ້ອຍ . ສຽງເນີນຕ່ຳຍັງຄົງພັນລະນາຕໍ່ໄປຢ່າງຮ່ຳຮອນ :

" ຕ້ອງເຮັດໃຫ້ໄທບ້ານເຂົ້າໃຈວ່າຂະເຈົ້າຕ້ອງຮຽນ ຮູ້ໄປເທື່ອລະນ້ອຍໆ ,ວ່າຕ້ອງຍຶດເອົາອຳນາດຈາກພະເຈົ້າຊາມາໄວ້ໃນກຳມືເຂົາເຈົ້າເອງ ; ຕ້ອງອະທິບາຍໃຫ້ຂະ ເຈົ້າຟັງຈະແຈ້ງວ່າປະຊາຊົນຍອມມີສິດເລືອກຕັ້ງເຈົ້າໜ້າທີ່ຂອງ-ຕົນຈາກຊົນຊັ້ນຂອງຕົນ - ເລືອກເຈົ້າໜ້າທີ່ຕຳຫລວດບໍ່ ,ຜູ້ປົກຄອງແຂວງບໍ່ , ເລືອກຮອດພະເຈົ້າຊາ ພຸ້ນແລ້ວ..."

" ມັນຊິບໍ່ກິນເວລາຮອດຮ້ອຍປີພຸ້ນບໍ່ ! "

" ຊັ້ນເຈົ້າຄິດວ່າຊິເຮັດໄດ້ໃນມື້ສອງມື້ໂລດບໍ່ ? "- ຊາຍໂຄໂຄນຖາມຂ້ອຍຄືນນ້ຳສຽງຈິງຈັງ .

ແລ້ວມື້ນັ້ນ ລາວຍ່າງອອກໄປໃສ່ບໍ່ຮູ້ ,ຈົນເທົ່າ ໑໑ ໂມງ ຂ້ອຍໄດ້ຍິນສຽງປືນດັງຂຶ້ນນັດໜຶ່ງຢູ່ທາງຖະໜົນໃກ້ກັບເຮືອນເຮົາ . ຂ້ອຍລິວອອກໄປຜ່າສາຍຝົນແລະຄວາມມືດສະໜິດ-ນັ້ນ ກໍເຫັນ ມິໄຄໂລ ອັນໂຕໂນວິຊ ພວມຍ່າງເຂົ້າປະຕູບ້ານມາ – ຮ່າງໃຫຍ່ສູງຂອງລາວຄ່ອຍໆເຄື່ອນເຂົ້າມາຊາງ – ຍ່າງຫລີກຫລຸມບວກນ້ຳຖະໜົນມາຕະຫລອດທາງ .

" ໂຕອອກມາເຮັດຫຍັງ – ໄດ້ຍິນສຽງປືນຫວາ ? ກັນນີ້ລະຍິງ " .

" ເກີດເລື່ອງຫຍັງນໍ ? "

" ເລື່ອງຫຍັງ , ມີຄົນຖືຄ້ອນໂດດມາໃສ່ກັນລະບໍ . ກັນບອກໃຫ້ມັນວາງ ມັນບໍ່ວາງ ກໍເລີຍຍິງຂຶ້ນຟ້າບາດໜຶ່ງ .ຟ້າມັນບໍ່ຮູ້ເຈັບດອກ " .

ລາວຢຸດຢູ່ທີ່ປາກປະຕູເຂົ້າແລ້ວແກ້ເຄື່ອງປຽກອອກ ປັດເຊັດໜວດເຄົາ – ສັ່ນຜົມເຮັດສຽງຮືດຮາດປານມາ .

" ເກີບໂບກຜີທ່ານີ້ ມີຮູແລ້ວລະ . ຊິຕ້ອງປ່ຽນຄູ່ ໃໝ່ແລ້ວ . ນີ້ເຈົ້າຜີດປືນສັ້ນເປັນບໍ່ ? ເຮັດໃຫ້ແດ່ ຈັກໜ່ອຍ-ມັນຊິເຂົ້າໜຽວຊ້ຳລະ ,ທານ້ຳມັນນຳແດ່ນີ້ " .

ເກີນວ່າຂ້ອຍຊື່ນຊົມນຳລັກສະນະສະຫງົບແລະຄວາມດຶງອັນໜັກແໜ້ນທີ່ປະກົດໃນດວງຕາສີເຖົ່າຂອງລາວສາ ! – ພວກເຮົາ ເຂົ້າມາໃນເຮືອນນຳກັນ .ຕອນພວມຫວີໜວດ – ເຄົາຢູ່ໜ້າແວ່ນແຍງລາວເຕືອນຂ້ອຍວ່າ :

" ເວລາອອກໄປທາງນອກ ຕ້ອງລະວັງແດ່ເດີ້ – ໂດຍສະເພາະແລ້ວ ໃນວັນພັກການແລະຕອນກາງຄືນນະ .ກັນວ່າ

ພວກມັນຍັງຄິດຊິຟາດເຈົ້າຢູ່ຄືກັນ .ແຕ່ຢ່າໄປຖືໄມ້ຄ້ອນຍ່າງ-ເລາະຢູ່ໃດລະ . ເຮັດແນວນັ້ນ ຜິດເປັນການກໍ່ກວນວິ ວາດອີກລະ ແລະອາດເຮັດໃຫ້ພວກມັນຄິດວ່າເຈົ້າຂີ້ຢ້ານ . ແທ້-ແລ້ວ ກະບໍ່ຕ້ອງຢ້ານມັນດອກ ພວກມັນຂີ້ສູດທັງນັ້ນ " .

ຊີວິດຂ້ອຍມ່ວນຊື່ນເບີກບານຂຶ້ນມາແດ່ . ແຕ່ລະວັນຫາກມີເຫດການໃໝ່ ແລະແປກຕ່າງເກີດຂຶ້ນ .ຂ້ອຍເມົານຳອ່ານປຶ້ມປະເພດທຳມະຊາດວິທະຍາ ແລະ ໂຣມາສ ກໍແນະນຳວ່າ:

" ນັ້ນແມ່ນສິ່ງທີ່ເຈົ້າຄວນຮູ້ກ່ອນອື່ນໝົດ ມັກຊິມຊຸ,ແລະແມ່ນສິ່ງທີ່ໜ້າຮູ້ທີ່ສຸດ . ມະນຸດໄດ້ສະແດງອອກເຖິງຄວາມ-ສາມາດອັນຍິ່ງໃຫຍ່ຂອງຕົນໃນການຄົ້ນຄິດ ກໍແມ່ນຢູ່ໃນວິ ທະຍາສາດເຫຼົ່ານີ້ລະ " .

ຂ້ອຍຊ່ອຍສອນຫັດອ່ານແລະຫັດຂຽນໃຫ້ ອີໂຊດ ອາທິດ-ລະສາມແລງ . ທຳອິດເຂົາກໍບໍ່ຢາກໄວ້ໃຈຂ້ອຍປານໃດ. ມາຮຽນກໍແບບດູຖູກອາດໜຶ່ງຢູ່. ແຕ່ພໍຮຽນໄປໄດ້ຫລາຍບົດ, ເຂົາເວົ້າຂຶ້ນຢ່າງອາລົມດີວ່າ :

" ໂຕສອນເກັ່ງນໍ - ນ້ອງຊາຍ . ໂຕນີ້ມັນສົມເປັນ ຄູແທ້ລະວ່າ " .

ແລ້ວໃນທັນໃດ ເຂົາກໍສະເໜີຂຶ້ນວ່າ :

" ເຮັຍມາ - ໂຕຊຶ່ງແຂງແຮງແທ້ . ມາລອງວັດກັນ-ຈັກຍົກເທາະ " .

ພວກເຮົາໄດ້ໄມ້ຍາວໆມາຈາກເຮືອນຄົວ ແລ້ວກໍນັ່ງ ລົງກັບພື້ນ ເອົາຕີນຍັນຕີນ,ສອງມືດຶງທ່ອນໄມ້ເພື່ອແກ່ເອົາຄູ່ຕໍ່ສູ້-ໃຫ້ຢືນຕັ້ງຂຶ້ນ ,ສູ້ກັນຢູ່ດົນເຕີບ ບໍ່ມີໃຜໄດ້ໃຜເສຍ ກໍເລີຍພົດ

ຊາຍໂຄໂຄນ ເຂົ້າມາພໍ້ , ເຂົາຮ້ອງໃສ່ພວກເຮົາວ່າ :

" ເອົາແມ້ ແກມັ່ນອົ້ນແມ້ ! "

ໃນທີ່ສຸດ ອີໂຊດ ກໍແກ້ຂອຍອົ້ນໄດ້ ,ມັ້ນແຮງເຮັດໃຫ້ - ເຂົາພໍໃຈໃນຕົວຂ້ອຍຫລາຍຂົ້ນອີກ .

" ເອີ້ ,ແນວໃດມຶງກໍແຮງຢູ່ດອກ .ເສຍທີແຕ່ມຶງບໍ່ ມັກໄປຫາປານີ້ , ຫລືວ່າອອກໄປທ່ຽວແຖວແຄມແມ່ນ້ຳ ໂວນກາ ນຳກັນແມ້ . ປານສະຫວັນເອົາໂລດມຶງເອີ້ຍ - ຍາມຄ່ຳຄືນ ຢູ່ແຄມແມ່ນ້ຳໂວນກາ ນະ ! "

ເຂົາເອົາໃຈໃສ່ໃນການຮຽນດີ ແລະ ຮຽນໄດ້ໄວ; ຕົວເຂົາເອງກໍປະຫລາດໃຈໃນຄວາມຮູ້ຂອງເຂົາບໍ່ແມ່ນຄ່ອຍ ຈົນສາທະຍາຍ ຄວາມຮູ້ສຶກອອກມາແບບຕົນພາກພູມໃຈແຮງ . ລາງເທື່ອ ພວມຮຽນຢູ່ບົດໜຶ່ງ ເຂົາຜັດໂດດລູກອົ້ນໄປຢິບປົ້ມຢູ່ຕູ້ຊຸມມາອ່ານສອງສາມແຖວ ເຮັດຄົ້ວເບິກອົ້ນສູງ ບຸກບຶນ - ອ່ານອອກສຽງຈົນວ່າເປັນສັ່ນໆ-ແລ້ວກໍຮູ້ສຶກໜ້າອາຍອົ້ນ ມາປຸບປັບ ອວ່າຍມາຊູ້ທ່ານຕໍ່ຂ້ອຍຢ່າງອັດສະຈັນວ່າ :

" ຂ້ອຍອ່ານໄດ້ແລ້ວ - ເຊື່ອບໍ່ ? "

ແລ້ວເຂົາກໍພັບຕາລົງ , ເວົ້າຊ້ຳຄວາມຕາມປົ້ມວ່າ :

" ນົກນ້ອຍສົ່ງສຽງຮ້ອງ ຄວນຄາງຢ່າງອ່ອນເພຍໄປທົ່ວທ້ອງທົ່ງດັ່ງທົ່ວໃຈແມ່ຮ່ຳໄຮຢູ່ເທິງຫລຸມຝັງສົບຂອງລູກສຸດທີ່ຮັກ ... "

" ເນີ້ຍ ! ວ່າຈັ່ງໃດບາດນີ້ ? "

ມີຫລາຍເທື່ອທີ່ເຂົາມັກຕັ້ງຄຳຖາມ ຂົ້ນຢ່າງລະມັດລະວັງ ສຽງພໍຢາກຊົ່ມເອົາວ່າ :

" ນີ້ນານ້ອງຊາຍ - ໂຕລອງອະທິບາຍໃຫ້ກັນເບິ່ງດູວ່າ ເປັນແນວໃດຈັ່ງວ່າ ອັນໂຕມະວ່ອງມະແວ່ງແນວນີ້ ຄົນເຮົາກໍ ສາມາດເຮັດໃຫ້ມັນເປັນຄຳເວົ້າອອກມາໄດ້ - ແລ້ວຄືສຳ - ຂ້ອຍນີ້ສາ ກໍຍັງອ່ານໄດ້ - ບາດນີ້ແລ້ວ ກໍຫາກແມ່ນຄຳ ທີ່ ເຮົາເວົ້າເຮົາວ່າກັນຢູ່ທຸກມື້ນີ້ລະ . ແລ້ວເຮັດໃດວ່າຂ້ອຍ - ອ່ານມັນໄດ້ ? ໂດຍວ່າບໍ່ມີໃຜມາຊຸ່ມບອກຂ້ອຍຈັກດີ້ !ຄັນວ່າ ເປັນຮູບສາ ກໍຍັງວ່າຄືແມ່ ຂອງແນວເບິ່ງແລ້ວກໍເຂົ້າໃຈໂລດ. ແຕ່ເປັນໂຕໂງ້ໂງ້ງແນວນີ້ຕີ - ພໍປານວ່າເຮົານີ້ສາມາດຢັ່ງຮູ້ ຄວາມຄິດຄົ້ນພູມຕ່ວາ . ເອົາມາພິມລົງໄວ້ຫນືອກ . ມັນ - ເປັນໄປໄດ້ແນວໃດ -ຫາ ? "

ຂ້ອຍຈະຕ້ອງຕອບເຂົາແນວໃດດີ ? ຄັນຕອບແຕ່ພຽງວ່າ " ຂ້ອຍກໍບໍ່ຮູ້ ", ເຂົາຜັດເສຍໃຈ .

" ຕ້ອງແມ່ນເວດມົນຄາຖາຫັ້ນລະ ! " ເຂົາມັກເວົ້າ, ຫັນໃຈໃຫຍ່ ແລ້ວເບິ່ງຫນ້າເຈ້ຍຂຶ້ນສ່ອງໃສ່ແສງໄຟ .

ມັນມີແນວຫນ້າຮັກເບີກບານແບບໄຮ້ດຽງສາຢູ່ໃນຕົວເຂົາ - ຄ້າຍຄືເດັກນ້ອຍ . ເຮັດໃຫ້ຂ້ອຍຄິດພໍ້ລັກສະນະຊາວນາ- ຂອງຕົວລະຄອນທີ່ເຄີຍອ່ານພໍ້ໃນປຶ້ມ . ເຂົາມີລັກສະນະເປັນ ນັກກະວີຢູ່ໃນຕົວ ຄືກັນກັບຊາວຫາປາທັງຫລາຍ . ເຂົາ ຮັກ ແມ່ນ້ຳໂວນກາ , ຮັກຄວາມງຽບສະຫງົບຂອງຄ່ຳຄືນ , ຮັກ ຊີວິດໂດດດ່ຽວແລະມັກຄິດເຖິງຕອງໄຟຝັ່ນ .

ບາງເທື່ອ ເຂົາຫລຽວຂຶ້ນເທິງຫມູ່ດາວ ແລ້ວຖາມຂ້ອຍ:

" ຊາຍໂຄໂລນ ເວົ້າວ່າ ບາງທີກໍອາດມີສິ່ງມີຊີວິດ ຢູ່ ໂລກພູມກໍເປັນໄດ້ ,ຄືພວກເຮົາຢູ່ພີ້ .ໂຕວ່າແມ່ນຫວາ? ໂທ

ຄົນແມ່ນສິ່ງຂ່າວຫາກັນໄດ້ນໍ້ - ປາກຖາມວ່າເຂົາຢູ່ກັນ ແນວ
ໃດຢູ່ພຸ້ນນະ - ຢູ່ດີກວ່າພວກເຮົາບໍ່ , ຫລືຄືກັນ ,ຫລືວ່າ -
ມ່ວນກວ່າ ? "

ແທ້ຈິງແລ້ວ ເຂົາເປັນຄົນທີ່ພໍໃຈໃນຊີວິດທີ່ເປັນຢູ່ຂອງ -
ເຂົາເອງ . ເຂົາເປັນລູກກຳພ້າ ,ຍັງບໍ່ສ້າງຄອບຄົວ . ມີ
ແຕ່ຢູ່ແບບສະຫງົບແລະຮັກຊີວິດຊາວຫາປາຢ່າງ ສູດໃຈ .ແຕ່
ເຂົາບໍ່ມັກພວກໄທບ້ານນຳກັນ ແລະ ເຄີຍເຕືອນຂ້ອຍເລື້ອຍໆ
ວ່າ :

" ຢ່າໄປເຊື່ອຄວາມເວົ້າອ່ອນໂຍນຂອງພວກເຂົາເດີ້ .
ພວກນີ້ຫລັກແທ້ໄດ້ , ທີ່ລະຍົດອີກ ຢ່າໄປໄວ້ໃຈເຂົາເປັນອັນ
ຂາດ ! ມັ້ນເປັນແນວໜຶ່ງ ມື້ໜ້າເປັນແນວໃໝ່ໄປລະ.ມັນ
ບໍ່ມີໃຜຊິມາສົນໃຈຫ່ວງໃຍຄົນອື່ນໆດອກ - ນອກຈາກຫ່ວງໂຕ
ມັນເອງ . ບໍ່ຄຶດຫາສ່ວນໂຮມເລີຍ - ນີ້ລະມັ້ນຂີ້ຮ້າຍສູດລະ."

ສ່ວນກ່ຽວກັບພວກ " ໝາເລືອດ " ຢູ່ນຳບ້ານ ,ເຂົາກໍ
ເວົ້າດ້ວຍຄວາມຄຽດແຄ້ນ .ຟັງແລ້ວແປກປະຫລາດ ເພາະ
ຄຳເວົ້ານັ້ນ ອອກຈາກປາກຂອງຄົນທີ່ມີຈິດໃຈນິ້ມນວນເຊັ່ນ -
ເຂົາ .

" ເຮັດໃດພວກເຂົາ ຈິ່ງກາຍເປັນຄົນຮັ່ງມີຂຶ້ນມາ-ຊັ້ນ?
ກະຍ້ອນພວກເຂົາສະຫລາດກວ່າພັ້ນແລ້ວ . ຮວຍ!ຄົນ ມໍງ
ສະຫລາດແທ້ ບັກເຜດເອີຍ ກໍ່ຕ້ອງຮູ້ວ່າ ພວກໄທບ້ານນັ້ນ -
ຕ້ອງຢູ່ໂຮມກັນຢ່າງບໍ່ຜິດຂ້ອງຕ້ອງຖຽງກັນເລີຍ,ຈິ່ງຈະ ເຂັ້ມ
ແຂງໄດ້ . ແຕ່ກົງກັນຂ້າມ ດຽວນີ້ພວກຮັ່ງມີ ຈະມີແຕ່ ມາ
ແບ່ງແຍກຊາວບ້ານໃຫ້ເປັນກຸ່ມເລັກກຸ່ມນ້ອຍຄືເສດດິນຝົນນີ້ .

ພວກເຂົາເຮັດແບບນີ້ລະ ! ຈັ່ງຊັ້ນຊາວບ້ານນຳກັນນີ້ເອງ – ກາຍເປັນສັດຕູຂອງຄົນກັນເອງ . ມັນຕັ້ງແມ່ນພວກຊົ່ວຊ້າແທ້ ໄດ້ . ເບິ່ງອັນທີ່ມັນເຮັດໃສ່ຄົນໂຄໂຄນເຮົາຫັ້ນແມ້ . ມັນ ຍັງເຮັດລົງ ! "

ເຂົາເປັນຄົນໜຸ່ມແທ້ ແລະ ໜ້າຕາດີ ຈັ່ງຊັ້ນຈຶ່ງມີພວກ ແມ່ຍິງ ຊາວບ້ານມາຫລົງມັກກັນເປັນແຖວ .

" ພວກນີ້ກະມາຍົກຍໍຂ້ອຍໂພດແທ້ຫັ້ນລະ " . ເຂົາຮັບ ສາລະພາບຢ່າງໃຈດີ . " ພວກຜົວທັງຫລາຍກໍເລີຍບໍ່ພໍໃຈ. ກະຂອງແມ່ນລະນໍ້ ຄັນແມ່ນຂ້ອຍ ກະຊິຄຽດຄືກັນ – ຄັນຂ້ອຍ ແມ່ນຜົວເຂົາ . ແຕ່ວ່າຊິເຮັດແນວໃດໄດ້ ໃຜຊິອົດເວົ້າດີນຳ ແມ່ຍິງໄດ້–ເອົາ ? ກະຍັງວ່າແມ່ຍິງ , ເຂົາລະເປັນພຽງ– ວິນຍານທີ່ສອງຂອງເຮົາ . ຊີວິດຂະເຈົ້າບໍ່ມີຫຍັງຊິມ່ວນ ຊື່ນ ເບີກບານ , ບໍ່ໄດ້ຮັບຄວາມອອນຫວານອັນໃດ . ຂະ ເຈົ້າ ຕ້ອງເຮັດວຽກຄືມານີ້ ! ຫັ້ນແລ້ວ ພວກຜົວກໍບໍ່ມີເວລາຊິມາ ອ້ອຍອິ່ນນຳ . ສ່ວນຂ້ອຍ , ບາດນີ້ ຂ້ອຍພັດມີເວລາຫວ່າງ ປານວ່າລົມ . ກັບຜົວເຂົາຂອງລາງຄົນກິນດອງກັນບໍ່ທັນພໍປີ ກໍໄດ້ຊິມກຳປັ້ນແລ້ວ . ຊັ້ນແລ້ວ , ຂ້ອຍກໍເລີຍໃຈອ່ອນໄປ– ນຳພວກເຂົາແດ່ . ແມ່ນສິດຂອງຂ້ອຍເດ . ຂ້ອຍພຽງແຕ່ ບອກເຂົາວ່າ : ພວກນ້ອງຢ່າຄຽດຢ່າຄຶມໃຫ້ກັນເນີ້ . ອ້າຍ ຈະເບິ່ງແຍງພວກນ້ອງໝົດທຸກຄົນ . ຢ່າອິດສາບັງບຽດ ກັນ ໄດ້ . ພວກນ້ອງຄືກັນໝົດທຸກຄົນ – ສຳລັບອ້າຍ . ຊິເຮັດ ແນວໃດໄດ້ – ອ້າຍກໍເສຍໃຈນຳຢູ່ ! "

ແລ້ວ ເຂົາເວົ້າຕໍ່ດ້ວຍຮອຍຍິ້ມອ່າຍໆວ່າ :

" ມີເທື່ອໜຶ່ງ ຂ້ອຍເກືອບເຮັດບາບກັບແມ່ຍິງຊັ້ນສູງ ຜູ້ໜຶ່ງ . ເປັນຄົນໃນເມືອງ ລາວອອກມາພັກຜ່ອນຢູ່ແຖວນີ້ໃນຍາມຮ້ອນ . ຄົນງາມແທ້ໆ . ຜິວຂາວປານນ້ຳນົມ ,ຜົມ ສີເຫລືອງຄືຄຳ, ດວງຕາສີຟ້າ ມີແວວເມດຕາອາລີ . ຂ້ອຍເອົາປາໄປຂາຍໃຫ້ລາວ . ໄປເທື່ອໃດ ກໍແນມລາວຈົນຕາ-ຄ້າງ . ຈົນລາວວ່າ : ເຈົ້າເປັນຫຍັງໄປຫັ້ນນະ ? ນາງຍ່ອມຮູ້ດີ , ຂ້ອຍວ່າ . ເອີຊັ້ນ – ຂ້ອຍຊິອອກມາຫາເຈົ້າເນີ້ ຄືນນີ້ . ເຈົ້າມາຖ້າຂ້ອຍເນີ້ ! "ແລ້ວເຈົ້າວ່າຈັ່ງໃດ. ນາງອອກມາແທ້ . ແຕ່ວ່າ ຍຸງຫຼຸມຂົບນາງຫລາຍ . ຍຸງຂົບນາງເອົາແທ້ເອົາວ່າ . ພວກເຮົາເລີຍເຮັດຫຍັງບໍ່ໄດ້ .

" ໂອຍ ຕາຍແລ້ວ , ຂ້ອຍທົນບໍ່ໄດ້ແລ້ວ ,ນາງວ່າ , ມັນຂົບປານນີ້ພີ້ນະ – ນາງຈົ່ມຊິໄຫ້ຂຶ້ນ . ມື້ລູນມາຜົວນາງ-ມາຮອດ . ຄືວ່າເປັນ ພວກຈ່າສາມນີ້ລະ : ຈັ່ງຊັ້ນ ແລ້ວພວກສຸພາບສັດຕີນີ້ນະ ເຂົາລະເປັນແນວນັ້ນລະ " . ອິໂຊດສະຫລຸບດ້ວຍຄວາມເຫັນໃຈແກມເສຍໃຈ ສ່ຳຍຸງຊື່ໆກໍເຮັດໃຫ້ໜ່ອມນາງພາດໂອກາດຍ່ອນແລ້ວເດ " .

ເວລາເວົ້າຮອດ ກູກູຊະກິນ ເຂົາຍົກຍ້ອງຄົນຜູ້ນັ້ນຫລາຍ.

" ໂຕຈື່ໄວ້ ລາວເປັນຄົນຈິດໃຈສູງ . ຄົນດີແທ້ໆ. ແຕ່ຄົນອື່ນໆ ບໍ່ມັກລາວດອກ . ພວກເຂົາຄິດຜິດ . ແນ່ນອນວ່າລາວເປັນຄົນເວົ້າຫລາຍແດ່,ແຕ່ວ່າ – ມີໃຜໃນໂລກນີ້ທີ່ ບໍ່ມີບ່ອນຕິເລີຍ ? "

ກູກູຊະກິນ ບໍ່ມີທີ່ດິນເປັນຂອງຕົນເອງ . ເຂົາເຮັດວຽກເປັນຄົນງານຮັບຈ້າງຂອງ ປັນກິພ . ເມຍເຂົາກໍເປັນຄົນ –

ງານຮັບຈ້າງເຊັ່ນດຽວກັນ . ແມ່ຍິງຄົນນີ້ຕິດເຫລົ້າ ເປັນຄົນ
ຮ່າງນ້ອຍ ແຕ່ຫັ້ນມັງ ແລະແຂງແຮງດີ ຫາກຢາກອາລົມຮ້າຍ
ແຮງຢູ່ເລື້ອຍໆ . ຂະເຈົ້າເອົາເຮືອນໃຫ້ຊ່າງຕີເຫລັກ ເຊົ່າ
ແລ້ວສອງຜົວເມຍພາກັນໄປອາໄສຢູ່ເຮືອນອາບນ້ຳແຄມຫວຍ.
ກູກູຊະກິນ ມັກຕິດຕາມຂ່າວຄາວໃຫມ່ໆຫລາຍ .ເວລາໃດບໍ່ມີ
ຂ່າວຫຍັງ ເຂົາກໍຈະແຕ່ງຂຶ້ນເອງ – ບໍ່ຈັກເລື່ອງແບບໃດ ຕໍ່
ແບບໃດ ແຕ່ເນື້ອໃນຂອງເລື່ອງກໍຫາກຊ້ຳເກົ່າສະເຫມີ .

" ເຈົ້າໄດ້ຍິນຫລືຍັງ ມີໄຄໂລ ອັນໂຕໂນວິຊ ?ເຂົາວ່າ
ຕ່ຳຫລວດຢູ່ ຕິນໂກໂວ ຫັ້ນ ອອກບວດເປັນພະແລ້ວ,ລາອອກ
ການເລີຍ . ມັນເວົ້າວ່າ : ຂ້ອຍບໍ່ອາດຈະຂົ່ມຂູ່ປະຊາຊົນຕໍ່
ໄປອີກແລ້ວ . ຂ້ອຍທົນບໍ່ໄຫວແລ້ວ ! ວ່າຊັ້ນເດ " .

ຄົນໂຄໂຄນ ໃຫ້ຂໍ້ສັງເກດຢ່າງເຄັ່ງຂຶມວ່າ :

" ເອີ້ຈັກຫນ້ອຍ ຊິບໍ່ມີເຈົ້າຫນ້າທີ່ເຫລືອເລີຍລະ ຄົນວ່າ
ເປັນແນວນີ້ແຫນະ " .

ກູກູຊະກິນທັງເວົ້າທັງຖົກເຟືອງ ແລະຍົນໄກ່ອອກຈາກຜົມ
ທີ່ຫຍຸ້ງເຫຍີງ ວ່າແບບຮັບເອົາຄຳສະເຫນີນັ້ນເລີຍ :

" ກໍບໍ່ວ່າ ມັນຈະລາກັນຫມົດທຸກຄົນດອກ . ມີແຕ່ ພວກ
ອ່າວມີມະໂນທຳແດ່ຫັ້ນແລ້ວ . ເວົ້າແທ້ ມັນກໍເປັນການ ລຳ
ບາກໃຈແທ້ໃດ ອັນເຮັດວຽກແບບນີ້ນະ . ເຈົ້າບໍ່ເຊື່ອ ໃນ
ເລື່ອງມະໂນທຳ ບໍ ອັນໂຕນິຊ ? ເບິ່ງຄືເຈົ້າຊິບໍ່ເຊື່ອນີ້.ແຕ່
ຈັ່ງໃດກໍຕາມເນີ້ ຄົນເຮົາຈະມີຊີວິດຢູ່ໂດຍບໍ່ມີມະໂນທຳແມ່ນບໍ່
ໄດ້ ແມ່ນວ່າຄົນຜູ້ນັ້ນ ຈະສະຫລາດສະຫລຽວປານໃດກໍຕາມ.
ຍົກຕົວຢ່າງ...ມີແມ່ຍິງຜູ້ຫນຶ່ງ..."

ແລ້ວເຂົາກໍເລົ່ານິທານເລື່ອງໜຶ່ງ ກ່ຽວກັບປະເພດແມ່-
ຍິງ ເຈົ້າຂອງທີ່ດິນ ທີ່ " ສະຫລາດຫລັກແຫລມຫລາຍ " .

" ລາວເປັນຄົນໂຫດຫ້ຽມຂະໜາດເລີຍ ຈົນວ່າ ເຈົ້າ
ເມືອງຜູ້ມີຕຳແໜ່ງຍົດສັກ ກໍໄດ້ອອກມາບອກເຕືອນລາວ .
" ຂໍນຳ - ຍາແມ່ເອີຍ ໃຫ້ຍາແມ່ລະມັດລະວັງແດ່ , ເຈົ້າ
ເມືອງວ່າ , ອັນເລື່ອງຄວາມໂຫດຮ້າຍຂອງຍາແມ່ນັ້ນມັນລະ
ດັງໄປທົ່ວ ນະຄອນ ເຊັນປິເຕີບູກ ແລ້ວໄດ໋ ! "ແລ້ວ ເຈົ້າ
ວ່າຈັ່ງໃດ໋ . ອີ່ນາງຍາແມ່ນັ້ນຫຍິ້ມເຫລົ່າແວງໃຫ້ເຈົ້າເມືອງ
ດື່ມພ້ອມກັບບອກວ່າ : ໄປ ເຈົ້າກັບເມືອບ້ານເຈົ້າດີໆສາ .
ບໍ່ແມ່ນຊິມາປ່ຽນທຳມະຊາດທາດແທ້ຂອງຂ້ອຍໄດ໋ ! "ສາມປີ
ຜ່ານໄປກັບອີກເດືອນໜຶ່ງ , ອີ່ນາງຍາແມ່ເກີດປຸບປັບ ເອີ້ນ
ເອົາພວກບ່າວນາຂອງລາວມາໂຮມແລ້ວເວົ້າວ່າ : "ນີ້ ນະ
ພວກເຈົ້າ , ພວກເຈົ້າເອົາທີ່ດິນ ຂ້ອຍໝົດສາ ແລະ ຍົກ
ໂທດໃຫ້ຂ້ອຍດ້ວຍ . ຂ້ອຍຂໍລາກ່ອນ . ຂ້ອຍຈະໄປ..."

" ບອດເປັນນາງຂາວ " ຄົນໂຄໂຄນ ຕໍ່ໃຫ້ .

ກູກູຊະກິນ ປະສານສາຍຕາງຶກຫົວຕອບຮັບ .

" ແມ່ນແທ້ ໄປບອດເປັນແມ່ຊີອະທິການວັດ . ອາວ ຊັ້ນ
ເຈົ້າກໍເຄີຍໄດ້ຍິນເລື່ອງນີ້ແລ້ວຄືກັນວ່າ ? "

" ບໍ່ - ຂ້ອຍບໍ່ເຄີຍໄດ້ຍິນເລື່ອງແບບນີ້ຈັກເທື່ອ "

" ຊັ້ນເຮັດໃດເຈົ້າຮູ້ ? "

" ຂ້ອຍຮູ້ຈັກເຈົ້າຂຶ້ນມາ " .

ນັກເຝີ້ນແກວ່ງຫົວແລະຈົ່ມມຸມໆ :

" ເຈົ້າລົດຊິບໍ່ເຊື່ອໃຜໝົດນໍ້ ! "

ແລ້ວເຂົາກໍມີເລື່ອງຕ່າງໆກັນມາເລົ່າ : ຄົນທີ່ຊົ່ວ ຮ້າຍໂຫດຫ້ຽມໃນນິທານຂອງເຂົານັ້ນ ລ້ວນແລ້ວເກີດຄວາມ ເບື່ອຫນ່າຍຕໍ່ການກະທຳອັນຊົ່ວຊ້າຂອງພວກເຂົາແລ້ວ "ມະຫັບມະຫາຍ "ໄປ ; ຫລືບໍ່ຊັ້ນ ເຂົາກໍມັກເລົ່າວ່າ ພວກນັ້ນເຂົ້າ - ບ້ວດໃຊ້ຊີວິດຢູ່ວັດ ປານວ່າ ເຮົາຖິ້ມຂີ້ເຫຍື້ອໃສ່ກະຕ່າ .

ບາງຄັ້ງ ເຂົາກໍຄິດພໍ້ແນວແປກປະຫລາດຂຶ້ນມາຈົນ ຕ້ອງເຮັດຄືວສົມ ແລະ ປະກາດກ້ອງວ່າ :

" ພວກເຮົາບໍ່ຄວນທີ່ຈະເອົາຊະນະພວກຕາຕາເລີຍ . ພວກຕາຕານີ້ ຂະເຈົ້າຄົນດີ ກວ່າພວກເຮົາຊ້ຳໄດ " .

ແຕ່ໃນເວລານັ້ນ , ບໍ່ມີໃຜເວົ້າເຖິງພວກຕາຕາເລີຍ , ການສົນທະນາຂອງພວກເຮົາເຈາະຈົງໃສ່ການຈັດຕັ້ງສະ ຫະກອນກະເສດຂອງຊາວສວນຫມາກພູນ .

ຫລືວ່າ , ເວລາທີ່ ໂຣມາສ ພວມເວົ້າເຖິງ ຊິເບຣີ - ແລະຄວາມອຸດົມສົມບູນຂອງຊາວນາ ຊິເບຣີຢູ່ນັ້ນ ກູກູຊະ ກິນ ມັກຈົ່ມອອກມາແບບໄຊ້ຄວາມຄຶດວ່າ :

" ໂຢ້ວ ຄັນແມ່ນບໍ່ມີໃຜຕິກເອົາປາ ແຮງ ຈັກສອງ - ສາມປີ ລອງເບິ່ງ ຄັນມັນບໍ່ຕົ້ນທະເລສາແລ້ວ - ຈົນລົ້ນພູນບໍ່ຈັກ ປາພວກນີ້ ມັນອອກແມ່ແຜ່ລູກດີແທ້ໄດ ! "

ຄົນຢູ່ໃນຊຸ້ມບ້ານ ມັກຖືວ່າ ເຂົາເປັນຄົນໂງ່ງ່າວເຫີກ- ຫງາກບໍ່ໄດ້ເລື່ອງ . ນິທານຂອງເຂົາ , ແນວຄຶດແປກ ປະຫລາດຂອງເຂົາ ບໍ່ຖືກຫູພວກໄທບ້ານເລີຍ . ແຕ່ເຖິງ ປານນັ້ນ , ແສນວ່າ ຈະເຍີ້ຍຈະດ່າເຂົາໄປນຳ , ພວກໄທບ້ານຕ່າງກໍມິດຟັງນິທານຂອງເຂົາຢ່າງສົນໃຈ - ຄ້າຍກັບວ່າກໍ ມີ

ຄວາມຫວັງວ່າຈະຄົ້ນພົບຄວາມຈິງອັນໃດອັນໜຶ່ງຢູ່ໃນນິທານຂີ້ຕົວະເຫລົ່ານັ້ນ .

" ບັກປາກໂພ່ " , ຊາວບ້ານຜູ້ອາວຸໂສຫລາຍຄົນເອີ້ນເຂົາແນວນັ້ນ . ແຕ່ປັ້ນກົຟ ມັກເວົ້າຢ່າງຂຶງຂັງວ່າ :

" ສະເຕປານ ເປັນຄົນດິກໃນເດີ້ " .

ກູກູຊະກິນ ເປັນຄົນງານທີ່ມີສະມັດຖະພາບສູງ . ເຂົາເຮັດແຜນທອງ ແລະກໍ່ເຕົາດິນຈີ່ໄດ້ , ນອກຈາກນີ້ຍັງ ຮູ້ເລື່ອງເຜີ້ງດີ , ສາມາດແນະນຳພວກແມ່ຍິງ ກ່ຽວກັບ ການລ້ຽງໄກ່ໄດ້ , ເປັນຊ່າງໄມ້ກໍຊຳນານ . ບໍ່ວ່າວຽກໃດ ທະແມ່ນເຂົາໄດ້ຈັບເຮັດ ແມ່ນສຳເລັດງົດງາມໝົດ . ແຕ່ຕອນເຮັດນັ້ນ ເບິ່ງຊົງຄືຊຸ້ກຊາ ແລະບໍ່ຄອຍຫາວຫັນປານໃດ. ເຂົາເປັນຄົນຮັກແມວຈົນລ້ຽງແມວໄວ້ເປັນສິບໆຢູ່ທີ່ເຮືອນອາບນ້ຳ. ເຂົາຝຶກໃຫ້ແມວເຂົາຈັບນົກກິນ – ນົກແມ່ນອີກສາເຫດໜຶ່ງທີ່ຊາວບ້ານບໍ່ພໍໃຈເພາະບັນດາແມວຂອງເຂົາເກີດໄປໄລ່ຈູບໄກ່ແມ່ ແລະໄກ່ນ້ອຍຂອງໄທບ້ານກິນ . ພວກແມ່ຍິງໄທບ້ານພາກັນຊ່ອມຈັບເອົາແມວຂອງ ກູກູຊະກິນ ແລ້ວຕີຢ່າງບໍ່ແພ້ງມື – ເລີຍ , ຈັ່ງຊັ້ນ ເຮືອນອາບນ້ຳຂອງເຂົາ ຈຶ່ງມັກໄດ້ຮັບຄຳຕໍ່ວ່າຕໍ່ຂານຈາກໄທເຮືອນໃກ້ຢູ່ເລື້ອຍໆ . ແຕ່ເລື່ອງນີ້ກໍບໍ່ ໄດ້ເຮັດໃຫ້ເຂົາເດືອດຮ້ອນໃຈເລີຍ .

" ພວກໂງ່ຈ້າເອີຍ ! ແມວມະມັນຈັບສັດເກັ່ງ – ເກັ່ງກວ່າໝາອີກ . ເຮົາລ້ຽງແມວແລ້ວແອບໃຫ້ມັນຈັບນົກເປັນ, ແມວນີ້ ລ້ຽງເປັນພັນໂຕ ເອົາໄປຂາຍກໍໄດ້ຕວາ . ມັນແມ່ນ–ເງິນທັງນັ້ນຕວາຫັ້ນ , ພວກຜີບ້າ ເອີຍ ! "

ຄັ້ງໜຶ່ງ ເຂົາເຄີຍໄດ້ຮຽນອ່ານແລະຂຽນມາແລ້ວ, ແຕ່ແລ້ວກໍບໍ່ຈື່ຫຍັງແລ້ວທັງບໍ່ຢາກລໍາລຶກຄືນອີກ . ແຕ່ເຂົາມີພອນສະຫວັນ ມາແຕ່ກໍາເນີດ ໃນການຈັບໃຈຄວາມສໍາຄັນຂອງ - ການເວົ້າຂອງຄົນ ໂຄໂຄນ ໄດ້ດີກວ່າຄົນອື່ນໆ .

" ແມ້ " ,ເຂົາຈະເວົ້າຂຶ້ນທັງຍູ້ມໜ້າ ພໍປານ ເດັກນ້ອຍຖືກບັງຄັບໃຫ້ກິນຢາຂົມ , " ແມ - ອີວານ ຜູ້ ໂຫດຫ້ຽມ ກໍບໍ່ໄຊ່ວ່າແມ່ນສັດຕູຂອງຊາວບ້ານມາ " .

ກຸກຸຊະກິນ , ອິໂຊດ ແລະ ປັນກິຟ ມັກມາຍາມແລງ - ແລ້ວກໍຢູ່ຈົນເຫົ້າເດິກດື່ນທ່ຽງຄືນ ເພື່ອຟັງຄົນໂຄໂຄນເວົ້າລົມກ່ຽວກັບເລື່ອງ ໂຄງສ້າງຂອງຈັກກະວານ , ເວົ້າເຖິງຊີວິດຂອງຄົນໃນປະເທດອື່ນໆ , ເວົ້າເຖິງການລຸກຮືປະຕິວັດຂອງປະຊາຊົນຕ່າງໆ . ປັນກິຟ ມັກການປະຕິວັດຂອງປະຊາຊົນ-ຝະລັ່ງຫລາຍ .

" ນັ້ນຈັ່ງແມ່ນການປ່ຽນແປງຊີວິດແທ້ໆລະ " ,ເຂົາເວົ້າຢ່າງຮົ່ນຕອງ .

ສອງປີກ່ອນນີ້ ປັນກິຟ ໄດ້ຂໍແບ່ງປັນມູລະດົກຕອນດິນຈາກຜູ້ເປັນພໍ່ ຊຶ່ງເປັນຊາວນາຮັ່ງມີ - ຊາຍຜູ້ພໍ່ເປັນຄົນເອີນອັນ - ໃຫຍ່ ແລະ ມີໜ່ວຍຕາສູ້ວດເປັນຕາຢ້ານ . ປັນກິຟໃຊ້ຊີວິດຢ່າງເສລີ , ແຕ່ງດອງດ້ວຍຄວາມຮັກກັບສາວກໍາພ້າຫລານ-ຂອງ ອີໂຊດເອງ . ເຂົາໃຫ້ເມຍຢູ່ໃນບັງຄັບບັນຊາ ຂອງເຂົາຢ່າງເຂັ້ມງວດ ແຕ່ໃຫ້ນຸ່ງເຄື່ອງງາມໆ ປານສາວ ໃນເມືອງ . ພໍ່ຂອງ ປັນກິຟ ປ່ອຍແຊ່ງທີ່ລູກຊາຍບໍ່ຟັງຄວາມ , ເວລາກາຍມາເຮືອນໃຫມ່ຂອງລູກຊາຍກໍຖົ່ມນໍ້າລາຍໃສ່ .

ມັນເປັນເລື່ອງທີ່ບັນດາຜູ້ຮັ່ງໃນບ້ານນີ້ບໍ່ພໍໃຈເທົ່າທີ່ ປັນກິຟໄດ້ເອົາເຮືອນໃຫ້ ໂຣມາສຢູ່ ແຖມຍັງປູກເທີບໃຫ້ຄ້າຂາຍອີກ . ພວກຄົນຮັ່ງຊັງ ປັນກິຟ ຍອມເລື່ອງນີ້ເທົ່ານັ້ນ ແຕ່ເຂົາຮັບ - ເອົາຄວາມຄຽດຊັງ ນັ້ນຢ່າງມິດເສີຍ . ເຂົາເວົ້າຣອດພວກຊາວບ້ານຜູ້ຮັ່ງມີລັບຫລັງຢ່າງບໍ່ຫົວຊາ ແຕ່ຕໍ່ໜ້າພວກຂະເຈົ້າເຂົາພັດເວົ້າຈ້າກໆໃສ່ . ເຂົາເບື່ອໜ່າຍຊີວິດຢູ່ບ້ານນອກ - ເຕັມທີ .

" ຄັນຂ້ອຍມີວິຊາອາຊີບອັນໃດອັນໜຶ່ງ ຂ້ອຍຈິເຂົ້າໄປຢູ່ໃນເມືອງພູນດອກ " .

ເຂົາເປັນຄົນຮ່າງພໍດີ ນຸ່ງເຄື່ອງສະອາດຮຽບຮ້ອຍ ຢູ່ສະເໝີ . ຍາມໃດ ເຂົາກໍປະພຶດຕົວເປັນຄົນພໍດ້າມພໍດີແລະທະນົງໃນສັກສີຂອງຕົນ . ເຂົາມັກໄຊ້ຫົວຄຶດຊອກຮູ້ຊອກສົງໄສຢູ່ເລື້ອຍໆ .

" ມັນແມ່ນຫຍັງ ອັນເຮັດໃຫ້ເຈົ້າມາຄ້າຂາຍແນວນີ້ ? ແມ່ນໃຈບໍ່ຫລືວ່າຫົວສະໝອງກັນແທ ? ເຂົາຖາມ ໂຣມາສ .

" ຊັ້ນເຈົ້າຄິດວ່າແມ່ນຍ່ອນຫຍັງ ? "

" ບໍ່ຮູ້ແລ້ວ - ເຈົ້າບອກຂ້ອຍແມ້ " .

" ຊັ້ນເຈົ້າຄິດວ່າ ຍ້ອນອັນໃດຈະດີກວ່າ ? "

" ບໍ່ຮູ້ແລ້ວ . ເຈົ້າຄິດວ່າອັນໃດຊັ້ນນ່າ ? "

ຄົນໂຄໂຄນ ບໍ່ມີທາງຈະຄ້າ . ໃນທີ່ສຸດ ລາວກໍເຮັດໃຫ້ຊາຍຊາວນາ ເວົ້າອອກມາຈົນໄດ້ .

" ໃຊ້ຫົວສະໝອງລະແມ່ນດີກວ່າ . ຫົວສະໝອງຄົນມັນບໍ່ຫ່ອນປະໃຫ້ເຈົ້າຂອງມັນ ເຮັດວຽກໄປໂດຍບໍ່ມີຜົນໄດ້ -

ດອກ , ແຕ່ວ່າ ແມ່ນອັນໃດເປັນຜົນໄດ້ , ອັນນັ້ນແກ່ນສານລະ . ແຕ່ຄົນໃຫ້ຫົວໃຈບັນຊາລະບໍ່ດີ . ຫົວໃຈນີ້ເປັນຜູ້ປຶກສາທີ່ຂີ້ຮ້າຍທີ່ສຸດ . ຄົນເຮົາເຮັດຫຍັງຕາມໃຈສັ່ງລະມີບັນຫາໂລດ . ຄືສົມມຸດວ່າ ຂ້ອຍຢາກເອົາໄຟໄປຈູດກຸຕິອາຈານ ຢູ່ວັດ - ເພື່ອວ່າ ເພິ່ນຊິບໍ່ໄດ້ເສືອກໃນເລື່ອງທີ່ບໍ່ຄວນ ! "

ເວົ້າເຖິງອາຈານເຈົ້າອາວາດວັດ - ຊາຍເຖົ້າເຈົ້າເຫຼ່ຫລ່ຽມ , ຫນ້ານ້ອຍປ່ານຕົວຕຸ່ນຄົນນັ້ນ - ປັນກົຟຈັ່ງພໍຕາຊິ-ແຕກ ຍອມວ່າ ອາຈານຜູ້ກ່ຽວ ເສືອກມາເປັນເຈົ້າການສອດແຊກໃນເລື່ອງທີ່ ປັນກົຟ ກັບພໍ່ ຜິດກັນ .

ສະເພາະຕໍ່ຂ້ອຍ , ທຳອິດ ປັນກົຟ ກໍບໍ່ເປັນມິດນຳເລີຍຢ່າກວ່າເຮັດເຄັ່ງຕຶງໃສ່ພູມລະ . ບາງຄັ້ງຍັງຮ້ອງໃສ່ຂ້ອຍ-ແບບບໍ່ໄວ້ຫນ້າ . ແຕ່ບໍ່ດົນ ກິລິຍາດັ່ງກ່າວກໍຫມົດໄປ , ແຕ່ຂ້ອຍຍັງຮູ້ສຶກໃນຄວາມບໍ່ໄວ້ວາງໃຈຂອງເຂົາຢູ່ໃນວາດຊົງສະແດງອອກຕໍ່ຂ້ອຍ . ແລະຂ້ອຍຍອມຮັບວ່າ ຂ້ອຍກໍໄດ້ຕອບ -ແທນເຂົາດ້ວຍວາດຊົງແບບດຽວກັນ .

ຄ່ຳຄືນເຫດການເຫລົ່ານັ້ນ ຍັງຕິດຕາຕິດໃຈຂ້ອຍບໍ່ມີ ວັນລືມເລືອນ . ຄືນທີ່ພາຍໃນຫ້ອງນອນນ້ອຍສະອາດແອ່ມ ດ້ວຍທ່ອນເສົາເປື້ອຍ : ປ່ອງຢ້ຽມອັດແຈບຫມົດທຸກປ່ອງ ມີ ພຽງຕະກຽງໃຕ້ນ້ຽວໆ ຢູ່ໂຕະແຈຫ້ອງ ແລະຊາຍຮ່າງໃຫຍ່ຫນວດເຄົາດົກຍາວ ນັ່ງຢູ່ຕໍ່ຫນ້າຕະກຽງ ເວົ້າຂຶ້ນວ່າ :

" ສິ່ງສຳຄັນທີ່ສຸດໃນຊີວິດຄົນເຮົາ ແມ່ນເຮັດແນວໃດ -ຕ້ອງກ້າວໄປໃຫ້ໄກຈາກສັດເດຍລະສານ... ໄກທີ່ໃດແຮງດີ."

ຊາວບ້ານທັງສາມຄົນຟັງດ້ວຍຄວາມຕັ້ງອົກຕັ້ງໃຈ ,ຫນ້າ

ຕາໃສຊື້ນດ້ວຍແວວສະຫລາດ . ອິໂຊດນັ້ນ ຍາມໃດກໍນັ່ງບໍ່-ຕິງ ພໍປານວ່າ ພວມສະຫງັດຟັງສຽງທີ່ດັ່ງມາຈາກທີ່ໄກ ອັນທີ່ຄົນອື່ນບໍ່ໄດ້ຍິນນຳ ນອກຈາກເຂົາຄົນດຽວ . ກູກູຊະກິນ ນັ່ງບິດໂຕໄປມາ ຄືຈັ່ງຄົນຖືກຍຸງກູກກວນຢູ່ບໍ່ເຊົາ . ປັນກົພເອົານິ້ວມືທາວຫນວດເຄົາສັ້ນໆຂອງເຂົາ , ບາງຄັ້ງກໍປະກອບຄຳເຫັນສັ້ນໆ ຄ້າຍຄືຖອດອອກມາຈາກ ສິ່ງທີ່ພວມຄິດຄຳນຶງ .

" ຊັ້ນກໍແປວ່າ ມັນມີຄວາມຈຳເປັນສຳລັບປະຊາຊົນພວກເຮົາ ທີ່ຈະຕ້ອງແບ່ງອອກເປັນຊົນຊັ້ນຕ່າງໆ " .

ສິ່ງທີ່ຂ້ອຍນິຍົມຊົມຊອບ ປັນກົພ ຫລາຍກໍຄື ເຂົາບໍ່ສະ - ແດງກິລິຍາຫຍາບກະດ້າງໃສ່ລູກຈ້າງ ກູກູຊະກິນຂອງເຂົາຈັກເທື່ອ . ທາງຝ່າຍນັກເລົ່ານິທານເພ້ຝັນ ເອງກໍມັກພົບວ່າປັນກົພກໍຟັງເຂົາເລົ່າດ້ວຍຄວາມຕັ້ງໃຈ .

ພໍເລີກລາຈາກການໂອ້ລົມໃນຕອນຄ່ຳຄືນ , ຂ້ອຍມັກປີນຂຶ້ນເມືອຫ້ອງນອນ ແລ້ວນັ່ງຫລູ້ນແຄມປ່ອງຢ້ຽມຄາວຫນຶ່ງກ່ອນເພື່ອຫລຽວແລອອກໄປຊົມຊຸມບ້ານທີ່ພວມຫລັບໄຫລ ແລະ ທົ່ງນາທີ່ຢູ່ໄກອອກໄປ . ດວງດາວສ່ອງແສງລະຍິບລະຍັບແຊກຜ່ານຄວາມມືດຂອງລາຕີການ ຄ້າຍດັ່ງວ່າ ຍິ່ງມັນຫຍັບ ເຂົ້າມາມໍ່ແຜ່ນດິນເທົ່າໃດ ກໍແຮ່ງຄືມັນຫຍັບຫ່າງໄກຂ້ອຍອອກໄປ-ເທົ່ານັ້ນ . ຫົວໃຈຂອງຂ້ອຍ ສະທ້ານດ້ວຍຄວາມຮູ້ສຶກ ເປົ່າປ່ຽວດຽວດາຍ ແລ້ວບັດນັ້ນ ຄວາມນຶກຄິດກໍລອງລອຍອອກໄປສູ່ທີ່ຫວ່າງອັນບໍ່ມີຂອບເຂດສຽງສູດ , ຂ້ອຍຫລິງເຫັນ ເຮືອນຊານເປັນພັນໆຫລັງ ຢັ່ງຢາຍຢູ່ມິດງຽບປາສະຈາກສຽງຄື້ບານເຮົາເວລານີ້ລະ , ຝັນໄປສູ່ບ່ອນທີ່ແຜ່ນດິນຮາບພຽງ . ຝັນ

ໄປຮອດຄວາມບໍ່ເຫນັງບໍ່ຕຶງແລະສະຫງົບງຽບ .

ຄວາມຫວ່າງເປົ່າທີ່ດຳມືດ ໄດ້ຫອບຊຸ້ມເອົາຂ້ອຍເຂົ້າໃນອ້ອມກອດອັນອົບອຸ່ນ , ມັນຕິດສະຫນິດເຂົ້າໃນວິນຍານຂ້ອຍຄືປີງຈັກພັນທົວທີ່ມອງບໍ່ເຫັນ ຈົນເທົ້າວ່າ ຂ້ອຍຄ່ອຍໆຮູ້ສຶກ - ເຫງົານອນຂົ້ນມາ ດ້ວຍຄວາມເມື່ອຍອ່ອນ , ແລະຮູ້ສຶກວິຕົກກັງວົນວາດໃດວາດຫນຶ່ງຂົ້ນມາໃນຈິດໃຈ . ຂ້ອຍຮູ້ສຶກວ່າຕົນເອງນ້ອຍເຂົ້າໆ ບໍ່ມີຄວາມຫມາຍຫຍັງເລີຍຕໍ່ແຜ່ນດິນຂອງ - ເຮົາ...

ຊີວິດຢູ່ຊຸ້ມບ້ານຄືວ່າບໍ່ມີຊີວິດຊີວາສຳລັບຂ້ອຍ . ຂ້ອຍໄດ້ອ່ານພໍ້ອີກໃນຫລາຍໆປຶ້ມວ່າ ຊີວິດຢູ່ບ້ານນອກ ບໍລິສຸດ ແລະ-ຫນ້າເບີກບານກວ່າໃນເມືອງ . ແຕ່ຂ້ອຍພັດເຫັນຊາວ ບ້ານຕ້ອງເຮັດວຽກຫນັກບໍ່ມີຍາມເຊົາຈົນຫລັງຊິຫັກຍ້ອນ . ຊາວບ້ານພາກັນມັກເຈັບປ່ວຍ , ບາງຄົນກໍ່ພິການໄປຍ້ອນເຮັດ - ວຽກງານຫນັກ , ຈະຫລຽວຫາໃບຫນ້າທີ່ເບີກບານແຈ່ມ ໃສແມ່ນຫາຍາກເຕັມທີ . ກຳມະກອນ ແລະ ຊາວຫັດຖະກຳຢູ່-ໃນເມືອງ ເຖິງແມ່ນວ່າຂະເຈົ້າ ເຮັດວຽກຫລາຍສ່ຳໆກັນກັບຊາວນາຊົນນະບົດ ແຕ່ພວກໃນເມືອງ ຂະເຈົ້າພັດດຳລົງຊີວິດທີ່ເບີກບານກວ່າ . ພວກຂະເຈົ້າບໍ່ໄດ້ຈົ່ມວ່າເບື່ອຫນ່າຍຊີວິດຄືຊາວຊົນນະບົດທີ່ເປົ່າປ່ຽວ . ຂ້ອຍເຫັນວ່າ ຊີວິດຂອງຊາວນາ ກໍ່ບໍ່ແມ່ນວ່າຈະງ່າຍດາຍເລີຍ ຕ້ອງເອົາໃຈໃສ່ຕໍ່ຜົນດິນ-ບ່ອນເຮັດຢູ່ເຮັດກິນຂອງຕົນຢູ່ສະເຫມີ ທັງຍັງຕ້ອງມີຄວາມສະຫລາດໄຫວພິບໃຫ້ທັນຄົນໄທດຽວກັນອີກດ້ວຍ . ແລ້ວກໍ່ບໍ່ເຫັນວ່າ ຈະມີຫຍັງຫນ້າເບີກບານ ກ່ຽວກັບຜູ້ຄົນທີ່ອຶດຢາກສະຕິປັນ

ຢາເຫຼົ່ານີ້ . ຂ້ອຍພໍຈະເຫັນແລ້ວວ່າ ຊາວບ້ານທຸກຄົນ ດຳ
ລົງຊີວິດແບບສັດທີ່ຕາບອດ ສູ້ຊົນໄປຢ່າງໄຮ້ທິດທາງ . ພວກ
ຂະເຈົ້າພາກັນຢ້ານ , ຈັກຢ້ານຫຍັງ , ແລ້ວກໍບໍ່ເຊື່ອໃນກັນ
ເລີຍ , ຄືມີຄວາມຮ້າຍກາດເຊື່ອງຊ້ອນຢູ່ໃນແຕ່ລະຄົນ .

ເປັນເລື່ອງເຂົ້າໃຈຍາກສຳລັບຂ້ອຍ ທີ່ວ່າເປັນຫຍັງພວກ
ຊາວບ້ານຈຶ່ງຊັງຄົນ ໂຄໂຄນ , ປັນກົຟ ແລະ"ພວກເຮົາ"-
ຫມົດທຸກຄົນມີຫລາຍແທ້ - ທັງທີ່ພວກເຮົາ ແມ່ນຜູ້ທີ່ຢາກ ດຳ
ລົງຊີວິດຢູ່ຢ່າງສົມເຫດສົມຜົນ .

ຂ້ອຍເຫັນໄດ້ແຈ້ງວ່າ ຊີວິດໃນເມືອງໄດ້ປຽບກວ່າ :ຄົນ
ໃນເມືອງມີຄວາມປາດຖະຫນາຢາກພົບພໍ້ຄວາມສຸກ , ມີ ຈິດ
ໃຈກ້າຫານ ແລະຮຽກຮ້ອງສະຕິປັນຍາ , ມີຈຸດປະສົງມຸ່ງ -
ຫມາຍຫລາຍຢ່າງແລະ ມີບັນຫາຫລາຍແງ່ . ທຸກຄັ້ງທີ່ ຂ້ອຍ
ຄິດຄຳນຶງເຖິງຊີວິດຄົນໃນເມືອງຂ້ອຍມັກຄິດພໍ້ຄົນ ໔ ຄົນ :"
ຟ . ຄາລູກິນ ແລະ ຊ. ເນໄບ ຊ່າງແປງໂມງ,ແລະ ຮັບ
ແປງເຄື່ອງມືຕ່າງໆ,ເຄື່ອງມືແພດ , ຈັກຫຍິບ ,ຫີບເພງທຸກ
ຊະນິດ , ແລະອື່ນໆ . "

ປ້າຍນີ້ແຂວນຢູ່ເທິງທາງເຂົ້າແຄບໆລະຫວ່າງປ່ອງຢ້ຽມ-
ເປື້ອນເປິຂອງຮ້ານນ້ອຍໆ . ພາຍໃນຫ້ອງ ຟ . ກາລູ ກິນ
ນັ່ງຢູ່ຊື່ປ່ອງຢ້ຽມ ເຂົາເປັນຄົນຮ່າງໃຫຍ່ຫນາ , ຫນ້າມົນ ມີ
ຮອຍຍິ້ມເກືອບຕະຫລອດເວລາ . ຫົວຂອງເຂົາລ້ານເຜີຍທັງ
ຫົວສີເຫລືອງຫຸ້ມທົ່ວກະໂຫລກຫົວ ມັກໃສ່ແວ່ນຂະຫຍາຍຕິດຕາ
ຢູ່ເປັນປະຈຳ . ບາງຄັ້ງໃນຂະນະທີ່ ພວມສົນລະວົນຢູ່ນຳຊິ້ນ
ສ່ວນຈະແປງຫນ່ວຍໂມງຢູ່ນັ້ນ ເຂົາກໍຈະຮ້ອງເພງຂຶ້ນ ອອກ

ສຽງແຮງຈົນປາກມົນອ້າກວ້າງເກືອບບັງເອົາໜວດນ້ອຍຮຽວສີຂີ້ເຖົ່ານັ້ນໝົດ . ຢູ່ອີກປ່ອງຢ້ຽມໜຶ່ງ ແມ່ນ ນ.ເນໄບ . ເຂົາຜູ້ນີ້ ເປັນຊາຍຮ່າງນ້ອຍ ຈ່ອຍແຫ້ງປານຜີເຜດ ຜົມກູດ-ດຳ , ເຄົາຍາວແຫລມ,ດັງງວງໃຫຍ່ ດວງຕາດຳໃຫຍ່ປານໝາກໝັ້ນ . ຊາຍຄົນນີ້ ກໍເຮັດວຽກຢູ່ບໍ່ເຊົາເຊັ່ນດຽວກັນ, ມົວເມົາແຕ່ດຶງຊິ້ນສ່ວນຕ່ອນນ້ອຍອອກ , ເອົາຕ່ອນນັ້ນໃສ່ ບໍ່ຈັກວ່າທໍ່ໃດເທື່ອ . ດົນໆ ເຂົາຈຶ່ງຄາງອອກມາສຽງທຸ້ມຕ່ຳວ່າ:

" ຕຣາ - ຕາ - ຕຳ , ຕຳ , ຕຳ ! "

ຢູ່ທາງຫລັງຂະເຈົ້າ ຂ້ອຍແມ່ນເຫັນເຄື່ອງຂອງກອງຢູ່ຊະຊາຍບໍ່ຈັກວ່າຫີບຫໍ່ , ຈັກ , ກົງລໍ້ , ຫີບເພງ , ລູກໂລກສຳລັບຫ້ອງຮຽນ . ເຄື່ອງຊິ້ນສ່ວນເປັນໂລຫະ ຮູບຕ່າງໆກັນວາງລຽນຢູ່ເທິງຖ້ານຊັ້ນຕິດຝາ. ຢູ່ຝາກໍມີໜ່ວຍໂມງ ແຂວນຫ້ອຍຊາບລາບ , ໂມງບິດລານກໍມີ . ຂ້ອຍມັກໄປຢືນເບິ່ງ-ຄົນທັງສອງເຮັດວຽກ . ຢາກເບິ່ງຢູ່ໝົດມື້ໝົດເວັນກໍໄດ້ , ແຕ່ຮ່າງສູງຂອງຂ້ອຍພັດໄປບັງແສງສະຫວ່າງໝົດຈົນ ຊ່າງແປງໂມງພາກັນໜື່ອໜ່າຍຢ່າງບໍ່ພໍໃຈ ທັງໂບກມືສັນຍານ ໃຫ້ຂ້ອຍໜີໄປ . ຕອນຂ້ອຍຍ່າງຈາກໄປ ຂ້ອຍມັກຮ່ຳເພິງຢ່າງອົດນ້ອຍໃຈບໍ່ໄດ້ວ່າ :

" ຈັ່ງແມ່ນໂຊກດີທີ່ມີອາຊີບເຮັດຕາມທີ່ໃຈມັກ ! "

ຂ້ອຍນັບຖືຊ່າງແປງໂມງສອງຄົນນີ້ຫລາຍ ແລະເຊື່ອສະ-ໜິດໃຈວ່າ : ເຈົ້າຕ້ອງຮູ້ຄວາມລັບຫລາຍຢ່າງ ກ່ຽວກັບເຄື່ອງຈັກເຄື່ອງມືຕ່າງໆ , ເຊື່ອວ່າ ໂລກນີ້ ຂະເຈົ້າຄືຈະ-ແປງໄດ້ໝົດ . ນີ້ຈັ່ງແມ່ນຄົນ !

ແຕ່ຊີວິດຢູ່ບ້ານນອກ – ຂ້ອຍບໍ່ມັກເລີຍ . ຊາວນາເປັນຄົນທີ່ຂ້ອຍເຂົ້າໃຈຍາກ . ໂດຍສະເພາະແມ່ນແມ່ຍິງ, ມີ ແຕ່ຈົ່ມວ່າໂຕເຈັບປ່ວຍຢູ່ເລີຍໆ : ບໍ່ດີລະວ່າ " ຫົວໃຈເປັນວູບວາບ " , ບໍ່ດີລະວ່າ " ຫນ່ວງຫນ້າເອິກ " ແລ້ວກໍ່ມີ ແຕ່ເຈັບແນວໃຫມ່ໄປເລີຍໆ , " ເຈັບທ້ອງ " ພັດວ່າ, ອາການເຈັບແບບນີ້ ມັກຖືກເອົາໄປວິພາກວິຈານກັນຫລາຍກວ່າ–ເລື່ອງອື່ນ ເມື່ອເວລາພວກແມ່ຍິງໄປພົບກັນຍາມວັນທິດຫລືວັນຢຸດພັກ ທີ່ແຄມຝັ່ງແມ່ນ້ຳ ໂອນກາ , ຫລືວ່າເວລານັ່ງລົມກັນຢູ່ແປ້ນມ້າຫນ້າເຮືອນຂະເຈົ້າເອງ . ພວກພໍ່ນາຊ້ຳພັດ ເປັນຄົນມັກຜິດຖຽງກັນຢ່າງຮຸນແຮງບໍ່ວ່າເລື່ອງຫຍັງກໍ່ຕາມ . ເຄີຍມີສາມຄອບຄົວຫນຶ່ງ ຜິດກັນຈົນຕີກັນ ຍ້ອນເລື່ອງຍາດເຕົ້າດິນເກົ່າໆລາຄາບໍ່ຮອດສິບສອງໂກເປັກ ຖ້າແມ່ນຊື້ອັນໃຫມ່ໆ . ກວ່າຈະຢຸດຕິການຜິດຖຽງໄດ້ ກໍ່ມີຍິງເຖົ້າຄົນຫນຶ່ງແຂນຫັກຍ້ອນແລະອ້າຍບ່າວແອວງຜູ້ຫນຶ່ງຫົວແຕກ . ເກືອບຈະບໍ່ມີອາທິດໃດທີ່ວ່າປາສະຈາກ ການຜິດຖຽງກັນແບບນີ້ .

ພວກຊາຍຫນຸ່ມກໍ່ມັກຊອກເກາະແກະລວນລາມຍິງສາວ , ປອກແບບລ້ວງບໍ່ອາຍ ເຊັ່ນວ່າໄລ່ກອດສາວຢູ່ກາງທົ່ງນາບໍ່ , ຊອກຮັ້ສນເຂົ້າຂຶ້ນມາມັດໄວ້ເທິງຫົວເຂົາບໍ່ . "ເອົາ! ມັດ–ໃຫ້ມັນຄືດອກໄມ້ ! ພວກຊາຍຫນຸ່ມຂັດບອກກັນ . ພວກ ຜູ້ສາວຖືກແກ້ເຄື່ອງ ແຕ່ແອວລົງຮອດຕີນ ກໍ່ພາກັນຮ້ອງກົດໆແຕ່ເກັ້ມຫລິ້ນແບບນີ້ ພວກແມ່ຍິງກໍ່ບໍ່ແມ່ນວ່າ ຈະບໍ່ມັກ . ເບິ່ງ–ແຕ່ເຂົ້າບໍ່ຟ້າວຟັ່ງຢາກແກ້ເຊືອກມັດອອກນັ້ນລະ . ເວລາເຂົ້າໂບດໄປຟັງພະເທດ ພວກອ້າຍບ່າວມັກຊອກເດີ່ມໄປບາຍ

ກັ້ນພວກຜູ້ສາວ ແລະຄ້າຍຄືວ່າພວກເຂົາມາໂບດກໍ້ຍອມຢາກ–
ມາຢອກກັນ ແນວນັ້ນ . ຈັ່ງຊັ້ນຮອດວັນທິດມາ ອາຈານຢູ່
ເທິງແທ່ນສູດມົນ ກໍ້ຣອງດ່າພວກເຂົາລົງມາວ່າ :

" ພວກສັດ ! ສູບໍ່ມີບ່ອນຊິໄປເຮັດບາບຢູ່ບ່ອນໃດອີກ –
ແລ້ວຫວາ ? "

ໂຣມາສ ເລົ່າສູ່ຟັງວ່າ " ຢູ່ ອູຏາອິນນາ " ພູ້ມ , ຜູ້
ຄົນອ່າວມີ ເອີ – ຄວາມລະອຽດອ່ອນໃນເລື່ອງສາດສະໜາ
ແດ່ . ຢູ່ໜີ້ ຂ້ອຍເຫັນແຕ່ວ່າເລື່ອງຄວາມເຊື່ອໃນສາດສະ–
ໜານັ້ນ ເປັນພຽງຄວາມຮູ້ສຶກຢ້ານກົວຫລືຄວາມຫິວກະຫາຍຊື່
ຊູ່ , ຕາມທີ່ຈິງແລ້ວ ຖ້າຄົນໃດເຊື່ອໃນພະເຈົ້າແທ້ ຍ່ອມຈະ
ຕ້ອງມີຄວາມເຫລື້ອມໃສຊາບຊຶ້ງໃນອຳນາດ ແລະຄວາມຈົບ–
ງາມຂອງພະອົງ – ສິ່ງເຫລົ່ານີ້ແມ່ນບໍ່ພົ້ນນຳຊາວບ້ານເຫລົ່ານີ້
ກໍເປັນການດີແນວໜຶ່ງ . ພວກຂະເຈົ້າຈະອອກສາດສະໜາ
ໄດ້ງ່າຍຂຶ້ນ . ເພາະວ່າສາດສະໜາແບບນັ້ນ ແມ່ນອະຄະຕິທີ່
ອັນຕະລາຍທີ່ສຸດ – ຂ້ອຍຂໍບອກເອົາໄວ້ໂລດ ! "

ພວກຊາຍໜຸ່ມມັກຄຸຍໂວໂອ້ອວດແຕ່ຫາກຂີ້ຢ້ານທີ່ສຸດ .
ສາມເທື່ອແລ້ວທີ່ພວກເຂົາ ເຂົ້າມາກໍກວນຂ້ອຍຕອນກາງ ຄືນ
ແລະພະຍາຍາມທີ່ຈະຕີ້ຂ້ອຍຄັກໆ ແຕ່ເຂົາກໍບໍ່ອາດສຳເລັດຜົນ.
ມີເທື່ອໜຶ່ງບໍ່ ທີ່ຫໍ່ໜຶ່ງຕີ້ຂ້ອຍໄດ້ . ຂ້ອຍບໍ່ບອກເລື່ອງນີ້ໃຫ້
ໂຣມາສຮູ້ຊໍ້າ , ແຕ່ເທື່ອນີ້ຂ້ອຍເຈັບຂາ ຍ່າງເດື່ອງວັບ –
ລາວເລີຍເດົາອອກວ່າ ມີຫຍັງເກີດຂຶ້ນ .

" ເຈົ້າຖືກເຂົາເຮັດບໍ ? ບອກແລ້ວວ່າໃຫ້ລະວັງແດ່!"

ເຖິງແມ່ນວ່າ ລາວໄດ້ເຕືອນຂ້ອຍບໍ່ໃຫ້ໄປເລາະບ້ານ –

ຫລັງຈາກຕາເວັນຕົກດິນແລ້ວ , ແຕ່ລາງເທື່ອຂ້ອຍເລາະໆ-
ຜ່ານທາງຫລັງສວນຜັກ , ລົງໄປຮອດແຄມແມ່ນ້ຳ ໂວນ ກາ
ແລ້ວນັ່ງຫລົ້ມຢູ່ກ້ອງຕົ້ນ ວິໂລ , ແນມຜ່າຄວາມມືດອອກໄປສູ່
ແມ່ນ້ຳດ້ານກົງກັນຂ້າມ . ໂວນກາ ໄຫລອ້ອຍອິ່ນແລະສະ -
ຫງ່າງາມຢູ່ຕໍ່ຫນ້າຂ້ອຍ , ລຳແສງອາທິດທີ່ຕົກດິນໄປແລ້ວສະ
ທ້ອນຂຶ້ນກະທົບຜິວດວງຈັນ , ສ່ອງແສງໃຫ້ດວງຈັນຮຸ່ງຂຶ້ນຈົນ
ຫນ້ານ້ຳລະຍິບລະຍັບໄປນຳ . ຂ້ອຍບໍ່ມັກດວງຈັນ . ມັນຄືມື
ຫຍັງຫນ້າຢ້ານວາດຫນຶ່ງ . ຂ້ອຍຮູ້ສຶກບໍ່ສະບາຍໃຈເມື່ອ ຕົກ
ຢູ່ທ່າມກາງແສງຈັນ , ມີຄວາມຮູ້ສຶກຢາກຮ້ອງຂຶ້ນຄືກັບ ຫມາ
ມັນຫອນເມື່ອຢ້ານກົວ . ຂ້ອຍດີໃຈເມື່ອຮູ້ພາຍລູນວ່າແສງຈັນ
ນັ້ນມັນບໍ່ແມ່ນ ແສງຂອງມັນເອງ . ພະຈັນນັ້ນຕາຍແລ້ວ-ບໍ່ມີ
ຊີວິດຢູ່ຫັ້ນ - ບໍ່ອາດມີຊີວິດຢູ່ຫັ້ນໄດ້ . ກ່ອນຈະຮູ້ເລື່ອງນີ້ -
ຂ້ອຍເຄີຍຄິດຝັນເອົາໄວ້ວ່າ ມີຄົນທ້ອງແດງຢູ່ໃນໂລກພະ ຈັນ
ຄົງຈະຮູບຮ່າງເປັນສາມຫລ່ຽມແລ້ວມີຂາຍາວໆຄືຂາກົມປາ -
ແຕມຮູບເວລາຍ່າງໄປ ຄົງຈະສົ່ງສຽງດັງໂມງໆ ຄືລະຄັງ ຢູ່
ວັດ . ທຸກສິ່ງທຸກຢ່າງຢູ່ເທິງພະຈັນຄົງເປັນທ້ອງແດງຫມົດ -
ຫມົດທຸກຢ່າງ ຜັກ , ສັດ , ຄົງພາກັນສົ່ງສຽງດັງກະ ພ້ອງ
ກະແພ່ງຢູ່ບໍ່ຂາດ , ຄືຊິມີແຕ່ຄວາມມ່ຽງຮ້າຍຕໍ່ໂລກເຮົາ .ຈິ່ງ
ວ່າເປັນການດີ ທີ່ຂ້ອຍໄດ້ຮຽນຮູ້ວ່າ ພະຈັນ ບໍ່ແມ່ນຫຍັງ ສຳ
ຄັນໃນທ້ອງຟ້າ , ແຕ່ກໍ່ຍັງຢາກໃຫ້ມີດາວໃດຫນຶ່ງແລ່ນໄປຕຳ
ພະຈັນແຮງໆຈົນມັນແຕກເປັນແປວໄຟປິວລົງມາສູ່ໂລກ- ເປັນ
ແສງໄຟຄືແສງຂອງພະຈັນເອງ .

ຂ້ອຍນັ່ງແນມຟອງນ້ຳຍວກຍູ້ແສງຈັນຊ້າງ , ເບິ່ງ ມັນ

ເຄື່ອນມາຈາກລະຍະໄກ ແລ້ວສະຫລາຍຕົວໄປໃນເງົາມືດ -
ຂອງແນວຝັ່ງ , ແລ້ວຂ້ອຍກໍ້ເລີ່ມຄຶດຄຳນຶງຢ່າງໜັກໜ່ວງ, ຄຶດໃນເລື່ອງໃຫມ່ . ຂ້ອຍຮູ້ສຶກວ່າຕົນເອງມີຄວາມຄຶດ ເລິກເຊິ່ງແຫລມຄົມ ແລະມີພິກໄຫວຫລາຍຂຶ້ນ ຂ້ອຍສາມາດເຂົ້າ-ໃຈຢ່າງງ່າຍດາຍໃນເລື່ອງທີ່ບໍ່ອາດເປັ່ງອອກມາເປັນ ເວລາໄດ້ , ເລື່ອງທີ່ບໍ່ກ່ຽວຂ້ອງກັບຊີວິດປະຈຳວັນຂອງຂ້ອຍ ເລີຍ. ກະແສນ້ຳທີ່ສະຫງ່າງາມໄຫລເອື່ອຍຢ່າງສະຫງົບງຽບ ເກືອບບໍ່ມີສຽງ . ອາດຈະມີເຮືອຈັກແລ່ນຂຶ້ນລົງນຳສາຍນ້ຳ-ປຽບດັ່ງນົກປະຫລາດຕົວໃຫຍ່ບິນອວດປີກອັນສີໄຟຂອງມັນ ; ແລ້ວສຽງຄາງຂອງເຄື່ອງຈັກ ກໍຈະດັງຫຶ່ມໆ ຄືສຽງພືປີກອັນໃຫຍ່-ໜັກ ຜ່ານໜ້າຂ້ອຍໄປ ; ຫລືອາດຈະມີແສງແມບຂຶ້ນ ຮອດຕາຝັ່ງ ສົ່ງລຳແສງສີແດງທອດລົງຜ່າໜ້ານ້ຳ - ນັ້ນແມ່ນຕະກຽງຂອງຄົນຫາປາ ແຕ່ເຮົາອາດຄຶດວ່າ ມັນແມ່ນດວງດາວ-ພະເນຈອນ ທີ່ຕົກລົງມາຈາກຟ້າ , ລອງລອຍໄປຕາມລຳນ້ຳດັ່ງດອກໄມ້ໄຟດວງໜຶ່ງ .

ສິ່ງທີ່ເຮົາໄດ້ອ່ານໃນປຶ້ມ ອາດກາຍເປັນພາບບົດທີ່ແປກ-ປະຫລາດ , ແລະຈິນຕະນາການ ກໍອາດນຳພາເຮົາໄປພົບພໍ້ກັບພາບທີ່ງົດງາມ ບໍ່ແມ່ນປຽບພາບແລ້ວພາບເລົ່າ . ຂ້ອຍຮູ້ສຶກຄືດັ່ງຖືກກະແສລົມດຶງດູດໄປຕາມລຳນ້ຳ ,ທ່າມກາງ ອາກາດອັນພໍດີຂອງລາຕີນັ້ນ .

ບາງຄັ້ງບາງຄາວ ອິໂຊດກໍອອກມາຫາຂ້ອຍໃນຍາມກາງຄືນແນວນີ້ ຮູ້ສຶກວ່າຮ່າງເຂົາຄືວ່າສູງຂຶ້ນອີກ , ທ່າທາງ ກໍເບີກບານຂຶ້ນ .

" ເຈົ້າອອກມາອີກລະ ? " ເຂົາມັກຖາມ , ແລ້ວ ກໍ ລົງນັ່ງຂ້າງຂ້ອຍ , ຈົ່ມດົງເຂົ້າສູ່ພະວັງອັນມືດງຽບ-ສາຍຕາຫລຽວແລຂວາມແມ່ນ້ຳ ຫລື ເບິ່ງເທິງທ້ອງຟ້າ , ທາງມື ກໍ ລູບເຄົາສີແດງຄ່ຳອ່ອນຄືເສັ້ນໄຫມຂອງເຂົາເອງ .

ລາງເທື່ອ ເຂົາຈະຫລົງເພີ້ຝັນອອກມາເປັນຄຳເວົ້າວ່າ:

ຂ້ອຍຊິຮຽນຫນັງສື , ໃຫ້ອ່ານປື້ມໄດ້ຫມົດທຸກແນວ, ແລ້ວຂ້ອຍຊິໄປນຳ - ແມ່ນ້ຳທຸກໆສາຍ , ແລ້ວເວລານັ້ນ ຂ້ອຍເຫັນຫຍັງຂ້ອຍກໍອາດຈະເຂົ້າໃຈໂລດ ! ຂ້ອຍຊິສອນຄົນອື່ນໆນຳ .ແທ໊ໄດ໋ . ຂ້ອຍຊິສອນແທ້ . ນ້ອງຊາຍເອີຍ,ມັນເປັນສິ່ງທີ່ດີງາມອີ່ຫລີໄດ໊ໃນເມື່ອວ່າເຮົາສາມາດໄຂຫົວໃຈເອົາ - ອອກໄດ້ນະ ! ແມ່ນແຕ່ພວກແມ່ຍິງກໍຄືກັນ - ມີລາງຄົນ ໄດ໊ -ຄັນເຮົາລົມເຂົາດ້ວຍໃຈຈິງລະ - ເຂົາກໍເຂົ້າໃຈ .ມີສາວຫນຶ່ງຂີ່ເຮືອໄປນຳຂ້ອຍມື້ນັ້ນ , ລາວຢາກຮູ້ວ່າ ຄົນເຮົາຕາຍໄປແລ້ວເປັນແນວໃດ .ລາວວ່າ " ຂ້ອຍບໍ່ເຊື່ອດອກວ່າມີຫມໍ້ນະຣົກ , ບໍ່ເຊື່ອວ່າມີສະຫວັນອີກ " . ເບິ່ງແມ່ - ເຈົ້າເບິ່ງແມ່ - ແມ່ຍິງເຂົາກໍ..."

ເຂົາຢຸດບຶດຫນຶ່ງ , ຄາຍຄືວ່າ ພວມຊອກຄຳທີ່ເຫມາະສົມແລ້ວວ່າ :

" ເອີ້ - ເຂົາກໍມີຊີວິດຈິດໃຈຄືກັນ " .

ອີໂຊດເກີດມາເປັນຄົນຂອງກາງຄືນຢ່າງແທ້ຈິງ. ເຂົາ ມີຄວາມຮູ້ສຶກລະອຽດອ່ອນດ້ານງາມ ແລະ ມີວິທີເວົ້າເຖິງ - ຄວາມງາມນັ້ນແບບມ່ວນໆ - ໄຂປະໂຫຍກຫລາຍໆ ແບບເດັກນ້ອຍພວມເພີ້ຝັນ . ເຂົາເຊື່ອໃນພະເຈົ້າ, ເຊື່ອຢ່າງບໍ່ມີ

ຄວາມຢ້ານກົວ ເຖິງວ່າຕາມການເຊື່ອຖືຢ່າງເປັນທາງການ-
ນັ້ນ,ຕໍ່ໜາ ອິໂຊດ , ພະເຈົ້າແມ່ນບູລູດຮາງໃຫຍ່ງາມຢູ່ໃນ
ໄວຊະລາ , ເປັນຜູ້ສະຫລາດອາດຮູ້ ແລະເປັນຜູ້ປົກຄອງ -
ໝົດໂລກ . ເພິ່ນບໍ່ສາມາດເອົາຊະນະຄວາມຊົ່ວໄດ້ຍອມວ່າ
-" ເພິ່ນບໍ່ສາມາດມີເວລາພໍຈະເຮັດທຸກຢ່າງ - ຂອງວ່າມະ
ນຸດເຮົາ ກໍມີຈຳນວນຫລວງຫລາຍເອົາແທ້ເອົາວ່າ . ແຕ່ -
ເພິ່ນກໍຈະສາມາດກວາດລ້າງຄວາມຊົ່ວທັງປວງໄດ້ໃນວັນໜຶ່ງ
ດອກ - ຖ້າຊອມເບິ່ງ . ແຕ່ ພະອົງ ນີ້ຕ - ຂ້ອຍລະ...
ບໍ່ເຂົ້າໃຈເລີຍ . ຈັກວ່ານາແຕ່ໃສ່ເອົາໂລດ . ພະເຈົ້ານະ
ມິ-ນໍ້ , ແມ່ນບໍ ? ຫັ້ນກະພໍລະຫວາ - ຊ້າຂ້ອຍດອກ .ແຕ່
ວ່າ ມັນບໍ່ເປັນຈັ່ງຊັ້ນນັ້ນຕີ້ - ຊ້ຳຜັດມີອາຍໜຶ່ງມາອີກ,ວ່າ-
ເປັນລູກຂອງພະເຈົ້າຜັດວ່າ .ອາວ - ຄັນລາວເປັນລູກ ພະ
ເຈົ້າແລວ ຊິເປັນຫຍັງອີກບາດນີ້ ? ພະເຈົ້າກໍຍັງບໍ່ທັນ ຕາຍ
ເທື່ອນ່າ - ຂ້ອຍກະຮູ້ຢູ່ແລວອັນນີ້ " .

ຢ່າງໃດກໍຕາມຫລາຍໆເທື່ອ , ອິໂຊດມັກມານັ່ງຮຽງ -
ຂ້າງຂ້ອຍມິດໆ , ຈົມຢູ່ໃນພະວັງຄິດຂອງເຂົາເອງ.ດົນໆຈຶ່ງ
ອອກປາກທັງຫັນໃຈໃຫຍວ່າ :

" ເອີ - ມັນກະເປັນໄປຕາມແບບມັນນັ້ນລະ..."

" ແມ່ນຫຍັງເກາະ ? "

" ບໍ່ - ບໍ່ມີຫຍັງ . ຂ້ອຍເວົ້ານຳຂ້ອຍເອງດອກ " .

ແລ້ວກໍຫັນໃຈໃຫຍ່ອີກ ,ສາຍຕາຈ້ອງແນມໄປທີ່ກວາງໄກ
ອັນມືດມົວ .

" ຊີວິດນີ້ - ກໍເປັນສິ່ງງົດງາມໄດ້ ! "

ຂ້ອຍເຫັນດີນຳເຂົາໃນຂໍ້ນີ້ .

" ແທ້ - ຊີວິດເປັນສິ່ງງົດງາມ " .

ຟ້າ ນ້ຳ ອ່ອນໄຫວຂອງສາຍທາມດຳມືດ ລອກກົ້ວງເປັນ-ຟອງໃຫຍ່ຢູ່ຕໍ່ໜ້າພວກເຮົາ . ເທິງທ້ອງຟ້າໝູ່ດາວຊາງຮຸ່ງເປັນທາງສີເງິນ . ດາວດວງໜ້ອຍໃຫຍ່ສ່ອງປະກາຍສີ ຄຳທາບໃສ່ກັບຟ້າສີດຳ . ຫົວໃຈພວກເຮົາເລີ່ມຮ້ອງບົດເພງ - ອອກມາຄ່ອຍໆ , ເປັນເພງແຫ່ງຄວາມຮັບຮູ້ອັນສົມເຫດ ຜົນໃນສິ່ງລັບລີ້ຂອງຊີວິດ .

ຟາກທົ່ງຫຍ້າໄກອອກໄປພຸ້ນ , ເຝື້ອເລີ່ມເປັນສີແດງສະຫຼັບດ້ວຍລຳແສງຂອງພະອາທິດ , ອີກບໍ່ດົນຕາເວັນຈະຂຶ້ນ-ແລ້ວມັນຈະກະຈາຍແສງໄປທົ່ວທ້ອງຟ້າ .

" ຕາເວັນນີ້ ກໍປານສິ່ງມະຫັດສະຈັນ ! " ອີໂຊດ ຈົ່ມພຸມໆຢ່າງມີຄວາມສຸກ .

ຕົ້ນໝາກໂປມ ພວມອອກດອກ ອູ້ມບ້ານ ຈັ່ງຄືວ່າ ນອນສະຫງົບຢູ່ກ້ອງໝູ່ເມກສີກູບລາຍ . ກິ່ນສົ້ມໆກະຈາຍໄປ ທົ່ວບັນຍາກາດ , ຖວາມກິ່ນຢາງໄມ້ແລະມູນສັດໝົດ . ຕົ້ນ ໄມ້ເປັນຮ້ອຍໆຕົ້ນເຮືອງເຮື່ອໄປດ້ວຍກັບດອກສີຊົມພູແກມຂາວ - ກີບອ່ອນລະໄມ , ຕົ້ນຢັ່ງຢາຍລຽບເປັນຖັນແຖວສະເໜີກັນ-ນຳຫວ່າງຫລັງເຮືອນກັບທົ່ງນາ . ຄືນໃດເດືອນຫງາຍ ເວລາມີລົມພັດອ່ອນໆກົ່ງງ່າທີ່ເຕັມດ້ວຍດວງດອກຈະສັ່ນດັ່ງ ອອດແອດ ຄ້າຍດັ່ງວ່າ ມັນໜັກພວງດອກເຕັມທີ , ແລ້ວກໍມີ ລະລ້ອງສີຄຳປົນຟ້າຫລົ່ນລົງເດີຍລະດາດໄປທົ່ວບ້ານ . ນົກອ້ຽງຮ້ອງສຽງ ຈົ້ມ ບໍ່ຫລ່າລົງ . ຕະຫລອດເວລາກາງເວັນ ຍັງ

ໄດ້ຍິນສຽງນົກ ສະກາຍລ້າກ ຮ້ອງສຽງອ່ອນຫວານປານເພງ
ຮັກບໍ່ມີຍາມເຊົາ ໂດຍທີ່ບໍ່ເຫັນຕົວມັນ .

ຍາມວັນພັກບຸນ , ພວກຜູ້ສາວ ແລະ ແມ່ຍິງທີ່ຍັງໜຸ່ມ-ແຕ່ພາກັນຍ່າງນຳທາງຮ້ອງເພງບໍ່ເຊົາປາກ ຄືກັນກັບພວກນົກດວງຕາຫວານຍິ້ມຕະຫລອດເວລາ . ອີໂຊດ ເອງກໍຍິ້ມແຍ້ມຄືຄົນມຶນເມົາ . ເຂົາຈ່ອຍລົງຫລາຍ ເບົ້າຕາຈິ່ງເປັນສີໂກນໂກນ . ໜ້າຕາຄືວ່າຄົມສັນເຈົ້າຊູ້ຂຶ້ນອີກ - ແຕ່ມີລັກສະນະຄືມັກບຸນຫລາຍຂຶ້ນອີກ . ເຂົາມັກນອນຕະຫລອດວັນ ແລ້ວ ພໍຄ່ອຍແລງມາ ເຂົາຈິ່ງຈະເຂົ້າມາໃນບ້ານ ຊຶ່ງເປັນຄົນມີວຽກມີງານອັນໃດອັນໜຶ່ງ . ກຸກຸຊະກິນ ມັກຢອກເຂົາດ້ວຍຄຳ -ເວົ້າໂກກແຕກໍແບບກັນເອງ , ແລ້ວ ອີໂຊດກໍຈະຕອບ ພ້ອມຮອຍຍິ້ມອາຍໆວ່າ :

" ຢ່າປາກດູ ! ຄົນເຮົາຊິຮັດຫຍັງຫລາຍແທ້ເກາະ?"

ແລ້ວເຂົາກໍຫລູດປາກອອກມາຢ່າງຕື່ນເຕັ້ນວ່າ :

" ໂອ - ຊີວິດນີ້ ເກີນວ່າຫວານຊື່ນສາ ! ເບິ່ງແມ້ຄົນເຮົາຊິສາມາດຢູ່ນຳກັນຢ່າງເອື້ອເຟື້ອເພື່ອແຜ່ເທົ່າໃດ ! ມີຄວາມເວົ້າຈັບອົກຈັບໃຈໃຫ້ກັນຫລາຍເທົ່າໃດ ! ລາງອັນ -ລາງແນວ - ເຮົາກໍບໍ່ອາດລືມໄດ້ຕະຫລອດຮອດມື້ຕາຍພຸ້ນລະແລະ ເມື່ອໄປເກີດອີກຊາດໃໝ່ ກໍຄືຈະຄິດຫາມັນນັ້ນ ລະກ່ອນອື່ນໝົດ " .

" ເອີ ລະວັງແດ່ລະ ! ບັນດາຜົວທັງຫລາຍ ເຂົາ ຊິເອົາຫົວໂຕຈັກມື້ດອກ " ຊາຍໂຄໂຄມ ເຕືອນເຂົາ ທັງຍິ້ມ-ໃຫ້ຢ່າງອົບອຸ່ນ .

" ເອີ , ກໍເປັນຕາເຂົ້າຊິເຮັດຢູ່ດອກ " ,ອິໂຊດຮັບ.

ເກືອບທຸກໆຄືນ ເວລານີ້ສຽງນົກອຽງບັນເລງດົນຕີ ຂຶ້ນ ສຽງອັນແຫລມສູງເຈາະຫົວໃຈຂອງ ມີກຸນ ກໍຈະແຫວກຂຶ້ນໄປ ປະສານສົມທົບກັບດົນຕີຂອງນົກ , ສຽງເຂົ້າດັ່ງມາຈາກ ຕົ້ນໄມ້ໃນສວນ , ຫລືຈາກທົ່ງນາ , ຈາກຝັ່ງແມ່ນ້ຳ . ເຂົ້າ-ຮອງເພງໄດ້ເປັນຕາຟັງຢ່າງປະຫລາດ , ມັນມ່ວນຈົນ ພວກໄທບານຫລາຍໆຄົນອອນຊອນ ຍອມອະໄພໃຫ້ແກ່ຄວາມບໍ່ຈົບບໍ່ດີຂອງເຂົ້າຫລາຍຢ່າງ .

ແລ້ວໄທບານກໍເລີ່ມພາກັນມາໂຮມນຳຫລາຍຂຶ້ນ- ຫລາຍຂຶ້ນຢູ່ທີ່ຮານເຮົາ ຍາມແລງວັນທິດ - ໃນຫມູ່ຄົນເຫລົ່ານັ້ນກໍມີ ຕາເຖົ້າ ຊູສະລົຟ , ບາຣິນີຟ , ຊ່າງຕີເຫລັກ ໂຢຕົຟແລະ ມີກຸນ . ພວກຂະເຈົ້າມານັ່ງຈູມຊຸມກັນ ແລ້ວກໍລົມກັນ ແບບເຄັ່ງຂຶມ ; ລາງຄົນກໍບິດຫນຶ່ງເມື່ອ , ຫນອຍຜັດມີຜູ້ໃຫມ່ມາ ເປັນຈັ່ງຊັ້ນຢູ່ຈົນຮອດທ່ຽງຄືນ . ບາງຄັ້ງຄາວ ກໍມີຄົນຂີ້ເຫຼົ້າ ມາເອະອະຂຶ້ນ - ສ່ວນຫລາຍກໍແມ່ນທາວທະຫານເກົ່າກົດສະຕິນ ຕາດຽວ ມີກຸນສອງນ່ອຢູ່ຂ້າງຊາຍນັ້ນລະ . ມັນມັກ ລີ້ວມາຮານເຮົາ ປານວ່າໄກ່ຕີພວມແລ່ນເຂົ້າໃສ່ຄູ່ຕໍ່ສູ້ , ແຂນເສື້ອຖົກຂຶ້ນກົກແຂນ ກຳກຳປັ້ນຈໍ່ແລ້ວ ກໍຮ້ອງສຽງແຫບ ຫາວອອກມາ :

" ບັກ ໂຄໂຄນ , ບັກຊາດຖ່ອຍ ! ມຶງເຊື່ອຖືຄື ພວກເຕົາແມ່ນບໍ່ ? ພວກກູຢາກຮູ້ແທ້ໆ : ເປັນຫຍັງມຶງຈຶ່ງບໍ່ ໄປໂບດ ? ຫາ-ບັກຄົນບໍ່ມີສາສະຫນາ ! ບັກນັກກົກວນ! ພວກ ກູຢາກຮູ້ : ມຶງແມ່ນຄົນຊະນິດໃດ - ຫາ ? "

ແລ້ວຄົນອື່ນໆ ກໍແຍ່ມັນຕື່ມ :

" ມິດສະກາ ! ເປັນຫຍັງມຶງຈຶ່ງຍິງມີ້ວເຈົ້າຂອງຂາດ- ໄປ - ຫາ ? ບໍ່ແມ່ນຍ້ອນມຶງຢານພວກເຕີກຫລາຍບໍ່ ? "

ໄດ້ຍິນແນວນີ້ ກົດສະຕິນ ເລີ່ມອາລະວາດທັນທີ ແຕ່ພວກໄທບ້ານ ຈັບມັນໄວ້ ທັງໂຫ່ທັງຮ້ອງ ກຸມເອົາມັນໂຍນລົງຫ້ວຍ. ມັນກົ້ງລົງຕະຝັ່ງທັງຮ່ອງດ່າວ່າ :

" ຊ່ອຍແດ່ ! ເອົາຊິຂ້າກູ ! "

ແລ້ວມັນກໍຈະປີນຂຶ້ນມາຈາກຫວຍ , ຕົນໂຕດຳມອມດ້ວຍຂີ້ຝຸ່ນແຕ່ຫົວຮອດຕີນ , ແລ້ວມາຖາມຂໍເງິນຄ່າເຫລົ້າໂວດກາຈອກຫນຶ່ງ ນຳ ຊາຍ ໂຄໂຄນ .

" ຄ່າຫຍັງ ? "

" ຄ່າສ້າງຄວາມເບີກບານຫັ້ນເດ້ ," ກົດສະຕິນຕອບ. ພວກໄທບ້ານ ກໍພາກັນຫົວຢ່າງຄຶກຄື້ນ .

ເຊົ້າຂອງວັນພັກວັນຫນຶ່ງ , ພໍແຕ່ແມ່ຄົວເລີ່ມດັງໄຟຂຶ້ນຢູ່ເຮືອນຄົວ ແລ້ວອອກໄປສວນ , ສ່ວນຂ້ອຍຢູ່ໃນຮ້ານ,ກໍ ມີສຽງລະເບີດດັງຂຶ້ນໃນເຮືອນ . ຮ້ານຈົນໄກວ . ກະປ້ອງ- ຂະຫນົມຕົກລົງຈາກຖານຊະຊາຍ . ມີສຽງຈອກແກ້ວແຕກຕຳກັນຊ່ວງຊຽງ , ສຽງສິ່ງຂອງຕົກລົງນຳພື້ນເຮືອນ .ຂ້ອຍ - ຟ້າວແລ່ນໄປທີ່ເຮືອນຄົວ , ຄັວນດຳກຸມລອຍອອກມາຈາກປະຕູເຮືອນຄົວ ທັງເຂົ້າຫ້ອງຢູ່ຫລັງປຸ່ມຄັວນນັ້ນມີສຽງໄຟແຕກ . ໂຄໂຄນ ແລ່ນມາຈັບບ່າຂ້ອຍໄວ້ .

" ຟ້າວກ່ອນ ! "

ຢູ່ທາງເຂົ້າ ແມ່ໄຫ້ອົ້ນຊຸກໆ .

" ອີ່ນາຍໂງ່ເອີຍ ! "

ໂຣມາສ ຜາປູ່ມລ້ອມເຂົ້າໄປໃນເຮືອນຄົວ , ຟັງ ສຽງເຄື່ອງຕຳກັນອີກກະທຶກ , ໃນເຮືອນຄົວ ລາວຈົ່ມດ່າແຮງໆ- ທັງຮ້ອງອອກມາວ່າ :

" ເຊົາໄຫ້ເທາະເວີຍ ! ໄປເອົານ້ຳມາ ! "

ດັ້ນຟືນຕິດລ້ອມກ້ອຍປາຍຢູ່ນຳພົ້ນເຮືອນຄົວ ,ທັ້ງກ້ອນດິນຈີ່ ແລະເສດເຕົາທີ່ພັງລົງມາ . ເຕົາໄຟດຳມູ້ມເປົ່າແປນ.ຂ້ອຍແລ່ນຜ່າລ້ອມງົມຈັບເອົາ ຄຸນ້ຳມາຖອກໃສ່ດັ້ນຟືນທີ່ຕົກຢູ່ນຳພົ້ນ. ແລ້ວຂ້ອຍເກັບດັ້ນຟືນຄືນໃສ່ເຕົາ .

" ລະວັງແດ່ເນີ້ ! " ໂຄໂລມບອກຂ້ອຍ . ລາວພວມຈັບມືແມ່ຄົວຈູງຍ່າງໄປໃຫ້ອີ່ນາຍນັ້ນ ເຂົ້າໄປທີ່ຫ້ອງ,ສັ່ງວ່າ:

" ໄປອັດຮານໄວ້ - ໄປ ! ລະວັງແດ່ , ມັນກຶມຶຊຶ ! ອາດຈະມີຫຍັງລະເບີດອື່ນອີກໄດ໋ ! "

ຕົວລາວເອງນັ້ນຍ່ອງຍ້ອງ ຈັບເບິ່ງເສດໄມ້ທີ່ລະເນລະ- ນາດຢູ່ກາງຫ້ອງ , ແລ້ວລາວຍ່າງກົງໄປທີ່ເຕົາໄຟ ດຶງເອົາຟືນທີ່ຂ້ອຍຫາກໍໂຍນເຂົ້າໄປນັ້ນອອກມາ .

" ເຈົ້າເຮັດຫຍັງຫັ້ນມ່າ ? "

" ນີ້ - ມາເບິ່ງນີ້ ! "

ຕ່ອນເສດໄມ້ທີ່ລາວຈັບຢູ່ນັ້ນຈີກອອກຈາກກັນຢ່າງຜິດ ປົກກະຕິ ເມື່ອສັງເກດອີກຄັ້ງ ຂ້ອຍກໍພົບວ່າ ມັນຖືກຜ່າອອກ - ເປັນຮີກ , ແລ້ວທາງກາງຮູສຶກວ່າມີຫມຶກດຳໆຕິດຢູ່ .

" ເຈົ້າເຫັນບໍ ? ມີຄົນຈັງໄຮຍັດໝີ້ໃສ່ໃນຟືນນີ້. ພວກຜີບ້າເອີ້ຍ ! ແມ່ນມັນຊິຂ້າໃຜໄດ້ຍອມ , ໝີ້ດ້ານເຄິ່ງ ກິໂລ "

ລາວໂຍນເສດໄມ້ຖູມ ແລ້ວລົງມືທຳຄວາມສະອາດ ທັງເວົ້າແຖມວ່າ :

" ດີແຕ່ ອັກຊິນຢາ ຢູ່ນອກເຮືອນພຸ້ມນໍ – ຄັນບໍ່ຊັ້ນ – ລາວອາດຈະບາດເຈັບຍອມ " .

ພໍຄັວນໝີ້ລອຍຂຶ້ນໝົດແລ້ວ ຂ້ອຍຈຶ່ງເຫັນວ່າຖ້ວຍຈານຢູ່ຊັ້ນຕິດຝາ ຕົກແຕກກະຈາຍໝົດ . ແວ່ນປ່ອງຢ້ຽມກໍ ມຸ່ນຊຸຍປຸ້ຍດິນຈີຟຸ້ງອອກຈາກເຕົາ ໄປຕົກກະຢາດ ຢູ່ທົ່ວຫ້ອງຄົວ.

ບາດນີ້ ຂ້ອຍເລີ່ມບໍ່ພໍໃຈ ນຳອາການໃຈເຢັນຂອງ ຄົນໂຄໂຄນແລ້ວ . ລາວລະເຮັດຄືຈັ່ງວ່າ ການລອບປອງຮາຍແບບຂີດຽດນີ້ ບໍ່ໄດ້ເຮັດໃຫ້ລາວສະເມັ່ນພໍດີ .

ພວກເດັກນ້ອຍທີ່ພາກັນມາແລ່ນຫລິ້ນຢູ່ເດີ່ນບ້ານສົ່ງສຽງຮ້ອງແຊວໆວ່າ :

" ໄຟໄໝ້ ! ໄຟໄໝ້ ! ອີ່ຕາ ໂຄໂຄນ ຖືກ ໄຟໄໝ້ແລ້ວ ! "

ສຽງແມ່ຍິງຄົນໜຶ່ງ ຮ້ອງໄຫ້ຂຶ້ນຢູ່ທາງນອກ ,ແລະແມ່ຄົວ ອັກຊິນຢ່າ ກໍຮ້ອງອອກມາແຕ່ຫ້ອງຢ່າງເປັນຫ່ວງ ເປັນໄຍ່ວ່າ :

" ມິກໄຄໂລ ອັນໂຕນິຊ ເອີ້ຍ ! ພວກມັນຊິພາກັນພັງຮ້ານເຂົ້າມາແລ້ວ ! "

" ເອີ່ມາ . ຂ້ອຍຊິໄປດຽວນີ້ " . ຄົນ ໂຄໂຄນ –

ບອກທັງເອົາຜ້າເຊັດເຄົ້າທີ່ປຽກປອນຂອງລາວ .

ຄົນພວກນັ້ນ ປ່ອນໜ້າ ທີ່ມີໜວດເຄົ້າຮົກ ແລະສີໜ້າ–ບິດບ້ຽວ ດ້ວຍຄວາມຢ້ານກົວແຖມຄຽດແຄ້ນ ອອກມາ. ທາງ ປ່ອງຢ້ຽມ – ດວງຕາແສບຍ້ອນຄັວນໄຟທີ່ບີ່ຮົລົງ . ມີ ສຽງຮ້ອງຂຶ້ນວ່າ :

"ເອົາເລີຍ ! ໄລ່ພວກມັນອອກຈາກບ້ານເຮົາ ! ພວກ–ມັນມີແຕ່ອາລະວາດວຸ່ນວາຍບໍ່ເຊົາ ! ຟ້າເອີຍ ,ເບິ່ງ ເອົາແມ້ ! "

ມີຜູ້ໜຶ່ງຜົມແດງໆ ພະຍາຍາມຈະປີນເຂົ້າມາທາງ ປ່ອງຢ້ຽມ , ແຕ່ກໍ່ພະລາດລົງທັງຈົ່ມພູມໆແຕ່ລະຄັ້ງທີ່ພະຍາຍາມ–ປີນໃໝ່ແຕ່ແລ້ວ ກໍບໍ່ສຳເລັດ . ມີຂວາຖືຂວານ ມີຊາຍຄວ້າຈັບຂອບປ່ອງຢ້ຽມ ຈຶ່ງເລີຍພາດທ່າເລີຍໆ .

ໂຣມາສ ຈັບໄມ້ດົ້ນຟືນທີ່ຖືກເຈາະເປັນຮູໃຫຍ່ເອັ້ນ ຖາມມັນວ່າ :

" ຊິເຂົ້າມາຫຍັງ ? "

" ມາຊ່ວຍມອດໄຟ " .

" ບໍ່ມີໄຟໄໝ້ຫຍັງເລີຍ " .

ຊາວບ້ານຄົນນັ້ນຖອຍໜີໄປ . ໂຣມາສອອກໄປທ່າງປະຕູເຂົ້າຮານ . ລາວຖືດົ້ນຟືນຄາມື , ຮ້ອງປະກາດແກ່ກຸ່ມຄົນເຫຼົ່ານັ້ນ :

" ມີຜູ້ໜຶ່ງ ໃນຈຳນວນຊຸມເຈົ້ານັ້ນ ເອົາໝົ້ຍັດໃສ່ດົ້ນຟືນນີ້ ແລ້ວເອົາມາປີນໄວ້ນຳກອງຟືນເຮົາ . ແຕ່ມັ້ນບໍ່ພໍດອກອັນໝົ້ນດາມທົ້ນ ບໍ່ພໍຈະທຳຮ້າຍຫຍັງໄດ້ " .

ຂ້ອຍຢືນຢູ່ທາງຫລັງຂອງ ໂຄໂຄມ ຊອມເບິ່ງພວກ ຄົນເຫລົ່ານັ້ນຢູ່ . ຫມໍ່ຖືຂວານ – ຊົ໊ວງຂີ້ຢານ ພວມເວົ້ານຳ ຄົນຢືນແປະກັນວ່າ :

" ໂທ້ – ມັນເວືອດຄົ້ນຟືນໃສ່ກູຕວ່າ... "

ແລະບັກທະຫານເກົ່າ ໂກສະຕິນ , ທ່າທາງເມົາ ແດ່ແລວ , ກໍ້ຮ້ອງໂຮ້ອນ ຢ່າງລຽນຕິດ :

" ໄລ່ມັນໄປ ! ບັກນອກສາສະຫນາ ! ເອົາມັນໄປຂ້ອນສານ ! "

ແຕ່ຄົນສ່ວນຫລວງຫລາຍກໍມິດງຽບ , ມີແຕ່ພາກັນ ແນມເບິ່ງຄົນ ໂຄໂຄມ ຂະເຫມັງແລະຟັງລາວເວົ້າທັງສົງໄສ. ໂຄໂຄມວ່າ :

" ມັນຕ້ອງໄຊ້ຫມົ່ຫລາຍກວ່ານີ້ແມ້ ຄັ້ນຢາກລະເບີດ – ເຮືອນຫມົດຫລັງນັ້ນນະ . ຈັກ ໑໕ ກິໂລ ພຸ້ນບໍ່ – ຈີ່ງພໍ.ວ່າຈັ່ງໃດ ເປັນຫຍັງບໍ່ພາກັນເມືອເຮືອນເມືອຊານສາລະ ? "

ມີສຽງຜູ້ຫນຶ່ງຮ້ອງວ່າ :

" ບັກໃດເປັນຫົວຫນາຫມູ່ ? "

" ໄປເອົາຕຳຫລວດມານາ ! "

ພວກໄທບານພາກັນທະຍອຍເມືອຢ່າງຈຳໃຈ .ເບິ່ງຊົງພວກເຂົາ ກໍ່ແມ່ນຜິດຫວັງຫລາຍຢູ່ .

ພວກເຮົາເຂົ້າເມືອໃນເຮືອນ , ແລ້ວ ອັກຊຸຍປາ ຫຍິບນ້ຳຊາມາຢາຍ . ຂ້ອຍບໍ່ເຄີຍເຫັນລາວ ເປັນຜູ້ອອນ ໂຍນແລະອະລິອະລອບຄືນມາກ່ອນ . ລາວເບິ່ງຫນາ ໂຣມາສ – ດ້ວຍສາຍຕາຫວງໄຍ ແລະ ວ່າ :

" ເຈົ້າຄືບໍ່ຍິນຟ້ອງພວກເຂົາຈັກເທື່ອ , ຊຸ້ນລະເຂົາຈິ່ງ ກໍກວນຢູ່ເລີຍໆ " .

" ເຈົ້າບໍ່ຄຽດແຄ້ນໃຫ້ເຂົາແດ່ຫວະ ? " ຂ້ອຍຖາມນຳ.

" ກັນບໍ່ມີເວລາ ຈະມາຄອຍຄຽດຄຶ້ມໃຫ້ແມວຂີ້ຫມາປາທູ ຈັ່ງຊີ້ດອກ " .

ຂ້ອຍຈິ່ງເລີ່ມຄຶດໄດ້ວ່າ : ອື - ຄົນແມ່ນຄົນເຮົາທຸກຄົນ ຫັນໄປຫາວຽກງານຂອງຕົນຢ່າງບໍ່ຮ້ອນບໍ່ເດືອງນຳແມວອື່ນ ດີ ເພີ່ມນີ້ ກໍຈະດີແທ້ .

ລາວຖາມຂ້ອຍທັນໃດນັ້ນວ່າຢາກໄດ້ປັ້ນຫຍັງແດ່ຈາກ - ເມືອງ ຄາຊານ ເພາະລາວພວມຈະເດີນທາງໄປພູມໃນສອງ ສາມວັນນີ້ .

ລາວເທື່ອ ຂ້ອຍຮູ້ສຶກວ່າ ຊາຍຄົນນີ້ ບໍ່ມີຈິດວິນຍານເລີຍ ລາວເປັນຄືເຄື່ອງຈັກ , ຫມູນລານຂຶ້ນໄວ້ຄືຫນ່ວຍໂມງ ແລ້ວ ກໍເດີນໄປໆເປັນລະບົບ ໃນຕະຫລອດຊີວິດຂອງລາວ . ຂ້ອຍ ຮູ້ສຶກຜູກພັນໃນຄົນຜູ້ນີ້ , ນັບຖືລາວຢ່າງສູງສົ່ງ ; ແຕ່ກໍ ຍັງ ປາຖະຫນາຢາກເຫັນລາວມີຄວາມຮູ້ສຶກຄຽດແຄ້ນເປັນແດ່ຈັກ- ເທື່ອ , ຮ້ອງດ່າອອກມາແດ່ , ຫລືວ່າທຸບຕົນກໍໄດ້ , ຮ້າຍ ໃສ່ຂ້ອຍນີ້ ຫລືໃສ່ໃຜກໍໄດ້ - ເອົາໂລດ . ແຕ່ບໍ່ເປັນຈັ່ງວ່າ ເລີຍ , ບໍ່ມີທາງທີ່ລາວຈະມີໂມໂຫໂທໂສ ຮ້ອງດ່າຫລືຄຽດ- ແຄ້ນຄື້ນທັງຫລາຍ . ຄົນວ່າມີຜູ້ມາກຸກກວນລາວແບບໂງຈາ ແລະຫນ້າຂີ້ຄຽດ , ສູດຂີດລາວກໍມີແຕ່ ຫລິ່ວຕາສ່ອງເຖົ້າ ນັ້ນ ຢ່າງເຍາະເຍີຍ ແລະ ເວົ້າສຽດ ແບບເສີຍໆໃສ່ ດ້ວຍ ຄຳ ເວົ້າກົງໄປກົງມາ ແບບບໍ່ມີນ້ຳໃຈ .

ຕົວຢ່າງ ຄັ້ງໜຶ່ງ ລາວຖາມ ຊູສະລົຟ ວ່າ :

" ເຈົ້າເຖົ້າຫົວຫງອກປານນີ້ , ເປັນຫຍັງຈຶ່ງເຮັດໜ້າໄຫວຫລັງຫລອກຈັ່ງຊີ້ ? "

ຜົວແກມເມັ້ນເຫລືອງ ແລະ ໜ້າຜາກຂອງຊາຍຊະລາ-ຄ່ອຍແດງຮິນຂຶ້ນ , ຈົນເບິ່ງຄືວ່າໜວດເຄົາສີຂາວຂອງລາວເປັນສີກຸຫລາບຂຶ້ນໝົດທຸກເສັ້ນ .

" ມັນບໍ່ມີຫຍັງແກ່ເຈົ້າດອກ , ບໍ່ມີຫຍັງເລີຍ . ເຈົ້າມີແຕ່ຊິເສຍຄວາມເຊື່ອຖືຂອງຄົນທັງຫລາຍຊ້ຳ " .

ຊູສະລົຟ ເຮັດຄໍຕົກ .

" ກະແມ່ນຢູ່ . ບໍ່ດີແທ້ " .

ຫລັງຈາກນັ້ນ ຊູສະລົຟ ໄປບອກ ອິໂຊດວ່າ :

" ຜູ້ຈັ່ງຊີ້ຈັ່ງເປັນຕາໃຫ້ເປັນຫົວໜ້າ ! ຄັນວ່າໄດ້ດົນ-ແບບນີ້ ເຈົ້າໜ້າທີ່ນຳພາ... "

...ໂຣມານ ໄດ້ສັ່ງວຽກຂ່ອຍສັ້ນໆ ກ່ອນອອກເດີນທາງ ວ່າ ຂອຍຈະຕ້ອງປະພຶດປະຕິບັດວຽກງານແນວໃດແດ່ ໃນເວລາລາວບໍ່ຢູ່ . ເບິ່ງຄືວ່າ ລາວໄດ້ລືມເລື່ອງຮ້າຍ - ການວາງລະເບີດຂູ່ຂວັນລາວໃນເຊົ້າມື້ນັ້ນ ເສຍແລ້ວ ຄືກັນ ກັບເຮົາລືມເລື່ອງຖືກແມງຫຍັງກັດ - ຈັ່ງຊັ້ນລະ .

ພໍດີ ປັນກົຟ ເຂົ້າມາ , ສັນນິຖານ ເບິ່ງເຕົາໄຟແລະສິ້ຖາມຢ່າງໜ້າບູດບຶ້ງວ່າ :

" ຢານບໍ ? "

" ຢ້ານຫຍັງ ? "

" ຮ້ວາຍ ມັນແມ່ນການປະກາດເສິກແລ້ວເດ-ນີ້ ! "

" ມາດື່ມນ້ຳຊາ ນີ້ນ່າ - ມາ " .

" ບໍ່ - ເມັຍຂອຍຊິຄອງ " .

" ເຈົ້າໄປໃສມາຊັ້ນຫວະ ? "

" ໄປຊິດເບັດກັບ ອິໂຊດ " .

ແລ້ວເຂົາກໍເມືອ . ຕອນຍ່າງກາຍເຮືອນຄົວ ຍັງເວົ້າ-ຍ້ຳອີກວ່າ :

" ມັນແມ່ນເສິກແລ້ວ ! "

ປັນກົຟ ຜັດມັກອອມສົບອອມປາກ ເວລາເວົ້າມຳຄົນ ໂຄໂຄນ ພໍປານວ່າ ລະຫວ່າງຂະເຈົ້າທັງສອງນັ້ນ ເລື່ອງທີ່ ສຳຄັນອັນໃດກໍໄດ້ເວົ້າຈາກັນໄວ້ໝົດແລ້ວ . ເວລາທີ່ ໂຣມາສອະທິບາຍເລື່ອງລະບົບການປົກຄອງ ຂອງເຈົ້າຊີວິດ ອີວານຜູ້ຮ້າຍກາດ , ຂອຍຈື່ວ່າ ອິໂຊດ ເວົ້າຂຶ້ນວ່າ :

" ພະເຈົ້າຊາອົງນີ້ເກີນວ່າຕາຍໆ " .

" ເປັນຄົນຂາຍຊີ້ນວ່າຊັ້ນແດ່ - ກຸກຸຊະກິນ ຕື່ມຄວາມ. ປັນກົຟປະກາດຢ່າງເດັດດ່ຽວວ່າ :

" ບໍ່ແມ່ນຄົນສະຫລາດສະຫລຽວຫຍັງດອກ . ມັນບໍ່ໄດ້-ຫຍັງຂຶ້ນມາດອກ ທີ່ພະອົງປະຫານຊີວິດພວກເຊື້ອເຈົ້າທັງຫຼາຍ ແຕ່ລຽງພວກຂຸນນາງນ້ອຍໆໄວ້ແທນ ແລ້ວຜັດດຶງເອົາພວກ - ຕ່າງຊາດເຂົ້າມາອີກ . ບໍ່ມີປະໂຫຍດເລີຍ . ເຈົ້າທີ່ ດິນນ້ອຍໆນະ ພາໃຫ້ຫຍຸ້ງຍາກກວ່າພວກເຈົ້າທີ່ດິນໃຫຍ່ຊ້ຳນ່າ - ຄືເພິ່ນວ່າຍຸງຮ້າຍກວ່າເສືອນັ້ນລະ , ຊິເອົາປືນຂ້າຍຸງກໍບໍ່ໄດ ກໍ້ - ແຕ່ມັນກຸກກວນເຈົ້າສ່ຳໆກັນລະກັບເສືອ " .

ກຸກຸຊະກິນ ມາພໍດີ ຫີ້ວຊຸຂີ້ຕົມດິນດາກມາພ້ອມ ຕອນພວມ

ແປງເຕົາໄຟ - ໃສ່ດິນຈີ່ຄືນ ອ້ອມປາກເຕົາເຂົາເວົ້າວ່າ :

" ຈັກແມ່ນພວກໂງ່ຈ້າບ້າບໍນີ້ ເຂົາພາກັນຄິດຈັ່ງໃດ ! ຊິຂ້າເຫົາຕົວເອງກໍຍັງບໍ່ໄດ້ - ຍັງມາຄິດຊິຂ້າຄົນພູມມະ ! ບາດນີ້ ຢ່າເອົາເຄື່ອງມາໄວ້ຫລາຍເດີ້ , ອັນໂຕນິຊ. ຫຽວໄປດຽງ ແຕ່ຢ່າຊື້ສິນຄ້າມາຫລາຍ . ຢ້ານວ່າພວກມັນຊິຫລອນວາງໄຟອີກ ໂດຍເຮົາບໍ່ຮູ້ເມື່ອໄດ໋ເນີ້ .ມັນຊິຕ້ອງມີເລື່ອງ - ຫຍຸ້ງກັນແທ້ລະ ເຈົ້າຄວນຈັດການເລື່ອງນັ້ນ ໃຫ້ຮຽບຮ້ອຍ ສາກ່ອນ ! "

" ເລື່ອງນັ້ນ " . - ຫມາຍເຖິງເລື່ອງບໍ່ຢາກຄັກປານໃດສຳລັບພວກຄົນຮ່ວມມີຢູ່ໃນຄຸ້ມບ້ານ - ຄືເລື່ອງຈັດຕັ້ງສະຫະກອນຊາວສວນຫມາກໄມ້ . ມາຮອດຫນີ້ , ຍອມຊ່ວຍເຫຼືອຂອງ ປັນກົຟ , ຊຸສະລົຟ , ແລະອີກ ໔-໕ ຄົນໄທບ້ານ ຜູ້ອ່າວໃຈບໍລິສຸດແດ່ ໂຄໂຄນ ໄດ້ຈັດຕັ້ງສະຫະກອນນີ້ເກືອບສຳເລັດແລ້ວ . ພວກຫມື່ຮູ້ມສ່ວນເກືອບທັງຫມົດຫັນມາເຊື່ອແລະນິຍົມ ໂຄໂຄນ , ລູກຄ້າຮ້ານເຮົາ ກໍເພີ່ມຂຶ້ນຢ່າງເຫັນໄດ້-ຈະແຈ້ງ . ຮອດກະທັ້ງປະເພດ " ຄົນຂີ້ສູດ " ຄື ບາຣິນຟ ແລະ ມິກູນ - ກໍຍັງພາກັນມາຊ່ອຍໂຄໂຄນ ເທົ່າທີ່ເຂົາຈະຊ່ອຍໄດ້ .

ຂ້ອຍສົນໃຈ ມິກູນຫລາຍອີ່ຫລີ . ສຽງຮ້ອງເພງເສົ້າອັນອ່ອນຊ້ອນຫູລວງເຖິງຫົວໃຈຂ້ອຍ . ຍາມໃດ ມິກູນ ຮ້ອງ - ເພງ ເຂົາຈະຫລັບຕາລົງ , ໃບຫນ້າທີ່ເຄີຍຫົວຢູ່ເລີງໆ ກໍມາຍອອກ . ຊີວິດເຂົາເລີ່ມຕົ້ນໃນເວລາກາງຄືນມືດສະຫນິດບໍ່ມີແສງຈັນ , ຫລືເມື່ອເວລາ ທີ່ທ້ອງຟ້າຖືກປຸກຄຸມດ້ວຍເມກ

ໜາຕຶບ . ລາງເຫື່ອ ຍາມແລງມາ ເຂົາຈະຊິ່ມບອກຂ້ອຍ-
ຄ່ອຍໆວ່າ :

" ອອກໄປຝັ່ງໂວນກາ ນຳກັນເດີ້ " .

ທີ່ຝັ່ງນ້ຳ ໂວນກາ , ຂ້ອຍຈະພົບ ມິກຸນ ພ້ວມທາງ ຫາ ຈະອອກຕຶກເບັດ , ຈັດແຈງແຕ່ງເຮືອທີ່ເຊື່ອງໄວ້ . ເຂົາ-
ນັ່ງຢູ່ທາຍເຮືອ ເອົາຂາລົງແກ່ວງໃນນ້ຳ . ເຂົາມັກເວົ້າວ່າ:

" ພວກຜູ້ດີໜັ້ນ ມັກຂົ່ມເຫັງຂ້ອຍແທ້ໆໃດ໋ . ສາທຸແມ້ ! ເກີນວ່າ ຂອຍໄດ້ອົດມັນສາ . ແຕ່ພວກເພີ່ນຊ້ຳຜັດຕ່າງນິ້ , ພວກເພີ່ນ ຮູ້ອັນແນວເຮົາບໍ່ຮູ້ນັ້ນສາ . ແຕ່ຄັ້ນພວກໄທບ້ານ-
ນຳກັນມາກອນຂ້ອຍ , ຂ້ອຍກໍບໍ່ຮູ້ຄືກັນວ່າ ຂ້ອຍ ຊິອົດ ເຂົາ ໄດ້ຈັ່ງໃດ໋ ? ມັນມີຫຍັງແຕກຕ່າງກັນລະຫວ່າງຂ້ອຍກັບ ເຂົາ ເຂົາລະນັບເງິນເປັນຮູບໆ . ສ່ວນຂ້ອຍນັບແຕ່ໂກເປັກ ທໍ່ນັ້ນ ! "

ໜ້າ ມິກຸນ ບິດບ້ຽວດ້ວຍຄວາມຮູ້ສຶກຂົມຂື່ນໃຈ,ຄິ້ວ ມີ ຮອຍແປ້ວກະຕຸກ ແຕ່ມີຍັງຄົງເໜັງນຳວຽກຢູ່ບໍ່ເຊົາ,ຈັດແຈງ ເບັດ ແລະຄັນ , ເອົາຕະໄບຝົນປາຍເບັດ . ນ້ຳສຽງ ອັນ ກ້ອງກັງວານຂອງເຂົາຫຼັ່ງໄຫລອອກມາປານສາຍນ້ຳ .

" ພວກເຂົາເອີ້ນຂ້ອຍວ່າ ບັກໂຈນຕ່ວາ . ເອີ -ຂ້ອຍ ລັກເຄື່ອງແທ້ . ແຕ່ວ່າ ເບິ່ງດູ ໃຜແດ່ ອັນຊຸບໍ່ລັກ ຊູ່ມື້ ? ກະດຽວວ່າ ໃຜກໍຮີດໄຖຄົນອື່ນໆ ຕາມພໍເຮັດໄດ້ຕ່ວາບໍ?ຂ່ອງ ວ່າຊີວິດມັນເປັນໄປແນວນີ້ . ພະເຈົ້າກໍ່ບໍ່ຮັກພວກເຮົາດອກ-
ມີແຕ່ພວກຜີຮ້າຍ ຕ່າງຫາກທີ່ເຂົ້າມາຄວບຄຸມພວກເຮົາ ! "

ແມ່ນ້ຳສີດຳໄຫລຢູ່ຂ້າງໆພວກເຮົາ , ກ່ອນເຝື້ອມືດ ມຶນ

ທິນ ລອຍຢູ່ເໜືອຫົວ . ມັນມືດເກີນທີ່ຈະແນມເຫັນຕາ ຝັ່ງ ຟາກນັ້ນ ໄດ້ຮູ້ສຶກແຕ່ວ່າ ຟອງຄອຍໆຍວກຍູ່ເລາະລຽບ ຫາດ ຊາຍແຄມຕາຝັ່ງ . ມັນຍວກຂຶ້ນມາຮອດຕີນຂອຍ ຄືດັ່ງໝາຍ ຈະຫອບອຸ້ມເອົາຂອຍໄປສູ່ວັງນ້ຳອັນກວ້າງໄກ ມືດມິດແລະ ໄຮ້ ຂອບເຂດ ແຫ່ງໃດແຫ່ງໜຶ່ງ .

" ຄົນເຮົາ ກໍຕ້ອງມີຊີວິດຢູ່ຊັ້ນຕ່ຳນີ້ ?" ນິກູນ ຖາມຂຶ້ນ, ແລ້ວຖອນໃຈໃຫຍ່ .

ສຽງໝາຮອງຫອນຢູ່ເທິງຕາຝັ່ງ . ຂອຍຖາມຕົວເອງຄື ຄົນທີ່ພວມຢູ່ໃນລາງຝັນວ່າ :

" ມີຊີວິດແບບ ນິກູນ ນັ້ນບໍ - ຊິຢູ່ເພື່ອຫຍັງ ? "

ແມ່ນ້ຳງຽບສະຫງົບແທ້ , ທັງດຳປິດເປັນຕາຂົນລຸກ . ຄວາມມືດອັນອົບອຸ່ນແຜ່ໄປບໍ່ມີທີ່ສຸດ .

" ເອົາຊິຂາຊາຍ ໂຄໂຄນແທ້ໄດ້ . ເຈົ້າຄືກັນ, ຢ້ານ ຢູ່ " . ນິກູນ ຈົ່ມອອກມາ . ແລ້ວທັນທີທັນໃດ , ເຂົາ ກໍ ເລີ່ມຮ້ອງເພງອີກ , ຮ້ອງສຽງຕ່ຳໆ .

ແລ້ວແມ່ກໍເວົ້ານຳຂອຍຢ່າງຖະໜອມຮັກ ,ແມ່ບອກຂອຍ ວ່າ :

" ເອີຍ...ຢາຊາເອີຍ , ເອີຍ...ລູກຮັກ - ສຸດໃຈ ຂອງແມ່ ເຈົ້າຈົ່ງດຳລົງຊີວິດຢ່າງສະຫງົບເຖີດ..."

ໜັງຕາເຂົາລີ້ລົງ . ສຽງກ້ອງວານກອງ ເຕັມຂຶດຮອງ- ແລະທະວີຄວາມອ່ອນຊ້ອນ ,ສ່ວນນ້ອມນຶ່ງຍັງຄົງສືບຕໍ່ຈັບໃຈຫອຍ ເບັດ ,ແຕ່ເຮັດຊາຊາລົງ .

" ແຕ່ຂ້ອຍບໍ່ເຄີຍໄດ້ມີຊີວິດຢູ່ສະຫງົບ .

ເອີ່ຍ...ບໍ່ເຄີຍພໍ້ເລີຍ , ແມ່ທີ່ຮັກເອີຍ... "

ຂ້ອຍເກີດຄວາມຮູ້ສຶກອັນປະຫລາດ : ຄ້າຍຄືວ່າໂລກໄດ້ພັງທະລາຍ , ຖະລົ່ມໂດຍກະແສຟອງຂອງໂງ່ນນ້ຳດຳມືດມະຫຶມາ ; ຄືວ່າຂ້ອຍພະລັດຕົກຈາກໂລກໄປສູ່ຄວາມມືດສະໜິດບ່ອນທີ່ດວງອາທິດ ນອນຈົມຢູ່ກ້ອງແຜ່ນນ້ຳ .

ເຂົາຮ້ອງເພງໄດ້ຄາວດຽວ ກໍຢຸດສະງັກ . ດຶງເຮືອ - ອອກຈາກຕາຝັ່ງ , ປີນຂຶ້ນເທິງເຮືອ ແລວກໍຫາຍຕົວໄປ ໃນຄວາມມືດຢ່າງບໍ່ມີສຽງ . ຂ້ອຍແນມນຳຫລັງເຂົາ ທັງຄຶດສົງໄສວ່າ :

" ຄົນແນວນີ້ມີຊີວິດຢູ່ເຮັດຫຍັງນໍ້ ? "

ເພື່ອນຂ້ອຍອີກຄົນໜຶ່ງ ແມ່ນ ບາຣິນົຟ , ເປັນຄົນບໍ່ ມີເຫລ່ຫລ່ຽມ ແຕ່ຊຸຍໂວ ແລະ ຂີ້ຄ້ານ , ມັກເວົ້າພົ້ມນິທານ-ຄົນ ແລະເປັນຄົນຈອນຈັດ . ເຂົາເຄີຍຢູ່ ມົດສະກູ ,ແລະເວົ້າເຖິງນະຄອນນີ້ ດ້ວຍຄວາມໝາຍສະອາງ :

" ເມືອງມະຣົກູ ! ກອງຂີ້ເຫຍື້ອແທ້ງ ! ໂບດວ່າຊຸ້ມມີຕັ້ງ ສິບສີ່ພັນກັບຫົກຮ້ອຍໂບດ , ຜູ້ຄົນກະ - ລວນແຕ່ຍາດ-ແຍ່ງຊີງດີຊີງເດັ່ນກັນ , ຄືກັນໝົດ ! ພາກັນຕິດຂີ້ຫິດຄັນ ຄືກັນໝົດ - ປານມາຂີ້ເຮື້ອນເອົາໂລກ - ເວົ້າແທ້ລະນີ້ - ເປັນແນວນັ້ນແທ້ ! ບໍ່ຈັກວ່າພໍ່ຄ້າ , ທະຫານ , ໄທ ໃນເມືອງ , ພວກເຂົາກະໄດ້ເກົາຢູ່ພໍຮາວນັ້ນ , ທົ່ວເມືອງ - ເອົາໂລກ ແຕ່ມີແນວໜຶ່ງເດີ້ - ຂະເຈົ້າມີປືນພະເຈົ້າຊາ ຢູ່ຫັ້ນ - ປືນກາໜົງບັກໃຫຍ່ ! ປີເຕີມະຫາລາດ ສ້າງປືນນີ້ໄວ້ຕໍ່ສູ້ກັບພວກກະບົດ . ແຕ່ແລ້ວ ມີແມ່ຍິງຄົນໜຶ່ງ,ເປັນສຸພາບ

ສັດຕິ , ນາງໄດ້ຍົກພວກມາຕ້ານກັບພະອົງດ້ວຍຄວາມແຄ້ນ. ພະອົງໄດ້ເອົາເປັນນາງເມຍຢູ່ເຈັດປີ ແລ້ວຢູ່ມາວັນໜຶ່ງ ລະປະຖິ້ມນາງກັບລູກສາມຄົນ . ນາງຄຽດແຄ້ນໂມໂຫແຮງ ກໍເລີຍລະດົມເອົາພັກພວກ ລູກຣື້ອນສູ້ . ໂປ້ວ ! ຢາກຫົວ - ຕ່ວາ ນ້ອງຊາຍ , ພະເຈົ້າຊາ ປ່ອຍລູກປືນອອກມາລູກດຽວໝັ້ນລະ , ມ້ຽນໝົດເກົ້າພັນສາມຮ້ອຍກັບແປດຊີວິດ ເອົ້າໂລດ ! ພະເຈົ້າຊາຫັ້ນ ຈັດການຍິງເອງຊ້ຳໄດ໋ . ບໍ່ໄດ້ພະອົງບອກ ຟິລາເຣັດ ພະສັງຄະລາດເວລານັ້ນ , ເຮົາຈຳ - ເປັນຕ້ອງເກັບມ້ຽນບັກເຜດ - ຂອງຫລົ້ນພະຍາປີສາດນ໌ສາ, ມັນຍົວະໃຈໂພດແລ້ວ ! " ເຂົາກໍເລີຍເກັບມ້ຽນປືນນັ້ນ ໄວ້ເລີຍ " .

ເມື່ອຂ້ອຍອະທິບາຍວ່າ ເລື່ອງນີ້ ເປັນເລື່ອງຂີ້ຕົວະ ທັງນັ້ນ , ເຂົາຜັດບໍ່ຍອມເຊື່ອ ຄັດຄ້ານວ່າ :

" ຕ໋າຍ ! ເຈົ້າມາຄືຕ່າງຊາດເພີ່ນແທ້ . ຂ້ອຍໄດ້ຟັງເລື່ອງນີ້ ຈາກຄົນມີຄວາມຮູ້ຜູ້ໜຶ່ງມາ . ແລ້ວເຈົ້າຜັດມາວ່າ ... "-

ເຂົາຍັງເຄີຍໄປຢູ່ ກິອຽບ ນຳອີກ , ໄປຢ້ຽມຢາມບັນດາຜູ້ມີບຸນ ! ເຂົາເລົ່າເຖິງເລື່ອງນີ້ວ່າ :

" ເມືອງນີ້ - ກະຢາກຄືງບານເຮົານີ້ລະ . ຕັ້ງຢູ່ເທິງໂນນຄືບ້ານເຮົາ , ແລ້ວກະມີແມ່ນ້ຳຄືກັນອີກ , ແຕ່ວ່າຂ້ອຍບໍ່ຈື່ຊື່ມັນ . ໂອຍ ເອົາມາປຽບກັບແມ່ນ້ຳ ໂວນກາ ເຮົາ ບໍ່ໄດ້ດອກ , ພໍປານຮ່ອງນ້ອຍໆຫັ້ນ . ແຕ່ກະເປັນເມືອງສັບສົນບໍ່ມີລະບຽບ ! ຊິເວົ້າໃຫ້ຟັງ . ຖະໜົນໜົນທາງຄົດໆງໍງ

ທັງນັ້ນ , ແລ້ວກະອົ້ນພູ້ລົງຄອຍ ເຈົ້າເອີຍ ! ພົນລະເມືອງ
ເປັນຊາວ ໂຄໂຄນ ໜົດ . ແຕ່ບໍ່ຄື ມິກໄຄໂລ ອັນໂຕໂນ-
ວິຊ ດອກໄດ໊ . ຊະນິດຕ່າງໆ : ຊອດໂປໂລຍ ກັບ ຕາຕາ
ຄົນພວກນີ້ ລົມກັນແບບ ໂກກກາກ ໂລດ . ບໍ່ມີເວົ້າທຳ ມະ
ດາ . ຄົນສົກກະປົກ . ບໍ່ມີຫົວຜົມຈັກເທື່ອ . ກິນກົບອຶກ -
ກົບແຖວນັ້ນ ໜັກໂຕລະ ໔-໕ ກິໂລພູນລະ . ເຂົາເອົາງົວ
ທຽມກວຽນ ,ແລະລາກໄຖ . ມີແຕ່ງົວງາມໆໄດ໊ແຖວນັ້ນ -
ຂະໜາດຕົວນ້ອຍສຸດຂອງຂະເຈົ້າລະແມ່ນໃຫຍ່ກວ່າງົວ ເຮົາ
ຈັກ ໔ ຕໍ້ພູນລະ . ໂຕໜຶ່ງຮອດ ໑໘໐໐-໑໙໐໐ ກິໂລກໍ ມີ
ຢູ່ເມືອງນີ້ ພະ ໕໗໐໐໐ ອົງ , ສັງຄະລາດ ຕັ້ງ ໘ກມືອງ
...ເອົາ ອັນນີ້ບໍ່ແມ່ນເລື່ອງຕະຫລົກໄດ໊ ກັນໄປເຫັນມາກັບ-
ຕາເອງ . ເຈົ້າເດ . ເອົາ ! ເຈົ້າເຄີຍໄປບໍ່ ?ບໍ່ ແມ່ນ
ບໍ ? ແມ່ , ກັນນີ້ ຄົນວ່າຮູ້ຫຍັງລະຮູ້ໃຫ້ມັນຄັກແນ່ໂລດ.ມັນ
ຈັ່ງແມ່ນ " .

ເຂົາມັກຕົວເລກ ແລະຮຽນສົມແລະຄູນເລກນຳຂ້ອຍ . ສ່ວນການຫານ ເຂົາບໍ່ທົນຮຽນໄດ້ . ເຂົາມັກເອົາໄມ້ຂີດ - ເຫິງດິນຊາຍ ໄລເລກຄູນອົ້ນຫລາຍໆຢ່າງຈູບຈາວ ,ແລະ ບໍ່ກັງວົນຈະລັກອາຍເມື່ອຄູນຜິດໆ . ແລະເມື່ອເຂົາຂຽນ ຕົວເລກຜົນຄູນອອກມາແລ້ວ ເຂົາຈະແຍງເບິ່ງຕົວເລກທີ່ລຽນກັນເປັນແຖວ ເຮັດຕາໂລຄືເດັກນ້ອຍ ແລວກໍຊຸທານອອກມາວ່າ:

" ປັດໂທ ຈຳນວນຕັ້ງຫລວງຫລາຍປານນີ້ - ເຮັດ ໄດ໊ວ່າໄລ່ອອກເປັນ , ແຕ່ຊອານອອກມາກໍຍັງຍາກແລ້ວ ! "

ບາຣິນົຟ ນີ້ເປັນຄົນສົກກະປົກເປິເປື້ອນແຕ່ໜາຕາ ເຂົາ

ປາກວ່າເຈົ້າຊູ້ສົມຄວນ ມີເຄົາສີແດງ ກູດ ດວງຕາສີຟ້າແວວ ວາວແຝງຍິ້ມແບບເດັກນ້ອຍ . ມີກິລິຍາບາງຢ່າງ ຄ້າຍຄືກັນ ລະຫວ່າງ ບາຣິນົຟ ກັນ ກູກູຊະກິນ : ຄືຈະແມ່ນຍ້ອນວ່າ ມີຄວາມລະມ້າຍຄ້າຍກັນແນວນີ້ເອງ - ສອງຄົນເຂົາຈຶ່ງ ມັກປາກຕິຕົວອອກຫ່າງກັນ .

ບາຣິນົຟ ເຄີຍໄປຊິດເບັດຣອດທະເລ ກາສປຽນສອງຄັ້ງ ແລະກໍໂຄສະນາເລື່ອງນີ້ຢ່າງເມົາມັນ :

" ເຈົ້າເອີຍ - ທະເລນັ້ນງາມບໍ່ມີຫຍັງປຽບໃນໂລກອັນນີ້ ! ຄົນເຮົານີ້ນະ ໄປຮອດນັ້ນແລ້ວ ລະແມ່ນທໍ່ແມງຫຍັງ ທໍ່ນັ້ນລະ ! ເວລາຫລຽວໄປເບິ່ງທະເລ ເຮົາຊິຕ້ອງມີຄຳຖາມຂຶ້ນມາລະວ່າ - ແລ້ວໂຕແມ່ນຫຍັງ ? ຊີວິດຢູ່ແຖວນັ້ນຈັ່ງ - ແມ່ນຫວານຊື່ນ . ມີຄົນທຸກປະເພດ ມາໂຮມກັນຢູ່ທະເລຮອດພວກພະເຍັກ ກໍຍັງມາ . ເຂົາກໍບໍ່ແມ່ນຄົນໂລເລດອກ. ເຂົາກໍເຮັດວຽກເຮັດງານ ຄືໄທເຮົາເຈົ້າຂ້ອຍ . ແລະມີສາວຄົນຄົວກິນຄົນໜຶ່ງ ລາວເຄີຍເປັນເມຍນ້ອຍຂອງພວກໄອຍະການສານ - ມັນຊຶມຫຍັງອີກນໍ້ ທີ່ຄົນເຮົາປາຖະໜາ ? ແຕ່ລາວບໍ່ອາດໄປຫ່າງຈາກທະເລໄດ້ . ທ່ານເປັນຄົນດີ , ທ່ານໄອຍະການ , ແຕ່ຂ້ອຍກໍບໍ່ອາດປ່ຽນໃຈໄດ້ . ລາກ່ອນ ! ເພາະວ່າ ຜູ້ທີ່ໄດ້ພົບເຫັນທະເລແລ້ວ ພຽງຄັ້ງດຽວກໍຕ້ອງແມ່ນຢາກກັບມາອີກ . ຢູ່ນັ້ນ ກວ້າງຂວາງເອົາແທ້ເອົາວ່າ ,ພໍ້ ປານຢູ່ກາງທ້ອງຟ້າເອົາໂລດ , ບໍ່ມີການກະທົບກັນເລີຍ.ຂ້ອຍກໍຄືກັນ , ຂ້ອຍຈະກັບໄປພຸ້ນ , ໄປຢູ່ເລີຍ .ຂ້ອຍລະບໍ່ມັກ ຄົນນຳອ້ອນຂ້າງຂ້ອຍນີ້ນາ , ອັນນີ້ລະມັນຍາກ .ຄິດຢາກ ເປັນ

ພະລືສີສາ ໄປຫາລີ້ຊ່ອນຢູ່ ,ຈື່ງຈະແລ້ວ .ແຕ່ວ່າຂ້ອຍຍັງບໍ່ພໍ້ບ່ອນໃດດີງ ພໍຈະເປັນຕາໄປຢູ່ " .

ຄົນຜູ້ມີເລາະບ້ານຢູ່ຄືໝາບໍ່ມີເຮືອນ . ພວກໄທບ້ານມັກດູຖູກເຂົາ , ແຕ່ກໍຟັງເລື່ອງທີ່ເຂົາເລົ່ານັ້ນດ້ວຍຄວາມພໍ ໃຈເຊັ່ນດຽວກັນທີ່ຟັງເພງຂອງ ມິກູນ .

" ເປັນນັກຂີ້ຕົວະທີ່ເກັ່ງຂະໜາດ ! ໜ້າສົນໃຈ " .

ເລື່ອງແຕ່ງເອງຂອງເຂົາບາງເລື່ອງເຖິງຂະໜາດເຮັດໃຫ້ຄົນເຈົ້າຫລັກການແລະມັກສົງໄສຄື ປັນກົຟ ເກີດສົນໃຈຂຶ້ນມາກໍມີ . ວັນໜຶ່ງ ປັນກົຟ ເວົ້າຕໍ່ຄົນ ໂຄໂຄນວ່າ :

" ບາຣິນົຟ ຫວັງວ່າປື້ມບໍ່ເວົ້າຮອດຄວາມຈິງໝົດທຸກ - ຢ່າງ ກ່ຽວກັບພະເຈົ້າ ອິວານຜູ້ຮ້າຍກາດ . ຍັງມີ ຫຍັງເຊື່ອງບັງຢູ່ຫລາຍອ່າເດ . ບາຣິນົຟ ວ່າ ພະເຈົ້າ ອິວານ-ເປັນຄືປີສາດ ບາງເທື່ອພະອົງກໍກັບເພດເປັນແຫລວ .ຈັ່ງຊັ້ນລະ ແຕ່ນັ້ນມາເຂົາເລີຍເຮັດການຮູບຕົວແຫລວໃສ່ເງິນເຮົາ - ເພື່ອໃຫ້ກຽດພະອົງ " .

ຂ້ອຍສັງເກດເຫັນເປັນຄັ້ງທີ່ຮ້ອຍແລ້ວວ່າ - ມະນຸດເຮົາມັກສົນໃຈນຳເລື່ອງແປກປະຫລາດພິດສະດານ , ເລື່ອງເຫຼືອເຊື່ອ , ບໍ່ໄດ້ເລື່ອງຫຍັງເລີຍນັ້ນລະ - ແຕ່ງຂຶ້ນເອົາ ຊຶ່ງຫລາຍກວ່າການອະທິບາຍຄວາມຈິງຂອງຊີວິດອັນທ່ຽງແທ້ນ-ຊ້ຳ .

ເມື່ອຂ້ອຍເວົ້າເລື່ອງນີ້ນຳຄົນ ໂຄໂຄນ , ລາວຜັດ ຍິ້ມແລະວ່າ :

" ຈັກໜ່ອຍມັນກໍຜ່ານໄປດອກ - ອັນນີ້ . ສິ່ງສຳຄັນ-

ລະແມ່ນວ່າ ໃຫ້ມວນຊົນຮູ້ຈັກຢາກຮຽນຢາກຄິດ . ຈາກ ນັ້ນ ເຂົາຈິ່ງຈະຮູ້ຄິດຫາຫົນທາງຂອງເຂົາເອງ ຈົນເທົ້າຮູ້ຄວາມ-ຈິງແທ້ . ສ່ວນຄົນປະເພດຄື ບາຣົນຝ ແລະ ກຸກຸຊະກິນ ນັ້ນ ແມ່ນເຈົ້າພໍຕ້ອງແອບເຂົ້າໃຈເຂົາ . ຂະເຈົ້າແມ່ນສິລະປິນ. ເຈົ້າເຫັນບໍ່ . ເປັນນັກປະດິດແຕ່ງ .ພະເຍຊູຄຼິດກໍອາດແມ່ນ ນັກປະດິດແຕ່ງຄົນໜຶ່ງຄືກັນ . ແລະ ເຈົ້າກໍຈະຕ້ອງຍອມຮັບ ຮູ້ວ່າ ຫົວຄິດຂອງພະຄຼິດບາງອັນກໍສົມຄວນໄດ້ " .

ສິ່ງທີ່ແປກປະຫລາດສຳລັບຂ້ອຍອີກ ກໍແມ່ນວ່າຄົນເຫລົ່ານີ້ ບໍ່ຄ່ອຍ ມັກເວົ້າເຖິງພະເຈົ້າເລີຍ . ເວົ້າກໍແມ່ນເວົ້າແບບບໍ່ ຕັ້ງໃຈ . ມີແຕ່ຕາເຖົ້າ ຊູສະລົຟ ນັ້ນລະທີ່ອອກຄວາມເຫັນ ເລື້ອຍໆຢ່າງມີຄວາມເຊື່ອໝັ້ນຕາຍໃຈວ່າ :

" ທຸກສິ່ງເປັນໄປຕາມຈຸດປະສົງຂອງພະເຈົ້າ " .

ແລະທຸກເທື່ອໃນຄຳເວົ້າແບບນີ້ຂອງເຂົາ , ຂ້ອຍຈັບໄດ້ ວ່າມີຄວາມຜິດຫວັງແອບແຝງຢູ່ .

ແທ້ແລ້ວ ຂ້ອຍກໍມີຄວາມສຸກດີ ຢູ່ນຳຄົນເຫລົ່ານີ້ ,ມີຫລາຍ ຢ່າງ ທີ່ຂ້ອຍຮຽນຈາກຂະເຈົ້າ ເວລາເຮົາພົບໂອ້ລົມກັນ ໃນ ຍາມແລງ . ສຳລັບຂ້ອຍ ທຸກບັນຫາທີ່ ໂຣມາສ ນຳຂຶ້ນ ມາ ຖົກຖຽງ ນັ້ນເປັນຄືຕົ້ນໄມ້ໃຫຍ່ຢັ່ງຮາກລົງໃສ່ກະໂຕເນື້ອແທ້-ອັນເລິກເຊິ່ງ ຂອງຊີວິດແລະຢູ່ໃນນັ້ນຮາກກົກໄມ້ນັ້ນກໍແຜ່ ປະ ສານສອດໃສ່ກັບຮາກໄມ້ເກົ່າແກ່ອີກຕົ້ນໜຶ່ງທີ່ຢູ່ຄຽງຂ້າງ ແຕ່ ລະກິ່ງລະງ່າຂອງກົກໄມ້ທັງສອງຕົ້ງຕັ້ນໄປດ້ວຍຄວາມຄິດ ທີ່ ກຳລັງເບັ່ງບານຢ່າງງົດງາມຄືມວນໝູ່ມາລາແລະມີພູ່ມໃບອັນ ດົກໜາແຫ່ງວາຈາອັນໜານອນຊອນປົກຄຸມຢູ່ .

ແຮ່ງຈົມລົງສູ່ການອ່ານປຶ້ມຫລາຍເທົ່າໃດ ຂ້ອຍກໍ່ແຮ່ງຮູ້ວ່າຕົວຂອງເລີ່ມ ກ້າວໄປຫນ້າເລື້ອຍໆ . ການເວົ້າຂອງຂ້ອຍເລີ່ມມີທ່າທີເຊື່ອຫມັ້ນໃນຕົນເອງ , ແລະຄົນ ໂຄໂຄນ ກໍ່ຊົມຂ້ອຍຫລາຍເທື່ອແບບປອກໆວ່າ :

" ແມ່ນ - ເວົ້າເກັ່ງແລ້ວເດ ມັກຊິມິຊ ! "

ຄໍາຊົມອັນນີ້ ຊ່າງເຮັດໃຫ້ຂ້ອຍ ມີກໍາລັງໃຈເອົາແທ້ . ຂ້ອຍຮູ້ສຶກຂອບຄູນລາວເປັນຢ່າງຍິ່ງ !

ບາງຄັ້ງ ປັນກິຟ ກໍ່ພາເມຍລາວມາ . ເປັນແມ່ຍິງຮ່າງນ້ອຍ ຫນ້າຕາອອນຫວານ ນຸ່ງເຄື່ອງແບບຄົນໃນເມືອງ. ດວງຕາສີຟ້າຂອງນາງສາຍແວວສະຫລາດ . ນາງມັກມານັ່ງມິດໆຢູ່ແຈຫ້ອງ , ຮິມສີບອັດແຈບຢ່າງເຄັ່ງຂຶມ . ບໍ່ດົນນາງ ຈະເບີກຕາກວ້າງ ເຜີຍຮິມສີບດ້ວຍຄວາມຕື່ນເຕັ້ນອັດສະຈັນໃຈ. ຈາກນັ້ນ , ເວລາມີຄວາມເວົ້າແບບເຈາະຈົ້ມ ນາງກໍ່ຈະຫົວຂຶ້ນຄ່ອຍໆ ເອົາມືອັດຫນ້າໄວ້ເພື່ອເຊື່ອງອາຍ . ປັນກິຟເຫັນແນວນັ້ນ ກໍ່ຫລິ່ວຕາໃສ່ຄົນ ໂຄໂຄນທັງວ່າ :

" ນາງເອົາໃຈໄດ້ຫັ້ນ ! "

ເຄີຍມີແຂກມາຢ້ຽມຢາມຄົນໂຄໂຄນ ຢ່າງລະວັງຕົວເປັນພິເສດ . ລາວພາຂະເຈົ້າຂຶ້ນໄປລົມກັນຢູ່ຫ້ອງກອງຫລັງ ຄາຂອງຂ້ອຍພູມ - ລົມກັນຢູ່ເປັນຫລາຍໆຊົ່ວໂມງ .

ອີກຊຸມຢາ ເປັນຜູ້ເອົາອາຫານແລະ ນ້ຳຊາຂຶ້ນໄປສູ່ແຂກຮອດເທິງພູມ . ບາງຄັ້ງຂະເຈົ້າກໍ່ນອນກັບຫັ້ນ . ມີແຕ່ແມ່ຄົວແລະຂ້ອຍທີ່ຮູ້ກ່ຽວກັບການມາ ຂອງຂະເຈົ້າ , ຕອນນີ້ ອີກ-ຊຸມຢາສາວແມ່ຄົວ ກໍ່ນັບວ່າ ຈົ່ງຮັກພັກດີ ຕໍ່ໂຮມາສຫລາຍ .

ນາງມີຄວາມເຄົາລົບນັບຖືລາວທີ່ສຸດ . ອິໂຊດ ແລະ ປັນກົຟ ຈະເປັນຜູ້ເອົາເຮືອພາແຂກເຫລົ່ານີ້ ຂ້າມໄປຂຶ້ນເຮືອຈັກ ທີ່ຜ່ານກາຍມາ , ຫລືທີ່ມາຈອດຢູ່ ໂລບິສະກີ . ຂ້ອຍໄດ້ຢືນຢູ່ເທິງຝັ່ງແມ່ນນໍາເຮືອລໍາຮຽວ ເຫັນເປັນສີເມັ້ນໆ ແລ່ນຕັດ - ຜ່ານແມ່ນ້ຳທີ່ມືດ - ຫລື ມີແສງເດືອນ ພໍເປັນສີເງິນອໍາໄພ, ເບິ່ງຕະກຽງຂອງເຮືອແກວ່ງໄກວເພື່ອເຊີ້ນໃຫ້ເຈົ້າຂອງເຮືອຈັກຢຸດຮັບເອົາຄົນ . ຂ້ອຍເຫັນຈັ່ງຊັ້ນແລວ ກໍຮູ້ສຶກຄືວ່າ ຕົນເອງພວມເຮັດວຽກຮ່ວມໃນຂະບວນການສໍາຄັນ , ເພື່ອພາ-ລະກິດອັນຍິ່ງໃຫຍ່ .

ມາຣິຢາເດເຣັນໂກວາ ກໍມາແຕ່ໃນເມືອງ .ແຕ່ເທື່ອນີ້ ຂ້ອຍບໍ່ຮູ້ສຶກວ່າສາຍຕາຂອງນາງເຮັດໃຫ້ຂ້ອຍເກີ້ເຂີນອີກແລ້ວ. ຕານາງກໍຄືກັນກັບຕາຂອງຍິງສາວຜູ້ໜຶ່ງ ທີ່ຮູ້ຕົວວ່າຕົນເອງ-ເປັນຄົນງາມ ພໍໃຈທີ່ມີຊາຍຜູ້ມີຮ່າງກາຍລົ້ມໃຫຍ່ມູຫນອດເຄົາຄອຍເອົາອົກເອົາໃຈນາງ . ເຂົາເວົ້ານໍານາງດ້ວຍສຳນຽງສຽງອັນປົກກະຕິສະມໍ່າສະເໝີ , ເກືອບຢາກແຝງຮອຍສ່ຽດສີ ຄືກັນກັບເວົ້ານໍາຄົນອື່ນໆ ; ແຕ່ເຂົາເອົາມືລູບເຄົາຖຸກວ່າແສງຕາເຂົາອາວວັບຂຶ້ນ ເວລາຢູ່ຕໍ່ຫນ້ານາງ . ສະເພາະ-ນາງເອງນັ້ນ ສຽງນາງແຈ່ມໃສເບີກບານ . ນາງນຸ່ງ ກະໂປ່ງຕໍ່ເສື້ອສີຟ້າອ່ອນ , ມີໂບສີດຽວກັນຜູກຜົມສີທອງເອົາໄວ້. ມືອວບອູ້ມຄືມເດັກຂອງນາງມັກເໜັງຕິງຄາຍດັ່ງພວມຊອກຫາຫຍັງມາຈັບໄວ້ . ນາງມັກຮໍາເພງຄອຍໆ ພໍຮູ້ຍິນແຕ່ເຈົ້າ - ຂອງເອງ ແລະ ເອົາແພົ້ມນ້ອຍພັດໂບກໃບຫນ້າສີຊົມພູຂອງນາງ . ມັນກໍມີບາງຢ່າງໃນຕົວນາງ ອັນທີ່ປຸກລຸກຄວາມຮູ້ສຶກ

ທີ່ຢູ່ຍາກແບບໃຫມ່ອີກ – ເປັນແບບບໍ່ພໍໃຈຕ້ານກັນອາດຫນຶ່ງ. ຂ້ອຍພະຍາຍາມຫລີກຫລ່ຽງຈາກການພົບພໍ້ນາງເທົ່າທີ່ຈະ ທຳໄດ້ .

ຕອນກາງຄືນເດືອນກໍລະກົດ ອິໂຊດ ພັດຫາຍຫນ້າໄປ . ມີຄົນວ່າເຂົາ ອາດຈົມນ້ຳຕາຍແລ້ວ ; ສອງມື້ຕໍ່ມາ ກໍພາກົດວ່າ ແມ່ນແນວນັ້ນແທ້ , ເພາະພົບເຮືອເຂົາທີ່ຖືກພັດຊັດເຂົ້າຕາຝັ່ງປະມານ ກ ຫລັກ ໃຕ້ນ້ຳລົງໄປ ; ເຮືອນັ້ນ ມີຮອຍ-ແຕກຢູ່ທາງຂ້າງ ແລະ ທ້ອງເຮືອມີຮູຮົ່ວ . ຄົນທັງຫລາຍສັນນິຖານວ່າ ອິໂຊດ ອາດ ເຜີນອນຫລັບໄປແລ້ວກະແສນ້ຳໄດ້-ພັດເອົາເຮືອເຂົາໄປຕຳເຮືອໃຫຍ່ຂຸມຫນຶ່ງທີ່ຈອດຢູ່ໃຕ້ບ້ານ ໕ ຫລັກກິໂລແມັດ .

ເວລາເກີດເຫດນີ້ ໂຣມາສ ພໍດີພວມເດີນທາງໄປເມືອງຄາຊານ . ຕົກແລງມາ ກູກູຊະກິນ ກໍມາທີ່ຮ້ານພວກເຮົາ . ເຂົາໂຍນຕົວລົງນັ່ງເທິງກອງໄຖ່ປ່ານ , ນັ່ງມິດໆຢູ່ຄາວຫນຶ່ງ ສາຍຕາແນມທີ່ພົນເຮືອນ , ແລ້ວ ໃນທີ່ສຸດ ກໍຖາມຂ້ອຍວ່າ :

" ປານໃດ ຄົນ ໂຄໂຄນ ຊິກັບມາ ? "

" ຂ້ອຍບໍ່ຮູ້ " .

ເຂົາເອົາຝາມືງົມແກ້ມ , ຮູກໄປມາ , ປາກກໍຈົ່ມ ດ່າແມ່ນຫຍັງບໍ່ – ສຽງຄ້າງຫມໆ , ພໍປານມີກະດູກຄາຄໍ .

" ແມ່ນຫຍັງຫວະ ? "

ເຂົາເງີຍຫນ້າເບິ່ງຂ້ອຍທັງກັດຮິມສົບ . ດວງຕາແດງ-ກ່ຳ ແລະຄາງກໍສັ່ນເວົ້າຫຍັງບໍ່ອອກ . ຂ້ອຍຄອຍຟັງຢ່າງໃຈຈົດຈໍ່ເຄັ່ງຕຶງ , ເຂົ້າໃຈແລ້ວວ່າມີຂ່າວຮ້າຍ . ຈົນດົນເຕີບ

ພາຍຫລັງວາດສາຍຕາເບິ່ງພົ້ນເຮືອນແວບຫນຶ່ງແລ້ວ ເຂົາຈຶ່ງ
ກັ້ນ ໃຈເວົ້າອອກຢ່າງຂາດໆຕອນໆ :

" ຂ້ອຍພາຍເຮືອອອກໄປ . ກັບ ມິກູນ .ຊອກຫາເຮືອ
ອິໂຊດ ມີຮູຢູ່ທ້ອງເຮືອ - ເປັນຮອຍຂວານເຈາະ . ອິໂຊດ
ຖືກຂ້າ . ແນ່ໃຈໄດ້ແທ້ໆ " .

ເຂົາຊິດຫົວໄປທາງຫລັງ ແລ້ວກໍອອກປາກດ່າສາບ ແຊ່ງ
ຈັກຄວາມໃດຕໍ່ຄວາມໃດ , ບິດກໍສະຫລັບສຽງສະອື້ນແບບບໍ່ມີ
ນ້ຳຕາ . ແລ້ວເຂົາມິດຈັງງັງໄປອີກ , ເຮັດເຄື່ອງ ຫມາຍ
ຕີນກາຫລາຍເທື່ອ . ຂ້ອຍທໍລະມານໃຈຈົນບໍ່ອາດທົນເບິ່ງ -
ເຂົາອີກຕໍ່ໄປ . ຮ່າງຄີງເຂົາສັ່ນສະທ້ານ , ເຂົາຈູກແຫນນ
ດ້ວຍຄວາມຮູ້ສຶກເສົ້າສະຫລົດແລະຄຽດແຄ້ນ . ເຂົາຢາກ -
ຮ້ອງໄຫ້ອອກມາ ແຕ່ໄຫ້ບໍ່ອອກ - ຫລືອາດວ່າໄຫ້ບໍ່ເປັນ. ໃນ
ທີ່ສຸດ ເຂົາໂດດລຸກຂຶ້ນຢືນ ຊິດຫົວຫມົດແຮງ ແລ້ວກໍຫນີໄປ .

ແລງມື້ຕໍ່ມາ ພວກເດັກນ້ອຍຜູ້ຊາຍຈຸ່ຫນຶ່ງທີ່ໄປອາບນ້ຳໄດ້
ພົບສົບ ອິໂຊດ . ມີຊາກເຮືອຄ້າງຢູ່ແຄມທາເຫນືອບ້ານ ໄປ
ຫນ້ອຍຫນຶ່ງ , ເຄິ່ງລຳຢູ່ເທິງຫາດອີກເຄິ່ງລຳຢູ່ໃນນ້ຳ;ຮ່າງ
ຍາວຂອງ ອິໂຊດ ຄ້າຢູ່ນຳທາງເຮືອຂອງເຮືອຮ່າງລຳນັ້ນ-ສົບ
ເຂົາລອຍຂວ້ຳຫນ້າຢູ່ , ກະໂຫລກຫົວແຕກແລະສະຫມອງ ກໍ
ໄຫລອອກຫມົດກຽງແລ້ວ . ກະແສນ້ຳ ໄດ້ພັດເອົາສະຫມອງ
ໄປຫມົດ . ອິໂຊດ ຖືກຟັນດ້ວຍຂວານຈາກດ້ານຫລັງ ຈົນກະ
ໂຫລກຫົວຫວະອອກ . ກະແສນ້ຳພັດ ເຮັດໃຫ້ຮ່າງສົບ ໄຫວ
ຕິ່ງຫນ້ອຍໆ ຂາຊົ້ມາທາງຕາຝັ່ງ ແລະແຂນກໍແກວ່ງໄກວ -
ຄ້າຍກັບວ່າເຂົາພວມພະຍາຍາມຈະບິນໃຫ້ຫວິດຈາກນ້ຳ .

ພວກໄທບ້ານງູໜຶ່ງ ປະມານຊາວຄົນຫລືກວ່ານັ້ນພາກັນມາ ຫູ່ມທີ່ທ່ານ້ຳ ທ່າທາງຫມຶກຫມູ່ນຄຶດເຄືອງ . ພວກນີ້ແມ່ນ ພວກ ອ່າວຮົ່ງມີແດ່ . ພວກຊາວນາຜູ້ອ່າວທຸກແດ່ ຍັງບໍ່ເລີກຈາກ - ວຽກການນາ . ເຈົ້າໜ້າທີ່ ຊົງຂີ້ຢ່ານເປັນປີກໆຢ່ອນໆເຣັດຕິ ຈົ່ມວ່າຂ້ອນທັງແກວ່ງໄມ້ຄອນ . ເຂົາຫຽວຈາມູ ແລະເຊັດດັງ- ໃສ່ແຂນເສື້ອສີບົວ . ຄູສະມິນ , ເຈົ້າຂອງຮ້ານຂາຍຂອງກິນ ຮ່າງໃຫຍ່ຕຸ້ຍ ຢືນກ່າງພູງຢູ່ໃກ້ໆກັນ , ຈົ້ງຕາເບິ່ງ ກູກູຊະກິນ ເບິ່ງຂ້ອຍແດ່ສັບກັນ . ຄົວເຂົາສົນເຂົ້າ ແຕ່ມີນ້ຳຕາຫລໍ່ເບົ້າ, ຫນ້າລາຍຫມາກສູກຂອງເຂົາເບິ່ງຄືເໜື່ອຍອ່ອນແລະຕົກໃຈ .

" ຂີ້ສູດແທ້ໆ ເຣັດແບບນີ້ " , ເຈົ້າໜ້າທີ່ຄາງອອກມາ ທັງໂດດຂ້ອນໂດດລົງນ້ຳຕາຝັ່ງເປັນວົນໆຢູ່ , ຂາຜັດສີໂຂ້ງໆແດ່.

" ໂອຍ , ຈັ່ງແມ່ນເຣັດໂທດຮ້າຍແທ້ໆ ! "

ລູກໄພຮ່າງຕຸ້ຍຂອງເຂົານັ່ງງວ້ອຍກ້ອນຫີນຢູ່ແຄມຝັ່ງ,ຫລຽວ ແນມເບິ່ງສາຍນ້ຳຢ່າງເລື່ອນລອຍ . ນາງເອົາມືຈ້ຳໄຂວ່ ກາ ໃສ່ຫນ້າເອິກນຳຜູ້ຕາຍ ດວຍມືອັນສັ່ນເຊັນ ,ຮິມສົບສະເມັ່ນ , ຮິມສົບເບື້ອງລຸ່ມຫນາແດງ ແລະ ເຫວີ ອອກເຜີຍແຂ້ວເຫລັ້ມ- ໃຫຍ່ຊູອກແລເຫລືອງ ເປັນຕາຂີ້ດຽດປານແຂ້ວແບ້ . ພວກ ເດັກນ້ອຍພາກັນໂດດແລ່ນລົງມານຳໂນນຝັ່ງ . ພວກຜູ້ສາວ - ຝາວຝູ່ງລົງມາ - ສີສັນເຄື່ອງນຸ່ງຕັດກັບແນວຝັ່ງ . ແລວກໍ ມີ ພວກຜູ້ຊາຍມາຮອດ , ຝາວຖະໄຫລລົງມາຕີນຕົວຍັງເປື້ອນເປິ ມາຈາກທົ່ງນາ . ມີສຽງເວົ້າພຶມພຳອອກຈາກມວນຊົນ .

" ບັກຄົນຣັກບ້ານເອີຍ ! "

" ໃຜ - ບັກນີ້ຫວາ ? "

" ກຸກູຊະກິນ , ພູ້ນ - ບັກນັ້ນຈົ່ງວ່າມັນຮັກບ້ານລ້າງ!

" ອິໂຊດ ບໍ່ໄດ້ເຮັດຮ້າຍໃຫ້ໃຜຈັກເທື່ອມາ " .

" ບໍ່ເຄີຍເຮັດຮ້າຍໃຫ້ໃຜແມ່ນບໍ່ ? " ກຸກູຊະກິນຮ້ອງຂື້ນ , ຫລຽວອັບມາໃສ່ຝູງຊົນຢ່າງໂມໂຫຮ້າຍ . "ຊັ້ນພວກເຈົ້າຂ້າມັນເພື່ອຫຍັງ ? ຫາ ? ສູຂ້າມັນເພື່ອຫຍັງ , ພວກຊາດຫມາ ? ຫາ ? "

ທັນໃດນັ້ນ ມີສຽງແມ່ຍິງຫົວຂື້ນແບບປ່ວງບ້າ ,ສຽງ ຫົວຂອງນາງຄືກັນກັບ ແສ້ທີ່ຟາດນ່ຳລົງໃສ່ຝູງຊົນ . ພວກ ຊາວນາພາກັນຫລຽວເບິ່ງຫນ້າກັນ , ທັງຮ້ອງ , ທັງດ່າ , ຝົດສະນັ່ນຂື້ນ . ກຸກູຊະກິນ ຍ່າງກົງໄປທີ່ຊາຍເຈົ້າຂອງຮ້ານ , ຟາດກຳປັ້ນໃສ່ແກມມັນບາດຫນຶ່ງແຮງໆ.

" ມຶງ...ບັກຊາດຫມາ ! "

ເຂົາໃຊ້ກຳປັ້ນກວາດທາງ ແຫກຝູງຄົນເຂົ້າໄປທາງປາກກໍ້ຮ້ອງໃສ່ຂ້ອຍ ສຽງຄືວ່າມ່ວນໃຈວ່າ :

" ກັບເມືອກ່ອນ - ໄປ - ເຂົາຊິຟາດກັນ ! "

ມືບັກຫນຶ່ງຟາດເຂົາເຂົ້າໄປແລ້ວ . ສົບແຕກເລືອດໄຫລກັບບາດ . ແຕ່ຫນ້າເຂົາຊື່ນຂື້ນຢ່າງສົມໃຈ .

" ມຶງເຫັນກູຟາດບັກ ກູສະມິນບໍ່ ? "

ບາຣິນຟ໌ ແລ່ນເຂົ້າມາຫາພວກເຮົາ ທັງຕາກໍເສືອດແນມສອດສ່ອງເບິ່ງຝູງຄົນຢ່າງບໍ່ໄວ້ວາງໃຈ . ບັດນີ້ມວນຊົນ ໄດ້ຫຍັບມາໂຮມກັນຢູ່ເທິງຕາຝັ່ງຫມົດແລ້ວ . ສຽງແຫຼມ ຂອງເຈົ້າຫນ້າທີ່ດັງພົ້ນເຫນືອສຽງພຶມພຳຂອງຝູງຄົນ :

" ເອົ້າ - ຊັ້ນກໍພິສູດເບິ່ງດູ ! ກູຊິໃຫ້ໂອກາດພິສູດ -

ເບິ່ງ ! "

" ຂ້ອຍຕ້ອງຫາທາງອອກໄປຈາກຫນີ້ກ່ອນ " ,ບາຣິນີຟ ຄາງ ຂະນະທີ່ພວກເຮົາປີນຂຶ້ນຕາຝັ່ງ . ອາກາດຍາມ ແລງ ຮ້ອນເອົາອິດອັດໃຈ . ດວງຕາເວັນພວມຕົກດິນ , ເຫັນ - ແສງສີແດງທາບຕິດກ້ອນເມກສີຟ້າໆ ລຳແສງສີແດງສາດ ມາ ກະທົບກັບມວນໄມ້ຮອບຕົວເຮົາ . ສຽງຟ້າຮ້ອງຄາງດັງ ມາ ແຕ່ໄກ .

ພາບຮ່າງໄຮ້ວິນຍານຂອງ ອິໂຊດ ຍັງລອຍຢູ່ຕໍ່ຫນ້າຕໍ່ຕາ ຂ້ອຍ . ຕົວເຂົາແກວ່ງໄກ ນຳຈັງຫວະກະແສນ້ຳພັດ, ລອຍ ຟູ່ຢູ່ເທິງຫນ້ານ້ຳ . ຜົມທີ່ຕິດຢູ່ກະໂຫລກຫົວທີ່ອ້າຈາກປາງຄືວ່າ ມັນຕັ້ງຊັນຂຶ້ນ . ຂ້ອຍຄິດພໍ ສຽງເວົ້າຕ່ຳ ຄຳເວົ້າຊວນ ຟັງ ຂອງເຂົາ .

" ມັນກໍມີລັກສະນະຄືເດັກນ້ອຍທຸກຄົນນັ້ນລະ , ນີ້ຈັ່ງ - ຕ້ອງອີງໃສ່ອັນນີ້ລະ , ລັກສະນະຄືເດັກນ້ອຍຫັ້ນລະ , ຄືດ ເບິ່ງແຕ່ ໂຄໂຄມ ເຮົານີ້ແມ່ - ເບິ່ງຊີ່ງຄືວ່າລາວແມ່ນຄົນທີ່ ເຮັດດວຍເຫລັກ - ນັ້ນ ! ແຕ່ລາວກໍມີຈິດໃຈຄືເດັກນ້ອຍນີ້ໄດ໋!

ກູກູຊະກິນ ຍ່າງມາໃກ້ໆຂ້ອຍເວົ້າສຽງກະດາງວ່າ :

" ພວກມັນຊິຈັດການກັບເຮົາຫມົດທຸກຄົນແບບດຽວກັນນີ້- ລະ . ຟ້າເອີຍ ! ບ້າແທ້ໆ ! "

ຄົນ ໂຄໂຄມມາຮອດບ້ານ ສອງສາມມື້ ລູນຫລັງ ເກີດ ເຫດການນີ້ . ລາວມາຮອດຕອນກາງເດິກ . ເບິ່ງຊີ່ງລາວ ຄືວ່າ ລາວມີສິ່ງໃດສິ່ງຫນຶ່ງ ເປັນທີ່ພໍໃຈ . ການຖາມຂ່າວ- ຄາວກໍອົບອຸ່ນພິເສດກວ່າເຄີຍ . ເມື່ອຂ້ອຍໄຂປະຕູເອົາລາວ

ເຂົ້າມາແລ້ວ , ລາວຄວ້າຈັບບ່າໄຫລຂ້ອຍທັງວ່າ :

" ໂຕບໍ່ຫັນເຫງົ້ານອນເທື່ອຕີ້ , ມັກຊຸ້ມຊຸ ? "

" ອິໂຊດຖືກຂ້າຕາຍ "

" ຫາ- ? "

ແກ້ມລາວເຕັ້ນແຂ້ນເປັນກ້ອນໆຂຶ້ນ , ເຄົາຍາວສັ່ນໄຫວ ຈົນຄືວ່າພັດວັບໆຢູ່ເທິງໜ້າເອິກລາວ . ລາວລືມຮອດ ປິດຫມວກແກັບ . ລາວຢຸດຈິກຢູ່ກາງຫ້ອງ ແກວ່ງຫົວບາດຫນັກໆ ດວງຕາຮື່ລົງ .

" ຊັ້ນບໍ . ບໍ່ຮູ້ໂຕຜູ້ຂ້າເລີຍບໍ ? ເອີ - ຄືວ່າຫັ້ນລະນໍ້."

ລາວຍ່າງໄປຫາປ່ອງຢ້ຽມຊ້າໆ ແລ້ວນັ່ງລົງ , ຢຽດຂາ ອອກຢ່າງອິດອອນ .

" ກິນເຕືອນມັນແລ້ວ . . . ມີພວກເຈົ້າຫນ້າທີ່ໄປເບິ່ງແລ້ວ ບໍ ? "

" ມີອານີ້ . ຫົວຫນ້າຕໍາຫລວດ " .

" ແລ້ວເປັນແນວໃດ ? " ລາວຖາມ - ແລ້ວຕອບຄໍາ ຖາມເອົາເອງເລີຍວ່າ , " ກະບໍ່ມີຫຍັງ - ຫັ້ນລະນໍ້ " .

ຂ້ອຍບອກລາວວ່າ ນາຍຕໍາຫລວດຢູ່ທີ່ຮ້ານ ຄູສະມິນຕາມ ເຄີຍ , ແລະໄດ້ຈັບ ກູກູຊະກິນ ໄປຂັງ ຖານທໍາຮ້າຍ ຮ່າງ ກາຍ ເຈົ້າຂອງຮ້ານນັ້ນ .

" ຊັ້ນແລ້ວ , ແລ້ວໃຜຊິເອົາຫຍັງໄດ້ລະ ? "

ຂ້ອຍເຂົ້າໄປເຮືອນຄົວ ເພື່ອດັງໄຟໃສ່ຫມໍ້ການໍ້າ .

ຕອນດື່ມນໍ້າຊາ , ໂຣມາສ ເວົ້າຂຶ້ນວ່າ :

" ມັນຫນ້າສັງເວດແທ້ໆ ທີ່ພວກໄທບ້ານພາກັນຂ້າຄົນທີ່ດີ

ທີ່ສຸດໃນໝູ່ພວກເຂົາເອງ . ມັນລະຄືວ່າແຮງໃຜດີກວ່າໂຕ-
ໂຕກໍແຮງປານເຂົາຫັ້ນຊັ້ນບໍ . ພວກເຂົາບໍ່ຕ້ອງການ ຄົນໆ
ນັ້ນ ເພາະຄົນໆນັ້ນ ມາຂວາງທາງພວກເຂົາ . ກັນໄດຮູ້ກັບ
ນັກໂທດຄົນໜຶ່ງ ຕອນເດີນທາງໄປ ຊີເບຣີ ນຳກັນ . ເຂົາ
ບອກກັນວ່າ ເຂົາເປັນໂຈນ . ພວກເຂົາມີນຳກັນຫາຄົນ .
ເຮັດວຽກປຸ້ນນຳກັນ – ກໍເປັນກຸ່ມໂຈນທຳມະດານີ້ລະ .ແລ້ວ
ວັນໜຶ່ງ ມີໝໍໜຶ່ງລະສະເໜີຂຶ້ນວ່າ "ໂອ້ຍ–ເຊົາເທາະເວີ້ຍ
ພວກເຮົາ . ຈັກແມ່ນມັນມີດີຫຍັງດອກປຸ້ນກິນກໍດາຍ – ໄຊ້ຊີ
ວິດແບບຊົ່ວຮ້າຍຈັ່ງຊີ້ ! " ຫັ້ນລະ ພວກໝູ່ອີກສີ່ຄົນນັ້ນ ກໍ
ເລີຍບີບຄໍມັນຕາຍ ຕອນມັນເມົາແລ້ວນອນຫລັບ . ນັກໂທດຜູ້
ທີ່ເລົ່າເລື່ອງນີ້ສູ່ຟັງ ພາຍລຸນມາ ຈຶ່ງກັບມາຍົກຍ້ອງຍໍຊຸນ ໝໍ
ທີ່ຕາຍນັ້ນຢ່າງເລີດລອຍ . ຈາກນັ້ນ ຂ້ອຍກໍໄດ້ຂາອີກ ນິຄົນ,
ເຂົາວ່າ , " ໂດຍບໍ່ຄິດດູຕົນຄົນພວກນີ້ຈັກໜ້ອຍ . ສຳລັບ
ໝູ່ຂ້ອຍທີ່ຕາຍນັ້ນຕີ້ ຂ້ອຍກໍດູຕົນມັນຢູ່ . ມັນເປັນຄົນດີແທ້ .
ສະຫລາດ , ມັກມ່ວນ , ໃຈບໍລິສຸດ ! ອ້າວ – ຊັ້ນ ເຈົ້າ
ຂ້າມັນເຮັດຫຍັງ – ຊັ້ນ ? ກັນຖາມ . ຣວາຍ ! ກໍຍອມ-
ຢ້ານມັນໄປຟ້ອງຫົວເຮົາຫັ້ນຕີ້ ? ແລະເຈົ້າຮູ້ບໍ່ – ເຂົາ ພະ
ຍາຍາມປ້ອງກັນເພື່ອນຄົນນັ້ນ . ເພື່ອນຂ້ອຍຄົນນັ້ນ ,ເຂົາ-
ວ່າ , ບໍ່ມີທາງ ທີ່ມັນຊິຟ້ອງພວກເຮົາດອກລະ , ມັນບໍ່ເຮັດ
ເດັດຂາດ , ຊິແລກກັບຫຍັງກໍຕາມ ,ເງິນຄຳທີ່ໃດກໍຕາມ !
ແຕ່ວ່າ –ເອີ , ມັນຫາກຄືຈັ່ງວ່າ ບໍ່ຄັກໄວ້ ຄົນປະມັນຢູ່ຈັ່ງ-
ຊັ້ນ . ພວກເຮົາຍັງແມ່ນຄົນບາບຢູ່ໝົດ , ແລ້ວມັນຜູ້ດຽວຊິ
ກັບກາຍເປັນຄົນບຸນ . ມັນລະຄືບໍ່ຄັກໄວ້ – ຊັ້ນມ່າ " .

ໂຄໂຄນ ລູກອົ້ນຍ່າງໄປຍ່າງມາຢູ່ທົ່ວຫ້ອງ ,ມີໄຄວ່ ຢູ່ທາງຫລັງ ທັງຈັບກ້ອກຢາ , – ຮ່າງໃຫຍ່ຢູ່ໃນເສື້ອ ແຂນຍາວສີຂາວແບບຊາວຕາຕາ ຍາວລົງຮອດຂະຫນ່ອງ . ຕີນເປືອຍເປົ່າຂອງລາວຍ່ຳຢຽບໄປນຳພື້ນເຮືອນ . ລາວ ລົມຕໍ່ໄປຢ່າງສະຫງົບຫຸ່ມທ່ຽງ :

" ຫລາຍເທື່ອຫລາຍທີ ກັນກໍເຄີຍພໍ້ມາຫລາຍແລ້ວ–ກ່ຽວກັບຄວາມຢ້ານກົວຕໍ່ " ຄວາມດີ " ແລະການກຳຈັດຄົນດີງົ້ມນະ . ຄົນເຮົາບໍ່ເຮັດແນວໃດກໍແນວຫນຶ່ງ ເມື່ອເວລາ ເກີດຄວາມຢ້ານ "ຄົນດີ" ຂຶ້ນມາ : ຫລືວ່າ ເຂົາທຳລ້າຍລ້າງຈະໂດຍວິທີໃດກໍຕາມ ຄັນວ່າເຫມື່ອຍຫລອກລໍ້ເຂົາແລ້ວ; ຫລືວ່າ – ອັນນີ້ມີຫນ້ອຍດອກ – ຄັນບໍ່ຊັ້ນກໍຫມຸ່ນຄານສຶ່ຂາປານ–ຫມາເພື່ອລູບເລຍ ແລະລຽນແບບ . ແຕ່ວ່າ ການທີ່ຈະ ຮ່ຳຮຽນເອົາຄົນດີໃຫ້ໄດ້ນັ້ນເປັນໄປໄດ້ຍາກແທ້ . ພວກເຂົາກໍບໍ່ຮູ້ວິທີຈະເຮັດດອກ . ຫລືວ່າ – ອາດເປັນຍ້ອນວ່າ – ພວກເຂົາບໍ່ໄດ້ຕັ້ງໃຈປະສົງແທ້ດອກຕິ ? "

ລາວຈັບຈອກນ້ຳຊາທີ່ປະໄວ້ເທິງໂຕະຈົນເຢັນແລ້ວ, ທັງເວົ້າຕໍ່ :

" ອັນນີ້ ກໍອາດເປັນໄປໄດ້ . ເພາະວ່າເຖິງຢ່າງ ໃດກໍຕາມ ,ຄັນວ່າຄິດຄັກໆແລ້ວ , ໃນເລື່ອງນີ້ ,ພວກປະຊາ–ຊົນ ກໍໃຊ້ຄວາມພະຍາຍາມສູດກຳລັງຄວາມສາມາດ ເພື່ອຈະສ້າງຊີວິດຂອງຂະເຈົ້າ , ດຳລົງຊີວິດໃຫ້ຢູ່ໄດ້ . ແລ້ວ ຂະເຈົ້າກໍຊິນເຄີຍກັບມັນ . ແລ້ວເມື່ອວ່າມີກຸ່ມນັກຄັດຄ້ານຫນຶ່ງ–ເກີດຂຶ້ນ ແລ້ວບອກວ່າ ອັນນີ້ ບໍ່ຖືກຕ້ອງ . ບໍ່ຖືກຕ້ອງບໍ ?

ເປັນຫຍັງຫວ່າ – ພວກເຮົາກໍເຮັດສຸດຂີດສຸດຍັ້ນພວກ ເຮົາ
ແລ້ວເດ ? ຊາງຫົວສູທະແມ ! ແລ້ວຂະເຈົ້າກໍຕ້ານຜູ້ທີ່ຕັ້ງ-
ຕົວເປັນຄູອາຈານຄົນ – ຫລືຜູ້ເຮັດດີນັ້ນເອງ .ແບບວ່າ –
ເຈົ້າ ! ຊາງພວກເຮົາເທາະ ! ແຕ່ຄວາມຈິງແຫມ່ນ –ມັນ
ກໍແມ່ນຄວາມ ພວກທີ່ເວົ້າວ່າ " ຊີວິດແບບນັ້ນບໍ່ຖືກຕ້ອງຄວາມ
ຈິງນັ້ນແມ່ນຄວາມຂະເຈົ້າແທ້ . ແລ້ວກໍຍອມພວກຂະເຈົ້າ ນີ້
ແທ້ໆ ທີ່ໄດ້ພະຍາຍາມເຮັດແນວໃດໃຫ້ຊີວິດຄົນດີຂຶ້ນໆ " .

ລາວຊຸກໃສ່ຂຸ້ນປົ້ມ ແລະ ຕື່ມຄວາມວ່າ :

" ນັ້ນກໍແມ່ນຄວາມພະຍາຍາມຂອງຂະເຈົ້າ, ຄືກັນ . ໂທ້
– ຖ້າວ່າກັ້ນສາມາດຂຽນປຶ້ມໄດ້ ! ແຕ່ກັ້ນຂຽນບໍ່ເກັ່ງ .
ຄວາມນຶກຄິດຂອງກັນຍັງໜັກໂພດ ,ຊາໂພດ ! "

ລາວມ້ຽງລົງທີ່ໂຕະ ,ຫມູບໜ້າລົງໃສ່ຝາມື .

" ໂອຍ , ພວກເຮົາເສຍ ອິໂຊດໄປແລ້ວນໍ້..."

ແລ້ວລາວກໍ່ມິດອງໄປດົນເຕີບ :

" ເອົ້າ , ກັ້ນວ່າໄປນອນເທາະ " .

ຂ້ອຍຂັ້ນເມື່ອຫ້ອງກອງຫລັງຄາຂອງຂ້ອຍ ແລ້ວນັ່ງຢູ່ແປະ
ປ່ອງຢ້ຽມ . ຟ້າແມບເຫລື້ອມຢູ່ຟາກທົ່ງນາພູນ ຈົນວ່າຮຸ້ງໄປ
ເຄິ່ງທ້ອງຟ້າ ; ດວງຈັນຄ້າງວ່າຖອຍຫ່າງອອກໄປດອຍ –
ຄວາມຍ່ານກົວ . ໝາກໍເຫົ້າຫອນເອົາແທ້ໆ . ຖ້າບໍ່ມີສຽງ
ເຫົ້າຫອນປະສານກັນແບບນີ້ ເຮົາອາດຄິດວ່າ ຕົວເອງຕົກ ຢູ່
ໃນດອນຮ້າງແຫ່ງໜຶ່ງ . ຟ້າແມບເຫລື້ອມໄກອອກໄປ.ອາຍ
ຮ້ອນອົບເອົ້າລອຍມາປະທະປ່ອງຢ້ຽມ .

ອີກຄັ້ງໜຶ່ງ ຂ້ອຍນຶກເຫັນພາບ ອິໂຊດ – ນອນຕາຍ ຢູ່

ເທິງຝັ່ງນ້ຳ , ເງົາກະຢູ່ກ້ອງພຸ່ມໄມ້ . ໜ້າທີ່ຂຽວຊ້ຳຂອງ-
ເຂົາແຫວນສູ່ທ້ອງຟ້າ , ແຕ່ດວງຕາສີໃສຈ້ອງຄາງ . ເຄົາ
ສີແດງພັນກັນຫຍຸ້ງແລະຮິມສົບອາຄາງຊົງຄົມແປກປະຫລາດ-
ໃຈ .

" ມັກຊຸມຊິ , ຄວາມເອື້ອເຟື້ອເພື່ອແຜ່ , ຄວາມເປັນ
ມິດນັ້ນເນີ້ - ແມ່ນສິ່ງສຳຄັນຕົ້ນຕໍ . ສົມພໍຂ້ອຍມັກອັນບຸນພະ
ເຈົ້າຂຶ້ນສະຫວັນ ,ມັນເປັນບຸນສັງສັນມ່ວນທີ່ສຸດໃນບັນດາເທ
ສະການບຸນ " .

ສົ້ງສີຟ້າຂອງ ອິໂຊດ ແຫ້ງຄາແດດຍາມແລງ ມັນ ແນບ
ຕິດຂາເຈົ້າຂອງທີ່ຂຽວຫລົມໆ , ສົ້ງເບິ່ງຊົງສະອາດດີເພາະ
ຖືກນ້ຳໃນແມ່ນ້ຳ ໂວນກາ ເຊິລາງ . ແມງວັນມາຫຸມຕອມ-
ໃບໜ້າເຂົາ , ແຕ່ຕົນຕົວກໍເລີ່ມສົ່ງກິ່ນເໝັນກະຈາຍ .

ສຽງບາດຕີນໜັກໆມານຳຂັ້ນໄດ . ແມ່ນ ໂຣມາສ ນັ້ນ
ເອງ , ເຂົາຕ້ອງກົ້ມຫົວລົງ ບາດຕອນຈະລອດເຂົ້າປະຕູມາ.
ເຂົານັ່ງລົງຕຽງຂ້ອຍ ແລວເອົາມືຊາວເຄົາເຈົ້າຂອງຫລົມ .

" ກັນຢາກບອກໂຕວ່າ ກັນຈະເອົາເມຍ " .

" ການດຳລົງຊີວິດຢູ່ໜີ້ ຊີບຍາກໂພດບໍ ສຳລັບແມ່ຍິງ?"

ເຂົາເບິ່ງໜ້າຂ້ອຍຢ່າງຕັ້ງໃຈ , ຍັງຄອງວ່າຂ້ອຍ ຈະ
ເວົ້າຫຍັງອີກຕື່ມບໍ . ແຕ່ຂ້ອຍຊອກຄຳເວົ້າບໍ່ໄດ . ແສງຟ້າ
ແລບແນບມາບທົ່ວຫ້ອງຈົນຮຸ່ງສະຫວ່າງຂຶ້ນ .

" ກັນຊິເອົາກັບ ມາຊາ ດເຣັນໂກວາ " .

ຂ້ອຍບໍ່ອາດຫັກຫ້າມຮອຍຍິ້ມໄວ້ . ຂ້ອຍບໍ່ເຄີຍຮູ້ມາກ່ອນ
ເລີຍວ່າ ມີຄົນເອີ້ນຊື່ນາງ - ມາຊາ .ໝາຍປາກຫົວ ! ພໍ

ນາງບໍ , ຫລືອາຍນາງ ,ກໍບໍ່ເຄີຍເອີ້ນນາງວ່າ ມາຊານ້າ - ເທົ່າທີ່ຂ້ອຍຮູ້ .

" ແມ່ນໂຕທົວຫຍັງ ? "

" ບໍ່ , ບໍ່ມີຫຍັງ " .

" ໂຕຄິດວ່າ , ກັນເຖົ້າໂພດບໍ ສຳລັບນາງນະ ? "

" ບໍ່ , ບໍ່ ! "

" ນາງບອກກັນວ່າ ໂຕເຄີຍມັກກັບນາງມາກ່ອນ "

" ຂ້ອຍຄິດວ່າ ແມ່ນຢູ່ " .

" ແລ້ວດຽວນີ້ເດ ? ເຊົາມັກແລ້ວບໍ ? "

" ເຈົ້າ . ເຊົາແລ້ວ . ຂ້ອຍຄິດວ່າມັນຜ່ານໄປແລ້ວ."

ລາວວາງມືຈາກເຄົ້າຍາວ ແລະເວົ້າຢ່າງລອຍໆຕໍ່ໄປວ່າ;

" ເວລາອາຍຸສ່ຳໂຕນະ ໃຜກໍມັກຄິດເພີ້ຝັນເປັນທຳມະ-ດາ . ແຕ່ອາຍຸສ່ຳກັນນີ້ ບໍ່ເພີ້ຝັນແລ້ວ . ມັນເປັນເລື່ອງຫຼີກຫລຽງບໍ່ໄດ ມັນຈັບແໜ້ນທັງຫົວໃຈແລະ ວິນຍານ ຈົນວ່າຄິດຫາຫຍັງອີກກໍບໍ່ພໍ້ " .

ລາວຫົວເຕັມປາກຈົນເຫັນແຂ້ວເຫລື້ມງາມລຽນເປັນແຖວ, ເວົ້າຕໍ່ໄປ :

" ອັນໂຕນີ້ ກໍຈົນເສຍໄຊການຣົບຢູ່ ອັກຕິອອມໃຫ້ແກ່ອົກຕາວເວຍນູສ ຍອມເອົາປະເຣືອຣົບ ແລະ ຫນ້າທີ່ຜູ້ບັນຊາການ, ຕິດຕາມພະນາງ ຄລີໂອພັດຕຼາ ໄປ , ພໍພຽງແຕ່ນາງ ຜ່ານກົວແລ້ວຟ່າວເອົາເຣືອພາຍຫນີກ່ອນ . ເຫັນບໍ່ວ່າ ມັນມີອິດທິພົນຕໍ່ຜູ້ຊາຍເຮົາຂະຫນາດໃດ .

ລາວລຸກຂຶ້ນ ແລະ ຍືງໂຕຊື່ງ ແລະເວົ້າຢ້ຳແບບຄົນທີ່ຕິດ

ສິນເຮັດຫຍັງຢ່າງອັດກັບຄວາມປະສົງຂອງຕົນວ່າ :

" ຈົ່ງຊູແຫລວ , ກັນຊູແຕງດອງຫັ້ນລະ ! "

" ປານີໃດ ? "

" ໃນລະດູໃບໄມ້ຫລົ່ນນີ້ລະ . ພາຍຫລັງເກັບກ່ຽວ - ໝາກໂປມແລວ " .

ລາວອອກໄປ ທັ້ງກົ້ມຫົວລອດປະຕູ ,ກົ້ມຕ່ຳຈົນ ເກີນຄວາມຈຳເປັນ . ຂ້ອຍຈົດແຈ້ງເຂົ້ານອນ , ຄິດໄດ້ວ່າອາດເປັນການດີ ສຳລັບຂ້ອຍທີ່ຄວນຈະໜີຈາກນີ້ໄປສາ ເມື່ອລະດູໃບໄມ້ຫລົ່ນມາຮອດ . ເປັນຫຍັງລາວຈຶ່ງເວົ້າຮອດ ເລື່ອງອັນໂຕນີ້ ນໍ້ ? ຂ້ອຍບໍ່ມັກແນວຄິດນັ້ນຈັກດີເລີຍ .

ແລ້ວກໍໃກ້ຈະຮອດລະດູເກັບໝາກໂປມ . ໝາກໄມ້ປີນີ້ມັນບອກວ່າຊູດົນສົມບູນດີ , ຫລຽວເບິ່ງກົກໃດກໍງ່າກອງຈົນຈູ້ດິນ-ກິ່ນຫອມໝາກໂປມສຸກກະຈາຍທົ່ວສວນ , ພວກເດັກ ນ້ອຍມ່ວນນຳການເລາະເກັບຕົວໜອນແລະຕົວແມງທີ່ມາເຈາະ - ໝາກໄມ້ນັ້ນ .

ຕົກຕົ້ນເດືອນສິງຫາ ໂຣມາສ ເດີນທາງກັບຈາກ ເມືອງລາຊານ , ເອົາເຄື່ອງຂອງແຜນແພແລະສິນຄ້າອື່ນໆມາ ນຳເຕັມລຳເຮືອ , ແລະອີກລຳໜຶ່ງເຕັມແຕ່ຫີບແກ້ດຕ່າງໆ . ຕອນນັ້ນ ພໍດີເວລາປະມານ ໕ ໂມງ ,ວັນທຳມະດາ . ໂຄໂຄນ ເຂົ້າໄປອາບນ້ຳແລະປ່ຽນເຄື່ອງແລວ ມານັ່ງດື່ມນ້ຳຊາ, ລາວເວົ້າຂຶ້ນຢ່າງເບີກບານວ່າ :

" ກໍມ່ວນແທ , ໄດ້ອອກໄປນຳແມ່ນ້ຳຍາມກາງຄືນນະ ."

ແລ້ວລາວຈາມຂຶ້ນບາດໜຶ່ງ ,ຖາມຢ່າງກັງວົນທັນທີ ທັນ

ໃດ :

" ໂຕຖືກກິ່ນຄວັນບໍ່ ? "

ເວລາດຽວກັນນັ້ນເອງ ອັກຊິນຢາ ຮ້ອງສຽງເຫລີມາແຕ່ໃນສວນວ່າ :

" ໄຟໄຫມ້ ! "

ພວກເຮົາຟ້າວແລ່ນອອກໄປ . ຫ້ອງສາງຖືກໄຟ ລວາບຫມົດແລ້ວ , ໂດຍສະເພາະດ້ານຕິດກັບສວນຜັກ . ໃນສາງນີ້ ພວກເຮົາມ້ຽນນ້ຳມັນກາດ , ຢາງປູທາງ , ແລະນ້ຳມັນອື່ນໆໄວ້ . ພວກເຮົາ ຕົກສະເງີຢືນຈ້ອງຢູ່ຄາວໜຶ່ງ , ເບິ່ງແປວໄຟສີເຫລືອງ ມັນລວາບເລຍໄປຢ່າງເອົາຈິງເອົາຈັງ – ຢູ່ຕໍ່ແສງຕາເວັນແນວນີ້ ແປວໄຟມີສີມ້ານລົງ – ມັນລວາບຂຶ້ນທົ່ວຟ້າ , ຮອດຫລັງຄາ . ອັກຊິນຢາ ເອົາຄຸນ້ຳມາໃຫ້ . ໂຄໂຄມ ສາດນ້ຳໃສ່ແປວໄຟທີ່ພວມປົ່ງປາຍສອນລອນ, ລາວປົ່ງຄຸ ແລະວ່າ :

" ບໍ່ມີປະໂຫຍດຫຍັງແລ້ວ . ກົ້ງຟູຍອອກ ມັກຊິມິຊ ! ອັກຊິນຢ່າ , ແລ່ນໄປຮ້ານພູນໄວ ! "

ຄາວດຽວຂ້ອຍ ກໍໄດ້ຖົງຢາງອອກມາຈາກຮ້ານ ແລ່ນ-ຜ່າເດີ່ນໄປສູ່ຖະໜົນ . ລຸນມາ ຂ້ອຍເອົາຖົງນ້ຳມັນກາດ ; ແຕ່ບາດຕອນຂ້ອຍຈະກົ້ງເອົາຖົງ ຈຶ່ງພົບວ່າ ຢາມັນໄຂຢູ່ແລ້ວ ແລະ ນ້ຳມັນກໍພວມໄຫລ ອອກມາໃສ່ພື້ນເຮືອນ . ຂ້ອຍມົວ-ຊອກຫາຝາອັດ , ໄຟເລີຍລວາບມາເປັນແລວຫລາຍແລວ, ນຳຝາແຜ່ນໄມ້ . ຫລັງຄາເລີ່ມຫລົ່ນສຽງດັງຮົ້ມຟົດເຟື່ອນຈົມ – ຂ້ອຍຫູອື້ງໄປຫມົດ . ຂ້ອຍເລືອອອກປະຕູໄປໄດ້ພ້ອມກັບ ຖົງ

ນ້ຳມັນ ທີ່ຍັງແຕ່ເຄິ່ງດຽວ , ເຫັນພວກແມ່ຍິງແລະເດັກນ້ອຍ
ແລ່ນມາຫາເຮົາ ມາຈາກທຸກທິດທຸກທາງທົ່ວຮ່ອງທົ່ວວາ . ໂຄ
ໂຄນ ແລະ ອັກຊຸ່ນຢາ ພວມຂົນເຄື່ອງຂອງອອກຈາກ ຮານ
ໂຍນລົງໃນຮ່ອງຫ້ວຍ . ແມ່ເຖົ້າຄົນຫນຶ່ງຢືນຢູ່ກາງຖະຫນົນ,
ນຸ່ງເຄື່ອງດຳ ,ຜົມສີຂີ້ເຖົ່າ , ລາວເບິ່ງກຳປັ້ນຂຶ້ນ ແລະ -
ຮ້ອງແຮງ :

" ໂອ້ຍ - ພວກຜີເຜດເອີ້ຍ ! "

ເມື່ອຂ້ອຍແລ່ນຄືນໄປທີ່ສາງອີກ ໄຟກໍລຸກແຮງໄປ ຫມົດ
ແລ້ວ , ພວມແຮງສຸດ ຈົນມີສຽງລັ່ນລົວຟົດຂຶ້ນ .ແປວໄຟ ສີ
ແດງຈ້າກົວດແກວ່ງຢູ່ເທິງຫລັງຄາ ,ຈົນບໍ່ມີຫຍັງເຫລືອຢູ່ ນຳ
ຟ້າອີກ ນອກຈາກສຽງຊູ່ຫລັ່ນ . ຂ້ອຍເມົາຄວັນຕາກໍມອງ ບໍ່
ເຫັນຫຍັງ , ແຕ່ກໍບົ່ນກາງເອົາຖັງນ້ຳມັນມາຮອດປະຕູ.ແຕ່ ພໍ
ຮອດປະຕູນັ້ນ ຖັງຜັດໄປຄາ ເອົາອອກກໍບໍ່ໄດ້ . ປະກາຍໄຟ
ກະຈາຍເປັນດອກພູ ລົງມາໃສ່ຂ້ອຍ ລວກຫນ້າແລະ ແຂນ
ຂ້ອຍ . ຂ້ອຍຮ້ອງຂຶ້ນ . ໂຄໂຄນ ແລ່ນມາດຶງເອົາຂ້ອຍ -
ອອກໄປເດີ່ນບ້ານ .

" ແລ່ນ ! ມັນຊິລະເບີດແລ້ວ ! "

ລາວແລ່ນກົງໄປທີ່ເຮືອນ . ຂ້ອຍນຳລາວໄປ ແລະຟ້າວ
ຂຶ້ນເທິງຫ້ອງຕິດຫລັງຄາ ເພື່ອກອບກູ້ເອົາປືນ . ເມື່ອ ໂຍນ
ປືນອອກທາງປ່ອງຢ້ຽມແລ້ວໆ ຂ້ອຍຈຶ່ງມາບໍ່ເຫັນກັບໃສ່ຫມວກ
ເລີຍຈະເອົາມັນອອກທາງປ່ອງຢ້ຽມເຊັ່ນກັນ . ແຕ່ປ່ອງຢ້ຽມ
ແຄບໂພດ . ຂ້ອຍຄວ້າຈັບຫມາກໂຕ້ນຊົງຂະຫນາດສິບໂລມາ
ຟາດຕີຂອບປ່ອງຢ້ຽມ ເພື່ອຈະພັງໃຫ້ມັນກວ້າງອອກ . ແລ້ວ

ເລີຍມີສຽງດັງປູ້ມບາດແຮງໆ ມີສຽງແມ່ນຫຍັງຫລົ່ນ ລົງໃສ່ຫລັງຄາ . ຖັງນ້ຳມັນກາດລະເບີດແລວ . ຫລັງຄາເຮືອນກໍຕິດໄຟນຳກັນ ໄຫມ້ດັງລັ່ນຄືວະຄະ . ແປວໄຟແດງ ລວາບຜ່ານປ່ອງຢ້ຽມຫ້ອງຂ້ອຍ ,ມັນລອດເຂົ້າມາຮອດໃນຫ້ອງ . ຄວາມຮ້ອນເຮັ່ງທະວີ ຈົນຊິຢູ່ບໍ່ໄດ້ . ຂ້ອຍແລ່ນໄປຂັ້ນໄດ , ແຕ່ປຸ້ມຄັວນຫນາ ຍັດດັນຂຶ້ນມາເຈີກັບຂ້ອຍພໍດີ , ແປວໄຟສີ-ແດງຊ້ຳກໍເລື້ອຂຶ້ນມານຳຂັ້ນໄດ ເທື່ອລະຂັ້ນ ເທື່ອລະຂັ້ນ .ມີສຽງດັງຫລົ່ນຢູ່ທາງປະຕູເຂົ້າ , ຄືສຽງທ່ອນເຫລັກຟາດໃສ່-ໄມ້ . ຂ້ອຍຕົກໃຈຈົນບໍ່ຮູ້ແນວຈະເຮັດ . ຄັວນເຂົ້າດັງ ຈົນຫັນໃຈບໍ່ອອກ . ຂ້ອຍຢືນສະເງີ້ຢູ່ຄາວຫນຶ່ງບອກບໍ່ຖືກວ່າ ຕົນເອງຈະລອດຊີວິດໄປໄດ້ຈັ່ງໃດ . ແປວສີເຫລືອງພຸ່ງມາຈາກຂັ້ນໄດຮອດປ່ອງຢ້ຽມ , ມັນກອດກ່ຽວກັນ ແລວກໍຫັບຫາຍໄປ. ວິນາທີຕໍ່ມາ ແປວໄຟສີແດງສົດຄືກັນກັບເລືອດ ກໍລອດຜ່າຫລັງຄາເຂົ້າມາຮອດໃນຫ້ອງ .

ຂ້ອຍຈື່ໄດ້ວ່າ ,ປະກົດຄືວ່າເສັ້ນຜົມຂ້ອຍທຸກເສັ້ນດັງສໍແສ່ຂຶ້ນ ແລະຂ້ອຍຫູອື້ ບໍ່ໄດ້ຍິນຫຍັງອີກຫມົດ . ສະຫມອງ ຂ້ອຍຮ້ອງບອກວ່າ ນີ້ແມ່ນວາລະສຸດທ້າຍແລວ . ຕົນຂ້ອຍ ຫນັກຫນ່ວງປານມີກົ່ວຕິດຕຶງໄວ້ , ດວງຕາກໍປວດແສບຮ້ອນໄປ -ຫມົດ , ທັງທີ່ວ່າ ຂ້ອຍໄດ້ພະຍາຍາມເອົາມືອຶດມ້ຽນພໍແຮງ .

ແຕ່ສັນຊາດຕະຍານຂອງການຮູ້ເອົາຕົວລອດເຕືອນຂ້ອຍໃຫ້ຮູ້ປ່ອງທາງອັນສຸດທ້າຍ ທີ່ຈະເລັດລອດຫນີອອກໄປໃຫ້ໄດ້ . ຂ້ອຍຄວ້າຈັບເອົາສິ່ງທີ່ອ່ອນໆຢູ່ໃກ້ມື - ນັ້ນແມ່ນເສື່ອແລະ -ເອົາເສື່ອຍາມຫນັງແກະຂອງໂຄໂຄນມາຄຽນຫົວແລະບ່າແລ້ວ

ໂດດອອກທາງປ່ອງປ້ຽມ .

ພໍມືນຕາຂຶ້ນ ຈຶ່ງຮູ້ວ່າຕົນເອງນອນຢູ່ກະໂຕແຄມຮ່ອງນ້ຳ, ແລະ ໂຣມາສຢູ່ໃກ້ໆຂ້ອຍຮ້ອງຖາມວ່າ :

" ເຈັບໃສບໍ່ ? "

ຂ້ອຍລຸກຂຶ້ນຢືນແນມໄປທີ່ຫລັງເຮືອນທີ່ລູກເປັນໄຟ ຂອງພວກເຮົາ . ມີແຕ່ແປວໄຟລາມລົ້ນແດງໄປທົ່ວ ມັນແລບເລຍພື້ນແຜ່ນດິນສີດຳ . ຄວັນມືດກ້ອນພຸ່ງອອກມາທາງປ່ອງປ້ຽມ - ແປວໄຟກົວດແກວ່ງ ເປັນດວງດອກສີເຫລືອງຢູ່ເທິງຫລັງຄາ.

" ຈັ່ງໃດ , ບໍ່ເຈັບໃສບໍ ? " ໂຄໂຄມ ຍັງຮ້ອງຖາມມາອີກ , ໃບໜ້າເປື້ອນຂີ້ເໝົ້າໄຟຂອງລາວອາບເຫື່ອ ຍ້ອຍຍັ່ງປານກັບຄົນພວມນ້ຳຕາໄຫລ . ລາວພັບຕາຢ່າງກະວົນກະວາຍ ເສດໄມ້ຕິດຢູ່ນຳເຄົາຍາວ . ຂ້ອຍຮູ້ສຶກຄືປິຕິຍິນດີວາບໃນໃຈ - ເປັນຄວາມປະທັບໃຈອັນໄວກະທັນຫັນ . ແລວຈຶ່ງຄ່ອຍຮູ້ສຶກ ເຈັບບາດແຜຢູ່ຂາກ້ຳຊ້າຍ ຂອຍນັ່ງແປະລົງດິນ - ແລະບອກ ໂຄໂຄ້ມ :

" ຂາຂ້ອຍຫລົດ "

ລາວມາຈັບເບິ່ງກົກຂາຂ້ອຍ , ລອງດຶງຕີນຊາກແຮງໆ. ຂ້ອຍເຈັບປວດຈົນໃຈຊິຂາດ - ຈາກນັ້ນບໍ່ທີ່ໃດມາທີ່ ຂ້ອຍ ກໍຍ່າງເຮັດຂາຫານ ໄປແຕ່ທົ່ວໃຈປ້ຽມລົ້ນດ້ວຍຄວາມສູກ. ຂອຍຊ່ອຍຫອບຫິ້ວເຄື່ອງຂອງທີ່ພໍຂົນອອກມາໄດ້ນັ້ນ ໄປໄວ້ເຮືອນ-ອາບນ້ຳເຮົາ . ໂຣມາສ ກໍສົດຊື່ນຂຶ້ນເວົ້ານຳຂ້ອຍທັງ ປາກຄາບກ້ອກວ່າ :

" ກັນຄິດວ່າ ຊິເສຍໂຕໄປແລ້ວຕອນຖັງນ້ຳມັນລະເບີດ-

24/7 ຫ້າມຈຳໜ່າຍ

ນັ້ນນະ ແລ້ວກະຕອນໂຕບິນລົງມາແຕ່ຫລັງຄາຫັ້ນອີກ . ໄຟ-
ມັນລູກເປື່ນລຳສູງອືຫລື ຈົນບານອອກຄືດອກເຫັດ , ແລ້ວ
ເຮືອນຫມົດຫລັງ ກໍຕິດໄຟຂຶ້ນພິບບາດດຽວ . ໂຢ່ວ ,ກັນກະ
ຄິດວ່າ , ລາແລ້ວ ມັກຊຸມິຊຸ ! "

ລາວກໍລົມແບບສະຫງົບໆ ຄືຕາມເຄີຍນັ້ນລະ ທັງເວົ້າທັງ
ເກັບເອົາເຄື່ອງຂອງມາກອງມຽນ . ບິດຫນຶ່ງລາວບອກ ແມ່
ຄົວອັກຊິນຢາ ຊຶ່ງຕົນຕົວເປື້ອນເປິ ມູມເນົ້າພິງກັນກັບໂຕເພີ່ນ
ເອງ .

" ເຈົ້າຢູ່ເຝົ້າເຄື່ອງນີ້ເດີ , ຢ່າໃຫ້ໃຜເອົາໄປ ຂ້ອຍຊິ
ໄປມອດໄຟ " .

ເສດເຈ້ຍປິວວ່ອນ ກະຈາຍໄປນຳຄ້ວນທົ່ວໄປຫມົດ .

" ໂທ້ເອີຍ ປຶ້ມນ່າ , ໂຮມ່າສວ່າ , ຫນ້າເສຍດາຍ-
ແຫ້ງ ລ້ວນແຕ່ປຶ້ມຂອງຮັກຂອງແພງກັນແທ້ໆ " .

ໄຟໄຫມ້ລາມໄປຮອດຫລັງທີ ໔ ແລ້ວ . ມຶ້ນມັ້ນລົມ ສະ
ຫງົບ . ແປວໄຟຄ່ອຍໆໄຫມ້ຊ້າໆ ,ລາມອອກເທື່ອຫນ່ອຍໄປ
ທາງຊ້າຍແດ່ຂວາແດ່ ແມ່ນແຕ່ເຄືອໄມ້ທີ່ເລື້ອຂຶ້ນຮອດຫລັງຄາ
ກໍຍັງປິວວ່ອນ . ໄມ້ມຸງຕິດໄຟລູກລາມປິວລົງມາທັງປຶ້ມທັ້ນລົງ
ມາຮອດຮາວເຮົ້ວ . ທາມກາງ ອາກາດທີ່ອົບອວ້ນດ້ວຍຄ້ວນ-
ກົ້ວນັ້ນສຽງໄຟແຕກປານບັ້ງໄຟດອກ ປົນສຽງໄມ້ໄຫມ້ຄ່ອຍໆ.
ລູກໄຟສີຄຳຫລົ່ນຈາກປຸ່ມຄ້ວນສີດຳລົງມາຮອດຖະຫນົນ ແລະ
ເດີ່ນບ້ານ . ຝູງຄົນແລ່ນແຕກຕື່ນສັບສົນ , ໃຜກໍ່ຫ່ວງແຕ່ -
ເຮືອນແລະ ຊັບສິນຂອງຕົວເອງ ,ສຽງຮ້ອງຕຳນັ້ນດັງຢູ່ເນື່ອງ
ນິດ .

" ນ້ຳ...! "

ນ້ຳພັດແຮງຢູ່ໃກ - ພູນລົງຕາຝັ່ງສູງຊັນລົງໄປຮອດແມ່-ນ້ຳ ໂອນກາ ພູນ . ໂຣມາສ ຈັບແຂນເສື້ອຜູ້ນັ້ນ ດຶງຄໍເສື້ອຜູ້ນັ້ນຈັດຕັ້ງຄົນທັງຫລາຍເປັນສອງຈູ ແລະສັ່ງການໃຫ້ເຂົາ ພາກັນທຳລາຍຮົ້ວຮາວຕ່າງໆ ເພື່ອຕັດໄຟບໍ່ໃຫ້ລາມຕໍ່ໄປ .ພວກເຂົາຕ່າງກໍຟັງຄວາມສັ່ງລາວໝົດຢ່າງວ່າງ່າຍ , ການຕໍ່ສູ້ກັບໄຟ ຈຶ່ງວ່າມີລັກສະນະຫາວຫັນອົນແດ່ ເພາະທຳອິດນັ້ນໄຟທຳທ່າວ່າຈະປຸກລາມໃສ່ໝົດທຸກຫຼັງເຮືອນຢູ່ແຖວດຽວກັນ , ໝົດຖະໜົນນັ້ນ . ແຕ່ພວກໄທບານ ເຮັດວຽກແບບບໍ່ມີ ຈິດມີໃຈ , ພໍປານວ່າບໍ່ແມ່ນເຮືອນພວກເຂົາເອງ : ຍິ່ງລະວັງຫລີກຫລຽງປານວ່າ ພວກເຂົາໝົດຫວັງທີ່ຈະມອດໄດ້ເສຍ - ແລ້ວ .

ສ່ວນຂ້ອຍ , ມີແຕ່ຄວາມປີຕິຍິນດີ ,ຮູ້ສຶກຄືວ່າຕົນ ເອງເຂັ້ມແຂງຢ່າງບໍ່ເຄີຍເປັນມາກ່ອນໃນຊີວິດ .

ຢູ່ສຸດຖະໜົນພູນ , ຂ້ອຍສັງເກດເຫັນຄົນກຸ່ມນ້ອຍໜຶ່ງ: ພວກຮັງມີແດ ມີ ຄູສະມິນ ແລະ ເຈົ້າໜ້າທີ່ປຸ່ນຳ .ພວກ - ເຂົາຢືນຢູ່ຫັ້ນ ,ທັງຮອງ , ທັງຊີໂວຊີເວ ດໄມ້ຄອນ;ພວກເບິ່ງລາ , ຮອດບໍ່ອອກແຮງມອດໄຟຊ່ອຍທີ່ເມັດງາໜຶ່ງ.ຍັງມີພວກຜູ້ຊາຍ ທີ່ຫາກໍມາແຕ່ນາ - ຂີ່ມາຫອບມາຈົນຊີ່ປິວ . ພວກແມ່ຍິງ ກໍໄດ້ແຕ່ຮອງກ່າງໆ . ເດັກນ້ອຍກໍແລ່ນສົນໄປສົນມາ .

ເຮືອນນ້ອຍຢູ່ດົນຕອນຕໍ່ໄປຕິດໄຟ ອີກແລ້ວ . ເຮົາຄວນຈະໄດ້ຮຖອນລອກງົວເຮັດດວຍໄມ້ລຽນລຳແລະເຟືອງອອກໃຫ້

ໄວ້ທີ່ສຸດ ແຕ່ແລ້ວໄຟ ກໍລາມໄປໄວເກີນຄາດ . ພວກໄທ - ບ້ານ ພະຍາຍາມຖອນເສົາທີ່ຄ້ຳຢູ່ ; ແຕ່ຫມັດໄຟແລະ ກ້ອນຖ່ານແດງໆຟົ້ງມາຕົກໃສ່ຂະເຈົ້າ ,ຂະເຈົ້າປັດຫມັດໄຟທັງລູບເສື້ອນອດອັນໄຫມ້ ແລະ ແລ່ນໂດດຫນີ .

" ຢ່າຊູ້ພາກັນຂີ້ຢ້ານຫລາຍແມ ! "ໂຄໂຄນຮ້ອງໃສ່ .

ແຕ່ບໍ່ເປັນຜົນ . ລາວດຶງເອົາຫມວກໃຜບຸ ມາສຸບໃສ່ - ຫົວໃຫ້ຂ້ອຍ .

" ເຈົ້າໄປທາງສົ້ນພູ້ . ຂ້ອຍຊິເອົາທາງພີ້ ! "

ຂ້ອຍຟັງເສົາລົ້ມມາໄດ້ , ແລ້ວຟັງອີກເສົາຫນຶ່ງ. ຝາເລີ່ມຄອນ . ແລ້ວຂ້ອຍກໍປີນຂຶ້ນຝາ , ເອົາມືຈອງຂອບເທິງສຸດ . ໂຄໂຄນ ຈັບຕີນຂ້ອຍດຶງໄວ້ - ແລ້ວຝາກໍພັງທະລາຍລົງມາ ທັບຂ້ອຍຈົມເກືອບຖວມ . ພວກໄທບ້ານຈິ່ງຄອຍມາ-ດຶງ ເອົາໄມ້ຝາດອອກໄປທາງຖະຫນົນ .

" ບໍ່ຖືກໄຟໄຫມ້ບໍ ?" ໂຣມາສຖາມ .

ຄວາມເປັນຫ່ວງເປັນໃຍຂອງເຂົາ ເຮັດໃຫ້ຂ້ອຍແຮ່ງ ມີກຳລັງ ແລະ ຄ່ອງແຄ້ວຍິ່ງຂຶ້ນ . ຂ້ອຍຢາກສະແດງຜົນງານໃຫ້ຊາຍຜູ້ທີ່ຄົ້ມຳຂ້ອຍ - ມີຄວາມຫມາຍສຳລັບຂ້ອຍຫລາຍຄົນນີ້ ໃຫ້ລາວໄດ້ເຫັນ . ຂ້ອຍຈິ່ງເຮັດວຽກດຸ່ມປານຄົນປ່ວງ-ບ້າ , ໃນໃຈປວດແຕ່ຢາກໃຫ້ລາວຍ່ອງວາດີ .

ໃບບົ້ມຂອງພວກເຮົາຍັງຄົງປິວວ່ອນຜ່າຄ້ວນໄຟຢູ່ ເຫນືອຫົວຄືນົກກາງແກພວມບິນ .

ທາງຂວານີ້ , ໄຟມອດລົງແລ້ວ ; ແຕ່ທາງກ້ຳຊ້າຍຍັງລຸກລາມຕໍ່ໄປຢູ່ . ນັບລວມແລ້ວ ມີສິບຫລັງເຮືອນທີ່ຖືກໄຟ -

ໄໝ້ . ໂຣມາສ ຈັດຄົນສອງສາມຄົນໄວ້ດ້ານຂວາ ເພື່ອຄຸມບໍ່ໃຫ້ເຈົ້າງູສີແດງນີ້ ມັນມີສອງທາງສືບຕໍ່ຄືນຊຶບມາອີກ . ສ່ວນລາວເອງນຳພາກຳລັງຄົນທີ່ເຫລືອໄປບ່ອນທີ່ຍັງມີອັນຕະລາຍ, ຂະນະທີ່ ພວກເຮົາແລ່ນກາຍກຸ່ມຜູ້ຮ້ງມີໄປ ຂ້ອຍໄດ້ຍິນ ສຽງຜູ້ຫນຶ່ງຮ້ອງຂຶ້ນຢ່າງມີເລດໄນວ່າ :

" ມັນແມ່ນການລອບວາງໄຟ ! "

ແລະ ຄູສະມິນ ເວົ້າວ່າ :

" ເຮືອນອາບນ້ຳຂອງເຮົາ ຫັ້ນເດ້ - ໄປເບິ່ງແດ່ເປັນຫຍັງ ! "

ຄຳເວົ້ານັ້ນສະດຸດຫູຂອງຂ້ອຍ, ຝັງແຫນ້ນຢູ່ໃນຄວາມຫົງຈຳ .

ໃຜກໍ່ຍ່ອມຮູ້ດີວ່າ ຄວາມຕື່ນເຕັ້ນນັ້ນ -ໂດຍສະເພາະລະແມ່ນຄວາມຕື່ນເຕັ້ນແບບເບີກບານ - ຍ່ອມເພີມທະວີກຳລັງແຮງ . ຍ້ອນຄວາມຕື່ນເຕັ້ນ , ຂ້ອຍຈຶ່ງເຮັດວຽກຢ່າງບໍ່ຮູ້ເມື່ອເຫນື່ອຍເປັນ - ຈົນໃນທີ່ສຸດຫມົດກຳລັງເອົາເອງ ລົ້ມ-ຮວາບລົງກັບພື້ນດິນ . ຈື່ໄດ້ວ່າ ເອົາຫລັງໄປອີງໃສ່ ຫຍັງຮ້ອນໆ , ແລ້ວ ໂຣມາສ ສາດນ້ຳຖອກໃສ່ຂ້ອຍ , ພວກໄທບ້ານ ຍືນເບິ່ງພວກເຮົາ ທັງກ່າວຊົມວ່າ :

" ບັກນ້ອຍນີ້ ຕັ້ງແຂງແຮງອີ່ຫລີ ! "

" ເຊື່ອສີມີມັນໂລດລະ ! "

ຂ້ອຍເມາະຫົວໃສ່ຂາ ໂຣມາສ ແລະ ຮ້ອງໄຫ້ຢ່າງ ບໍ່ອາຍໃຜ ; ລາວລູບຜົມທີ່ປຽກຂອງຂ້ອຍ ທັ້ງວ່າ :

" ພັກຜ່ອນກ່ອນສາ ! ເຈົ້າເຫນື່ອຍຫລາຍແລ້ວ " .

ກູກູຊະກິນ ແລະ ບາຣິນົຟ ພາຂ້ອຍຍ່າງໄປທາງຮ່ອງນ້ຳ ທັງສອງຕົນຕົວດຳສົກກະປົກ , ພາກັນອອຍຂ້ອຍວ່າ :

" ບໍ່ເປັນຫຍັງແລ້ວ ນ້ອງຊາຍ , ມັນແລ້ວໄປແລ້ວບາດນີ້ " .

" ໂຕພຽງແຕ່ສິຢ້ານໆຫັ້ນດອກ ! "

ຂ້ອຍຍັງນອນພັກຢູ່ຫັ້ນ ເພື່ອເອົາແຮງຄືນ ຈຶ່ງໄດ້ ເຫັນພວກໄທບ້ານຜູ້ຮັ່ງມີສ່ວນໜຶ່ງຍ່າງກົງໄປທາງເຮືອນອາບນ້ຳ-ພວກເຮົາ . ເຈົ້າໜ້າທີ່ ເປັນຜູ້ອອກໜ້າ ຕໍ່ມາແມ່ນຕຳ-ຫລວດ ປະຈຳບ້ານສອງຄົນ ຈັບແຂນ ໂຣມາສ ທັງສອງຂ້າງນຳໄປ . ໝວກແກັບຂອງ ໂຣມາສ ຕົກເຮ່ຍອອກ . ແຂນເສື້ອລາວກ້ຳໜຶ່ງຈີກຂາດ . ລາວຍັງຄາບກອກຄາປາກ, ໃບໜ້າເຄັ່ງຕຶງ ຫົວຄີ້ວສົ້ນ . ບັກທະຫານເກົ່າ ໂກສະຕິນ ຈັບໄມ້ຄ້ອນແກວ່ງ ທັງຮ້ອງໂຫວກເຫວກ :

" ໂຍນມັນເຂົ້າໃນກອງໄຟຫັ້ນມ່າ ! ບັກນອກສາສະ-ໜາ ! "

" ໄຂປະຕູເຮືອນອາບນ້ຳແມ້ ," ສຽງໃຜຜູ້ໜຶ່ງບອກ.

" ພັງກະແຈເອົາໂລດ ຂໍກະແຈເສຍແລ້ວ " ໂຣມາສ-ຕອບສຽງແຮງ .

ຂ້ອຍໂດດລຸກຂຶ້ນ ຄວ້າເອົາທ່ອນໄມ້ມາຈາກດິນ ແລ້ວ ກໍແລ່ນໄປຢູ່ຂ້າງ ໂຣມາສ . ພວກຍາມຜິກອອກ . ບັກຫົວໜ້າມັນຮ້ອງຂຶ້ນສຽງເຫລືອດ້ວຍຄວາມຢ້ານ :

" ພວກສູພັງປະຕູບໍ່ໄດ້ເດີ້ - ມັນຜິດກົດໝາຍ ! "

ຄູສະມິນ ຊີ້ມືມາໃສ່ຂ້ອຍ ແລະ ຮ້ອງ :

" ນີ້ເດືອກບັກຫນຶ່ງ ! ມັນແມ່ນໃຜ ? "

" ເສີຍໄວ ນັກຊຸມຊຸ " ໂຣມາສ ບອກຂອຍ ."ພວກູ-ເຂົາຄຶດວາ ກັນເຊືອງເຄືອງຂອງໄວເຣືອນອາບນ້ຳພີ້ ແລວໃສໄຟເອງ - ວາຊັ້ນ ! "

" ພວກສູທັງສອງນັ້ນລະ ! "

" ທຸບກະແຈແມ ! "

" ເຈົ້າພົບອງ..."

" ພວກກູຊິຕອບເອງ ບໍ່ແມ່ນມຶງ "

" ພວກກູຊິຕອບ ! "

ໂຣມາສ ອື່ມວາ :

" ຢືນຢູ່ທາງຫລັງກັນນີ້ ເຂົາຈຶ່ງຫລອຍຕີທາງຫລັງບໍ່ໄດ້!

ພວກເຂົາພາກັນທຸບກະແຈ . ຊາວບານປຸມກັນເຂົ້າ ໄປໃນເຣືອນອາບນ້ຳຈົນອ້ອງອໍ , ແລວພໍຄາວດຽວກໍຫລັ່ງອອກມາຄືນ . ໃນເວລາດຽວກັນ ຂອຍໄດເອົາໄມຄອນໃສມື້ໃຫ ໂຣມາສ , ແລະ ຈັບອກດົນຫນຶ່ງມາຖຶຄັນ .

" ບໍ່ມີຫຍັງມາ ,ໃນນີ້ " .

" ບໍ່ມີຫຍັງຫວາ ? "

" ມັນຕົວະເຮົາ , ເອົາມັນແມ້ ! "

ມີຄົນຫນຶ່ງເວົາ ຢາງຢັກໆຢອມໆວາ :

" ພວກເຮົາເຂົ້າໃຈຜິດ..."

ແຕ່ມີຫລາຍສຽງຮອງຕອບຄົນຢ່າງປ່ວງບ້າປານຄົນເມົາ:

" ເຈົ້າຫມາຍຄວາມວ່າຈັ່ງໃດ - ຜິດ ? "

" ຫາດາໂຍນມັນໃສກອງໄຟຫັ້ນນ່າ ! "

" ພວກມັກກໍກອນ ! "

" ໂທ – ມາກໍຕັ້ງສະຫະກອນພຸ້ນຕ່ອາ ! "

" ພວກຂີ້ຂະໂມຍ ! ພວກມັນເປັນຂີ້ຂະໂມຍຫມົດຊູ່ຄົນ !"

" ມິດແມ ! " ໂຣມາສ ຮ້ອງຂຶ້ນ ສຽງດັງກວ່າ ສຽງອຶງຄະນຶງນັ້ນ , " ພວກຊຸມເຈົ້າ ກໍໄດ້ເຫັນກັບຕາແລ້ວ ວ່າບໍ່ມີຫຍັງຢູ່ໃນເຮືອນອາບນ້ຳນັ້ນ . ແລ້ວບາດນີ້ ພວກສູເຈົ້າ-ຕ້ອງການຫຍັງອີກ ? ແມ່ນຫຍັງກໍ່ໄຫມ້ຫມົດແລ້ວ. ເອົາອອກໄດ້ມີແຕ່ຫນັ້ນລະ ເບິ່ງເອົາໂລດ . ແມ່ນຂ້ອຍຊິຈູດ ເຜົາເຄື່ອງຂອງຂ້ອຍເອງ ເພື່ອຫຍັງກໍ້ – ຊ່າງເວົ້າແທ້ ! "

" ເພື່ອເອົາເງິນຄ່າປະກັນຫັ້ນເດ ! "

ແລ້ວສຽງຂອງຄົນເຄິ່ງຝູງນັ້ນ ກໍຮ້ອງຂຶ້ນອີກຢ່າງແຄ້ນ - ເຄືອງ :

" ແມ່ນຊິພາກັນຖ້າຫຍັງອີກ ? "

" ພວກເຮົາ ອົດມັນມາດົນແລ້ວ ! "

ຂ້າຂ້ອຍສັ່ນວັກໆ . ຮູ້ສຶກວ່າຫນ້າມືດູໄປບາດຫນຶ່ງ. ຂ້ອຍເບິ່ງຜ່າຫມອກ ສີແດງເຂົ້າໄປເຫັນໃບຫນ້າໂຫດຫຽມ ,ປ່າກມີຫນວດອອມ ອ້າຈົ່ວເປົ່າງສຽງຮ້ອງ . ຂ້ອຍເກືອບອົດກັ້ນ - ຄວາມໂກດແຄ້ນໄວ້ບໍ່ໄດ້ວ່າຈະໂດດເຂົ້າໄປທຳຮ້າຍພວກ ນັ້ນສະ ! ບັດນີ້ ພວກເຂົາເຈົ້າມາຫຸ້ມອ້ອມເຮົາທັງສອງ ທັງໂດດສັກຂະໂຍງທັງຮ້ອງ :

" ໂທ ! ພວກມັນມິດອນ ! "

" ໄມ້ເດ ! "

" ພວກມັນຊິເຮັດກັນແທ້ໄດ້ ! " ໂຣໂຄມວ່າ, ແລະ

ຂ້ອຍຮູ້ສຶກ ໃນນ້ຳສຽງຂອງລາວວ່າລາວພວມຍິ້ມ ."ເຈົ້າກະຊິໄດ້ພູດຄືກັນລະ ມັກຊຸມຊີ . ຂໍໂທດເດີ້ ຫລາ . ແຕ່ຢ່າຕື່ນເຕັ້ນເກີນໄປໄດ໋ . ລະວັງຕົວໃຫ້ດີ " .

" ເບິ່ງແມ້ ! ບັກນ້ອຍນັ້ນ ມັນມີຂວານ ! "

ແມ່ນແທ້ , ຂ້ອຍມີຂວານຟັນໄມ້ເໜັບຢູ່ແອວພໍດີ .ຂ້ອຍຈົນວ່າລືມໄປລະ .

" ທ່າທາງພວກມັນດີ້ຢ້ານໆຢູ່ " ໂຣມາສ ຊິ່ມຂ້ອຍ." ແຕ່ວ່າຖ້າພວກມັນກໍ່ກ່ອນ ກະຢ່າເອົາຂວານອອກມາຟັນເທາະເດີ້ ! "

ຊາວບ້ານຄົນໜຶ່ງ - ຂ້ອຍບໍ່ຮູ້ໜ້າ - ເປັນຄົນເສຍຂາຮ່າງນ້ອຍບໍ່ມີຫຍັງເດັ່ນ , ໂດດເຂົ້າມາປານຟ້ອນ ທັງຮ້ອງ-ສຸດສຽງວ່າ :

" ຫຍັບອອກມາໄກໆແດ່ , ເອົາກ້ອນຫີນແບ່ນໃສ່ ພວກມັນເອົາ ! ສັ່ງສອນມັນແດ່ຫວາ ! "

ໜຸ່ມນັ້ນກົ້ມລົງຫຍິບເອົາກ້ອນດິນຈີ່ ແລະ ແບ່ນມາຖືກທ້ອງຂ້ອຍໝົດແຮງ . ແຕ່ກ່ອນທີ່ຂ້ອຍຈະທັນໄດ້ຟາດຄືນ ກູກູຊະ-ກິນ ກໍໂດດເຂົ້າຈັດການມັນກ່ອນ ຈົນວ່າກິ້ງລົງຮ່ອງຫ້ວຍ ໄປນຳກັນເລີຍ . ແລ້ວ ປັນກີຟກໍປະກົດຕົວ . ເອົາແລ່ນມາ - ທາງພວກຂ້ອຍ ມີ ບາຣີນົຟ ແລະ ຊ່າງຕີເຫລັກ ກັບ ຊາວບ້ານອີກ ສິບຫລືສິບສອງຄົນ ຕິດຕາມມາ . ທັນໃດນັ້ນ ກູສະກໍປ່ຽນທ່າທີ ແລະເລີ່ມເວົ້າແບບຂ້ວງຂ້ວງຈ້ງຈ້ງວ່າ :

" ເຈົ້າກໍເປັນຄົນສະຫລາດ ມີກໄລໂລ ອັນໂຕໂນວິຊ , ເຈົ້າຄົງຮູ້ວ່າ ເມື່ອເກີດໄຟໄໝ້ ຜູ້ຄົນກໍຕ້ອງເສຍສະຕິແດ່".

" ໄປ້ - ລົງໄປທາງແມ່ນ້ຳພູນເທາະ ມັກຊິມິຊ .ພວກ
ເຮົາໄປດື່ມນ້ຳຊາຢູ່ຮ້ານພູນກ່ອນ " ໂຣມາສ ວ່າ , ຈັບ -
ກອກອອກຈາກປາກ ເອົາຍັດເຂົ້າຖົງ . ລາວພາຍາງເລາະ
ຮ່ອງນ້ຳ ເຮັດບາດຕີນໜັກໆ , ເອົາໄມ້ຄ່ອນເທົ້າໄປ ຕ່າງ
ໄມ້ເທົ້າ ; ແລະເມື່ອ ຄູສະມິນ ນຳມາຊົວຢາກເວົ້າຢາກວ່າ
ຫຍັງຕື່ມ , ໂຣມາສ ເອີ້ນໃສ່ຢ່າງບໍ່ແຍແສຮອດບໍ່ເສືອດ ຕາ
ແລຊ້ຳວ່າ :

" ບັກລາໂວ່ ,ໜີໄປ ! "

ຢູ່ດິນເຮືອນເກົ່າເຮົາ ພວກເຮົາພົບວ່າມີກອງຂີ້ເຖົ່າ ຍັງ
ໄໝ້ຫຼຸມຢູ່ແດງວ່ານ - ມີແຕ່ເຕົ່າໄຟ່ ທີ່ບໍ່ເປ່ເພຫລາຍ,ຄ້ວນ
ໄຟສີຟ້າຈາງໆ ພຸ່ງຂຶ້ນຈາກປ່ອງໄຟ ວ່ານສູ່ອາກາດອັນ ອົບ
ເອົ້າ . ຕຽງລູກກົງເຫລັກ ໄໝ້ຈົນແດງ ຈີກອອກເປັນ ຊີກ
ຊິ້ນເກ່ດປ່ານຂາແມງມຸມ . ເສົາຮົ້ວກໍ່ຢືນຕັ້ງຢູ່ຄືທະຫານຍາມ
- ເສົາໜຶ່ງນັ້ນ ມີໝວກແກັບແດງ - ເປັນຖານໄໝ້ ກຸ່ນໆ
ຢູ່ .

" ປົ້ມໄໝ້ໝົດແລ້ວ " ໂຄໂຄນ ວ່າ ,ຖອນໃຈໃຫຍ່.
" ເກີນວ່າເສຍດາຍ ! "

ພວກເດັກນ້ອຍເອົາໄມ້ຄຸ້ຍທ່ອນຟື້ນທີ່ຍັງຕິດໄຟແລ້ວເຂີຍ-
ມັນລົງ ບວກຕົມຄືກັບຄົນລຽງໝູເອົາໄມ້ແສ່ເຕາະໝູນ້ອຍ ,
ຟັງສຽງດີນຟື້ນຕິດໄຟສົ່ງສຽງຈວດຈາດ , ດັບມອດລົງທັງສົ່ງ
ຄ້ວນແສບຕາກຸ້ມຂຶ້ນມາ ຕົວແທນແຫງມະນຸດຊາດໄວ້ຫາຂວບ
ຜົມຫຍຸ້ງ ຕາສີຟ້າ ນັ່ງລົງກະໂຕບວກຕົມທີ່ຍັງຮ້ອນອຸ່ນ ແລະ
ເອົາໄມ້ຕີເສບຂຶ້ນ ທ່າທາງມ່ວນຍິ້ມນຳດິນຕີຈາກເສັດເຫລັກ-

ມັນເອົາແທ້ເອົາວ່າ . ພວກທີ່ເສຍຫາຍຍອມໄຟໄໝ້ພາກັນ-
ເລາະຊອກເກັບເອົາເຄື່ອງຂອງຢ່າງເສົ້າໆ . ພວກແມ່ຍິງ
ພາກັນໄຫ້ທັງປອຍຄາສາບແຊ່ງ ແລະ ຜິດກັນຍອມຍາດ ສິ່ງ
ເສດເຫຼືອ . ຢູ່ໃນສວນໝາກໂປມ , ຕົ້ນໄມ້ກໍເຣັດ ຈາງ
ຫ່າງຢູ່ , ໃບມັນຖືກໄຟລົນຈົນແຫ້ງ , ໝາກໂປມສີແດງປະ
ກົດຄີແຫ່ງດີກກວ່າເກົ່າ .

ພວກເຮົາຍ່າງລົງໄປຮອດແມ່ນ້ຳ , ພາກັນອາບ, ແລ້ວ
ໄປນັ່ງດື່ມນ້ຳຊາຢູ່ຮ້ານແຄມຕາຝັ່ງ .

" ຈັ່ງໃດກໍຕາມ , ກຽວກັບເລື່ອງໝາກໂປມນີ້ ແມ່ນ
ພວກນາຍທົ່ມ ມັນເສຍທ່າແລ້ວລະ " . ໂຣມາສເວົ້າຂຶ້ນໃນ
ທີ່ສຸດ .

ປັນກິຟ ຍ່າງເຂົ້າມາ . ເຂົາມີທ່າທາງຮີ່ນຕອງ ແລະ
ວຽບສະຫງົບກວ່າປົກກະຕິ .

" ອາວ – ເປັນຈັ່ງໃດລະ ? " ໂຂໂລມຖາມເຂົາ .
ປັນກິຟ ຍົກບ່າໄຫລ .

" ເອີ ເຮືອນຂອຍປະກັນໄພໄວ້ແລ້ວດອກ "
ນິດກັນໄປຄາວໜຶ່ງ . ພວກເຮົານັ່ງຈ້ອງເບິ່ງກັນຢ່າງ -
ເອົາຈິງເອົາຈັງ ປານຄົນແປກໜ້າ .

" ເຈົ້າຊິເຮັດຈັ່ງໃດຕໍ່ໄປບາດນີ້ ມິກໄຂໂລ ອັນໂຕນິຊ?"

" ກັນຍັງບໍ່ທັນຕົກລົງໃຈເທື່ອ " .

" ເຈົ້າຈະຕ້ອງໜີຈາກໜີ້ " .

" ໂຕຫາກຊິຮູ້ "

" ຂອຍມີແຜນການຈັ່ງຊີ້ " ປັນກິຟວ່າ, " ໄປທາງ -

24/VII

ນອກພຸ້ມ ໄປ໊ ແລ້ວຈິ່ງປຶກສາກັນ " .

ທັງສອງອອກໄປ . ຕອນຍ່າງຮອດປະຕູ , ປັນກົຟ ຢຸດ ຫັນມາເບິ່ງຂ້ອຍ , ເວົ້າວ່າ :

" ໂຕຫັ້ນກະບໍ່ຂີ້ຢ້ານດອກມໍ້ນ້ອງຊາຍ ! ໂຕຢູ່ໜີ້ໄດ້ຢູ່. ພວກມັ້ນຊິຢ້ານໂຕຢູ່ດອກ " .

ຂ້ອຍກໍອອກຈາກຮ້ານ ໄປນອນຫລີ້ນຢູ່ແຄມຝັ່ງນ້ຳ ,ກອງ ຮົ່ມພຸ່ມໄມ້ , ສາຍຕາແນມອອກໄປເບິ່ງແມ່ນ້ຳ .

ອາກາດຮ້ອນເອົ້າ , ເຖິງແມ່ນວ່າຕາເວັນໄດ້ລັບລົງ - ແລ້ວ . ຂ້ອຍຄິດຫວນຄືນເຖິງການດຳລົງຊີວິດຢູ່ບ້ານນີ້ ຕະ - ຫລອດມາ , ມັນລຽນສາກເປັນຄືຮູບແຕ້ມສີນ້ຳມັນ ຢູ່ເທິງ - ແຜ່ນເຈ້ຍກວ້າງຂອງແມ່ນ້ຳສາຍນີ້ . ຫົວໃຈຂ້ອຍໜັກຕຶ້ງ . ຄາວດຽວ ກໍຮູ້ສຶກອ່ອນເພຍ ຈົມເຜີຫລັບໄປ .

" ລູກແມ່ ! " ຂ້ອຍໄດ້ຍິນສຽງເອີ້ນ ທັງຫຍຶ່ງຫລັບຢູ່. ຮູ້ສຶກວ່າມີຄົນມາຈັບຂ້ອຍສັ່ນ , ພະຍາຍາມຈະດຶງຂ້ອຍໄປໃສ " ເຈົ້າຕາຍແລ້ວຊັ້ນບໍ , ຫລື່ຈັ່ງໃດ ? ຕື່ນເທາະ ! "

ດວງຈັນຍັງຄາງຢູ່ເທິງສາຍພູເທິງໜ້ານ້ຳພູມ , ສີແດງ ປານເລືອດ , ແລະໃຫຍ່ທີ່ກົ່ງລໍກວຽນ . ບາຣິນົຟ ຄູເອົ່າຢູ່ ຂ້າງໆຂ້ອຍທັງຍູ້ບ່າຂ້ອຍ .

" ມາເທາະ ! ໂຄໂຄນຊອກຫາເຈົ້າຢູ່ພຸ້ມ .ລາວເປັນ ຫ່ວງເຈົ້າ " .

ແລ້ວເຂົາກໍຍ່າງນຳຫລັງຂ້ອຍມາເທິງຕາຝັ່ງທັງຈົ່ມ :

" ມັນບໍແມ່ນແນວເຈົ້າຊິໄປນອນຢູ່ບ່ອນໂລເລຈັ້ງຊັ້ນ!ສົມ ມູ່ດວ່າ ມີຄົນມາ ເທິງຝັ່ງຫັ້ນເດເຂົາອາດຢຽບກ້ອນຫີນຕົກລົງ

ມາຖືກເຈົ້າເປັນຈັ່ງໃດ ? ຫລືວ່າ - ເຂົາອາດປອງຮ້າຍຕັ້ງ
ກົ້ງມັນລົງມາໃສ່ເຈົ້າຈັ່ງຊັ້ນ ? ພວກນີ້ ມັນບໍ່ຢຸຕິງ່າຍໆດອກ-
ໄດ . ຄົນເຮົາ ມັນມີແຕ່ຄວາມໂກດແຄ້ນບໍ່ເລີກບໍ່ແລ້ວ ຮູ້ບໍ່-
ນ້ອງຊາຍ . ຂອງວ່າ ເຂົາບໍ່ມີອົນດີໆໄວ້ຈື່ຈຳເດ ! "

ມີສຽງຄົນຍ່າງມາຄ່ອຍໆ ຫມັ້ນຕາມພຸ່ມໄມ້ມາ . ຂ້ອຍ
ແນມເຫັນວ່າໄມ້ໄຫວຕິງ .

" ພໍ້ແລ້ວບໍ ? " ສຽງ ມິກູນ ທູ້ມນວນດັງຂຶ້ນ .

" ປອດໄພທຸກຢ່າງ " , ບາຣິນົຟ ຮອງຕອບ .

ພວກເຮົາຍ່າງມິດໆໄປ ໄດ້ຫນ້ອຍຫນຶ່ງ . ແລ້ວ ບາ ຣິ
ນົຟ ຖອນໃຈທັງວ່າ :

" ມິກູນ ຊິອອກໄປລັກຫາປາອີກ . ລຳບາກຢູ່ໄດຊີວິດ-
ຫມໍກະດາຍ " .

ໂຣມາສ ຕໍ່ວ່າຂ້ອຍທັນທີທີ່ໄປຮອດ .

" ເຮັດໃດຈຶ່ງເພີແນວນີ້ - ຫາ ? ແມ່ນເຈົ້າໄປ ຊອກ
ຫາເລື່ອງຊົກຕ່ອຍອີກຊັ້ນບໍ ? "

ຕໍ່ມາ ເມື່ອ ບາຣິນົຟ ເມືອແລ້ວ ລາວບອກຂ້ອຍຄ່ອຍໆ-
ວ່າ :

" ປັນກົຟສະເຫນີໃຫ້ເຈົ້າຢູ່ນຳ . ຫມໍວ່າຊິເປີດ ຮ້ານ
ຂາຍຂອງ . ຂ້ອຍບໍ່ສະຫນັບສະຫນູນໃຫ້ເຈົ້າຢູ່ດອກ . ສະ
ເພາະຂ້ອຍເອງ , ໄດ້ຂາຍເຄື່ອງຂອງທີ່ຍັງເຫລືອໃຫ້ ພໍ
ຫມົດແລ້ວຊິເດີນທາງໄປ ວິຢັດກາ . ແລ້ວຊິສົ່ງຄົນມານຳ -
ເອົາເຈົ້າດອກ ຂໍໃຫ້ກັນໄດ້ບ່ອນຢູ່ກ່ອນ , ແລ້ວ ເຈົ້າຈຶ່ງໄປ
ຢູ່ນຳຂ້ອຍຢູ່ພູ້ນ - ນໍ້ ? "

" ແລ້ວຂ້ອຍຊິຄິດເບິ່ງ " .

" ດີລະ "

ລາວນອນຢຽດລົງກັບພື້ນ , ປ່ຽນທ່າສອງສາມບາດແລ້ວກໍບໍ່ເໜັງຕີງອີກ . ຂ້ອຍນັ່ງຢູ່ແປະປ່ອງຢ້ຽມ ຫລຽວ ແນມອອກໄປທີ່ແມ່ນ້ຳ ໂວນກາ . ດວງຈັນສະທ້ອນແສງລົງໃນນ້ຳເປັນປະກາຍປານແປວໄຟ . ເຮືອຈັກແລ່ນຜ່ານໄປທາງຝັ່ງ–ພູມ , ສຽງໃບພັດຕີນ້ຳບາດໜັກໆ . ໂຄມຕະກຽງ ສາມໜ່ວຍຫ້ອຍຢູ່ເທິງເສົາ , ເບິ່ງຄືລອຍຢູ່ທ່າມກາງຄວາມ ມືດມິດ , ບາງເທື່ອກໍຄືກັບລອຍຂຶ້ນຮອດໜ່ວຍດາວ ແລະ ບົດ–ບັງແສງດວງດາວໄປ .

" ຍັງຄຽດພວກໄທບ້ານຢູ່ບໍ ? " ໂຣມາສຖາມທັງ ທີ່ເຫງົານອນ . " ຢ່າຄຽດເຂົາເດີ . ພວກເຂົາຂີ້ໂງ່, ຊື່ໆ ດອກ . ຄວາມຊົ່ວຮ້າຍກໍແມ່ນຮູບການໜຶ່ງຂອງຄວາມໂງ່ ."

ວາຈາເຫລົ່ານັ້ນ ບໍ່ສາມາດເຮັດໃຫ້ຂ້ອຍສະບາຍໃຈ ຂຶ້ນໄດ້ – ບໍ່ ອາດປົວແປງຄວາມຄຽດແຄ້ນ ແລະ ຄວາມ ເຈັບປວດຈາກການຖືກພາໂລ . ອີກຄັ້ງໜຶ່ງ ຂ້ອຍນຶກເຫັນພາບ–ບັກສັດໜວດຮ້ອງອອກມາວ່າ :

" ຫຍັບອອກຈາກມັນແມ້ ! ເອົາກ້ອນຫີນແບ່ນໃສ່ ມັນເອົາ ! "

ໃນເວລານັ້ນ ຂ້ອຍຍັງບໍ່ທັນຮູ້ຝຶກຫັດຕົວເອງໃຫ້ລືບເລືອນຄວາມທົງຈຳທີ່ຄວນລືມ . ເປັນຄວາມຈິງ , ເມື່ອໄດ້ພົບ ພໍ້ຄົນຫລາຍຂຶ້ນ , ເບິ່ງແຕ່ລະຄົນຢ່າງລະອຽດ , ຈຶ່ງໄດ້ເຫັນວ່າ ແຕ່ລະຄົນກໍມີຄວາມຊົ່ວຮ້າຍພຽງໜ່ວຍດຽວ . ຫລາຍຄົນ

ພໍ ໂຊໂລນ ຈາກ ຫຼາສໂນ ວິໂດ່ໂວ ໄປ ຂ້ອຍກໍຮູ້ສຶກ-ເໜື່ອຍອ່ອນຄືນອີກ . ຂ້ອຍເລາະຄວາມນຳບ້ານ ຄືໝານ້ອຍທີ່ຫລົງເຈົ້າຂອງ . ຂ້ອຍອອກເລາະລຽບໄປນຳບ້ານນອກກັບ ບາຣິນຟ , ໄປຫາຮັບຈ້າງຊາວນາຮັ່ງ ຂຸດມັນຝະລັ່ງ , ຕັດຕົ້ນໄມ້ , ຫລື ບົວລະບັດສວນໝາກໄມ້ . ຂ້ອຍພັກຢູ່ເຮືອນອາບນ້ຳຂອງ ບາຣິນຟ .

" ທ້າວ ອາເລັກໄຊ ມັກຊິມິຊ ຜູ້ປ່ຽວພອຍເອີຍ ! " ບາຣິນຟ ວ່າ ໃນຄືນຝົນຕົກຄືນໜຶ່ງ . " ມີນ່າ - ຫລືພວກເຮົາອອກໄປທະເລບໍ ມື່ອນນີ້ ? ຫາ - ຊິມາຈ່ອງຢູ່ໜີ້ເຮັດຫຍັງ ? ແນວໃດ ເຂົາກໍບໍ່ມັກເຮົາແລ່ວຕ່ວາຢູ່ແຖວນີ້ . ເຈົ້າຊິຮູ້ໄດ້ບໍວ່າ ເຂົາຊິເຮັດຈັ່ງໃດໃສ່ເຮົາອີກແດ່ . ມີໜຶ່ງທາງໝານີ້ນະ , ບາດເຂົາກິນເຫຼົ້າເມົາມາແລ້ວນະ " .

ບາຣິນຟ ເຄີຍສະເໜີເລື່ອງນີ້ເທື່ອໜຶ່ງແລ້ວ . ເຂົາ - ເອງກໍເລີ່ມເປັນຄົນຫງວມເຫງົາໃຈລອຍຄືກັນ . ແຂນຍາວໆປານແຂນລິງຂອງເຂົາແນບຢູ່ຂ້າງຄີງ , ແລະເຂົາກໍມັກ - ອ່ວາຍໄປອ່ວາຍມາຮອບກາຍ ເຮັດທ່າທາງຄືຄົນຫລົງຢູ່ ກາງປ່າ .

ເມັດຝົນກະທົບປ່ອງຢ້ຽມ . ນ້ຳໄຫລເຊາະເປັນທາງລົງສູ່ຮ່ອງ , ອ່ງຈົນຖ້ວມແຈເຮືອນອາບນ້ຳແຈໜຶ່ງ . ຟ້າແມບເຫລື້ອມສີຈາງໆຂອງພະຍຸລະດູຮ້ອນ ແລ້ວຜ່ານທ້ອງຟ້າ . ບາຣິນຟ ຖາມຂຶ້ນອີກຄ່ອຍໆ : " ອອກເດີນທາງ - ນໍ້ ? ມື້ອື່ນນີ້ ? "

ພວກເຮົາ ອອກເຮືອໄປນຳກັນ .

ຈັ່ງແມ່ນຊາດ ມັນມີຄວາມສຸກ ຢ່າງບໍ່ອາດພັນລະນາໄດ້. ຕອນທີ່ພວກເຮົາລ່ອງເຮືອລົງ ຕາມແມ່ນ້ຳ ໂວນກາ ໃນ ຄືນລະດູລ່ວງປີນັ້ນ . ຂ້ອຍນັ່ງຢູ່ທ້າຍເຮືອ , ແປະກັບຄົນຂັດ - ທ້າຍ ຊຶ່ງເປັນຄົນຫນ້າຕາເປັນຕາຢ່ານ ຫົວບັກໃຫຍ່ - ເຂົາມັກທີບຕີນບາດແຮງ ຂະນະທີ່ເບັດຫາງເສືອ , ທັງປາກ ກໍຄາງເພງສຽງຫນັກໆ :

" ອູ - ອູ...ປະ ! ອູ...ອູ...! "

ແມ່ນ້ຳກວ້າງໃຫຍ່ໄພສານ ຈົນຫລຽວບໍ່ເຫັນຝັ່ງ , ຫນ້ານ້ຳຮາບປານນ້ຳສາງ , ໄຫລອ້ອຍອິ່ມ ອ່ອນນົ້ມປານເສັ້ນ - ໄຫມ , ເຊາະໃສ່ຂ້າງເຮືອຢ່າງຄ່ອຍເບົາ . ເຫນືອ ຫົວເຮົາ ແມ່ນກ້ອນເຝື້ອສີດຳຂອງລະດູລ່ວງຫ້ອຍລົງຕ່ຳ . ບໍ່ ມີສິ່ງໃດອີກແລ້ວ ນອກຈາກຄວາມດຳມືດທີ່ ຄົບຄານເຂົ້າມາຊ້າຊ້າ , ມັນປົກຄຸມແຄມຝັ່ງນ້ຳ , ແລະໂລກທັງໂລກກໍຄ່ອຍໆ- ຊຶມເຂົ້າຢູ່ໃນອ້ອມກອດຂອງມັນ , ຈົນມະຫັບມະຫາຍໄປພ້ອມປູ້ມຄັວນ ແລະ ນ້ຳ - ເລື່ອນໄປ ແລະ ເຄື່ອນໄປຢ່າງບໍ່ ມີວັ້ນແຕກຫັກ , ໄປສູ່ບັນຍາກາດທີ່ຫວ່າງເປົ່າ , ປາສະຈາກດວງອາທິດ , ເດືອນ ຫລື ດາວທີພູ້ນ .

ໃນຄວາມມືດອັນຊຸ່ມເຢັນຢູ່ຕໍ່ຫນ້າ , ມີສຽງໃບພັດ ເຮືອຈັກກະທົບນ້ຳແຮງ ຄືມັນພວມຍູ່ດັນກັບພະລັງແຮງທີຕ້ານ ຈ່ອງມັນໄວ້ກັບທີ່ . ຕະກຽງຫ້ອຍຢູ່ເທິງເຮືອມີສາມດວງ . ສອງດວງຫ້ອຍຢູ່ຫມໍ່ນ້ຳ , ອີກດວງຫນຶ່ງຫ້ອຍຢູ່ສູງ ເພື່ອສ່ອງເບິ່ງ

ວ່າເຮືອໄປຮອດໃສ້ . ຢູ່ໃກ້ໆເຮົາມີໄຟອີກ ໔ ດວງລອຍຢູ່ຄື ກັບປາສີຄຳ ລອຍຢູ່ກອງເມກເຝືອ . ດວງໜຶ່ງແມ່ນຕະກຽງ ໂຄມ ໄວ້ສຳລັບເບິ່ງທາງຢູ່ຫົວເຮືອເຮົາ .

ຂອຍຮູ້ສຶກວ່າ ຕົນເອງລອງລອຍຢູ່ໃນຟອງອາກາດ ອັນ ເປືອກເປັນ ແລະ ໜື່ນໄຫລ . ຄືວ່າມັນຄ່ອຍໆເລື່ອນລົງໄປ ສູ່ເດີ່ນເນີນຄ່ອຍລົງຕ່ຳ ແລະ ຂ້ອຍກໍເລື່ອນລົງນຳຟອງນັ້ນ - ຄາຍກັບຕົວແມງວັນຕິດຢູ່ໃນຟອງສະບູ . ຄວາມຮູ້ສຶກ ເປືອກ ເປັນລົງຈົນເກືອບຈະຢຸດ . ຂ້ອຍຮູ້ສຶກຄືກັບວ່າ ເຮືອຈະ ຢຸດ ສຽງຄວນຄາງ , ໃບພັດຈະຢຸດໝູນຢູ່ໃນພົນນ້ຳ ,ສຽງ ທູກ ສຽງຈະສະຫງົບລົງພໍປານໃບໄມ້ຫລົ່ນລົງຈາກຕົ້ນ - ຄື ຮອຍ ສີຂາວລຶບຈາກກະດານດຳ . ຂ້ອຍຄາຍກັບຕົກຢູ່ອອມກອດ - ຂອງຄວາມມິດງຽບ ແລະ ສະຫງົບນິ້ງ .

ແລວຊາຍຮາງໃຫຍຜູ້ຍາງຫລີບໄປຫລີບມາຢູ່ທ້າຍເຮືອ , ໃສ່ເສື້ອໜັງແກະຂາດໆ ແລະ ໝວກສ່ອຍໆຄົນນັ້ນ - ກໍຈະ ຢູດງຽບເຊັ່ນດຽວກັນ . ເຂົາຈະຢືນບໍ່ເໜັງບໍ່ຕີງ , ແລະ ບໍ່ມີວາຈະຄາງເພງ :

" ອູ...ອູ...ປະ ! ອູ...ອູ...ຣະ ! " ນັ້ນຕໍ່ໄປ ອີກ .

ຂ້ອຍອອກປາກຖາມເຂົາ :

" ເຈົ້າຊຸຫຍັງນໍ້ ? "

" ແລ້ວມັນເລື່ອງຫຍັງຂອງເຈົ້າລະ ? " ເຂົາຕອບ - ແບບບໍ່ຢາກຫົວຊາ .

ຊາຍຄົນນີ້ ຊາອີດອາດປານໂຕໜີ . ຂ້ອຍໄດ້ສັງ ເກດ

ເບິ່ງໜ້າຕາເຂົາແລ້ວ ກ່ອນຕາເວັນຕົກດິນ ເວລາເຮືອພວມຈະອອກຈາກເມືອງ ຄາຊານ ແລງວານນີ້ . ມັນຢາກຄື ໃບໜ້າຂອງຄົນຕາບອດ ເບິ່ງບ່ອນໃດ ກໍມີແຕ່ຂົນເຕັມໄປໝົດ. ຕອນໄປນັ່ງປະຈຳທີ່ເປັນຄົນຂັດທ້າຍ ເຂົາກໍເອົາເຫຼົ້າໂວດ-ກາ ແກ້ວໜຶ່ງໄປຫຍອນໃສ່ໂຈກໄມ້ດື່ມເອົາໆ ປານດື່ມນ້ຳ , ແລ້ວໆກໍກິນໝາກໂປມໜ່ອຍໜຶ່ງ . ແລ້ວພໍແຕ່ເຮືອອອກ - ເດີນ ເຂົາກໍຈັບຫາງເຮືອ ຫລຽວແນມອອກທາງຕາເວັນ ຈະຕົກດິນ , ກົ້ມຫົວລົງກ່າວຢ່າງເຂັ້ມງວດວ່າ :

" ພະເຈົ້າ ຊ່ອຍຄຸ້ມຄອງລູກດ້ວຍເຖີດ..."

ເຮືອທີ່ເຮົາຂີ່ ແມ່ນເຮືອພວງຕິດກັນ - ມີນຳກັນ ໔ ລຳ ຜູກຕິດກັນ ແລ້ວແກ່ໂດຍເຮືອຈັກ ອອກຈາກ ນິຊະນີ - ໂນວະໂກຣົດ ລ່ອງໄປຮອດ ອັດຕຼາຄານ . ໂຕເຮືອລັບທຸກຂົນແຜ່ນເຫລັກ , ນ້ຳຕານ , ໄມ້ໜັກ ທີ່ຈະຕ້ອງສົ່ງຕໍ່ໄປຍັງ ເປີເຊຍ . ບາຣິນັຟ ເອົາສົນເກີບ ກະແທກໃສ່ກະລັງໄມ້ ແລະກົ້ມລົງດົມເບິ່ງ ທັງວ່າ :

" ປີນໄດນີ້ , ແມ່ນອິຫລັດໜົມລະ . ເຂົາຂົນມາຈາກອິສເຊັຟ . "

ແຕ່ອີຕາຂັດທ້າຍເຮືອ ລົວມາຖາມ ທັງເອົາກຳປັ້ນຢັນ ສີຂ້າງ ບາຣິນັຟ ໄວ້ :

" ແລ້ວມັນກ້ຽວຫຍັງກັບສູ - ຫາ ? "

" ເອີ...ຂ້ອຍພຽງແຕ່ຄິດວ່າ..."

" ຢາກເຈັບໂຕບໍ່ - ຫື ? "

ຍ້ອນວ່າບໍ່ມີເງິນຊື້ປີ້ຂຶ້ນເຮືອໂດຍສານ , ພວກເຮົາຈຶ່ງ

ໄດ້ຮັບຄວາມເມດຕາກະລຸນາໃຫ້ຂຶ້ນຂີ່ເຮືອບັນທຸກສິນຄ້າລຳ - ໜຶ່ງມາ , ເຖິງແມ່ນວ່າ ພວກເຮົາຈິເຮັດວຽກເຝົ້າຍາມ ຄື ລູກເຮືອຜູ້ອື່ນໆ ແຕ່ໝົດທຸກຄົນ ໃນເຮືອກໍຍັງຖືພວກເຮົາຄືຄົນ ຂໍທານຢູ່ .

" ເປັນແນວນີ້ແລ້ວປະຊາຊົນເຮົາກໍຕາຍ ! " ບາຣິນົຟ ຈົ່ມ . " ຊີວິດນີ້ - ມັນງ່າຍໆນ່າ . ຄັນເຈົ້າໄປໄດ້ສູງລະ ເຈົ້າໄດ້ເປັນນາຍ ຄັນບໍ່ຊັ້ນລະ , ເຈົ້າກໍຕ້ອງເປັນແຫລວ - ເຂົາ " .

ຄືນນັ້ນ ມືດຈົນວ່າເຮົາບໍ່ສາມາດຫລຽວເຫັນເຮືອລຳອື່ນ, ນອກຈາກດວງໄຟຢູ່ປາຍເສົາ ບ່ອນຫ້ອຍທີ່ສ່ອງແສງຜ່ານເມກ-ໝອກມາ . ບໍລິເວນ ແລະ ບັນຍາກາດ ເຕັມໄປດ້ວຍ ກິ່ນ ນ້ຳມັນ .

ຄວາມມິດງຽບ ຂອງນາຍທ້າຍເຮືອ ເຮັດໃຫ້ຂ້ອຍ ໝູດໝິດໃຈ . ນາຍເຮືອ ສັ່ງຂ້ອຍມາຢືນປະຈຳຢູ່ທ້າຍ ເພື່ອ - ຊ່ອຍວຽກ ບັກຜີເຜດ ນາຍທ້າຍນີ້ ເວລາໃດ ມັນຈຳເປັນ.ພໍ ແສງໄຟ ທາງໜ້າຈິໝູນລ້ຽວ ມັນຈິຮ້ອງຂຶ້ນວ່າ :

" ເອົາ - ຈັບໄວ ! "

ແລ້ວຂ້ອຍກໍຈະໂດດເຂົ້າໄປ ຊ່ອຍມັນຈັບຫາງເຮືອຊຸມໄວ້.

" ໄດ້ລະ ! " ມັນຈະຄາງໃສ່ .

ຈາກນັ້ນ ຂ້ອຍຈຶ່ງນັ່ງລົງໄດ້ . ທຸກເທື່ອທີ່ຂ້ອຍຊວນ ມັນ ລົມ ແມ່ນບໍ່ສຳເລັດ , ມັນມັກອັດປາກຂ້ອຍດ້ວຍຄຳຖາມທີ່ວ່າ:

" ມັນກ່ຽວຫຍັງກັບມຶງ ? "

ແມ່ນມັນພະວົງຄິດນຳຫຍັງແດ່ນໍ ຄົນຜູ້ນີ້ ? ເວລາ ເຮົາ

ກາຍມາຮອດຈຸດບ່ອນນ້ຳສີເຫລືອງຂອງແມ່ນ້ຳ ຄູາມາ ບັນຈົບ
ພົບກັບນ້ຳສີເຫລັກຂອງໂວນກາ , ມັນອ່ວາຍໜາໄປທາງທິດ
ເໜືອ ແລະ ຮາຍອອກມາ :

" ...ແມ່ນັ້ນ ! "

" ໃຜ ? "

ບໍ່ມີຄຳຕອບ .

ສຽງໝາຫອນ ດັງວ່ອນໆມາແຕ່ໄກແສນໄກ - ຄ້າຍດັ່ງ
ຈະເຕືອນວ່າ ຊີວິດຍັງຢູ່ , ຍັງບໍ່ດ່າວດີ້ນສີ້ນໄປກັບຄວາມມືດ
ມະຫາການນັ້ນ - ແຕ່ຊີວິດນັ້ນ ກໍ່ຄືວ່າຢູ່ຫ່າງໄກ - ໄກ ຈົນ
ຄົງບໍ່ມີໃຜຕອງການ .

" ໝາພວກບໍ່ມີປະໂຫຍດນີ້ , ມີແຕ່ເຫົ່າຢູ່ຈັ່ງຊັ້ນລະ ."
ນາຍທ້າຍເຮືອເວົ້າລອຍໆ .

" ຢູ່ໃສເກາະ - ເຈົ້າວ່າ ? "

" ຢູ່ຊື່ບ່ອນຫັ້ນລະ ! ແຕ່ວ່າຢູ່ບ້ານກູ້ພູມ ມັນຈັ່ງໝາແຫ້
ໝາວ່າ " .

" ຢູ່ໃສເກາະ ລະຫັ້ນ ? "

" ໂວລົກດາ "

ແລ້ວບາດນີ້ ຄວາມເວົ້າຈັ່ງຄ່ອຍຫລັ່ງອອກມາ ປານ ວ່າ
ຫົວມັ້ນຜ່ະລັ້ງ ຫລັ່ງອອກຈາກໄຖຂາດ . ເຂົາເວົ້າສຽງໜັກ
ແຫງກະແດງ :

" ແມ່ນໃຜລະ ມານຳມິງຫັ້ນ ? ລູງມິງຫວະ ?ມັນມາຄື
ຜີ້ບ້າແທ້ ຕາມກູເບິ່ງ . ກູກະມີລູງຜູ້ໜຶ່ງຄືກັນ . ດຽວນີ້ -
ໂອ້ຍ - ສະຫລາດຫລາຍ ແຕ່ໂຫດຮ້າຍຂະໜາດ ! ຮັ່ງກະ

ປານນັ້ນ . ດຽວນີ້ເປັນເຈົ້າຂອງທ່າເຮືອ ຢູ່ ສົມບຽກ . ມີຮ້ານຂາຍເຫລົ້ານຳ " .

ເຂົາປ່ອຍຄຳເວົ້າອອກມາຊ້າໆ ຄືຈົ່ງວ່າຕ້ອງໃຊ້ຄວາມ-ບຶກບຶນຫລາຍ . ແລ້ວກໍມິດໄປຄາວໜຶ່ງ ຈຶ່ງເລີ່ມເວົ້າອີກ - ໃໝ່ ຕາແນມໄປທາງໜ້າ ເບິ່ງໂຄມໄຟ ຢູ່ເສົາກະໂດງຊຶ່ງເຄື່ອນໄປຄືແມງມູມຄຳ , ໄຕ່ງົມໄປໃນຄວາມມືດ . ຂ້ອຍບໍ່ສາມາດແນມເຫັນຕາເລີຍ .

" ເອີ້ນນະ !...ມຶງອ່ານໜັງສືເປັນບໍ່ ? ບາງທີມຶງ-ອາດຊິຮູ້ບໍ່ - ແມ່ນໃຜເປັນຜູ້ຂຽນກົດໝາຍອັ້ນ ? "

ແລ້ວກໍເວົ້າຕໍ່ໄປໂດຍບໍ່ລໍຖ້າຄຳຕອບ : " ຄົນທັງຫລາຍກໍຫາກເວົ້າຕ່າງກັນໄປ ລາງຄົນກໍວ່າ ພະເຈົ້າຊາຂຽນ ລາງຄົນກໍວ່າ ເຈົ້າໜ້າທີ່ບ້ານເມືອງ , ຫລືພວກສະພາ . ຄັນກູຮູ້ວ່າໃຜຂຽນແທ້ ກູຊິໄປຫາເບິ່ງ ຊິໄປບອກວ່າ ເຈົ້າລະຂຽນກົດໝາຍແບບຜູກຂ້ອຍໄວ້ ບໍ່ໃຫ້ຂ້ອຍແດກໜ້າໃຜໄດ້ເລີຍນໍ! ຊິຍໍແຂນໃສ່ ກໍຍັງບໍ່ໄດ້ຊ້ຳ . ກົດໝາຍມັນຕ້ອງແຂັງປານ - ປານເຫລັກແມ່ . ປານກະແຈກັບລູກມັນໜັ້ນ . ໃຫ້ມັນອັດຂັງຫົວໃຈກູໄວ້ຢ່າງຮຽບຮ້ອຍ ແລ້ວກູຫາກຊິຕອບເຂົາເອງດອກ. ແຕ່ແບບນີ້ - ກູຕອບບໍ່ໄດ້ ! ບໍ່ - ຕອບບໍ່ໄດ້ ! "

ເຂົາຈົ່ມ ພໍໄດ້ຍິນແຕ່ຕົວເອງ , ຄ່ອຍລົງ , ຄ່ອຍລົງ, ຄຳຂາດຄຳຕໍ່ , ທັງເອົາກຳປັ້ນທຸບທາງເຮືອຢູ່ຕຸບໆ .

ມີສຽງປະກາດທາງໂທລະໂຂ່ງ ມາຈາກເຮືອລຳອື່ນ ແຕ່ສຽງຄ່ອຍໆມາແຕ່ໄກ ປານສຽງໝາຫອນ ຊຶ່ງຖືກກືນໄປໃນຄວາມມືດແປດດ້ານ . ແສງເຫລືອງໆຂອງຕະກຽງສາມດວງ

ເທິງເຮືອພວງ ຢ້ອນແປ່ງລິບເລືອນຈາງຫາຍໄປໃນນ້ຳອັນດຳ
ມືດ . ເທິງຫົວເຮົາ ເຝື້ອດຳມືນທຶນໜັກໜ່ວງຄືຕົມດຳໃນ-
ແມ່ນ້ຳ ລອຍຕ່ຳລົງໆ . ພວກເຮົາເຄື່ອນເຂົ້າສູ່ຄວາມມືດອັນ
ວຽບສະຫງັດ ເລິກເຂົ້າໄປ່ຊຸກໄຊ .

ອີ່ຕານາຍທ້າຍເຮືອເວົ້າຂຶ້ນວ່າ :

" ມັນໃຫ້ຫຍັງຂ້ອຍແດ່ ? ຫົວໃຈຂ້ອຍຖືກມັດແໜ້ນເຂົ້າ."

ຂ້ອຍເລີ່ມຮູ້ສຶກ ບໍ່ຢາກສົນໃຈນຳຫຍັງໝົດ , ຄ້າຍຄື ມີ
ຄວາມ ທໍ້ຖອຍໃຈ ຢ່າງລົ້ນເຫລືອ . ບໍ່ຢາກໄດ້ຫຍັງ ນອກ-
ຈາກຢາກນອນ .

ດວງອາທິດໂຜ່ຂຶ້ນມາຊ້າໆ ບຸຫມົ້ນຜ່າກ້ອນເມກ ແຕ່ ຍັງ
ບໍ່ທັນມີລຳແສງ , ຍັງອ່ອນແຮງ , ພໍແຕ່ແປງສີນ້ຳໃຫ້ ເປັນ
ສີຂີ້ເຖົ່າຂຶ້ນມາແດ່ , ເຜີຍແນວຝັ່ງເຫັນເສັ້ນສີເຫລືອງຂອງ-
ພຸ່ມໄມ້ , ແລະ ຕົ້ນສົນລຳສີດຳ ຄືທ່ອນເຫລັກ ,ຫລັງເຮືອນ
ຢັ້ງຢ່າຍເປັນແຖວ , ຮ້າງຂອງໄທບ້ານຄົນໜຶ່ງ , ລ້ວນແຕ່
ເປັນຄືຮູບປັ້ນເຮັດດ້ວຍຫີນ . ນົກແອ່ນບິນຜ່ານໄປ , ສຽງ-
ປີກພືດບັພິບພັບ .

ມື້ຄືນມາປ່ຽນຜຽນຍາມແທນ ນາຍທ້າຍເຮືອກັບຂ້ອຍ .
ຂ້ອຍເຂົ້າໄປໃນຕູບຜ້າ ແລ້ວລົ້ມຕົວລົງນອນ . ແຕ່ຄາວດຽວ
ຜ່າກົດວາຄາວດຽວ - ຂ້ອຍກໍຕົກໃຈຕື່ນຍ້ອນສຽງຄົນຮ້ອງ -
ແລະສຽງບາດຕີນໜັກໆແລ່ນມາ ຂ້ອຍມື້ນຕາຈອງແນມ ອອກ
ໄປ ເຫັນຄົນເຮືອ ໔ ຄົນ ພວມຊຸກນາຍທ້າຍເຮືອເຂົ້າຝາ -
ຄົນອັ້ບ ທັງຮ້ອງເອະອະໃສ່ :

" ຖິ້ມແມ້ ເປຕູກາ ! "

" ຢ່າມ່າມຶງລືມສາ ແລ້ວກໍແລ້ວດອກ ! "

" ສູຢ່າມາກີດຂວາງກູ ! "

ເຂົາຢືນກອດເອິກ ເອົານິ້ວມືຈົກບ່າໄຫລ່ຕົວເອງ , ຕີນເບື້ອງໜຶ່ງຢຽບຫຍັງໄວ້ . ທ່າທາງບໍ່ແມ່ນຝ່າຝືນຕໍ່ພວກ ນັ້ນ - ເຂົາພຽງແຕ່ຈົ້ງຕາເບິ່ງຄົນເຮືອເທື່ອລະຄົນ ທັງອ້ອນວອນ ສຽງກະດ້າງວ່າ :

" ປະກູໄປແມ້ , ກູຢາກໜີຈາກບາບນ່າ ! "

ເຂົາຢືນຕີນເປືອຍເປົ່າ ແລະ ບໍ່ໃສ່ໝວກ , ໃສ່ ແຕ່ເສື້ອກັບສົ້ງ . ຜົມຫຍຸ້ງ ລຸງລັງປົກໜ້າຜາກໂນ . ດວງຕານ້ອຍ ແດງກີຈີສາຍແສງສັບສົນວຸ່ນວາຍໃຈ .

" ມຶງຊິຈົມນ້ຳຕາຍລະ ! " ພວກຄົນເຮືອວ່າ .

" ກູຫວາ ? ບໍ່ມີທາງ ! ຫາດາປ່ອຍກູໄປສູເອີ້ຍ .ຄັນບໍ່ໄປກູອາດຊິຫລົງຂ້າມັນ ! ຖ້າເບິ່ງ ພໍຮອດ ຊິມບຽກກູຊິ.."

" ວາງ ດຽວນີ້ ! "

" ໂຫ້...ສູເອີ້ຍ...! "

ເຂົາຄູ້ເຂົ່າລົງ ກົ້ມຫົວວິງວອນຂໍ ວາແຂນອອກຄືພະເຍຊູຖືກຕອກໃສ່ ໄມ້ກາງເຂນ ແລະ ເວົ້າຊ້ຳວ່າ :

" ກູຢາກໜີຈາກບາບນ່າ ! "

ນ້ຳສຽງຂອງເຂົາເລິກລ້ຳແປກປະຫລາດສັ່ນສະທ້ານຮອດດວງວິນຍານຂອງຜູ້ຟັງ . ມືຂວ້າລົງມັງສັ່ນເຊັນ ແລະ ໜ້າຕາກໍ່ສັ່ນເຊັນຄືກັນ , ດວງຕານ້ອຍທິບຄີຕ່າຕູມຄື່ວ່າສວດ ຖະຫລົ່ນອອກມາຈາກເບົ້າ . ຄ້າຍກັບວ່າມີມືລຶກລັບເດ່ມາບີບ ຄໍເຂົາ , ພະຍາຍາມຈະຄັ້ນຄໍໃຫ້ຕາຍຄາ .

ພວກນັ້ນຖອຍຫ່າງອອກຈາກເຂົາມິດໆ . ເຂົາຄ່ອຍໆລຸກຂຶ້ນຢືນຊ້າໆ ຈັບເອົາຫໍ່ຂອງຂຶ້ນມາ .

" ຂອບໃຈ " ເຂົາວ່າ .

ເຂົາຍ່າງຜ່າຊານເຮືອ ແລ້ວໂດດລົງນ້ຳຢ່າງງ່າຍດາຍ-ຢ່າງທີ່ຂ້ອຍບໍ່ຄິດວ່າ ເຂົາຈະເຮັດແນວນັ້ນ . ຂ້ອຍກໍແລ່ນໄປທີ່ແຄມເຮືອຄືກັນ , ຍັງທັນໄດ້ເຫັນມືເຂົາແກວ່ງຢູ່ໄຫວໆເຂົາຊຸດນ້ຳ ເອົາຫໍ່ເຄື່ອງຜູກໄວ້ເທິງຫົວ ຄືໝາວກແລ້ວກໍລອຍ ໄປຫາຝັ່ງຢ່າງວ່ອງໄວ . ພູ່ມໄມ້ຢູ່ແຄມຝັ່ງຕ່າງກໍກົ້ມຫົວລົງ ຮັບຕອນເຂົາດ້ວຍແຮງລົມ , ສົ່ງໃບທີ່ເຫລືອງລົງສູ່ໜ້ານ້ຳ .

ພວກສາມຄົນເວົ້າກັນວ່າ :

" ໃນທີ່ສຸດ ມັນກໍຂຶ້ນໃຈໄດ້ ! "

ຂ້ອຍຖາມຂຶ້ນວ່າ :

" ເຂົາເປັນບ້າໄປແລ້ວຫວະ ? "

" ບ້ານັ້ນບໍ່ ? ບໍ່ດອກ ! ມັນຢາກຮັກສາຈິດໃຈມັນເອງຊື່ໆ " .

ຕອນນີ້ ເປຕູກາ ໄປຮອດບ່ອນນ້ຳຕື້ນແລ້ວ . ເຂົາ ຢູດຢືນຄາວໜຶ່ງ . ນ້ຳເລິກພຽງເອິກເຂົາ , ແລ້ວເຂົາຍົກຫໍ່-ເຄື່ອງແກວ່ງໂບກ ໄປມາໃສ່ພວກເຮົາ .

ພວກຄົນເຮືອຮ້ອງໃສ່ວ່າ :

" ລາກ່ອນເດີ - ! "

ຜູ້ໜຶ່ງຖາມຂຶ້ນວ່າ :

" ບໍ່ມີຮອດບັດປະຈຳຕົວຈັ່ງຊັ້ນ ມັນຊິເຮັດຈັ່ງໃດລະຫັ້ນ?"

ຄົນເຮືອຜົມແດງຂາໂຂງໆຜູ້ໜຶ່ງ ອະທິບາຍສູ່ຂ້ອຍຟັງ -

ຢ່າງເອົາຈິງເອົາຈັງວ່າ :

" ມັນມີລູງຜູ້ໜຶ່ງຢູ່ ຊຸມບຣກ . ເຖົ້າມັ້ນເຂ່ຍມັນອອກ-ຈາກກອງມໍລະດົກ ທີ່ມັນມີສິດຄອນໄດ . ມັນກໍເລີຍຕົກລົງໃຈວ່າ ຊິຂ້າເຖົ້າມັ້ນສາ . ແຕ່ມັ້ນບໍ່ຢາກກະທຳບາບໜາ- ມັນເລີຍໜີມາເອົາຊື່ງ . ເບິ່ງຊົງມັນຄືຊິຮ້າຍ , ແຕ່ຫົວໃຈມັນອ່ອນໂຍນຄືຫຍັງນີ້ . ມັນເປັນຄົນດີໄດ " .

ເວລາດຽວກັນ " ຄົນດີ " ຜູ້ນັ້ນ ກໍຂຶ້ນຮອດຝັ່ງແລ້ວ , ແລະຄາວດຽວ ກໍຫັບຫາຍໄປນຳພູ່ມໄມ້ .

ພວກຊາວເຮືອ ກັບກາຍເປັນເພື່ອນທີ່ດີຕໍ່ຂ້ອຍ .ພວກຂະເຈົ້າມາຈາກແມ່ນ້ຳ ໂວນກາ ຄືກັນກັບຂ້ອຍ ; ຊ່ວງ ຮອດແລງນັ້ນ ຂ້ອຍເລີຍກາຍເປັນຄົນເຮືອນດຽວກັບຂະເຈົ້າໝົດ. ຢ່າງໃດກໍດີ ນັບຕໍ່ມາ ຂ້ອຍສັງເກດເຫັນມີສາຍຕາບາງຄູ່ເສືອດມາໃສ່ແບບສົງໄສ , ແລະຂ້ອຍເດົາໄດເລີຍວ່າ ບາຣິນີຟຄົງຈະ ໄດ້ເລົ່າແນ່ນຫຍັງຕໍ່ແນ່ນຫຍັງອອກມາແລ້ວພໍແຮງ - ຄົງຈະເລົ່ານິທານຂົດຕົວະສູ່ພວກນັ້ນຟັງແລ້ວ .

" ເຈົ້າໄດ້ລົມຫຍັງສູ່ເຂົາຟັງລະ ? "

ເຂົາເກົາຫົວ ແລະ ຍອມຮັບຢ່າງເຂີນໆ ແຕ່ກໍຍິ້ມ ດ້ວຍແສງຕາຫວານປານຕາແມ່ຍິງ .

" ເອີ - ກະເວົ້າແດ່ແລ້ວ " .

" ຂ້ອຍຄືບອກເຈົ້າແລ້ວ - ວ່າຢ່າຟ່າວເວົ້າຫຍັງໝົດ?"

" ເອີ - ກະຊິເຮັດແນວໃດ ເວົ້າໄປແລ້ວເດຊັ້ນ -ມັນກໍເປັນໂອກາດພໍດີນໍ່າ . ພວກຂ້ອຍວ່າຊິຫລິ້ນໄພ້ກັນ ແຕ່ຫາໄພ້ຜັດເສຍ ແມ່ນນາຍທ້າຍເອົາໄປ . ພວກຂ້ອຍເລີຍຢູ່ລ້າໆ -

ຂ້ອຍກະເລີຍເລົ່າ..."

ຂ້ອຍສໍ້ເຂົ້າຈັ້ນຈໍ້ເຂົ້າອີກ ຈິ່ງໄດ້ຄວາມວ່າ ເລື່ອງທີ່ບາຣິນົຟ ເລົ່າ ເພື່ອຂ້າເວລານັ້ນ - ແມ່ນເລື່ອງທີ່ສັບສົນທີ່ສຸດ , ຄືເລື່ອງທີ່ລົງທ້າຍວ່າ ໂຄໂຄນ ແລະ ຂ້ອຍ ພາກັນຈັບຂວານສູ້ກັບຄົນຫມົດບ້ານປານພວກໄວກິ້ງສະໄຫມບູຮານເອົາໂລດ .

ບໍ່ມີປະໂຫຍດຫຍັງທີ່ຂ້ອຍຈະຣາຍເອົາ . ສໍາລັບຄົນ ຜູ້ນັ້ນຄວາມຈິງເປັນເລື່ອງທີ່ນອກເຫນືອໄປຈາກຊີວິດ . ມື້ຫນຶ່ງຂະນະທີ່ ພວກເຮົາຍ່າງເລາະຊອກຫາວຽກເຮັດ , ຕອນພາກັນນັ່ງພັກຢູ່ແຄມຮອງນ້ຳ , ເຂົາເວົ້າຕໍ່ຂ້ອຍດ້ວຍຄວາມຮັກແພງ ແລະ ຕັດສິນໃຈຫນັກແຫນ້ນວ່າ :

" ຄວາມຈິງຫວະ - ເຈົ້າຕ້ອງຊອກເອົາເອງ ເພື່ອເຈົ້າເອງ , ເພື່ອໃຫ້ຖືກໃຈເຈົ້າ ! ເບິ່ງແມ້ ! ຝູງສັດ - ພວມແລ່ນຂ້າມຮ່ອງນ້ຳພູມ , ມີຫມາ ແລະ ຄົນລ້ຽງສັດນຳ. ເນ້ - ເຫັນບໍ ? ຊິເອົາຈັ່ງໃດ ? ເຮົາຊິເຮັດແນວໃດເພື່ອເອົາຫຍັງມາອົບຊູມຈິດໃຈເຮົາ ? ບໍ , ສະຫາຍເອີຍ ,ໂຕເບິ່ງເອົາເອງທອນ , ພວກຄົນຊົ່ວທັ້ນ ມັນມີຕົນມີໂຕຢູ່ແທ້ໆ, ແຕ່ຄົນດີລະ - ຈັກວ່າຢູ່ໃສ ? ຄົນດີນັ້ນ - ຄືຊິແມ່ນບໍ່ທັນ - ເກີດບໍ - ຕ້ອງແຕ່ງຂຶ້ນເອົາ - ຊັ້ນຕ່ວາ ! "

ເມື່ອພວກເຮົາມາຮອດ ຊິມບຽກ , ພວກຊາວເຮືອຢອກເຮົາແບບຕາຍໆ ວ່າໃຫ້ອອກຈາກເຮືອ .

" ພວກເຮົາ ບໍ່ມັກຄົນຄືຊູມໂຕ " , ຂະເຈົ້າວ່າແຈ້ງໆ.

ຂະເຈົ້າ ເອົາເຮືອນ້ອຍພາຍມາສົ່ງພວກເຮົາຮອດຕາຝັ່ງ. ເຮົາພາກັນນັ່ງຢູ່ແຄມນ້ຳ - ຕາກສົ້ງເສື້ອຈົນແຫ້ງ . ຫມົດ-

ເນື້ອຫມົດໂຕ ພາກັນມີເງິນແຕ່ ນິດໆ ໂກເປັກ .

ແລ້ວພາກັນເຂົ້າໄປໃນຮ້ານເຫລົ້າ , ສັ່ງນ້ຳຊາມາດື່ມ.

" ເຮົາຈິເຮັດແນວໃດບາດນີ້ ? "

ບາຣິນົຟ ຫັນໜ້າມາ ຕອບຢ່າງບໍ່ລັງເລວ່າ :

" ເຮັດຫຍັງຫວະ ? ອາວ - ກະເດີນຕໍ່ໄປລະບໍ ".

ພວກເຮົາໄປໄດຮອດ ຊາມາຣາ - ໂດຍລັກຂຶ້ນເຮືອ - ໂດຍສານໄປ . ທີ່ ຊາມາຣາ ພວກເຮົາເຮັດວຽກຮັບຈ້າງຢູ່ເຮືອບັນທຸກ ເພື່ອເດີນທາງຕໍ່ອີກ ໆ ວັນ ຈຶ່ງໄປຮອດແຄມທະເລກາສປຽນ ; ທີ່ນັ້ນ ພວກເຮົາໄດ້ວຽກເຮັດຢູ່ນຳ ຈູຫາປາ ທີ່ຫາເຮືອຫາປາ ແສນຂີ້ດຽດຂອງອາວ ກາບານກູນ-ບາຍ .

ຫມາຍເຫດ

ເປນເມນີ : ອາຫານເຮັດດ້ວຍແປ້ງ ເປັນແຜ່ນຫໍ່ຊີ້ນຟັກແລ້ວ ຕົ້ມ . ໜ້າ 5

ໂກຣົດກີ : ການຫລິ້ນແບບໜຶ່ງ ຄ້າຍໆກັບແກວງບານໃສ່ກະປອງທີ່ຕັ້ງຢອງກັນໃຫ້ລົ້ມ . ໜ້າ 15

ຊະລີ : ເຄື່ອງດົນຕີພື້ນເມືອງຊະນິດໜຶ່ງ . ໜ້າ 28

ຄົມໂຣໂຣນ : ແມ່ນຊື່ແບບສຽດສີ ສຳລັບເອີ້ນຄົນ ອູກຣາອີນ . ໜ້າ 54

ຊີ ຕູຍ ຊາແວ ອູ ເຊີ ເຕີ ແມນ : ຖາເຈົ້າຮູ້ວາ ຂອຍຈະພາເຈົ້າໄປໃສ . ໜ້າ 68

ເບແບນ : ໂອກູສ ເບແບ ເປັນນັກຮຽນ ແລະ ນັກສັງຄົມນິຍົມ ຊາວເຢຍລະມັນ (໑໘໔໐ – ໑໙໑໓) ໜ້າ 127

ມິກູນ : ໃນພາສາລັດເຊຍ ແປວ່າ ຄົນຕ່າພິບ . ໜ້າ 180

ຊູສະລິຟ : ຂອຍຈື່ຊື່ ແລະ ນາມສະກຸນຂອງພວກໄທບ້ານ ບໍ່ໄດ້ດີປານໃດ , ອາດມີການຫລົງສັບ ຫລື ປ່ຽນແປງມັນໄປແດ່ (ໝາຍເຫດຂອງຜູ້ປະພັນ) ໜ້າ 184

ບັນດາທ່ານຜູ້ອ່ານທີ່ນັບຖື!

ສຳນັກພິມ "ຣາດູກາ" ມີຄວາມຍິນດີຢາກຈະ ຮັບຟັງຄວາມຄິດເຫັນຂອງທ່ານ ກ່ຽວກັບການ ແປແລະການຮຽບຮຽງປຶ້ມຫົວນີ້. ດັງນັ້ນຖ້າ- ຫາກທ່ານມີຄຳສະເຫນີ ອັນໃດ ອັນ ຈະເປັນ ການຊ່ວຍໃຫ້ມີການປັບປຸງການພິມ ໃນ ຂ້າງ ຫນ້າແລ້ວ ຂໍເຊີນທ່ານສົ່ງຄວາມຄິດເຫັນ ໄປ ຍັງ: II9859, I7, Zoubovski boulevard, Moscou, U.R.S.S.



ນິຍາຍ "ມະຫາວິທະຍາໄລຂອງຂ້ອຍ" ແຕ່ງໂດຍ ມາກຊິມ ກອັກກີ (໑໘໖໘-໑໙໓໖). ນັກປະພັນ ທີ່ມີຊື່ສຽງໂດ່ງດັງຂອງໂຊວຽດ, ແມ່ນປຶ້ມເຫລັ້ມສຸດທ້າຍ ໃນຈຳນວນສາມເຫລັ້ມ ຊຶ່ງຕໍ່ຈາກ "ຊີວິດໄວເດັກ" ແລະ "ຫາລ້ຽງຊີບ".

ທ່ານຜູ້ອ່ານຈະໄດ້ຊາບເຖິງຊີວິດຕອນຕໍ່ໄປ ຂອງອາເລັກໄຊ ເປັດສກົບ, ຜູ້ຊຶ່ງພາຍລຸນມາ ໄດ້ໃສ່ນາມປາກກາວ່າ ມາກຊິມ ກອັກກີ.

ຕອນອາຍຸ ໄດ້ສິບຫົກປີ ເພິ່ນໄດ້ຍ້າຍໄປຢູ່ທີ່ເມືອງກາຊານ ເພາະຫວັງວ່າຈະໄດ້ເຂົ້າຮຽນໃນ ມະຫາວິທະຍາໄລ, ແລະໃຊ້ຊີວິດແບບນັກສຶກສາຜູ້ຫນຶ່ງ. ແຕ່ ຢູ່ທີ່ເມືອງດັ່ງກ່າວ ຊຶ່ງເປັນເມືອງທີ່ໃຫຍ່ອຶກກະທຶກ ສັບສົນ, ຕັ້ງຢູ່ແຄມຝັ່ງແມ່ນ້ຳ ໂວນກາ ນັ້ນ, ເພິ່ນໄດ້ພົບພໍ້ ເສັ້ນທາງເດີນພຽງເສັ້ນດຽວຄື ຮັບຈ້າງເຮັດວຽກຊ່າງ ອັນຫນັກຫນ່ວງ ແທນທີ່ວ່າ ຈະໄດ້ນັ່ງຮຽນຢູ່ທີ່ມະຫາວິທະຍາໄລ, ເພິ່ນຈຳຕ້ອງໄດ້ດຳເນີນຊີວິດຢ່າງລຳບາກ ແບບດຽວກັນກັບຄົນທຸກຈົນທົ່ວໆໄປ. ແຕ່ວ່າ ຢູ່ພາຍໃນ ສະຖານທີ່ດັ່ງກ່າວນັ້ນ ບ່າວນ້ອຍຜູ້ຊຶ່ງໄດ້ກາຍເປັນ ນັກຂຽນຜູ້ມີຊື່ສຽງໂດ່ງດັງໃນຂັ້ນຕໍ່ມາ ໄດ້ສ້າງຄວາມລຶ້ງເຄີຍກັບປັນຍາຊົນຜູ້ທີ່ມີແນວຄິດປະຕິວັດ ຊຶ່ງໄດ້ຈັດຕັ້ງກຸ່ມປະຕິວັດຂຶ້ນຢູ່ທີ່ເມືອງກາຊານ. ຢູ່ທີ່ແຫ່ງນີ້ ກອັກກີ ໄດ້ເກີດ ມີຄວາມປາຖະຫນາຢາກດັດແປງຊີວິດ ຂອງປະຊາຊົນແລະຂອງຕົນເອງໃຫ້ດີຂຶ້ນ, ຢາກຕໍ່ສູ້ເພື່ອເຮັດໃຫ້ ປະເທດຊາດມີຄວາມຈະເລີນຜາສຸກ.

ສຳນັກພິມ "ຣາດູກາ"
ມົດສະກູ